# ຄຳອນຸໂມທນາ

ຖືໄດ້ວ່າ ມຫາ ຈັນທຣ໌ສຸຂ ສຸຣິຍຈັກຣ໌ ເປັນນັກປຣາຊຍ໌ລາວ ຜູ້ນຶ່ງ ທີ່ມີຄວາມຮູ້ ແລະ ມີການສຶກສາສູງ ໃນດ້ານ ພຣະພຸທສາສນາ ທັງເປັນນັກເສັຍສລະ ມີສັທລາອັນແຮງກ້າ ໃນພຣະພຸທສາສນາ, ມີຄວາມຝັກໄຝ່ໃນການເຜີຍແຜ່ ສີລທັມມ໌ ທີ່ທ່ານໄດ້ຮ່ຳ ຮຽນມານັ້ນ ໃຫ້ເປັນປະໂຍຊນ໌ແກ່ເພື່ອນຮ່ວມຊາຕິ ຮ່ວມສາສນາ ທີ່ມາຕັ້ງຖິ່ນຖານທຳມາຫາລ້ຽງຊີພ ຢູ່ໃນຕ່າງແດນ ຊ່ວຍໃຫ້ເຂົາເຈົ້າ ມີຈິຕໃຈຢຶດໝັ້ນຢູ່ໃນ ສີລທັມມ໌. ເພື່ອວ່າເຂົາເຈົ້າ ຈະໄດ້ເປັນພົລະເມືອງດີ ຢູ່ໃນປະເທສທີ່ເຂົາເຈົ້າອາສັຍຢູ່ນັ້ນ.

ທ່ານ ມຫາ ຈັນທຣ໌ສຸຂ ເປັນພລັງອັນສຳຄັນ ພລັງນຶ່ງໃນການເຜີຍແຜ່ ສີລທັມມ໌ ຄຳສອນຂອງພຣະພຸທເຈົ້າ ຊ່ວຍຄຕະ ພຣະສົງຄ໌ລາວ ຢູ່ໃນຕ່າງແດນ.

ຜົລງານທີ່ສຳຄັນ ໃນດ້ານການຂີດຂຽນ ທັມມະທັມໂມ ຂອງທ່ານອອກເຜີຍແຜ່ ນັ້ນ ກໍມີ ວາຣະສາຣ ທັມມະສາລາ ຣາຍດືອນ ແລະ ຣາຍໄຕຣມາສ ເປັນ ວາຣະສາຣຂອງ ອົງຄ໌ການ ທັມມສາລາ ພາຍໃຕ້ຄວາມອຸປຖັມກ໌ ຂອງຄຕະສົງຄ໌ລາວ ໃນ ສຫະຣັຖອະເມຣິກາ ເປັນເວລາ ໑໗ ປີ ເພື່ອໃຫ້ພີ່ນ້ອງລາວໄດ້ນຳເອົາໄປໃຊ້ເປັນຄູ່ມື ໃນການດຳເນີນຊີວິຕປະຈຳວັນຂອງເຂົາເຈົ້າ ໃຫ້ຢູ່ໃນຂອບເຂຕຂອງ ສີລທັມມ໌ ແລະ ຮີຕຄອງປະເພນີອັນດີງາມຂອງລາວເຮົາ ໂດຍທີ່ບໍ່ໄດ້ຫວັງສິ່ງຕອບແທນໃດ ໆ ໃນດ້ານອາມິສ.

ເມື່ອເພິ່ນ ທຳງານອາຊີພ ຄົບກະສຽນອາຍຸການແລ້ວ ເພິ່ນກໍຍັງບໍ່ລົດລະ ຄວາມພຍາຍາມໃນການເຜີຍແຜ່ ສິລທັມມ໌ ຄຳສອນຂອງ ພຣະ-ພຸທທເຈົ້າ ໂດຍທຸ່ມເທ ເຫື່ອແຮງ ເທົ່າທີ່ຍັງເຫລືອຢູ່ໃນບັ້ນປາຍຂອງຊີວິຕ ຂອງທ່ານໃສ່ການຣິຈນາ ພຣະໄຕຣປີຕົກ ສັງເຂປນັຍ ສບັບທັມມສາລາ ສອງຊຸດ. ຊຸດທຳອິດມີ ໔ ເຫລັ້ມ. ເມື່ອເຫັນວ່າ ທ່ານຍັງມີເຫື່ອແຮງຢູ່ ພໍທີ່ຈະປະຕິບັຕິງານການຂີດຂຽນຕໍ່ອີກ ຈຶ່ງໄດ້ຣິຈນາ ພຣະໄຕຣປີຕົກ ຊຸດທີ່ ໑ ໂດຍຂຍາຍອອກຈາກ ໔ ເຫລັ້ມ ມາເປັນ ໗ ເຫລັ້ມ, ໂດຍໃຊ້ເວລາ ໃນການຣິຈນາຊຸດທີ່ສອງນີ້ ໗ ປີ.

ເມື່ອທ່ານ ມີອາຍຸຄົບຮອບ ໗໐ ປີ ທ່ານໄດ້ຣິຈນາ ພຣະທັມມບົທ ແປເປັນ ພາສາລາວ ພ້ອມທັງມີນິທານປະກອບ ໂດຍຫຍໍ້ ໂດຍຕັ້ງໃຈໃຫ້ເປັນຜົລງານຊິ້ນສຸດທ້າຍ ເພາະເຫື່ອແຮງກໍຮ້ອຍລົງ ຕາມທັມມຊາຕ ຂອງສັງຂານ.

ທ່ານ ມຫາ ຈັນທຣ໌ສຸຂ ບໍ່ໄດ້ຢູ່ໃນເພສ ສມຕະ (ພຣະສົງຄ໌) ແຕ່ທ່ານກໍຍັງແບ່ງເວລາ ໃນການປະກອບອາຊີພ ບຳຣຸງຄອບຄົວ ມາຊ່ວຍພຣະສົງຄ໌ທຳການເຜີຍແຜ່ ພຣະພຸທທສາສນາ. ອາຕມາ ຂໍອະນຸໂມທະນາ ສາທຸການ ນຳກຸສົລເຈຕນາ ຂອງທ່ານ ມຫາ ຈັນທຣ໌ສຸຂ ສຸຣິຍຈັກຣ໌ ທີ່ໄດ້ທຳປະໂຍຊນ໌ອັນຍິ່ງໃຫຍ່ໄພສາລ ໃຫ້ແກ່ ເຊື້ອຊາຕິລາວ ຊາວລ້ານຊ້າງ ແລະ ແກ່ ພຣະພຸທທສາສນາ ດັ່ງພຣະອໍຣະຫັນຕາ ສັງຄາຫະກາຈາຣຍ໌ຜູ້ທຳສັງຄາຍນາ ຮ້ອຍ

ກອງ ພຣະທັມມວິນັຍ ໄວ້ນັ້ນກ່າວວ່າ ພຣະໄຕຣປິດົກ ຄືຄຳສອນຂອງພຣະພຸທສເຈົ້ານີ້ ຍັງຕັ້ງໝັ້ນ ບໍ່ຣິສຸທສິ ບໍ່ຣິບູຣຕ໌ຢູ່ ໄດ້ນານເທົ່າໃດ ສັມມາ-ປະຕິບັຕິ ການປະຕິບັຕິດີ ປະຕິບັຕິຊອບ ຂອງ ພຸທສບໍຣິຫັທ ກໍຈັກວິດງາມຮຸ່ງເຮືອງ ແລະ ເປັນປະໂຍຊນ໌ສຸຂ ໃຫ້ແກ່ມວນມນຸສ ແລະ ໝູ່ສັຕວ໌ທັງຫລາຍຢູ່ໄດ້ນານ ເທົ່ານັ້ນ.

ໂດຍສະເພາະຢ່າງຍິ່ງ ພຣະທັມມບົທ ພ້ອມດ້ວຍນິທານ ປະກອບນີ້ຈະອຳນວຍປະໂຍຊນ໌ ໃຫ້ແກ່ພຣະສົງຄ໌ ໃຊ້ເປັນຕຳຣາ ນຳໄປເທສນາໃຫ້ແກ່ຍາຕິໂຍມຟັງ ໃນໂອກາສການທຳບຸຍໃຫ້ທານ.

ອາຕມາ ຂໍອນຸໂມທະນາ ບຸນກຸສົລ ທີ່ຈັກເກີດຈາກການ ຣິຈນາຊຶ່ງພຣະທັມມບົທນີ້ ກັບພໍ່ອອກ ມຫາ ຈັນທຣ໌ສຸຂ ສຸຣິຍຈັກຣ໌ ທີ່ໄດ້ສ້າງສິ່ງທີ່ເປັນປະໂຍຊນ໌ອັນໃຫຍ່ຫລວງໄວ້ໃຫ້ແກ່ ອນຸຊົນຄົນຮຸ່ນຫລັງ ໄດ້ສຶກສາຮຽນຮູ້ ສືບຕໍ່ໄປ.

ຂໍອວຍພຣ ໃຫ້ພໍ່ອອກ ມຫາ ຈັນທຣ໌ສຸຂ ສຸຣິຍຈັກຣ໌ ຈົ່ງມີສຸຂະກາພເຂັ້ມແຂງ ນຳແສງສວ່າງເຍືອງທາງ ໃຫ້ແກ່ຊາວພຸທສ໌ ທັງຫລາຍ ສືບຕໍ່ໄປ.

ພຣະ ທອງວັນ ອຸຕຕມະປັຍໂຍ

ເຈົ້າ ອທິກາຣ ວັດປ່າ ພຸທສາຣາມ, ຣັຖ ເວີຣ໌ຈິເນັຍ

# ພຣະທັມມບົທ

## The Dhammapada

ປາລີ-ລາວ

ມີນິທານປະກອບໂດຍຫຍໍ້

ສບັບ ທັມມສາລາ

ມະຫາ ຈັນທຣ໌ສຸຂ ສຸຣິຍະຈັກຣ໌
Maha Chansouk Souryachak

Printed and donated for free distribution by
**The Corporate Body of the Buddha Educational Foundation**
11F., 55 Hang Chow South Road Sec 1, Taipei, Taiwan, R.O.C.
Tel: 886-2-23951198 , Fax: 886-2-23913415
Email: overseas@budaedu.org
Website:http://www.budaedu.org
**This book is strictly for free distribution, it is not for sale.**
ໜັງສືນີ້ ແຈກຢາຍເປັນສັນມະທານ, ຫ້າມຊື້-ຂາຍ

ຄຳວ່າ ບົທ ຄຳນີ້ ກໍເປັນພາສາບາລີ ແຕ່ລາວນຳເອົາມາໃຊ້ ແລະ ກໍເຂົ້າໃຈດີວ່າ ເປັນຂໍ້ເປັນຕອນ. ເມື່ອນຳເອົາ ໒ ຄຳນີ້ມາສົນທິຕໍ່ເຂົ້າກັນເປັນ ທັມມບົທ ໝາຍຄວາມວ່າ "ໝວດແຫ່ງພຣະທັມມ໌"

ຄັມກີຣ໌ ພຣະທັມມບົທນີ້ ປະກອບດ້ວຍ ໔໒໓ ພຣະຄາຖາ ທີ່ ພຣະພຸທຘເຈົ້າ ທຣົງຕຣັສເທສນາສັ່ງສອນ ເວໄນຍສັຕວ໌ ໃນປະມານ ໓໐໐ ໂອກາສ ນັບຕັ້ງແຕ່ວັນທີ່ພຣະອົງຄ໌ ທຣົງຕຣັສຮູ້ ຊຶ່ງ ພຣະອນຸຕຣະສັມມາສັມໂພທິຍານ ທີ່ພຸທຘຄຍາ ຈົນເຖິງວັນທີ່ ພຣະອົງຄ໌ ສເດັຈດັບຂັນທ໌ປຣິນິພພານ ທີ່ສາລວະໂນທຍານ ເມືອງ ກຸສິນາຣາ ໂຣມ ພຣະຊົນມາຍຸໄດ້ ໘໐ ພຣະວັສສາ.

ໃນໂອກາສ ທີ່ຂ້າພະເຈົ້າ ຣົຈນາພຣະທັມມບົທນີ້ ອາຍຸຂອງຂ້າພະເຈົ້າ ກໍບັນຈົບ ຄົບຮອບ ໘໐ ປີ. ຄົນເຮົາສມັຍນີ້ ຜູ້ຈະມີຊີວິຕຮອດ ໘໐ ປີນັ້ນ ເກືອບຈະກ່າວໄດ້ວ່າ ມີໜ້ອຍ. ໃນຊີວິຕບັ້ນປາຍຂອງຂ້າພະເຈົ້ານີ້ ຂ້າພະເຈົ້າ ເຫັນວ່າ ວຽກງານທີ່ຂ້າພະເຈົ້າຈະເຮັດໄດ້ ແລະ ຈະເປັນປະໂຍຊນ໌ ໃຫ້ແກ່ຕົວເອງ ຄອບຄົວ ແລະ ແກ່ສັງຄົມນັ້ນ ເຫັນວ່າ ມີໜ້ອຍທີ່ສຸດ ທີ່ຈະກະທຳໄດ້ ນອກຈາກວຽກການຂີດຂຽນ ກ່ຽວກັບວິຊາຄວາມຮູ້ ທີ່ຂ້າພະເຈົ້າໄດ້ຮຽນມາເທົ່ານັ້ນ

ຜົລງານການຂີດຂຽນ ທີ່ຖືວ່າ ເປັນຜົລສຳເຣັຈ ຂັ້ນສຸດຍອດ

ກໍແມ່ນ ຄັມກີຣ໌ ພຣະໄຕຣປິຝົກ ສບັບ ກາຫາລາວ ທີ່ຂ້າພະເຈົ້າໃຊ້ ເວລາເຖິງ ໆ ປີ ຫລັງຈາກທີ່ໄດ້ລາອອກຈາກວຽກງານ ການອາຊີພ ເປັນໂພສົກ ວິທຍຸ ສຽງອະເມຣິກາ [VOA] ແລະ ໂພສົກວິທຍຸ ເອເຊັຍເສຣີ [RFA] ອັນເປັນງານອາຊີພບັ້ນສຸດທ້າຍ ແຫ່ງຊີວິຕ ໃນຕ່າງແດນທີ່ຫ່າງໄກຈາກ ມາຕຸກູມິ.

ຫລັງຈາກທີ່ວຽກງານການຣິຈນາ ພຣະໄຕຣປິຝົກ ສິ້ນສຸດລົງ ແລ້ວ ກໍຄິດວ່າ ໜົດການະທີ່ຈຳເປັນໃນຊີວິຕນີ້ແລ້ວ. ຄັມກີຣ໌ ພຣະ ໄຕຣປິຝົກນັ້ນ ມີຄວາມສຳຄັນເປັນພິເສສ ສຳຣັບ ປະເທສຊາຕິລາວ ແລະຄົນລາວ ເພາະວ່າພຣະໄຕຣປິຝົກສບັບທີ່ເປັນ ກາຫາລາວນັ້ນບໍ່ມີ ອັນນີ້ບໍ່ໄດ້ໝາຍຄວາມວ່າ ປະເທສລາວບໍ່ມີຄັມກີຣ໌ ພຣະໄຕຣປິຝົກ, ພຣະໄຕຣປິຝົກ ທີ່ລາວມີນັ້ນເປັນສບັບທີ່ຈາຣຶກດ້ວຍ ອັກຂຣ ລົມມ໌ ລົງໃນໃບລານ.

ເມື່ອ ຄັມກີຣ໌ ພຣະໄຕຣປິຝົກ ມີແລ້ວຊ້ຳພັດຍັງຄາໃຈຢູ່ອີກ ກໍຄື ພຣະລັມມບົທ ທີ່ເຫັນວ່າ ຈະເປັນປະໂຍຊນ໌ໃຫ້ແກ່ພີ່ນ້ອງລາວ ທີ່ສຸດ. ອັນນີ້ແລ ທີ່ບູຮານ ເພິ່ນເລົ່າຂານກັນມາວ່າ "ພໍ່ເຖົ້າບອກລູກ ເຂີຍວ່າລູກເອີຍ ປຸກເຮືອນແລ້ວຍັງໂຮງຫລັງນຶ່ງເດີ".(໑) ຄຳເຕືອນ ນີ້ ຖ້າຟັງບໍ່ຄັກ ບໍ່ແນ່ ລູກເຂີຍອາດເປັນຫົວໃຈອາຍ ກໍເປັນໄດ້.

---

*(໑) ຄຳວ່າ ໂຮງໃນທີ່ນີ້ ໝາຍຄວາມວ່າ ໂຮງກະບອງ.*

ຄັມກີຣ໌ ພຣະລັມມບົທນັ້ນ ຖ້າຈະນຳເອົາໄປທຽບໃສ່ ໂຮງກະບອງນັ້ນບໍ່ໄດ້ ໂຮງກະບອງສຳຣັບໃສ່ກະບອງໄຕ້ໃນສມັຍທີ່ຍັງບໍ່ທັນມີ ໄຟຟ້າໃຊ້.

ເມື່ອມອງເຫັນປະໂຍຊນ໌ອັນຍິ່ງໃຫຍ່ຂອງ ຄັມກີຣ໌ລັມມບົທ ທີ່ຈະມີແກ່ພີ່ນ້ອງລາວໂດຍສະເພາະແລ້ວ ຂ້າພະເຈົ້າຕ້ອງໄດ້ເຮັດໃຫ້ສຳເຣັຈ, ເພາະວ່າຂ້າພະເຈົ້າ ແນມຫາຜູ້ທີ່ຈະມາຮັບກາຣະສືບຕໍ່ງານທີ່ກຳລັງເຮັດຢູ່ໃນເວລານີ້ ບໍ່ມີ ເພາະເປັນງານເສັຍສລະ*ຢ່າງແທ້ຈິງ.

ບັຓຫາໃນກາຣຂຽນ ຠາຩາລາວ ທີ່ຈະໃຫ້ຄົນລາວອ່ານນັ້ນເປັນບັຓຫາສຳຄັນ ເປັນອຸປສັຄທີ່ນັກຂຽນນັກປະພັນ໌ ທັງຫລາຍຜະເຊີນຢູ່ໃນເວລານີ້ ກໍຄືວ່າ ເຮົາຈະຂຽນແບບໃດ ຈະເອົາຕາມເຄົ້າມູລທີ່ມາຂອງຠາຩາ ຫຣືວ່າ ຈະເອົາຕາມສຽງແບບ ພຣະຣາຊໂອງກາຣ ເລຂທີ່ ໑໐ ຫຣືວ່າຈະເອົາຕາມພຸທຘບັຓຑິຕສະຠາ ແຫ່ງຣາຊອາຓາຈັກຣ໌ ລາວລ້ານຊ້າງ.

ຂ້າພະເຈົ້າ ໄດ້ຕັດສິນໃຈຂຽນຕາມ ໄວຍາກອຓ໌ລາວ ສບັບພຸທຘບັຓຑິຕສຠາ ແຫ່ງ ຣາຊອາຓາຈັກຣ໌ລາວລ້ານຊ້າງ ຖືຕາມເຄົ້າມູລທີ່ມາຂອງຠາຩາບາລີ ຫຣື ສັນກຣິຕ ດັ່ງທີ່ຂ້າພະເຈົ້າໄດ້ຣິຈະນາພຣະໄຕຣປິຎົກ ນັ້ນແລ. ກາຣຕັດສິນໃຈນີ້ ເປັນອັນວ່າໝົດບັຓຫາ.

ຠາຩາລາວ ໄດ້ຮັບອິທຘິພົລມາຈາກ ພຸທຘສາສນາ. ຄັມຠີຣ໌ ຕຳຫຣັບຕຳຣາຕ່າງ ໆ ໃນທາງພຸທຘສາສນາ ໃຊ້ຠາຩາ ບາຬີ ເປັນ ຫລັກ. ດັ່ງນັ້ນທາງເລືອກໃນດ້ານຕົວອັກຩຣ ທີ່ຈະນຳເອົາມາຣົຈນາ ພຣະຘັມມບົທ ແລະ ພຣະໄຕຣປິຏົກນີ້ ຈຳຕ້ອງໄດ້ເອົາ ອັກຩຣ ລາວ-ບາຬີ. ອັນທີ່ເວົ້າວ່າ ອັກຩຣ ລາວ-ບາຬີ ນັ້ນ ກໍແມ່ນອັກຩຣ ລາວເຮົານີ້ແລ ບໍ່ແມ່ນອັກຩຣ ພມ່າ ຣາມັຎ ແຕ່ຢ່າງໃດ.

ຫາກທ່ານເປັນຄົນລາວ ຮຽນໜັງສືລາວ ອ່ານໜັງສືລາວໄດ້ ທ່ານ ກໍຈະອ່ານໜັງສື ອັນທີ່ເອີ້ນວ່າ ລາວ-ບາຬີ ນີ້ໄດ້ຢ່າງງ່າຍດາຍ ຂ້າພະເຈົ້າ ຈະນຳເອົາ ອັກຩຣ ລາວ-ບາຬີ ມາທຽບໃສ່ ອັກຩຣລາວ ຘັມມະດາ ໃຫ້ທ່ານຮູ້ໃນໜ້າຕໍ່ໄປນີ້ວ່າ ມັນແຕກຕ່າງກັນຢ່າງໃດ.

| | | | | | |
|---|---|---|---|---|---|
| ລາວສັມມະດາ: | ກ | ຂ | ຄ | ຄຫ | ງ |
| ລາວບາລີ | ກ | ຂ | ຄ | ຆ | ງ |
| ລາວສັມມະດາ: | ຈ | ສ | ຊ | ຊຫ | ຍ |
| ລາວບາລີ | ຈ | ຉ | ຊ | ຌ | ຎ |
| ລາວສັມມະດາ: | ຕ | ຖ | ດ | ທ | ນ |
| ລາວບາລີ | ຏ | ຐ | ຑ | ຒ | ຓ |
| ລາວສັມມະດາ: | ຕ | ຖ | ດ | ທ | ນ |
| ລາວບາລີ | ຕ | ຖ | ທ | ຘ | ນ |
| ລາວສັມມະດາ: | ປ | ຜ | ພ | ພຫ | ມ |
| ລາວບາລີ | ປ | ຜ | ພ | ຠ | ມ |
| ລາວສັມມະດາ: | ຢ | ຣ | ລ | ວ | ສ |
| ລາວບາລີ | ຍ | ຣ | ລ | ວ | ສ |
| ລາວສັມມະດາ: | ຫ | ລ | ອ | | |
| ລາວບາລີ | ຫ | ຬ(ລ) | ອໍ (ອັງ) | | |
| ສັນສກຣິຕ | ຨ = ສ | ຩ = ສ | | | |

ຂ້າພະເຈົ້າ ຫວັງເປັນຢ່າງຍິ່ງວ່າ ພຣະຄັມກີຣ໌ລັມມບົທ ທີ່ຂ້າພະເຈົ້າ ຣົຈນານີ້ ຈັກເປັນປະໂຍຊນ໌ໃຫ້ແກ່ທ່ານຜູ້ທີ່ມີຄວາມສົນໃຈ ຝັກໄຝ່ໃນລັມມ໌ ທັງຫລາຍ ບໍ່ຫລາຍ ກໍໜ້ອຍ.

ບາງທ່ານ ຜູ້ທີ່ມີຄວາມຫວັງດີ ໄດ້ໃຫ້ກຳລັງໃຈ ຂ້າພະເຈົ້າວ່າ ການ ຣົຈນາ ພຣະລັມມ໌ ຄຳສອນ ຂອງພຣະພຸທລເຈົ້ານັ້ນ ຂໍໃຫ້ຖືເອົາຕາມ ບາລີ ໄວຍາກຣຕ໌ ເປັນຫລັກ ເພື່ອບໍ່ໃຫ້ຄວາມໝາຍຂອງພຣະລັມມ໌ ຄາດເຄື່ອນ ແລະ ອີງຕາມຄວາມຖືກຕ້ອງ ດີກວ່າຈະໄປຖືເອົາຕາມຄວາມມັກງ່າຍ ຂອງຄົນ ເພາະມັນຈະເປັນບັຓຫາສັບສົນໃນອະນາຄົຕ.

ກຸສົລຜົລບຸຓ ຄຸຓງາມຄວາມດີໃດ ໆ ທີ່ຈັກເກີດມີ ຈາກການຣົຈນາ ຊຶ່ງ ພຣະຄັມກີຣ໌ລັມມບົທ ສບັບນີ້ ຂ້າພະເຈົ້າ ຂໍອຸທິສ ແດ່ ບຸພພະກາຣີບຸຄ-ຄົລ ທັງຫລາຍ ຂອງຂ້າພະເຈົ້າ ອັນມີ ມາຣດາ ບິດາ ຄຣູ ອຸປັຊຊາຍາຈາຣຍ໌ ຍາຕິກາວົງສາ ຕລອດສັພພະສັຕວ໌ ທຸກຖ້ວນໜ້າ ກໍຂ້າທ້ອນ.

ມຫາ ຈັນທຣ໌ສຸຂ ສຸຣິຍະຈັກຣ໌

# ຄຳສັພທ໌ທີ່ທ່ານຄວນຮູ້ ໃນການອ່ານ ພຣະລັມມບົທ ສບັບນີ້

## ກ

ກຕັญญູ (ກະຕັນຍູ) ຮູ້ຄຸຕເພິ່ນ

ກຕເວທີ (ກະຕະເວທີ) ຕອບແທນບຸນຄຸຕເພິ່ນ

ກັມມກິເລສ (ກຳມະກິເລສ) ກັມມ໌ ເຄື່ອງເສົ້າໝອງ

ກັມມສິທທິ (ກຳມະສິດ) ຄວາມເປັນເຈົ້າຂອງ

ກษັຕຣິย໌ (ກະສັດ) ພຣະເຈົ້າແຜ່ນດິນ

ກສິຕ (ກະສິນ) ວັຕຖຸທີ່ເອົາໃຈຈິດຈໍ່ໃສ່

ກັຕຖກະ (ກັນຖະກະ) ອື່ມ້າທີ່ ພຣະມຫາບຸຣุษທຣົງ.

ກັລຍາຕມິຕຣ໌ (ກັນລະຍານະມິດ) ເພື່ອນທີ່ດີ

ກາມฉັນທະ (ກາມະສັນທະ) ຄວາມພໍໃຈໃນກາມຄຸຕ

ກາມຕັຕຫາ (ກາມະຕັນຫາ) ຄວາມຢາກໃນກາມ

ກາຍທວາຣ (ກາຍະທະວານ) ທາງກາຍ

ກາລກິຣິຍາ (ກາລະກິຣິຍາ) ການຕາຍ, ມຣະຕະ

ກາລເທສະ (ກາລະເທສະ) ເວລາແລະສຖານທີ່
ກາສາວພັສຕຣ໌ ((ກາສາວະພັດ) ຜ້າທີ່ຍ້ອມກດ້ວຍສີຝາດ, ສີຂັກ
ກຸຝຸມພີ (ກຸດຸມພີ) ຄົນຮັ່ງມີ, ຄົນມີທຣັພຍ໌ສິນເງິນທອງ.
ກຸລຘິດາ (ກຸລະທິດາ) ລູກຍິງ ລູກສາວຜູ້ມີຕະກຸລ ມີຄວາມປະພຶຕຣ໌ດີ
ກຸລບຸຕຣ໌ (ກຸລະບຸດ) ລູກຊາຍຜູ້ມີຕະກູລ ມີຄວາມປະພຶຕຣ໌ດີ
ກຸສົລ (ກຸສົນ) ບຸນ, ຄວາມດີ, ສລາດ
ກເษົມ (ກະເສີມ) ພົ້ນກັຍອັນຕຣາຍ, ສະບາຍໃຈ
ກເษົມຈາກໂຍຄະ ພົ້ນຈາກກັຍຄື ກິເລສ ເຄື່ອງຜູກມັດ.
ໂກຘະ ຄວາມໂກທຮ້າຍ

# ຂ

ຂຕິກສມາຘິ (ຂະນິກະສະມາທິ) ຈິຕໃຈສງົບໄດ້ຊົ່ວຄາວ
ຂຕິກປີຕິ (ຂະນິກະປີຕິ) ຄວາມຍິນດີ, ຄວາມດີໃຈຊົ່ວຄາວ
ຂັນຘ໌ (ຂັນ) ກອງ, ໝວດ, ພວກ,
ຂາທນີຍະ ຂອງຄ້ຽວ ຂອງກິນ,
ຂີຓາສົພ (ຂີນາສົບ) ຜູ້ໝົດກິເລສແລ້ວ, ພຣະອຣຫັນຕ໌
ຂຸທທກາປີຕິ (ຂຸດທະກາປີຕິ) ຄວາມພໍໃຈ ອີ່ມໃຈໜ້ອຍນຶ່ງ

# ຄ

ຄຕາຈາຣຍ໌ (ຄະນາຈານ) ຄຕະອາຈາຣຍ໌, ອາຈາຣຍ໌ຂອງໝູ່ຄຕະ

ຄຕິ (ຄະຕິ) ການໄປ, ທາງໄປ, ຄຕິສັມມ໌ ທາງສັມມ໌

ຄຣຸກັມມ໌ (ຄະຣຸກຳ) ກັມມ໌ໜັກ, ບາປໜັກ

ຄຣຸສັມມ໌ (ຄະຣຸທຳ) ຫລັກຄວາມປະພຶຕຣ໌ຂອງກິກຂຸນີ.

ຄຣືຫາບໍດີ (ຄະຣືຫະບໍດີ) ຜູ້ເປັນໃຫຍ່ໃນເຣືອນ, ພໍ່ເຣືອນ.

ຄັນຖຸຣະ (ຄັນຖະທຸຣະ) ສຸຣະຄືການຮຽນ, ການສຶກษาฝ่າຍປຣິຍັຕິ

ຄັມກີຣກາພ (ຄຳພີຣະພາບ) ຄວາມເລິກເຊິ່ງ.

ຄຸຕສັມມ໌ (ຄຸນນະທຳ) ສັມມ໌ທີ່ເປັນຄຸຕ, ຄຸຕງາມຄວາມດີ,

# ຆ

ຆຣາວາສ (ຄະຣາວາດ) ຜູ້ຢູ່ຄອງເຣືອນ, ຄຣິຫັສຖ໌

ຆຣາວາສສັມມ໌ (ຄະຣາວາສະທຳ) ຫລັກສັມມ໌ ສຳຣັບຄຣືຫັສຖ໌

ຆາຕວິญญาຕ (ຄານະວິນຍານ) ຄວາມຮູ້ສຶກທີ່ເກີດຂຶ້ນທາງດັງ

ໂຆສິຕາຣາມ (ໂຄສິຕາຣາມ) ຊື່ວັດໃນນຄຣໂກສັມພີ

# ຈ

ຈຕຸຕຖຊານ (ຈະຕຸດຖະຊານ) ຊານທີ່ ໔ ມີອົງຄ໌ ໒ ຄື ອຸເປກຂາ ແລະ ເອກັຄຄຕາ ເພາະລະ ປີຕິ ແລະ ສຸຂເສັຍໄດ້

ຈຣິຕ (ຈະຣິຕ) ຄວາມປະພຶຕຣ໌, ນິສັຍ

ຈັກຂຸວິຜຸຍາຕ(ຈັກຂຸວິນຍານ) ຄວາມຮູ້ເກີດຂຶ້ນຍ້ອນຮູບກະທົບຕາ

ຈາຣິກ (ຈາຣິກ) ທ່ຽວໄປ, ເດີນທາງເພື່ອສາສນະກິຈ.

ຈາຣີຕ (ຈາຣີດ) ປະເພຕີທີ່ດີງາມ ທີ່ປະຕິບັຕສືບຕໍ່ກັນມາ.

ຈີວຣ (ຈີວອນ) ຜ້ານຸ່ງຫົ່ມຂອງພຣະກິກຂຸ

ຈຸຕິ (ຈຸຕິ) ເຄື່ອນຍ້າຍຈາກກົພນຶ່ງໄປສູ່ກົພໜ້າ, ຕາຍ.(ສຳຣັບເທວດາ)

ຈຸຣາມຕີເຈດີຍ໌ (ຈຸລາມະນີເຈດີຍ໌) ຊື່ພຣະເຈດີຍ໌ທີ່ບັນຈຸພຣະໂມລີ (ມວຍຜົມ) ຂອງພຣະພຸທສເຈົ້າ ໃນດາວດຶງສເທວໂລກ.

ຈູຣປັນຖກະ(ຈູລະປັນຖະກະ) ມຫາສາວົກອົງຄ໌ນຶ່ງຂອງພຣະພຸທສເຈົ້າ

ເຈຕສິກ(ເຈຕະສິກ) ລັມມ໌ທີ່ເກີດຂຶ້ນໃນຈິຕ ເຊັ່ນຄວາມໂລພເປັນຕົ້ນ.

ເຈໂຕປຣິຍຜຸາຕ(ເຈໂຕປະຣິຍະຍານ) ຄວາມກຳນົດຮູ້ໃຈຜູ້ອື່ນໄດ້

ເຈໂຕວິມຸຕຕິ (ເຈໂຕວິມຸດຕິ) ຄວາມຫລຸດພົ້ນແຫ່ງຈິຕ

ໂຈຣກັມມ໌ (ໂຈຣະກຳ) ກາຣລັກຂະໂມຍ

## ຉ

ຉັນທະ (ສັນທະ) ຄວາມພໍໃຈ, ຄວາມຍິນດີ, ຄວາມຕ້ອງການ.

ຉັນທາຄຕິ (ສັນທາຄະຕິ) ຄວາມລໍາອຽງ, ຮັກບັງຊັງບັງ.

ຉັພພັຓຓະຣັງສີ (ສັພພັນນະຣັງສີ) ຣັສມີ ໖ ປະການ ທີ່ເປັ່ງ ອອກຈາກພຣະວໍຣະກາຍ ຂອງ ພຣະພຸທຘເຈົ້າ

ຉາຍາ (ສາຍາ) ເງົາ, ຊື່ທີ່ພຣະອຸປັຊຊາຍະຕັ້ງໃຫ້ແກ່ ຠິກຊຸທີ່ບວຊໃໝ່ ຊຶ່ງນິຍົມກັນຮຽກວ່າ ນາມຉາຍາ.

## ຊ

ຊຎິລ (ຊະດິນ) ນັກບວຊປະເພທໜຶ່ງ ເກົ້າຜົມເປັນມວຍ

ຊຣາຘັມມ໌ (ຊະຣາທໍາ) ມີຄວາມແກ່ເຖົ້າ ເປັນຘັມມດາ.

ຊຣາຠາພ (ຊະຣາພາບ) ຄວາມແກ່, ຄວາມຊຸດໂຊມຂອງຮ່າງກາຍ

ຊາຕິສົງສາຣ (ຊາຕສົງສານ) ການທ່ອງທ່ຽວໄປໃນສົງສາຣ ຄື ເກີດແລ້ວຕາຍ ຕາຍແລ້ວເກີດ ວຽນໄປວຽນມາ ບໍ່ມີທີ່ສິ້ນສຸດ.

ຊີວິຕັກຂັຍ (ຊີວິຕັກໄສ) ການສິ້ນຊີວິຕ, ຕາຍ.

ຊີວິຕິນທຣີຍ໌ (ຊີວິຕິນຊີ) ອິນທຣີຍ໌ຄືຊີວິຕ.

# ຌ

**ຌານ** (ຊານ) ການເພັ່ງອາຣົມຕ໌ ເພື່ອເຮັດໃຫ້ໃຈເປັນສະມາລິຢ່າງແນ່ວແນ່ ການະຂອງຈິຕທີ່ສງົບ. ຄຳວ່າ ຌານນີ້ມີຢູ່ ໔ ຄື: ໑ ປຖົມຌານ ມີອົງຄ໌ ໕ ອັນໄດ້ແກ່ ວິຕັກະ, ວິຈາຣະ, ປີຕິ, ສຸຂ, ເອກັຄຄະຕາ. ໒. ທຸຕິຍຌານ ມີອົງຄ໌ ໓ ໄດ້ແກ່ ປີຕິ, ສຸຂ, ເອກັຄຄະຕາ. ໓. ຕຕິຍະຌານ ມີອົງຄ໌ ໒ ອັນໄດ້ແກ່ ສຸຂ ແລະ ເອກັຄຄະຕາ. ໔. ຈຕຸຕຖະຌານ ມີອົງຄ໌ ໒ ອັນໄດ້ແກ່ ອຸເປກຂາ ແລະ ເອກັຄຄະຕາ.

# ຎ

ຎັຕຕິ (ຍັຕຕິ) ຄຳປະກາສໃຫ້ສົງຄ໌ຊາບ, ຂໍ້ສເນີ

ຎາຓ (ຍານ) ຄວາມຮູ້, ຄວາມຫຍັ່ງຮູ້

ຎາຓຈຣິຕ (ຍານະຈະຣິຕ) ຄົນທີ່ມີນິສັຍໄປໃນທາງຮູ້, ຄົນມັກຮູ້

ຎາຕິພລີ (ຍາຕິພະລີ) ອຸທິສສ່ວນກຸສົລຊ່ວຍເກື້ອໜຸນຍາຕິພີ່ນ້ອງ

ຎາຍທັມມ໌ (ຍາຍະທັມ) ຄວາມຖືກຕ້ອງຊອບທັມມ໌

ຎາຍປຏິປັນໂນ (ຍາຍະປະຕິປັນໂນ) ພຣະສົງຄ໌ເປັນຜູ້ປຏິບັຕິທີ່ຈະໃຫ້ ຊຶ່ງຄວາມຮູ້ ຫຼື ປຏິບັຕິເພື່ອອອກຈາກທຸກຂ໌

ໄຎຍທັມມ໌ (ໄຍຍະທັມ) ທັມມ໌ທີ່ຄວນຮູ້, ສິ່ງທີ່ຄວນຮູ້

# ຜ

ຜ ພະຍັນຊະນະຕົວນີ້ ອອກສຽງເປັນທັງ ຕ ແລະ ດ ແລ້ວແຕ່ຈະສອດຄ່ອງກັບເນື້ອຄວາມໃນປະໂຍຄນັ້ນເໝາະສົມ ຫຼື ບັງຄັບ ວ່າສົມຄວນຈະອອກສຽງຢ່າງໃດ ເຊັ່ນ ຄຳວ່າ ຜີກາ, ອນຸຜີກາ ພຣະຄັມກີຣ໌ ທີ່ພຣະອາຈາຣຍ໌ເຈົ້າ ທັງຫລາຍ ຣິຈນາຂຶ້ນໃນພາຍຫລັງ ທີ່ເພິ່ນໃຫ້ຄຳອະທິບາຍເພີ່ມເຕີມ ຫຼື ແກ້ອັຕຖ໌ ໃຫ້ຄວາມໝາຍ. ຊຶ່ງເອີ້ນວ່າ ພຣະອັຕຖກະຖາ. ຄຳວ່າ ຜີກາ ນີ້ ນິຍົມກັນໃຊ້ ໃນໜັງສືນິມົນຕ໌ ພຣະສົງຄ໌ ແລະ ຜີກາໃນໜັງສືແຈ້ງ ໃບບອກບຸນ ໃບແຈ້ງຂ່າວການກຸສົລ ເຊັ່ນນີ້ ໃຫ້ອອກສຽງເປັນ ດ.

ຕຳຣາໄວຍາກອນລາວ ສບັບ ທຳສມຸທ ພຸທລບັຕາທິຕສການ ແຫ່ງຣາຊອານາຈັກລາວ ທີ່ຂ້າພະເຈົ້າ ຖືເປັນຫລັກ ໃນການຣິຈນາຊຶ່ງ ຄັມກີຣ໌ ພຣະໄຕຣປິຜົກສບັບ ຣົມມສາລາ ແລະ ຄັມກີຣ໌ ພຣະຣົມມບົທ ສບັບນີ້ນັ້ນ, ເພິ່ນກໍບໍ່ໄດ້ບັນຍັຕິ ພະຍັນຊະນະ ຜ ທີ່ອອກສຽງເປັນ ດ ໄວ້ຕ່າງຫາກ.

ດ້ວຍເຫຕຸນີ້ໃນການຂຽນຄຳວ່າ ພຣະໄຕຣປິດົກ ຂ້າພະເຈົ້າຈຳຕ້ອງໄດ້ຂຽນເປັນ ພຣະໄຕຣປິຜົກ, ຜີກາ, ອນຸຜີກາ ດັ່ງນີ້ ເປັນຕົ້ນ.

ຖ້າຈະຂຽນ ຕາມພຣະຣາຊໂອງການ ເລຂທີ່ ໑໐ ກໍຢ້ານເປັນ ການວິບັຕິ. ໂດຍສະເພາະຢ່າງຍິ່ງ ກໍແມ່ນ ໃນເວລາການຂຽນ ກາສາ ປາລີ ຂ້າພະເຈົ້າຂຽນບໍ່ລົງ ເພາະຮູ້ວ່າມັນຜິດຢູ່ແລ້ວ.

## ຖ

ຖານະ (ຖານະ) ທີ່ຕັ້ງ, ເຫດ, ປະການ, ໂອກາສ.

ຖານານຸຣູປ (ຖານານຸຣູປ) ສົມຄວນແກ່ຕຳແໜ່ງ, ສົມຄວນທີ່ຈະເປັນໄປໄດ້.

## ຕ

ຕຖາຄົຕ (ຕະຖາຄົດ) ພຣະນາມນຶ່ງຂອງພຣະພຸທສເຈົ້າ ເປັນຄຳທີ່ພຣະພຸທສະເຈົ້າ ທຣົງຮຽກ ຫຣື ຕຣັສເຖິງພຣະອົງຄ໌ເອງ.

ຕະປະ ໝາຍຄວາມວ່າ ຄວາມພຽຣ ເຄື່ອງເຜົາກິເລສ

ຕັຕຫາ (ຕັຕຫາ) ຄວາມຢາກ, ຄວາມປາຖນາ, ຄວາມຢາກໃນກາມ.

ຕິຣັຈສານກຖາ(ຕິຣັດສານະກະຖາ) ຖ້ອຍທີ່ຂວາງທາງພຣະນິພພານ

ໄຕຣປິຕົກ (ໄຕຣປິດົກ) ປິຕົກ ໓. ຄຳວ່າປິຕົກນີ້ ແປຕາມຕົວວ່າກາຊນະສຳຣັບໃສ່ສິ່ງຂອງ.

ໄຕຣມາສ (ໄຕຣມາດ) ສາມເດືອນ

ໄຕຣລັກສຕ໌ (ໄຕຣລັກ) ລັກສຕະສາມ ຄື ອນິຈຈັງ, ທຸກຂັງ, ອນັຕຕາ

ໄຕຣສິກຂາ (ໄຕຣສິກຂາ) ສິກຂາ ໓ ປະຜິບັຕິທີ່ຕ້ອງສຶກສາ ຄື ສີລ ສະມາຘິ ປັຌຌາ.

# ຖ

ຖາວຣວັຕຖຸ (ຖາວອນວັຕຖຸ) ສິ່ງຂອງທີ່ໝັ້ນຄົງ ເຊັ່ນ ເຈດີຍ໌...

ເຖຣະ ຜູ້ໃຫຍ່, ຕາມພຣະວິນັຍ ນັບແຕ່ມີ ພັຣສາ ໑໐ ຂຶ້ນໄປ

ເຖຣກູມີ (ເຖຣະພູມ) ຂັ້ນ ຫຣື ຊັ້ນຂອງພຣະເຖຣະ ຣະດັບຄວາມຮູ້

ເຖຣວາທ (ເຖຣະວາດ) ວາທະ ຫຣື ລັທທິ ຂອງພຣະເຖຣະ, ນິກາຍ ຂອງ ພຣະພຸທຘສາສນາ ເຊັ່ນ ພຸທຘສາສນາທີ່ນັບຖືກັນໃນ ສຣີລັງກາ ພມ່າ, ໄທ, ລາວ ແລະ ກັມພຸຊາ ເປັນຕົ້ນ.

ເຖຣານຸເຖຣະ (ເຖຣານຸເຖຣະ) ພຣະເຖຣະ ແລະ ອະນຸເຖຣະ, ພຣະເຖຣະຜູ້ໃຫຍ່ ແລະ ພຣະເຖຣະຜູ້ນ້ອຍ.

# ທ

ທມີ (ທະທີ) ນົມສົ້ມ

ທຣມານ (ທໍຣະມານ) ຂົ່ມ, ຜາບ, ເຮັດໃຫ້ປ່ຽນໃຈ, ເຝິກຫັດ.

ທັກຂິຕາ (ທັກຂິນາ) ຂອງທຳບຸຌ

ທັກຂິຕານຸປທານ (ທັກຂິນານຸປະທານ) ທຳບຸນອຸທິສຫາຜູ້ຕາຍ

ທັກຂິເຕຍຍບຸຄຄົລ (ທັກຂິໄນຍະບຸກຄົນ) ບຸຄຄົລຜູ້ຄວນຮັບທັກຂິຕາທານ.

ທາຍົກ ຜູ້ໃຫ້ (ຜູ້ຊາຍ) ທາຍິກາ (ຜູ້ຍິງ)

ທາຍາທ (ທາຍາດ) ຜູ້ສືບຕະກຸລ.

ທິຍຖິ (ທິດຖິ) ຄວາມເຫັນ, ລັທຄິການເມືອງ

ທິຍຖິມານະ (ທິດຖິມານະ) ຄວາມເຫັນ. ຄວາມເຫັນທີ່ດື້ດຶງ, ຖືຕົວ.

ທຸກຂຂັນຄ໌ (ທຸກຂະຂັນ) ກອງທຸກຂ໌

ທຸຄຕິ (ທຸຄະຕິ) ທາງໄປຊົ່ວ, ສຖານທີ່ໄປເກີດຊົ່ວ.

ເທພທິດາ (ເທບທິດາ) ນາງຟ້າ, ເທວດາຜູ້ຍິງ

ເທພບຸຕຣ໌ (ເທບພະບຸດ) ເທວດາຜູ້ຊາຍ

ເທວດາ (ເທວະດາ) ໝູ່ເທເທວດາ, ຊາວສວັຣຄ໌

ໂທມນັສ (ໂທມະນັດ) ຄວາມເສັຍໃຈ, ຄວາມເປັນທຸກຂ໌

ໂທສາຄຕິ (ໂທສາຄະຕິ) ຄວາມລຳອຽງເພາະຊັງຂີ້ໜ້າ

ໄທຍທານ ຂອງທີ່ຄວນໃຫ້, ຂອງທານ.

ໄທຍທັມມ໌ (ໄທຍະທຳ) ຂອງທີ່ຄວນໃຫ້.

# ຘ

ຘນສົມບັຕິ (ທະນະສົມບັດ) ສົມບັຕິຄື ທຣັພຍ໌ສິນເງິນຄຳ

ຘັມມ໌ (ທຳ) ຘັມມຊາຕິທີ່ທຣົງໄວ້, ສະພາວະຘັມມ໌, ຖືກຕ້ອງ

ຘັມມກະຖາ (ທຳມະກະຖາ) ການກ່າວຘັມມ໌, ຄຳທີ່ກ່າວເຖິງຘັມມ໌

ຘັມມຊາຕິ (ທຳມະຊາດ) ຂອງທີ່ເກີດຕາມວິສັຍຂອງໂລກ. ເກີດເອງ.

ຘັມມດາ(ທຳມະດາ) ອາການຫຣືຄວາມເປັນໄປຕາມຘັມມຊາຕິ, ປົກຕິ

ຘັມມວິນັຍ (ທຳມະວິໄນ) ຘັມມ໌ແລະວິນັຍ ຄຳສັ່ງສອນ, ສາສນາ.

ຘັມມາທິປໄຕຍ໌ (ທຳມາທິປະໄຕ) ຖືຘັມມ໌ເປັນໃຫຍ່

ຘັມມິກຖາ ທຳມິກະຖາ) ຖ້ອຍຄຳທີ່ປະກອບດ້ວຍຘັມມ໌

ຘັຌຊາຕິ (ທັນຍະຊາດ) ພືຊຈຳພວກເຂົ້າ

ຘາຕຸ (ທາດ) ສະພາວະທີ່ມີຢູ່ເອງຕາມເຫຕຸປັຈຈັຍ ເຊັ່ນຘາຕຸນ້ຳ, ລົມ ໄຟ ກະດູກຂອງ ພຣະພຸທຘເຈົ້າ ແລະ ຂອງພຣະອຣຫັນຕ໌

ຘາຕຸເຈດີຍ໌ (ທາດເຈດີ) ເຈດີຍ໌ບັນຈຸພຣະບໍຣົມສາຣີຣິກຘາຕຸ ຂອງ ພຣະພຸທຘເຈົ້າ. ໂດຍສະເພາະຮຽກວ່າພຣະບໍຣົມຘາຕຸ ຫຣື ຣະບຸຊື່ກະດູກສ່ວນນັ້ນ ໆ ເຊັ່ນ ພຣະຘາຕຸພນົມ ຄືພຣະຘາຕຸຫົວອົກ ດັ່ງນີ້ ເປັນຕົ້ນ.

ຘຸຣະ (ທຸຣະ) ການງານ, ໜ້າທີ່

# ນ

ນຄຣ (ນະຄອນ) ເມືອງ, ເມືອງໃຫຍ່,

ນຄຣໄສເພນີ (ນະຄອນໄສເພນີ) ຍິງງາມເມືອງ, ຍິງຂາຍຕົວ.

ນທີ (ນະທີ) ແມ່ນ້ຳ

ນັກປຣາຊຍ໌ (ນັກປຣາດ) ຜູ້ທີ່ມີຜຍາປັຍຍາ, ຜູ້ຮຽນຮູ້

ນາມລັມນ໌ (ນາມະທຳ) ອາຣົມຕ໌ທີ່ເກີດກັບໃຈ, ສິ່ງຂອງທີ່ບໍ່ມີຮູບ

ນາມຮູປ (ນາມະຮູບ) ສິ່ງທີ່ບໍ່ມີຮູປ ຮູ້ບໍ່ໄດ້ທາງຕາ ແຕ່ຮູ້ໄດ້ທາງໃຈ ອັນໄດ້ແກ່ ເວທນາ ສັຍຍາ ສັງຂາຣ ວິຍຍາຓ

ນິຄຣິນຖ໌ (ນິຄຣິນ) ນັກບວຊນອກພຣະພຸທຂສາສນາ

ນິມິຕ ເຄື່ອງໝາຍ

ນິຣັນດຣ(ນິຣັນດອນ) ຕິດຕໍ່ກັນໄປບໍ່ຂາດ, ຕລອດໄປ.

ນິເວສນ໌ (ນິເວດ) ທີ່ຢູ່

ນິສິຕ (ນິສິດ) ຜູ້ອາສັຍຢູ່, ສິສຜູ້ທີ່ຮຽນຢູ່ໃນສຳນັກ.

ເນຍຍະ (ໄນຍະ) ຜູ້ທີ່ພໍແນະນຳສັ່ງສອນໄດ້

ເນຣເທສ, ເນຣເທສ.(ເນຣະເທດ) ຂັບໄລ່ອອກຈາກປະເທສ

ເນຣັຍຊຣາ (ເນຣັນຊະຣາ) ຊື່ແມ່ນ້ຳສຳຄັນ ຄືກ່ອນໜ້າໃນວັນທີ່ພຣະພຸທຂເຈົ້າຕຣັສຮູ້ນັ້ນ ພຣະອົງຄ໌ລອຍຖາດເຂົ້າມລຸປາຍາສໃນແມ່ນ້ຳນີ້.

# ບ

ບັຣພຊາ (ບັນພະຊາ) ການບວຊ

ບັຣຍາຍ (ບັນຣະຍາຍ) ການສອນ, ການສແດງ, ອະທິບາຍ.

ບໍຣິຂາຣ (ບໍຣິຂານ) ເຄື່ອງໃຊ້ສອຍຂອງນັກບວຊ.

ບໍຣິໂພຄ (ບໍຣິໂພກ) ກິນ,ດື່ມ

ບໍຣິວາຣ (ບໍຣິວານ) ຜູ້ຕິດຕາມ, ຜູ້ແວດລ້ອມ, ຜູ້ຮັບໃຊ້

ບໍຣິສັທ(ບໍຣິສັດ) ໝູ່ເຫລົ່າ ກຸ່ມຊົນ ເຊັ່ນ ບໍຣິສັທ ໔ ຄືພຸທສບໍຣິສັທ

ບໍຣິສຸທທິ (ບໍຣິສຸດ) ສະອາດ ຜຸດຜ່ອງ

ບໍຣິຫາຣ (ບໍຣິຫານ) ດູແລ, ຮັກສາ, ປົກຄອງ

ບັງສຸກຸລ (ບັງສຸກຸນ) ຜ້າບັງສຸກຸລ. (ບັງສຸກຸລ ເປັນກິຣິຍາ)

ບັຓຓັຕິ (ບັນຍັດ) ການກຳນົດ, ກົດເກນ.

ບັຕຫິຕ (ບັນດິດ) ຜູ້ມີປັນຍາ, ນັກປຣາຊຍ໌

ບັລລັງກ໌ (ບັນລັງ) ແທ່ນ, ທີ່ນັ່ງ

ບາຕຣ໌ (ບາດ) ການະຂອງນັກບວຊສຳຣັບ ຮັບອາຫານ ເປັນນຶ່ງໃນ
ໃນຈຳນວນ ບໍຣິຂາຣ ໘ ຂອງກິກຊຸ

ບາປ (ບາບ) ຄວາມຊົ່ວ, ຄວາມບໍ່ດີ, ກັມມ໌ອັນລາມົກ.

ບິຕຫບາຕ (ບິນດະບາດ) ອາຫານທີ່ໃສ່ລົງໃນບາຕຂອງພຣະ

ບໍາເພັຍ (ບໍາເພັນ) ປະຕິບັດ, ຕັ້ງໃຈທໍາ, ທໍາໃຫ້ສໍາເຣັຈຜົລ.

ບຸຍ (ບຸນ) ຄວາມດີ, ຄວາມສຸຂ

ບຸພເປຕພລີ (ບຸບພະເປຕະພະລີ) ບຸຍທີ່ອຸທິສໃຫ້ແກ່ຍາຕິຜູ້ຕາຍ

ບູຊນີຍສຖານ (ປູຊະນີຍະສຖານ) ສຖານທີ່ຄວນບູ່າ

## ປ

ປກຣຕ໌ (ປະກອນ) ຄໍາກິຣ໌, ຕໍາຣາ, ໜັງສື

ປຊາບໍດີ (ປະຊາບໍດີ) ກັຣຍາ, ເມັຍ

ປຕິການ (ປະຕິການ) ການຕອບແທນ, ການສນອງບຸຍຄຸຕ

ປຕິກູລ (ປະຕິກູນ) ເປັນໜ້າໜ່າຍ, ຂີ້ດຽດ, ຣິ

ປຕິຄາຫົກ (ປະຕິຄາຫົກ) ຜູ້ຮັບທານ, ຜູ້ຮັບຂອງຖວາຍ.

ປຕິຍາຕ (ປະຕິຍານ) ການໃຫ້ຄໍາໝັ້ນໃຈໂດຍສຸຈຣິຕ

ປຕິປັກຂ໌ (ປະຕິປັກ) ຝ່າຍກົງກັນຂ້າມ, ຂ້າເສິກ, ຄູ່ປັບ

ປຕິກາຕ (ປະຕິພານ) ປັຍຍາແກ້ການຕ໌ສະເພາະໜ້າ, ຄິດແກ້ທັນ

ປຕິມາ (ປະຕິມາ) ຮູບແທນ, ຮູບເໝືອນ

ປຜິຣູປ (ປະຕິຣູບ) ສົມຄວນ, ເໝາະສົມ, ປັບປຸງໃຫ້ດີ

ປຜິວັຕິ (ປະຕິວັດ) ການປ່ຽນແປງຢ່າງຖອນຮາກ, ໂຄ່ນລົ້ມ

ປຜິສັງຂອຕ໌ (ປະຕິສັງຂອນ) ຊ່ອມແຊມເຮັດໃຫ້ດີຄືເກົ່າ

ປຕິສານ (ປະນິທານ) ການຕັ້ງຄວາມປາຖນາ.

ປຣມັຕຖຄັມມ໌ (ປະຣະມັດຖະທຳ) ສກາວະທີ່ມີຢູ່ໂດຍປຣມັຕຖ໌

ປຣາມາສ (ປະຣາມາດ) ດູຖູກດູໝິ່ນ, ການຈັບຕ້ອງ. ຜມາດ (ລາວ)

ປຣິມິຕທີລ (ປະຣິມິນທິນ) ວົງຮອບ, ວົງກົມ.

ປສຸສັຕວ໌ (ປະສຸສັດ) ວັຕວ໌ລ້ຽງ ເຊັ່ນ ໄກ່, ເປັດ. ໝູ....

ປັຈຈາມິຕຣ໌ (ປັດຈາມິດ) ຂ້າເສິກ, ສັຕຣູ

# ຜ

ຜນອຊ (ຜະນອດ) ບອຊ (ຣາຊາສັພທ໌, ສຳຣັບເຈົ້າ)

ຜ້າປ່າ ຄຳວ່າ ຜ້າປ່າ ກໍຄືຜ້າບັງສຸກຸລ ທີ່ທາຍົກຖວາຍແກ່ພຣະ ໂດຍວິຣີ ວາງໄວ້ໃຫ້ພຣະຊັກເອົາໄປເອງ ເໝືອນກັບຜ້າບັງສຸກຸລ, ຕາມລັມນຽມຖວາຍ ຫລັງເທສກາລຖວາມຍຜ້າກະຖິນ.

ຜາສຸວິຫາຣຄັມມ໌ (ຜາສຸວິຫາຣະທຳ) ລັມມ໌ເປັນເຄື່ອງຢູ່ສະບາຍ.

# ພ

ພຍາກຣຕ໌ (ພະຍາກອນ) ທວາຍ, ທຳໃຫ້ແຈ້ງ, ຕອບບັນຫາ

ພຣົຫມຈັຣຍ໌ (ພຣົມະຈັນ) ການຄອງຊີວິດປາສຈາກເມຖຸນ

ພຫຸສູຕ (ພະຫູສູດ) ຜູ້ໄດ້ຍິນໄດ້ຟັງມາມາກ, ຜູ້ຄົງແກ່ຮຽນ.

ພຸທຄມາມກະ (ພຸດທະມາມະກະ) ຜູ້ຖືພຣະພຸທຄເຈົ້າວ່າເປັນຂອງເຮົາ

ໂພຄິສັຕວ໌ (ໂພທິສັດ) ຜູ້ທີ່ຈະໄດ້ຕຣັສຮູ້ເປັນພຣະພຸທຄເຈົ້າ

# ກ

ກຍາຄະຕິ (ກະຍາຄະຕິ) ຄວາມລຳອຽງເພາະຢ້ານກົວ.

ກວຕັຕຫາ (ກະວະຕັນຫາ) ຄວາມຢາກໄດ້ ອັນນັ້ນ, ອັນນີ້, ຢາກເປັນ

ກັກຜາ, (ກັກສາ, ກັກຜາຫານ), ອາຫານ, ຂອງກິນ.

ກິກຂາຈານ (ພິກຂາຈານ) ການທ່ຽວບິຕຫບາຕ

ກູຕ, ກູຕະ,(ສັຕວ໌ຜູ້ເກີດແລ້ວ) ໝາຍເຖິງພຣະອຣຫັນຕ໌ ຜູ້ບໍ່ທີ່ບໍ່ສແວງຫາກົພ ທີ່ຈະເກີດອີກ.

ໂກຊເນມັຕຕັລຸຕາ (ໂພຊະເນມັດຕັນຍຸຕາ) ຮູ້ຈັກປະມານໃນການບໍຣິໂກຄອາຫານ, ການກິນອາຫານພໍສົມຄວນ.

# ມ

ມຄົຄ (ມະຄົດ) ຊື່ແຄວ້ນນຶ່ງ ໃນບັນດາ ໑໖ ແຄ້ວນໃນຊົມພູທວີປ ໃນຄັ້ງພຸທສກາລ. ແຄວ້ນນີ້ເປັນທີ່ຮູ້ກັນດີໃນບັນດາຊາວພຸທສ໌ ຍ້ອນວ່າເປັນແຄວ້ນທີ່ພຣະພຸທສເຈົ້າ ທຣົງປະດິຫສຖານ ພຣະພຸທສສາສນາ ໃນສມັຍພຸທສກາລ. ໃນບັດນີ້ ແຄວ້ນນີ້ຮຽກວ່າ ແຄວ້ນພິຫາຣ. ຄຳວ່າ ມຄົຄ ນີ້ເປັນຊື່ ພາສາ ທີ່ຊາວແຄວ້ນນີ້ໃຊ້ ຮຽກວ່າ ພາສາມຄົຄ ຫຣື ພາສາ ບາລີ ທີ່ໃຊ້ບັນທຶກ ພຣະພຸທສພົຈນ໌ ຄຳສອນຂອງພຣະພຸທສເຈົ້າສືບທອດມາຈົ ນເຖິງກາລະບັດນີ້.

ມຄຸ (ມະທຸ) ນ້ຳເຜີ້ງ

ມໂນທວາຣ (ມະໂນທວານ) ທາງໃຈ, ທວາຣຄືໃຈ.

ມໂນຣົມ, ເປັນທີ່ພໍໃຈ

ມັຈຈຸ, ມັຈຈຸຣາຊ ຄວາມຕາຍ.

ມາຕຸຄາມ ຜູ້ຍິງ

ມາຕົພ (ມານົບ) ຊາຍໜຸ່ມ

ມານະ ຄວາມຖືຕົວ

ມຸນີ ນັກປຣາຊຍ໌, ພຣະສົງຄ໌ ຫຣືນັກບວຊຜູ້ເຂົ້າເຖິງລັມມ໌ ແລະດຳເນີນຊີວິຕບໍຣິສຸທສິ.

ໂມຆບຸຣຸສ (ໂມຄະບຸຣຸດ) ຄົນໂງ່, ຄົນທີ່ໃຊ້ການບໍ່ໄດ້

## ຍ

ຍັຌ (ຍັນ) ການບູຊາ, ການເຊັ່ນສວງ ການບວງສວງ ເຊັ່ນການຂ້າສັດ ບູຊາຜີ ເປັນຕົ້ນ.

ຍາຈິກ ຄົນຂໍ. ຄົນຂໍທານໂດຍບໍ່ມີສິ່ງຕອບແທນ.

ໂຍຄີ ຣິຊີ

ໂຍຘາ ນັກຣົບ, ທຫານ

ໂຍນິໂສ ວິຘີທີ່ຖືກຕ້ອງ

## ຣ

ຣິຈນາ (ຣິດຈະນາ) ແຕ່ງເຣື່ອງ, ຂຽນ, ປະພັນ

ຣັງສີ ແສງ, ແສງສວ່າງ

ຣັຏຖບາລ (ຣັດຖະບານ) ຜູ້ຮັກສາຄຸ້ມຄອງ ແວ່ນແຄວ້ນແຜ່ນດິນ.

ຣາຊູປກັມກ໌ (ຣາຊູປະຖໍາ) ການທີ່ພຣະຣາຊາອຸດໜູນ.

ຣາຨີ (ຣາສີ) ຄໍາວ່າ ຣາຨີ ນີ້ມີ ໖ ຄວາມໝາຍ ຄື:

໑. ເປັນຊື່ມາຕຣາວັດແທກ ຈັກຣ໌ຣາຨີຄື ໓໐ ອົງສາ ເປັນ ໑ ຣາຨີ

ແລະ ໑໔ ຣາສີ (ອາຫາເຂດຮອບດວງອາທິດຍ໌ ທີ່ດາວພຣະເຄາະທ່ໍເດີນ) ຣາສີ ໑໔ ນັ້ນມີ ຣາສີເມສ (ຮູປແກະ) ຣາສີ ພຣຶສກ໌ (ຮູປງົວ) ຣາສີ ເມຖຸນ (ຮູປຄົນຄູ່) ຣາສີ ກະຣະກົຍ (ຮູປກະປູ) ຣາສີ ສິງຫ໌ (ຮູປຣາຊສີຫ໌) ຣາສີ ກັນຍ໌ (ຮູປຍິງສາວ) ຣາສີ ດຸລ (ຮູປຄົນຊັ່ງ) ຣາສີພຣະຈິກ (ຮູປແມງເງົາ) ຣາສີ ລນູ (ຮູປລະນູ) ຣາສີ ມະກຣະ (ຮູປມັງກຣ) ຣາສີກຸມກ໌ (ຮູປໝໍ້) ຣາສີ ມີນ (ຮູປປາ ໒ ຕົວ)

໔. ໝາຍຄວາມວ່າ ລັກສະນະ ອາການ ທີ່ຈົບງາມ, ຮຸ່ງເຮືອງ.

໕. ກອງ ເຊັ່ນ ກອງເຂົ້າ, ກອງບຸຍ

ຮູປີຍະ ເງິນຕຣາ

# ລ

ລຫຸໂທສ (ລະຫຸໂທດ) ໂທສເບົາ

ລັກສະນະ (ລັກສະນະ) ເຄື່ອງກຳນົດຮູ້, ອາການສຳຣັບໝາຍຮູ້

ລັທສີ (ລັດທິ) ຄວາມເຊື່ອຖື, ປະເພນີ

ໂລກສາຕຸ (ໂລກະທາດ) ແຜ່ນດິນ, ຈັກວາຣນີ້.

ໂລກີຍະ, ໂລກີຍ໌ (ໂລກີຍະ) ກ່ຽວກັບໂລກ, ທາງໂລກ.

ໂລກຸຕຣຊັມມ໌ (ໂລກຸຕະຣະທຳ) ຊັມມ໌ອັນເໜືອວິສັຍຂອງໂລກ

# ວ

ວຈີກັມມ໌ (ວະຈີກຳ) ການກະທຳທາງວາຈາ

ວຈີທຸຈຣິຕ (ວະຈີທຸດຈະຣິຕ) ຄວາມປະພຶຕຣ໌ຜິດທາງວາຈາ

ວຈີສຸຈຣິຕ (ວະຈີສຸດຈະຣິດ) ຄວາມປະພຶຕຣ໌ຊອບທາງວາຈາ

ວັຕຣ໌ປຏິບັຕິ (ວັດປະຕິບັດ) ການປຏິບັຕິຕາມໜ້າທີ່

ວິການ (ວິການ) ຄວາມຜິດສັມະດາ, ຄວາມຜິດແປກ

ວິກາລ (ວິການ) ຜິດເວລາ (ໃນການບໍຣິໂภຄອາຫານ.) ຕອນບ່າຍ.

ວິຈາຣຓຍາຓ (ວິຈາຣະນະຍານ) ປັຍຍາຣິ່ນຕອງ, ພິຈາຣຓາຫາ ເຫຕຸຜົລ.

ວິນັຍທຣ (ວິໄນທອນ) ຜູ້ທຣົງວິນັຍ, ກິກຂຸຜູ້ຊຳນານໃນວິນັຍ.

ວິປລາສ (ວິປະລາດ) ຄວາມເຫັນ, ຄວາມເຂົ້າໃຈຄາດເຄື່ອນ.

ວິສາມັນ (ວິສາມັນ) ບໍ່ແມ່ນສັມມດາ, ສະເພາະ.

ເວໄນຍສັຕວ໌(ເວໄນຍະສັດ) ສັຕວ໌ຜູ້ທີ່ຄວນແກ່ການແນະນຳສັ່ງສອນ

# ສ

ສັກດິນາ (ສັກດິນາ) ອຳນາຈປົກຄອງທີ່ນາ. ອັນນີ້ໝາຍຄວາມວ່າພຣະ ມຫາກສັຕຣິຍ໌ ພຣະຣາຊທານທີ່ນາໃຫ້ເຈົ້າຍນາຍປົກຄອງ ເປັນຈຳນວນໄຮ່

ເຊັ່ນ ພັນນາ, ໝື່ນນາ, ໃນກາລຕໍ່ມາ ເປັນນາມຍົສຂອງເຈົ້ານາຍ.

ສັພທ໌ (ສັບ) ຄໍາເວົ້າ, ສຽງ, ຄໍາຍາກທີ່ຕ້ອງໄດ້ອະທິບາຍ.

# ສ

ສົງເຄາະຫ໌ (ສົງເຄາະ) ການຊ່ວຍເຫລືອເກື້ອກູນ

ສົງฆ໌ (ສົງ) ໝູ່ ຄຕະ, ຊຸມນຸມ, ສາວົກຈອງພຣະພຸທສເຈົ້າ

ສົງສາຣ (ສົງສານ) ການວຽນຕາຍວຽນເກີດ.

ສຖາປນາ (ສະຖາປະນາ) ກໍ່ສ້າງ, ຍົກຍ້ອງ ແຕ່ງຕັ້ງໃຫ້ສູງຂຶ້ນ.

ສມຕະ (ສະມະນະ) ຜູ້ສງົບ, ໝາຍເຖິງນັກບວຊ

ສມຕສາຣູປ (ສະມະນະສາຣູປ) ຄວາມປະພຶຕຣ໌ທີ່ເໝາະສົມ ຂອງ ສມະຕະ (ພຣະກົກຂຸ)

ສມຸຜຖານ (ສະມຸດຖານ) ທີ່ຕັ້ງ ທີ່ເກີດ

ສຣຕະ (ສະຣະນະ) ທີ່ເພິ່ງ, ທີ່ອາສັຍ

ສຣີຣະ ຮ່າງກາຍ

ສວັຣຄ໌ (ສະຫວັນ) ດິນແດນອັນດີເລີສລໍ້າໃນດ້ານການຄຸຕ ໕

ສວັຣຄົຕ (ສະຫວັນຄົດ) ໄປສູ່ສວັຣຄ໌

ສັງຂາຣ ສິ່ງທີ່ຖືກປັຈຈັຍປຸງແຕ່ງ

ສັງເຂປ ໂດຍຫຍໍ້

ສັງຄາຍນາ ການຈັດສັນພຣະລັມມ໌ວິນັຍ, ການສູດພ້ອມກັນ

ສັງຄີຕິ ການສັງຄາຍນາ

ສັງឃການີ (ສັງຄະການີ) ເຈົ້າໜ້າທີ່ທຳການສົງឃ໌,

ສັງឃເພທ (ສັງຄະເພດ) ການແຕກສາມັຄຄີຂອງສົງឃ໌

ສັງឃຣາຊີ (ສັງຄະຣາຊີ) ຄວາມແຕກແຫງ ຄືຈະແຕກແຍກກັນ ແຕ່ຍັງບໍ່ທັນແຕກເທື່ອ ເປັນຮອຍແຫງ.

ສັງວຣ (ສັງວອນ) ສຳຣວມ ຣະວັງ.

ສັງເວຊ (ສັງເວດ) ສລົດໃຈ

ສັງຫາຣິມທຣັພຍ໌ (ສັງຫາຣິມະຊັບ) ທຣັພຍ໌ສິນສົມບັຕິເຄື່ອນທີ່ໄດ້ ເຊັ່ນ ຣົຖ ເຮືອ, ງົວ ຄວາຍ....

ສັທລັມມ໌ (ສັດທຳ) ລັມມ໌ທີ່ດີ, ລັມມ໌ຂອງສັປປຸຣຸສ

ສັນໂດษ (ສັນໂດດ) ຄວາມຍິນດີ, ຄວາມພໍໃຈໃນສິ່ງທີ່ຕົນມີ

ສັມມິຊฌาน (ສັມມິດຖານ) ລົງຄວາມເຫັນ, ໃກ້ຄວາມເປັນຈິງ.

ສັປປຸຣຸษ (ສັບປຸຣຸດ) ຄົນດີ, ຄົນມີສີລລັມມ໌

ສັຫລັມມິກ (ສະຫະທຳມິກ) ຜູ້ປຕິບັຕິລັມມ໌ຮ່ວມກັນ, ຄືກັນ.

# ອ

ອກາລະ ເວລາບໍ່ສົມຄວນ, ຕອນບ່າຍ.

ອກາລິໂກ ພຣະທັມມ໌ບໍ່ຈຳກັດການເວລາ ໃຫ້ຜົລແກ່ຜູ້ປະຕິບັຕທຸກເວລາ

ອກຸສົລ ບໍ່ເປັນກຸສົລ, ບາປ

ອຄຕິ (ອະຄະຕິ) ຄວາມລຳອຽງ

ອໂຄຈຣ (ອະໂຄຈອນ) ສຖານທີ່ ແລະ ບຸຄຄົລ ທີ່ກິກຂຸບໍ່ຄວນໄປ ຫາມາສູ່ ສຳຣັບກິກຂຸ

ອຕຸ (ອະນຸ) ສິ່ງທີ່ນ້ອຍ ໆ, ລະອຽດ

ອຕິເຣກ (ອິຕິເຣກ) ເກີນກຳໜົດ, ເພີ່ມເຕີມ, ສ່ວນພິເສສ

ອធិກວາຣ (ອະທິກະວານ) ວັນທີ່ເພີ່ມຂຶ້ນໃນປີທາງຈັນທຣຄະຕິ

ອທິຈິຕຕສິກຂາ (ອະທິຈິຕຕະສິກຂາ) ການສຶກษาໃນອທິຈິຕ

ອທິປເຕຍຍະ, ອທິປະໄຕຍ໌ ຄວາມເປັນໃຫຍ່

ອທິສີລສິກຂາ (ອະທິສີລະສິກຂາ) ການສຶກษาໃນອທິສີລ

ອນາຄາມິຜົລ ຜົລທີ່ໄດ້ຮັບຈາກການລະສັງໂຍຊນ໌ ຄື ກາມຣາຄະ...

ອນາຄາມິມັຄຄ໌ ທາງປະຕິບັຕິເພື່ອບັລລຸປົລຄື ອນາຄາມິຜົລ...

ອນາຈາຣ(ອະນາຈານ)ຄວາມປະພຶຕຮ໌ບໍ່ດີບໍ່ງາມບໍ່ເໝາະສົມແກ່ບັຣພຊິຕ

ອນາຖາ ຍາກຈົນ, ທຸກຂ໌ຍາກ, ຂາດທີ່ເພິ່ງ

ອນຸມັຕ ເຫັນຕາມ, ເຫັນຊອບ, ເຫັນດີນຳ.

ອນຸມານ ຄາດຄະເນເອົາ, ຕັກຕວງ.

ອນຸຣັກຩ໌ (ອະນຸຣັກ) ຣັກຩາໄວ້ ແລະ ເສີມທວີຂຶ້ນ

ອນຸຨາສນ໌ (ອະນຸສາດ) ການສອນ, ຄຳສອນ

ອນຸສົນຘິ (ອະນຸສົນທິ) ການຕິດຕໍ່ກັນ ຕໍ່ເຂົ້າກັນ

ອມຣ (ອະມອນ) ບໍ່ຕາຍ ຜູ້ບໍ່ຕາຍ

ອຣຫັຕ (ອະຣະຫັດ) ຄວາມເປັນພຣະອຣຫັນຕ໌

ອຣິຍະ (ອະຣິຍະ) ຄົນຈເຣີນ, ຄົນປະເສີຖ

ອຣິຍກຊາຕິ (ອະຣິຍະກະຊາຕ) ໝູ່ຄົນທີ່ໄດ້ຣັບການສຶກຩາດີ

ອລັຊຊີ (ອະລັດຊີ) ຜູ້ບໍ່ມີຄວາມລະອາຍ, ພິກຂຸຜູ້ລະເມີດພຸທຘບັຎຎັຕິ

ອັກຂຣະ (ອັກຂະຣະ) ຕົວໜັງສື

ອັກຩຣ (ອັກສອນ) ຕົວໜັງສື

ອັນຕຣຘານ (ອັນຕະຣະທານ) ຫາຍໄປ, ສູນຫາຍໄປ

ອັຍການ (ໄອຍະການ) ພນັກງານສາລຝ່າຍອາຓາຈັກຣ໌

ອາຎາ (ອາຍາ) ອຳນາຈ, ໂທສ

ອາທຣ (ອາທອນ) ຄວາມເອື້ອເຟື້ອ, ຄວາມເອົາໃຈໃສ່

ອາມິສ (ອາມິດ) ສິ່ງຂອງ, ເຄື່ອງລໍ່ໃຈ

ອິຣິຍາບົຖ (ອິຣິຍາບົດ) ອາການເຄື່ອນໄຫວຂອງຮ່າງກາຍ

ອຸທາຫາຣຕ໌ (ອຸທາຫາອນ) ຕົວຢ່າງ, ການອ້າງເຖິງ

ອຸບັຕິ (ອຸບັດ) ເກີດຂຶ້ນ, ກໍາເນີດ

ອຸປນິສັຍ (ອຸປະນິໄສ) ຄວາມປະພຶຕຣ໌ທີ່ເຄີຍຊິນ

# ບັນຊີເຣື່ອງ

*ເລຂລຳດັບ* — *ກ-A* — *ໜ້າ*

## ຍມກະວັຄຄ໌ ທີ່ ໑


| | | |
|---|---|---|
| ໑. | ພຣະຈັກຂຸບາລ | ໔ |
| ໒. | ມັຍກຸກຕາຫະລີ | ໔ |
| ໓. | ພຣະຕິສສະເຖຣະ | ໖ |
| ໔. | ນາງ ກາລີຍັກຂີຕີ | ໗ |
| ໕. | ກິກຂຸ ໃນນຄຣໂກສັມພີ | ໙ |
| ໖. | ພຣະຈຸລກາລ ແລະ ມຫາກາລ | ໑໑ |
| ໗. | ພຣະເທວທັຕ | ໑໓ |
| ໘. | ສິລໄຊຍ໌ປຣິພາຊິກ | ໑໕ |
| ໙. | ພຣະນັນທເຖຣະ | ໑໖ |
| ໑໐ | ນາຍ ຈຸນທະສຸກະຣິກະ | ໑໘ |
| ໑໑. | ທັມມິກະ ອຸບາສົກ | ໑໙ |
| ໑໒. | ພຣະເທວທັຕ | ໒໐ |
| ໑໓. | ນາງສຸມນະເທວີ | ໒໑ |
| ໑໔. | ສຫາຍະກິກຂຸ | ໒໒A |


## ອັປປະມາທະວັຄຄ໌ ທີ່ ໒


| | | |
|---|---|---|
| ໑໕ | ນາງສາມາວະດີ | ໒໔ |

໑໖. ກຸມກະໂພສິກ ໒໕
໑໗. ພຣະຈູຣະປັນຖກະ ເຖຣະ ໒໗
໑໘. ງານບຸນນັກຂຕຣີກຂ໌ຂອງຄົນພາລ ໒໘
໑໙. ພຣະ ມຫາກັສສປະເຖຣະ ໓໐
໒໐ ກິກຂຸ ສອງ ສຫາຍ ໓໑
໒໑ ທ້າວ ສັກກະ ໓໒
໒໒ ອັລລະຕຣະ ກິກຂຸ ໓໔
໒໓. ພຣະນິຄົມຕິສສະເຖຣະ ໓໕

## ຈິຕຕະວັຄຄ໌ ທີ ໓

໒໔. ພຣະເມພິຍະ ເຖຣະ ໓໘
໒໕. ພຣະອຸກັຕາຫະກິຕະ ກິກຂຸ ໔໑
໒໖. ພຣະສັງພະຣັກຂິຕ ເຖຣະ ໔໒
໒໗. ພຣະປູຕິຄັຕຕະຕິສສະເຖຣະ ໔໙
໒໘. ນັນທະໂຄປາລະກະ ໕໑
໒໙. ພຣະໂສເຣຍຍະ ເຖຣະ ໕໒

## ປຸປຜະວັຄຄ໌ ທີ່ ໔

໓໐. ປະຖວິກຖາ ໕໕
໓໑. ມຣິຈິກັມມະການ ໕໖
໓໒. ວິຫູທະກະ ໕໘

| | | |
|---|---|---|
| ໓໓. | ນາງ ປະຕິປູຊິກາ | ໕໙ |
| ໓໔. | ມັຈຈຣິຍະ ໂກສິຍະເສຕຖີ | ໖໑ |
| ໓໕. | ປາຕິກາຊີວົກ | ໖໒ |
| ໓໖. | ຈັຕຕະປາຕິອຸບາສິກ | ໖໔ |
| ໓໗. | ນາງ ວິສາຂາ | ໖໕ |
| ໓໘. | ອານັນທະເຖຣະ ບັນຫາ | ໖໗ |
| ໓໙. | ພຣະມຫາກັສສປະເຖຣະ | ໖໘ |
| ໔໐. | ພຣະໂຄລິກະເຖຣະ | ໗໐ |
| ໔໑. | ຊີວົກ ຄຣະຫະທິນ | ໗໒ |


## ພາລວັຄຄ໌ ທີ່ ໕


| | | |
|---|---|---|
| ໔໒. | ອັນລະຕຣະບູຣຸສ | ໗໔ |
| ໔໓. | ສັທລີວິຫາຣິກ ຂອງ ພຣະມຫາກັສສະປະ | ໗໖ |
| ໔໔. | ອານັນທະ ເສຕຖີ | ໗໗ |
| ໔໕. | ຄັຕກີເຕທກະ ໂຈຣ | ໗໙ |
| ໔໖. | ພຣະອຸທາຍີເຖຣະ | ໘໐ |
| ໔໗. | ປາເຖຍຍະ ກິກຂຸ | ໘໑ |
| ໔໘. | ສຸປປະພຸທລະກຸຍກີ | ໘໒ |
| ໔໙. | ນາຍ ກະສະກະ | ໘໔ |
| ໕໐. | ນາຍ ສຸມນະມາລາກາຣ | ໘໕ |

໕໑. ນາງ ອຸບົລວັຕຕາເຖຣີ ໗໖

໕໒. ຊຸມພຸກາຊີວົກ ໗໘

໕໓. ອະຫິເປຕ ໘໐

໕໔. ສັຕກູຕະເປຕ ໘໑

໕໕. ພຣະສຸລົມມເຖຣະ ໘໔

໕໖. ວນະວາສີຕິສສະເຖຣະ ໘໖


## ບັຕທິຕວັຄຄ໌ ທີ່ ໖


໕໗. ພຣະຣາຂະເຖຣະ ໘໗

໕໘. ພຣະອັສສະຊີປຸນັພພະສຸກະ ໘໘

໕໙. ພຣະຈັນນະເຖຣະ ໑໐໐

໖໐. ພຣະມຫາກະປິນເຖຣະ ໑໐໑

໖໑. ບັຕທິຕະ ສາມເຕຣ ໑໐໓

໖໒. ພຣະລະກຸຕຍະກັທທິຍະເຖຣະ ໑໐໔

໖໓. ນາງກາຕມາຣດາ ໑໐໕

໖໔. ປັຍຈະສຕະ ກິກຂຸ ໑໐໗

໖໕. ພຣະລັມມິກະເຖຣະ ໑໐໙

໖໖. ລັມມັສສວະນະ ໑໑໐

໖໗. ພຣະ ອາຄັນຕຸກະກິກຂຸ ໑໑໓

## ຣະຫັນຕວັຄຄ໌ ທີ່ ໗

໖໘. ຊີວິກ ໑໑໕

໖໙. ພຣະມຫາກັສສປະເຖຣະ ໑໑໗

໗໐. ພຣະເວຣັຜກຸະສີສະເຖຣະ ໑໑໘

໗໑. ພຣະອນຸຣຸທລະເຖຣະ ໑໑໙

໗໒. ພຣະມຫາກັຈຈານະເຖຣະ ໑໒໑

໗໓. ພຣະສາຣີບຸຕຣ໌ເຖຣະ ໑໒໒

໗໔. ໂກສັມພີວາສີຕິສສະເຖຣະ ໑໒໓

໗໕. ພຣະສາຣີບຸຕຣ໌ເຖຣະ ໑໒໕

໗໖. ຂະທິຣະວະນິຍະເຣວະຕະເຖຣະ ໑໒໗

໗໗. ອັລລຕຣິຕຖີ ໑໒໙

## ສຫັສສະວັຄຄ໌ ທີ່ ໘

໗໘. ນາຍເພັຊຊຸະພາຕ ໃຈໂຫດ ໑໓໑

໗໙. ພຣະທາຣຸຈີຣິຍະເຖຣະ ໑໓໓

໘໐. ນາງກຸຕກັລເກສີເຖຣີ ໑໓໕

໗໑. ພຣາຫມຕ໌ ນັກການພນັນ ໑໓໗

໗໒. ລຸງ ຂອງ ພຣະສາຣີບຸຕຣ໌ເຖຣະ ໑໓໙

໗໓. ພຣາຫມຕ໌ ຫລານຂອງພຣະສາຣີບຸຕຣ໌ ໑໔໐

໗໔. ອາຍຸວັฒນະກຸມາຣ ໑໔໑

໗໕. ສັງກິຈຈະສາມເຕຣ ໑໔໓

໗໖. ພຣະຂານຸໂກຕທັญญະເຖຣະ ໑໔໕

໗໗. ພຣະສັປປະທາສະເຖຣະ ໑໔໖

໗໘. ນາງ ປະฎາຈາຣາເຖຣີ ໑໔໘

໗໙. ນາງ ກີສາໂຄຕະມີ ໑໔໙

໘໐. ນາງ ພະຫຸປຸຕຕິກາເຖຣີ ໑໕໐


## ປາປະວັຄຄ໌ ທີ່ ໙


໘໑. ພຣາຫມຕ໌ ຈູເຣກະສາฎົກ ໑໕໓

໘໒. ເສຍຍະສະກະ ກິກຂຸ ໑໕໔

໘໓. ລາຊະເທວະຜິດາ ໑໕໕

໘໔. ອນາຖະບິຕທິກະເສຕຖີ ໑໕໗

໘໕. ອສັญญະຕຣະບໍຣິຂາຣ ກິກຂຸ ໑໕໙

໘໖. ພິຣາລະປະທະກະ ເສຕຖີ ໑໖໐

໘໗. ມຫາຄນະພານິຊ ໑໖໑

ລ໗ ນາຍ ກຸກກຸຕະມິຕຣ໌ ໑໖໓
ລລ. ນາຍ ໂກກະສຸນັກຂະສຸທທກະ ໑໖໕
໑໐໐. ມຕິການອຸປະປາຕິສສະເຖຣະ ໑໖໗
໑໐໑ ຕະໄຍຊິນ ໑໖ລ
໑໐໒. ສຸປປະພຸທລະສັກກະ ໑໗໑

## ທັຕພະວັຄຄ໌ ທີ່໑໐

໑໐໓. ຈັພພັຄຄີຍ໌ກິກຂຸ ໑໗໓
໑໐໔. ຈັພພັຄຄີຍ໌ກິກຂຸ ໑໗໔
໑໐໕. ສັມພະທຸລະກຸມານ ໑໗໖
໑໐໖. ພຣະໂກຕພະລານະເຖຣະ ໑໗໗
໑໐໗. ອຸໄບສິຖກັມມ໌ ໑໗ລ
໑໐໘. ອຊະຄຣະເຜຕ ໑໘໐
໑໐ລ. ພຣະມຫາໂມຄຄັລລານະ ໑໘໓
໑໑໐. ພະທຸກັຕພິກະກິກຂຸ ໑໘໔
໑໑໑. ສັນຕະຕິ ມຫາອຳມາຕຍ໌ ໑໘໖
໑໑໒. ສຸຂສາມເພຣ ໑໘ລ

## ຊຣາວັຄຄ໌ທີ່ ໑໑

໑໑໓. ວິສາຂາສຫາຍິກາ ໑ລ໑

໑໑໔. ນາງສີຣິມາ ໑ລ໓

໑໑໕ ນາງອຸຕຣາເຖຣີ ໑ລ໕

໑໑໖. ອະຣິມານິກະກິກຊຸ ໑ລ໖

໑໑໗. ນາງ ຣູປນັນທາເຖຣີ ໑ລ໗

໑໑໘. ພຣະ ນາງມັລລິກາເທວີ ໑ລລ

໑໑ລ. ພຣະໂລຣຸທາຍີເຖຣະ ໔໐໐

໑໔໐. ປຖົມສົມໂພຣີ ໔໐໑

໑໔໑. ມຫາຣນະເສຕຖີບຸຕຣ໌ ໔໐໔


## ອັຕຕວັຄຄ໌ ທີ່ ໑໔


໑໔໔. ໂພຣີຣາຊກຸມາຣ ໔໐໗

໑໔໓. ພຣະ ອຸປະນັນທະສັກຍບຸຕຣ໌ ໔໐ລ

໑໔໔. ພຣະ ປະຣານິກະຕິສສະເຖຣະ ໔໑໑

໑໔໕. ມາຣດາຂອງພຣະກຸມາຣກັສສະປະເຖຣະ ໔໑໔

໑໔໖. ມຫາກາລ ອຸບາສົກ ໔໑໕

໑໔໗. ພຣະເທວທັຕ ໔໑໖

໑໔໘. ສັງຆເກທະປຣິສັກກະ ໔໑໗

໑໔ລ. ພຣະກາລເຖຣະ ໔໑ລ

໑໓໐. ຈຸລລະກາລະ ອຸບາສົກ ໔໔໐

໑໓໑. ພຣະອັຕຕະທັຕຖເຖຣະ ໔໒໑

## ໂລກວັຄຄ໌ ທີ່ ໑໓

໑໓໒. ຠິກຂຸໜຸ່ມ ໔໒໓
໑໓໓. ພຣະເຈົ້າສຸທໂທທນະ ໔໒໕
໑໓໔. ວິປັສສະຠິກຂຸ ໔໒໗
໑໓໕. ອຠັຍຣາຊກຸມາຣ ໔໒໙
໑໓໖. ພຣະສັມມັຊຊນະເຖຣະ ໔໓໐
໑໓໗. ພຣະອັງຄຸລິມາລເຖຣະ ໔໓໒
໑໓໘. ເປສະກາຣມາຣດາ ໔໓໓
໑໓໙. ຕິງສະຠິກຂຸ ໔໓໖
໑໔໐. ນາງ ຈິນຈະມານວິກາ ໔໓໗
໑໔໑. ອສທິສທານ ໔໓໙
໑໔໒. ອນາຖບິນທິກະປຸຕຕະກຖາ ໔໔໑

## ພຸທທວັຄຄ໌ ທີ່ ໑໔

໑໔໓. ມາຣທິດາ ໔໔໔
໑໔໔. ຍມກະປາຕິຫາຣິຍ໌ ໔໔໖
໑໔໕. ເອຣະກະປັຕຕະນາຄຣາຊ ໔໔໘

໑໔໖. ອານັນທະເຖຣະບັລຫາ ໔໕໑

໑໔໗. ອນະກິຣຕະກິກຂຸ ໔໕໒

໑໔໘. ອັຄຄີທັຕຕະປຸໂຣຫິຕ ໔໕໖

໑໔໙. ອານັນທະບັລຫາ ໔໕໘

໑໕໐. ສຸອັຕຕະເຈດີຍ໌ ໔໖໑


## ສຸຂວັຄຄ໌ ທີ່ ໑໕


໑໕໑. ຫຣົງຫ້າມພຣະຍາຕິວົງສ໌ ໔໖໕

໑໕໒. ເຣື່ອງ ມາຣ ໔໖໖

໑໕໓. ໂກສົລຣາຊປຣາຊັຍ ໔໖໗

໑໕໔. ອັລລຕຣະກຸລທາຣິກາ ໔໖໘

໑໕໕. ອັລລຕຣະອຸບາສິກາ ໔໗໐

໑໕໖. ພຣະເຈົ້າ ປະເສນທິໂກສົລ ໔໗໑

໑໕໗. ທ້າວສັກກະ ໔໗໕


## ປິຍະວັຄຄ໌ ທີ່ ໑໖


໑໕໘. ຕະໂຍບັຣພຊິຕ ໔໗໘

໑໕໙. ອັລລະຕຣະກຸຍຸມພີ ໔໘໙

໑໖໐. ນາງ ວິສາຂາອຸບາສິກາ ໔໘໑

໑໖໒. ກບັຕຣິຍ໌ ລິຈຈວີ ໔໘໒

໑໖໓. ອັຎຎະຕຣະ ພຣາຫມຓ໌ ໒໘໓

໑໖໔. ປັຎຈສຕະຫາຣິກ ໒໘໔

໑໖໕. ພຣະອນາຄາມິເຖຣະ ໒໘໖

໑໖໖. ນັນທິຍະ ໒໘໗


## ໂກຘວັຄຄ໌ ທີ່ ໑໗


໑໖໗. ນາງໂຣຫິຕິຂັຕຕິຍກັຎຎາ ໒໘໙

໑໖໘. ອັຎຎະຕຣະ ຠິກຂຸ ໒໙໑

໑໖໙. ນາງ ອຸຕຣາອຸບາສິກາ ໒໙໓

໑໗໐. ພຣະໂມຄຄັລລານະ ບັຎຫາ ໒໙໔

໑໗໑. ຠິກຂຸ ທູລຖາມບັຎຫາ ໒໙໖

໑໗໒. ນາງ ປຸຓຓະທາສີ ໒໙໗

໑໗໓. ອຕຸລະອຸບາສົກ ໓໐໐

໑໗໔. ຉັພພັຄຄິຍ໌ ຠິກຂຸ ໓໐໓


## ມລວັຄຄ໌ ທີ່ ໑໘


໑໗໕. ໂຄຆາຕບຸຕຣ໌ ໓໐໗

໑໗໖. ອັຎຎະຕຣະ ພຣາຫມຓ໌ ໓໐໘

໑໗໗. ພຣະຕິສສະເຖຣະ ໓໐໙

໑໗໘. ພຣະ ໂລຬຸທາຍີ ໓໑໑

| | | |
|---|---|---|
| ໑໗໙. | ອັນຍະຕຣະກຸລບຸຕຣ໌ | ໓໑໓ |
| ໑໘໐. | ພຣະຈູຣະສາຣີ ພິກຂຸ | ໓໑໕ |
| ໑໘໑. | ປັນຈກະອຸບາສິກາ | ໓໑໗ |
| ໑໘໒. | ຕິສສະທະຫຣະ | ໓໑໙ |
| ໑໘໓. | ປັນຈະອຸບາສິກາ | ໓໒໐ |
| ໑໘໔. | ເມນທກະເສຕຖີ | ໓໒໑ |
| ໑໗໕. | ອຸຊຊານສັນນີເຖຣະ | ໓໒໒ |
| ໑໗໖. | ສຸພັທທະ | ໓໒໔ |

## ທັມມັຕຖະ ວັຄຄ໌ ທີ່ ໑໙

| | | |
|---|---|---|
| ໑໗໗. | ວິນິຈຈັຍ ມຫາອັມມາຕຍ໌ | ໓໒໘ |
| ໑໗໘. | ຈັພພັຄຄິຍ໌ ພິກຂຸ | ໓໒໙ |
| ໑໗໙. | ພຣະເອກຸທານເຖຣະ | ໓໓໐ |
| ໑໘໐. | ລະກຸນຕະກະພັທທິຍະເຖຣະ | ໓໓໒ |
| ໑໘໑. | ສັພພະຫຸລະພິກຂຸ | ໓໓໓ |
| ໑໘໒. | ຫັຕຖະກະພິກຂຸ | ໓໓໕ |
| ໑໘໓. | ອັນຍະຕຣະພຣາຫມຕ໌ | ໓໓໖ |
| ໑໘໔. | ເດັຍຣຖີຍ໌ | ໓໓໘ |
| ໑໘໕. | ອຣິຍະພາລິສິກະ | ໓໓໙ |

໑໘໖. ສັມພະຫຸລະຠິກຂຸ ໓໔໐

## ມັຄຄວັຄຄ໌ ທີ່ ໒໐

໑໘໗. ປັຎຈະສຕະຠິກຂຸ ໓໔໓
໑໘໘. ອະປະຣະປັຎຈະສຕະຠິກຂຸ ໓໔໕
໑໘໙. ປທານະກັມມິກະຕິສສະຠິກຂຸ ໓໔໖
໑໙໐. ສຸກຣເຜຕ ໓໔໗
໑໙໑. ພຣະໂປຖິລະເຖຣະ ໓໔໙
໑໙໒. ພຣະມຫັລກະເຖຣະ ໓໕໑
໑໙໓. ສັທຘິວິຫາຣິກ ຂອງ ພຣະສາຣີບຸຕຣ໌ ໓໕໒
໑໙໔. ມຫາຘນະພານິຊ ໓໕໓
໑໙໕. ນາງ ກິສາໂຄຕະມີ ໓໕໔
໑໙໖. ນາງ ປຏາຈາຣາເຖຣີ ໓໕໖

## ປະກິຓຓກະວັຄຄ໌ ທີ່ ໒໑

໑໙໗. ອັຕຕະໂນປຸພພະກັມມ໌ ໓໕໗
໑໙໘. ກຸກກຸຜັຕຑະຂາທິກາ ໔໕໙
໑໙໙. ຠັທຘິຍະຠິກຂຸ ໔໖໑
໒໐໐. ພຣະລະກຸຕຒະກະຠັທິຍເຖຣະ ໔໖໒
໒໐໑. ນາຍ ທາຣຸສາກະຜິກະ ໔໖໖

| | | |
|---|---|---|
| ໒໐໒. | ວັຊຊີປຸຕຕກະບຸຕຣ໌ | ໓໖໘ |
| ໒໐໓. | ຈິຕຕະຄຫະບໍດີ | ໓໖໙ |
| ໒໐໔. | ພຣະເອກະວິຫາຣະເຖຣະ | ໓໗໒ |


## ນິຣຍວັຄຄ໌ ທີ່ ໒໒


| | | |
|---|---|---|
| ໒໐໕. | ສຸນທຣີປຣິພາຊິກາ | ໓໗໓ |
| ໒໐໖. | ທຸກຂປີຣິຕະສັຕວ໌ | ໓໗໔ |
| ໒໐໗. | ວັຄຄຸມຸທາຄີຣິຍະ ຠິກຂຸ | ໓໗໖ |
| ໒໐໘. | ເຂມກເສຕຖີບຸຕຣ໌ | ໓໗໗ |
| ໒໐໙. | ທຸພພະຈະຠິກຂຸ | ໓໗໙ |
| ໒໑໐. | ອິສສາປກຕະອິຕຖີ | ໓໘໐ |
| ໒໑໑. | ອາຄັນຕຸກະ ຠິກຂຸ | ໓໘໑ |
| ໒໑໒. | ນິຄັນຖະ | ໓໘໓ |
| ໒໑໓. | ຕິຜກິຍສາວິກ | ໓໘໔ |


## ນາຄວັຄຄ໌ ທີ່ ໒໓


| | | |
|---|---|---|
| ໒໑໔. | ພຣະພຸທຂອງຄ໌ | ໓໘໘ |
| ໒໑໕. | ທັຕຖາຈຣິຍບຸພພາຈາຣຍ໌ | ໓໙໐ |
| ໒໑໖. | ປຣິຊິຕຕະພຣາຫ໌ມຕບຸຕຣ໌ | ໓໙໑ |
| ໒໑໗. | ພຣະເຈົ້າປເສນທິໂກສົລ | ໓໙໓ |

໑໑໗. ສານຸສາມເຕຣ ໓໙໔

໑໑໙. ປາເວຣກະທັຕຖີ ໓໙໕

໑໒໐. ສົມພຫຸລະກິກຂຸ ໓໙໗

໑໒໑. ເຣື່ອງ ມາຣ ໔໐໐


## ຕັຕຫາ ວັຄຄ໌ ທີ່ ໒໔


໑໒໒. ກະບິລມັຈຈະ ໔໐໓

໑໒໓. ສູກຣະໂປຕິກາ ໔໐໗

໑໒໔. ວິພະກັນຕະກະ ໔໐໙

໑໒໕. ພັນລະນາກາຣ ໔໑໑

໑໒໖. ນາງເຂມາ ໔໑໓

໑໒໗. ອຸຄຄະເສນະເສຕຖີ ໔໑໔

໑໒໘. ຈູຂະສນຸຄຄຫະ ບັຕຫິຕ ໔໑໖

໑໒໙. ເຣື່ອງມາຣ ໔໑໘

໑໓໐. ອຸປະກາຊີວິກ ໔໑໙

໑໓໑. ສັກກະເທວຣາຊ ໔໒໐

໑໓໒. ອຸປຸຕຕກະເສຕຖີ ໔໒໒

໑໓໓. ອັງກຸຣເທວບຸຕຣ໌ ໔໒໔

## ຠິກຂຸ ວັຄຄ໌ ທີ່ ໒໕


໒໓໔. ປັຎຈະ ຠິກຂຸ ໔໒໗

໒໓໕. ພຣະຫັງສຆາຕກະ ຠິກຂຸ ໔໒໙

໒໓໖. ໂກກາລິກະ ຠິກຂຸ ໔໓໐

໒໓໗. ພຣະຘັມມາຣາມະ ເຖຣະ ໔໓໒

໒໓໘. ຠິກຂຸບໍຣິຂາຣ (ພຣະເທວທັຕ) ໔໓໔

໒໓໙. ປັຎຈັຄຄະທາຍກະພຣາຫມຓ໌ ໔໓໕

໒໔໐. ຠິກຂຸ ອດິຕໂຈຣ ໔໔໑

໒໔໑. ປັຎຈສຕະ ຠິກຂຸ ໔໔໓

໒໔໒. ພຣະສັນຕະກາຍເຖຣະ ໔໔໔

໒໔໓. ພຣະນັງຄລະກູຜະເຖຣະ ໔໔໖

໒໔໔. ພຣະວັກກະລິເຖຣະ ໔໔໘

໒໔໕. ສຸມນະສາມເຓຣ ໔໔໙


## ພຣາຫ໌ມຓວັຄຄ໌ ທີ່ ໒໖


໒໔໖. ປະສາທະພຫຸລະ ພຣາຫ໌ມຓ໌ ໔໕໑

໒໔໗. ສັມພຫຸລະ ຠິກຂຸ ໔໕໓

໒໔໘. ເຣື່ອງ ມາຣ ໔໕໓A

໒໔໙. ອັຎຎຕຣະພຣາຫມຓ໌ ໔໕໔

| | | |
|---|---|---|
| ໑໕໐. | ພຣະອານົນທເຖຣະ | ໔໕໕ |
| ໑໕໑. | ອັລລຕຣະ ບັຣພຊິຕ | ໔໕໖ |
| ໑໕໒. | ພຣະສາຣີບຸຕຣ໌ເຖຣະ | ໔໕໘ |
| ໑໕໓. | ນາງ ມຫາປະຊາບໍດີໂຄຕະມີ | ໔໕໙ |
| ໑໕໔. | ພຣະສາຣີບຸຕຣ໌ເຖຣະ | ໔໖໐ |
| ໑໕໕. | ຊຸມີລພຣາຫມຕ໌ | ໔໖໑. |
| ໑໕໖. | ກຸທກະພຣາຫມຕ໌ | ໔໖໒ |
| ໑໕໗. | ນາງກີສາໂຄຕມີ | ໔໖໔ |
| ໑໕໘. | ເຣື່ອງ ພຣາຫມຕ໌ | ໔໖໕ |
| ໑໕໙. | ອຸຄຄະເສນະ | ໔໖໖ |
| ໑໖໐. | ເຣື່ອງ ພຣາມຫມຕ໌ ໑ ຄົນ | ໔໖໗ |
| ໑໖໑. | ອັກໂກສກະກາຣະທວາຊະ | ໔໖໙ |
| ໑໖໒. | ພຣະສາຣີບຸຕຣ໌ ເຖຣະ | ໔໗໐ |
| ໑໖໓. | ນາງ ອຸບົລວັຕຕາເຖຣີ | ໔໗໑ |
| ໑໖໔. | ອັລລຕຣະພຣາຫມຕ໌ | ໔໗໓ |
| ໑໖໕. | ນາງເຂມາກິກຂຸນີ | ໔໗໓A |
| ໑໖໖. | ພຣະປັພກາຣວາສີຕິສສະເຖຣະ | ໔໗໔ |
| ໑໖໗. | ອັລລຕຣະກິກຂຸ | ໔໗໖ |

໒໖໘. ສາມເພດ ໔ ອົງຄ໌ ໔໗໙
໒໖໙. ພຣະມຫາປັນຖກະເຖຣະ ໔໘໑
໒໗໐. ພຣະປີລິນທະວັຈຈະ ໔໘໒
໒໗໑. ອັຍຍຕຣະກິກຂຸ ໔໘໔
໒໗໒. ພຣະສາຣີບຸຕຣ໌ ໔໘໕
໒໗໓. ພຣະໂມຄຄັລລານະເຖຣະ ໔໘໖
໒໗໔. ພຣະເຣວຕະເຖຣະ ໔໘໗
໒໗໕. ພຣະຈັນທາກະເຖຣະ ໔໘໘
໒໗໖. ພຣະສີວລີເຖຣະ ໔໙໐
໒໗໗. ພຣະສຸນທຣສມຸທຣ໌ເຖຣະ ໔໙໒
໒໗໘. ພຣະຊຸຜິລເຖຣະ ໔໙໔
໒໗໙. ນະຜະປຸພພກະ ໔໙໗
໒໘໐. ພຣະອັງຄີສະເຖຣະ ໔໙໙
໒໘໑. ລັມມະທິນນາເຖຣີ ໕໐໑
໒໘໒. ພຣະອົງຄຸລີມາລເຖຣະ ໕໐໓
໒໘໓. ເທວທິຕະພຣາຫມຕ໌ ໕໐໔

---

# ພຣະສັນນປິຫ

## ຂຸທທະກະນິກາຍ

## ພາສາບາລີ-ລາວ

## ພ້ອມດ້ວຍນິທານປະກອບ ໂດຍຫຍໍ້

---

### ຍະມະກະວັຄຄ໌ ທີ່ ໑

### ໝວດວ່າດ້ວຍຄວາມດີ ແລະ ຄວາມຊົ່ວ ທີ່ເປັນຄູ່ກັນ

### ໑

ມະໂນປຸພພັງຄະມາ ສັມມາ
 ມະໂນເສຕຖາ ມະໂນ ມະຍາ
ມະນະສາ ເຈ ປະທຸຕເຖນະ
 ພາສະຕິ ວາ ກະໂຣຕິ ວາ
ຕະໂຕ ນັງ ທຸກຂະມັນເວຕິ
 ຈັກກັງວະ ວະຫະໂຕ ປະທັງ ໑໑

ສັມມ໌ ທັງຫລາຍ ມີໃຈເປັນຫົວໜ້າ ມີໃຈເປັນໃຫຍ່ ສຳເຣັຈໄດ້ດ້ວຍໃຈ, ຖ້າເວົ້າ ຫຣືວ່າ ເຮັດຢ່າງໃດລົງໄປ ດ້ວຍໃຈທີ່ຊົ່ວແລ້ວ ຄວາມ

ທຸກຂ໌ ຍ່ອມຕິດຕາມຕົວເຂົາໄປ ເໝືອນດັ່ງກົງກວຽນ ທີ່ໝຸນໄປຕາມຕີນງົວ ທີ່ແກ່ແອກໄປ ສັນນັ້ນແລ ฯ

## ເຣື່ອງ ພຣະຈັກຂຸບາລເຖຣະ

ຄາວທີ່ ພຣະຈັກຂຸບາລ ຍັງເປັນຄຣືຫັສຖ໌ຢູ່ນັ້ນ, ເມື່ອເພິ່ນໄດ້ຟັງຊຶ່ງພຣະທັມມເທສນາ ຂອງ ພຣະບໍຣົມສາສດາແລ້ວ ເພິ່ນເກີດມີສັທທາ ຄວາມເຫລື້ອມໃສຈຶ່ງໄດ້ຕັດສິນໃຈອອກບວຊ ໂດຍມອບທຣັພຍ໌ສິນສົມບັຕິທັງໝົດໃຫ້ແກ່ຜູ້ທີ່ເປັນນ້ອງຊາຍ.

ເມື່ອບວຊແລ້ວ ເພິ່ນໄດ້ບຳເພັຍພຽຣ ຢ່າງແຮງກ້າ ເຖິງແມ່ນວ່າຈະເຈັບຕາ ເພິ່ນກໍບໍ່ຍອມຮັບການປິ່ນປົວ ຈົນຕາບອດພ້ອມໆ ກັບໄດ້ບັຣລຸພຣະອະຣະຫັຕຜົລ.

ໃນວັນນຶ່ງ, ໃນຂຕະທີ່ເພິ່ນເດີນຈົງກົມຢູ່ນັ້ນ ເພິ່ນໄດ້ຢຽບແມງໄມ້ຕາຍໂດຍບໍ່ຮູ້ສຶກຕົວ. ເມື່ອກິກຂຸ ທັງຫລາຍ ເຫັນເຊັ່ນນັ້ນ ຈຶ່ງໄດ້ນຳເອົາເຣື່ອງນັ້ນ ຂຶ້ນຂາບທູລ ແດ່ ພຣະຜູ້ມີພຣະກາຄເຈົ້າໃຫ້ທຣົງຊາບ.

ພຣະພຸທລະອົງຄ໌ ທຣົງຕຣັສວ່າ ພຣະຈັກຂຸບາລ ເປັນພຣະອຣຫັນຕ໌ ເພິ່ນບໍ່ມີເຈຕນາ ທີ່ຈະຂ້າສັຕວ໌ໃຫ້ເຖິງແກ່ຄວາມຕາຍ. ເພື່ອແກ້ຄວາມສົງສັຍຂອງກິກຂຸ ເຫລົ່ານັ້ນ ພຣະຍອດແກ້ວສັພພັຍຍູ ຈຶ່ງໄດ້ຕຣັສ ພຣະຄາຖາດັ່ງທີ່ໄດ້ຍົກຂຶ້ນມາ ຂ້າງຕົ້ນນີ້ ນັ້ນແລ ฯ

ກິກຂຸ ທັງຫລາຍ ຢ່າກຮູ້ເຖິງບຸພພກັມມ໌ທີ່ເຮັດໃຫ້ ພຣະຈັກຂຸບາລຕາບອດ.

ພຣະຍອດແກ້ວ ສັພພັຍຍູ ທຣົງຕຣັສເຖິງບາບກັມມ໌ ທີ່ພຣະຈັກຂຸ-ບາລເຖຣະ ໄດ້ກະທຳໄວ້ໃນອດີຕຊາຕິນັ້ນວ່າ :

ເພິ່ນເປັນນາຍແພທຍ໌ປົວຕາ ໄດ້ປົວ ຍາຍຊະຣາ ຜູ້ຍາກຈົນ ຕາຟາງຜູ້ນຶ່ງ. ຍາຍຊະຣາ ພ້ອມດ້ວຍລູກສາວ ໄດ້ໃຫ້ຄຳໝັ້ນສັນຍາວ່າ ຖ້າວ່າປົວດີຈະຍອມເປັນຂ້າທາສຮັບໃຊ້. ເມື່ອນາຍແພທຍ໌ປົວດີແລ້ວ ຍາຍຊະຣາຜູ້ນັ້ນບໍ່ຍອມປະຕິບັຕຕາມສັນຍາ ໂດຍຕົວະວ່າ ຕົນບໍ່ເຫັນຮຸ່ງຢູ່. ນາຍແພທຍ໌ໜຸ່ມຈຶ່ງໄດ້ເອົານ້ຳມັນຢອດໃສ່ຕາເຮັດໃຫ້ຕາບອດຄືເກົ່າ. ດ້ວຍບຸພພະກັມມ໌ອັນນັ້ນນຳມາສນອງ ເຮັດໃຫ້ ພຣະຈັກຂຸບາລຕາບອດໃນຊາຕິນີ້.

---

## ໔

ມະໂນປຸພພັງຄະມາ ທັມມາ
    ມະໂນເສຕຖາ ມະໂນ ມະຍາ,
ມະນະສາ ເຈ ປະສັນເນນະ
    ກາສະຕິ ວາ ກະໂຣຕິ ວາ
ຕະໂຕ ນັງ ສຸຂະມັນເວຕິ
    ຉາຍາ ວະ ອະນຸປາຍິນີ ໑໔໑

ທັມມ໌ ທັງຫລາຍ ມີໃຈເປັນຫົວໜ້າ ມີໃຈເປັນໃຫຍ່ ສຳເຣັຈໄດ້

ດ້ວຍໃຈ, ຖ້າຄົນໃດ ມີໃຈຜ່ອງໃສ ບໍຣິສຸທທິແລ້ວ, ເວົ້າຢູ່ ກໍຕາມ ເຮັດຢູ່ກໍ ຕາມ ດ້ວຍໃຈອັນບໍຣິສຸທທິ ສະອາດແລ້ວ ຄວາມສຸຂຍ່ອມຕິດຕາມເຂົາໄປ ຄື ດັ່ງເງົາທຽມຕົວໄປ ສັນນັ້ນແລ ฯ

# ເຣື່ອງ ມັຕຖະກຸຕຫະລີ

ໃນສມັຍນຶ່ງ, ພຣະບໍຣົມສາສດາ ທຣົງຜາຣົພ ມັຕຖະກຸຕຫະລີ ຜູ້ທີ່ ເປັນບຸຕຣ໌ຊາຍຄົນດຽວ ຂອງພຣາຫມຕ໌ຂີ້ຖີ່ຜູ້ນຶ່ງ. ທ່ານພຣາຫມຕ໌ ໄດ້ເຮັດ ຕ້າງຫູຄຳໃຫຍ່ຄູ່ນຶ່ງ ດ້ວຍຕົນເອງໃຫ້ລູກ ໂດຍບໍ່ຈ້າງຊ່າງ ເພາະຢ້ານເສັຍຄ່າ ແຮງງານ. ເວລາລູກຊາຍລົ້ມປ່ວຍ ກໍບໍ່ກ້າໄປຫາໝໍ. ເມື່ອອາການເຈັບປ່ວຍ ໜັກຂຶ້ນ ແລະໃກ້ເວລາທີ່ຈະສິ້ນລົມຫາຍໃຈນັ້ນ, ພຣະບໍຣົມສາສດາໄດ້ສເດັຈ ໄປ ແລະ ທຣົງເປັ່ງ ພຣະໂອກາສຣັສມີ ໃຫ້ມັຕຖະກຸຕຫະລີເຫັນ ເມື່ອເຫັນ ຈຶ່ງພຣະຣັສມີ ລາວເກີດມີຄວາມເຫລື້ອມໃສ ແລະທຳກາລະກິຣິຍາລົງໃນຂຕະ ນັ້ນ ແລະໄປເກີດໃນ ຕາວະຕິງສເທວະໂລກ.

ເມື່ອເຫັນພຣາຫມຕ໌ຜູ້ເປັນບິດາມີຄວາມໂສກເສົ້າ ຈຶ່ງແປງເພສເປັນ ກຸມາຣນ້ອຍ ລົງມາຊ່ວຍໃຫ້ພຣາຫມຕ໌ຫາຍຈາກຄວາມໂສກ ແລະມີຄວາມ ເຫລື້ອມໃສໃນພຣະພຸທທສາສນາ ແລ້ວກັບຄືນສູ່ເທວໂລກ.

ໃນເຊົ້າມື້ໃໝ່, ພຣາຫມຕ໌ໄດ້ນິມົນຕ໌ ພຣະສາສດາ ພ້ອມດ້ວຍສົງฆ໌ ບໍຣິວາຣ ໄປສັນກັຕຕາຫາຣທີ່ເຮືອນຂອງຕົນ ແລະ ທູລຖາມເຣື່ອງການພຽງ ແຕ່ມີຄວາມເຫລື້ອມໃສ ໃນພຣະອົງຄ໌ ເທົ່ານັ້ນ ບໍ່ໄດ້ທຳບຸຌກຸສົລຢ່າງອື່ນກໍ

ອາຈໄປເກີດໃນສວັຣຄ໌ໄດ້.

ໃນຂະນະນັ້ນ, ພຣະພຸທສອົງຄ໌ຈຶ່ງທຣົງອລິບາຍໃຫ້ມັຍກຸະກຸດທະລິເທວບຸດຣ ລົງມາສແດງເຫດຜົລ ເປັນພຍານຫລັກຖານ ແກ່ຊຸມຊົນໃນທີ່ນັ້ນເຫັນ ແລ້ວຈຶ່ງຕຣັສ ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາຂ້າງຕົ້ນນັ້ນແລ ຯ

---

໓

ອັກໂກຈລິ ມັງ ອະວະຄິ ມັງ,

ອະຊິນິ ມັງ ອະຫາສິ ເມ

ເຍ ຈະ ຕັງ ອຸປະນັຍຫັນຕິ

ເວຣັງ ເຕສັງ ນະສັມມະຕິ, ຯ໓ຯ

ໃຜ ທີ່ມີວແຕ່ອາພາຕ ຫງ່າເງືອດຢູ່ໃນໃຈວ່າ "ເຂົາດ່າເຮົາ ເຂົາທຳຮ້າຍເຮົາ, ເຂົາເອົາແພ້ເຮົາ ເຂົາລັກຂໂມຍເອົາຂອງເຮົາ" ເວຣຂອງເຂົາຍ່ອມບໍ່ມີທາງທີ່ຈະຣະງັບ ສິ້ນສຸດລົງໄດ້ ຯ

໔

ອັກໂກຈລິ ມັງ ອະວະຄິ ມັງ

ອະຊິນິ ມັງ ອະຫາສິ ເມ

ເຍ ຈະ ຕັງ ນູປະນັຍຫັນຕິ

ເວຣັງ ເຕສູປະສັມມະຕິ ຯ໔ຯ

ໃຜ ທີ່ບໍ່ຄິດອາຄາຕ ຫຍຸ່ງເງືອດໄວ້ໃນໃຈວ່າ "ເຂົາດ່າເຮົາ ເຂົາທຳຮ້າຍເຮົາ ເຂົາເອົາແພ້ເຮົາ ເຂົາລັກຂໂມຍຂອງເຮົາ" ເວຣຂອງເຂົາຍ່ອມຣະງັບ ດັບຫາຍໄປໄດ້.

## ເຣື່ອງ ພຣະຕິສສະເຖຣະ

ພຣະບໍຣົມສາສດາ ທຣົງຜາຣົພ ພຣະຕິສສະເຖຣະ ຜູ້ທີ່ເປັນໂອຣົສຂອງ ພຣະປິຕຸຈສາ (ອາວ) ຂອງພຣະອົງຄ໌ ອອກຜນວຊເມື່ອມີພຣະຊົນແກ່ເພິ່ນມີມານະ (ຍ້ອນວ່າຕົນສູງອາຍຸ) ຈຶ່ງບໍ່ທຳວັຕຣ໌ປະຕິບັຕິຕໍ່ ພຣະອາຄັນຕຸກະຕາມວິນັຍນິຍົມ. ພຣະສາສດາ ທຣົງປັບໂທສ ໃຫ້ໄປຂໍຂະມາໂທສຕໍ່ ກິກຂຸເຫລົ່ານັ້ນ, ເພິ່ນດື້ ບໍ່ຍອມກະທຳຕາມຮັບສັ່ງ. ພຣະພຸທຸລອົງຄ໌ ຈຶ່ງຕຣັສເລົ່າເຣື່ອງ ພຣະຕິສສະເຖຣະຜູ້ດື້ ໃຫ້ກິກຂຸ ທັງຫລາຍຟັງວ່າ, ຕັ້ງແຕ່ຄັ້ງທີ່ພຣະຕິສສະເຖຣະ ເປັນດາບົສ ຊື່ວ່າ ເທວລະ ສ່ວນພຣະອົງຄ໌ນັ້ນກໍເປັນດາບົສ ຊື່ວ່າ ນາຣະທະ ເກີດມີວິວາທກັນຂຶ້ນ ເທວລະ ບໍ່ຍອມຂໍຂະມາ. ເຣື່ອງນີ້ຮ້ອນໄປເຖິງພຣະເຈົ້າພາຣາຕະສີ ສເດັຈໄປໃຫ້ພຣະເທວລະ ຂໍໂທສພຣະນາຣທະແຕ່ ພຣະເທວລະ ບໍ່ຍອມປະຕິບັຕິຕາມ. ມາໃນບັດນີ້, ພຣະຕິສສະເຖຣະນີ້ກໍຍັງດື້ດ້ານເໝືອນດັ່ງໃນອະດີຕນັ້ນຢູ່. ບັດນັ້ນ ພຣະຍອດແກ້ວສັພພັຍຍູ ຈຶ່ງໄດ້ຕຣັສ ພຣະຄາຖາ ດັ່ງທີ່ຍົກຂຶ້ນມາເບື້ອງຕົ້ນນີ້ ໃຫ້ກິກຂຸທັງຫລາຍຟັງ.

ໃນທີ່ສຸດ, ເມື່ອໄດ້ຟັງພຣະທັມເທສນາ ກ່ຽວກັບບຸພພກັມມ໌ໃນອດີຕ

ຊາຕິຈາກ ພຣະຍອດແກ້ວສັພພັຌຌູນັ້ນແລ້ວ ພຣະຕິສສະເຖຣະ ກໍໄດ້ຍອມໄປ ຂໍຂະມາໂທສ ພຣະອາຄັນຕຸກະເຖຣະ ເຫລົ່ານັ້ນ.

---

### ໕

ນະ ຫິເວເຣນະ ເວຣານີ
ສັມມັນຕີລະ ກຸທາຈະນັງ
ອະເວເຣນະ ຈະ ສັມມັນຕີ
ເອສະ ລັມໂມ ສະນັນຕະໂນ ໆ໕ໆ

ຕັ້ງແຕ່ໃດໆ ມາໃນໂລກນີ້ ເວຣຍ່ອມບໍ່ມີທາງທີ່ຈະຣະງັບລົງໄດ້ດ້ວຍການຈອງເວຣ ຜູກເວຣກັນຕໍ່, ແຕ່ຈະຣະງັບລົງໄດ້ດ້ວຍການບໍ່ຈອງເວຣ. ອັນນີ້ ເປັນກົຌເກຕທ໌ ທີ່ຕາຍຕົວ.

## ເຣື່ອງ ນາງກາລີຍັກຂິນີ

ພຣະຜູ້ມີພຣະກາຄເຈົ້າ ທຣົງຜາຣົພຫລິງໝັ້ນ ທີ່ຢູ່ກັບສາມີມາເປັນເວລາຫລາຍປີ ບໍ່ມີບຸຕຣ໌. ນາງຢ້ານສາມີຈະໄປມີເມັຍນ້ອຍ ກໍເລີຍໄປຫາເມັຍນ້ອຍໃຫ້ສາມີໄວ້ກ່ອນ. ເມື່ອເມັຍນ້ອຍຕັ້ງຄັຣກ໌ (ມີທ້ອງ) ນາງກໍໄດ້ແຕ່ງຢາພິສເພື່ອທຳລາຍລູກໃນທ້ອງໃຫ້ຫລຸເຖິງ ໒ ຄັ້ງ. ໃນຄັ້ງທີ່ ໓ ເມັຍນ້ອຍທົນ

ຕໍ່ພິສຢາບໍ່ໄດ້ກໍໄດ້ເຖິງແກ່ຄວາມຕາຍ. ເມື່ອສາມີຮູ້ເຫຕຸນັ້ນ ຈຶ່ງໄດ້ທຸບຕີເມັຍຜູ້ເປັນໝັນ ຈົນເຖິງແກ່ຄວາມຕາຍ. ນາງທັງ ໒ ຕ່າງກໍ່ອາຆາຕຈອງເວຣກັນ.

ໃນຊາຕິຕໍ່ມາ, ເມັຍນ້ອຍ ກັບເກີດມາເປັນແມວ ເມັຍຫລວງເກີດມາເປັນໄກ່. ໃນຊາຕິຕໍ່ມາ ເມັຍນ້ອຍກັບເກີດມາເປັນກວາງ, ເມັຍຫລວງເກີດມາເປັນເສືອເຫລືອງ. ໃນຊາຕິທີ່ ໓ ນີ້ ເມັຍນ້ອຍເກີດມາເປັນນາງຍັກຂິນີ ສ່ວນເມັຍຫລວງ ເກີດມາເປັນນາງ ກຸລຘິດາ. ໃນຊາຕິນີ້ ນາງຍັກຂິນີ ໄດ້ກິນລູກນາງກຸລຘິດາ ໒ ຄັ້ງ, ໃນຄັ້ງທີ່ ໓ ນາງກຸລຘິດາໄດ້ອູ້ມລູກນ້ອຍແລ່ນເຂົ້າໄປໃນພຣະວິຫາຣເຊຕວັນ.

ໃນຂຓະນັ້ນ, ພຣະບໍຣົມສາສດາ ທຣົງສແດງຘັມມ໌ແກ່ ພຸທຘບໍຣິຩັທຢູ່. ນາງໄດ້ອູ້ມລູກນ້ອຍເຂົ້າໄປຖວາຍ ພຣະຜູ້ມີພຣະຠາຄເຈົ້າ. ໃນເວລານັ້ນ ນາງຍັກຂິນີ ກໍແລ່ນຕິດຕາມມາທັນ. ພຣະອົງຄ໌ໄດ້ຮຽກໃຫ້ນາງຍັກຂິນີເຂົ້າໄປໃນທີ່ຊ້ອງພຣະພັກຕຣ໌ ແລ້ວຕຣັສສແດງ ພຣະຘັມມິກຖາໃຫ້ນາງທັງ ໒ ຍຸຕິກາຣຈອງເວຣຕໍ່ກັນ ດ້ວຍບາທພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາຂ້າງຕົ້ນນີ້.

---

໕

ປະເຣ ຈະ ນະ ວິຊານັນຕິ
　　ມະຍະເມຕຖະ ມະຍາມະເສ
ເຍ ຈະ ຕັຕຖະ ວິຊານັນຕິ
　　ຕະໂຕ ສັມມັນຕິ ເມຘະຄາ ໆ໕ໆ

ຄົນທີ່ວໄປຄິດບໍ່ເຖິງດອກວ່າ ຕົນພວມຈະເຖິງຊຶ່ງຄວາມພິນາສ ຈົບຫາຍໄປຢູ່ ຍ້ອນຄວາມວິວາທຜິດຖຽງກັນ. ສ່ວນຜູ້ທີ່ຮູ້ເຖິງຄວາມຈິງເຊັ່ນນັ້ນແລ້ວ ເຂົາເຈົ້າ ຍ່ອມບໍ່ທະເລາະວິວາທຜິດຖຽງກັນ ຕໍ່ໄປອີກ.

# ເຣື່ອງ ກິກຂຸ ໃນນຄຣໂກສັມພີ

ຄາວເມື່ອ ພຣະບໍຣົມສາສດາ ທຣົງປະທັບຢູ່ ໃນນຄຣໂກສັມພີນັ້ນ ພຣະພຸທສອົງຄ໌ທຣົງຜາຣົພ ກິກຂຸ ທັງຫລາຍໃນເມືອງນັ້ນ ທີ່ເກີດມີປາກສຽງກັນຂຶ້ນ ດ້ວຍເຫດປັບອາບັດກັນເລັກນ້ອຍ. ພາຍຫລັງມາໄດ້ມີການທະເລາະກັນຂຶ້ນເລີຍກາຍໄປເປັນເຣື່ອງໃຫຍ່ ຈົນຮ້ອນຮອດ ພຣະສາສດາ ພຣະອົງຄ໌ໄດ້ສເດັຈໄປຫ້າມປາມໄວ້ ແຕ່ກິກຂຸ ເຫລົ່ານັ້ນບໍ່ຍອມຟັງ.

ໃນທີ່ສຸດ, ພຣະຍອດແກ້ວສັພພັຄຍູ ໄດ້ຫລີກໄປຈຳພັຣຊາຢູ່ໃນປ່າຣັກຂິຕວັນ ແຕ່ລຳພັງພຣະອົງຄ໌ດຽວ. ເມື່ອຊາວເມືອງເຫັນເຫດການຕ໌ ອັນບໍ່ເປັນທີ່ໜ້າປຣາຖນາຂອງກິກຂຸ ເຫລົ່ານັ້ນ ເຮັດໃຫ້ພຣະຍອດແກ້ວສັພພັຄຍູຕ້ອງໄດ້ສເດັຈອອກຈາກພຣະນຄຣ. ເຂົາເຈົ້າ ຄາຍສັທລາບໍ່ຍອມສແດງຄວາມເຄົາຣົພ, ບໍ່ໃຫ້ການອຸປຖາກດ້ວຍປັຈຈັຍສີ່. ກິກຂຸ ເຫລົ່ານັ້ນຮູ້ສຶກສຳນຶກໂທສຈຶ່ງພ້ອມກັນສົ່ງຂ່າວສາສົ່ນ ໄປຍັງພຣະອານົນທ໌ ໃຫ້ຊ່ວຍນຳພວກຕົນໄປທູລຂໍຂມາໂທສ ພຣະອົງຄ໌ກໍທຣົງຮັບ ແລ້ວສເດັຈກັບມາ ສມານສາມັຄຄີ ດ້ວຍພຣະທັມມີກຖາ ທີ່ພາວຸຊາດົກ ແລ້ວຕຣັສພຣະຄາຖາ ດັ່ງໄດ້ຍົກຂຶ້ນມານັ້ນ ໆ

## ໗

ສຸການຸປັສສິງ ວິຫະຣັນຕັງ
ອິນທຣິເຍສຸ ອະສັງວຸຕັງ
ໂພຊະນັມຫິ ອະມັຕຕັລຍຸງ
ກຸສີຕັງ ຫີນະວີຣິຍັງ
ຕັງ ເວ ປະສະຫະຕີ ມາໂຣ
ວາໂຕ ຣຸກຂັງວະ ທຸພພະລັງ ໆ໗ໆ

ມາຣ ຍ່ອມສາມາຖທຳລາຍບຸຄຄົລ ຜູ້ທີ່ມັກສວຍມັກງາມ ບໍ່ຄວບຄຸມອິນທຣີຍ໌, ບໍ່ຮູ້ຈັກປະມາຓ ໃນການບໍຣິໂພຄອາຫານ, ຂີ້ຄ້ານ ແລະ ອ່ອນແອເໝືອນຕົ້ນໄມ້ທີ່ບໍ່ແຂງແຮງ ເມື່ອຖືກລົມພັດ ຍ່ອມລົ້ມລົງຢ່າງງ່າຍດາຍ.

## ໘

ອະສຸການຸປັສສິງ ວິຫະຣັນຕັງ
ອິນທຣິເຍສຸ ສຸສັງວຸຕັງ
ໂພຊະນັມຫິ ຈະ ມັຕຕັລຍຸງ
ສັທລັງ ອາຣັທລະວີຣິຍັງ

ຕັງ ເວ ນັປປະສະຫະຕິ ມາໂຣ
ອາໄຕ ເສລັງວະ ປັພພະຕັງ ຯລຯ

ມາຣຍ່ອມບໍ່ສາມາຖທຳລາຍບຸຄຄົລ ຜູ້ທີ່ບໍ່ຕົກເປັນທາສຂອງຄວາມສວຍຄວາມງາມ, ຮູ້ຈັກຄວບຄຸມອິນທຣີຍ໌, ຮູ້ຈັກປະມາຕໃນການບໍຣິໂພຄຊຶ່ງອາຫານ, ມີສັທລາ, ມີຄວາມໝັ້ນພຽຣ, ເໝືອນດັ່ງລົມພາຍຸ ຍ່ອມບໍ່ສາມາຖທີ່ຈະພັດໂຄ່ນ ພູເຂົາຫີນໄດ້.

## ເຣື່ອງ ພຣະຈຸລກາລແລະມຫາກາລ

ພຣະບໍຣົມສາສດາ ທຣົງພຣະຜາຣົພ ພຣະຈຸລກາລ ແລະ ພຣະມຫາກາລເຖຣະ, ພຣະຈຸລກາລເປັນນ້ອງຊາຍຂອງ ພຣະມຫາກາລເຖຣະ. ຜູ້ນ້ອງບວຊຕາມຜູ້ອ້າຍບໍ່ເຖິງພັຣຫາ ກໍລາສິກຂາ ຍ້ອນວ່າພວກກັຣຍາເກົ່າພາກັນໄປຣົບກວນຊວນໃຫ້ສິກ. ສ່ວນຜູ້ເປັນອ້າຍນັ້ນ ເພິ່ນບວຊດ້ວຍສັທລາແທ້ແລະຕັ້ງໜ້າບຳເພັຍພຽຣຈເຣີຍອສຸກກັມມກຖານ ຈົນໄດ້ສຳເຣັຈພຣະອຣຫັຕພ້ອມດ້ວຍປຕິສັມກິທາ. ສ່ວນກັຣຍາເກົ່າຂອງເພິ່ນ ເຫັນຕົວຢ່າງພວກກ່ອນຈຶ່ງໄດ້ນິມົນຕ໌ ພຣະບໍຣົມສາສດາ ພ້ອມດ້ວຍພຣະກິກຂຸສົງຆ໌ຮັບກັຕຕາຫານທີ່ເຮືອນຂອງຕົນ. ເມື່ອສຳເຣັຈກັຕຕກິຈແລ້ວ ຈຶ່ງໄດ້ທູລຂໍໃຫ້ ພຣະມຫາກາລ ຢູ່ທຳອະນຸໂມທນາທານ ແຕ່ອົງຄ໌ດຽວ. ພຣະບໍຣົມສາສດາ ກໍທຣົງອນຸຍາຕໃຫ້ໃນເມື່ອພຣະຍອດແກ້ວສັພພັຍຍູ ພ້ອມດ້ວຍສົງຆ໌ບໍຣິວານ ສເດັຈກັບໄປແລ້ວ

ພວກກັຣຍາເກົ່າ ກໍພາກັນມາຫ້ອມລ້ອມຈະໃຫ້ເພິ່ນສິກ. ເພິ່ນບໍ່ຍອມຈຶ່ງເຫາະໜີໄປສູ່ ພຣະອາຣາມ ທາງອາກາສ.

ກິກຂຸ ທັງຫລາຍ ໄດ້ພາກັນສົນທນາ ເຣື່ອງພຣະມຫາກາລ ແລະພຣະຈຸລກາລ ຕ່າງໆ ນາໆ. ພຣະພຸທຄອົງຄ໌ຈຶ່ງໄດ້ຕຣັສພຣະທັມມິກຖາເພາະເຣື່ອງນີ້ ເປັນຕົ້ນເຫຕຸ ດັ່ງພຣະຄາຖາທີ່ໄດ້ຍົກຂຶ້ນມາໃນເບື້ອງຕົ້ນນີ້ແລ ฯ

---

## ໙

ອະນິກກະສາໂວ ກາສາວັງ
ໂຍ ວັຕຖັງ ປະຣິທະເຫສສະຕິ
ອະເປໂຕ ທະມະສັຈເຈນະ
ນະ ໂສ ກາສາວະມະຣະຫະຕິ ฯ໙ฯ

ຄົນທີ່ຍັງມີກິເລສ ຄອບງໍາຈິຕຢູ່, ບໍ່ມີການບັງຄັບຕົນເອງ ແລະບໍ່ມີຄວາມຊື່ສັຕຍ໌ ເຖິງແມ່ນວ່າຈະຄອງ ຊຶ່ງຜ້າກາສາວພັສຕຣ໌ ກໍຕາມ, ແຕ່ກໍບໍ່ສົມຄວນກັບ ຜ້າກາສາວພັສຕຣ໌ນັ້ນເລີຍ.

## ໑໐

ໂຍ ຈະ ວັນຕະກະສາວັສສະ
ສີເລສຸ ສຸສະມາຫິໂຕ

ອຸປໂຕ ທະມະສັຈເຈນະ

ສະ ເວ ກາສາວະມະຣະຫະຕິ ჳ໑໐ჳ

ຜູ້ທີ່ໝົດກິເລສແລ້ວ ມີຄວາມໝັ້ນຄົງຢູ່ໃນສີລ, ຮູ້ຈັກບັງຄັບຕົນເອງ ແລະ ມີຄວາມສັຕຍ໌ ຍ່ອມສົມຄວນແກ່ການຄອງຊຶ່ງຜ້າກາສາວພັສຕຣ໌ ຢ່າງແທ້ຈິງແລ ฯ

## ເຣື່ອງ ພຣະເທວທັຕ

ພຣະບໍຣົມສາສດາ ທຣົງປາຣົພຜ້າກາສາວະພັສຕຣ໌ຂອງ ພຣະເທວທັຕ ວັນນຶ່ງ, ພຣະເທວທັຕ ໄດ້ຜ້າມາແຕ່ຊຸມນຸມມນຸສຍ໌ ພວກນຶ່ງ ເປັນຜ້າມີຣາຄາແພງ, ເຂົາເຈົ້າຕົກລົງວ່າ ຜ້ານັ້ນສົມຄວນແກ່ພຣະສາຣີບຸຕຣ໌ເຖຣະ. ພຣະບໍຣົມສາສດາ ທຣົງຊາບ ຈຶ່ງຕຣັສເລົ່າຄວາມເປັນມາ ທີ່ພຣະເທວທັຕເປັນນາຍພານລັກເອົາຜ້າ ພຣະປັຈເຈກະພຸທສເຈົ້າມາຫົ່ມ ເພື່ອຫລອກລວງຊ້າງ ຄອຍທຳຮ້າຍ ຂ້າຊ້າງຕົວທີ່ຢູ່ລ້າຫລັງ. ຄັ້ງນັ້ນ ເຮົາພຣະອົງຄ໌ເປັນພຣະຍາຊ້າງ, ເມື່ອເຫັນຊ້າງບໍຣິວາຣມີຈຳນວນໜ້ອຍລົງຜິດສັງເກຕຈຶ່ງປ່ຽນວິທີໄປຍ່າງຕາມຫລັງຝູງແລະຈັບນາຍພານຜູ້ທຳຮ້າຍນັ້ນໄດ້. ເມື່ອໃຫ້ໂອວາສແກ່ນາຍພານນັ້ນແລ້ວກໍປ່ອຍຕົວໄປ. ເມື່ອເລົ່າອດີຕນິທານນີ້ ໃຫ້ກິກຂຸ ທັງຫລາຍຟັງແລ້ວ ພຣະຍອດແກ້ວສັພພັຍຍູ ຈຶ່ງໄດ້ຕຣັສ ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາເບື້ອງຕົ້ນນີ້

## ໑໑

ອະສາເຣ ສາຣະມະຕິໂນ
สາເຣ ຈະ ອະສາຣະທັສສິໂນ
ເຕ ສາຣັງ ນາທິຄັຈຈັນຕິ
ມິຈຈາສັງກັປປະ ໂຄຈະຣາ ॥໑໑॥

ຜູ້ໃດເຫັນສິ່ງທີ່ບໍ່ເປັນສາຣະປະໂຍຊນ໌ວ່າ ເປັນສາຣະປະໂຍຊນ໌ ແຕ່ໄປເຫັນສິ່ງທີ່ເປັນສາຣະປະໂຍຊນ໌ວ່າ ໄຮ້ສາຣະປະໂຍຊນ໌. ຜູ້ນັ້ນມີຄວາມຄິດເຫັນຜິດໄປແລ້ວ ເຂົາຍ່ອມບໍ່ປະສົບກັບສິ່ງທີ່ເປັນສາຣະປະໂຍຊນ໌ເລີຍ.

## ໑໔

ສາຣັນຈະ ສາຣະໂຕ ຍັຕວາ
ອະສາຣັນ ຈະ ອະສາຣະໂຕ
ເຕ ສາຣັງ ອະທິຄັຈຈັນຕິ
ສັມມາ ສັງກັປປະໂຄຈະຣາ ॥໑໔॥

ຜູ້ເຂົ້າໃຈໃນສິ່ງທີ່ເປັນສາຣະປະໂຍຊນ໌ ວ່າເປັນສາຣະປະໂຍຊນ໌ຈິງ ແລະ ສິ່ງທີ່ໄຮ້ສາຣະປະໂຍຊນ໌ ກໍວ່າ ເປັນສິ່ງທີ່ໄຮ້ສາຣະປະໂຍຊນ໌ແທ້ຈິງ, ເຂົາຜູ້ນັ້ນ, ຍ່ອມປະສົບກັບສິ່ງທີ່ເປັນສາຣະປະໂຍຊນ໌ ຢ່າງແທ້ຈິງແລ.

# ເຣື່ອງ ສົນໄຊຍ໌ປຣິພາຊົກ

ໃນກາລະຄັ້ງນຶ່ງ ພຣະບໍຣົມສາສດາ ທຣົງພາຣົພ ສົນໄຊຍ໌ປຣິພາຊົກ ທີ່ບໍ່ຍອມເຂົ້າເຝົ້າ ພຣະຜູ້ມີພຣະກາຄເຈົ້າ ຕາມຄຳສເນີຂອງ ທ່ານອຸປຕິສສະປະຣິພາຊົກ (ພຣະສາຣີບຸຕຣ໌) ຄາວເພິ່ນຍັງສຶກສາຢູ່ໃນສຳນັກຂອງທ່ານສົນໄຊຍ໌ ຜູ້ເປັນ ຄຓາຈາຣຍ໌ໃຫຍ່ ຢູ່ໃນກຣຸງຣາຊຄຣຶຫ໌.

ເມື່ອ ທ່ານ ອຸປະຕິສສະ ໄດ້ຟັງອຣິຍສັຈຈຣັມມ໌ ໂດຍຫຍໍ້ ຈາກພຣະອັສສະຊິ ໄດ້ບັຣລຸໂສດາປັຕຕິຜົລແລ້ວ ເພິ່ນໄດ້ນຳເອົາເຣື່ອງນັ້ນໄປບອກແກ່ທ່ານ ໂກລິຕະປຣິພາຊົກ (ຄື ພຣະໂມຄັລລານະ) ແລ້ວພາກັນໄປອຳລາທ່ານຜູ້ເປັນອາຈາຣຍ໌ ຄືທ່ານສົນໄຊຍ໌ ແລະ ຊວນທ່ານອາຈາຣຍ໌ໄປເຝົ້າພຣະສາສດາທີ່ ພຣະເວຣຸວັນມຫາວິຫາຣດ້ວຍ ແຕ່ທ່ານປະຕິເສຣ. ເມື່ອເປັນເຊັ່ນນັ້ນ ສອງສຫາຍຈຶ່ງໄດ້ພາບໍຣິວາຣ ທັງໝົດເຂົ້າເຝົ້າ ພຣະຜູ້ມີພຣະກາຄເຈົ້າ ແລະທູລຂໍບັຣພຊາອຸປສົມບົທ. ຄັນທ່ານທັງ ໔ ໄດ້ສຳເຣັຈພຣະອຣຫັນຕ໌ ດຳຣົງໜ້າທີ່ພຣະອັຄຄສາວົກແລ້ວ ເພິ່ນຈຶ່ງໄດ້ເລົ່າເຣື່ອງ ທ່ານສົນໄຊຍ໌ນີ້ ຖວາຍພຣະຜູ້ມີພຣະກາຄເຈົ້າ. ພຣະຍອດແກ້ວສັພພັຌຌູ ຈຶ່ງຕຣັສພຣະຄາຖາ ດັ່ງກ່າວນີ້.

---

໑໑

ຍະຖາ ອະຄາຣັງ ທຸຈຉັນນັງ
ວຸຕຖີ ສະມະຕິວິຊຊະຕິ

ເອວັງ ອະພາວິຕັງ ຈິຕຕັງ
ຣາໂຄ ສະມະຕິວິຊຊະຕິ ໑໓

ເຮືອນທີ່ຫລັງຄາມຸງ ບໍ່ຮຽບຮ້ອຍດີ ເມື່ອຝົນຕົກ ຍ່ອມຮົ່ວໄດ້, ຈິຕທີ່ບໍ່ມີການເຝິກອົບຮົມໃຫ້ດີ, ຣາຄະຄວາມກຳໜັດຍິນດີໃນກາມ ຍ່ອມເຂົ້າຄອບງຳ (ຈິຕໃຈ) ໄດ້.

໑໔

ຍະຖາ ອະຄາຣັງ ສຸຈັນນັງ
ວຸຕທິ ນະ ສະມະຕິວິຊຊະຕິ
ເອວັງ ສຸພາວິຕັງ ຈິຕຕັງ
ຣາໂຄ ນະ ສະມະຕິວິຊຊະຕິ ໑໔

ເຮືອນທີ່ມີຫລັງຄາມຸງເປັນທີ່ຮຽບຮ້ອຍດີ ຝົນຍ່ອມຮົ່ວລົງບໍ່ໄດ້, ຈິຕໃຈທີ່ມີການອົບຮົມດີ ຣາຄະ ຄືຄວາມກຳໜັດຍິນດີໃນກາມ ຍ່ອມເຂົ້າຄອບງຳຈິຕ ບໍ່ໄດ້.

## ເຣື່ອງ ພຣະນັນທເຖຣະ

ພຣະບໍຣົມສາສດາ ທຣົງພຣະຜາຣົພ ພຣະນັນທະ ຜູ້ເປັນພຣະອນຸຊາຕ່າງພຣະມາຣດາ ທີ່ເປັນໂອຣົສຂອງພຣະນາງປະຊາບໍດີໂຄຕະມີ. ວັນນຶ່ງເປັນວັນວິວາຫະມຸງຄຸລຂອງເຈົ້າຊາຍນັນທະ ກັບພຣະນາງຊົນບົທກັລຍາຕີ. ພຣະບໍ

ທົມສາສດາໄດ້ສເດັຈໄປໃນການມຸງຄຸຕນັ້ນ. ເມື່ອພຣະອົງຄ໌ທຣົງຕຣັສມຸງຄຸລກະຖາແລ້ວ ພຣະອົງຄ໌ທຣົງປຣະທານບາຕຣ໌ ໃຫ້ນັນທະຮັບໄວ້ ພຣະອົງຄ໌ບໍ່ທຣົງຮັບເອົາບາຕຣ໌ຈາກ ນັນທະ. ນັນທະ ກໍຕ້ອງໄດ້ນຳບາຕຣ໌ຕາມສເດັຈໄປເຖິງ ພຣະອາຣາມ ແລ້ວຮັບສັ່ງຖາມວ່າ ຈະບວຊບໍ່ ນັນທະ?

ນັນທະກໍທູລຮັບໂດຍເຄົາຣົພ. ຄັນບວຊແລ້ວ ກໍຮ່ຳຄນຶງເຖິງ ນາງຊົນບົທກັລຍານີ. ພຣະອົງຄ໌ທຣົງຮັບປະກັນວ່າຈະເຮັດໃຫ້ໄດ້. ບັດນັ້ນ ກິກຂຸທັງຫລາຍ ພາກັນເວົ້າຢອກພຣະນັນທະ. ເພິ່ນມີຄວາມລະອາຍແລ້ວຫລີກໄປທຳຄວາມພຽຣແຕ່ຜູ້ດຽວ ຈົນໄດ້ບັຣລຸພຣະອຣຫັຕ. ຕໍ່ມາ ກິກຂຸ ທັງຫລາຍຖາມເຖິງເຣື່ອງຫລັງ ທີ່ມີຄວາມກະສັນຢາກສິກ ເພິ່ນຕອບວ່າ ບໍ່ມີແລ້ວ.

ກິກຂຸ ເຫລົ່ານັ້ນ ຫາວ່າ ເພິ່ນອວດອຣຫັຕຜົລ ຈຶ່ງທູລຄວາມນັ້ນແດ່ພຣະສາສດາ. ພຣະອົງຄ໌ ທຣົງຮັບຮອງວ່າ ພຣະນັນທະ ກ່າວຄວາມເປັນຈິງແລ້ວຕຣັສຊຶ່ງ ພຣະຄາຖາດັ່ງທີ່ໄດ້ຍົກມາ ໃນຂ້າງຕົ້ນນີ້.

---

໑໕

ອິລະ ໂສຈະຕິ ເປຈຈະ ໂສຈະຕິ
ປາປະກາຣີ ອຸກະຍັຕຖະ ໂສຈະຕິ
ໂສ ໂສຈະຕິ ໂສ ວິຫັຄຄະຕິ
ທິສ໌ວາ ກັມມະກິລິຍກຸະມັຕຕະໂນ ໑໑໕໑

ຄົນທີ່ທຳຄວາມຊົ່ວທຽນຍ່ອມໂສກເສົ້າໃນໂລກນີ້, ຄົນທຳຄວາມຊົ່ວທຽນຍ່ອມໂສກເສົ້າໃນໂລກໜ້າ ແລະໂສກເສົ້າໃນໂລກທັງສອງນັ້ນດ້ວຍ ເມື່ອເຂົາແນມເຫັນກັມມ໌ຊົ່ວຂອງຕົນ ກໍຍິ່ງມີຄວາມເດືອດຮ້ອນຕື່ມ.

## ເຣື່ອງ ນາຍຈຸນທະສຸກະຣິກະ

ພຣະບໍຣົມສາສດາ ທຣົງຜາຣົພ ນາຍຈຸນທະສູກະຣິກະ ທີ່ເປັນຄົນຮ້າຍກາດ ປາສຈາກເມຕຕາຈິຕ ມີອາຊີພຂ້າໝູເປັນເວລາ ໕໕ ປີ. ວັນທີ່ຈະເຫັນຜົລກັມມ໌ຕາສນອງນັ້ນ ເຂົາເຈັບໜັກ ມີອາກາຣຮ້ອນຮົນ ເໝືອນໄຟອະເວຈີມຫານະຣົກເຜົາຜານ ຣົນຮວາຍຮ້ອງຄືໝູ ດ້ວຍຄວາມທຸກຂ໌ທໍຣະມານເປັນເວລາ ໗ ວັນ ຈຶ່ງໄດ້ທຳກາລະກິຣິຍາ ຕາຍໄປເກີດໃນ ອະເວຈີ ມະຫານະຣົກ.

ພິກຂຸ ທັງຫລາຍ ໄດ້ຍິນສຽງຮ້ອງນັ້ນ ເຂົ້າໃຈວ່າເປັນສຽງໝູຮ້ອງ ຈຶ່ງເຂົ້າເຝົ້າທູລ ພຣະຜູ້ມີພະກາຄເຈົ້າ ໃຫ້ທຣົງຊາບຕາມຄວາມເຂົ້າໃຈຂອງພວກຕົນ ພຣະຍອດແກ້ວສັພພັญญູ ຈຶ່ງຕຣັສຄວາມເປັນໄປຂອງນາຍຈຸນທະສູກະຣິກະ ດັ່ງທີ່ກ່າວມານັ້ນ ໃຫ້ພິກຂຸ ທັງຫລາຍຟັງ ດັ່ງພຣະຄາຖາ ທີ່ໄດ້ຍົກຂຶ້ນມາ ໃນເບື້ອງຕົ້ນນີ້.

---

໑໘

ອິລະ ໂມທະຕິ ເປຈຈະ ໂມທະຕິ
ກະຕະປຸญໂญ ອຸກະຍັຕຖະ ໂມທະຕິ

ໂສ ໂມທະຕິ ໂສ ປະໂມທະຕິ
ທິສ໌ວາ ກັມມະວິສຸທລິມັຕຕະໂນ ໑໑໖໑

ຄົນທຳຄວາມດີ ກໍ່ຍ່ອມມີຄວາມເບີກບານໃຈ ໃນໂລກນີ້. ຄົນທີ່ທຳຄວາມດີຍ່ອມມີຄວາມເບີກບານໃຈໃນໂລກໜ້າ. ຄົນທຳຄວາມດີນັ້ນ ເມື່ອເຂົາແນມເຫັນກັມມ໌ ອັນບໍ່ຣິສຸທລິຂອງຕົນແລ້ວ ທຽນຍ່ອມເບີກບານໃຈ ໃນໂລກທັງ ໒ ແລະ ມີຄວາມຍິນດີຍິ່ງ ໆ ຂຶ້ນ.

## ເຣື່ອງ ລັມມິກະອຸບາສົກ

ພຣະບໍຣົມສາສດາ ທຣົງພຣະຜາຣົພ ລັມມິກະອຸບາສົກ ທີ່ເປັນຜູ້ບໍຣິ-ບູຣຕ໌ ດ້ວຍກັລຍາລັມມ໌. ເວລາເພິ່ນເຈັບໄຂ້ໄດ້ປ່ອຍຈວນເວລາຈະສິ້ນຊີວິຕ ນັ້ນ ເພິ່ນໄດ້ອາຣາລະນາ ພຣະສົງພ໌ໄປສັງວັລຍາຍ ສະຕິປັຍຖານ ໃນຂຕະທີ່ ຟັງລັມມ໌ຢູ່ນັ້ນ ເທວະຣົຖ ອັນເທພເຈົ້າທັງ ໖ ຊັ້ນຟ້າ ມາຄອຍຕ້ອນຮັບຢູ່.

ເທພເຈົ້າເຫລົ່ານັ້ນ ຕ່າງກໍ່ເຊີນໃຫ້ໄປບັງເກີດໃນກົພຂອງຕົນ ໆ. ລັມມິກະອຸບາສົກຈຶ່ງຮ້ອງຕອບໄປວ່າ ໃຫ້ລໍຖ້າກ່ອນ ເພາະພວມຟັງພຣະລັມມ ເທສນາຢູ່. ກິກຂຸ ທັງຫລາຍເຂົ້າໃຈວ່າທ່ານອຸບາສົກ ຮ້ອງໃຫ້ຍຸຕິສແດງຊຶ່ງ ພຣະລັມມ໌. ກິກຂຸ ກໍ່ຍຸຕິການສແດງລັມມ໌ ແລ້ວກັບຄືນສູ່ ພຣະອາຣາມ.

ເມື່ອອຸບາສົກ ບໍ່ເຫັນກິກຂຸ ເຫລົ່ານັ້ນ ຈຶ່ງຖາມ ແລະ ໄດ້ຄວາມວ່າ

ພຣະພິກຂຸ ໄດ້ຍິນອຸບາສິກຮ້ອງໃຫ້ຫຍຸດ ເພິ່ນຫຍຸດ. ອຸບາສິກບອກວ່າ ເພິ່ນຮ້ອງໃຫ້ເທວະດາທີ່ມາຮັບເອົາໄປນັ້ນຫຍຸດຕ່າງຫາກ.

ຄົນທັງຫລາຍບໍ່ເຊື່ອ ຈຶ່ງໃຫ້ຄົນເອົາພວງມາລັຍມາໃຫ້ ແລ້ວເພິ່ນກໍໂຍນພວງມາລັຍນັ້ນຂຶ້ນໄປ ໂດຍອະທິສຖານໃຫ້ຄ້ອງງອນຣົຖ ທີ່ມາຈາກຊັ້ນດຸສິຕ ເພື່ອໃຫ້ຄົນອື່ນ ໆ ເຫັນ ເຂົາເຈົ້າເຫັນແຕ່ພວງມາລັຍ ຢູ່ໃນອາກາສບໍ່ເຫັນຣົຖ. ຄັນພິກຂຸ ເຫລົ່ານັ້ນກັບມາແລ້ວ ຈຶ່ງເຂົ້າເຝົ້າ ພຣະຜູ້ມີພຣະພາຄເຈົ້າ ແລະ ທູລວ່າອຸບາສິກບໍ່ຢາກຟັງທັມມ໌ຈຶ່ງບອກໃຫ້ລໍຖ້າກ່ອນ ພຣະຜູ້ມີພຣະຈຶ່ງຕຣັສ ເຫຕຸການຕ໌ ດັ່ງກ່າວນັ້ນໃຫ້ຟັງ ແລ້ວຈຶ່ງຕຣັສຊຶ່ງພຣະ ຄາຖາດັ່ງທີ່ໄດ້ຍົກຂຶ້ນມາໃນເບື້ອງຕົ້ນນີ້.

---

## ໑໗

ອິທະ ຕັປປະຕິ ເປຈຈະ ຕັປປະຕິ

ປາປະກາຣີ ອຸກະຍັຕຖະ ຕັປປະຕິ

ປາປັງ ເມ ກະຕັນຕິ ຕັປປະຕິ

ກິຍໂຍ ຕັປປະຕິ ທຸຄຄະຕິງ ຄະໂຕ ຯ໑໗ຯ

ຄົນທຳຄວາມຊົ່ວ ຍ່ອມເດືອດຮ້ອນໃນໂລກນີ້, ຄົນທຳຄວາມຊົ່ວຍ່ອມເດືອດຮ້ອນໃນໂລກໜ້າ, ຄົນທຳຄວາມຊົ່ວ ຍ່ອມເດືອດຮ້ອນໃນໂລກທັງ ໔ ຄົນທີ່ທຳຄວາມຊົ່ວນັ້ນ ເມື່ອຄິດເຫັນຄວາມຊົ່ວ ທີ່ຕົນກະທຳໄວ້ແລ້ວ ຕາຍໄປເກີດໃນທຸຄຄຕິກົພ ຍ່ອມມີຄວາມເດືອດຮ້ອນຍິ່ງຂຶ້ນ.

# ເຣື່ອງ ພຣະເທວະທັຕ

ພຣະບໍຣົມສາສດາ ທຣົງຜາຣົພ ພຣະເທວະທັຕ, ຄືນັບແຕ່ເພິ່ນບວຊ ແລ້ວ ເພິ່ນໄດ້ກະທຳຄວາມຊົ່ວຕ່າງ ໆ ຕົວຢ່າງເຊັ່ນ :

໑. ຊັກຊວນ ອຊາຕສັຕຣູຣາຊກຸມາຣ ທຳລາຍຊີວິຕ ພຣະຣາຊບິດາ

໒. ສົ່ງຄົນໄປລອບປົງພຣະຊົນມ໌ ພຣະບໍຣົມສາສດາ ແຕ່ບໍ່ສຳເຣັຈ.

໓. ຂຶ້ນໄປເທິງຍອດພູເຂົາຄິຊກູຏ ກິ້ງກ້ອນສີລາ ທຳໂລຫິຕຸປບາຕ

໔. ປ່ອຍຊ້າງ ນາຣາຄີຣີ ໄປທຳລາຍພຣະສາສດາ ແຕ່ບໍ່ສຳເຣັຈ.

໕. ຫລອກລໍ້ພິກຂຸໄດ້ປະມາຓ ໕໐໐ ອົງຄ໌ເພື່ອທຳສັງຆະເພທ

ເມື່ອລົ້ມປ່ວຍເທື່ອສຸດທ້າຍ ກໍມີຄວາມຮູ້ສຶກສຳນຶກໂທສ ທີ່ຕົນໄດ້ກະທຳແລະຢາກຈະເຂົ້າເຝົ້າ ພຣະບໍຣົມສາສດາ ບອກໃຫ້ສິສຍ໌ຂອງຕົນພາໄປເຝົ້າ ພໍໄປເຖິງ ສະໂບກຂຣະຕີ ໃກ້ ໆ ກັບພຣະວິຫາຣເຊຕວັນ ແຜ່ນດິນກໍໄດ້ສູບຫາຍໄປ. ບັດນັ້ນ, ພິກຂຸ ທັງຫລາຍທູລຖາມວ່າ ເພິ່ນໄປເກີດທີ່ໃດ?

ພຣະອົງຄ໌ຈຶ່ງທຣົງສແດງວ່າ ໄປເກີດໃນ ອເວຈີມະຫານະຣົກ ແລ້ວຈຶ່ງຕຣັສ ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາຂ້າງຕົ້ນນີ້.

---

໑໗

ອິທະ ນັນທະຕິ ເປຈຈະ ນັນທະຕິ
ກະຕະປຸຌໂຌ ອຸກະຍັຕຖະ ນັນທະຕິ
ປຸຌັງ ເມ ກະຕັນຕິ ນັນທະຕິ

ກົຍໄຍ ນັນທະຕີ ສຸຄະຕິງ ຄະໄຕ ໑໑໖໑

ຄົນທີ່ທຳບຸນ ຄືຄວາມດີ ຍ່ອມມີຄວາມສຸຂໃຈ ໃນໂລກນີ້, ຄົນທີ່ທຳບຸນ ຄືຄວາມດີ ຍ່ອມມີຄວາມສຸຂໃຈ ໃນໂລກໜ້າ, ຄົນທຳບຸນ ຄືຄວາມດີ ຍ່ອມມີຄວາມສຸຂໃຈ ໃນໂລກທັງສອງ. ຄົນທຳບຸນ ຄືຄວາມດີ ຄັນທອນຄິດໄດ້ວ່າ ຕົນທຳບຸນ ຄືຄວາມດີ ເມື່ອຕາຍໄປເກີດໃນສຸຄະຕິ ກໍຍິ່ງມີຄວາມສຸຂໃຈຍິ່ງຂຶ້ນຕື່ມ.

## ເຣື່ອງ ນາງສຸມນະເທວີ

ພຣະບໍຣົມສາສດາ ທຣົງຜາຣົພ ນາງສຸມນະເທວີ ຜູ້ເປັນລູກສາວຫລ້າຂອງ ທ່ານ ອນາຖບິຕທິກະມຫາເສຕຖີ ທີ່ໄດ້ສຳເຣັຈ ອນາຄາມິຜົລ ແຕ່ຄາວທີ່ຍັງເປັນ ນາງ ກຸມາຣິກາ (ສາວນ້ອຍ). ໃນມື້ທີ່ນາງປ່ອຍໜັກນັ້ນ ນາງໄດ້ຮຽກເສຕຖີ ຜູ້ເປັນບິດາວ່າ ນ້ອງຊາຍ. ທ່ານເສຕຖີຄິດວ່າ ນາງໝົດສະຕິເວົ້າເພີ້ໄປ. ຄັນວ່າ ນາງທຳກາລະກິຣິຍາຕາຍໄປແລ້ວ ຈຶ່ງໄດ້ຮ້ອງໄຫ້ຮ່ຳໄຣໄປເຝົ້າ ພຣະສາສດາ ທູລຄວາມເສັຍໃຈໃນການທີ່ ລິດາຂອງຕົນທຳກາລະກິຣິຍາໂດຍບໍ່ໄດ້ສະຕິ ທີ່ເວົ້າເພີ້ ເອີ້ນຕົນວ່າ ນ້ອງຊາຍ ແດ່ ພຣະຜູ້ມີພຣະກາຄເຈົ້າພຣະພຸທສອົງຄ໌ ຕຣັສບອກວ່າ ບໍ່ແມ່ນເພີ້ສະຕິ ແຕ່ຮຽກຕາມ ມັຄຜົລ. ທ່ານເສຕຖີ ເປັນພຣະໂສດາບັນ, ນາງສຸມນະເທວີ ເປັນພຣະສກະທາຄາມີ. ທ່ານເສຕຖີ ທູລຖາມວ່າ ບັດນີ້ ນາງໄປເກີດທີ່ໃດ ? ພຣະອົງຄ໌ຈຶ່ງທຣົງສແດງວ່າໄປເກີດ ໃນສຸຄະຕິເທວໂລກ ແລ້ວຈຶ່ງຕຣັສ ພຣະຄາຖາ ດັ່ງທີ່ຍົກຂຶ້ນມານັ້ນ.

## ໑໙

ພະຫຸມປິ ເຈ ສັງຫິຕັງ ພາສະມາໂນ
ນະ ຕັກກະໂຣ ໂຫຕິ ນະໂຣ ປະມັຕໂຕ
ໂຄໂປວະ ຄາໂວ ຄຕະຍັງ ປະເຣສັງ
ນະ ພາຄະວາ ສາມັຄຄັສສະ ໂຫຕິ ໆ໑໙ໆ

ຄົນທີ່ທ່ອງຈຳຊຶ່ງຕຳຣາໄດ້ຫລາຍ (ຮຽນຫລາຍ) ແຕ່ມີຄວາມປະມາທ, ບໍ່ທຳຕາມ ພຣະທັມມ໌ຄຳສອນ ຍ່ອມບໍ່ໄດ້ຮັບຜົລ ເທົ່າທີ່ຄວນຈະໄດ້ຮັບໃນການບວຊ ເໝືອນກັບເດັກນ້ອຍທີ່ລ້ຽງງົວ ມີແຕ່ພຽງນັບງົວໃຫ້ຄົນອື່ນ

## ໔໐

ອັປປັມປິ ເຈ ສັງຫິຕັງ ພາສະມາໂນ
ທັມມັສສະ ໂຫຕິ ອະນຸທັມມະຈາຣີ
ຣາຄັຍຈະ ໂທສັຍຈະ ປະຫາຍະ ໂມຫັງ
ສັມມັປປະຊາໂນ ສຸວິມຸຕຕະຈິຕໂຕ
ອນຸປາທິຍາໂນ ອິທະ ວາ ຫຸຣັງ ວາ
ສະ ພາຄະວາ ສາມັຄຄັສສະ ໂຫຕິ ໆ໔໐ໆ

ເຖິງແມ່ນວ່າ ຈະຈົດຈຳຕຳຣາໄດ້ໜ້ອຍ, ແຕ່ວ່າ ປະພຶຕຮ໌ຊອບທັມມ໌

ລະຣາຄະ ໂທສະ ແລະ ໂມຫະ ໄດ້ມີຄວາມຮູ້ແຈ້ງເຫັນຈິງ ມີຈິຕຫລຸດພົ້ນ ບໍ່ມີຄວາມຜູກພັນ ປ່ອຍວາງ ທັງໃນປັຈຈຸບັນ ແລະ ອະນາຄົຕ. ເຂົາຍ່ອມໄດ້ຮັບຜົລ ທີ່ຄວນຈະໄດ້ ຈາກການບວຊຮຽນຂອງເຂົາ.

## ເຣື່ອງ ສຫາຍກະກິກຂຸ

ໃນກາລະຄັ້ງນຶ່ງ, ພຣະບໍຣົມສາສດາ ທຣົງຜາຣົພ ກິກຂຸທີ່ເປັນສຫາຍກັນ ໒ ອົງຄ໌. ອົງຄ໌ນຶ່ງ ຮຽນວິປັສສນາຂຸຣະ ທຳຄວາມພຽຣຈົນໄດ້ສຳເຣັຈພຣະອຣຫັຕ ສ່ວນອົງຄ໌ນຶ່ງນັ້ນຮຽນຄັນຖາຂຸຣະ ມີຄວາມຮູ້ຄວາມຊຽວຊານໃນພຣະໄຕຣປິຕົກ ມີສິສຍານຸສິສ ມາກຫລາຍ. ເພິ່ນມັກດູໝິ່ນ ກິກຂຸຝ່າຍວິປັສສນາຂຸຣະວ່າໂງ່ບໍ່ຮູ້ຫຍັງ ແລະມັກສອບຖາມບັຫາ ພຣະສຫາຍບ່ອຍ ໆ.

ໃນເວລາທີ່ມີການປະຊຸມພ້ອມກັນ ສ່ວນຫລາຍ ພຣະສາສດາ ມັກຈະສເດັຈມາຖາມບັນຫາເອງ. ກິກຂຸ ຝ່າຍຄັນຖາຂຸຣະ ແກ້ບໍ່ໄດ້. ກິກຂຸ ຝ່າຍວິປັສສນາແກ້ໄດ້ຕລອດ. ພຣະອົງຄ໌ທຣົງປະສານສາຂຸການ ສ່ວນສິສຂອງກິກຂຸຝ່າຍຄັນຖາຂຸຣະ ຕິຕຽນ ພຣະສາສດາວ່າ ປະສານສາຂຸການ ແກ່ກິກຂຸໂງ່ ບໍ່ປະທານ ສາຂຸການແກ່ອາຈາຣຍ໌ ຂອງຕົນ. ພຣະພຸທສອົງຄ໌ ຈຶ່ງ ໄດ້ຕຣັສພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາ ໃນເບື້ອງຕົ້ນນັ້ນ.

## ຈົບ ຍມະກະວັຄຄ໌ ທີ່ ໑

# ອັປປະມາທະ ວັຄຄ໌ ທີ່ ໔

## ໝວດ ວ່າດ້ວຍຄວາມບໍ່ປມາທ

໑

ອັປປະມາໂທ ອະມະຕັງ ປະທັງ
ປະມາໂທ ມັຈຈຸໂນ ປະທັງ
ອັປປະມັຕຕາ ນະ ມີຍັນຕິ
ເຍ ປະມັຕຕາ ຍະຖາ ມະຕາ ໆ໔໑ໆ

ຄວາມບໍ່ປມາທ ເປັນທາງ ອມະຕະ (ບໍ່ຕາຍ), ຄວາມປມາທ ເປັນທາງແຫ່ງຄວາມຕາຍ (ອັນຕຣາຍ) ສ່ວນຜູ້ທີ່ບໍ່ປມາທນັ້ນ ຍ່ອມບໍ່ມີວັນຕາຍ (ບໍ່ປະສົບກັບຄວາມຫາຍນະ). ຜູ້ທີ່ມີຄວາມປມາທນັ້ນ ເຖິງແມ່ນວ່າ ຈະມີຊີວິຕຢູ່ ກໍເທົ່າກັບວ່າ ຄົນທີ່ຕາຍແລ້ວ.

໔

ເອຕັງ ວິເສສະໂຕ ຌັຕວາ
ອັປປະມາທັມຫິ ປັຕຑິຕາ
ອັປປະມາໂທ ປະໂມທັນຕິ
ອະຣິຍານັງ ໂຄຈະເຣ ຣະຕາ ໆ໔໔ໆ

ມາທ ເພິ່ນຈຶ່ງຍິນດີໃນຄວາມບໍ່ປະມາທ ອັນເປັນແນວທາງ ຂອງພຣະອະຣິຍະ

໓

໓ ຊາຍິໂນ ສາຕະຕິກາ
ນິຈຈັງ ທັລຫະປະຣັກກະມາ
ຜຸສັນຕີ ធີຣາ ນິພພານັງ
ໂຍຄັກເຂມັງ ອະນຸຕະຣັງ ໆ໔໓ໆ

ທ່ານຜູ້ສລາດ ເຫລົ່ານັ້ນ ໝັ່ນຈເຣີນ ກັມມກຖານ ມີຄວາມພຽຮ ໝັ້ນຄົງທຸ່ນທ່ຽງ ຢູ່ສເມີ, ບັຣລຸພຣະນິພພານ ອັນເປັນສະກາວະ ທີ່ສູງສົ່ງທັງ ເປັນອິສຣະຈາກກິເລສ ເຄື່ອງຜູກມັດ.

## ເຣື່ອງ ນາງສາມາວະດີ

ພຣະບໍຣົມສາສດາ ທຣົງຜາຣົພ ກາຣມຣຕະ ຂອງສັຕຣີ ໔ ພວກ ຄື ພວກຂອງນາງສາມາວະດີ ແລະ ພວກຂອງນາງມາຄັຕາທີຍ໌. ສັຕຣີ ໔ ພວກນີ້ ເປັນມເສີ ຂອງພຣະເຈົ້າອຸເທນ ຜູ້ຄອງນຄຣໂກສັມພີ. ຄາວທີ່ ພຣະສາສດາ ສເດັຈປະທັບຢູ່ໃນພຣະນຄຣນີ້ ພວກຂອງນາງ ສາມາວະດີ ໄດ້ສຳເຣັຈໂສດາ ປັຕຕິຜົລ ແຕ່ພວກຂອງນາງ ມາຄັຕາທີຍ໌ ບໍ່ເຫລື້ອໃສໃນພຣະສາສດາ ແລະ ຄອຍຫາເຣື່ອງໃສ່ຮ້າຍ ພຣະສາສດາ ກັບພວກຂອງນາງ ສາມາວະດີ ແລະ

ບໍຣິວາຣໂດຍໃຫ້ຄົນຮ້າຍລອບເຜົາຜາສາທ ຂອງ ນາງສາມາວະດີ ໆ ກັບບໍຣິວາຣ ກໍເສັຍຊີວິຕດ້ວຍກັນທັງໝົດ. ພຣະເຈົ້າອຸເທນ ທຣົງຊາບ ຈຶ່ງລົງໂທສປະຫາຣຊີວິຕ ນາງມາຄັນທິຍ໌ ພ້ອມດ້ວຍບໍຣິວາຣ.

ກິກຂຸ ທັງຫລາຍ ປະຊຸມກັນຜາຣົພເຖິງເຣື່ອງນັ້ນ, ພຣະອົງຈຶ່ງໄດ້ຕຣັສພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາໃນຂ້າງຕົ້ນນີ້.

---

**໔**

ອຸຍຖານະວະໂຕ ສະຕີມະໂຕ
ສຸຈິກັມມັສສະ ນິສັມມະກາຣິໂນ
ສັຍຍະຕັສສະ ຈະ ຄັມມະຊີວິໂນ
ອັປປະມັຕຕັສສະ ຍະໂສກິວັທຒະຕິ ໑໔໑

ຍົສຖາບັນດາສັກດິ ຍ່ອມຈເຣີນແກ່ຜູ້ທີ່ຂຍັນໝັ່ນພຽຣ ມີສະຕິ ແລະ ມີການງານສະອາດ ມີຄວາມຣອບຄອບຣະມັດຣະວັງ ລ້ຽງຊີວິຕດ້ວຍຄວາມຊອບລັມມ໌ ບໍ່ປະມາທ.

## ເຣື່ອງ ກຸມກະໂພສົກ

ພຣະບໍຣົມສາສດາ ທຣົງພຣະຜາຣົພ ນາຍກຸມກະໂພສົກ ທີ່ເປັນບຸຕຣ໌ຂອງເສຕຖີ ໃນກຣຸງຣາຊຄຣຶຫ໌ ຄາວທີ່ເກີດມີໂຣຄອະຫິຣະບາດນັ້ນ ເສຕຖີຜູ້ເປັນບິດາໄດ້ເສັຍຊີວິຕ ເຂົາຈຶ່ງໄດ້ຫລົບໜີໄປຢູ່ໃນປະເທສແຫ່ງນຶ່ງ ໄດ້ປະມາຕ ໑໔ ປີ ຈຶ່ງກັບມາ ແລະບໍ່ມີໃຜຈຳໜ້າໄດ້. ເຂົາຄິດຈະຂຸດເອົາຫຣັພຍ໌ທີ່ຝັງໄວ້ມາໃຊ້ສອຍກໍຢ້ານເປັນອັນຕຣາຍ ຈຶ່ງໄປທ່ຽວຮັບຈ້າງເຮັດເປັນຄືຄົນ

ຍາກຈົນ ພຣະເຈົ້າພິມພິສາຣ ໄດ້ທຣົງຊາບ ຊື່ສຽງດີຂອງເຂົາ ວ່າ ເປັນຄົນມີ ທຣັພຍ໌ ພຣະອົງຄ໌ທຣົງໃຊ້ນະໂຍບາຍ ສືບຫາຄວາມຈິງໄດ້ແລ້ວຈຶ່ງທຣົງປະ ທານຕໍາແໜ່ງ ມຫາເສຕຖີ ພ້ອມທັງ ພຣະຣາຊທິດາໃຫ້.

ພາຍຫລັງ, ໄດ້ນໍາຕົວເຂົ້າເຝົ້າ ພຣະຍອດແກ້ວສັພພັຍຍູ ທູລສັຣ ເສີນ ກຸມກະໂພສົກ ໂດຍປະການຕ່າງ ໆ. ພຣະອົງຄ໌ຈຶ່ງຕຣັສ ພຣະຄາຖາດັ່ງ ທີ່ໄດ້ຍົກຂຶ້ນມາ ໃນຂ້າງຕົ້ນນີ້

---

## ໕

ອຸຕຖາເນນັປປະມາເທນະ
ສັຍຍະເມນະ ທະເມນະ ຈະ
ທີປັງ ກະຍິຣາຖະ ເມຮາວີ
ຍັງ ໂອໂຟ ນາພິກີຣະຕິ ໑໔໕໑

ດ້ວຍຄວາມຂຍັນ ດ້ວຍຄວາມບໍ່ປະມາທ ດ້ວຍຄວາມສຳຣວມຣະວັງ ແລະ ດ້ວຍຄວາມຂົ່ມໃຈຕົນເອງ ຜູ້ມີປັຍຍາ ຄວນສ້າງເກາະດອນ (ທີ່ເພິ່ງ) ໃຫ້ແກ່ຕົນ ຢູ່ໃນກາງນໍ້າ (ຄືກິເລສ) ທີ່ບໍ່ສາມາຖຖ້ວມໄດ້ນັ້ນ.

## ເຣື່ອງ ພຣະຈູຣະປັນຖະກະ

ພຣະບໍຣົສມາສດາ ທຣົງຜາຣົພ ພຣະຈູຣະປັນຖະກະ ໃນຄັ້ງພຣະກັສສປະພຸທສກາລພຸ້ນ ພຣະເຖຣະເຈົ້າຜູ້ສລາດ ໄດ້ຫລອກຫລອນໃຫ້ ກິກຂຸອົງຄ໌ນຶ່ງ ຈົນເພິ່ນໝົດສະຕິ. ຕົກມາໃນພຸທສກາລນີ້ ຮ່ຳຮຽນໜັງສືກໍ່ບໍ່ໄດ້ ພຣະມຫາປັນຖະກະ ຜູ້ເປັນອ້າຍ ໃຫ້ສັງວັລຍາຍ ທ່ອງຈຳຄາຖານຶ່ງເຖິງ ໔ ເດືອນ ກໍຍັງຈື່ບໍ່ໄດ້ ຖືກພຣະເຖຣະຜູ້ອ້າຍ ນາບຂູ່ ກໍຄິດຢາກຈະສຶກ. ພຣະສາສດາ ທຣົງຊາບອຸນິສັຍ ໄດ້ປະທານ ພຣະກັມມຖານ ແລະ ໂອວາທໃຫ້ສຳເຣັຈພຣະອຣຫັຕ ພ້ອມດ້ວຍປຕິສັມກິທາໃນວັນນັ້ນ. ກິກຂຸທັງຫລາຍປະຊຸມກັນ ຜາຣົພຄວາມພຽຣ ຂອງພຣະຈູຣະປັນຖະ ພຣະອົງຄ໌ຈຶ່ງຕຣັສພຣະຄາຖານີ້ ດັ່ງທີ່ໄດ້ຍົກຂຶ້ນມາ ໃນຂ້າງຕົ້ນນີ້ນັ້ນແລ.

---

໕

ປະມາທະມະນຸຍຸຄຊັນຕິ
ພາລາ ທຸມເມລິໂນ ຊະນາ
ອັປປະມາທັລຈະ ເມລາວີ
ລະນັງ ເສຍກັງວະ ຣັກຂະຕິ ໑໔໕໑

ຄົນພາລ ປັນຍາຕຶບ ທີ່ໂງ່ງ່າວ ມັກຈະມົວເມົາ ປມາທເມີນເສີຍ ສ່ວນຄົນທີ່ມີປັນຍາ ຄື ບັຕທິຕນັ້ນ ຍ່ອມຣັກສາຊຶ່ງຄວາມ ບ່ປມາທນັ້ນໄວ້ໄດ້ ເໝືອນດັ່ງກັບວ່າ ກາຣຣັກສາທຣັພຍ໌ສົມບັຕິ ອັນປະເສີຖສຸດນັ້ນໄວ້.

໗

ມາ ປະມາທະມະນຸຍຸຍເຊຖະ
ມາ ກາມະຣະຕິສັນຖະວັງ
ອັປປະມັຕໂຕ ຫິ ຊາຍັນໂຕ
ປັປໂປຕິ ວິປຸລັງ ສຸຂັງ ໑໒໗໑

ຕູເຈົ້າ ທັງຫລາຍ ຢ່າໄດ້ປະມາທ, ຢ່າໄດ້ເອົາແຕ່ຄວາມມ່ວນຊື່ນຍິນດີໃນກາມຄຸຕຢູ່ ຜູ້ທີ່ບ່ປະມາທ ພິຈາຣະນາເຫັນຕາມຄວາມເປັນຈິງ ເທົ່ານັ້ນ ຈຶ່ງຈະບັຣລຸເຖິງຄວາມສຸຂອັນໄພບູລຍ໌ໄດ້.

## ເຣື່ອງ ນັກຂັຕຣິກ໌ຂອງຄົນພາລ

ພຣະບໍຣົມສາສດາ ທຣົງປາຣົພ ງານນັກຂັຕຣິກ໌ຂອງຄົນພາລ. ຄັ້ງໜຶ່ງ ໃນເມືອງສາວັຕຖີ ພວກຄົນພາລ ພາກັນຫລິ້ນບຸນນັກຂັຕຣິກ໌ມ່ວນຊື່ນ

ເຣຣາ ອັນບໍ່ເປັນທີ່ໜ້າເບິ່ງໜ້າຟັງຂອງພວກ ອະຣິຍສາວົກ ໆ ຈຶ່ງຂາບທູລໃຫ້ພຣະສາສດາຫຣົງຊາບ ເພື່ອຂໍໃຫ້ພຣະພຸທລອົງຄ໌ ແລະ ສົງຄ໌ສາວົກບໍ່ໃຫ້ໄປຂ້າງນອກ ພຣະອາຣາມ ແລ້ວກໍນໍາໂກຊນາຫາຣໄປຖວາຍ ຄົນຄົບ ໆ ວັນ ສິ້ນສຸດງານບຸຍນັ້ນແລ້ວ ຈຶ່ງເຂົ້າໄປຂາບທູລເຣື່ອງງານນັ້ນໃຫ້ຫຣົງຊາບ ພຣະອົງຄ໌ ຈຶ່ງຕຣັສ ພຣະຄາຖາ ດັ່ງທີ່ຍົກຂຶ້ນມາແລ້ວນີ້.

---

໗

ປະມາທັງ ອັປປະມາເທນະ
ຍະທາ ນຸທະຕິ ປັຕທິໂຕ
ປັຍຍາປາສາທະມາຣຸຍຫະ
ອະໂສໂກ ໂສກິນິງ ປະຊັງ
ປັພພະຕັຍໂກອະ ກຸມມັຍເກ
ລິໂຣ ພາເລ ອະເວກຂະຕີ ໑໔໗໑

ເມື່ອໃດທີ່ບັຕທິຕ ກໍາຈັດເສັຍຊຶ່ງຄວາມປະມາທ ດ້ວຍຄວາມບໍ່ປະມາທ ເມື່ອນັ້ນແລທີ່ໄດ້ຊື່ວ່າ ເຂົາໄດ້ຂຶ້ນສູ່ຜາສາທ ຄືປັຍຍາ, ບໍ່ມີຄວາມໂສກເສົ້າ, ສາມາຖແນມເຫັນປະຊາຊົນຜູ້ໂງ່ທີ່ຍັງມີຄວາມໂສກເສົ້າຢູ່ ເໜືອນ

ກັບຄົນຢືນຢູ່ບົນຍອດພູເຂົາສູງ ທີ່ແນມເຫັນຜູ້ຄົນ ທີ່ຢືນຢູ່ພາຄພື້ນດິນ.

# ເຣື່ອງ ພຣະມຫາກັສສປະເຖຣະ

ພຣະບໍຣົມສາສດາ ທຣົງພຣະຜາຣົພ ພຣະ ມຫາກັສສປະເຖຣະ. ໃນໂອກາສນຶ່ງ ພຣະມຫາເຖຣະເຈົ້າ ນັ່ງກອດດູເບິ່ງສັຕວ໌ ທັງຫລາຍ ທີ່ຈຸຕິແລະປຕິສົນທິ ໃນທີ່ຕ່າງ ໆ ດ້ວຍທິພຍ໌ຈັກຂຸ. ພຣະສາສດາ ທຣົງຊາບ ຈຶ່ງຕຣັສຫ້າມວ່າ ອັນນັ້ນ ບໍ່ແມ່ນວິສັຍຂອງທ່ານ ວິສັຍຂອງທ່ານ ເປັນຜູ້ບໍ່ປະມາທຄວາມຮູ້ຄວາມເຫັນ ສັຕວ໌ທັງຫລາຍ ຜູ້ຈຸຕິປຕິສົນທິນັ້ນ ເປັນວິສັຍຂອງພຣະພຸທທເຈົ້າ ຈຳພວກດຽວ ແລ້ວເປັ່ງ ພຣະໂອກາສຣັສມີໄປ ເໝືອນກັບວ່າປະທັບນັ່ງ ໃນທີ່ສະເພາະໜ້າ ແລ້ວຈຶ່ງຕຣັສພຣະຄາຖາ ດັ່ງທີ່ຍົກຂຶ້ນມານັ້ນ.

---

ໜ

ອັປປະມັຕໂຕ ປະມັຕເຕສຸ
　　ສັຕເຕສຸ ພະຫຸຊາຄະໂຣ
ອະພະລັສສັງວະ ສີໆັສໂສ
　　ຫິຕ໌ວາ ຍາຕິ ສຸເມຣະໂສ ໑໔໙໑

ທ່ານຜູ້ທີ່ມີປັນຍາ ມັກຈະບໍ່ປະມາທ ເມື່ອຄົນອື່ນ ພາກັນປະມາທຢູ່ ແລະຕື່ນຢູ່ (ມີສະຕຣະວັງຕົວ) ໃນຂະນະ ທີ່ຄົນອື່ນຫລັບຢູ່. ດ້ວຍເຫດນັ້ນ ຜູ້ທີ່ມີປັນຍາ ຈຶ່ງປະຖິ້ມຄົນເຫລົ່ານັ້ນໄປໄກ ເໝືອນກັບມ້າສີຕົນໄວປະຖິ້ມມ້າຂີ້ກະຈອກ ແລ່ນບໍ່ທັນ ສັນນັ້ນແລ.

# ເຣື່ອງ ກິກຂຸສອງສຫາຍ

ພຣະບໍຣົມສາສດາ ທຣົງປາຣົພ ກິກຂຸ ທີ່ເປັນສະຫາຍກັນ ໒ ອົງຄ໌ ໄດ້ຮຽນພຣະກັມມກຖານ ໃນສຳນັກຂອງພຣະອົງຄ໌ ແລ້ວພາກັນໄປຈເຣີນຊຶ່ງສມຕະທັມມ໌ ຢູ່ໃນ ອຣັນຍິກວິຫາຣ ແຫ່ງນຶ່ງ. ອົງຄ໌ນຶ່ງ ເປັນຜູ້ບໍ່ປະມາທ ໝັ່ນຈເຣີນສມຕະທັມມ໌ ບໍ່ດົນ ກໍໄດ້ສຳເຣັຈພຣະອຣຫັຕ ພ້ອມດ້ວຍປຕິສັມກິທາ ສ່ວນອີກອົງຄ໌ນຶ່ງນັ້ນ ມົວແຕ່ສົນທະນາ ຄຸກຄີຢູ່ກັບ ກິກຂຸສາມເນຣ ຕິຕຽນກິກຂຸຜູ້ຈເຣີນ ສມຕະທັມມ໌ນັ້ນວ່າ ເປັນຜູ້ຂີ້ຄ້ານ.

ຄັນອອກພັຣສາແລ້ວ ກໍພາກັນໄປເຝົ້າ ພຣະສາສດາ ທູລກ່າວຫາຜູ້ທີ່ສຳເຣັຈພຣະອຣຫັຕນັ້ນວ່າ ເປັນຜູ້ປະມາທ ຍົກຕົນເອງວ່າ ເປັນຜູ້ຂຍັນໝັ່ນເກັບຟືນມາດັງໄຟ ທັງໃນເວລາເຊົ້າ ແລະ ເວລາແລງ ສເມີ ບໍ່ໄດ້ຂາດ. ພຣະພຸທສອົງຄ໌ ຈຶ່ງຕຣັສພຣະຄາຖາ ເຕືອນ ກິກຂຸ ອົງຄ໌ທີ່ບໍ່ສຳເຣັຈຊຶ່ງພຣະອຣຫັຕ ດັ່ງທີ່ຍົກຂຶ້ນມານັ້ນແລ.

---

# ໑໐

ອັປປະທາເຫນະ ມຆະວາ

ເທວານັງ ເສຣກະຕັງ ຄະໄຕ

ອັປປະມາທັງ ປະສັງສັນຕິ

ປະມາໂທ ຄະຣະຫິໂຕ ສະທາ ໆ໓໐ໆ

ທ້າວ ມະພະວານ ຜູ້ທີ່ໄດ້ເປັນໃຫຍ່ກວ່າ ທວຍເທພ ກໍຍ້ອນຜົລຂອງຄວາມບໍ່ປະມາທ. ເພາະສນັ້ນ, ບັຕາທິຕ ຈຶ່ງສັຣເສີຣ ຄວາມບໍ່ປະມາທແລະຕິຕຽນຄວາມປະມາທ.

## ເຣື່ອງ ທ້າວສັກກະ

ພຣະບໍຣົມສາສດາ ທຮົງພຣະຜາຣົພ ທ້າວ ສັກກະເທວະຣາຊ ຜູ້ເປັນໃຫຍ່ຂອງທວຍເທພ ໃນສວງສວັຣຄ໌. ໃນກາລະຄັ້ງນຶ່ງ. ລິຈຈວິມຫາລີໄດ້ຮັບຟັງຊື່ງສັກກະບັຍຫາສູຕຣ໌ ແລ້ວມີຄວາມສົງສັຍ ຈຶ່ງໄດ້ເຂົ້າໄປເຝົ້າ ພຣະຍອດແກ້ວສັພພັຍຍູ ເພື່ອທູລຖາມພຣະອົງຄ໌ວ່າ ໆໄດ້ທຮົງຊາບ ຄືຮູ້ຈັກຊຶ່ງທ້າວສັກກະນັ້ນບໍ? ພຣະສາສດາ ຈຶ່ງຕຣັສ ຮັບວ່າ ທຮົງຮູ້ຈັກກັບທ້າວສັກກະມີນາມວ່າມະພະວານອີກດ້ວຍ. ທີ່ຊື່ວ່າ ມະພະວານ ນັ້ນຍ້ອນວ່າຄາວທີ່ເປັນມນຸສຍ໌ນັ້ນເພິ່ນໃຫ້ທານກ່ອນຜູ້ອື່ນ ໓໐ ຄົນ. ທີ່ຊື່ວ່າ ອາສວະ ນັ້ນຄາວເປັນ

ມນຸສຍ໌ນັ້ນ ເພິ່ນໄດ້ໃຫ້ຊື່ງສຖານທີ່ພັກອາສັຍ. ທີ່ໄດ້ຊື່ວ່າ ສຫັສສັກຂະນັ້ນ ເພາະດໍາຣິພິຈາຣະຕາຊຶ່ງຂໍ້ຄວາມໄດ້ຕັ້ງພັນຂໍ້ໃນຂຕະດຽວ. ທີ່ຊື່ວ່າ ສຸຊົມ-ບໍດີ ເພາະໄດ້ນາງສຸຊາດາ ລິກດາຂອງ ອສູຣເປັນຊາຍາ.

ລັມມ໌ເປັນເຄື່ອງທໍາໃຫ້ເປັນສັກກະມີ ໗ ຢ່າງຄື :

໑. ລ້ຽງມາຣດາບິດາ,

໒. ອ່ອນນ້ອມຖ່ອມຕົວຕໍ່ທ່ານຜູ້ຈເຣີນໃນຕະກູລ,

໓. ມີວາຈາອ່ອນຫວານ,

໔. ມີວາຈາບໍ່ສຽດສີຜູ້ອື່ນ,

໕. ບໍ່ຂີ້ຖີ່ຫນຽວແໜ້ນ,

໖. ມີສັຈຈະ,

໗. ບໍ່ໂກທຮ້າຍ, ມີໃຈດີ, ມີຄວາມອ່ອນໂຍນ. ເມື່ອຄວາມໂກທເຄືອງເກີດຂຶ້ນ ກໍຣະງັບລົງ.

ທ້າວສັກກະເທວຣາຊ ມີຄວາມບໍ່ປະມາທ ແລະ ທັງຍັງວັຕຣ໌ປຜິບັຕິເຫລົ່ານີ້ໃຫ້ສົມບູຣຕ໌ ຈຶ່ງໄດ້ເຖິງຊຶ່ງຄວາມເປັນທ້າວສັກກະ.

ໃນທີ່ສຸດ ແຫ່ງພຣະລັມມິກະຖານັ້ນ ພຣະຍອດແກ້ວສັພພັລຍູ ຈຶ່ງໄດ້ຕຣັສຊຶ່ງ ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາໃນເບື້ອງຕົ້ນນັ້ນແລ.

---

## ໑໑

ອັປປະມາທະຣະໂຕ ພິກຂຸ
ປະມາເທ ພະຍະທັສສີ ວາ
ສັນໂຍຊະນັງ ອະຕຸງ ຖູລັງ
ຑະຫັງ ອັຄຄີວະ ຄັຈຈະຕິ ໆ໓໑ໆ

ພິກຂຸ ຜູ້ທີ່ຍິນດີໃນຄວາມບໍ່ປະມາທ ເຫັນກັຍໃນຄວາມປະມາທ ຍ່ອມເຜົາກິເລສ ນ້ອຍໃຫຍ່ (ສັງໂຍຊນ໌) ເຄື່ອງຜູກມັດໄດ້ເໝືອນດັ່ງໄຟທີ່ເຜົາເຊື້ອໄຟໄດ້ ນັ້ນແລ.

## ເຣື່ອງ ອັນຍຕຣະ ພິກຂຸ

ພຣະບໍຣົມສາສດາ ທຣົງຜາຣົພ ພິກຂຸອົງຄ໌ນຶ່ງ ທີ່ໄດ້ຮຽນກັມມກຖານ ໃນສຳນັກຂອງພຣະອົງຄ໌ ແລ້ວທູລລາໄປບຳເພັນພຽຣຢູ່ໃນປ່າ. ເມື່ອຮູ້ວ່າບໍ່ອາຈທີ່ຈະທຳຄວາມພຽຣຕໍ່ໄປ ເພື່ອໃຫ້ບັຣລຸພຣະອຣຫັຕແລ້ວ ຈຶ່ງກັບຄືນມາ ໂດຍຫວັງທີ່ຈະທູລຂໍປ່ຽນຊຶ່ງພຣະກັມມກຖານໃໝ່. ຕອນເດີນທາງກັບມານັ້ນໄດ້ພົບເຫັນໄຟໄໝ້ເຊື້ອໄຟນ້ອຍໃຫຍ່ຢູ່ ຈຶ່ງໄດ້ຖືເອົາເປັນອາຣົມຕ໌ວ່າ ເຊື້ອໄຟນັ້ນ ກໍຄືສັງໂຍຊນ໌ ເຄື່ອງຜູກມັດທັງນ້ອຍແລະໃຫຍ່ ແລະໄຟນັ້ນຄື ອຣິຍມັຄຄ໌

ທີ່ເຜົາສັງໂຍຊນ໌ ໃຫ້ໝົດສິ້ນໄປ ສັນນັ້ນ.

ພຣະສາສດາ ທຣົງປະທັບຢູ່ໃນ ພຣະຄັນລະກຸຜິ ທຣົງຊາບ ຈຶ່ງທຣົງ ເປັ່ງຣັສມີໄປຫາຊຶ່ງ ເໝືອນກັບວ່າປະທັບຢູ່ໃນທີ່ສະເພາະ ໜ້າ ແລ້ວຈຶ່ງຕຣັສ ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາໃນຂ້າງເທິງນີ້.

---

## ໑໔

ອັປປະມາທຣະໂຕ ກິກຂຸ
ປະມາເທ ກະຍະທັສສີ ວາ
ອະກັພໂພ ປະຣິຫານາຍະ,
ນິພພານັສເສວະ ສັນຕິເກ ໑໓໔໑

ກິກຂຸ ຜູ້ທີ່ບໍ່ປະມາທ ເຫັນກັຍໃນຄວາມປະມາທ, ກິກຂຸ ອົງຄ໌ນັ້ນ ຍ່ອມບໍ່ມີທາງທີ່ຈະເສື່ອມໄດ້ ທັງຢູ່ໃກ້ກັບພຣະນິພພານ ຢ່າງແທ້ຈິງອີກດ້ວຍ.

## ເຣື່ອງ ພຣະນິຄົມຕິສສະເຖຣະ

ພຣະບໍຣົມສາສດາ ທຣົງຜາຣົພ ພຣະນິຄົມຕິສສະເຖຣະເພິ່ນ ເປັນຜູ້ມັກນ້ອຍ ສັນໂດຜ ເມື່ອທ່ານ ອນາຖະບິດນທິກະ ມຫາເສດຖີ ຖວາຍມຫາທານ ແລະ ພຣະເຈົ້າ ປະເສນທິໂກສົລ ກໍທຣົງກະທຳ

ອະທິສສຫານດ້ວຍ. ສ່ວນພຣະນິຄົມຕິສສະເຖຣະ ເພິ່ນບໍ່ໄປບິດທະບາດໃນທີ່ທັງສອງ ແຕ່ວ່າ ເພິ່ນໄປບິນທະບາດ ໃນໝູ່ບ້ານ ທີ່ເປັນຍາຕິພີ່ນ້ອງຂອງເພິ່ນ. ກິກຂຸ ທັງຫລາຍ ກ່າວຫາເພິ່ນວ່າ ກ່ຽວຂ້ອງຢູ່ແຕ່ໃນໝູ່ຍາຕິ ຂອງຕົນເທົ່ານັ້ນ.

ພຣະສາສດາ ທຣົງໃຫ້ຫາຕົວມາສອບຖາມ, ເພິ່ນທູລຕອບວ່າ ເພິ່ນປຍິບັຕິຕາມຂໍ້ປຍິຍາຕ ຄວາມມັກໜ້ອຍ ສັນໂດษຂອງຕົນ. ພຣະຍອດແກ້ວສັພພັຍຍູ ຈຶ່ງທຣົງຕຣັສສັຣເສີນວ່າ ເປັນເຊື້ອສາຍປະເວດີ ຂອງພຣະອົງຄ໌.

ບັດນັ້ນ, ພຣະອົງຄ໌ ຈຶ່ງເລົ່າເຖິງຄາວທີ່ພຣະອົງຄ໌ ສເວີຍພຣະຊາຕິເປັນນົກແຂກເຕົ້າ ຊື່ວ່າ ສຸວຣາຊ ກໍເຄີຍເປັນຜູ້ມັກໜ້ອຍ ສັນໂດษ ເໝືອນກັນ.

ໃນທີ່ສຸດ ພຣະອົງຄ໌ຈຶ່ງໄດ້ຕຣັສ ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມານັ້ນ.

---

## ຈົບ ອັປປະມາທວັຄຄ໌ ທີ່ ໔

# ຈິຕຕວັຄຄ໌ ທີ່ ໓

## ໝວດ ວ່າດ້ວຍຈິຕ

໑

ຜັນທະນັງ ຈະປະລັງ ຈິຕຕັງ
　　ທຸຣັກຂັງ ທຸນນິວາຣະຍັງ
ອຸຊຸງ ກະໂຣຕິ ເມຘາວີ
　　ອຸສຸກາໂຣວະ ເຕຊະນັງ ໆ໓໓ໆ

ຈິຕນີ້ ຍ່ອມດິ້ນຣົນ ກະວົນກະວາຍ ວົກໄປວຽນມາປ້ອງກັນໄວ້ໄດ້ຍາກ ຫ້າມໄວ້ໄດ້ຍາກ, ຜູ້ທີ່ມີປັຌຌາ ສາມາຖເບັດ ຫຣືດັດໃຫ້ຊື່ຕົງໄດ້ເໝືອນດັ່ງນາຍຊ່າງ ເຮັດທະນູ, ເຮັດສຣທີ່ເບັດລູກສຣໃຫ້ຊື່ ຫັ້ນແລ.

໒

ວາຣິໂຊວະ ຖະເລ ຂິຕໂຕ
　　ໂອກະ ໂມກະຕະ ອຸພກະໂຕ
ປະຣິຜັນທະຕິທັງ ຈິຕຕັງ
　　ມາຣະເຘຍຍັງ ປະຫາຕະເວ ໆ໓໔ໆ

ปาที่ถืกเขิาจับโยนขึ้นเทิงบิก มันย่อมดิ้นด่าอๆ เพื่อจะกับคืนลิงไปในน้ำบ่อนที่มันเคิยอาสัยยู่, อันนี้ ก่คືກັນກັບຈິຕ ທີ່ດິ້ນຮົນຄືນ ໄປຫາການຄຸຕ. ເພາະສນັ້ນ, ຈຶ່ງຄວນຫລີກເວັ້ນຈາກ ການຄຸຕ.

# ເຣື່ອງ ພຣະເມພິຍເຖຣະ

ພຣະບໍຣົມສາສດາ ທຣົງປາຣົພ ພຣະເມພິຍະເຖຣະ. ໃນເວລາ ນັ້ນເພິ່ນກຳລັງເປັນ ພຸທລະອຸປັຕຖາກຢູ່ ແລະເພິ່ນໄດ້ໄປເຫັນ ອັມພະວັນອັນເປັນທີ່ ງຽບສງັດເປັນຣົມຕັຍສຖານເໝາະສົມກັບການ ບຳເພັນພຽຣ ເພິ່ນຈຶ່ງຂາບທູລ ພຣະຜູ້ມີພຣະພາຄເຈົ້າ ເພື່ອລາພຣະ ພຸທລອົງຄ໌ໄປບຳເພັນພຽຣຢູ່ໃນທີ່ນັ້ນ ພຣະພຸທລອົງຄ໌ທຣົງຫ້າມວ່າ ເມື່ອໃດພຣະອົງຄ໌ໄດ້ຜູ້ອຸປັຕຖາກແລ້ວຈຶ່ງຄ່ອຍໄປ ແຕ່ເພິ່ນບໍ່ຍອມ ຟັງ. ເມື່ອເພິ່ນໄປຢູ່ໃນອັມພະວັນນັ້ນໄດ້ ບໍ່ນານກໍຖືກ ອະກຸສົລວິຕົກ ກວນຈິຕໃຈ ຢູ່ບໍ່ໄດ້ ຈຶ່ງໄດ້ກັບຄືນມາ ຂາບທູລພຣະພຸທລອົງຄ໌ວ່າບໍ່ ສາມາຖທີ່ຈະບຳເພັນພຽຣຕໍ່ໄປໄດ້ພຣະບໍຣົມສາສດາຈຶ່ງໄດ້ຕຣັສພຣະ ຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາຂ້າງເທິງນີ້.

## ໓

ທຸນນິຄຄະຫັສສະ ລະຫຸໂນ
ຍັຕຖະກາມະນິປາຕິໂນ
ຈິຕັສສະ ທະມະໂຖ ສາຣຸ
ຈິຕັງ ທັນຕັງ ສຸຂາວະຫັງ ໑໓໕໑

ຈິຕນີ້ຄວບຄຸມໄດ້ຍາກ ປ່ຽນແປງ ຜັນແປໄປໄດ້ໄວ ຝັກໄຝ່ໄປໃນອາຣົມຕ໌ ທີ່ມັກໄຄ່ພໍໃຈ ຫາກວ່າ ເຝິກອົບຣົມຈິຕນັ້ນໄດ້ ເປັນກາຣດີ, ເພາະວ່າ ຈິຕທີ່ເຝິກອົບຣົມໄດ້ດີແລ້ວ ຍ່ອມນຳຄວາມສຸຂມາໃຫ້,

## ເຣື່ອງ ອັຍຍຕຣະ ກິກຂຸ

ພຣະບໍຣົມສາສດາ ທຣົງພາຣົພ ກິກຂຸ ອົງຄ໌ນຶ່ງ ທີ່ໄດ້ຍິນກິກຂຸ ມາຈາກຊົນບົທກ່າວສັຣເສີນຄຸຕຂອງ ມຫາອຸບາສິກາໃນສຳນັກຂອງພຣະອົງຄ໌ວ່າ ເປັນຜູ້ຮູ້ອາຣະຈິຕຂອງຜູ້ອື່ນໄດ້ຕົກແຕ່ງຂອງຄ້ຽວຂອງຈັນທີ່ດີ ບຳຣຸງຕາມພຣະດຳຣິທຸກປະກາຣ ຈຶ່ງໄດ້ສຳເຣັຈພຣະອະຣະຫັຕໂດຍສດວກ. ກິກຂຸອົງຄ໌ນັ້ນ ມີຄວາມພໍໃຈຈະໄປຢູ່ທີ່ນັ້ນ

ກິກຂຸອົງຄ໌ນັ້ນ ມີຄວາມພໍໃຈຢາກໄປຢູ່ໃນ ທີ່ນັ້ນຈຶ່ງຂໍຮຽນ ກັມມຖານໃນສຳນັກຂອງພຣະອົງຄ໌ ແລ້ວຈຶ່ງທູລລາໄປຢູ່ໃນທີ່ນັ້ນ. ຝ່າຍ ມະຫາອຸບາສິກາ ກໍບຳຣຸງດ້ວຍຈະຕຸປັຈຈັຍຕາມຄວາມດຳຣິຂອງ ເພິ່ນທຸກປະການ. ກິກຂຸອົງຄ໌ນັ້ນມີຄວາມເກງໃຈວ່າ ຕົນເປັນປຸຖຸຊົນ ຍາກທີ່ຈະຫ້າມຈິຕຂອງຕົນໄດ້ ຫາກຕົນຄິດໄປໃນສິ່ງທີ່ບໍ່ດີ ນາງ ກໍ ຈະດູຖູກ. ຄັນດຳຣິດັ່ງນັ້ນແລ້ວ ຈຶ່ງຫລີກໜີຈາກທີ່ນັ້ນ ແລ້ວເຂົ້າໄປ ເຝົ້າພຣະຜູ້ມີພຣະກາຄເຈົ້າ ທູລຄວາມດຳຣິນັ້ນແດ່ ພຣະອົງຄ໌ ໆ ກໍ ຫຣົງຮັບສັ່ງໃຫ້ ກັບຄືນໄປຍັງທີ່ນັ້ນອີກ.

ແລ້ວພຣະຍອດແກ້ວສັພພັຍຍູ ຈຶ່ງຕຣັສພຣະຄາຖາ ດັ່ງທີ່ ໄດ້ຍົກຂຶ້ນມາຂ້າງເທິງນີ້ ນັ້ນແລ.

---

**໔**

ສຸທຸທທະສັງ ສຸນິປຸນັງ
ຍັຕຖະກາມະນິປາຕິນັງ
ຈິຕຕັງ ຣັກເຂຖະ ເມທາວີ
ຈິຕຕັງ ຄຸຕຕັງ ສຸຂາວະຫັງ ໆ໓໖ໆ

ຈິຕນີ້ເຫັນໄດ້ຍາກ ລະອຽດອ່ອນ ທີ່ສຸດ, ມັກໄຝ່ຝັນໄປ-

ຕາມອາຣົມຕ໌ທີ່ມັກໄຄ່ພໍໃຈ. ຜູ້ທີ່ມີປັນຍາ ຈຶ່ງຄວນຄອບຄຸມຈິຕນີ້ໄວ້ໃຫ້ດີທີ່ສຸດ. ເພາະວ່າ ເມື່ອຈິຕນັ້ນ ຄອບຄຸມໄວ້ໄດ້ດີແລ້ວຍ່ອມນຳສຸຂມາໃຫ້.

## ເຣື່ອງ ອຸກັຕຕາທິຕະ ກິກຂຸ

ພຣະບໍຣົມສາສດາ ທຣົງປາຣົພ ພຣະອຸກັຕຕາທິຕະ ທີ່ຢາກຈະລາສິກຂາ ຄວາມຕັ້ງໃຈຂອງເພິ່ນກ່ອນທີ່ຈະບວຊນັ້ນ ກໍເພື່ອຢາກຈະພົ້ນຈາກທຸກຂ໌ ແຕ່ເມື່ອບວຊເຂົ້າມາແລ້ວ ພຣະອາຈາຣຍ໌ກ່າວສັມມ໌ ພຣະອຸປັຊຊາຍ໌ກ່າວວິນັຍວ່າ ສິ່ງນີ້ຄວນເຮັດຄວນທຳ ສິ່ງນີ້ບໍ່ຄວນເຮັດບໍ່ຄວນທຳ ເມື່ອຟັງແລ້ວກໍມີຄວາມໜັກໃຈວ່າຄົງຈະປະຕິບັຕຕາມບໍ່ໄຫວເປັນແນ່. ເມື່ອຄິດເຊັ່ນນີ້ແລ້ວເລີຍຢາກຈະສິກ.

ເມື່ອເຫັນເປັນເຊັ່ນນັ້ນ ພຣະອຸປັຊຊາຍະອາຈາຣຍ໌ ຈຶ່ງໄດ້ພາກິກຂຸອົງຄ໌ນັ້ນໄປເຂົ້າເຝົ້າ ພຣະບໍຣົມສາສດາ ທູລຄວາມນັ້ນໃຫ້ພຣະອົງຄ໌ ທຣົງຊາບ.

ບັດນັ້ນ ພຣະບໍຣົມສາສດາ ຕຣັສຖາມກິກຂຸອົງຄ໌ນັ້ນວ່າ ຖ້າເປັນເຊັ່ນນັ້ນ ທ່ານຣັກສາພຽງສິ່ງດຽວແລ້ວ ບໍ່ຕ້ອງຣັກສາສິ່ງອື່ນຈະໄດ້ບໍ? ເມື່ອໄດ້ ຍິນເຊັ່ນນັ້ນ ກິກຂຸອົງຄ໌ນັ້ນ ກໍທູລຮັບທັນທີວ່າໄດ້

ພຣະພຸທທອົງທຣົງໃຫ້ ຮັກສາຈິຕພຽງຢ່າງດຽວ ແລ້ວຈິ່ງຕຣັສຊຶ່ງ
ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາໃນ ຂ້າງເທິງນີ້ ນັ້ນແລ.

---

໕

ທູຣັງຄະມັງ ເອກະຈະຣັງ
ອະສະຣີຣັງ ຄູຫາະສະຍັງ
ເຍ ຈິຕຕັງ ສັຍຍະເມສສັນຕິ
ໂມກຂັນຕິ ມາຣະພັນທະນາ ໆ໓໗ໆ

ຈິຕນັ້ນ ທ່ອງທ່ຽວໄປໄກແສນໄກ, ທ່ຽວໄປດອງດຽວ,
ບໍ່ມີຮູບບໍ່ມີຮ່າງໃຫ້ເຫັນ, ອາສັຍຢູ່ແຕ່ໃນສິ່ງທີ່ມີຊີວິຕ (ຮ່າງກາຍ)
ຜູ້ໃດຄວບຄຸມຈິຕ ດັ່ງກ່າວນີ້ໄວ້ໄດ້ ຜູ້ນັ້ນ ຈັກພົ້ນຈາກບ້ວງແຫ່ງ
ມາຣ

## ເຣື່ອງ ພຣະສັງຆຣັກຂິຕເຖຣະ

ພຣະບໍຣົມສາສດາ ທຣົງຜາຣົພ ພຣະສັງຆຣັກຂິຕເຖຣະ.
ໃນວັນນຶ່ງ ເພິ່ນໄດ້ຜ້າຈໍານໍາພັຣສາ ໒ ຜືນ ແລ້ວນໍາເອົາໄປຖວາຍ
ພຣະອຸປັຊຊາຍະ ຜືນນຶ່ງ. ພຣະອຸປັຊຊາຍະເພິ່ນບໍ່ຮັບເອົາ. ພຣະຣັກ-
ຂິຕ ມີຄວາມຄິດນ້ອຍໃຈວ່າ ນອກຈາກຈະເປັນພຣະອຸປັຊຊາຍະແລ້ວ

ເພິ່ນຍັງເປັນທັງລຸງ ທັງອຸປັຊຊາຍ໌ຂອງເຮົາ ເມື່ອເພິ່ນຄົງບໍ່ນັບຖືວ່າ ເຮົານັ້ນເປັນຫລານແລ້ວ ເຮົາຈະບວຊໄປເຮັດຫຍັງ ສິກດີກ່ອາ ຄັນສິກໄປແລ້ວ ເຮົາກໍ່ຈັກເອົາຜ້ານີ້ໄປຂາຍເອົາເງິນໄປຊື້ເອົາແບ້ຕົວແມ່ມາຕົວນຶ່ງເພື່ອລ້ຽງເອົາລູກ ແລ້ວກໍ່ຈະໄດ້ເອົາລູກແບ້ນັ້ນໄປຂາຍ,

ຄັນວ່າ ເຮົາໄດ້ເງິນມາພໍ່ສົມຄວນແດ່ແລ້ວ ເຮົາກໍ່ຈະຫາເອົາກັຣຍາ ຈັກຄົນນຶ່ງ ເພື່ອຊ່ວຍກັນ ລ້ຽງແບ້ໃຫ້ອອກແມ່ແຜ່ລູກໃຫ້ຫລາຍຂຶ້ນເລື້ອຍ ໆ. ເຮົາກໍ່ຈະພາກັນຮິບໂຮມເງິນທີ່ໄດ້ມານັ້ນ ໃຫ້ຫລາຍຂຶ້ນ. ເຮົາຈະໃຊ້ເງິນທີ່ຮິບໂຮມໄວ້ນັ້ນ ສ້າງບ້ານເຮືອນ ທີ່ຢູ່ອາສັຍ ແລະ ມີຊີວິຕກາຣເປັນຢູ່ກດີຂຶ້ນພໍ່ສົມຄວນ ຕາມຖານະຂອງຕົນບໍ່ໃຫ້ລຳບາກ.

ໃນເມື່ອ ກັຣຍາເຮົາມີບຸຕຣ໌ຊາຍ ເຮົາຈະຕັ້ງຊື່ ບຸຕຣ໌ຜູ້ນັ້ນ ຄືກັນກັບຊື່ ພຣະເຖຣະຜູ້ເປັນລຸງນີ້ ແລ້ວກໍ່ພາບຸຕຣ໌ ແລະ ກັຣຍາໄປຫາເພິ່ນ. ຄັນວ່າ ກັຣຍາ ບໍ່ຍອມນຳເອົາບຸຕຣ໌ເຂົ້າໄປ ເຮົາກໍ່ຈະໄດ້ປະບຸຕຣ໌ນັ້ນໄວ້ໃນກວຽນ ແລະ ກົງກວຽນນັ້ນອາຈະໝຸນທັບເອົາບຸຕຣ໌ກໍ່ເປັນໄດ້. ເມື່ອເປັນຊຸ່ນນັ້ນແລ້ວ ເຮົາກໍ່ຈະເອົາເຫລັກປະຕັກຕີຫົວຂອງກັຣຍາ. ຂຕະນັ້ນເພິ່ນກຳລັງພັດວີ ພຣະເຖຣະຢູ່ ເລີຍລືມຕົວເອົາພັດວີນັ້ນຕີທີ່ຫົວພຣະເຖຣະຢ່າງແຮງ. ພຣະເຖຣະ ຈຶ່ງກ່າວຂຶ້ນວ່າ ອັນນີ້, ເປັນຫຍັງກັນໄປແລ້ວໜໍ ! ເປັນຫຍັງຈຶ່ງເຮັດຈັ່ງຊີ້?

ພຣະສັງໝະຣັກຂິຕຕົກໃຈຢ້ານວ່າ ພຣະເຖຣະ ຮູ້ອາຣະຈິຕ ຂອງຕົນດີ ຈຶ່ງຖິ້ມພັດວີ ຣີບແລ່ນໜີ. ກິກຂຸສາມເຕຣ ຊ່ອຍກັນພາ ຕົວ ພຣະສັງໝຣັກຂິຕ ເຂົ້າເຝົ້າພຣະສາສດາ. ພຣະອົງຄ໌ ຈຶ່ງມີຣັບ ສັ່ງຖາມ. ເພິ່ນກໍ່ ທູລຕອບ ຕາມຄວາມເປັນຈິງ.

ບັດນັ້ນ ພຣະຍອດແກ້ວສັພພັຌຌູ ຈຶ່ງຕຣັສ ຊຶ່ງພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາຂ້າງເທິງນີ້ ນັ້ນແລ.

---

# ໓

ອະນະວັຕທິຕະຈິຕຕັສສະ

ສັທລັມມັງ ອະວິຊານະໂຕ

ປະຣິປລະວະປະສາທັສສະ

ປັຌຌາ ນະ ປະຣິປູຣະຕິ. ໑໖໗໑

ປັຌຌາ ຍ່ອມບໍ່ບໍຣິບູຣຕ໌ ໃນບຸຄຄົລ ຜູ້ທີ່ມີຈິຕ ບໍ່ທ່ຽງ ບໍ່ໝັ້ນຄົງ ບໍ່ຮູ້ ຊຶ່ງພຣະສັທລັມມ໌, ມີສັທລາ ຄວາມເຫລື້ອມໃສ ທີ່ບໍ່ຈິງຈັງ.

ໆ

ນະວັສສຸຕຈິຕຕສສະ
　　　　ອະນັນວາຫະຕະເຈຕະໂສ
ປັຍຍະປາປະປະຫີນັສສະ
　　　　ນັຕຖິ ຊາຄະໂຣ ກະຍັງ ໆ໓໙ໆ

ຜູ້ທີ່ມີສະຕິຕື່ນຕົວ ຢູ່ເປັນນິຕຍ໌, ມີຈິຕ ເປັນອິສຣະ ປາສະ ຈາກຣາຄະ ແລະ ໂທສະ ລະເສັຍຊຶ່ງບາບ ແລ ບຸຍໄດ້ ທຽນຍ່ອມ ບໍ່ມີຊຶ່ງ ຄວາມຢ້ານກົວ ຕໍ່ສິ່ງໃດ ທັງໝົດ.

## ເຣື່ອງ ພຣະຈິຕຕຫັຕຖະເຖຣະ

ພຣະບໍຣົມສາສດາ ທຣົງຜາຣົພ ພຣະຈິຕຕຫັຕຖະເຖຣະ ເພິ່ນ ເຫັນພຸທສສາສນາຟູມເຟືອນໄປດ້ວຍລາພສັກກາຣະຈຶ່ງໄດ້ອອກບວຊ ຄັນເພິ່ນມີຮ່າງກາຍ ອ້ວນພີດີງາມແລ້ວກໍ່ສິກ ສິກແລ້ວກໍ່ບວຊອີກ ບວຊ ໆ ສິກ ໆ ຢູ່ຢ່າງນີ້ຈົນເຖິງ ໖ ເທື່ອ.

ໃນເທື່ອທີ່ ໗ ເພິ່ນໄດ້ເຫັນກັຣຍານອນຫລັບໃນກາງເວັນ

ເໝືອນກັບຄົນຕາຍ ທີ່ເຂົານຳເອົາໄປຖິ້ມໄວ້ໃນປ່າຊ້າຜີດິບ ກຳລັງຈະເນົ່າພອງຂຶ້ນອືດ. ເມື່ອພິຈາຣະຕາເບິ່ງແລ້ວ ກໍເກີດຄວາມເບື່ອໜ່າຍ ລົງຈາກເຮືອນຍ່າງມຸ່ງໜ້າໄປຍັງພຣະວິຫາຣ ໃນຣະຫວ່າງທາງໄປນັ້ນເພິ່ນພິຈາຣະຕາ ອະສຸກະກັມມກຖານໄປເລື້ອຍໆ ແລະ ໄດ້ບັຣລຸໂສດາປັຕຕິຜົລ. ເມື່ອເຖິງພຣະວິຫາຣຈຶ່ງເຂົ້າໄປຫາພຣະກິກຂຸ ເພື່ອຂໍບວຊອີກ. ກິກຂຸທັງຫລາຍ ຮູ້ເຣື່ອງໃນ ອະດີຕຂອງເພິ່ນບໍ່ຢາກຈະບວຊໃຫ້ ແຕ່ເພິ່ນອ້ອງວອນຢູ່ຢ່າງນັ້ນ ໃນທີ່ສຸດ ພຣະກິກຂຸ ກໍອະນຸໂລມບວຊໃຫ້ ເມື່ອເພິ່ນບວຊໄດ້ບໍ່ນານ ເພິ່ນກໍໄດ້ສຳເຣັຈ ຊຶ່ງພຣະອຣຫັຕ.

ກິກຂຸ ທັງຫລາຍ ເຫັນເພິ່ນຈຶ່ງຖາມເຖິງຄວາມຫລັງຂອງເພິ່ນ ໆ ຕອບວ່າ ໝົດຄວາມກ່ຽວຂ້ອງກັນແລ້ວ, ນີສັມມ໌ເປັນເຄື່ອງບໍ່ໄປເກີດອີກແລ້ວ ກິກຂຸ ທັງຫລາຍ ຫາວ່າເພິ່ນນັ້ນ ເວົ້າອວດອະຣຫັຕຜົລ.

ກິກຂຸ ທັງຫລາຍ ໄດ້ເຂົ້າເຝົ້າຂາບທູລເຣື່ອງນັ້ນ ແດ່ ພຣະສາສດາ ໃຫ້ທຣົງຊາບ. ພຣະບໍຣົມສາສດາ ທຣົງຮັບຮອງວ່າ ຄວາມເວົ້າຂອງ ພຣະຈິຕຕຫັຕຖະເຖຣະ ເວົ້າຕາມຄວາມເປັນຈິງ ແລ້ວຈຶ່ງຕຣັສ ພຣະຄາຖາດັ່ງທີ່ໄດ້ຍົກຂຶ້ນມານັ້ນ.

໗

ກຸມພູປະມັງ ກາຍະມິມັງ ວິທິຕະວາ

ນະຄະຣູປະມັງ ຈິຕຕະມິທັງ ຖະເປຕະວາ

ໂຍເຊຖະ ມາຣັງ ປັຌຌາວຸເຌນະ

ຊິຕັຌຈະ ຣັກເຂ ອະນິເວສະໂນ ສີຍາ ໆ໔໐ໆ

ເມື່ອມາຮູ້ວ່າ ຮ່າງກາຍນີ້ ແຕກດັບງ່າຍ ຄືໝໍ້ນ້ຳ ເຮົາກໍ່ຄວນປ້ອງກັນຈິຕໃຫ້ໝັ້ນຄົງ ເໝືອນປ້ອງກັນເມືອງຫລວງ ຄວນຮົບກັບພຌາມາຣດ້ວຍອາວຸຸຄືປັຌຌາ ເມື່ອຮົບຊນະແລ້ວຄວນຮັກສາຊັຍນັ້ນໄວ້. ຈົ່ງຣະວັງ ຢ່າຕົກຢູ່ໃນອຳນາຈຂອງມາຣອີກ.

## ເຣື່ອງ ອາຣັທລະວິປັສສະກະພິກຂຸ

ພຣະບໍຣົມສາສດາ ທຣົງຜາຣົພ ພວກພິກຂຸ ປະມາຓ ໕໐໐ ອົງຄ໌ ຜູ້ເຫັນແຈ້ງດ້ວຍຄວາມພຽຣ ຮຽນກັມມກຖານ ໃນສຳນັກຂອງພຣະສາສດາ ສຳເຣັຈຣຽບຮ້ອຍແລ້ວ ກໍ່ພາກັນໄປຈເຣີຌສມຕະລັມມ໌ໃນໄພສົຓฑ໌ແຫ່ງ ນຶ່ງອັນເປັນ ທີ່ອາສັຍຂອງ ຣຸກຂະ ເທວະດາ ໆ ເຫລົ່ານັ້ນ ເປັນເທວະກາ ມີສັມມາທິຌກິເຫັນພຣະພິກຂຸເຫລົ່ານັ້ນລ້ວນ

ເປັນຜູ້ມີສີລ ຢູ່ພາຍໃຕ້ກໍລົງຈາກຕົ້ນໄມ້ມາຢູ່ ກາຄພື້ນດິນ. ການທີ່ຣຸກຂະເທວດາ ລົງຈາກຕົ້ນໄມ້ນັ້ນ ກໍຍ້ອນສຳຄັນວ່າ ພວກເພິ່ນຈະຢູ່ໃນທີ່ນັ້ນ ພຽງອັນນຶ່ງ ຫລື ສອງອັນເທົ່ານັ້ນ. ຄັນເຫັນວ່າ ພິກຂຸເຫລົ່ານັ້ນຈະຢູ່ຈຳພັຣษາ ຈຶ່ງຊວນກັນສແດງຄວາມບໍ່ພໍໃຈດ້ວຍການເຮັດໃຫ້ ພິກຂຸ ເຫລົ່ານັ້ນເປັນທີ່ໜ້າຢ້ານກົວຕ່າງໆ ນາໆ. ເມື່ອເພິ່ນເຫລົ່ານັ້ນ ບໍ່ໄດ້ເສນາສນະອັນສບາຍ ກໍພາກັນກັບໄປເຝົ້າພຣະສາສດາ ຂາບທູລຄວາມນັ້ນໃຫ້ພຣະອົງຄ໌ຫລົງຊາບ.

ພຣະອົງຄ໌ ຈຶ່ງຮັບສັ່ງໃຫ້ກັບຄືນໄປຍັງທີ່ເດີມນັ້ນອີກ. ພຣະອົງຄ໌ ທຣົງປະທານ ກຣณີຍເມຕຕສູຕຣ໌ ສຳຣັບສາລຍາຍ ໃນທີ່ນັ້ນ. ພິກຂຸ ເຫລົ່ານັ້ນ ກໍກະທຳຕາມຮັບສັ່ງ. ບັດນັ້ນ, ເທວດາເຫລົ່ານັ້ນກັບເປັນຜູ້ມີເມຕຕາຈິຕ ຊ່ວຍກັນອະພິບາລຮັກษາ ພິກຂຸ ເຫລົ່ານັ້ນໃຫ້ມີຄວາມສຸຂສີຣິ ສວັສດີ. ເມື່ອພິກຂຸ ເຫລົ່ານັ້ນ ໄດ້ເສນາສນະສດວກສບາຍຈິຕກໍເປັນເອກັຄຄຕາຣົມຕ໌ ທຳໃຫ້ອາສວະໃນຕົນສິ້ນໄປ ເໝືອນກັບກາຊນະດິນ ທີ່ເກີດຂຶ້ນແລ້ວ ກໍແຕກສລາຍໄປ.

ພຣະບໍຣົມສາສດາ ທຣົງປະທັບຢູ່ໃນ ພຣະຄັນລະກຸຝີ ທຣົງຊາບ ຈຶ່ງສົ່ງພຣະໂອກາສຣັສມີໄປເໝືອນກັບວ່າປະທັບຢູ່ຕໍ່ໜ້າ ພິກຂຸເຫລົ່ານັ້ນ ແລ້ວຕຣັສ ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມານັ້ນ.

## ໙

ອະຈິຣັງ ວະຕະຍັງ ກາໂຍ
ປະຖະວິງ ອະທິເສສສະຕິ
ຈຸທໂທ ອະເປຕະວິນຍາໂຕ
ນິຣັຕຖັງວະ ກະລິງຄະລັງ ໆ໔໑ໆ

ຢູ່ອີກບໍ່ດົນ ຮ່າງກາຍນີ້, ວິນຍານ ກໍ່ຈະຈາກໄປແລ້ວແລະ ຈະຖືກ ປະຖິ້ມ ໃຫ້ນອນທັບແຜ່ນດິນ ເໝືອນດັ່ງຂອນໄມ້ໂດກ ທີ່ຫາປະໂຍຊນ໌ຫຍັງ ບໍ່ໄດ້ນັ້ນແລ.

## ເຣື່ອງ ພຣະປູຕິຄັຕຕະຕິສສະເຖຣະ

ໃນສມັຍນຶ່ງ, ພຣະຜູ້ມີພຣະກາຄເຈົ້າ ທຮົງຜາຣົພ ພຣະ ຕິສສະເຖຣະ ທີ່ມີຮ່າງກາຍເປື່ອຍເນົ່າ. ໃນຄັ້ງ ກັສສປະພຸທສກາລ ພຸ້ນ ເພິ່ນໄດ້ເປັນ ນາຍພານນົກ ທັກຂາ ທັກປີກນົກ ແລ້ວເກັບໄວ້ ບໍາຣຸງອິສຣະຊົນແດ່ ສໍາຣັບບໍຣິໂພຄ ສ່ວນຕົວແດ່.

ໃນວັນນຶ່ງ ເພິ່ນເຫັນ ພຣະຂີຕາສົພ ທ່ງວບິດທບາຕຈຶ່ງ ເອົາອາຫາຣ ທີ່ຕົນແຕ່ງດ້ວຍນົກໄວ້ນັ້ນຖວາຍ.

ຄັນຕົກມາໃນສາສນາ ຂອງເຮົາພຣະອົງຄ໌ນີ້, ເພິ່ນໄດ້ມອບກາຍຖວາຍຊີວິຕບວຊ. ໃນພາຍຫລັງ ໄດ້ເກີດມີຕຸ່ມ ໃຫຍ່ເທົ່າກັບເມັດຜັກກາດ ລາມໄປທົ່ວຕົວ ແລ້ວແຕກເປັນໜອງ ພຸພອງເນົ່າເໝັນ ບັນດາສິສານຸສິສ ຕ່າງກໍບໍ່ຢາກປິ່ນປົວບົວຣະບັຕ ປະຖິ້ມເພິ່ນ.

ພຣະບໍຣົມສາສດາທຣົງຊາບ ກໍໄດ້ສເດັຈໄປບົວຣະບັຕດ້ວຍພຣະອົງຄ໌ເອງ. ໃຫ້ອາບນ້ຳ ຊຳຣະລ້າງສ່ວຍ ປ່ຽນຜ້າໃຫ້ໃໝ່ ຮ່າງກາຍຂອງເພິ່ນກໍເສາະໃສຂຶ້ນມາ.

ພຣະສາສດາ ຈຶ່ງທຣົງປະທານໂອວາທ ຕຣັສພຣະຄາຖາດັ່ງທີ່ໄດ້ ຍົກຂຶ້ນມາໃນເບື້ອງຕົ້ນນັ້ນ. ເມື່ອຈົບພຣະທັມມເທສນາລົງເພິ່ນກໍໄດ້ສຳເຣັຈ ພຣະອຣຫັຕ.

---

## ໑໐

ທິໂສ ທິສັງ ຍັນຕັງ ກະຍິຣາ
ເວຣີ ນາ ປະນະ ເວຣິນັງ
ມິຈສາປະຕິຫິຕັງ ຈິຕຕັງ
ເສຍຍະໂສ ນັງ ຕະໂຕ ກະເຣ ໆ໔໒ໆ

ຈິຕທີ່ໄດ້ຮັບການເຝິກຝົນອົບຮົມໄປໃນທາງທີ່ຜິດ ຍ່ອມທຳ

ຄວາມເສັຍຫາຍໃຫ້ ຍິ່ງຮ້າຍກວ່າ ສັຕຣູທີ່ທຳກັບສັຕຣູ ຫຣືວ່າ ຄົນທີ່ຈອງເວຣກັນ ທຳການແກ້ແຄ້ນຕໍ່ກັນ ນັ້ນອີກ.

## ເຣື່ອງ ນັນທະໂຄປາລະກະ

ພຣະຜູ້ມີພຣະກາຄເຈົ້າ ທຣົງຜາຣົພ ນາຍໂຄບາລ ຊື່ວ່າ ນັນທະ ລາວເປັນຄົນ ຮັ່ງມີຜູ້ນຶ່ງ ແລະເປັນຜູ້ມີສັທລາເຫລື້ອມໃສ ໃນພຣະພຸທລສາສນາ ໃນວັນນຶ່ງ ລາວໄດ້ນິມົນຕ໌ ພຣະສາສດາໄປ ຈັນກັຕຕາຫານ ທີ່ເຮືອນຂອງລາວ. ພຣະພຸທລອົງຄ໌ ທຣົງ ຊາບວ່າ ຌາຕບາຣະມີຂອງລາວນັ້ນ ຍັງບໍ່ທັນແກ່ກ້າເທື່ອ ຈຶ່ງໄດ້ ລໍຄອຍຢູ່ ເມື່ອເຫັນວ່າສົມຄວນແລ້ວ ພຣະພຸທລອົງຄ໌ ພ້ອມດ້ວຍກິກຂຸສົງຆ໌ ບໍຣິວານຈຶ່ງໄດ້ສເດັຈໄປ. ນາຍນັນທະ ໄດ້ອັງຄາສ (ຖວາຍກັຕຕາ ຫານ) ແດ່ ກິກຂຸສົງຆ໌ ມີພຣະພຸທລເຈົ້າເປັນປະທານສິ້ນ ໗ ວັນ. ພຣະອົງຄ໌ໄດ້ສແດງ ອະນຸປຸພພິກຖາອະນຸໂມທນາ ຍັງນາຍນັນທະ ໃຫ້ສຳເຣັຈໂສດາປັຕຕິຜົລແລ້ວ ຈຶ່ງສເດັຈກັບ.

ນາຍນັນທະ ໄດ້ຕາມສົ່ງສເດັຈ ແລ້ວຈຶ່ງກັບຄືນບ້ານ. ໃນເວ ລາກັບນັ້ນ ມີນາຍພານຜູ້ນຶ່ງໄດ້ຍິງ ນາຍນັນທະໃຫ້ເຖິງແກ່ຄວາມ ຕາຍໃນຣະຫວ່າງທາງ ນັ້ນເອງ. ກິກຂຸ ທັງຫລາຍເຫັນ ຈຶ່ງໄດ້ທູລ

ພຣະສາສດາວ່າ ເພາະ ພຣະອົງຄ໌ສເດັຈມານັ້ນແຫລະ ນາຍນັນທະ ຈຶ່ງໄດ້ເຖິງແກ່ຄວາມຕາຍ. ພຣະອົງຄ໌ ທຮົງຕຣັສວ່າ ຍ້ອນເຮົາມາ ຫລືບໍ່ ກໍຕາມ ອຸບາຍທີ່ຈະໃຫ້ພົ້ນຈາກຄວາມຕາຍນັ້ນ ບໍ່ມີໃນໂລກ. ແລ້ວຈຶ່ງຕຣັສພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາໃນເບື້ອງຕົ້ນນີ້.

---

## ໑໑

ນະ ຕັງ ມາຕາ ປິຕາ ກະຍິຣາ
ອັຌເຌ ວາ ປິ ຈະ ຌາຕະກາ
ສັມມາປະຕິຫິຕັງ ຈິຕຕັງ
ເສຍຍະໂສ ນັງ ຕະໂຕ ກະເຣ ຯ໔໓ຯ

## ເຣື່ອງ ພຣະໂສເຣຍຍເຖຣະ

ໃນກາລະຄັ້ງນຶ່ງ, ພຣະບໍຣົມສາສດາ ທຮົງຜາຣົພ ພຣະອົງຄ໌ນຶ່ງຊື່ວ່າໂສເຣຍຍະເຖຣະ ເພິ່ນເປັນບຸຕຣ໌ເສຕຖີໃນ ໂສເຣຍຍະນຄຣ ໃນຄາວທີ່ເພິ່ນຍັງເປັນຄຣືຫັສຖ໌ຢູ່ນັ້ນ ເພິ່ນໄດ້ເຫັນພຣະກັຈຈາຍນະເຖຣະ ມີວັຕຕະສວຍງາມ ຈຶ່ງດໍາຣິວ່າ ເຮັດຈັ່ງໃດໜໍ່ ຈຶ່ງຈະເຮັດໃຫ້ກັຣຍາ ຂອງເຮົາມີວັຕຕະງາມຄືດັ່ງ ພຣະເຖຣະນີ້.

ໃນຂຕະນັ້ນ ເພສຂອງລາວກໍກາຍເປັນສຕຣີ. ນາງມີຄວາມ ລະອາຍ ຈຶ່ງໄດ້ໜີໄປຢູ່ເມືອງຕັກກະສິລາ ໄດ້ບຸຕຣ໌ຂອງເສຕຖີໃນເມືອງນັ້ນ ເປັນສາມີ. ເວລາທ່ານເປັນບຸຣຸສນັ້ນ ເພິ່ນມີບຸຕຣ໌ ໒ ຄົນ.ເວລາ ເປັນສຕຣີ ກໍມີບຸຕຣ໌ອີກ ໒ ຄົນ.

ວັນນຶ່ງ ສຫາຍຂອງທ່ານໃນນຄຣໂສເຣຍຍະໄປທ່ຽວເມືອງ ຕັກກສິລາ ໄດ້ຮູ້ຄວາມນັ້ນກໍຕົກໃຈຈຶ່ງໃຫ້ຮີບໄປຂໍໂທສພຣະເຖຣະ ພຣະເຖຣະ ກໍອະໄຫສິກັມມ໌ໃຫ້. ເພສສຕຣີ ກໍໄດ້ອັນຕຣະລານຫາຍ ໄປ ແລະກັບຄືນເປັນບຸຣຸສ ຕາມເດີມ.

ບັດນັ້ນ, ເພິ່ນກໍໄປບວຊຢູ່ໃນສໍານັກ ຂອງພຣະມຫາເຖຣະ ເພິ່ນ ບໍາເພັນພຽຣໃນເວລາບໍ່ດົນ ເພິ່ນກໍໄດ້ສໍາເຣັຈ ພຣະອຣຫັຕ. ໃນມື້ນຶ່ງໄດ້ມີ ຄົນເຂົ້າໄປຖາມເພິ່ນວ່າ ເພິ່ນຮັກລູກຝ່າຍໃດຫລາຍ ກວ່າ. ເພິ່ນຕອບວ່າເຮົາ ບໍ່ຮັກຝ່າຍໃດ ທັງນັ້ນ. ກິກຂຸທັງຫລາຍ ຫາວ່າເພິ່ນອວດ ອຣະຫັຕຕຜົລ. ຈຶ່ງນໍາຄວາມນັ້ນຂຶ້ນຂາບທູລ ແດ່ ພຣະຜູ້ມີພຣະກາຄເຈົ້າ. ພຣະບໍຣົມສາສດາ ທຣົງຮັບວ່າ ເພິ່ນເວົ້າຈິງ ແລ້ວຈຶ່ງຕຣັສ ພຣະຄາຖາດັ່ງທີ່ກ່າວມາແລ້ວ ໃນຂ້າງຕົ້ນນີ້.

## ຈົບ ຈິຕຕວັຄຄ໌ ທີ່ ໓

# ປຸປຜະວັຄຄ໌ ທີ່ ໔

## ໝວດ ດອກໄມ້

໑

ໂກ ອິມັງ ປະຖະວິງ ວິເຈສສະຕິ
ຍະມະໂລກັຍຈະ ອິມັງ ສະເທວະກັງ
ໂກ ລັມມະປະທັງ ສຸເທສິຕັງ
ກຸສະໂລ ປຸປຜະມິວະ ປະເຈສສະຕິ ໆ໔໔ໆ

ໃຜຈັກຄອງ ແຜ່ນດິນນີ້ ພ້ອມທັງຍົມໂລກ ແລະເທວໂລກ, ໃຜຈັກເລືອກຄົ້ນເອົາ ພຣະລັມມບົທ ທີ່ທຣົງສແດງໄວ້ດີແລ້ວ ເໝືອນດັ່ງນາຍມາລາກາຣ ຊ່າງຕົກແຕ່ງດອກໄມ້ ຜູ້ສລາດ ທີ່ເລືອກເກັບດອກໄມ້ນັ້ນ.

໒

ເສໂຂ ປະຖະວິງ ວິເຊສສະຕິ
ຍະມະໂລກັຍຈະ ອິມັງ ສະເທວະກັງ
ເສໂຂ ລັມມະປະທັງ ສຸເທສິຕັງ
ກຸສະໂລ ປຸປຜະມິວະ ປະເຈສສະຕິ ໆ໔໕ໆ

ພຣະເສຂະ ຈັກຄອບຄອງ ແຜ່ນດິນນີ້ ພ້ອມທັງຍົມໂລກ ແລະເທວະໂລກ ພຣະເສຂະນັ້ນ ຈັກເລືອກຄົ້ນເອົາພຣະລັມມະບົທ ໄດ້ທຣົງສແດງໄວ້ດີແລ້ວ ຄືຊ່າງດອກໄມ້ ຜູ້ສລາດເລືອກດອກໄມ້.

# ເຣື່ອງ ປຖະວີກະຖາ

ພຣະບໍຣົມສາສດາ ທຣົງພາຣົພ ພິກຂຸ ປະມານ ໕໐໐ ອົງຄ໌ ປະຊຸມກັນກ່າວເຖິງເຣື່ອງແຜ່ນດິນວ່າ ໜ້າດິນນັ້ນມີບ່ອນສູງບ່ອນຕ່ຳ ບໍ່ສເມີກັນ ມີບາງບ່ອນ ເປັນດິນຕົມ ບາງບ່ອນ ເປັນດິນຊາຍສີດໍາ ກໍມີ. ພຣະສາສດາທຣົງສເດັຈໄປຍັງທີ່ປະຊຸມນັ້ນແລ້ວຈຶ່ງທຣົງສແດງວ່າອັນນີ້ເປັນດິນພາຍນອກ ຈົ່ງພິຈາຣະນາເປັນດິນພາຍໃນ ແລ້ວຕຣັສຄພຣະຄາຖາດັ່ງຍົກຂຶ້ນມາໃນຂ້າງນີ້.

---

ໞ

ເຜຫູປະມັງ ກາຍະມິມັງ ວິທິຕ໌ວາ
ມະຣີຈິທັມມັງ ອະກິສັມພຸທາໂນ
ເຊຕ໌ວານະ ມາຣັສສະ ປະປຸປຜະການີ
ອະທັສສະນັງ ມັຈຈຸຣາຊັສສະ ຄັຈເຊ ໑໔໖໑

ເມື່ອຮູ້ວ່າ ຮ່າງກາຍຂອງເຮົາ ນີ້ແຕກສລາຍໄດ້ງ່າຍ ແລະ ວ່າງເປົ່າດັ່ງດຽວກັນກັບຟອດນ້ຳ ແລະຍົບແດດ (ບໍ່ມີຕົນຕົວ) ເຮົາກໍຄວນທີ່ຈະທຳລາຍເສັຍຊຶ່ງ ດອກໄມ້ ທັງຫລາຍ ຂອງມາຣ (ຄືວັຜະ ໞ) ເພື່ອໃຫ້ ບັຣລຸເຖິງສຖານທີ່ ທີ່ພຍາມັຈຈຸຣາຊ ແນມບໍ່ເຫັນ (ຄືພຣະນິພພານ) ນັ້ນແລ.

# ມະຣີຈິກັມມັຜກາເຖຣະ

ພຣະສາສດາ ທຣົງພາຣົພ ພິກຂຸ ຜູ້ຈເຣີຍ ມະຣີຈິກັມມະການ ແຕ່

ທົວທີນັ້ນ ເພິ່ນຮຽນກັມມຖານໃນສຳນັກຂອງພຣະອົງຄ໌ ແລ້ວທູລລາໄປຢູ່ໃນປ່າ ແຕ່ບໍ່ໄດ້ບັຣລຸພຣະອຣຫັຕ ຈຶ່ງກັບມາ ເພື່ອຂໍທູລປ່ຽນກັມມຖານໃໝ່ ໃນຂຕະທີ່ເພິ່ນຍ່າງກັບມານັ້ນ ເພິ່ນກໍໄດ້ເຫັນຊຶ່ງຍິບແດດ ແລະຝອດນ້ຳ ຕັ້ງຂຶ້ນໃນນ້ຳເພາະຍາມນັ້ນເປັນຍາມຮ້ອນ ຈຶ່ງໄດ້ຖືເອົາ ຍິບແດດແລະຝອດນ້ຳທີ່ຫາຍໄປນັ້ນເປັນອາຣົມຕ໌ກັມມຖານ ໂດຍເຫັນວ່າ ອັນນີ້ ສັນໃດ ອັຕຕກາພຂອງຄົນເຮົານັ້ນເກີດຂຶ້ນມາແລ້ວ ຕັ້ງຢູ່ ມີຊີວິຕຢູ່ ບໍ່ດົນກໍດັບໄປ ສັນນັ້ນແລ

ພຣະບໍຣົມສາສດາ ທຣົງຊາບດ້ວຍ ທິພພະຈັກຂຸຍາຕ ຈຶ່ງທຣົງເປັ່ງພຣະໂອກາສຣັສມີໄປຄືກັບວ່າ ພຣະອົງຄ໌ທຣົງປະທັບຢູ່ສະເພາະໜ້າ ແລ້ວຈຶ່ງຕັສ ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາໄວ້ ໃນຂ້າງຕົ້ນນິທານນີ້.

---

໓

ເຜນູປະມັງ ກາຍະມິມັງ ວິທິຕວາ
　　ມີຣີຈິລັມມັງ ອະກິສັມພຸຌາໂນ
ເຉຕະວານະ ມາຣັສສະ ປຸປຜະການິ
　　ອະທັສສະນັງ ມັຈຈຸຣາຊັສສະ ຄັຈເຉ ໆ

ເມື່ອຮູ້ວ່າສຣ່າງຫາຍນີ້ແຕກງ່າຍ ແລະວ່າງເປົ່າ ຄືຝອດນ້ຳແລະຍິບແດດ ເຮົາກໍຄວນທຳລາຍເສັຍຊຶ່ງດອກໄມ້ (ຄື ວັຜຜະ ໓) ເພື່ອໃຫ້ບັຣລຸເຖິງສຖານທີ່ ທີ່ພຍາມັຈຈຸຣາຊແນມບໍ່ເຫັນ ຄື ພຣະນິພພານ.

# ເຣື່ອງວິທູທະກະ

ພຣະບໍຣົມສາສດາ ທຣົງຜາຣົພ ວິທູທະກະ ພ້ອມດ້ວຍບໍຣິພັທທີ່ຖືກນ້ຳຖ້ວມຕາຍ. ວິທູທະກະນີ້ເປັນຣາຊໂອຣົສ ຂອງພຣະເຈົ້າ ປະເສນທິໂກ-ສົລ ມາຣດາ ມີນາມວ່າ ວາສກະຂັຕຕິຍາ ເປັນທິດາຂອງ ທ້າວມຫານາມ ສັກຍຣາຊທີ່ເກີດຈາກນາງທາສີ. ເມື່ອວິທູທະກະຍັງເປັນ ຣາຊກຸມາຣຢູ່ໄດ້ສະເດັຈໄປຢ້ຽມ ພຣະຍາຕິວົງສ໌ຝ່າຍມາຣດາ ທີ່ ກຣຸງກບິລພັສດຸ. ຄັນສເດັຈກັບພວກສັກຍຣາຊ ໃຫ້ຄົນລ້າງທີ່ ທີ່ວິທູທະກະ ປະທັບນັ່ງດ້ວຍນ້ຳນົມງົວ. ຄົນທີ່ລ້າງນັ້ນ ດ່າວ່າ ກໍເພາະລູກທາສີມານັ່ງ ເຮົາຈຶ່ງໄດ້ລ້າງ ວິທູທະກະຊາບໄດ້ຜູກເວຣໄວ້ແຕ່ຄັ້ງນັ້ນ. ຄັນວິທູທະກະຂຶ້ນຄອງຣາຊແລ້ວຈຶ່ງຍົກຊຶ່ງຈຕຸຣົງຄ໌ເສນາໄປຫວັງທີ່ຈະແກ້ແຄ້ນ ເອົາໂລຫິຕຂອງພວກສັກຍຣາຊທີ່ນັ້ນແທນ. ໃນຣະຫວ່າງທາງນັ້ນໄດ້ພົບພຣະສາສດາ. ເມື່ອຊາບວ່າພຣະອົງຄ໌ສເດັຈມາເພື່ອອະນຸເຄາະທ໌ ພຣະປະຍູຣະຍາຕິ ກໍຍົກກອງທັພ ກັບຄືນ. ວິທູທະກະຍົກທັພໄປເຖິງ ໓ ຄັ້ງກໍພົບກັບພຣະສາສດາ ໃນຄັ້ງທີ່ ໔ ພຣະອົງຄ໌ທຣົງເຫັນບຸພພກັມມ໌ຂອງ ພວກສັກຍະວ່າ ໄດ້ເຄີຍເບື່ອປາພຣະອົງຄ໌ຈຶ່ງບໍ່ສເດັຈໄປເໝືອນແຕ່ກ່ອນ. ວິທູທະກະຣາຊກໍຍົກທັພໄປຂ້າພວກສັກຍຣາຊເອົາໂລຫິຕລ້າງທີ່ນັ້ນໄດ້ຕາມປະສົງຄ໌. ເມື່ອສົມປະສົງຄ໌ແລ້ວ ກໍຍົກທັພກັບ ພັກນອນ ທີ່ຫາດຊາຍ ນ້ຳອຈິຣວະດີ. ຂະນະນັ້ນ ບາງເອີນ

ຝົນຕົກໜັກ ນ້ຳຖ້ວມ ຢ່າງກະທັນຫັນ ທຳໃຫ້ ວິທູທະກະ ພ້ອມທັງ ພົລທະຫານ ເສັຍຊີວິຕ. ກິກຂຸທັງຫລາຍສົນທະນາກັນ ກ່ຽວກັບຊົນ ເຫລົ່ານັ້ນ. ພຣະພຸທລອົງຄ໌ ຈຶ່ງຕຣັສ ພຣະຄາຖາດັ່ງກ່າວມານັ້ນ.

---

໕

ປຸປຜານະ ເຫວະ ປະຈິນັນຕັງ
ພຍາສັຕຕະມະນະສັງ ນະຣັງ
ອະຕິຕຕັງ ເຍວະ ກາເມສຸ
ອັນຕະໂກ ກຸຣຸເຕ ວະສັງ ໑໔໘໑

ຜູ້ທີ່ມີວເມົາຫລົງໄຫລຢູ່ໃນການເກັບດອກໄມ້ (ການຄຸຓ)ມີ ຄວາມມ່ວນຊື່ນຢູ່ ຕິດຂ້ອງຢູ່ໃນການຄຸຓ ບໍ່ຮູ້ຈັກອີ່ມນັ້ນ ມັກຈະຕົກ ໄປຢູ່ໃນອຳນາຈ ຂອງ ພຍາມັຈຈຸຣາຊ.

# ເຣື່ອງ ນາງປະຕິປູຊິກາ

ຄັ້ງນຶ່ງ ພຣະບໍຣົມສາສດາ ທຣົງຜາຣົພ ນາງປະຕິປູຊິກາ ແຕ່ ກ່ອນ ນາງໄດ້ເປັນເທພທິດາ ຂອງ ມາລາການິເທວບຸຕຣ໌ ໃນຕາວະ ຕຶງສເທວໂລກ. ໃນມື້ນຶ່ງ ເທພທິດາ ໄດ້ໄປທ່ຽວສອນສວັຣຄ໌ ກັບ ເທພບຸຕຣ໌ນັ້ນ ແລະໄດ້ຈຸຕິຈາກທີ່ນັ້ນລົງມາເກີດເປັນມນຸສໃນເມືອງ

ສາວັຕຖີ, ນາງຣະລຶກຊາຕິຫົນຫລັງໄດ້ ມີຄວາມເຫລື້ອມໃສໃນພຣະພຸທສສາສນາ ແລະ ທຳບຸນກຸສົລຕ່າງ ໆ ບໍ່ໄດ້ຂາດ ປາຖນາໄປເກີດໃນທີ່ເດີມ.

ໄດ້ຍິນວ່າ ໑ ວັນໃນສວັຣຄ໌ຊັ້ນດາວດຶງສ໌ ເປັນ ໑໐໐ ປີຂອງມນຸສໂລກ. ເພາະສັ້ນ ມາລາກາຣີເທວບຸຕຣ໌ ຈຶ່ງຍັງບໍ່ທັນກັບຈາກສວນສວັຣຄ໌, ເມື່ອເຫັນນາງກັບໄປຈຶ່ງຖາມວ່າ ເມື່ອກີ້ນີ້ເຈົ້າໄປໃສມາ. ນາງເທພທິດານັ້ນ ເລົ່າເຣື່ອງໃຫ້ຟັງ. ມາລາກາຣີເທພບຸຕຣ໌ເກີດສັມມສັງເວຊວ່າ ອາຍຸຂອງມນຸສນັ້ນ ສັ້ນແທ້ໜໍ! ເທົ່າກັບນອນຫລັບແລ້ວຕື່ນຂຶ້ນ ເທົ່ານັ້ນ.

ບັດນັ້ນ, ກິກຂຸທັງຫລາຍຮູ້ວ່າ ນາງປະຕິປູຊິກາ ທຳກາລະກິຣິຍາແລ້ວ ກໍພາກັນເຂົ້າເຝົ້າ ພຣະຜູ້ມີພຣະກາຄເຈົ້າ ພຣະອົງຄ໌ຈຶ່ງທຣົງເລົ່າເຣື່ອງ ນາງປະຕິປູຊິກາ ໃຫ້ກິກຂຸ ເຫລົ່ານັ້ນເກີດສັມມສັງເວຊ ແລ້ວຈຶ່ງຕຣັສພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາຂ້າງເທິງນີ້.

---

໖

ຍະຖາປິ ກະມະໂຣ ປຸປຜັງ
ວັຕຕະຄັນທັງ ອະເຫຖະຍັງ
ປະເລຕິ ຣະສະມາທາຍະ
ເອວັງ ຄາເມ ມຸນີ ຈະເຣ ໆ໔໙ໆ

ມຸນີ ຄວນຈາຣິກໄປ ໃນຄາມເຂດ (ໝູ່ບ້ານ) ບໍ່ເຮັດໃຫ້ສັທລາຂອງຊາວບ້ານເສັຍຫາຍ ຄືດັ່ງແມງພູ່ເຜິ້ງ ດູດເອົາຣົສຫວານຂອງບຸບຜຊາຕແລ້ວຈາກໄປ ບໍ່ເຮັດໃຫ້ສີ ແລະເກສຣດອກໄມ້ບອບຊ້ຳ ເສັຍຫາຍ.

## ເຣື່ອງ ມັຈຈຣິຍໂກສິຍະເສຕຖີ

ພຣະບໍຣົມສາສດາ ທຣົງຜາຣົພ ມັຈຈຣິຍໂກສິຍະເສຕຖີ ເປັນຄົນຂີ້ຖີ່ໜຽວແໜ້ນ ມີຄວາມຢາກບໍຣິໂພຄ ຂນົມເບື້ອງ ຄິດວ່າ ຖ້າເຮົາຈະເຮັດໃນທີ່ເປີດເຜີຍ ກໍຢ້ານຄົນອື່ນເຂົາຂໍກິນ ຈຶ່ງໄປລີ້ເຮັດຢູ່ໃນທີ່ຢູ່ຂອງຕົນຊຸ້ນເທິງ.

ພຣະສາສດາ ທຣົງທອດພຣະເນຕຣເຫັນ ອຸປນິສັຍໂສດາ-ປັຕຕິຜົລ ຂອງເສຕຖີ ພ້ອມດ້ວຍກັຣຍາ ຈຶ່ງຕຣັສຮຽກ ພຣະໂມຄ-ຄັລລານະເຖຣະ ໃຫ້ໄປທໍຣະມານ(ໂອບອ້ອມ) ພຣະເຖຣະ ກໍໄດ້ໄປທໍຣມານເສຕຖີ ແລະ ກັຣຍາ ໃຫ້ເກີດຄວາມເຫລື້ອມໃສ ໃນພຣະພຸທສາສນາແລ້ວພາເສຕຖີ ໄປເຝົ້າພຣະສາສດາ. ພຣະອົງຄ໌ສແດງພຣະທັມມເທສນາ ໃຫ້ສອງສາມີກັຣຍາ ດໍາຣົງຢູ່ໃນ ໂສດາປັຕຕິຜົລ ກິກຂຸ ທັງຫລາຍ ຈຶ່ງປະຊຸມກ່າວສັຣເສີນຄຸຕຂອງ ພຣະໂມຄຄັລ-ລານະເຖຣະ. ພຣະອົງຄ໌ຈຶ່ງໄດ້ຕຣັສພຣະຄາຖາ ດັ່ງທີ່ຍົກຂຶ້ນມານັ້ນ.

໗

ນະ ປະເຣສັງ ວິໂລມານິ
ນະ ປະເຣສັງ ກະຕາກະຕັງ
ອັຕຕະນາວະ ອະເວກເຂຍຍະ
ກະຕານິ ອະກະຕານິ ຈະ ໑໕໐໑

ບໍ່ຄວນຊອກຫາແຕ່ຄວາມຜິດ ຂອງຄົນອື່ນເຂົາ ຫຣືວ່າວຽກ ທີ່ເຂົາເຮັດແລ້ວ ຫຣືຍັງບໍ່ທັນເຮັດ, ຄວນກວດກາເບິ່ງ ສະເພາະແຕ່ ວຽກການທີ່ຕົນເຮັດແລ້ວ ຫຣືວ່າ ວຽກທີ່ຕົນຍັງບໍ່ທັນເຮັດ ດີກວ່າ.

ເຣື່ອງ ປາຕິກາຊີວົກ

ພຣະບໍຣົມສາສດາ ທຣົງຜາຣົພ ອາຊີວົກ ຊື່ປາຕິກະ ຫ້າມ ນາງ ຄະຫະປະຕານີ ຜູ້ເປັນ ອຸປກາຍິກາຂອງຕົນ ບໍ່ໃຫ້ໄປເຝົ້າພຣະ ສາສດາ ຍ້ອນຢ້ານວ່າ ນາງຈະຄາຍສັທຘາໄປເສັຍຈາກຕົນ. ນາງ ຈຶ່ງ ໃຫ້ລູກຊາຍໄປນິມົນຕ໌ ພຣະສາສດາໄປສເວີຍກັຕຕາຫາຣ ທີ່ເຮືອນ ຂອງຕົນ. ຄັນສຳເຣັຈກັຕຕກິຈແ້ວ ພຣະຍອດແກ້ວ ສັພພັຌຌູທຣົງ ກະທຳອະນຸໂມທນາທານ ດ້ວຍພຣະຘັມມິກຖາອັນເປັນທີ່ຈັບໃຈ ນາງ ເກີດມີຄວາມເຫລື້ອມໃສສັທຘາຖວາຍສາຘຸການ. ໃນເວລານັ້ນ ---

ອາຊີວິກ ຢືນຢູ່ຂ້າງຫລັງເຮືອນ ໄດ້ຍິນດັ່ງນັ້ນ ກໍໂກທເຄືອງ ຈຶ່ງ ຮ້ອງປ້ອຍດ່າ ນາງ ກັບ ພຣະສາສດາ ໂດຍປະການຕ່າງ ໆ ຈົນວ່າ ນາງຕັ້ງສະຕິອາຣົມຕ໌ຢູ່ບໍ່ໄດ້ ພຣະພຸທລອົງຄ໌ຈຶ່ງທຣົງໄອບອ້ອມນາງ ດ້ວຍລັມມເທສນາ ແລ້ວຈຶ່ງຕຣັສ ພຣະຄາຖາດັ່ງທີ່ກ່າວມາຂ້າງຕົ້ນນີ້

ຖ

ຍະຖາປິ ຣຸຈິຣັງ ປຸປຜັງ
　　ວັຓຓະວັນຕັງ ອະຄັນລະກັງ
ເອວັງ ສຸກາສິຕາ ວາຈາ
　　ອະຜະລາ ໂຫາຕິ ອະກຸພພະໂຕ ໑໕໔໑

ວາຈາສຸກາທິຕ ຂອງຜູ້ເວົ້າ ທີ່ເຮັດບໍ່ໄດ້ ຕາມຄຳທີ່ຕົນເວົ້າ ນັ້ນ ຍ່ອມບໍ່ເປັນປະໂຍຊນ໌ຫຍັງ ອັນນີ້ ກໍດັ່ງດຽວກັບດອກໄມ້ທີ່ມີສີ ສວຍສົດງົດງາມ ແຕ່ໄຮ້ກິ່ນ.

ລ

ຍະຖາປິ ຣຸຈິຣັງ ປຸປຜັງ
　　ວັຓຓະວັນຕັງ ສະຄັນລະກັງ

ເອວັງ ສຸກາສິຕາ ວາຈາ
ສະຜະລາ ໂຫຕິ ສະກຸພພະໂຕ ໑໕໔໑

ວາຈາສຸກາສິຕ ຂອງຜູ້ທີ່ກະທຳໄດ້ ຕາມຄຳເວົ້ານັ້ນ ຍ່ອມນຳຜົລດີມາໃຫ້ ເໝືອນດັ່ງດອກໄມ້ ທີ່ມີສວຍສົດງົດງາມ ທັງກິ່ນກໍຫອມ ອີກດ້ວຍ.

# ເຣື່ອງ ฉัตตะປາณີອຸບາສົກ

ພຣະບໍຣົມສາສດາ ທຣົງປາຣົພ ฉัตตะປາณີອຸບາສົກ ຜູ້ເປັນບັณฑิต ອະນາຄາມີ. ພຣະເຈົ້າ ປະເສນທິໂກສົລ ເຊີນທ່ານອຸບາສົກໄປສອນທັມມ໌ ໃນພຣະຣາຊສຳນັກ ເພິ່ນບໍ່ຍອມຮັບເຊີນ ແລະທູລວ່າການສອນທັມມ໌ ເປັນກິຈຂອງບັຣພຊິຕ. ພຣະຣາຊາຈຶ່ງໄດ້ສເດັຈໄປເຝົ້າທູລອາຣາທະນາ ພຣະສາສດາ, ພຣະອົງຄ໌ຈຶ່ງຮັບສັ່ງໃຫ້ເປັນການະ ຂອງພຣະອານົນທ໌. ຄັນກາລລ່ວງໄປ ພຣະອົງຄ໌ ຈຶ່ງຕຣັສສັ່ງຖາມພຣະອານົນທ໌ວ່າ ຜູ້ທີ່ຮຽນທັມມະນັ້ນ ເປັນຢ່າງໃດ?

ພຣະອານົນທ໌ ທູລຕອບວ່າ ນາງມັລລິກາ ຮຽນທັມມະໂດຍເຄົາຣົພ, ສ່ວນນາງ ວາສກະຂັตติยา ບໍ່ຄ່ອຍເອົາໃຈໃສ່. ບັດນັ້ນ, ພຣະອົງຄ໌ຈຶ່ງຕຣັສພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາ ເບື້ອງຕົ້ນນີ້.

## ໑໐

ຍະຖາປິ ປຸປຜະຣາສິມຫາ
ກະຍິຣາ ມາລາຄຸເນ ພະຫູ
ເອວັງ ຊາເຕນະ ມັຈເຈນະ
ກັຕຕັພພັງ ກຸສະລັງ ພະຫຸງ ໆ໕໓ໆ

ເມື່ອເກີດມາແລ້ວ ຈະຕ້ອງຕາຍ (ດັ່ງນັ້ນ) ກໍຄວນສ້າງບຸຍ ສ້າງກຸສົລໄວ້ ໃຫ້ຫລາຍ ເໝືອນດັ່ງ ນາຍມາລາການ ຊ່າງຮ້ອຍຊື່ງ ພວງມາລັຍ ເປັນຈຳນວນຫລາຍ ຈາກກອງດອກໄມ້.

## ເຣື່ອງ ນາງວິສາຂາ

ໃນກາລະຄັ້ງນຶ່ງ, ພຣະບໍຣົມສາສດາ ທຣົງຜາຣົພ ອຸບາສິກາ ຊື່ວ່າວິສາຂາ ຜູ້ມີບຸຍຍາລິການ ເກີດໃນຕະກູລ ລນັຍຊັຍມຫາເສຕຖີ ມີລັກຫຕະສວຍງາມ ຄົບຕາມ ເບັຍຈກັລຍາຕີ ມີກຳລັງແຮງເທົ່າກັບ ຊ້າງສານ ໕ ເທົ່າ. ເປັນຄົນສລຽວສລາດ ບັຣລຸໂສດາບັນແຕ່ມີອາຍຸ ໄດ້ ໗ ຂວບ. ເມື່ອມີອາຍຸ ໑໕-໑໖ ປີ ກໍໄດ້ທຳການມຸງຄຸລກັບ ບຸຕຕວັທທຍນະກຸມານ ຜູ້ທີ່ເປັນບຸຕຣ໌ຂອງ ມິຄາຣະເສຕຖີ. ນາງ ໄດ້ໂອບຣົມແນະນຳໃຫ້ຕະກູລສາມີ ມີພໍ່ຜົວ ເປັນຕົ້ນ ໃຫ້ເປັນຜູ້ມີ ສັມມາທິຖຖິ. ນາງ ຈເຣີຍດ້ວຍລູກ ຫລານ ເຫລນ ມີລູກຊາຍ ໑໐

ຄົນ ລູກຍິງ ໑໐ ຄົນ, ຫລານ ໔໐໐ ຄົນ, ເຫລນ ໗,໐໐໐ ຄົນ ມີ ອາຍຸຍືນ ໑໔໐ ປີ. ມີຮ່າງກາຍສົມບູຣຓ໌ ເໝືອນກັບຍິງສາວ ອາຍຸ ໑໖ ປີ ຕລອດອາຍຸຂັຍ. ນາງເປັນ ພຸທລະອຸປກາຍິກາ ແລະ-ບຳຣຸງ ພຣະກິກຂຸສົງຄ໌, ບໍຣິຈາຄເຄື່ອງປະດັບ ອັນລ້ຳຄ່າຂອງນາງ ເພື່ອນຳເອົາໄປສ້າງວິຫາຣບຸພພາຣາມ. ເມື່ອສ້າງວິຫາຣສຳເຣັຈແລ້ວ ໄດ້ເກີດມີປີຕິປາໂມທຍ໌ ເດີນກ່າວອຸທານຄາຖາ ຮອບວິຫາຣ. ພຣະກິກຂຸ ທັງຫລາຍ ໄດ້ເຫັນເຊັ່ນນັ້ນ ຈຶ່ງທູລພຣະສາສດາວ່າ ນາງວິ-ສາຂາຮ້ອງເພງ ພຣະສາສດາ ຈຶ່ງທຣົງສແດງວ່າ ນາງວິສາຂາ ກ່າວ ອຸທານ ເພາະເຫັນຄວາມສຳເຣັຈ ສົມຄວາມປາຖນາຂອງຕົນ ແລ້ວ ພຣະອົງຄ໌ ຈຶ່ງໄດ້ຕຣັສ ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາຂ້າງເທິງນີ້.

---

## ໑໑

ປຸປຜະ ຄັນໂຘ ປະຝິວາຕະເມຕິ
ນະ ຈັນທະນັງ ຕະຄະຣະມັສສິກາ ວາ
ສະຕັຓຈະ ທິສາ ສັປປຸຣິໂສ ປະວາຍະຕິ
ສັພພາ ທິສາ ສັປປຸຣິໂສ ປະວາຍະຕິ ໗໔໑

ກິ່ນບຸປຜະຊາຕິ ກິ່ນໄມ້ຈັນທນ໌, ເກສນາ ຫລືວ່າດອກມະ-

ລິ ນັ້ນ ເຖີງຈະຫອມຫອນ ກໍຫອນລົມບໍ່ໄດ້ ແຕ່ວ່າ ກິ່ນຂອງສັປ-ບຸຣຸສນັ້ນ ຫອມຫອນທອນລົມໄດ້. ສັປບຸຣຸສຍ່ອມຫອມແຜ່ກະຈາຍໄປທົ່ວສາຣະທິສ.

໑໔

ຈັນທະນັງ ຕະຄະຣັງ ວາປິ
ອຸປະລັງ ອະຖະ ວັສສີກີ
ເອເຕສັງ ຄັນລະຊາຕານັງ
ສີລະຄັນໂລ ອະນຸຕຕະໂຣ ຯ໕໕ຯ

ກິ່ນຂອງສີລ ຍ່ອມຫອມກວ່າຂອງຫອມ ເຫລົ່າອື່ນ ເຊັ່ນວ່າ ໄມ້ຈັນທນ໌ ເກສນາ ດອກອຸບົລ ແລະ ດອກມະລິ ເປັນຕົ້ນ.

## ເຣື່ອງ ອານັນທະເຖຣະບັຌຫາ

ພຣະບໍຣົມສາສດາ ທຣົງຜາຣົພ ບັຌຫາຂອງພຣະອານົນທ໌ເຖຣະ. ວັນນຶ່ງ ພຣະເຖຣະຮໍາເພິງວ່າ ບັນດາກິ່ນທັງຫລາຍ ທີ່ເກີດຈາກຮາກ ຈາກແກ່ນ ແລະ ຈາກດອກ ແຜ່ກະຈາຍໄປໄດ້ແຕ່ຕາມລົມຢ່າງດຽວ ແຜ່ກະຈາຍທວນລົມ ບໍ່ໄດ້, ກິ່ນອັນໃດໜໍຈະຕ້ານລົມໄດ້! ເມື່ອດໍາຣິພິຈາຣະຕາ ຢ່າງນີ້ແລ້ວ ຈຶ່ງໄດ້ເຂົ້າໄປເຝົ້າ ທູລຖາມ----

ພຣະສາສດາ. ພຣະພຸທຘອົງຄ໌ ຈຶ່ງໄດ້ຕຣັສ ພຣະຄາຖາ ດັ່ງທີ່ໄດ້ ຍົກຂຶ້ນມາ ໃນຂ້າງເທິງນີ້ ນັ້ນແລ.

---

໑໖

ອັປປະມັຕໂຕ ອະຍັງ ຄັນໂຘ
ຍາຍັງ ຕະຄະຣະຈັນທະນີ
ໂຍ ຈະ ສີລະວະຕັງ ຄັນໂຘ
ວາຕິ ເທເວສຸ ອຸຕຕະໂມ (໕໖)

ເທສນາ ຫລືວ່າ ໄມ້ຈັນທນ໌ນັ້ນ ມີກິ່ນຫອມນ້ອຍນັກແລ ແຕ່ກິ່ນຫອມ ຂອງທ່ານຜູ້ທຣົງສີລນັ້ນ ປະເສີຖກວ່າ ຄື ຫອມຂຈອຣ ໄປທົ່ວ ສາຣະທິສ ກະທັ້ງເຖິງ ເທພຍຸດາດ້ວຍ.

## ເຣື່ອງ ພຣະມຫາກັສສປະເຖຣະ

ພຣະບໍຣົມສາສດາ ທຣົງປຣາຣົພ ການຖວາຍບິນທບາຕ ແກ່ ພຣະມຫາກັສສປະເຖຣະ ວັນນຶ່ງ ພຣະມຫາເຖຣະເຈົ້າ ໄດ້ອອກຈາກ ນິໂຣຘສມາບັຕິ ມີຄວາມປະສົງຄ໌ຈະໄປໂຜດຄົນທີ່ຍາກຈົນ. ຄັ້ງນັ້ນ,

ທ້າວສັກກະເທວຣາຊ ພ້ອມກັບ ນາງສຸຊາດາ ເທພລິດາ ແປງເພສ ເປັນຍາຍຊຣາ ທຳກາຣຕຳຜ້າ ຢູ່ໃນທີ່ແຫ່ງນຶ່ງ ໃນເມືອງຣາຊຄຣິຫ໌ ພຣະເຖຣະໄດ້ເຂົ້າໄປບິຕາຫບາຕ. ເມື່ອພຣະເຖຣະໄປເຫັນ ກໍທຳທ່າ ວ່າບໍ່ຮູ້ເນື້ອຮູ້ຕົວ ເຫັນພຣະເຖຣະມາ ກໍຟ້າວຈັດແຈງບິຕາຫບາຕຕາມ ມີຕາມໄດ້ຖວາຍ. ຄັນພຣະເຖຣະເຈົ້າ ຮັບບິຕາຫບາຕແລ້ວ ກໍຊາບວ່າ ທ້າວສັກກະ ກັບນາງສຸຊາດາ ແປງເພສມາຖວາຍບິຕາຫບາຕ. ດັ່ງນັ້ນ ພຣະເຖຣະ ຈຶ່ງຫ້າມບໍ່ໃຫ້ເຮັດເຊັ່ນນັ້ນອີກ.

ທ້າວສັກກະເທວຣາຊ ຮຽນຖາມວ່າ ທານທີ່ຂ້າພະເຈົ້າ ລອງ ຖວາຍເຊັ່ນນີ້ ຈະມີຜລານິສົງສ໌ ຫຣືບໍ່? ພຣະເຖຣະຕອບວ່າ ມີດັ່ງນີ້ ແລ້ວ ທ້າວ ສັກກະກໍມີຄວາມໂສມນັສຍິນດີເປັນຢ່າງຍິ່ງ ຈຶ່ງໄດ້ເປັ່ງ ອຸທານ ກາບິຕ ແລ້ວກໍກັບຄືນສູ່ເທວໂລກ.

ພຣະຜູ້ມີພຣະກາຄເຈົ້າຫຣືງໄດ້ຍິນສຽງສາລຸກາຣນັ້ນ ຈຶ່ງໄດ້ ຕຣັສຮຽກ ກິກຂຸ ທັງຫລາຍມາປະຊຸມແລ້ວ ເລົ່າເຣື່ອງນັ້ນໃຫ້ຟັງດັ່ງ ພຣະຄາຖາທີ່ໄດ້ຍົກຂຶ້ນມາຂ້າງຕົ້ນນີ້.

-------------------- --------------------

## ໑໔

ເຕສັງ ສັມປັນນະສີລານັງ

ອັປປະມາທະວິຫາຣີນັງ

ສັມມະທັລລາ ວິສຸຕຕານັງ
ມາໂຣ ມັຄຄັງ ນະ ວິນທະຕິ ໑໕໗໑

ມາຣ ຍ່ອມຊອກຫາບໍ່ເຫັນ ຊຶ່ງວິຖີທາງ ຂອງທ່ານຜູ້ທຣົງສີລ, ຜູ້ທີ່ຢູ່ດ້ວຍຄວາມບໍ່ປະມາທ ທີ່ຫລຸດພົ້ນຈາກ ອາສວະກິເລສແລ້ວ ເພາະເພິ່ນຮູ້ແຈ້ງແລ້ວ.

## ເຣື່ອງ ພຣະໂຄລິກະເຖຣະ

ພຣະບໍຣົມສາສດາ ທຣົງຜາຣົພ ການປຣິນິພພານ ຂອງພຣະໂຄລິກະເຖຣະ ຜູ້ທີ່ຍັງຊານໃຫ້ບັງເກີດຂຶ້ນ ແລ້ວເສື່ອມໄປເຖິງ ຜົຄັ້ງ ຍ້ອນໂຣຄປະຈໍາກາຍ ຂອງເພິ່ນ. ເພິ່ນຈຶ່ງມາດໍາຣິວ່າ ຄະຕິຂອງຜູ້ທີ່ເສື່ອມຈາກຊານແລ້ວບໍ່ທ່ຽງ. ໃນຄັ້ງທີ່ ໗ ເພິ່ນຍັງຊານໃຫ້ເກີດແລ້ວເພິ່ນເອົາມີດແຖປາດຄໍ ແລ້ວຈເຣີນວິປັສສນາ ສໍາເຣັຈຊຶ່ງພຣະອຣຫັຕແລ້ວ ກໍເລີຍປຣິນິພພານ.

ຂຕະທີ່ເພິ່ນທໍາການປາດຄໍນັ້ນ ມາຣໄດ້ເຂົ້າໄປຫ້າມເພິ່ນໄວ້ຫລາຍເທື່ອ ແຕ່ເຫັນວ່າບໍ່ໄຫວ ຈຶ່ງເຂົ້າໄປຂາບທູລ ແດ່ ພຣະຜູ້ມີພຣະກາຄເຈົ້າ ພຣະອົງຄ໌ກໍບໍ່ທຣົງຫ້າມ. ຄັນປຣິນິພພານແລ້ວ ມາຣໄດ້ທ່ຽວຕາມຫາ ປຕິສົນລິນຍານຂອງເພິ່ນໃນທີ່ຕ່າງໆ ແຕ່ບໍ່ເຫັນ.

ມາຣຈຶ່ງເຂົ້າໄປທູລຖາມພຣະສາສດາ ພຣະພຸທສອົງຄ໌ ຈຶ່ງໄດ້ຕຣັສ ຊຶ່ງພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາໃນຂ້າງເທິງນີ້.

---

## ໑໕

ຍະຖາ ສັງກາຣະສານັສມິງ
ອຸຊຊິຕັສມິງ ມະຫາປະເຖ
ປະທຸມັງ ຕັຕຖະ ຊາເຍຖະ
ສຸຈິຄັນສັງ ມະໂນຣະມັງ ໆ໕໗ໆ

ດອກບົວ ທີ່ເກີດຢູ່ໃນກອງຂີ້ເຫຍື່ອ ທີ່ເຂົາຖິ້ມໄວ້ຂ້າງທາງ ຫລວງ ເປັນທີ່ໜ້າຂີ້ດຽດ ແຕ່ວ່າ ດອກບົວນັ້ນ ມີກິ່ນຫອມເປັນທີ່ ຊື່ນໃຈ.

## ໑໖

ເອວັງ ສັງກາຣະພູເຕສຸ
ອັນລະພູເຕ ປຸຖຸຊຊະເນ
ອະຕິໂຣຈະຕິ ປັລລາຍະ
ສັມມາສັມພຸທສະສາວະໂກ ໆ໕໘ໆ

ເຖິງແມ່ນວ່າ ພຣະສາວົກຂອງ ພຣະສັມມາສັມພຸທສະເຈົ້າ ນັ້ນ ຈະປະປົນຢູ່ໃນທ່າມກາງ ຂອງປຸຖຸຊົນ ຜູ້ໂງ່ງ່າວ ຊຶ່ງເໝືອນກັບ ສິ່ງທີ່ບໍ່ສະອາດແຕ່ເພິ່ນນັ້ນ ຍ່ອມເປັນຜູ້ທີ່ຮຸ່ງ ເຮືອງດ້ວຍປັນຍາຢູ່.

# ເຣື່ອງ ຊີວົກ ຄຣະຫະທິນ

ພຣະ ບໍຣົມສາສດາ ທຣົງຜາຣົພ ຄຣະຫະທິນ ຜູ້ເປັນສາວົກ ຂອງນິຄຣົນຖ໌ ແລະ ເປັນສະຫາຍກັບ ສິຣິຄຸຕ ສາວົກຂອງພຣະອົງຄ໌ ວັນນຶ່ງ, ຄະຣະຫະທິນ ເກັ້ຍກ່ອມ ສິຣິຄຸຕອຸບາສົກ ໃຫ້ເຫລື້ອມໃສ ໃນພວກນິຄຣົນຖ໌ ອວດອ້າງ ນິຄຣົນຖ໌ວ່າ ເປັນຜູ້ຮູ້ສາຣະພັດຢ່າງທັງ ອະດີຕ ອະນາຄົຕແລະປັຈຈຸບັນ. ສິຣິຄຸຕ ຈຶ່ງໃຫ້ ຄຣະຫະທິນນິມົນຕ໌ ທໍາກັຕຕະກິຈທີ່ເຮືອນຂອງຕົນ ແລ້ວຈັດການໃຫ້ຄົນຂຸດຂຸມເອົາອຸຈ- ຈາຣະເຫລົງໄປໃນຂຸມນັ້ນ ຂຸມນັ້ນກໍໃຫ້ມີເຄື່ອງອັດເປັນທີ່ຮຽບຮ້ອຍ ດີ. ຄັນເຖິງກໍາໜົດ ຄຣຫະທິນ ກໍນໍາພວກນິຄຣົນຖ໌ມາ ພວກເຂົາພາ ກັນຕົກລົງໄປໃນຂຸມນັ້ນ. ສິຣິຄຸຕຈຶ່ງກ່າວວ່າ ພວກທ່ານເປັນຜູ້ຮູ້ຊຶ່ງ ສາຣະພັດຢ່າງ ທັງໃນອະດີຕ, ອະນາຄົຕ ແລະ ປັຈຈຸບັນ. ອັນນີ້ເປັນ ເພາະເຫຕຸໃດ ພວກທ່ານຈຶ່ງຕົກລົງໄປໃນຂຸມ. ເມື່ອວ່າແລ້ວ ກໍພາ ກັນຕົບຕີພວກນິຄຣົນຖ໌ໃຫ້ສົມໃຈ ແລ້ວຈຶ່ງປ່ອຍຕົວໄປ.

ຄຣະຫະທິນ ຫາທາງຈະແກ້ເຜັດ. ຄັນໄດ້ໂອກາສ ຈຶ່ງໃຫ້

ສີຣິຄຸຕ ອາຣາສນາ ພຣະພຸທສເຈົ້າ ພ້ອມດ້ວຍກິກຂຸສົງພ໌ໄປທຳຊຶ່ງ ກັຕຕກິຈທີ່ບ້ານ ໃຫ້ຂຸດຂຸມ ເອົາຖ່ານໄຟໃສ່ ປົກປິດໃຫ້ຮຽບຮ້ອຍ, ຄັນເຖິງເວລາ ພຣະສາສດາ ພ້ອມດ້ວຍ ກິກຂຸສົງພ໌ ໄດ້ສເດັຈໄປ ຖ່ານໄຟໃນຂຸມນັ້ນ ໄດ້ກັບກາຍເປັນດອກບົວຮອງຮັບພຣະບາທ.

ເມື່ອ ຄຣະຫະທິນ ໄດ້ເຫັນເຊັ່ນນັ້ນ ກໍພາກັນເຫລື້ອມໃສ ໃນພຣະພຸທສານຸກາພ. ພຣະພຸທສອົງຄ໌ ຈຶ່ງກ່າວພຣະຄາຖາ ດັ່ງທີ່ ໄດ້ຍົກຂຶ້ນມາ ໃນຂ້າງຕົ້ນນີ້.

## ຈົບ ປຸປຜວັຄຄ໌ ທີ່ ໔

---

# ພາລວັຄຄ໌ ທີ່ ໕

## ໑

ທີຄາ ຊາຄະຣະໂຕ ຣັຕຕິ
ທີຄັງ ສັນຕັສສະ ໂຍຊະນັງ
ທີໂຄ ພາລານະ ສັງອາໂຣ
ສັທລັມມັອ ອະວິຊຊານະຕັງ ໆ໖໐ໆ

ຣາຕຣີນັ້ນ ຍາວນານ ສຳຣັບຄົນທີ່ນອນບໍ່ຫລັບ, ຣະຍະທາງ ໑ ໂຍຊນ໌ນັ້ນ ໄກຫລາຍ ສຳຣັບຄົນທີ່ອ່ອນແຮງ, ວັຒະສົງສາຣນັ້ນຍາວສຳ ຣັບ ຄົນພາລ ທີ່ບໍ່ຮູ້ຊຶ່ງພຣະສັທລັມມ໌.

## ເຣື່ອງ ອັນລະຕຣະບຸຣຸສ

ໃນສມັຍນຶ່ງ, ພຣະບໍຣົມສາສດາ ທຣົງພຣະຜາຣົພ ພຣະເຈົ້າ ປະເສ ນະທິໂກສົລ ກັບບຸຣຸສຜູ້ນຶ່ງ. ພຣະອົງຄ໌ ມີພຣະປະສົງຄ໌ ທີ່ຈະຍາດເອົາກັຣະ ຍາ ຂອງ ບຸຣຸສຜູ້ນັ້ນ ຈຶ່ງໄດ້ວາງຣາໂຊບາຍ (ແຜນການ) ຈະຂ້າບຸຣຸສຜູ້ນັ້ນ, ບຸຣຸສຜູ້ນັ້ນ ຮູ້ຕົວທັນກໍມີຄວາມຕົກໃຈ ແຕ່ບໍ່ແນມເຫັນໃຜຜູ້ໃດ ພໍທີ່ຈະ

ເພິ່ງໄດ້ ຈຶ່ງໄດ້ໄປລົ້ນອນຢູ່ໃນ ວິຫາຣ. ໃນຄືນນັ້ນ, ພຣະເຈົ້າປະເສນະທິໂກສົລ ທຣົງຮ້ອນຮົນດ້ວຍກາມ ບັຣທົມບໍ່ຫລັບ ເວລາຜ່ານໄປ ໆຈົນເຖິງທ່ຽງຄືນ ງຽບສງັດແລະໄດ້ຍິນສຽງເຜຕ ຮ້ອງວ່າ ທຸ, ສະ, ນະ, ໂສ ກໍຕົກພຣະທັຍ ແລະ ຢ້ານກົວຕໍ່ມຣະຕະກັຍ. ນາງມັລລິກາ ຣາຊເທວີ ໄດ້ແນະນຳໃຫ້ໄປເຝົ້າ ທູລຖາມ ພຣະພຸທສເຈົ້າ. ພຣະອົງຄ໌ ກໍທຣົງກະທຳຕາມ. ພຣະສາສດາ ຈຶ່ງຕຣັສ ພຣະທັມມເທສນາ ໃຫ້ຫາຍຈາກຄວາມຢ້ານກົວ ແລະ ເກີດ ທັມມສັງເວຊ ທຣົງເຫັນໂທສ ຂອງ ກາມະມິຈສາຈາຣ (ກາຣປະພຶຕຣ໌ຜິດໃນກາມ) ບຸຣຸສຜູ້ນັ້ນ ໄດ້ສຳເຣັຈ ໂສດາປັຕຕິຜົລ.

ພຣະຍອດແກ້ວ ສັພພັຍຍູ ຈຶ່ງຕຣັສ ພຣະຄາຖາ ດັ່ງທີ່ໄດ້ນຳຂຶ້ນມາໃນຂ້າງຕົ້ນນີ້.

---

໔

ຈະຣັຍເຈ ນາທິຄັຈເຊຍຍະ
  ເສຍຍັງ ສະທິສະມັຕຕະໂນ
ເອກະຈະຣິຍັງ ທັລະຫັງ ກະຍິຣາ
  ນັຕຖິ ພາເລ ສະຫາຍະຕາ ໆຜ໑ໆ

ຫາກສແວງຫາ ເພື່ອນມິຕຣ໌ສຫາຍທີ່ດີກ່ວາຕົນ ຫຣືວ່າ ສເມີກັບ

ຕົນບໍ່ໄດ້ແລ້ວ ກໍຄວນທ່ຽວໄປຄົນດຽວ ດີກວ່າ ເພາະວ່າ ຄຳວ່າມິຕຕະ ກາພໃນຄົນພາລນັ້ນ ບໍ່ມີ

# ເຣື່ອງ ສັທລິວິຫາຣິກ
# ຂອງ ພຣະມຫາກັສສປະ

ພຣະບໍຣົມສາສດາ ທຮົງຜາຣົພ ສັທລິວິຫາຣິກ ຂອງ ພຣະມຫາກັສສະປະເຖຣະ. ສັທລິວິຫາຣິກອົງຄ໌ນັ້ນ ໄດ້ສແດງວັຕຣ໌ປຕິບັຕິ ທີ່ສັທລິວິຫາຣິກອົງຄ໌ອື່ນ ທຳແລ້ວເພື່ອພຣະເຖຣະນັ້ນວ່າ ຕົນເປັນຜູ້ກະທຳ. ພຣະເຖຣະເຈົ້າ ຊາບຄວາມນັ້ນ ກໍໄດ້ໃຫ້ໂອວາສ ສັ່ງສອນແດ່ ເພິ່ນໂກທຮ້າຍ. ໃນວັນນຶ່ງ, ພຣະເຖຣະບໍ່ຢູ່, ເພິ່ນໄດ້ທຸບເຄື່ອງສມຕະບໍຣິໂກຄ ຂອງພຣະເຖຣະແຕກໝົດ ແລ້ວກໍເອົາໄຟຈູດບັນນະສາລາ ຫລົບຕົວໜີໄປ.

ກິກຂຸ ອົງຄ໌ນຶ່ງ ໄດ້ຊາບຄວາມນັ້ນ ຈຶ່ງໄດ້ນຳທູລ ແດ່ ພຣະສາສດາ. ພຣະອົງຄ໌ ຈຶ່ງໄດ້ຕຣັສເລົ່າເຣື່ອງ ໃນອດີຕກາລ ຄັ້ງເມື່ອສັທລິວິຫາຣິກນັ້ນ ເປັນວານຣ. ພຣະມຫາກັສສປະນັ້ນ ເປັນນົກຂມິ້ນເຫລືອງອ່ອນ. ຄັນວ່າຝົນຕົກ ວານຣ ບໍ່ມີທີ່ຢູ່ອາສັຍ ຈຶ່ງໄດ້ໄປໃກ້ຮັງຂອງນົກຂມິ້ນເຫລືອງອ່ອນ. ຝ່າຍນົກ ກໍກ່າວເຍາະເຍີຍວ່າ ເຈົ້ານັ້ນນ່າມີຫົວ ມີຕີນ ມີມື ເໝືອນຄົນ ເປັນຫຍັງຈຶ່ງບໍ່ເຮັດບ້ານເຮືອນຢູ່ ຝ່າຍ

ອານຣ ໂກທຮ້າຍ ເຂົ້າມ້າງເພຮັງຂອງນິກຂມິ້ນເຫລືອງອ່ອນເສັຍ. ໃນທີ່ສຸດ ອະດິຕນິທານ. ພຣະຍອດແກ້ວສັພພັຍຍູ ຈິ່ງໄດ້ຕຣັສຊຶ່ງພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາໃນເບື້ອງຕົ້ນນັ້ນ.

---

໓

ປຸຕຕາ ມັຕຖິ ຘະນະ ມັຕຖິ
ອິຕິ ພາໂລ ວິຫັລຘະຕິ
ອັຕຕາຫິ ອັຕຕະໂນ ນັຕຖິ
ກຸໂຕ ປຸຕຕາ ກຸໂຕ ຘະນັງ ໑໖໔໑

ຄົນພາລ ຄົນໂງ່ ມີແຕ່ຄິດວຸ່ນວາຍຢູ່ວ່າ ເຮົາມີບຸຕຣ໌ ເຮົາມີທຣັພຍ໌ສິນ ເງິນ ຄຳ ໃນເມື່ອຕົວເອງ ກໍ່ບໍ່ເປັນຕົວຂອງເຮົາຢູ່ແລ້ວ ບຸຕຣ໌ ທຣັພຍ໌ ສິນ ເງິນ ຄຳ ຈະເປັນເຮົາໄດ້ຢ່າງໃດ ?

## ເຣື່ອງ ອານັນທເສຕຖີ

ໃນກາລະຄັ້ງນຶ່ງ, ພຣະບໍຣົມສາສດາ ທຣົງຜາຣົພ ອານັນທະເສຕຖີ ເປັນຄົນມີຄວາມຂີ້ຖີ່ ໜຽວແໜ້ນທີ່ສຸດ. ເສຕຖີຜູ້ນີ້ມີບຸຕຣ໌

ຜູ້ນຶ່ງຊື່ວ່າ ມູລສິຣິ, ໄດ້ຝັງທຣັພຍ໌ໄວ້ ໕ ແຫ່ງ ບໍ່ບອກໃຫ້ຜູ້ໃດຮູ້. ເມື່ອລາວທຳກາລກິຣິຍາຕາຍໄປແລ້ວ ໄດ້ໄປເກີດໃນຕະກູລ ຂອງ ຄົນຊັ້ນຕ່ຳຍາກຈົນ (ຈັຕຫາລ) ມີອັຕກາພວິກົລວິກາຣໄປຕ່າງໆ ນາ ນາ ບໍ່ສົມປະກອບ. ນັບແຕ່ມື້ຖືປຕິສົນຣິ ໃນທ້ອງແຫ່ງມາຣດາ ເປັນ ຕົ້ນມາ ຕະກູລຈັຕຫາລນັ້ນ ຫາລ້ຽງຊີພໂດຍຝືດເຄືອງຈົນວ່າ ມາຣ ດາລ້ຽງບໍ່ໄດ້ ປ່ອຍໃຫ້ໄປທ່ຽວຂໍທານກິນເອງ. ວັນນຶ່ງ, ໄດ້ເດີນ ຊັດເຊເຂົ້າໄປ ໃນບ້ານເດີມຂອງຕົນເອງ ຖືກເຂົາຂັບໄລ່ ທຸບຕີໄດ້ ຮັບບາດຈັບສາຫັສ.

ເວລານັ້ນ, ພຣະສາສດາ ມີພຣະອານົນທ໌ ເປັນປັຈຈາສມຕະ ສເດັຈໄປໃນທີ່ນັ້ນ ໄດ້ທອດພຣະເນຕຣ໌ເຫັນເດັກນ້ອຍຜູ້ນັ້ນ ຈຶ່ງ ຕຣັສບອກ ມູລສິຣິເສຕຖີວ່າ ເດັກນ້ອຍຜູ້ນັ້ນ ຄື ອານັນທະເສຕຖີຜູ້ ເປັນບິດາຂອງທ່ານ. ມູລສິຣິເສຕຖີ ບໍ່ເຊື່ອ. ພຣະພຸທລອົງຄ໌ ຈຶ່ງຮັບ ສັ່ງໃຫ້ເດັກນ້ອຍຜູ້ນັ້ນ ໄປບອກຂຸມທຣັພຍ໌ ທີ່ຕົນໄດ້ຝັງໄວ້ ໃຫ້ ແກ່ ມູລສິຣິ ແລ້ວຈຶ່ງຕຣັສຊຶ່ງ ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາໃນ ຂ້າງເທິງນີ້.

---

## ໔

## ໂຍ ພາໂລ ມັລລະຕີ ພາລະຍັງ

ປັຕຫິໂຕ ວາປິ ເຕນະ ໂສ
ພາໂລ ຈະ ປັຕຫິຕະມານີ
ສະ ເວ ພາໂລຕິ ວຸຈຈະຕິ ໆ໖໓ໆ

ຄົນພາລ ຄົນໂງ່ ຮູ້ຕົວວ່າ ຕົນເປັນຄົນໂງ່ແລ້ວ (ຜູ້ນັ້ນ) ມີທາງທີ່ຈະເປັນບັຕຫິຕໄດ້ຢູ່. ແຕ່ຄົນພາລ ຊໍ້າພັດສໍາຄັນຕົນເອງວ່າ ຕົນເປັນຄົນສລາດ, ຜູ້ນັ້ນແຫລະ ຮຽກວ່າ ຄົນພາລ ໂດຍແທ້.

## ເຣື່ອງ ຄັຕກິເວທກະໂຈຣ

ພຣະບໍຣົມສາສດາ ທຣົງຜາຣົພ ພວກຄັຕກິເວທະກະໂຈຣ ເປັນໂຈຣ ທີ່ຈອບມອງແຕ່ຈະລັກຈະໂມຍ. ໃນກຸ່ມຂອງພວກໂຈຣນີ້ ມີ ໔ ຄົນ ຊວນກັນໄປຍັງ ພຣະວິຫາຣເຊຕວັນ ກັບມຫາຊົນທີ່ໄປຟັງທັມມ໌. ໂຈຣຜູ້ນຶ່ງຕັ້ງໃຈຟັງທັມມ໌ ເກີດສັທລາຄວາມເຫລື້ອມໃສ ໄດ້ສໍາເຣັຈໂສດາປັຕຕິຜົລ. ສ່ວນໂຈຣອີກຜູ້ນຶ່ງ ຈ້ອງມອງແຕ່ຈະລັກຢ່າງດຽວ. ເຂົາຈອບລັກຂອງໄດ້ປະມານ ໕ ມາສົກ ຂອງຜູ້ນຶ່ງທີ່ຫໍ່ໄວ້ໃນຊາຍຜ້າບ່ຽງ. ເມື່ອໄດ້ມາແລ້ວ ກໍນໍາເອົາໄປລ້ຽງເກືອກັນທີ່ບ້ານຂອງຕົນ. ເວົ້າເຍາະເຍີ້ຍໝູ່ວ່າຕົນເປັນຄົນສລາດ ເປັນບັຕຫິຕ ສ່ວນໂຈຣຜູ້ເປັນໂສດາບັນນັ້ນ ໄດ້ນໍາເອົາເຣື່ອງນັ້ນເຂົ້າໄປຂາບທູລ

ແດ່ ພຣະສາສດາ ພຣະພຸທທອົງຄ໌ ຈຶ່ງຕຣັສ ພຣະຄາຖາດັ່ງທີ່ກ່າວມານັ້ນ.

---

## ໕

ຍາວະຊີວັມປີ ເຈ ພາໂລ
ປັຕາຫິຕັງ ປະຍິຣຸປາສະຕິ
ນະ ໂສ ທັມມັງ ວິຊານະຕັງ
ທັພພີ ສູປະຣະສັງ ຍະຖາ ໑໕໔໑

ອັນທີ່ຂື້ນຊື່ວ່າ ຄົນພາລນັ້ນ ຈະຢູ່ໃກ້ກັບ ບັຕາຫິຕ ເປັນເວລາ ດົນນານຈົນຊົ່ວຊີວິຕ ກໍຕາມ. ຄົນພາລ ຄົນໂງ່ ກໍບໍ່ຮູ້ຊຶ່ງຣົສຊາຕແຫ່ງ ພຣະທັມມ໌. ອັນນີ້ ກໍບໍ່ຕ່າງຫຍັງ ກັບບ່ວງ ຫຣືວ່າ ຈອງທີ່ບໍ່ຮູ້ຣົສຊາຕ ຂອງແກງ ຫັ້ນແລ.

## ເຣື່ອງ ພຣະອຸທາຍີເຖຣະ

ພຣະບໍຣິມສາສດາ ທຣົງຜາຣົພ ພຣະອຸທາຍີເຖຣະ ໄປທ່າທ່າ ນັ່ງຢູ່ໃນທັມມະສາລາ (ໂຮງທັມມ໌) ຄືກັບວ່າ ຕົນເປັນມຫາເຖຣະ ພຣະ ກິກຂຸ ອາຄັນຕຸກະ ໄດ້ມາເຫັນກໍສໍາຄັນວ່າ ເພິ່ນນັ້ນ ເປັນພະຫູສູຕ ຈຶ່ງ ເຂົ້າໄປຖາມປັນຫາ ພຣະອຸທາຍີ ຕອບບໍ່ໄດ້ ຈຶ່ງພາກັນຕິຕຽນວ່າ ຢູ່ໃນ ວິຫາຣດຽວກັນກັບ ພຣະພຸທທເຈົ້າ ກໍຍັງບໍ່ຮູ້ຈັກທັມມະ ຈຶ່ງໄດ້ໄປທູລ

ຄວາມນັ້ນ ແດ່ພຣະສາສດາ ພຣະອົງຄ໌ຈຶ່ງຕຣັສ ພຣະຄາຖານີ້.

---

### ໖

ມຸຫຸຕຕະມະປິ ເຈ ວິຎຎູ
ປັຓຑິຕັງ ປະຍິຣຸປາສະຕິ
ຂິປປັງ ຘັມມັງ ວິຊານາຕິ
ຊິວຫາ ສູປະຣະສັງ ຍະຖາ ໆ໖໕ໆ

ປັຎຎາຊົນ ຄົບຄ້າສະມາຄົມ ກັບຜູ້ທີ່ເປັນບັຓຑິຕ ເຖິງຈະເປັນເວລາບໍ່ດົນ ກໍ່ຕາມ ກໍ່ຮູ້ແຈ້ງຊຶ່ງພຣະຘັມມ໌ ເໝືອນດັ່ງລີ້ນທີ່ຮູ້ຈັກຣົສຊາຕຂອງແກງ ຫັ້ນແລ.

## ເຣື່ອງ ປາເຖຍຍະກິກຂຸ

ພຣະບໍຣົມສາສດາ ທຣົງຜາຣົພ ກິກຂຸຊາວປາເຖຍຍະ ມີຢູ່ປະມາຓ ໓໐ ອົງຄ໌ ພວກເພິ່ນເປັນກິກຂຸ ກັທທະວັຄຄີຍະກຸມາຣ ຜູ້ທີ່ໄດ້ຮັບ ເອຫິກິກຂຸອຸປະສົມບົທໃນຄັ້ງປຖົມກາລ. ພາຍຫລັງທີ່ພວກເພິ່ນມາເຝົ້າພຣະອົງຄ໌ ຮັບຟັງພຣະຘັມມເທສນາສຳເຣັຈພຣະອຣຫັຕ

ກິກຂຸ ທັງຫລາຍ ພາກັນກ່າວສັຣເສີນພວກທ່ານວ່າ ຕຣັສຮູ້ໄດ້ງ່າຍ. ພຣະບໍຣົມສາສດາ ຈຶ່ງຕຣັສ ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມານັ້ນ.

---

## ໗

ຈະຣັນຕິ ພາລາ ທຸມເມທາ
ອະມິຕເຕເນວະ ອັຕຕະນາ
ກະໂຣນຕາ ປາປະກັງ ກັມມັງ
ຍັງ ໂຫຕິ ກະຕຸກັປຜະລັງ ຯ໖໖ຯ

ຄົນພາລ ປັນຍາທຣາມ (ປັນຍານ້ອຍ, ໂງ່) ທັງຫລາຍ ທໍາຕົວເອງ ເປັນສັຕຣູຂອງຕົວເອງ. ທ່ຽວທາແຕ່ການກໍາກັມມ໌ ທໍາເວຣທໍາກັມມ໌ ຍັງຜົລ ໃຫ້ຕົນເອງ ໄດ້ຮັບຄວາມເດືອດຮ້ອນ.

## ເຣື່ອງ ສຸປປະພຸທຣະກຸຍກິ

ພຣະບໍຣົມສາສດາ ທຣົງຜາຣົພ ສຸປປະພຸທລກຸຍກິ ໄດ້ຟັງພຣະທັມມເທສນາ ສໍາເຣັຈໂສດາປັຕຕິຜົລ ເຊື່ອໝັ້ນໃນພຣະຣັຕນະຕຣັຍ ຄັ້ງນັ້ນ ທ້າວສັກກະເທວຣາຊ ມີເທວປະສົງຄ໌ຈະທຣົງທົດລອງ

ເບິ່ງວ່າຈະຈິງ ຫຣືບໍ່, ຈຶ່ງໄດ້ສເດັຈມາຫາ ສຸປປະພຸທລກຸຍກີ ແລ້ວ ຕຣັສວ່າ ຖ້າທ່ານກ່າວວ່າ ພຣະພຸທລ໌ ພຣະລັມມ໌ ພຣະສົງຄ໌ ບໍ່ແມ່ນ ພຣະພຸທລ໌ ພຣະລັມມ໌ ພຣະສົງຄ໌ ດັ່ງນີ້ແລ້ວ ເຮົາຈະໃຫ້ທຣັພຍ໌ ເປັນອັນມາກແກ່ທ່ານ. ສຸປປະພຸທລະຈຶ່ງຕອບວ່າ ເຮົາບໍ່ແມ່ນຄົນຈົນ ເຮົາເປັນຄົນມີ ອຣິຍະທຣັພຍ໌.

ທ້າວ ສັກກະເທວຣາຊ ໄດ້ທຣົງສດັບ ກໍທຣົງເຫລື້ອມໃສ ມາເຝົ້າ ພຣະຜູ້ມີພຣະກາຄເຈົ້າ ທູລຄວາມນັ້ນ ແດ່ ພຣະອົງຄ໌ ສຸປ-ປະພຸທລະ ກໍມາເຝົ້າ ພຣະສາສດາ ເໝືອນກັນ.

ຄັນ ສຸປປະພຸທລະ ລາໄປແລ້ວບໍ່ດົນ ງົວແມ່ລູກອ່ອນທາງ ລູກຊຶ່ງເຄີຍເປັນເວຣກັນມາກ່ອນ ໄດ້ປົງຊີພ ສຸປປະພຸທລກຸຍກີເສັຍ ພຣະກິກຊຸ ທັງຫລາຍ ໄປເຝົ້າທູລເຫຕຸນັ້ນ ແດ່ ພຣະສາສດາ ພຣະ ອົງຄ໌ ຈຶ່ງໄດ້ຕຣັສພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາໃນເບື້ອງຕົ້ນນັ້ນ.

---

ກູ

ນະ ຕັງ ກັມມັງ ກະຕັງ ສາລຸ
ຍັງ ກັຕະວາ ອະນຸຕັປປະຕິ
ຍັສສະ ອັສສຸມຸໂຂ ໂຣທັງ

## ວິປາກັງ ປະຕິເສວະຕິ ໆຜົກໆ

ກັມມ໌ໃດ ທຳແລ້ວ ທຳໃຫ້ເກີດມີຄວາມເດືອດຮ້ອນ ໃນພາຍຫລັງ ທັງຜູ້ກະທຳກໍ່ຮ້ອງໄຫ້ນ້ຳຕາໄຫລນອງ ຮັບສນອງຂອງການກະທຳ ດັ່ງກ່າວນັ້ນ ກັມມ໌ນັ້ນ ຊື່ວ່າ ເປັນກັມມ໌ບໍ່ດີ ແທ້ແລ.

# ເຣື່ອງ ນາຍກະສະກະ

ພຣະບໍຣົມສາສດາ ທຣົງຜາຣົພ ຊາວນາ ຜູ້ນຶ່ງ. ທີ່ພຣະອົງຄ໌ ທຣົງເຫັນອຸປະນິສັຍ ໂສດາປັຕຕິມັຄຄ໌ຂອງເຂົາ ຈຶ່ງໄດ້ສເດັຈໄປຍັງທີ່ນາຂອງເຂົາ ໃນເວລານັ້ນ ເຂົາກຳລັງເຮັດນາຢູ່. ພຣະອົງຄ໌ທຣົງທອດພຣະເນຕຣ໌ເຫັນຖົງທຣັພຍ໌ ທີ່ພວກໂຈຣໄດ້ເຮັດຕົກເຮ່ຍໄວ້ໃນທີ່ນານັ້ນ ແລະ ຕຣັສບອກພຣະອານົນທ໌ ເບິ່ງອສຣະພິສ. ຄັນເຈົ້າຂອງເຂົາ ຕິດຕາມມາເຫັນຖົງທຣັພຍ໌ໃນນາຂອງພໍ່ນາຜູ້ນັ້ນ ຈຶ່ງຈັບຕົວໄປ ໂດຍຫາວ່າເປັນໂຈຣ. ລາວໃຫ້ການວ່າ ລາວບໍ່ໄດ້ລັກ ລາວໄດ້ອ້າງ ພຣະສາສດາ ແລະ ພຣະອານົນທ໌ ເປັນພຍານ. ພຣະຣາຊາ ຈຶ່ງນຳເອົາຕົວໄປເຝົ້າ ພຣະສາສດາ ທູລຖາມເຣື່ອງທີ່ເຂົາອ້າງນັ້ນ. ພຣະອົງຄ໌ ຈຶ່ງທຣົງຮັບວ່າ ພຣະອົງໄດ້ເຫັນຢູ່ກ່ອນແລ້ວ. ອັນນີ້ ເປັນຄວາມຈິງຕາມທີ່ພໍ່ນານັ້ນອ້າງ.

ບັດນັ້ນ, ພຣະຜູ້ມີພຣະກາຄເຈົ້າ ຈຶ່ງໄດ້ສແດງພຣະທັມມີກະຖາ ດັ່ງພຣະຄາຖາ ທີ່ໄດ້ຍົກຂຶ້ນມາເປັນອຸທາຫຣຕ໌ ໃນຂ້າງຕົ້ນນີ້.

ລ

ຕັລຈະ ກັມມັງ ກະຕັງ ສາຊຸ
ຍັງ ກັຕະວາ ນານຸຕັປປະຕິ
ຍັສສະ ປະຕີໂຕ ສຸມະໂນ
ວິປາກັງ ປະຝິເສວະຕິ ໆຝົກຸໆ

ກັມມ໌ໃດ ທີ່ກະທຳໄປແລ້ວບໍ່ເດືອດຮ້ອນໃນພາຍຫລັງ ທັງຜູ້ກະທຳ ກໍເບີກບານ ສຳຣາລໃຈ ໂດຍໄດ້ຮັບຜົລສນອງຂອງຫການກພະທຳ ດັ່ງກ່າວນັ້ນ ກັມມ໌ນັ້ນ ຊື່ວ່າ ເປັນກັມມ໌ດີ.

## ເຣື່ອງ ນາຍສຸມະນະມາລາການ

ພຣະບໍຣົມສາສດາ ທຣົງຜາຣົພ ນາຍສຸມະນະມາລາການ ທີ່ເຄີຍເກັບດອກຊ້ອນໄປຖວາຍ ພຣະເຈົ້າພິມພິສາຣ ທຸກວັນ. ໃນວັນນຶ່ງ ລາວໄດ້ໄປເຫັນ ພຣະສາສດາ ແລະເກີດມີຄວາມເຫລື້ອມໃສສັທລາ ໃນພຣະອົງຄ໌ ເລີຍເອົາດອກຊ້ອນນັ້ນຖວາຍເປັນພຸທລບູຊາ

ການບູຊາອັນນັ້ນ ກໍເກີດມີປາຝິຫາຣິຍ໌ ເປັນທີ່ໜ້າອັສຈັຣຍ໌ ພຣະເຈົ້າພິມພິສາຣ ທຣົງຊາບ ກໍທຣົງມີຄວາມເຫລື້ອມໃສ ພຣະຣາຊທານຊຶ່ງສົມບັຕິເປັນອັນມາກ ໃຫ້ແກ່ ນາຍສຸມະນະມາລາການ.

ພຣະກິກຂຸ ທັງຫລາຍ ໄດ້ປະຊຸມກັນ ກ່າວສັຣເສີນ ພຸທລານຸກາພ ແລະກິຈກັມມ໌ຂອງ ນາຍມາລາກາຣນັ້ນ. ພຣະສາສດາສເດັຈມາສແດງ ພຣະລັມມິກະຖາແລ້ວ ຈຶ່ງຕຣັສພຣະຄາຖາ ດັ່ງທີ່ຍົກມາຂ້າງເທິງນີ້.

## ໑໐

ມະລຸອາ ມັญญະຕີ ພາໂລ
ຍາວະ ປາປັງ ນະປັຈຈະຕິ
ຍະທາ ຈະ ປັຈຈະຕິ ປາປັງ
ອະຖະ ພາໂລ ທຸກຂັງ ນິຄັຈສະຕິ ฯຝລฯ

ຄົນພາລ ຄົນໂງ່ນັ້ນ ສຳຄັນວ່າ ບາບນັ້ນຫວານ ປານກັບວ່າ ນ້ຳເຜິ້ງ ໃນເມື່ອວ່າ ບາບນັ້ນ ຍັງບໍ່ທັນໃຫ້ຜົລ. ເມື່ອໃດ ບາບໃຫ້ຜົລ ເມື່ອນັ້ນແລ ເຂົາຍ່ອມໄດ້ຮັບທຸກຂ໌.

## ເຣື່ອງ ນາງອຸບົລວັຕຕາເຖຣີ

ພຣະບໍຣົມສາສດາ ທຣົງຜາຣົພ ພຣະນາງອຸບົລວັຕຕາເຖຣີ ຄາວເມື່ອ ພຣະນາງເປັນຄຣືຫັສຖ໌ນັ້ນ ເປັນລິດາເສຕຖີໃນພຣະນຄຣ ສາວັຕຖີ ໄດ້ມີພຣະຣາຊາ ມຫາເສຕຖີ ທັງຫລາຍ ສົ່ງບັຕຕາກາຣ

ໄປຂໍຈົນວ່າ ມຫາເສຕຖີ ຜູ້ເປັນບິດາ ບໍ່ຮູ້ວ່າຈະໃຫ້ແກ່ໃຜ ຈຶ່ງແນະນຳໃຫ້ໄປບວຊ. ນາງໄດ້ຟັງຄຳແນະນຳ ກໍມີຄວາມພໍໃຈຍິນດີດ້ວຍ. ບັດນັ້ນ ນາງຈຶ່ງໄດ້ໄປບວຊໃນສຳນັກຂອງນາງພິກຂຸນີ. ເມື່ອບວຊໄດ້ບໍ່ເທົ່າໃດວັນ ກໍໄດ້ສຳເຣັຈ ພຣະອຣະຫັຕ.

ຄັ້ງນັ້ນ ນັນທະມານົພ ຜູ້ເປັນບຸຕຣ໌ຂອງລູງ ມີຈິຕປະຝິພັທສ໌ຮັກໄຄ່ ພຣະເທຣີ ຕັ້ງແຕ່ຄາວເພິ່ນຍັງເປັນຄຣືຫັສຖ໌ ຢູ່ພຸ້ນ. ຄັນໄດ້ໂອກາສຈຶ່ງໄດ້ເຂົ້າໄປທຳຮ້າຍຂົ່ມຂືນເພິ່ນ ຈົນສຳເຣັຈຕາມຄວາມປະສົງຄ໌ແລ້ວ ກໍຖືກແຜ່ນດິນສູບ ເປັນຜົລໃຫ້ໄປເກີດໃນ ມຫາອະເວຈີ ພຣະສາສດາ ຈຶ່ງໄດ້ຕຣັສຊຶ່ງພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາຂ້າງຕົ້ນນີ້

---

## ໑໑

ມາເສ ມາເສ ກຸສັຄເຄນະ
　　ພາໂລ ກຸຍເຊຖະ ໂພຊະນັງ
ນະ ໂສ ສັງຂາຕະລັມມານັງ
　　ກະຖັງ ອັຄฆะຕິ ໂສຣະສິງ ໑໗໐໑

ຄົນພາລນັ້ນ ເຖິງແມ່ນວ່າຈະບຳເພັຍຕະບະ ຄວາມພຽຣຢ່າງ

ແຮງກ້າ ຈົນະທັ້ງວ່າ ເອົາປາຍຫຍ້າຄາ ຈິ້ມອາຫານກິນທຸກ ໆ ເດືອນ ການປະພຶດປະຕິບັດ ທີ່ເຄັ່ງຄັດ ຂອງ ເຂົານັ້ນ ບໍ່ ໑ ໃນ ໑໖ ສ່ວນ ຂອງ ຂອງການປະພຶດປະຕິບັດ ຂອງທ່ານຜູ້ບັນລຸທັມມ໌.

# ເຣື່ອງ ຊັມພຸກາຊີວົກ

ພຣະບໍຣົມສາສດາ ທຣົງປາຣົພ ຊັມພຸກາຊີວົກ (ນັກບວຊ ນອກພຸທສາສນາ,ຊີເປືອຍ) ຜູ້ນຶ່ງ. ໃນຄັ້ງ ພຣະ ກັສສປະສັມມາ-ສັມພຸທກາລພຸ້ນ ອາຊີວົກຜູ້ນີ້ ເຄີຍເປັນກິກຂຸ ໄດ້ປ້ອຍດ່າ ພຣະ ອຣະຫັນຕ໌ ຂີຕາສົພ ອົງຄ໌ນຶ່ງ. ຕົກມາ ໃນພຸທກາລນີ້ ໄດ້ມາເກີດ ໃນ ນຄຣ ຣາຊຄຣືຫ໌ ເປືອຍກາຍ ບໍ່ນຸ່ງບໍ່ຫົ່ມຜ້າ ກິນອຸຈຈາຣະເປັນ ອາຫານ ນັກນອນຕາມພື້ນດິນ. ເມື່ອຜົມຍາວ ກໍຫລົກເອົາ ບໍ່ໃຊ້ມີດ ມຫາຊົນພາກັນເຫລື້ອມໃສ ຕົກແຕ່ງໂກຊນາຫານເຊີນໃຫ້ບໍຣິໂກຄ ເຂົາຂືນບໍ່ໄດ້ ຈຶ່ງເອົາປາຍຫຍ້າຄາ ຈຸ່ມລົງໃນອາຫານນັ້ນ ແລ້ວແຕະ ໃສ່ລີ້ນກິນ. ເຂົາເຮັດຢູ່ຢ່າງນີ້ ເຖິງ ໕໕ ປີ.

ພຣະບໍຣົມສາສດາ ທອດພຣະເນຕຣ໌ ເຫັນອຸປະນິສັຍ ຈຶ່ງໄດ້ ສເດັຈອອກມາອາສັຍຢູ່ໃນທີ່ບໍ່ໄກ ຈາກທີ່ຊັມພຸກາຊີວົກ ຢູ່ນັ້ນ. ໃນ ເວລາ ປະຖົມຍາມແຫ່ງຣາຕຣີ ທ້າວຈຕຸໂລກບາລທັງ ໔ ໄດ້ມາເຝົ້າ ໃນມັຊຊິມຍາມ ທ້າວສັກກະເທວຣາຊ ມາເຝົ້າ ໃນປັຈຈິມຍາມ ທ້າວ

ມຫາພຣົຫ໌ມ ມາເຝົ້າ ມີແສງສວ່າງຮຸ່ງເຮືອງ ຕລອດຣາຕຣີ ອາຊີວົກ ໄດ້ເຫັນເຊັ່ນນັ້ນ ກໍນຶກອັສຈັຣຍ໌. ໃນເວລາຮຸ່ງເຊົ້ານີ້ໃໝ່ ອາຊີວົກ ເຂົ້າໄປເຝົ້າ ທູລຖາມ ພຣະສາສດາ ພຣະອົງຄ໌ຈຶ່ງໄດ້ຕຣັສບອກໂດຍລຳດັບ ແລ້ວຕຣັສ ພຣະທັມມເທສນາ ໃຫ້ຊຸມພຸກາຊີວົກ ສຳເຣັຈ ອະ ອຣະຫັຕ ພ້ອມດ້ວຍປຕິສັມພິທາ.

ຄັ້ງນັ້ນ ມຫາຊົນເປັນອັນມາກ ໄດ້ມາໃນທີ່ນັ້ນ ພາກັນສົງສັຍວ່າ ພຣະ ມຫາສມະນະ ກັບ ອາຊີວົກ ໃຜໃຫຍ່ກວ່າກັນ ! ພຣະອົງຄ໌ທຣົງຊາບ ວາຣະຈິຕຂອງຊຸມຊົນ ຈຶ່ງຮັບສັ່ງໃຫ້ພຣເຖຣະເຈົ້າແກ້ຄວາມສົງສັຍຂອງຊຸມຊົນ ແລ້ວຈຶ່ງຕຣັສພຣະຄາຖາດັ່ງກ່າວ

---

## ໑໔

ນະ ຫິ ປາປັງ ກະຕັງ ກັມມັງ
ສັຊ຺ຊຸ ຂີຣັງ ວະ ມຸຈຈະຕິ
ຑະຫັນຕິ ພາລະມັນ຺ວະຕິ
ກັສມາຈ຺ຉັນໂນວະ ປາວະໂກ ໆ໗໑ໆ

ກັມມ໌ຊົ່ວທີ່ໄດ້ທຳໄປແລ້ວ ແຕ່ຍັງບໍ່ທັນໃຫ້ຜົລ ໃນທັນທີທັນໃດ ອັນນີ້ ກໍຄືນ້ຳນົມທີ່ຣີດມາໃໝ່ໆ ຍັງບໍ່ປ່ຽນສະພາພ ເປັນ

ນິມສິ້ນເທື່ອ ສັນໃດ ກັມມ໌ຊົ່ວທີ່ທຳໄປແລ້ວນັ້ນ ມັນຍ່ອມເຜົາຜານ ຜູ້ກະທຳ ໃນພາຍຫລັງ ເໝືອນດັ່ງໄຟໄໝ້ແກບ ນັ້ນແລ.

## ເຣື່ອງ ອະຫິເປຕ

ພຣະບໍຣົມສາສດາ ທຣົງເຫັນ ອະຫິເປຕຕົວນຶ່ງ ຢູ່ທີ່ພູເຂົາ ຄິຊຊະກູຜ ມີອັຕຕະພາບເໝືອນງູ ຊຶ່ງຍາວປະມານ ໕໐ ໂຍຊນ໌ ມີຫົວ ເໝືອນຄົນ. ພຣະໂມຄຄັລລານະ ໄດ້ເຫັນມາແລ້ວ ຈຶ່ງໄດ້ກ່າວກັບ ພຣະລັກຂະນະເຖຣະ ໃນຕໍ່ໜ້າພຣະທີ່ນັ່ງ ພຣະສາສດາ. ພຣະອົງຄ໌ ທຣົງຮັບເປັນພຍານ ຂອງພຣະໂມຄຄັລລານະເຖຣະ.

ກິກຂຸ ທັງຫລາຍ ໄດ້ທູລຖາມບຸພພະກັມມ໌ ຂອງເປຕນັ້ນ ພຣະອົງຄ໌ຈຶ່ງຕຣັສ ເລົ່າເຣື່ອງໃນອດີຕກາລ ຂອງເປຕນັ້ນວ່າ ເປຕ ຕົວນັ້ນ ເຄີຍເປັນຊາວນາ ເຫັນຄົນ ທັງຫລາຍ ຍ່າງຢຽບນາຂອງຄົນ ໄປອຸປັຜກາກ ພຣະປັຈເຈກພຸທທເຈົ້າ. ວັນນຶ່ງ ພຣະປັຈເຈກພຸທທ ເຈົ້າບໍ່ຢູ່ ຈຶ່ງລອບເຂົ້າໄປທຸບເຄື່ອງໃຊ້ສອຍຂອງເພິ່ນແຕກໄປໝົດ ແລ້ວກໍເອົາໄຟເຜົາບັຕຕະສາລາ. ດ້ວຍກັມມ໌ອັນນັ້ນ, ເມື່ອເຂົາຕາຍ ໄປ ກໍໄດ້ໄປຕົກ ນະຣົກເປັນເວລານານ ຈົນແຜ່ນດິນໜາຂຶ້ນໄດ້ ໑ ໂຍຊນ໌ ແລ້ວຈຶ່ງມາເກີດເປັນ ອະຫິເປຕ ທີ່ພູເຂົາຄິຊຊະກູຜນີ້.

ໃນທີ່ສຸດ ອດີຕນິທານ ພຣະພຸທທອົງຄ໌ ຈຶ່ງຕຣັສພຣະຄາຖານີ້.

---

## ໑໓

ຍາວະເທວະ ອະນັຕຖາຍະ
ຍັຕຕັງ ພາລັສສະ ຊາຍະຕິ
ຫັນຕິ ພາລັສສະ ສຸກກັງສັງ
ມຸທລະມັສສະ ວິປາຕະຍັງ ໆໆ໗໒ໆ

ຄົນພານ ໄດ້ຄວາມຮູ້ ຄວາມສລາດມາ ກໍເພື່ອການທຳລາຍ ຢ່າງດຽວ. ຄວາມຮູ້ທີ່ໄດ້ມານັ້ນ ທຳລາຍຄຸນຄວາມດີ ຂອງເຂົາໝົດ ທຳໃຫ້ມັນສມອງ ຂອງເຂົາຕົກຕ່ຳໄປ.

## ເຣື່ອງ ສັຕຖິກູຕະເປຕ

ພຣະບໍຣົມສາສດາ ທຣົງປາຣົພ ສັຕຖິກູຕະເປຕ ຢູ່ເທິງພູ ເຂົາຄິຊຊະກູຕ ມີອັຕພາພສູງ ປະມານ ໓ ໂຍຊນ໌ ທ່ອນເຫລັກແດງ ຕົກລົງທັບຫົວ ຊ້ຳແລ້ວຊ້ຳອີກ. ພຣະໂມຄຄັລລານະເຖຣະ ຈຶ່ງເວົ້າ ກັບ ພຣະລັກຂະນະເຖຣະ ໃນທີ່ຕໍ່ໜ້າພຣະພັກຕຣ໌ ພຣະພຸທຂອງຄ໌ຈຶ່ງ ທຣົງຮັບເປັນພຍານ ຂອງພຣະໂມຄຄັລລານະເຖຣະ. ພຣະພິກຂຸ ທັງ ຫລາຍ ຈຶ່ງທູລຖາມ ບຸພພະກັມມ໌ຂອງເປຕນັ້ນ.

ພຣະອົງຄ໌ ຈຶ່ງຕຣັສເຣື່ອງ ໃນອະດີຕກາລຂອງເຜດນັ້ນວ່າ. ຄັ້ງນຶ່ງ, ມີບຸຣຸສພິການ ຂາເປ້ຍ ຜູ້ນຶ່ງມີຄວາມຊຳນານ ໃນການດີດຂີ້ກວດ. ພຣະຣາຊາຮັບສັ່ງໃຫ້ຫາຕົວມາ ແລະຕຣັສວ່າ ປຸໂຣຫິຕຂອງເຮົາ ເປັນຄົນເວົ້າຫລາຍຢ່າຍຫ່າງ. ໃນເວລາໃດ ທີ່ປຸໂຣຫິຕຜູ້ນັ້ນເຂົ້າມາເຝົ້າ ອ້າປາກຂຶ້ນຈະເວົ້າ ໃຫ້ດີດກ້ອນຂີ້ແບ້ເຂົ້າໄປໃນປາກ. ບຸຣຸສຜູ້ນັ້ນ ກໍຮັບເຮັດໃຫ້ໄດ້ຕາມຣາຊປະສົງຄ໌. ຕັ້ງແຕ່ນັ້ນມາ ປຸໂຣຫິຕ ຜູ້ນັ້ນ ກໍເຊົາເວົ້າຫລາຍ.

ພຣະຣາຊາ ກໍທຣົງຍິນດີ ພຣະຣາຊທານສິ່ງຂອງຕ່າງໆ ໃຫ້ແກ່ບຸຣຸສເປ້ຍຜູ້ນັ້ນ. ໃນເວລານັ້ນ, ຍັງມີບຸຣຸສອີກຄົນນຶ່ງ ຍອມເປັນລູກສິສ ຂໍຮຽນສິລປະອັນນັ້ນ ຈາກບຸຣຸສເປ້ຍ. ຄັນວ່າຮຽນໄດ້ແລ້ວ ກໍຢາກທົດລອງເບິ່ງຄວາມສາມາຖຂອງຕົນ. ໃນວັນນຶ່ງ ເຂົາໄດ້ເຫັນພຣະປັຈເຈກພຸທທເຈົ້າ ແລະເຂົ້າໃຈວ່າ ເພິ່ນບໍ່ມີບິດາ ມາຣດາ ຈຶ່ງດີດກ້ອນຂີ້ກວດເຂົ້າໄປ ທາງຫູຂ້າງຊ້າຍ ທລຸອອກທາງ ຂ້າງຂວາ. ຍ້ອນເຫຕຸນັ້ນ ພຣະປັຈເຈກພຸທທເຈົ້າ ຈຶ່ງດັບຂັນທ໌ປຣິນິພພານ.

ດ້ວຍກັມມ໌ອັນນັ້ນ ເຂົາໄດ້ໄປຕົກ ອະເວຈີນະຣົກ ໃນຊົ່ວເວລາ ອັນຍາວນານ ຈົນແຜ່ນດິນໜາໄດ້ ໑ ໂຍຊນ໌ ແລ້ວຈຶ່ງມາເກີດເປັນ ສັຕວ໌ກຸຕະເຜຕ ຢູ່ທີ່ເຂົາຄິຊຸຊະກູຕນີ້.

ໃນທີ່ສຸດ ອດີຕນິທານ ພຣະພຸທທອົງຄ໌ຈຶ່ງຕຣັສພຣະຄາຖານີ້

໑໔

ອະສັນຕັງ ກາວະມິຈເຊຍຍະ
ປຸເຣກຂາຣັຍຈະ ກິກຂຸສຸ
ອາວາເສສຸ ຈະ ອິສສະຣິຍັງ
ປູຊາ ປະຣະກຸເລສຸ ຈະ ໆ໗໓ໆ

ກິກຂຸທີ່ເປັນພາລນັ້ນ ປາຖນາຊື່ສຽງ ແລະ ກຽຕິຍົສ ທີ່ບໍ່ເໝາະສົມ, ຢາກເປັນໃຫຍ່ກວ່າ ກິກຂຸ ທັງໝົດ, ຢາກເປັນເຈົ້າອາວາສ, ຢາກໄດ້ຮັບການບູຊາ ສັກກາຣະຈາກຊາວບ້ານ ທັງຫລາຍ.

໑໕

ມະເມວະ ກະຕະ ມັຍຍັນຕຸ
ຄິຫີ ປັພພະຊິຕາ ອຸໂກ
ມະເມວະ ອະຕິວະສາ ອັສສຸ
ກິຈຈາກິຈເຈສຸ ກິສມິຈິ
ອິຕິ ພາລັສສະ ສັງກັປໂປ
ອິຈຊາ ມາໂນ ຈະ ວັຫຜະຕິ ໆ໗໔ໆ

"ຂໍໃຫ້ຄຣືຫັສຖ໌ ແລະ ບັຣພະຊິຕ ຈົ່ງສຳຄັນວ່າ ເຮົາເທົ່ານັ້ນ ເຮັດວຽກອັນນີ້, ຂໍໃຫ້ເຂົາເຫລົ່ານັ້ນ ຢູ່ໃນບັງຄັບບັນຊາ ຂອງ

ເຮົາ, ບໍ່ວ່າຈະເປັນກິຈການໃຫຍ່ ຫລື ນ້ອຍ ກໍຕາມ"

ພິກຂຸ ທີ່ເປັນຄົນພາລ ມັກຈະຄິດໄຝ່ຝັນ ເຊັ່ນນີ້.. ຄວາມທະເຍີທະຍານ ແລະ ຄວາມເຍີຫຍິ່ງ ຈອງຫອງ ກໍພອຍເພີ່ມຂຶ້ນ.

## ເຣື່ອງ ພຣະສຸທັມມເຖຣະ

ພຣະບໍຣົມສາສດາ ທຣົງຜາຣົພ ພຣະສຸທັມມເຖຣະ ທີ່ເປັນເຈົ້າອາວາສ ວັດ ອັມພາກະຜະວັນ ເມືອງປັຈຈິກາສິຕາທ໌ ເພິ່ນເຫັນທ່ານຈິຕຕະຄຫະບໍດີ ຜູ້ອນາຄາມີ ທີ່ອຸປັຜກຖາກເພິ່ນນັ້ນ ໄປເຫລື້ອມໃສໃນ ພຣະອັຄຄສາວົກ ຜູ້ເປັນ ພຣະອາຄັນຕຸກະ ໄປພັກໃນທີ່ນັ້ນຫລາຍກວ່າເພິ່ນ. ທ່ານຈິຕຕຄະຫບໍດີ ໄປນິມົນຕ໌ ອາຄັນຕຸກະ ກ່ອນແລ້ວຈຶ່ງໄປນິມົນຕ໌ເພິ່ນ ຕາມທີຫລັງ. ເພິ່ນຄຶດຄຽດໃຫ້ ໃຫ້ທ່ານຄະຫະບໍດີ ແລະເວົ້າແດກດັນໃສ່ຕ່າງ ໆ ນາ ໆ. ບັດນັ້ນ ທ່ານເຈົ້າອາວາສ ໄດ້ເຂົ້າໄປທູລພຣະສາສດາ ພຣະອົງຄ໌ ຮັບສັ່ງໃຫ້ທ່ານເຈົ້າອາວາສໄປຂໍຂມາໂທສ ຈິຕຕະຄຫະບໍດີ ແລ້ວຈຶ່ງຕຣັສພຣະຄາຖານີ້.

---

໑໕

ອັລລາ ຫີ ລາຖູປະນິສາ

ອັລລາ ນິພພານະຄາມິນີ

ເອວະເມຕັງ ອະກິລຍາຍະ
ກິກຂຸ ພຸທລັສສະ ສາວະໂກ
ສັກກາຣັງ ນາກິນັນເທຍຍະ
ວິເວກະມະນຸ ພູຣູຫະເຍ ໆ໗໕ໆ

ທາງນຶ່ງ ສແວງຫາລາກ, ທາງນຶ່ງ ໄປນິພພານ, ເມື່ອຮູ້ຢ່າງນັ້ນແລ້ວ, ກິກຂຸ ພຸທລສາວົກ ບໍ່ຄວນໄປຍິນດີນຳລາກສັກກາຣະຄວນ ຢູ່ຢ່າງສງົບ.

## ເຣື່ອງ ວນະວາສີຕິສສະເຖຣະ

ພຣະບໍຣົມສາສດາ ທຣົງຜາຣົພ ພຣະ ວນະວາສີຕິສສະເຖຣະເພິ່ນເປັນບຸຕຣ໌ອຸປະຖາກ ຂອງພຣະສາຣີບຸຕຣ໌ ແລະມີຄວາມເຫລື້ອມໃນພຣະເຖຣະ ຕັ້ງແຕ່ເພິ່ນຍັງເປັນເດັກນ້ອຍ. ເມື່ອເພິ່ນມີອາຍຸໄດ້ ໗ ຂວບ ໄດ້ບວຊເປັນສາມເນຣ ໃນສຳນັກ ຂອງພຣະເຖຣະ. ສາມະເນຣ ເປັນຜູ້ສົມບູຣຄ໌ດ້ວຍລາພສັກກາຣະ ແຕ່ເພິ່ນບໍ່ຍິນດີໃນລາພສັກກາຣະເຫລົ່ານັ້ນ ແລະເຂົ້າໄປທູລຂໍພຣະກັມມຖານຈາກສຳນັກພຣະສາສດາ ແລ້ວເຂົ້າໄປຢູ່ປ່າ ທຳຄວາມພຽຣ ບັຣລຸພຣະອຣຫັຕໃນພັຣຊານັ້ນ.

ພຣະພິກຂຸ ທັງຫລາຍ ໄດ້ປະຊຸມສົນທະນາສັຣເສີນຄຸຕຂອງ ສາມເຕຣອ່າ ກະທຳກິຈທີ່ບຸຄຄົລກະທຳໄດ້ຍາກ ສລະລາພສັກກາຣະ ອັນຍິ່ງໃຫຍ່ ເຊັ່ນນັ້ນ ແລ້ວເຂົ້າໄປຢູ່ໃນປ່າ ລ້ຽງຊີພດ້ວຍອາຫາຣ ພຽງເພື່ອດຳຣົງຊີພຢູ່ໄດ້ ເທົ່ານັ້ນ.

ພຣະສາສດາ ໄດ້ສເດັຈໄປຍັງທີ່ປະຊຸມນັ້ນ ແລ້ວຕຣັສຊຶ່ງ ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາ ຂ້າງຕົ້ນນີ້.

## ຈົບພາລະວັຄຄ໌ ທີ່ ໕

# ບັຓຫິຕວັຄຄ໌ ທີ່ ໖

## ໑

ນິລິນັງວະ ປະວັຕຕາຣັງ
ຍັງ ປັສເສ ວັຊຊະທັສສີນັງ
ນິຄລັຍຫະວາທິງ ເມລາວິງ
ຕາທິສັງ ປັຓຫິຕັງ ກະເຊ
ຕາທິສັງ ກະຊະມານັສສະ
ເສຍໂຍ ໂຫຕິ ນະ ປາປີໂຍ ฯ໗໖ฯ

ຫາກວ່າທ່ານ ພົບພໍ້ກັບນັກປຣາຊຍ໌ ທີ່ໝັ່ນວ່າກ່າວຕັກເຕືອນສິ່ງທີ່ຂາດຕົກບົກພ່ອງ ກໍເໝືອນດັ່ງຜູ້ທີ່ບອກຂຸມທຣັພຍ໌ໃຫ້ ກໍຄວນຄົບຄ້າສະມາຄົມກັບທ່ານ ຜູ້ນັ້ນ ຊຶ່ງຈະມີແຕ່ຄວາມຈເຣີນ ບໍ່ມີຄວາມເສື່ອມ.

## ເຣື່ອງ ພຣະຣາລະເຖຣະ

ພຣະບໍຣົມສາສດາ ທຣົງພຣະຜາຣົພ ພຣະຣາລະ ຜູ້ມີອາຍຸ ຄາວເມື່ອເພິ່ນຍັງຢູ່ໃນເພສຄຣືຫັສຖ໌ນັ້ນ ເພິ່ນເປັນພຣາຫມຓ໌ທຸກຂ໌ຍາກ ແລະອາສັຍພຣະກິກຂຸ ລ້ຽງຊີພຢູ່ໃນພຣະອາຣາມ ທຳກາຣກວາດແຜ້ວ ພຣະອາຣາມ. ພຣະຍອດແກ້ວ ສັພພັญญູ ທອດພຣະເນຕຣ໌ເຫັນອຸປນິສັຍ ພຣະອຣຫັຕຜົລຈຶ່ງເດັຈໄປທັກທາຍປຣາສັຍ ພຣາຫມຓ໌ຈຶ່ງທູລວ່າ ຂ້າພະອົງຄ໌ຢາກຈະບວຊ

ພຣະຍອດແກ້ວສັພພັລລູຈຶ່ງທຣົງ ອນຸຌາຕໃຫ້ພຣະ ສາຣີບຸຕຣ໌ບວຊໃຫ້. ຄັນບວຊແລ້ວເພິ່ນເປັນຜູ້ທີ່ ດຸໜັ່ນ ວ່າງ່າຍສອນງ່າຍ ທ່ານ ຮັບຟັງຄຳສອນ ຂອງພຣະເຖຣະ ໂດຍເຄົາຣົພ. ໃນເວລາບໍ່ດົນ ເພິ່ນກໍໄດ້ເຮັຈ ພຣະອຣຫັຕ. ພຣະກິກຂຸ ທັງຫລາຍ ປະຊຸມກັນສຣເສີຌ ພຣະສາຣີບຸຕຣ໌ສ່າ ເປັນຜູ້ກຕັລລູ ກຕະເວທີ, ສັຣເສີຌ ພຣະຣາລະ ຜູ້ມີອາຍຸວ່າ ເປັນຜູ້ວ່າງ່ຍສອນງ່າຍແທ້ໆ ພຣະສາສດາ ໄດ້ສເດັຈໄປໃນທີ່ປະຊຸມ ແລ້ວຈຶ່ງຕຣັສພຣະຄາຖາ ດັ່ງທີ່ໄດ້ ຍົກຂຶ້ນມາໃນເບື້ອງຕົ້ນນີ້.

= = = = = = = = = = = = = = = = = = = = = = = = = = = = = = = = = = = = = = = =

## ໔

ໂອວາເທຍຍານຸສາເສຍຍະ
　　ອະສັພກາ ຈະ ນິວາຣະເຍ
ສະຕັງ ຫິ ໂສ ປິໂຍ ໂຫຕິ
　　ອະສະຕັງ ໂຫຕິ ອັປປິໂຍ ໆກໆ

ຄວນຕັກເຕືອນຄນອື່ນ ແລະຄວນກີດກັນເຂົາ ບໍ່ໃຫ້ທຳຄວາມຊົ່ວ ຄົນທີ່ຄອຍສັ່ງສອນຄົນອື່ນຢ່າງນີ້, ຄົນຜູ້ດີ ຍ່ອມຮັກຫອມ ແຕ່ຄົນຊົ່ວຊັງ.

# ເຣື່ອງ ອັສສຊີປຸນັພພະສຸກະ

ພຣະບໍຣົມສາສດາ ທຣົງຜາຣົພ ກິກຂຸ ປຸນັພພະສຸກະ ເປັນກິກຂຸໃນຈຳນວນພວກຈັພພັຄຄິຍະ ເປັນສັທລິວິຫາຣິກຂອງ ພຣະອັຄຄສາວົກ ແຕ່ວ່າເປັນກິກຂຸອະລັຊຊີ ປະພຶຕຣ໌ອະນາຈາຣ ເປັນຜູ້ທຳລາຍຕະກູລ (ປະຈົບປະແຈງຕະກູລ) ລ້ຽງຊີພດ້ວຍປັຈຈັຍນັ້ນ, ອາສັຍຢູ່ໃນພູເຂົາ ກິຍາຄີຣີ ກັບກິກຂຸບໍຣິວາຣ ໕໐໐. ພຣະສາສດາທຣົງຊາບ ຣັບສັ່ງໃຫ້ພຣະສາວົກທັງ ໔ ເຂົ້າເຝົ້າ ແລ້ວຣັບສັ່ງໃຫ້ໄປສັ່ງສອນ ກິກຂຸເຫລົ່ານັ້ນ ແລ້ວຈຶ່ງຕຣັສພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາໃນເບື້ອງຕົ້ນນີ້.

==========================================

ໟ

ນະ ກະເຊ ປາປະເກ ມິຕເຕ,

ນະ ກະເຊ ປຸຣິສາລະເມ,

ກະເຊຖະ ປຸຣິສຸຕຕະເມ ຯກຽຯ

ບໍ່ຄວນຄົບຫາສະມາຄົມກັບຄົນຊົ່ວ ບໍ່ຄວນຄົບຫາກັບຄົນຕ່ຳຊ້າ ຄວນຄົບຫາກັບກັລຍາຕະມິຕຣ໌, ຄວນຄົບຫາກັບຄົນທີ່ດີ.

# ເຣື່ອງ ພຣະຈັນນະ ເຖຣະ

ພຣະບໍຣົມສາສດາ ທຣົງຜາຣົພ ພຣະຈັນນະເຖຣະ ທີ່ເປັນຄົນດື້ວ່າ ຍາກສອນຍາກ ຖືວ່າຕົນເປັນຄົນໃນເກົ່າແກ່ ແລະອ້າງຕົວຢູ່ສເມີວ່າ ເຮົາໄດ້ຕາມສເດັຈພຣະລູກເຈົ້າ ອອກມຫາກິເນກຂກັມຕ໌ (ສເດັຈອອກບັຣພະຊາ) ໃນເວລານັ້ນ ເຮົາບໍ່ເຫັນໃຜຈັກຄົນ ຕົກມາໃນເວລານີ້ ມີຜູ້ກ່າວວ່າ ຕົນເປັນພຣະອັຄຄະສາວົກ ດັ່ງນີ້ ກໍມີ.

ພຣະຍອດແກ້ວສັພພັດຍູ ທຣົງຊາບຣຽກໃຫ້ຫາຕົວມາສັ່ງສອນແລະສັຣເສີນຄຸຕພຣະອັຄຄະສາວົກວ່າ ເປັນຜູ້ຄວນຄົບຫາສະມາຄົມ ແລ້ວຈຶ່ງຕຣັສຊຶ່ງພຣະຄາຖາ ດັ່ງທີ່ຍົກຂຶ້ນມາໃນເບື້ອງຕົ້ນນັ້ນ.

*(ຫລັງຈາກທີ່ພຣະອົງຄ໌ ສເດັຈປຣິນິພພານແລ້ວ ພຣະຈັນນະ ຈຶ່ງສຳເຣັຈພຣະອຣຫັຕ)*

---

໔

ສັມມະປັຕິ ສຸຂັງ ເສຕິ
ວິປປະສັນເນນະ ເຈຕະສາ
ອະຣິຍັປປະເວທິເຕ ສັມ<u>ເມ</u>
ສະທາ ຣະມະຕິ ປັຕທິໂຕ ໆກຸລໆ

ຜູ້ດື່ມຊື່ງຣົສແຫ່ງພຣະທັມມ໌ ຍ່ອມມີໃຈສງົບຢູ່ເປັນສຸຂ, ບັຕສິຕ ຍ່ອມມີຄວາມຍິນດີໃນທັມມ໌ ທີ່ພຣະອຣິຍະເຈົ້າ ທຣົງສແດງໄວ້ນັ້ນສເມີ.

## ເຣື່ອງ ພຣະມຫາກັປປິລ ເຖຣະ

ພຣະບໍຣົມສາສດາ ທຣົງຜາຣົພ ພຣະມຫາກັປປິລ ເຖຣະ. ໃນຄາວທີ່ເພິ່ນເປັນຄຣືຫັສຖ໌ນັ້ນ ເປັນກະສັຕຣິຍ໌ ສເວີຍຣາຊສົມບັຕິ ໃນ ນຄຣກຸຕະວະດີ ມີມເຫສີນາມວ່າ ນາງອໂນຊາ . ມື້ນຶ່ງ, ເພິ່ນໄດ້ຊາບຂ່າວ ຈາກພວກພໍ່ຄ້າວ່າ ບັດນີ້ ມີ ພຸທລຣັຕນະ, ທັມມຣັຕນະ, ສັງຄຣັຕນະ ບັງເກີດຂຶ້ນແລ້ວໃນພຣະນຄຣສາວັຕຖີ ພຣະອົງຄ໌ທຣົງມີຄວາມໂສມນັສຍິນດີ ເປັນຢ່າງຍິ່ງຈຶ່ງໄດ້ພຣະຣາຊທານທຣັພຍ໌ ບູຊາຂ່າວສາຣນັ້ນ ແກ່ພວກພໍ່ຄ້າ ແລ້ວທຣົງ ສລະຣາຊສົມບັຕິ ອອກບວຊ ພ້ອມດ້ວຍຣາຊບໍຣິວາຣ ປະມານນຶ່ງພັນ ມຸ່ງໜ້າໄປຍັງ ນຄຣສາວັຕຖີ ແລະ ໄດ້ເພີບພຣະສາສດາ ໃນຣະຫວ່າງທາງ ໄດ້ຟັງພຣະອົງຄ໌ສແດງ ອນຸປຸພພິກຖາ ສຳເຣັຈ ອຣຫັຕ ແລະ ໄດ້ຮັບເອຫິພິກຂຸ.

ໃນກາລຕໍ່ມາ, ນາງ ອໂນຊາເທວີ ພ້ອມດ້ວຍຍິງບໍຣິວາຣ ກໍອອກຕິດຕາມໄປ. ເມື່ອໄດ້ຟັງ ພຣະທັມມເທສນາ ກໍໄດ້ສຳເຣັຈ ໂສດາປັຕຕິຜົລແລ້ວໄປບວຊເປັນພິກຂຸນີ ໃນສຳນັກ ນາງອຸບົລວັຕຕາເຖຣີ ໄດ້ບັຣລຸຊຶ່ງພຣະອຣຫັຕ ດ້ວຍກັນທັງໝົດ. ໃນວັນນຶ່ງ, ພິກຂຸ ທັງຫລາຍໄດ້ຍິນສຽງພຣະມຫາ ກັປປິລເຖຣະ ເປັ່ງອຸທານຂຶ້ນວ່າມີຄວາມສຸຂແທ້. ຈຶ່ງໄດ້ນຳເຣື່ອງທູລພຣະສາສດາວ່າ ເພິ່ນຜາຣົພຄວາມສຸຂໃນຣາຊສົມບັຕິ ພຣະອົງຄ໌ຕຣັສວ່າ

ເພິ່ນຜາອິພຄວາມສຸຂ ໃນພຣະນິພພານ ແລ້ວຈຶ່ງຕຣັສພຣະຄາຖາ ດັ່ງທີ່ຍົກ
ຂຶ້ນມາ ໃນຂ້າງຕົ້ນນີ້.

================================

### ໕

ອຸທະກັງ ຫິ ນະຍັນຕິ ເນຕຕິກາ
ອຸສຸກາຣາ ນະມະຍັນຕິ ເຕຊະນັງ
ທາຣຸງ ນະມະຍັນຕິ ຕັຈຈະກາ
ອັຕຕານັງ ທະມະຍັນຕິ ປັຕຫິຕາ ໑໗໐໑

ຊ່າງນາ ໄຂນ້ຳເຂົ້ານາ ຊ່າງເຮັດສອ (ທະນູ) ເບັດລູກສອ
ໃຫ້ຊື່, ຊ່າງໄມ້ ຖາກໄມ້, ສ່ວນ ບັຕຫິຕນັ້ນ ເຝິກສອນຕົນເອງ.

## ເຣື່ອງ ບັຕຫິຕສາມເຕຣ

ພຣະບໍຣົມສາສດາ ທຣົງຜາອິພ ບັຕຫິຕສາມເຕຣ ຜູ້ເປັນບຸຕຣ໌ຂອງ
ຕະກູລ ຜູ້ອຸປຖາກພຣະສາສຣີບຸຕຣ໌

ທາຣຸງ ນະມະຍັນຕິ ຕັຈຈະກາ
ອັຕຕານັງ ທະມະຍັນຕິ ປັດໜິຕາ ໆໆ໐ໆ

ຊາວນາ ເປັ່ງນ້ຳເຂົ້ານາ, ນາຍຊ່າງເຮັດສອ ເຮັດທະນູ ເບັດລູກສອນ ລູກທະນູໃຫ້ຊື່, ຊ່າງໄມ້ຖາກໄມ້ ສ່ວນບັດໜິຕນັ້ນ ເຝິກຝົນຕົນເອງ.

# ເຣື່ອງ ບັດໜິຕສາມເນຣ

ພຣະບໍຣົມສາສດາ ທຣົງຜາຣົພ ບັດໜິຕສາມເນຣ ທີ່ເປັນບຸຕຣ໌ຂອງ ຕະກູລຜູ້ທີ່ອຸປະຖາກ ພຣະສາຣີບຸຕຣ໌ເຖຣະ ໃນເມືອງສາວັຕຖີ. ສາມເນຣອົງຄ໌ ນີ້ມີກຸສົລ ທີ່ເຄີຍອົບຣົມມາແລ້ວ. ເມື່ອມີອາຍຸໄດ້ ໗ ຂວບ ເພິ່ນກໍເຂົ້າບວຊ ເປັນສາມເນຣຢູ່ໃນສຳນັກ ຂອງພຣະເຖຣະ. ໃນເຊົ້າວັນນຶ່ງ, ເພິ່ນໄປທ່ຽວ ບິຕທບາຕກັບພຣະເຖຣະ ເຫັນຊາວນາເປັ່ງນ້ຳເຂົ້ານາ ເຫັນຊ່າງເຮັດສອນເຮັດ ທະນູ ເບັດລູກສອນລູກທະນູ ໃຫ້ຊື່, ຊ່າງໄມ້ຖາກໄມ້ໄດ້ຕາມປະສົງຄ໌ຂອງຕົນ ຈຶ່ງຖືເອົາສິ່ງຕ່າງໆ ທີ່ເຫັນນັ້ນເປັນອາຣົມຕ໌ ແລະຄິດຈະເຝິກຝົນຈິຕຂອງຕົນ ແລ້ວລາພຣະເຖຣະກັບຄືນພຣະອາຮາມ. ຕອນຍ່າງກັບຄືນມານັ້ນ ສາມເນຣ ກໍານົດເອົາສິ່ງທີ່ເຫັນມານັ້ນເປັນອາຣົມຕ໌, ເມື່ອມາເຖິງອາຮາມ ກໍເຂົ້າໄປໃນ ໃນຫ້ອງ ອັດປະຕູພິຈາຣະນາກາຍຂອງຕົນເອງວ່າ ສິ່ງທີ່ບໍ່ມີຊີວິຕ ກໍຍັງເບັດ ໃຫ້ຊື່ໄດ້ ຄົນເຮົາ ກໍຕ້ອງເບັດໄດ້.

ໃນທີ່ສຸດ ສາມເຕຣ ກໍໄດ້ບັຣລຸພຣະອຣຫັຕ. ກິກຂຸ ທັງຫລາຍປະຊຸມສົນທະນາ ກ່ງວການບັຣລຸພຣະອຣຫັຕ ຂອງສາມເຕຣ. ພຣະຍອດແກ້ວສັພພັຍຍູໄດ້ສເດັຈໄປຍັງທີ່ປະຊຸມນັ້ນ ຈຶ່ງໄດ້ຕຣັສພຣະຄາຖາດັ່ງທີ່ກ່າວມານີ້

---

# ໖

ເສໂລ ຍະຖາ ເອກະຆະໂນ
    ວາເຕນະ ນະ ສະມີຣະຕິ
ເອວັງ ນິນທາປະສັງສາສຸ
    ນະ ສະມິຍຊັນຕິ ປັຓທິຕາ ໆຸ໑ໆ

ພູເຂົາຫີນ ຍ່ອມບໍ່ສັ່ນສະເທືອນ ຍ້ອນລົມພັດແຮງ ອັນນີ້ ສັນໃດ, ບັຓທິຕ ເມື່ອໄດ້ຟັງລັມມ໌ແລ້ວ ຍ່ອມມີຈິຕໃຈສງົບ ສັນນັ້ນແລ.

## ເຣື່ອງ ພຣະລະກຸຕຜະກະກັທລິຍະເຖຣະ

ພຣະບໍຣົມສາສດາ ທຣົງຜາຣົພ ພຣະລະກຸຕຜິກະກັທລິຍະເຖຣະ ທີ່ພຣະໜຸ່ມນ້ອຍ ເຫັນເພິ່ນແລ້ວ ພາກັນລູບບາຍສີສະເພິ່ນເຫລົ້ນ ຈັບລູບດັງຂອງເພິ່ນເຫລົ້ນ ກໍມີ ແລະເວົ້າຢອກເພິ່ນເຫລົ້ນ ກໍມີ ພຣະເຖຣະເຈົ້າ ກໍບໍ່ມີ

ຄວາມໂກທຮ້າຍແຕ່ຢ່າງໃດ, ພຣະກິກຂຸ ທັງຫລາຍປະຊຸມກັນສັຣເສີນຄຸຕ
ຂອງເພິ່ນ. ພຣະສາສດາ ທຣົງສເດັຈມາຍັງທີ່ປະຊຸມນັ້ນ ແລ້ວທຣົງສແດງ
ຄຸຕຂອງພຣະຂິຕາສິພ ແລ້ວຈິ່ງຕຣັສພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມານັ້ນ.

---

ກ

ຍະຖາປິ ທະທະໂຣ ຄັມກີໂຣ
ວິປປະສັນໂນ ອະນາວິໂລ
ເອວັງ ລັມມານິ ສຸຕະວານະ
ວິປປະສີທັນຕິ ປັຓທິຕາ ໑ກ໔໑

ວັງນ້ຳເລິກ ມີນ້ຳໃສສະອາດ ສງົບງຽບ ສັນໃດ, ບັຓທິຕ ຟັງລັມມ໌
ແລ້ວຍ່ອມມີຈິຕໃຈສງົບງຽບ ສັນນັ້ນ.

## ເຣື່ອງ ນາງກາຕມາຣດາ

ພຣະບໍຣົມສາສດາ ທຣົງຜາຣິພ ມາຣດາ ຂອງນາງກາຕາ ທີ່ຈັດແຈງ
ເຮັດຂນົມ ເພື່ອສົ່ງລິດາຂອງຕົນໄປສູ່ຕະກຸລສາມີ. ຄັ້ງນັ້ນ, ຍັງມີກິກຂຸ ໔

ອົງຄ໌ປຽນກັນເຂົ້າໄປບິຕາທບາຕ ອົງຄ໌ນຶ່ງເຖິງ ໔ ເທື່ອ ຈົນມາຣດາຂອງນາງ ກາຕາ ເຮັດຂນົມບໍ່ທັນ ເປັນເຫຕຸທໍາໃຫ້ການສົ່ງຂນົມຊ້າໄປ ສາມີຂອງນາງ ຈຶ່ງໄປມີກັຣຍາໃໝ່. ນາງກາຕາຊາບຄວາມນັ້ນ ຈຶ່ງໂກທເຄືອງໃຫ້ກິກຂຸ ທັງ ຫລາຍ. ຍາມໃດທີ່ນາງກາຕາ ເຫັນກິກຂຸ ນາງຈະດ່າປ້ອຍຢ່າງບໍ່ເລືອກໜ້າ.

ພຣະສາສດາ ສເດັຈໄປເທສນາສັ່ງສອນ ໃຫ້ນາງກາຕາ ບັຣລຸຊຶ່ງ ໂສດາປັຕຕິຜົລແລ້ວ ຈຶ່ງສເດັຈຄືນສູ່ພຣະວິຫາຣ ໂດຍຜ່ານໄປທາງສນາມ ຫລວງ. ພຣະເຈົ້າປະເສນທິໂກສົລ ທອດພຣະເນຕຣ໌ເຫັນ ຈຶ່ງສເດັຈເຂົ້າໄປ ເຝົ້າ. ພຣະສາສດາ ທຣົງຕຣັສ ເຣື່ອງນາງກາຕາ ທັງໝົດໃຫ້ພຣະຣາຊາຟັງ ພຣະຣາຊາທຣົງມີຄວາມເຫລື້ອມໃສ ຮັບເອົານາງກາຕາໄປລ້ຽງໄວ້ເໝືອນ ດັ່ງຣາຊທິດາ. ໃນເວລາຕໍ່ມາ ນາງໄດ້ເປັນກັຣຍາ ຂອງມຫາອໍາມາຕຍ໌ ຕັ້ງ ແຕ່ນັ້ນມານາງກໍໄດ້ທໍາບຸຉໃຫ້ທານຕາມຊອບໃຈ ແຕ່ວ່າບໍ່ມີກິກຂຸເຂົ້າໄປຫາ. ບັດນັ້ນ, ນາງຈຶ່ງສົ່ງບຸຣຸສໄປໄວ້ຕາມປະຕູເມືອງ ໃຫ້ຄອຍອາຣາຉນາກິກຂຸ ໄປຍັງບ້ານຂອງຕົນ ແລະໄດ້ທໍາບຸຉໃຫ້ທານ.

ກິກຂຸ ທັງຫລາຍ ປະຊຸມສົນທນາ ກ່ຽວກັບ ເຣື່ອງນາງກາຕາ ແລະ ແລະສັຣເສີຉຄຸຕ ພຣະສາສດາ. ພຣະພຸທລອົງຄ໌ ໄດ້ສເດັຈໄປຍັງທີ່ປະຊຸມ ນັ້ນ ແລ້ວຈຶ່ງຕຣັສພຣະຄາຖາດັ່ງທີ່ໄດ້ຍົກຂຶ້ນມາໃນຂ້າງເທິງນີ້.

---

໗

ສັພພັຕຖະ ເວ ສັປປຸຣິສາ ອະຊັນຕິ
ນະ ກາມະກາມາ ລະປະຍັນຕິ ສັນໂຕ,
ສຸເຂນະ ຜຸຕຖາ ອະຖະວາ ທຸກເຂນະ
ນະ ອຸຈຈາວະຈັງ ປັຕພິຕາ ທັສສະຍັນຕິ ໆ໗໘ໆ

ສັບບຸຣຸສຍ່ອມເສັຍສລະໄດ້ ທຸກສິ່ງທຸກຢ່າງ ບໍ່ມົວເມົາເພີ້ຝັນນໍາແຕ່ເຣື່ອງ ກາມຄຸຕ. ບໍ່ວ່າໄດ້ຮັບທຸກຂ໌ ຫຣື ໄດ້ຮັບສຸຂຜູ້ເປັນບັຕພິຕ ຍ່ອມບໍ່ສແດງ ອາກາຣຍິນດີ ຍິນຮ້າຍ (ເກີນກວ່າເຫຕຸ).

## ເຣື່ອງ ປັຌຈສຕະກິກຂຸ

ພຣະບໍຣົມສາສດາ ທຣົງຜາຣົພ ພຣະກິກຂຸ ໕໐໐ ອົງຄ໌. ຄາວເມື່ອພຣະອົງຄ໌ ສເດັຈຈໍາພັຣຊາ ຢູ່ໃນເມືອງເວຣັຌຊາ ຄາວນັ້ນໄດ້ເກີດທຸພກິກ-ຂະກັຍ ເຂົ້າຍາກໝາກແພງ. ພຣະກິກຂຸສົງພ໌ໄດ້ຮັບຄວາມລໍາບາກໃນການບິຕພບາຕ. ແຕ່ເຖິງປານນັ້ນ ພວກເພິ່ນ ກໍບໍ່ມີຄວາມກະເສືອກກະສົນ ມີຄວາມສງົບສງ່ຽມ ຢູ່ເປັນປົກຕິ. ເມື່ອອອກພັຣຊາແລ້ວ ກໍໄດ້ຕາມສເດັຈພຣະສາສດາ. ເມື່ອໄປເຖິງວິຫາຣເຊຕວັນ ເມືອງສາວັຕຖີແລ້ວ ຊາວເມືອງໄດ້ທໍາອາຄັນຕຸກັຕ ຕ້ອນຮັບກິກຂຸ ອາຄັນຕຸກະເປັນອັນມາກ. ຄັ້ງນັ້ນ ມີວິ-

ຆາສາທ (ຄົນຂໍທານ ຫາກິນອາຫາຣເຖື່ອນ) ມີຢູ່ປະມາຓ ໕໐໐ ຄົນອາສັຍ
ຢູ່ໃນວິຫາຣຄັນໄດ້ຮັບປະທານໂຠຊນາຫາຣເສສເຫລືອອີ່ມໜຳສຳຣາຎແລ້ວ
ກໍ່ມີຄວາມມ່ວນຊື່ນດີກະນອງ ປຸກປ້ຳກັນຫລິ້ນ. ຠິກຂຸທັງຫລາຍເຫັນເຊັ່ນ
ນັ້ນ ຈຶ່ງປະຊຸມສົນທນາກັນ ເຣື່ອງກິຣິຍາມາຣຍາທ ຂອງພວກວິຆາສາທ.

ພຣະພຸທຘອົງຄ໌ ໄດ້ສເດັຈມາຍັງທີ່ປະຊຸມນັ້ນ ທຮົງສແດງຊຶ່ງພຣະ
ຘັມມເທສນາ ແລ້ວຕຣັສ ພຣະຄາຖາດັ່ງທີ່ຍົກມາຂຶ້ນມາຂ້າງເທິງນີ້.

---

## ໙

ນະ ອັຕຕະເຫຕຸ ນະ ປະຣັສສະ ເຫຕຸ
ນະ ປຸຕຕະມິຈເຈ ນະ ຘະນັງ ນະ ຣັຏຐັງ
ນະ ອິຈເຈຍຍະ ອະຘັມເມນະ ສະມິທຘິອັຕຕະໂນ
ສະ ສີລະວາ ປັຎຎະວາ ຘັມມິໂກ ສິຍາ ໆ໘໔ໆ

ບໍ່ຄວນທຳຄວາມຊົ່ວ ຍ້ອນເຫັນແກ່ຕົວ ຫລື ເຫັນແກ່ຄົນອື່ນ ບໍ່
ຄວນປາຖນາ ເພື່ອບຸຕຣ໌ ເພື່ອທຣັພຍ໌ ເພື່ອຣັຖ ຫລືເພື່ອຄວາມສຳເຣັຈແກ່
ຕົນໂດຍທາງທີ່ບໍ່ຊອບຘັມມ໌. ຄວນມີສີລ ມີປັຎຎາ ຕັ້ງໝັ້ນຢູ່ໃນຘັມມ໌.

# ເຣື່ອງ ພຣະຘັມມິກະເຖຣະ

ພຣະບໍຣົມສາສດາ ທຣົງຜາຣົພ ພຣະຘັມມິກະເຖຣະ, ຄາວເມື່ອເພິ່ນເປັນຄຣຶຫັສຖ໌ຢູ່ນັ້ນ ເພິ່ນມີຄວາມເຫລື້ອມໃສ ໃນພຣະພຸທຘສາສນາຄິດວ່າຢາກບວຊ ຈຶ່ງໄດ້ປຶກຩາກັບຠັຣຍາຂອງຕົນ, ຝ່າຍຠັຣຍາບໍ່ພໍໃຈຈະໃຫ້ບວຊໂດຍກ່າວວ່າຕໍ່ເມື່ອບຸຕຣ໌ທີ່ຢູ່ໃນຄັຣຠ໌(ທ້ອງ) ນີ້ຄອດອອກມາແລ້ວຈຶ່ງຄ່ອຍໄປບວຊ. ເມື່ອລູກອອກມາແລ້ວຊ້ຳພັດເວົ້າວ່າ ລູກໃຫຍ່ແລ້ວຈຶ່ງຄ່ອຍບວຊ ຝ່າຍອຸບາສິກ ເຫັນວ່າບໍ່ໄດ້ຄວາມແລ້ວ ກໍເລີຍໜີໄປບວຊ. ເມື່ອບວຊແລ້ວເພິ່ນກໍທຳຄວາມພຽຣ ບັຣລຸພຣະອຣຫັຕ ແລ້ວກໍແນະນຳລູກຊາຍບວຊອີກ. ເມື່ອບຸຕຣ໌ອອກບວຊບຳເພັຎພຽຣ ບັຣລຸພຣະອຣຫັຕ. ບັດນັ້ນ, ຠັຣຍາກໍໄດ້ອອກບວຊ ບໍ່ນານທໍ່ໃດ ກໍສຳເຣັຈພຣະອຣຫັຕເໝືອນກັນ.

ຠິກຊຸ ທັງຫລາຍ ຈຶ່ງປະຊຸມຜາຣົພເຖິງເຣື່ອງ ພຣະເຖຣະທັງ ໓, ພຣະສາສດາ ໄດ້ສເດັຈມາສແດງ ພຣະຘັມມິກະຖາ ແລ້ວຕຣັສພຣະຄາຖານີ້.

---

໑໐

ອັປປະກາ ເຕ ມະນຸສເສສຸ
ເຢ ຊະນາ ປາຣະຄາມິໂນ
ອະຖາຍັງ ອິຕະຣາ ປະຊາ
ຕີຣະເມວານຸຘາວະຕິ. ໆ໘໕ໆ

ໃນໝູ່ມນຸສຍ໌ ທັງຫລາຍນີ້ ມີໜ້ອຍຄົນນັກໜາແລ ທີ່ຈະຂ້າມຝັ່ງໄດ້, ສ່ວນຄົນນອກນີ້ ກໍມີແຕ່ແລ່ນ ເລາະລຽບ ຢູ່ຕາມຣິມຝັ່ງເທົ່ານັ້ນ.

## ໑໑

ເຍ ຈະ ໂຂ ສັມມະທັກຂາເຕ
ທັມເມ ທັມມານຸວັຕຕິໂນ
ເຕ ຊະນາ ປາຣະເມສສັນຕິ
ມັຈຈຸເທຍຍັງ ສຸທັຕຕະຣັງ ฯ໘໖ฯ

ຜູ້ທີ່ປະພຶຕຣ໌ ຕາມຄຳສັ່ງສອນ ທີ່ຕຣັສໄວ້ດີແລ້ວ ຍ່ອມຂ້າມຊຶ່ງອາຕາຈັກຣ໌ຂອງພຍາມາຣ ທີ່ຂ້າມໄດ້ຍາກແສນຍາກ ແລະໄປເຖິງອີກຝັ່ງນຶ່ງນັ້ນ ຄື ພຣະນິພພານ.

# ເຣື່ອງ ທັມມັສສວນະ

ພຣະບໍຣົມສາສດາ ທຣົງຜາຣົພ ປະຊາຊົນເປັນຈຳນວນຫລາຍອາສັຍຢູ່ຕາມຖນົນສາຍນຶ່ງ ໃນພຣະພຣະນຄຣ ສາວັຕຖີ. ໃນວັນນຶ່ງ ເຂົາເຈົ້າໄດ້ພ້ອມກັນ ເຮັດທານແລະມີການຟັງພຣະທັມມເທສນາຕລອດຄືນ, ບາງພວກ

ມີຄວາມຍິນດີໃນການ ກັບຄືນບ້ານກໍມີ, ບາງພວກ ກໍນອນຫລັບຢູ່ທີ່ວິຫາຣ ຈົນສວ່າງແລ້ວຈຶ່ງກັບໄປ. ພຣະພິກຂຸ ທັງຫລາຍ ເຫັນດັ່ງນັ້ນ ຈຶ່ງປະຊຸມ ຜາຣົພເຣື່ອງນັ້ນ. ພຣະສາສດາ ສເດັຈມາສແດງພຣະທັມມີກະຖາ ແລ້ວຈຶ່ງ ຕຣັສ ພຣະຄາຖານີ້.

---

## ໑໔

ກັຓຫັງ ທັມມັງ ວິປປະຫາຍະ
　　　　ສຸກກັງ ພາເວຖະ ປັຓຫິໂຕ
ໂອກາ ອະໂນກະມາຄັມມະ
　　　　ວິເວກະ ຍັຕຖະ ທູຣະມັງ ຯກຼາຯ

ບັຓຫິຕ ຄວນລະທັມມ໌ດຳ (ຄືບາບ) ສ້າງສົມຊຶ່ງທັມມ໌ຂາວ (ບຸຌ) ເມື່ອລະສລະບ້ານເຮືອນ ມາຖືເພສບັຣພະຊິຕແລ້ວ ກໍຄວນຍິນດີ ໃນຄວາມ ວິເວກ ສົງບສງັດ ຊຶ່ງຍາກທີ່ຄົນສາມັຌທັມມດາຈະຍິນດີໄດ້.

## ໑໕

ຕັຕຣາພິຣະຕິງ ອິຈເຉຍຍະ

ຫິຕວາ ກາເມ ອະກິຍຈະໂນ
ປະຣິໂຍທະເປຍຍະ ອັຕຕານັງ
ຈິຕຕະກະເລເສຫິ ປັຕທິໂຕ ໆ໘໘ໆ

ບັຕທິຕ ຄວນລະເສັຍຈາກກາມຄຸຕ ສລັດຕັດຂາດ ຈາກຄວາມອາລັຍ ທັງໝົດ, ທຳຕົນໃຫ້ບໍຣິສຸທລິ ປາສຈາກເຄື່ອງເສົ້າໝອງແຫ່ງຈິຕ.

## ໑໔

ເຍສັງ ສັມໂພລິຍັງເຄສຸ
ສັມມາ ຈິຕຕັງ ສຸກາວິຕັງ
ອາທານະປະຜິນິສສັຄເຄ
ອະນຸປາທາຍະ ເຍ ຣະຕາ
ຂີຕາສະວາ ຊຸຕິມັນໂຕ
ເຕ ໂລເກ ປະຣິນິພພຸຕາ ໆ໘ລໆ

ທ່ານຜູ້ທີ່ ອົບຣົມຈິຕໃຈໄດ້ເປັນຢ່າງດີ ໃນຄຸຕລັມມ໌ ທີ່ຈະນຳໄປສູ່ການຕຣັສຮູ້ ບໍ່ຢຶດໝັ້ນ ແລະ ຍິນດີໃນການປ່ອຍວາງ. ທ່ານເຫລົ່ານັ້ນເປັນພຣະອຣະຫັນຕ໌ ສງົບສວ່າງ ເຂົ້າເຖິງພຣະນິພພານແລ້ວໃນໂລກນີ້.

# ເຣື່ອງ ພຣະອາຄັນຕຸກະກິກຂຸ

ພຣະບໍຣົມສາສດາ ທຣົງຜາຣົພ ພຣະກິກຂຸ ອາຄັນຕຸກະ ປະມາຓ ໕໐໐ ອົງຄ໌ ໄດ້ພາກັນໄປຈຳພັຣຊາ ຢູ່ໃນແຄ້ວນ ໂກສົລ. ຄັນອອກພັຣຊາ ປະວາຣຕາແລ້ວ ກໍພາກັນມາເຝົ້າພຣະສາສດາ ທີ່ພຣະວິຫາຣເຊຕວັນ ເມືອງ ສາວັຕຖີ. ເມື່ອພຣະອົງຄ໌ ທຣົງສແດງພຣະລັມມ໌ວ່າດ້ວຍກາຣຣະງັບຂ້າເສິກ ຂອງ ກິກຂຸ ເຫລົ່ານັ້ນແລ້ວ ພຣະພຸທລອົງຄ໌ ຈຶ່ງໄດ້ຕຣັສພຣະຄາຖາດັ່ງທີ່ ໄດ້ຍົກຂຶ້ນມາໃນຂ້າງເທິງນີ້.

## ຈົບ ບັຕຫິຕວັຄຄ໌ ທີ່ ໘

---

# ອຣຫັນຕວັຄຄ໌ ທີ່ ໗

## ໝວດ ວ່າດ້ວຍ ພຣະອຣຫັນຕ໌

໑

ຄະຕັທທິໂນ ວິໂສກັສສະ
ວິປປະມຸຕຕັສສະ ສັພພະທິ
ສັພພະຄັນຖັປປະຫີນັສສະ
ປະຣິຬາໂຫ ນະ ວິຊຊະຕິ ໆ໙໐ໆ

ຜູ້ເດີນທາງ ທີ່ເຖິງຈຸດໝາຍປາຍທາງແລ້ວ, ວິມຸຕິຫລຸດພົ້ນໂດຍປະການທັງປວງ, ໝົດໂສກ ໝົດເຄື່ອງພົວພັນແລ້ວ ຄວາມເດືອດຮ້ອນໃຈ ກໍໝົດໄປ.

## ເຣື່ອງ ຊີວົກ

ພຣະບໍຣົມສາສດາ ທຣົງຜາຣົພ ປັຎຫາທີ່ໝໍຊີວົກ ທູລຖາມ ຄັ້ງເມື່ອ ພຣະເທວທັຕ ກິ້ງກ້ອນສີລາ ລົງມາຈາກຍອດພູເຂົາຄິຊຊະກູຏ. ສີລານັ້ນກໍ້ກິ້ງລົງມາກະທົບກ້ອນຫີນແຕກອອກເປັນ ໔ ຊີກ. ເກັດສີລາ ອັນນຶ່ງໄດ້ກະເດັນໄປຖືກ ພຣະບາທຂອງພຣະຜູ້ມີພຣະກາຄເຈົ້າ ເຮັດໃຫ້ພຣະໂລຫິຕ ຫໍ້ພຣະກິກຂຸ ທັງຫລາຍ ຈຶ່ງໄດ້ອັງເຊີນສເດັຈໄປຍັງຊີວົກັມພວັນ. ໝໍຊີວົກ

ຈຶ່ງໄດ້ປະກອບຢາພອກ ເອົາຜ້າພັນ ແລ້ວທູລລາວ່າ ຈະໄປເບິ່ງຄົນເຈັບໃນເມືອງ ເມື່ອກັບມາຈາກພຸ້ນຈຶ່ງຈະແກ້ຜ້າພັນອອກ. ຄົນໝໍຊີວົກໄປປົວຄົນຢູ່ໃນເມືອງກວ່າຈະແລ້ວກໍຄໍ່າພໍດີ ເຂົາອັດປະຕູເມືອງກ່ອນ ກໍເລີຍອອກບໍ່ໄດ້ ອັນນີ້ ທໍາໃຫ້ທ່ານໝໍມີຄວາມຮ້ອນໃຈທີ່ສຸດ. ພຣະຜູ້ມີພຣະກາຄເຈົ້າ ທຣົງຊາບຄວາມເປັນຫ່ວງຂອງ ໝໍຊີວົກ ຈຶ່ງຮັບສັ່ງໃຫ້ ພຣະອານົນທ໌ ແກ້ຜ້າພັນນັ້ນອອກ. ພໍຮຸ່ງເຊົ້າມາ ເຂົາໄຂປະຕູເມືອງໝໍຊີວົກກໍຮີບອອກມາ ແລະທູລຊຶ່ງຄວາມເປັນຫ່ວງຂອງຕົນ. ພຣະສາສດາຕຣັສວ່າ ຕະຖາຄົຕບໍ່ມີຄວາມຮ້ອນຮົນປະການໃດ. ແລ້ວຈຶ່ງຕຣັສພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມານັ້ນ.

---

## ໔

ອຸຍຍຸຍຊັນຕິ ສະຕີມັນໂຕ
ນະ ນິເກເຕ ຣະມັຕຕິເຕ
ຫັງສາວະ ປັລລະວັງ ຫິຕະວາ
ໂອກະໂມກັງ ຊະຫັນຕິ ເຕ ๆລ໑ๆ

ຜູ້ທີ່ມີສະຕິ ຍ່ອມຂຍັນຂັນແຂງ ບໍ່ຍຶດຕິດຢູ່ ໃນແຫລ່ງທີ່ອາສັຍອອກຈາກທີ່ຢູ່ອາສັຍນັ້ນໄປຕາມລໍາດັບ ເໝືອນກັບໝູ່ພຍາຫົງສ໌ ທີ່ປະຖິ້ມ

ສະນ້ຳນັ້ນໄປ.

## ເຣື່ອງ ພຣະມຫາກັສສປະເຖຣະ

ພຣະບໍຣົມສາສດາ ທຣົງຜາຣົພ ພຣະມຫາກັສສປະເຖຣະ ຜູ້ທີ່ມີ ຍາຕິໂຍມໃນເມືອງສາວັຕຖີ ເປັນຈຳນວນຫລວງຫລາຍ. ກິກຂຸ ທັງຫລາຍ ຫາວ່າເພິ່ນມີຄວາມກ່ຽວຂ້ອງ ຢູ່ໃນຕະກູລ ແລະປັຈຈັຍທັງຫລາຍ. ພຣະ ສາສດາ ຈຶ່ງທຣົງຮັບຮອງວ່າ ເພິ່ນບໍ່ມີຄວາມກ່ຽວຂ້ອງໃນອັນໃດທັງນັ້ນ. ແລ້ວຈຶ່ງຕຣັສ ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາຂ້າງເທິງນີ້.

---

ໞ

ເຍສັງ ສັນນິຈະໂຍ ນັຕຖິ
　　ເຍ ປະຣິຍຍາຕະໂພຊະນາ
ສຸຍຍະໂຕ ອະນິມິຕໂຕ ຈະ
　　ວິໂມກໂຂ ເຍ ສະໂຄຈະໂຣ
ອາກາເສວະ ສະກຸນຕານັງ
　　ຄະຕິ ເຕສັງ ທຸຣັນອະຍາ ໙໙໔໙

ທ່ານຜູ້ທີ່ໝົດການສະສົມທ້ອນໂຮມຊຶ່ງ (ປັຈຈັຍກັມມ໌ດີແລະກັມມ໌-

ຊົ່ວ) ພິຈາຣະນາໂຠຊນາຫາຣແລ້ວ ຈຶ່ງບໍຣິໂຠຄ, ຜູ້ນັ້ນ ຍ່ອມເຂົ້າເຖິງຊຶ່ງຄວາມຫລຸດພົ້ນ ອັນວ່າງຈາກກິເລສ ແລະ ບໍ່ມີນິມິຕໝາຍ ຄືກິເລສ. ບຸຄຄົລເຊັ່ນນີ້ ຍາກນັກຍາກໜາ ທີ່ສາມັນຊົນຈະຕາມທັນ ເໝືອນດັ່ງນົກທີ່ບິນຢູ່ໃນທ້ອງຟ້າ ຄົນຍ່າງຢູ່ໜ້າດິນຈະຕາມທັນໄດ້.

## ເຣື່ອງ ພຣະເພລັຏຐສີສະເຖຣະ

ພຣະບໍຣິສາສດາ ທຣົງປາຣົພ ພຣະເພລັຏຐສີສະເຖຣະ ເມື່ອເພິ່ນທ່ຽວບິຓຑບາຕໄດ້ເຂົ້າສຸກມາຫລາຍ ຄັນເຫລືອຈາກຈັນແລ້ວກໍເອົາໄປຕາກເກັບເອົາໄວ້ ເມື່ອຕ້ອງກາຣອາຫາຣຍາມໃດ ກໍເອົາເຂົ້ານັ້ນມາແຊ່ນ້ຳຈັນ. ເພິ່ນເຮັດແບບນີ້ ດົນໆ ຈຶ່ງອອກໄປບິຓຑບາຕເທື່ອນຶ່ງ. ຄາວນຶ່ງ ຠິກຂຸທັງຫລາຍ ຊາບຄວາມນັ້ນຈຶ່ງນຳຂຶ້ນທູລ ແດ່ ພຣະຜູ້ມີພຣະຠາຄເຈົ້າ.

ພຣະອົງຄ໌ ຈຶ່ງໃຫ້ປະຊຸມສົງຆ໌ ທຣົງບັຌຌັຕິສິກຂາບົທ ຫ້າມເຣື່ອງ *ສັນນິຘິກາຣ ກາຣສະສົມ* ແລ້ວທຣົງປະກາສ ເຣື່ອງກາຣທີ່ ພຣະເພລັຏຐະສີສະເຖຣະ ເປັນອາທິກັມມິກະ ຜູ້ຕົ້ນບັຌຌັຕຕິຄື ເປັນຜູ້ບໍ່ມີໂທສເພາະວ່າໃນວລານັ້ນ ຍັງບໍ່ທັນບັຌຌັຕິສິກຂາບົທເທື່ອ. ເພິ່ນໄດ້ກະທຳໄປກໍຍ້ອນອາສັຍຄວາມເປັນຜູ້ມີຄວາມສັນໂດຩ ພຣະຍອດແກ້ວສັພພັຌຌູຈຶ່ງໄດ້ຕຣັສພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາຂ້າງເທິງນີ້.

໔

ຍັສສາສະວາ ປະຣິກຂີຕາ
ອາຫາເຣ ຈະ ອະນິສສິໂຕ
ສຸບຍະໂຕ ອະນິມິຕໂຕ ຈະ
ວິໂມກໂຂ ຍັສສະ ໂຄຈະໂຣ
ອາກາເສວະ ສະກັນຕານັງ
ປະທັງ ຕັສສະ ທຸຣັນນະຍັງ ໆ໙໓ໆ

ຜູ້ທີ່ໝົດກິເລສ ບໍ່ເຫັນແກ່ກິນ ເຂົ້າເຖິງຊຶ່ງຄວາມຫລຸດພົ້ນ ທີ່ວ່າງຈາກກິເລສ ແລະບໍ່ມີນິມິດໝາຍ ຄື ກິເລສ, ບຸຄຄົລເຊັ່ນນີ້ ບໍ່ຖິ້ມຮ່ອງຮອຍອັນໃດໄວ້ເລີຍ ເໝືອນດັ່ງນົກ ທີ່ບິນຢູ່ບົນທ້ອງຟ້ານັ້ນ ບໍ່ມີຮອຍໃຫ້ເຫັນ.

## ເຣື່ອງ ພຣະອນຸຣຸທລະເຖຣະ

ພຣະບໍຣົມສາສດາ ທຣົງຜາຣົພ ພຣະອນຸຣຸທລະເຖຣະຜູ້ທີ່ມີຈີວອຣເກົ່າທ່ຽວສແວງຫາຜ້າບັງສຸກຸລ ໄປເຫັນຜ້າທິພຍ໌ນາງເທພຍ໌ລິດານຳເອົາໄປວາງໄວ້ທີ່ກອງຂີ້ເຫຍື້ອແຫ່ງນຶ່ງ ເພິ່ນຈຶ່ງຖືເອົາດ້ວຍສັບຍາ ຄືສຳຄັນວ່າ ເປັນຜ້າບັງສຸກຸລ ແລ້ວກໍນຳເອົາມາເພື່ອເຮັດຈີວອຣ.

ຄັ້ງນັ້ນ ພຣະສາສດາ ພ້ອມດ້ວຍ ອະສີຕິ ມະຫາເຖຣະ (ພຣະເຖຣະ

ກູ໐ ອົງຄ໌) ໄປຊ່ອຍພຣະເຖຣະເຮັດຈີວອ. ມຫາຊົນໄດ້ຊວນກັນຈັດແຈງ ລ້ຽງດູ ພຣະພິກຂຸ ທັງຫລາຍ ທີ່ມາຊ່ອຍເຮັດຈີວອນັ້ນ ໂພຊນາຫາຣເຫລົ່າ ນັ້ນມີມາກມາຍເຫລືອເຟືອ. ພຣະພິກຂຸທັງຫລາຍທີ່ບໍ່ຮູ້ ຈຶ່ງພາກັນຕິຕຽນວ່າ ພຣະອນຸຣຸທທະເຖຣະ ປະສົງຄ໌ຈະອວດວ່າ ຕົນມີຍາຕິໂຍມຫລາຍ ຈຶ່ງບອກ ໃຫ້ເຂົາເຈົ້ານຳເອົາບິຕທບາຕມາໃຫ້ຫລາຍ ຈົນເຫລືອເຟືອ. ພຣະສາສດາ ຈະທຣົງປົດເປື້ອງອາທະ ຂອງພິກຂຸ ເຫລົ່ານັ້ນ ຈຶ່ງຕຣັສວ່າ ພຣະຂີຕາສົພ ບໍ່ກ່າວຖ້ອຍຄຳປະກອບດ້ວຍປັຈຈັຍ ແລ້ວຈຶ່ງຕຣັສພຣະຄາຖາດັ່ງກ່າວນີ້.

---

## ໕

ຍັສສິນທຣິຍານິ ສະມະຖັງຄະຕານິ
ອັສສາ ຍະຖາ ສາຣະຖິນາ ສຸທັນຕາ
ປະຫີນະມານັສສະ ອະນາສະວັສສະ
ເທວາປິ ຕັສສະ ປະຫິຍັນຕິ ຕາທິໂນ ໑໙໔໑

ທ່ານຜູ້ໃດຄວບຄຸມອິນທຣີຍ໌ ຄື ຕາ ຫູ ດັງ ລີ້ນ ກາຍ ໃຈ ໄດ້ ເໝືອນດັ່ງມ້າ ທີ່ນາຍສາຣຖີ ຄວບຄຸມໄວ້ໄດ້ ເປັນຢ່າງດີ, ທ່ານຜູ້ນີ້ໝົດຊຶ່ງ ຄວາມໄວ້ຕົວ ຖືຕົວ, ໝົດກິເລສ ມີຄວາມໝັ້ນຄົງ ຍ່ອມເປັນທີ່ຮັກຂອງຄົນ

ແມ່ນແຕ່ເທວດາ ກໍຍັງຮັກຫອມ.

## ເຣື່ອງ ພຣະມຫາກັຈຈາຍນະ

ພຣະບໍຣົມສາສດາ ທຣົງຜາຣົພ ພຣະມຫາກັຈຈາຍນະ ເພິ່ນໄປຢູ່ແຄວ່ນ ອະວັນຕີ. ຄັນເຖິງວັນ ມຫາປະວາຣຕາ ພຣະສາສດາ ພ້ອມດ້ວຍມຫາສາວົກ ປະຊຸມກັນທີ່ ມຫາປຸພພາຣາມ ເພິ່ນຈຶ່ງໄວ້ທີ່ນັ່ງ (ອາສນະ)ນຶ່ງເພື່ອ ພຣະມຫາກັຈຈາຍນະເຖຣະ. ຄັ້ງນັ້ນ ທ້າວສັກກະເທວຣາຊ ໄດ້ສເດັຈມາທຣົງສັກກາຣະບູຊາ ທອດພຣະເນຕຣ໌ ພຣະມຫາກັຈຈາຍນະຢູ່. ຄັນເຫັນເພິ່ນມາເຖິງ ກໍທຣົງໂສມນັສຍິນດີ ຖວາຍນມັສການ ແລ້ວທຣົງທັກທາຍ-ປາສັຍ ບູຊາດ້ວຍຂອງຫອມ ແລະ ເຄື່ອງທິພຍ໌ຕ່າງໆ. ກິກຂຸ ທັງຫລາຍຈຶ່ງຕິຕຽນ ທ້າວສັກກະວ່າ ທຣົງກະທຳດ້ວຍເຫັນແກ່ໜ້າ.

ພຣະສາສດາ ຈຶ່ງໄດ້ທຣົງສແດງວ່າ ກິກຂຸ ຜູ້ສຳຣວມອິນທຣີຍ໌ເຊັ່ນມຫາກັຈຈາຍນະນີ້ ຍ່ອມເປັນທີ່ຮັກຂອງເທວດາ ທັງຫລາຍ. ແລ້ວຈຶ່ງຕຣັສພຣະຄາຖານີ້.

---

໕

ປະຖະວີສະໂມ ໂນ ວິຣຸຊຊະຕິ

ອິນທະຂີລູປະໂມ ຕາທິ ສຸພພະໂຕ

ຣະຫະໄທວະ ອະເປຕະກັທທະໂນ
ສັງສາຣາ ນະ ກະວັນຕິ ຕາທິໂນ ໑໙໕໑

ພຣະອຣຫັນຕ໌ນັ້ນ ປຽບສເໝືອນແຜ່ນດິນ ບໍ່ເຄີຍໂກທຮ້າຍໃຫ້ໃຜ ມີຈິຕຄົງທີ່ ເໝືອນດັ່ງຫລັກເມືອງ, ມີຈັຣຍາມາຣຍາທສະອາດ ເໝືອນສະນ້ຳທີ່ໄຮ້ຂີ້ຕົມ. ຜູ້ທີ່ມີຄຸຕສົມບັຕິ ເຫັນປານນີ້ ຍ່ອມບໍ່ວຽນວາຍຕາຍເກີດ

# ເຣື່ອງ ພຣະສາຣີບຸຕຣ໌ເຖຣະ

ພຣະບໍຣົສມາສດາ ທຣົງຜາຣົພ ພຣະສາຣີບຸຕຣ໌ເຖຣະ ໃນເວລາອອກພັຣษາແລ້ວ ເພິ່ນຈະຈາຣິກໄປໃນທີ່ຕ່າງໆ ມີພຣະກິກຂຸເປັນຈຳນວນຫລວງຫລາຍໄປສົ່ງເພິ່ນ. ພຣະເຖຣະໄດ້ທັກທາຍປາສັຍ ກັບກິກຂຸເຫລົ່ານັ້ນ ແຕ່ກິກຂຸ ອີກອົງຄ໌ນຶ່ງ ບໍ່ໄດ້ຮັບການປະຟິສັນຖານຕ້ອນຮັບ ພໍຜ້າສັງຄາຕິ ຂອງພຣະເຖຣະໄປຊູນເພິ່ນເລັກນ້ອຍ ໂດຍບໍ່ໄດ້ຕັ້ງແກ້ງ ເພິ່ນຊ້ຳພັດໂກທຮ້າຍ ແລ້ວເຂົ້າເຝົ້າພຣະສາສດາ ທູລວ່າພຣະເຖຣະແກ້ງເຮັດໃສ່ແລ້ວບໍ່ຂໍ ຂມາໂທສ. ພຣະສາສດາ ຈຶ່ງໄດ້ໃຫ້ໄປຕາມພຣະເຖຣະມາຖາມເຫຕຸການຕ໌ອັນນັ້ນ ພຣະເຖຣະເຈົ້າຈຶ່ງທູລຄວາມທີ່ເພິ່ນມີຈິຕ ສເມີດັ່ງແຜ່ນດິນ ດັ່ງນ້ຳ ດັ່ງໄຟ ດັ່ງລົມເປັນຕົ້ນ. ຂຕະນັ້ນ ຄວາມຮ້ອນຮົນໄດ້ເກີດຂຶ້ນໃນສະຣີຣະຮ່າງກາຍ ຂອງກິກຂຸ ຜູ້ກ່າວຕູ່ນັ້ນ. ພຣະຜູ້ມີພຣະກາຄເຈົ້າຈຶ່ງຮັບ

ສັ່ງໃຫ້ ພຣະສາຣີບຸຕຣ໌ເຖຣະ ອົດໂທສໃຫ້ແກ່ກິກຂຸອົງຄ໌ນັ້ນ. ພຣະເຖຣະ ຈຶ່ງນັ່ງຢ່ອງຢໍ້ ຍົກມືຂຶ້ນໄຫວ້ ຂໍຂະມາໂທສ. ພຣະກິກຂຸ ທັງຫລາຍຈຶ່ງ ພາກັນສັຣເສີນຄຸຕ ຂອງພຣະເຖຣະ. ພຣະສາສດາ ຈຶ່ງຕຣັສພຣະຄາຖານີ້.

---

໗

ສັນຕັງ ຕັສສະ ມະນັງ ໂຫຕິ
ສັນຕາ ວາຈາ ຈະ ກັມມະ ຈະ
ສັມມະທັລຍາ ວິມຸຕຕັສສະ
ອຸປະສັນຕັສສະ ຕາທິໂນ ໆລ໖ໆ

ພຣະອຣຫັນຕ໌ ຜູ້ເປັນອິສຣະ ເພາະເພິ່ນຮູ້ແຈ້ງ ເປັນຜູ້ສງົບຣະງັບ ແລະ ມີຈິຕໝັ້ນຄົງ, ໃຈຂອງເພິ່ນສງົບ ວາຈາຂງເພິ່ນກໍສງົບ, ການກະທຳ ທາງກາຍກໍສງົບ.

## ເຣື່ອງ ໂກສັມພີວາສີຕິສສເຖຣະ

ພຣະບໍຣົມສາສດາ ທຣົງຜາຣົພ ສາມເຕຣ ຂອງ ພຣະຕິສສເຖຣະ ຜູ້ເປັນຊາວເມືອງ ໂກສັມພີ ໄດ້ສຳເຣັຈ ພຣະອຣຫັນຕ໌ພ້ອມດ້ວຍປຕິ-

ສັມກີທາ ແຕ່ອາຍຸໄດ້ ໗ ຂວບ ໃນຂຕະທີ່ປາຍມີດແຖຖືກສີສະທີ່ຈະປົງຜົມ ບັຣພຊາ ແຕ່ວ່າ ພຣະຕິສສະເຖຣະ ຜູ້ເປັນອຸປັຊຊາຍ໌ນັ້ນ ຍັງເປັນປຸຖຸຊົນຢູ່. ວັນນຶ່ງ ພຣະອຸປັຊຊາຍ໌ ພາສາມເຕຣໄປເຝົ້າ ພຣະສາສດາ ທີ່ເມືອງສາວັຕຖີ ໄດ້ພັກຢູ່ໃນວິຫາຣກາງທາງແຫ່ງນຶ່ງ.

ໃນຣາຕຣີຄືນນັ້ນ, ໄດ້ອາສັຍຢູ່ໃນທີ່ແຫ່ງດຽວກັນກັບສາມເຕຣໃນ ເວລາກາງຄືນມາ ພຣະອຸປັຊຊາຍ໌ ນອນຫລັບ ສ່ວນສາມເຕຣນັ້ນ ນັ່ງຂັດ ສະມາຄີ ຢູ່ໃນທີ່ໃກ້ຕຽງຂອງເພິ່ນ. ຄັນເວລາໃກ້ຊິແຈ້ງ ເພິ່ນສຳຄັນວ່າ ສາມເຕຣນອນຫລັບ ຈຶ່ງເອົາພັດຕີປຸກສາມເຕຣ ໃຫ້ໄປຂ້າງນອກ ເພື່ອຈະ ໜີ ສຫະສັຍ(ການນອນຮ່ວມຄືນກັບອນຸປສັມບັນ) ໃບພັດໄປຕຳຕາຂ້າງນຶ່ງ ຂອງສາມະເຕຣ ໆ ກໍນັ່ງນິ້ງຢູ່ບໍ່ບອກໃຫ້ເພິ່ນຮູ້. ຄັນເວລາເຊົ້າ ກໍປະຕິບັຕິ ຕາມເຄີຍ. ທ່ານອຸປັຊຊາຍ໌ ເຫັນຕາຂອງສາມເຕຣບອດ ຈຶ່ງຖາມ ສາມເຕຣ ເລົ່າເຣື່ອງໃຫ້ເພິ່ນຟັງ. ພຣະອຸປັຊາຍ໌ເກີດສັງເວຊ ຂໍໂທສສາມເຕຣ ໆ ຈຶ່ງ ເວົ້າໂລມເພິ່ນບໍ່ໃຫ້ເສັຍໃຈ ໃຫ້ເພິ່ນເບົາໃຈວ່າໂທສຂອງເພິ່ນບໍ່ມີ. ອັນນີ້ ເປັນໂທສຂອງວັຍຍະຕ່າງຫາກ.

ເມື່ອທ່ານອຸປັຊຊາຍ໌ໄປເຖິງເມືອງສາວັຕຖີ ນັ້ນແລ້ວ ຈຶ່ງໄດ້ນຳເອົາ ສາມເຕຣເຂົ້າເຝົ້າພຣະສາສດາ ທູລເລົ່າຄວາມນັ້ນ ແດ່ພຣະອົງຄ໌ໃຫ້ທຣົງ ຊາບ. ພຣະອົງຄ໌ ຈຶ່ງຕຣັສພຣະຄາຖາ ດັ່ງທີ່ຍົກຂຶ້ນມາຂ້າງເທິງນີ້.

---

໗

ອະສັທໂຣ ອະກະຕັລລູ ຈະ
    ສັນລິຈເຊໂທ ຈະ ໂຍນະໂຣ
ຫະຕາວະກາໂສ ວັນຕາໂສ
    ສະ ເວ ອຸຕຕະມະໂປຣິສາ ໆລກໆ

ຜູ້ທີ່ບໍ່ເຊື່ອໃຜງ່າຍ ຈົນກວ່າຈະໄດ້ພິສູຈນ໌ຄວາມຈິງ ດ້ວຍຕົນເອງ ໑, ຜູ້ຮູ້ແຈ້ງເຫັນຈິງ ຊຶ່ງພຣະນິພພານ ໑, ຜູ້ທີ່ໝົດການວຽນວາຍຕາຍເກີດ ໑. ຜູ້ໝົດໂອກາສ ທີ່ຈະທຳດີ ແລະ ທຳຊົ່ວ ໑, ຜູ້ໝົດກິເລສທີ່ທຳໃຫ້ມີຄວາມຫວັງ ໑,

ຫ້າປະການທີ່ກ່າວມາຂ້າງເທິງນີ້ແລທີ່ຮຽກວ່າ "ຍອດແຫ່ງຄົນ"

# ເຣື່ອງ ພຣະສາຣີບຸຕຣ໌ເຖຣະ

ພຣະບໍຣົມສາສດາ ທຣົງຜາຣົພ ພຣະສາຣີບຸຕຣ໌ເຖຣະ. ພຣະອົງຄ໌ໄດ້ທອດພຣະເນຕຣ໌ເຫັນອຸປນິສັຍ ຂອງ ກິກຂຸຜູ້ທີ່ຢູ່ໃນປ່າປະມາຓ ໓໐ ອົງຄ໌ເຂົ້າມາເຝົ້າ, ພຣະອົງຄ໌ ຈຶ່ງຕຣັສຮຽກ ພຣະສາຣີບຸຕຣ໌ ມາຖາມຜລາດັ່ງນີ້ວ່າ: ສາຣີບຸຕຣ໌ ເຊື່ອບໍ່ວ່າ ອິນທຣີຍ໌ທັງ ໕ ອັນບຸຄຄົລທຳໃຫ້ມາກແລ້ວ

ຫຍັ່ງລົງສູ່ ອມຕະທັມມ໌ ນິອມຕະທັມມ໌ ເປັນທີ່ສຸດ?

ພຣະເຖຣະ ຈຶ່ງທູລວ່າ ໃນເຣື່ອງນີ້ ຂ້າພຣະອົງຄ໌ ບໍ່ຕ້ອງເຊື່ອ ພຣະຜູ້ມີພຣະກາຄເຈົ້າ. ຜູ້ໃດຮູ້ແລ້ວ ຖືກຕ້ອງແລ້ວດ້ວຍປັນຍາ ຜູ້ນັ້ນບໍ່ຕ້ອງໄດ້ເຊື່ອຜູ້ອື່ນ.

ດັ່ງນັ້ນ, ກິກຂຸ ທັງຫລາຍ ບໍ່ເຂົ້າໃຈເນື້ອຄວາມ ຈຶ່ງກ່າວວ່າ ພຣະສາຣີບຸຕຣ໌ ເປັນມິຈສາທິຜຖິ ບໍ່ເຊື່ອພຣະພຸທສເຈົ້າ. ພຣະສາສດາ ຈຶ່ງທຣົງອະທິບາຍວ່າ: ເຮົາຖາມວ່າ, ຜູ້ທີ່ບໍ່ຈເຣີນອິນທຣີຍ໌ ແລ້ວສາມາຖກະທຳມັຄຄ໌ຜົລໃຫ້ແຈ້ງໄດ້ ເຊື່ອບໍ່ ສາຣີບຸຕຣ໌ ໆ ຈຶ່ງຕອບວ່າ ບໍ່ເຊື່ອດັ່ງນີ້. ເມື່ອຈະທຣົງແກ້ຄວາມຂໍ້ນັ້ນອີກ ພຣະອົງຄ໌ຈຶ່ງຕຣັສພຣະຄາຖາ ດັ່ງກ່າວແລ້ວນີ້.

---

ຝ

ຄາເມ ວາ ຍະທິວາຣັນເຍ

ນິນເນ ວາ ຍະທິວາ ຖະເລ

ຍັຕຖາຣະຫັນໂຕ ວິຫະຣັນຕິ

ຕັງ ກູມິ ຣາມະເນຍຍະກັງ ໆຝ໙ໆ

ບໍ່ວ່າ ທີ່ໃດ ຈະເປັນບ້ານ, ຈະເປັນປ່າ, ບໍ່ວ່າຈະເປັນທີ່ລຸ່ມ ຫລື

ເປັນທີ່ດອນ ກໍຕາມ, ສຖານທີ່ເຫລົ່ານັ້ນ ຈະເປັນສຖານທີ່ຢູ່ ອັນໜ້າຍິນດີ ສຳຣັບ ພຣະອຣຫັນຕ໌.

## ເຣື່ອງ ຂະທິຣະວະນິຍະເຣວະຕະເຖຣະ

ພຣະບໍຣົມສາສດາ ທຣົງຜາຣົພ ພຣະເຣວຕະເຖຣະ ຜູ້ເປັນ ນ້ອງ ຫລ້າ ຂອງພຣະສາຣີບຸຕຣ໌. ເພິ່ນເຂົ້າບັຣພຊາ ເປັນສາມເຕຣ ເມື່ອອາຍຸໄດ້ ໗ ຂວບ. ເມື່ອບວຊແລ້ວກໍອອກໄປຢູ່ໃນປ່າໄມ້ແຄນ ໄດ້ທຳຄວາມພຽຣ ສຳເຣັຈພຣະອຣຫັຕ ພາຍໃນພັຣຊານັ້ນ. ຄັນອອກພັຣຊາແລ້ວ ພຣະສາສດາ ພ້ອມດ້ວຍ ກິກຂຸສົງຄ໌ ໕໐໐ ອົງຄ໌ ສເດັຈໄປຍັງທີ່ຢູ່ຂອງ ພຣະເຣວຕະ ໆ ຊາບຂ່າວສເດັຈ ຈຶ່ງເນຣະມິຕ ຄັນລກຸຜີ ຮັບສເດັຈ ແລະ ເນຣມິຕ ເຮືອນ ຍອດທີ່ຈົງກຣົມ ທີ່ພັກອາສັຍ ຢ່າງລະ ໕໐໐ ໆ ເພື່ອພຣະກິກຂຸສົງຄ໌.

ໃນໝູ່ພຣະກິກຂຸ ເຫລົ່ານັ້ນ ມີກິກຂຸ ແກ່ຊຣາຢູ່ ໔ ອົງຄ໌ ໄດ້ເຫັນ ທີ່ຢູ່ຂອງ ເຣວຕະສາມເຕຣ ເຊັ່ນນັ້ນຈຶ່ງຄິດວ່າ ສາມເຕຣນີ້ ສ້າງເສນາສນະ ສວຍງາມປານນີ້ ຄົງບໍ່ອາຈບຳເພັຍສມຕະລັມມ໌ໄດ້.

ພຣະສາສດາທຣົງຊາບ ວາຣະຈິຕຂອງກິກຂຸ ໔ ອົງຄ໌ນັ້ນແລ້ວ ເວລາຈະກັບນັ້ນ ທຣົງບັນດາລໃຫ້ ກິກຂຸ ໔ ອົງຄ໌ນັ້ນລືມບໍຣິຂາຣຂອງຕົນ ໄວ້ໃນທີ່ນັ້ນ. ຄັນອອກໄປແລ້ວບໍ່ດົນ ກໍຫວນກັບໄປເອົາບໍຣິຂາຣຂອງຕົນ ເຫັນທີ່ນັ້ນເປັນປ່າໄມ້ແຄນ ໄດ້ບໍຣິຂາຣແລ້ວ ກໍຕາມສເດັຈກັບ.

ຄັນມາເຖິງບຸພພາຣາມ ນາງວິສາຂາ ກໍຈັດແຈງອາຄັນຕຸກະກັຕຖວາຍ ກິກຂຸສົງໝ໌ທີ່ຕາມສເດັຈມາ. ນາງວິສາຂາຖາມເຖິງທີ່ຢູ່ ຂອງສາມເຖຣນັ້ນ ກິກຂຸ ໔ ອົງຄ໌ນັ້ນບອກວ່າ ທີ່ນັ້ນເປັນປ່າໄມ້ແດນ ຄັນຖາມກິກຂຸອື່ນໆ ຊໍ້າ ພັດບອກວ່າເປັນຣັມຕິຍສຖານເປັນທີ່ໜ້າຢູ່. ນາງວິສາຂາ ນຶກອັສຈັຣຍ໌ໃຈ ຟັງຄໍາຕອບບໍ່ກົງກັນ. ຈຶ່ງເຂົ້າໄປທູລຖາມ ພຣະສາສດາ ພຣະອົງຄ໌ຈຶ່ງຕຣັສ ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາໄວ້ໃນຂ້າງຕົ້ນນັ້ນ.

---

## ໑໐

ຣະມະຕີຍະ ອະຣັນຍານິ
ຍັຕຖະ ນະ ຣະມະຕີ ຊະໂນ
ວີຕະຣາຄາ ຣະເມສສັນຕິ
ນະ ເຕ ກາມະຄະເວສິໂນ ຯລຯ

ອັນວ່າ ປ່າທັງຫລາຍ ທີ່ຄົນທົ່ວໄປ ບໍ່ມັກຊື່ນຊົມຍິນດີນໍານັ້ນ ຍ່ອມ ເປັນຣັມຕິຍສຖານ ສໍາຣັບ ທ່ານຜູ້ໝົດຣາຄະ ເພຣະວ່າ ພຣະນັ້ນ ເພິ່ນບໍ່ໄດ້ ຝັກໄຝ່ໃນກາມຄຸຕເສັຍແລ້ວ.

(ພຣະອຣຫັນຕ໌ນັ້ນ ເພິ່ນສິ້ນກິເລສແລ້ວ ຈະຢູ່ໃສກໍໄດ້)

## ເຣື່ອງ ອັລລຕຣິຕຖີ

ພຣະຜູ້ມີພຣະກາຄເຈົ້າ ທຣົງປາຣົພ ຜູ້ຍິງຄົນນຶ່ງ ທີ່ນັດພົບພໍ້ກັນກັບເພື່ອນ ຊາຍ ຄົນນຶ່ງໄວ້ ທີ່ສວນເຣືອແຫ່ງນຶ່ງ. ຄັນເຖິງກຳນົດແລ້ວກໍໄປຍັງສວນທີ່ນັ້ນ ແຕ່ບໍ່ພໍ້. ບັງເອີນໄປພໍ້ກັບ ກິກຂຸ ອົງຄ໌ນຶ່ງ ນັ່ງຈເຣີນຊົງກັມມກາານຢູ່. ນາງເກີດຄວາມກຳໜັດ ຈຶ່ງສແດງມາຣຍາຍິງ ເພື່ອຍົ່ວຍວນກິເລສ ກິກຂຸອົງຄ໌ນັ້ນ ໆ ໄດ້ເຫັນເຂົ້າແລ້ວ ກໍມີຄວາມສັງເວຊສລົດໃຈ.

ພຣະສາສດາ ປະທັບຢູ່ທີ່ ພຣະຄັນລກຸຜີ ທຣົງຊາບດ້ວຍທິພຍ໌ຈັກຂຸ ຈຶ່ງທຣົງເປັ່ງພຣະໂອກາສຣັສມີໄປ ເໝືອນກັບວ່າ ພຣະອົງຄ໌ປະທັບຢູ່ໃນທີ່ສະເພາະໜ້າແລ້ວຈຶ່ງຕຣັສພຣະຄາຖາ ດັ່ງກ່າວ ທີ່ໄດ້ຍົກຂຶ້ນມາຂ້າງເທິງນີ້

---

## ຈົບ ອຣຫັນຕວັຄ໌ ທີ່ ໗

# ຈົບ ອຣຫັຕວັຄຄ໌ ທີ່ ໗

ໜ້າຕໍ່ໄປຂຶ້ນຕົ້ນ

# ສຫັສສະວັຄຄ໌ ທີ່ ໘

# ໘
# ສຫັສສະວັຄຄ໌
## ໝວດ ວ່າດ້ວຍພັນ

## ໑

ສະຫັສສັງ ອະ ປິ ເຈ ວາຈາ
ອະນັຕຖະປະທະສັນຫິຕາ
ເອກັງ ອັຕຖະປະທັງ ເສຍໂຍ
ຍັງ ສຸຕະວາ ອຸປະສັມມະຕິ ໆ໑໐໐ໆ

ວາຈາທີ່ແຫລວໄຫລໄຮ້ປະໂຍຊນ໌ ມີຕັ້ງພັນຄຳ ກໍຕາມ ແຕ່ສູ້ວາຈາທີ່ມີປະໂຍຊນ໌ພຽງຄຳດຽວ ບໍ່ໄດ້ ເພາະວ່າ ວາຈາທີ່ມີປະໂຍຊນ໌ນັ້ນ ຟັງແລ້ວເຮັດໃຫ້ຈິດໃຈສງົບ.

## ເຣື່ອງ ນາຍເພັຊຊຆາຕໃຈໂຫດ

ພຣະບໍຣົມສາສດາ ທຣົງຜາຣົພ ຄົນທີ່ມີຈິຕໃຈໂຫດຫ້ຽມຜູ້ນຶ່ງເຂົ້າຮ່ວມກັບມຫາໂຈຣ ກະທຳອາຊຸຍາກັມມ໌ ອັນໂຫດຮ້າຍຫລາຍຢ່າງ.

ໃນກາລຕໍ່ມາ ເຂົາໄດ້ໜີຈາກພວກມຫາໂຈຣ ເຫລົ່ານັ້ນ ແລ້ວມາສມັຄເປັນນາຍເພັຊຊຆາຕ ຂ້າໂຈຣ. ເມື່ອແກ່ຊະຣາມາ ຈຶ່ງລາອອກຈາກໜ້າທີ່ນັ້ນ ຄິດຈະແຕ່ງຕົວໃຫ້ຈົບງາມ ບໍຣິໂພຄອາຫາຣໃຫ້ເປັນທີ່ສະບາຍໃຈ.

ຄັ້ງນັ້ນ ພຣະມຫາສາຣີບຸຕຣ໌ ອອກຈາກມຫາສະມາບັຕິ ແລ້ວເຂົ້າໄປບິຓທບາຕ, ນາຍເພັຊຊະຆາຕໄດ້ເຫັນ ກໍມີຄວາມເຫລື້ອມໃສ ຈັດບິຓທະບາຕຖວາຍ ໂດຍເຄົາຣົພ. ເມື່ອພຣະເຖຣະ ຈັນແລ້ວ ກໍສແດງອນຸໂມທນາກະຖາໃຫ້ຟັງໂດຍສັງເຂປ. ນາຍເພັຊຊະຆາຕໄດ້ຟັງ ກໍສຳເຣັຈໂສດາປັຕ-ຕິຜົລ. ຄັນພຣະເຖຣະກັບໄປ ເຂົາກໍໄດ້ຕາມໄປສົ່ງ. ຂຓະນັ້ນງົວແມ່ທວງລູກຕົວນຶ່ງ ໄດ້ຂວິດເຂົາຕາຍ ໃນກາງທາງ.

ກິກຂຸ ທັງຫລາຍ ປະຊຸມສົນທະນາກັນ ກ່ງວກັບຄຕິຂອງນາຍເພັຊ-ຊະຆາຕນັ້ນ. ພຣະສາສດາ ຈຶ່ງທຣົງສແດງວ່າ ເຂົາໄປເກີດໃນດຸສິຕພິກົພ. ພຣະກິກຂຸ ເຫລົ່ານັ້ນ ຈຶ່ງທູລວ່າ ອະນຸໂມທນາພຽງໜ້ອຍດຽວ ກໍສາມາຖໄດ້ຜົລພຽງນີ້ບໍ? ພຣະອົງຄ໌ ຈຶ່ງໄດ້ຕຣັສ ພຣະຄາຖາບົທທີ່ກ່າວມານີ້.

---

໔

ສະຫັສສັງ ອະປິ ເຈ ຄາຖາ
ອະນັຕຖະປະທະສັຓຫິຕາ
ເອກັງ ຄາຖາປະທັງ ເສຍໂຍ

ຍັງ ສຸຕວາ ອຸປະສັມມະຕິ ໒໑໐໔໒

ບົທກະວີ (ຄາຖາ) ເຖິງຈະມີຕັ້ງພັນບົທ ແຕ່ບໍ່ປະກອບດ້ວຍ ປະ-ໂຍຊນ໌ ກໍບໍ່ປະເສີຖເທົ່າບົທກະວີ ພຽງບັນທັດດຽວ ທີ່ເຮັດໃຫ້ຜູ້ຟັງສງົບ.

## ເຣື່ອງ ພຣະທາຣຸຈີຣິຍະເຖຣະ

ພຣະບໍຣົມສາສດາ ທຣົງຜາຣົພ ພຣະທາຣຸຈີເຖຣະ. ໃນກາລະຄັ້ງນຶ່ງ ເພິ່ນໄດ້ລົງເຮືອສຳເພົາ ໄປໃນມຫາສມຸທຣ໌ ຄັນເຮືອແຕກໃນກາງ ມຫາສມຸທຣ໌ນັ້ນຄື້ນຟອງກໍໄດ້ຊັດເພິ່ນຂຶ້ນຝັ່ງໄດ້. ເພິ່ນບໍ່ມີຜ້ານຸ່ງຫົ່ມ ເມື່ອມຫາຊົນເຫັນ ກໍສຳຄັນວ່າ ເພິ່ນເປັນ ພຣະອຣຫັນຕ໌ ພາກັນເຫລື້ອມໃສ. ເພິ່ນກໍສຳຄັນຕົນເອງວ່າ ຕົນເປັນພຣະອຣຫັນຕ໌ເໝືອນກັນ. ຕໍ່ມາພາຍຫລັງ ມີເທວະດາມາບອກ ຈຶ່ງຮູ້ສຶກສລົດໃຈວ່າຕົນບໍ່ແມ່ນ ອຣຫັນຕ໌ ແລະໄດ້ເຂົ້າໄປເຝົ້າພຣະສາສດາ ທີ່ພຣະອົງຄ໌ພວມທ່ຽວບິຓຑບາຕຢູ່ ເພິ່ນໄດ້ທູລຂໍໃຫ້ພຣະອົງຄ໌ສແດງທັມມ໌ໂຜດ ເຖິງ ໓ ຄັ້ງ. ພຣະອົງຄ໌ ຈຶ່ງໄດ້ທຣົງສແດງຊຶ່ງພຣະທັມມ໌ໂດຍຫຍໍ້ ໃຫ້ສຳເຣັຈພຣະອຣຫັຕແລ້ວໄປທ່ຽວສແວງຫາສມຓະບໍຣິຂາຣ ເພື່ອຈະໄດ້ຮັບ ເອຫິຠິກຂຸອຸປະສົມບົທ.

ໃນຂຓະນັ້ນ ແມ່ງົວລູກອ່ອນ ທີ່ໄດ້ເປັນເວຣກັນມາແຕ່ກ່ອນນັ້ນ ໄດ້ຂວິດເພິ່ນໃຫ້ເຖິງກັບ ປຣິນິພພານ.. ພຣະຠິກຂຸ ທັງຫລາຍ ໄດ້ປະຊຸມ

ສິນທະນາກັນວ່າ ທ່ານ ທາຣຸຈີຣິຍະ ໄດ້ຟັງ ພຣະທັມມ໌ ໜ້ອຍດຽວເທົ່ານັ້ນ ກໍຍັງໄດ້ສຳເຣັຈຊຶ່ງ ພຣະອຣຫັຕ. ພຣະສາສດາ ຈຶ່ງໄດ້ຕຣັສພຣະຄາຖານີ້.

---

ໝ

ໂຍ ຈະ ຄາຖາສະຕັງ ພາເສ
ອະນັຕຖະປະທະສັນຫິຕາ
ເອກັງ ທັມມະປະທັງ ເສຍໂຍ
ຍັງ ສຸຕວາ ອຸປະສັມມະຕິ ໆ໑໐໒ໆ

ບົທກະວີ (ຄາຖາ) ບັຣຍາຍທັມມ໌ ບົທດຽວ ທີ່ເຮັດໃຫ້ຜູ້ຟັງມີໃຈ ສງົບຣະງັບນັ້ນ ຍ່ອມປະເສີກກວ່າ ບົທກະວີ ທີ່ຂຶ້ນໃຈໄດ້ຕັ້ງຮ້ອຍບົທ ທີ່ບໍ່ມີປະໂຍຊນ໌ຫຍັງ ພຽງບົທດຽວ.

໔

ໂຍ ສະຫັສສັງ ສະຫັສເສນະ
ສັງຄາເມ ມານຸເສ ຊິເນ
ເອກັນຈະ ເຊຍຍະ ມັຕຕານັງ

ສະ ເອ ສັງຄາມະຊຸຕຕະໂມ ໑໐໓໑

ເຖິງຈະສູ້ຮົບຕົບຕີ ເອົາແພ້ຂ້າເສິກສົງຄາມ ເປັນພັນ ໆ ເທື່ອກໍດີ ແຕ່ກໍບໍ່ນັບໄດ້ວ່າ ເປັນຍອດແຫ່ງຂຸນພົລ, ສ່ວນຜູ້ທີ່ຜາບແພ້ ຈິຕໃຈຂອງ ຕົນເອງ ຜູ້ນັ້ນຈຶ່ງຮຽກໄດ້ວ່າ "ເປັນຍອດແຫ່ງຂຸນພົລ" ຢ່າງແທ້ຈິງ.

## ເຣື່ອງ ນາງກຸຕຫົລເກສີເຖຣີ

ພຣະບໍຣົມສາສດາ ທຣົງຜາຣົພ ນາງກຸຕຫົລເກສີເຖຣີ ລິດາຂອງ ເສຕຖີ ໃນເມືອງຣາຊຄຣຶຫ໌. ໃນວັນນຶ່ງ ນາງໄດ້ເຫັນໂຈຣ ຜູ້ຕ້ອງໂທສ ປະຫາຣຊີວິຕ ນາງເກີດມີຄວາມຮັກໃນໂຈຣຜູ້ນັ້ນ ຖ້າບໍ່ໄດ້ຈະຍອມຕາຍ. ຜູ້ ເປັນມາຣດາບິດາ ຈຳເປັນຕ້ອງໄດ້ໄປໄຖ່ເອົາໂຈຣຜູ້ນັ້ນມາ ໃຫ້ເປັນສາມີຢູ່ ກັບນາງ. ໂຈຣຢາກໄດ້ເຄື່ອງປະດັບຂອງນາງ ເພື່ອແລກເອົາສຸຣາມາດື່ມ ຈຶ່ງ ເວົ້າລວງນາງວ່າ ເຮົາໄດ້ບະບົນເທວດາໄວ້, ດຽວນີ້ຈະແກ້ບະເພີ່ນ. ນາງກໍ ໄດ້ຕົກແຕ່ງເຄື່ອງແກ້ບະ ເມື່ອຕົກແຕ່ງເປັນທີ່ຮຽບຮ້ອຍແລ້ວ ກໍພາກັນໄປ ຍັງພູເຂົາແຫ່ງນຶ່ງ ຊຶ່ງເປັນບ່ອນສຳຣັບຂ້າໂຈຣ ດ້ວຍການຊຸກໃຫ້ຕົກລົງ ໄປໃນເຫວຕາຍ. ຄັນໄປເຖິງທີ່ນັ້ນແລ້ວ ໂຈຣຈຶ່ງບອກຄວາມປະສົງຄ໌ຂອງ ຕົນໃຫ້ນາງຮູ້. ນາງໄດ້ຟັງກໍຕົກໃຈ ວິງວອນຂໍຊີວິຕ ແຕ່ໂຈຣບໍ່ຍອມເປັນ ເດັດຂາດ ນາງຈຶ່ງຄິດວ່າ ເມື່ອກັຍມາເຖິງຕົວເຂົ້າແລ້ວກໍຕ້ອງໄດ້ແກ້ໄຂ

ບັດນັ້ນ, ນາງຈຶ່ງຄິດຫາວິຣີ ເອົາຕົວລອດພົ້ນຈາກຄວາມຕາຍ ຈຶ່ງໄດ້ອ້ອນວອນໂຈຣໃຫ້ຕາຍໃຈ ແລ້ວຊຸກໂຈຣໃຫ້ຕົກລົງໄປໃນເຫວຕາຍ. ເມື່ອໂຈຣຕາຍແລ້ວ ນາງກໍປົດເຄື່ອງປະດັບຖິ້ມໄວ້ໃນທີ່ນັ້ນ ແລ້ວກໍຫລົບຫລີກ ພະເນຈຣໄປໂດຍລຳດັບ ຈົນໄປເຖິງທີ່ຢູ່ຂອງພວກ ປຣິພາຊົກ ເລີຍບວຊເປັນ ປະຣິພາຊິການຳເຂົາ, ສຶກສາຮ່ຳຮຽນ ຕາມລັທธິຂອງ ປຣິພາຊົກຈົນມີຄວາມຊຳນານ ຄ່ອງແຄ້ວ ແລ້ວໄດ້ໄປທ່ຽວຖາມບັນຫາ ກັບມຫາຊົນ.

ໃນທີ່ສຸດ ນາງໄດ້ໄປເຫັນ ພຣະສາຣີບຸຕຣ໌ເຖຣະ ແລະຖາມບັນຫາກັບເພິ່ນ. ພຣະເຖຣະແກ້ໄດ້ທຸກຂໍ້. ນາງຈຶ່ງຂໍຮຽນນຳເພິ່ນ. ພຣະເຖຣະຕອບວ່າ ຫາກທ່ານບວຊເໝືອນເຮົາ ໆ ຈຶ່ງຈະບອກໄດ້. ນາງກໍໄປບວຊໃນ ສຳນັກນາງພິກຂຸນີ. ໃນເວລາອັນບໍ່ຊ້າ ນາງກໍໄດ້ສຳເຣັຈ ພຣະອຣຫັຕ ພ້ອມດ້ວຍ ປຕິສັມພິທາ. ພຣະພິກຂຸ ທັງຫລາຍ ໄດ້ປະຊຸມສົນທະນາກັນວ່າ ນາງກຸຕາລເກສີ ຟັງທັມມ໌ບໍ່ຫລາຍເທົ່າໃດ ກໍໄດ້ສຳເຣັຈພຣະອຣຫັຕ.

ພຣະສາສດາ ຈຶ່ງໄດ້ຕຣັສ ພຣະຄາຖາ ດັ່ງທີ່ກ່າວມາຂ້າງເທິງນີ້.

---

໕

ອັຕຕາ ຫະເວ ຊິຕັງ ເສຍໂຍ
ຍາຈາຍັງ ອິຕະຣາ ປະຊາ

ອັຕຕະຫັນຕັສສະ ໄປສັສສະ
ນິຈຈັງ ສັຍຍະຕະຈາຣິໂນ
ເນວະ ເທໂວ ນະ ຄັນລັພໂພ
ນະ ມາໂຣ ສະຫະ ພຣາຫມຸນາ
ຊິຕັງ ອະປະຊິຕັງ ກະຍິຣາ
ຕະຖາຣູປັສສະ ຊັນຕຸໂນ ໑໐໔,໑໐໕໑

ຄົນທີ່ເອົາຊະນະຕົນເອງໄດ້ນັ້ນແລ ເປັນຜູ້ປະເສີດ, ຜູ້ທີ່ເຝິກຝົນຕົນເອງໄດ້ ຣະວັງຣະໄວຢູ່ຕລອດເວລາ ແມ່ນແຕ່ ເທວດາ, ພຍາລຣກ໌ ແລະ ພຣະພຣົຫມ ກໍເອົາຊະນະບໍ່ໄດ້.

## ເຣື່ອງ ພຣາຫມຕ໌ ນັກການພນັນ

ພຣະ ບໍຣົມສາສດາ ທຣົງຜາຣົພ ອນັຕຖປຸຈຈກະພຣາຫມຕ໌ ທີ່ເປັນນັກເລງ ຫລິ້ນການພນັນອາຊີພ. ວັນນຶ່ງ ລາວໄດ້ເຂົ້າໄປເຝົ້າ ພຣະຜູ້ມີພຣະກາຄເຈົ້າ ທູລຖາມວ່າ ພຣະອົງຄ໌ຄົງຈະຊາບແຕ່ສິ່ງທີ່ເປັນປະໂຍຊນ໌ບໍ່ຊາບໃນສິ່ງທີ່ໄຣ້ປະໂຍຊນ໌. ພຣະສາສດາຈຶ່ງຕຣັສວ່າ ເຣົາຮູ້ທັງສິ່ງທີ່ເປັນປະໂຍຊນ໌ ແລະ ບໍ່ເປັນປະໂຍຊນ໌ດ້ວຍ. ບັດນັ້ນ ພຣາຫມຕ໌ ຈຶ່ງທູລຂໍໃຫ້ສແດງສິ່ງທີ່ບໍ່ເປັນປະໂຍຊນ໌ແກ່ຕົນ. ພຣະອົງຄ໌ຈຶ່ງຕຣັສສິ່ງທີ່ ພຣາຫຕ໌ນັ້ນ

ປະພຶຕຣ໌ຢູ່ ຄື: ນອນຕື່ນສວາຍ, ຂີ້ຄ້ານ, ໂຫດຮ້າຍ, ນອນຫລາຍ, ເດີນ-ທາງໄກຜູ້ດຽວ, ລ່ວງເກີນກັຣຍາເຂົາ ເຫລົ່ານີ້ ເປັນເຫຕຸແຫ່ງຄວາມຈິບ-ຫາຍ ທັງນັ້ນ. ພຣາຫມຕ໌ ຍອມສາຣຸກາຣ ເຫັນດ້ວຍ.

ເມື່ອພຣະອົງຄ໌ ຈະສແດງສັມມ໌ ຕິຕຽນໂທສຂອງກາຣ ຫລິ້ນກາຣພນັນນັ້ນ ຈຶ່ງຕຣັສພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາຂ້າງເທິງນີ້.

---

ຝ

ມາເສ ມາເສ ສະຫັສເສນະ

ໂຍ ຊະເຍຖະ ສະຕັງ ສະມັງ

ເອກັຌຈະ ກາວິຕັຕຕານັງ

ມະຫຸຕຕະມະປິ ປູຊະເຍ

ສາເຍວະ ປູຊະນາ ເສຍໂຍ

ຍັຌຈະ ວັສສະຕັງ ຫຸຕັງ ໑໐໖໑

ກາຣບູຊາ ທ່ານຜູ້ທີ່ເຝິກຝົນຕົນ ແມ່ນແຕ່ພຽງເທື່ອດຽວ ເທົ່ານັ້ນກໍບັງເກີດຜົລ ມຫາສາລ ຍິ່ງກວ່າ ກາຣສລະທຣັພຍ໌ ບວງສວງບູຊາຍັຌເດືອນ ລະພັນ ເປັນເວລາຕິດຕໍ່ກັນ ເຖິງ ຮ້ອຍປີ.

# ເຣື່ອງ ລຸງ ຂອງພຣະສາຣີບຸຕຣ໌ເຖຣະ

ພຣະບໍຣົມສາສດາ ທຣົງຜາຣົພ ພຣາຫມຕ໌ຜູ້ທີ່ເປັນລຸງ ຂອງພຣະສາຣີບຸຕຣ໌ເຖຣະ ເປັນຜູ້ປາຖນາຈະໄປພຣົຫມໂລກ. ເພື່ອຢາກໃຫ້ບັບຣລຸຕາມຄວາມປາຖນານີ້ ເພິ່ນໄດ້ບໍຣິຈາຄທານແກ່ພວກນິຄຣົນຖ໌ ທຸກໆເດືອນ ພຣະສາຣີບຸຕຣ໌ເຖຣະ ຈຶ່ງແນະນຳໃຫ້ເຂົ້າໄປທູລຖາມ ພຣະສາສດາ ແລະພຣາຫມຕ໌ນັ້ນ ກໍກະທຳຕາມ. ພຣະອົງຄ໌ຈຶ່ງຕຣັສ ພຣພະຄາຖາດັ່ງກ່າວນີ້.

---

ໆ

ໂຍ ເຈ ວັສສະສະຕັງ ຊັນຕຸ
    ອັຄຄິງ ປະຣິຈະເຣ ວະເນ,
ເອກັລຈະ ກາວິຕັຕຕານັງ
    ມຸຫຸຕຕະມະປິ ປູຊະເຍ
ສາ ເຍວະ ປູຊະນາ ເສຍໂຍ
    ຍັລເຈ ວັສສະສະຕັງ ຫຸຕັງ ໑໑໐໗໑

ການບູຊາ ທ່ານຜູ້ທີ່ເຝິກຝົນ ອົບຣົມຕົນ ແມ່ນແຕ່ຊົ່ວຂະນະນຶ່ງ ເທົ່ານັ້ນ ບັງເກີດຜົລ ມຫາສາລ ຍິ່ງກວ່າ ການບູຊາໄຟໃນປ່າ ເປັນເວລາຕັ້ງນຶ່ງຮ້ອຍປີ.

# ເຣື່ອງ
# ພຣາຫມຕ໌ ຫລານຂອງພຣະສາຣີບຸຕຣ໌

ພຣະບໍຣົມສາສດາ ທຣົງຜາຣົພ ພຣາຫມຕ໌ ຜູ້ເປັນຫລານ ຂອງທ່ານ ພຣະສາຣີບຸຕຣ໌ເຖຣະ ປາຖນາຈະໄປພຣົຫມໂລກ ຂ້າສັຕວ໌ ວັນລະຕົວບູຊາໄຟ. ພຣະເຖຣະຈຶ່ງແນະນຳໃຫ້ເຂົ້າໄປເຝົ້າ ທູລຖາມພຣະສາສດາ ພຣະອົງຄ໌ ຈຶ່ງໄດ້ຕຣັສ ພຣະຄາຖາ ດັ່ງທີ່ຍົກຂຶ້ນມາໄວ້ໃນຂ້າງເທິງນີ້.

---

ຯ

ຍັງກິລຈິ ຍິຕຖັງ ວະ ຫຸຕັງ ວະ ໂລເກ
　　ສັງວັຈຈະຣັງ ຍະເຊຖະ ປຸລລະເປກໂຂ
ສັພພັມປິ ຕັງ ນະ ຈະຕຸກາຄະເມຕິ
　　ອະກິວາທະນາ ອຸຊຸຄະເຕສຸ ເສຍໂຍ ຯ໑໐ຯ

ບໍ່ວ່າ ຈະເປັນຍັຄຊນິດໃດ ກໍຕາມ ທີ່ຜູ້ຢາກໄດ້ບຸລ ແລ້ວທຳການບູຊາຕລອດປີ. ການບູຊາຍັຄແບບນັ້ນ ມີຄ່າບໍ່ທໍ່ ໑ ໃນ ໔ ຂອງການຍົກມືໄຫວ້ທ່ານຜູ້ປະຕິບັຕິ ຊື່ຕົງຕາມອຣິຍມັຄຄ໌ ແມ່ນແຕ່ພຽງເທື່ອດຽວ. ການໄຫວ້ບຸຄຄົລເຊັ່ນນັ້ນ ປະເສີກວ່າ.

## ເຣື່ອງ ພຣາຫມຕ໌ສຫາຍພຣະສາຣີບຸຕຣ໌

ພຣະສາສດາ ທຣົງຜາຣົພ ພຣາຫມຕ໌ ຜູ້ເປັນສຫາຍຂອງ ພຣະສາຣີບຸຕຣ໌ເຖຣະ ປາຖນາພຣົຫມໂລກ. ໄດ້ທຳການເສັ້ນສວງບູຊາຍັຍຕ່າງໆ ພຣະສາຣີບູຕຣ໌ ແນະນຳໃຫ້ເຂົ້າເຝົ້າ ທູລຖາມພຣະສາສດາ ພຣາຫຕ໌ນັ້ນກໍກະທຳຕາມ. ພຣະພຸທລອົງຄ໌ ທຣົງຕຣັສພຣະຄາຖາດັ່ງກ່າວນັ້ນ.

---

ໞ

ອກີວາທະນະສີລິສສະ
　　ນິຈຈັງ ວຸທຜາປະຈາຍິໂນ
ຈັຕຕາໂຣ ລັມມາ ວັທຜັນຕິ
　　ອາຍຸ ວັຕໂຕ ສຸຂັງ ພະລັງ ໑໐໙໑

ຜູ້ທີ່ຂາບໄຫວ້ ນອບນ້ອມຖ່ອມຕົວ ຕໍ່ຜູ້ຫລັກຜູ້ໃຫຍ່ ເປັນນິຈນັ້ນ ຍ່ອມຈເຣີຍດ້ວຍຄຸຕລັມມ໌ ສີ່ ປະການຄື: ອາຍຸ , ຊື່ສຽງ, ຄວາມສຸຂ ແລະ ກຳລັງວັງຊາ.

## ເຣື່ອງ ອາຍຸວັທນະກຸມາຣ

ພຣະບໍຣົມສາສດາ ທຣົງຜາຣົພ ອາຍຸວັທນະກຸມາຣ ທີ່ພຣາຫຕ໌ຜູ້

ຜູ້ນຶ່ງ ທຳນາຍວ່າ ຈະທຳກາລະກິຣິຍາ ຕາຍ ໃນ ໗ ວັນ. ມາຣດາບິດາຕົກໃຈເປັນຢ່າງຍິ່ງ ຈຶ່ງຖາມເຖິງເຄື່ອງປ້ອງກັນ ມຣຕະກັຍ. ພຣາຫມຕ໌ນັ້ນກໍບໍ່ຮູ້ຈັກຕົ້ນເຫຕຸ ຈຶ່ງແນະນຳໃຫ້ກຸມາຣນັ້ນ ເຂົ້າເຝົ້າທູລຖາມ ພຣະສມຕະ, ສາມີກັຣຍາຈຶ່ງນຳກຸມາຣນັ້ນໄປເຝົ້າ. ພຣະອົງຄ໌ກໍທຣົງພຍາກຣຕ໌ ກົງກັນກັບພຣາຫມຕ໌ ແລະ ທຣົງສແດງເຫຕຸ ເຄື່ອງປ້ອງກັນ ຄື ນິມົນຕ໌ພຣະສົງຄ໌ໄປສູດ ປຣິຕຣ໌ ໂດຍບໍ່ມີຣະຍະເວລາຫຍຸດຕລອດ ໗ ວັນ. ໃນວັນທີ່ ໗ ພຣະອົງຄ໌ສເດັຈໄປເອງ. ຍັກຂ໌ ຜູ້ຈະມາປົງຊີວິຕນັ້ນ ເຫັນພຣະອົງຄ໌ ກໍເກງຂາມ ພຣະພຸທລານຸກາພ ຫລົກໜີໄປ. ຄັນເຖິງວັນທີ່ ໘ ກໍໝົດເຂຕ. ກຸມາຣນັ້ນ ກໍເຖິງຊຶ່ງຄວາມສວັສດີ ຕໍ່ໄປ ມີອາຍຸຍືນ ໑໒໐ ປີ. ພຣະກິກຂຸທັງຫລາຍ ປະຊຸມສົນທນາກັນເຖິງ ເຣື່ອງກຸມາຣນັ້ນ ແລ້ວຈຶ່ງທູລຖາມເຫຕຸຈເຣີນອາຍຸ ຢ່າງອື່ນ ພຣະອົງຄ໌ ຈຶ່ງຕຣັສພຣະຄາຖາທີ່ກ່າວຂ້າງເທິງນີ້.

---

## ໑໐

ໂຍ ຈະ ວັສສະສະຕັງ ຊີເວ
ທຸສສີໂລ ອະສາມາຫິໂຕ
ເອກາຫັງ ຊີວິຕັງ ເສຍໂຍ
ສີລະວັນຕັສສະ ຊາຍິໂນ ໑໑໐໑

ຜູ້ມີສິລ ມີສະມາធិ ມີຊີວິຕຢູ່ວັນດຽວ ກໍຍັງປະເສີກກວ່າ ຜູ້ທີ່ມີຊີວິ
ຢູ່ ຕັ້ງຮ້ອຍປີ ຂອງຄົນຜູ້ທີ່ ທຸສິລ ແລະ ບໍ່ມີສະມາធិ.

# ເຣື່ອງ ສັງກິຈຈະສາມເນຣ

ພຣະບໍຣົມສາສດາ ທຣົງຜາຣົພ ສັງກິຈຈະສາມເນຣ ແລະ ອະທິ-
ມຸຕຕະກະ ສາມເນຣ. ສັງກິຈຈະສາມເນຣນັ້ນ ເປັນຄົນອັສຈັຣຍ໌ ມາຣດາ
ຂອງເພິ່ນໄດ້ທຳກາລກິຣິຍາ (ຕາຍ) ແຕ່ເວລາທີ່ເພິ່ນຍັງຢູ່ໃນຄັຣภ໌ (ທ້ອງ)
ເວລາເຜົາ ທາຣົກ ໃນຄັຣภ໌ນັ້ນ ໄຟບໍ່ໄໝ້. ພວກຍາຕິໄດ້ເຫັນ ກໍດີໃຈ
ຈຶ່ງນຳເອົາໄປລ້ຽງໄວ້. ເມື່ອອາຍຸໄດ້ ໗ ຂວບ ໄດ້ບວຊເປັນສາມເນຣ ໃນ
ສຳນັກຂອງພຣະສາຣີບຸຕຣ໌ເຖຣະ ສຳເຣັຈ ພຣະອຣຫັຕ ພ້ອມດ້ວຍປະຕິສັມ-
ກິທາ ໃນຂຕະທີ່ແຖຜົມນັ້ນເອງ.

ໃນກາລຕໍ່ມາ, ຄັ້ງນຶ່ງ ໄດ້ໄປກັບກິກຂຸ ໓໐ ອົງຄ໌ ອາສັຍຢູ່ໃນດົງ
ໃກ້ໆ ກັບທີ່ຢູ່ຂອງພວກໂຈຣປະມາຕ ໕໐໐. ພວກໂຈຣໄດ້ລັກຈັບຕົວເອົາ
ສາມເນຣນັ້ນໄປ ເພື່ອຈະຂ້າບວງສວງ ເທວະດາ. ເວລາທີ່ຫົວໜ້າໂຈຣຈະ
ເຣີ່ມພິທີ ຕັດສີສະນັ້ນ ສາມເນຣ ກໍສແດງອາການເສີຍຢູ່ຢ່າງທີ່ບໍ່ມີຫຍັງເກີດ
ຂຶ້ນ ບໍ່ສະທົກສະທ້ານ. ເວລາເອົາດາບຟັນ ດາບກໍງໍໂງ້ງເຂົ້າ ທຳອັນຕຣາຍ
ໃຫ້ສາມເນຣບໍ່ໄດ້. ພວກໂຈຣ ເຫັນປາຕິຫາຣິຍ໌ເຊັ່ນນັ້ນ ກໍເຫລື້ອມໃສ-

ສັທລາ ບວຊໃນສຳນັກຂອງສາມເຕຣ ທັງໝົດ. ສາມເຕຣໄດ້ນຳເອົາເຂົາເຈົ້າ ໄປເຝົ້າພຣະສາສດາ ພຣະອົງຄ໌ຈຶ່ງທຣົງສແດງພຣະລັມມິກະຖາ ປະກາສຄຸຕຂອງຄວາມເປັນຜູ້ມີສີລ ແລ້ວຈຶ່ງຕຣັສ ພຣະຄາຖາດັ່ງທີ່ກາວມານັ້ນ.

ເມື່ອສັງກິຈຈະສາມເຕຣ ອຸປະສົມບົທເປັນກິກຂຸ ໄດ້ ໑໐ ພັຣຍາ ຈຶ່ງໃຫ້ ອະລິມຸຕຕະກະ ສາມເຕຣ ຜູ້ເປັນຫລານ ໄປອຳລາມາຣດາບິດາເພື່ອຈະອຸປະສົມບົທ. ເມື່ອໄປໃນຣະຫວ່າງທາງນັ້ນ ໄດ້ພົບເຫັນພວກໂຈຣປະ-ມາຕ ໕໐໐ ໄດ້ຈັບເອົາຕົວໄວ້ ແລ້ວເວົ້າວ່າຈະຂ້າ. ອະລິມຸຕຕະກະສາມເຕຣຈຶ່ງໃຫ້ປະຜິຍຍາຕ (ຄຳຮັບຮອງ) ວ່າ ຖ້າພວກທ່ານປ່ອຍເຮົາໄປແລ້ວເຮົາຈະບໍ່ບອກແກ່ໃຜວ່າ ພວກທ່ານຢູ່ໃນທີ່ນີ້. ພວກໂຈຣກໍປ່ອຍໃຫ້ໄປ. ເມື່ອສາມເຕຣ ໄປເຖິງມາຣດາບິດາແລ້ວ ກໍບອກແຕ່ເຣື່ອງທີ່ຈະອຸປະສົມບົທເທົ່ານັ້ນ ແລ້ວອອກເດີນທາງມາກ່ອນ ສ່ວນມາຣດາບິດາ ຕາມມາທີຫລັງ. ພວກໂຈຣເຫັນຈຶ່ງຈັບໄດ້. ມາຣດາບິດາ ຮ້ອງໄຫ້ຮ່ຳໄຮວ່າ ອັນນີ້ຮອຍວ່າ ສາ-ມເຕຣ ຈະເປັນພວກດຽວກັນກັບໂຈຣ ເຫລົ່ານີ້ ຈຶ່ງບໍ່ບອກແກ່ເຮົາ. ພວກໂຈຣໄດ້ຍິນເຊັ່ນນັ້ນ ກໍເກີດມີຄວາມເຫລື້ອມໃສໃນສາມເຕຣວ່າ ເປັນຜູ້ຮັກສາຄຳສັຕຍ໌ ໝັ້ນຄົງ. ພວກເຂົາທັງໝົດ ບວຊໃນສຳນັກຂອງສາມເຕຣ ໆ ໄດ້ພາເຂົາເຈົ້າໄປເຝົ້າ ພຣະສາສດາ ທູລເຣື່ອງນັ້ນໃຫ້ທຣົງຊາບ.

ພຣະພຸທລອົງຄ໌ ຈຶ່ງທຣົງພຣະລັມມິກະຖາ ປະກາສຄຸຕຂອງຄວາມທີ່ເປັນຜູ້ມີສີລ ແລ້ວຈຶ່ງຕຣັສພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາຂ້າງຕົ້ນນີ້.

---

# ໑໑

ໂຍ ຈະ ວັສສະສະຕັງ ຊີເວ
ທຸປປັລໂລ ອະສະມາຫິໂຕ
ເອກາຫັງ ຊີວິຕັງ ເສຍໂຍ
ປັລລະວັນຕັສສະ ຊາຍິໂນ ໆ໑໑໑ໆ

ຜູ້ທີ່ມີປັລລາ ມີສະມາຊິ ມີຈິຕໝັ້ນຄົງ ເຖິງຈະມີຊີວິຕຢູ່ໄດ້ພຽງວັນດຽວ ກໍຍັງປະເສີກກ່ວາ ການທີ່ມີຊີວິຕຢູ່ ຮ້ອຍປີ ຂອງຄົນຜູ້ທີ່ໄຮ້ປັລລາ ໄຮ້ສະມາຊິ ບໍ່ມີຈິຕໝັ້ນຄົງ.

## ເຣື່ອງ ພຣະຂານຸໂກຕຫັລລະເຖຣະ

ພຣະບໍຣົມສາສດາ ທຣົງຜາຣົພ ພຣະຂານຸໂກຫັລລະເຖຣະ. ໃນການະຄັ້ງນຶ່ງ ເພິ່ນໄປທຳຄວາມພຽຣຢູ່ໃນປ່າ ເມື່ອສຳເຣັຈພຣະອຣຫັຕແລ້ວກໍກັບມາ ເພື່ອຈະໄປເຝົ້າພຣະສາສດາ ໃນຣະຫວ່າງທາງນັ້ນ ເພິ່ນໄດ້ເຂົ້າໄປພັກໃນທີ່ແຫ່ງນຶ່ງ. ໃນຄືນວັນນັ້ນພວກໂຈຣ ໕໐໐ ໄປປຸ້ນໄດ້ທຣັພຍ໌ມາຜູ້ລະຖົງ ເຫັນພຣະນັ່ງເຂົ້າຊານຢູ່ ຄິດວ່າເປັນຕໍໄມ້ ຕ່າງກໍເອົາຖົງທຣັພຍ໌ຂອງຕົນວາງຊ້ອນກັນໄວ້ທີ່ສີສະ ຂອງພຣະເຖຣະນັ້ນທັງໝົດ. ພຣະເຖຣະເຂົ້ານັ່ງເຂົ້າຊານເສັຍຢູ່. ສ່ວນພວກໂຈຣນັ້ນ ອິດເມື່ອຍກໍພາກັນນອນຫລັບໄປ.

ຄັນເວລາໃກ້ຮຸ່ງ ຕື່ນຂຶ້ນມາ ກໍເຫັນພຣະ ສໍາຄັນວ່າເປັນມນຸສຍ໌ ຕົກໃຈພາກັນຈະຫລົບໜີ ແຕ່ພຣະເຖຣະຈຶ່ງບອກວ່າ ເຮົາເປັນບັຣພະຊິຕ ພວກທ່ານຢ່າຢ້ານເທາະ. ພວກໂຈຣກໍເຫລື້ອມໃສ ຂອນກັນຂໍໂທສ ແລ້ວພາກັນບວຊໃນສໍານັກຂອງພຣະເຖຣະທັງໝົດ. ພຣະເຖຣະ ຈຶ່ງໄດ້ນໍາຕົວໄປໄຫວ້ພຣະສາສດາ ທູລປະວັຕິນັ້ນໃຫ້ພຣະອົງຄ໌ທຣົງຊາບ.

ພຣະອົງຄ໌ ຈຶ່ງທຣົງສແດງພຣະທັມມິກະຖາ ປະກາສຄຸຕຂອງຄວາມເປັນຜູ້ມີປັນຍາ ແລະ ຕຣັສພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາຂ້າງເທິງນີ້.

---

໑໔

ໂຍ ຈະ ວັສສະສະຕັງ ຊີເວ
ກຸສີໂຕ ຫີນະວີຣິໂຍ
ເອກາຫັງ ຊີວິຕັງ ເສຍໂຍ
ວີຣິຍັງ ອາຣະກະໂຕ ທັຣຫັງ ໑໑໒໑

ຜູ້ທີ່ມີຄວາມພຽຣ ໝັ້ນຄົງ ເຖິງຈະມີຊີວິຕຢູ່ ວັນດຽວ ກໍຕາມ ກໍຍັງປະເສີຖກວ່າ ການມີຊີວິຕຢູ່ ຮ້ອຍປີ ຂອງຜູ້ທີ່ຂີ້ຄ້ານ ໄຮ້ຄວາມພຽຣ.

# ເຣື່ອງ ພຣະສັປປະທາສເຖຣະ

ພຣະບໍຣົມສາສດາ ທຣົງຜາຣົພ ພຣະສັປປະທາສເຖຣະ ທີ່ມີຄວາມ

ກະສັນຢາກສິກ ແລ້ວຈຶ່ງກັບໃຈມາຄິດວ່າ ຕາຍໃນເພສສມຕະປະເສີຖກວ່າ. ວັນນຶ່ງ ເຫັນກິກຂຸ ຈັບງູເຫົ່າໃສ່ລົງໃນໝໍ້ຈະເອົາໄປປ່ອຍ ຈຶ່ງຮັບອາສາວ່າ ເຮົາຈະເອົາໄປປ່ອຍໃຫ້ເອງ ແລ້ວຄິດວ່າ ຢາກຕາຍ ຈຶ່ງເອົາມືຈົກລົງໄປໃນໝໍ້ ເພື່ອຈະໃຫ້ງູຕອດ ງູບໍ່ຕອດ ເຂົ້າໃຈວ່າງູບໍ່ມີພິສ ຈຶ່ງເອົາໄປປ່ອຍເສັຍ. ວັນນຶ່ງ ຖືມີດແຖຜົມໄປຄິດວ່າຈະປາດຄໍຕາຍ ຈຶ່ງເອົາຄໍພາດໃສ່ຂອນໄມ້ເອົາຄົມມີດແປະໃສ່ຄໍ ພິຈາຣະຕາກັມມຖານໄປນຳ ໄດ້ສຳເຣັຈພຣະອຣຫັຕ ໃນເວລານັ້ນ.

ກິກຂຸທັງຫລາຍ ຈຶ່ງເຂົ້າເຝົ້າທູລ ພຣະສາສດາ ພຣະອົງຄ໌ຈຶ່ງສແດງພຣະລັມມິກະຖາ ປະກາສຄຸຕ ຂອງຄວາມເປັນຜູ້ຜາຣິພຄວາມພຽຣ ແລ້ວຈຶ່ງຕຣັສພຣະຄາຖານີ້.

---

໑໑໑

ໂຍ ຈະ ວັສສະຕັງ ຊີເວ
ອະປັສສັງ ອຸທະຍັພພະຍັງ
ເອກາສັງ ຊີວິຕັງ ເສຍໂຍ
ປັສສະໂຕ ອຸທະຍັພພະຍັງ ໆ໑໑໑ໆ

# ເຣື່ອງ ນາງປະພາຈາຣາເຖຣີ

ພຣະບໍຣົມສາສດາ ທຣົງປາຣົພ ນາງປະພາຈາຣາເຖຣີ ເປັນທິດາຂອງເສດຖີໃນເມືອງສາວັຕຖີ ນາງໄດ້ປະສົບກັບຄວາມທຸກຂ໌ໂສກແສນສາຫັສ ຄື ສາມີຖືກງູຕອດຕາຍ, ລູກຊາຍກົກ ຕົກນ້ຳຕາຍ, ລູກນ້ອຍ ກໍຖືກແຫລວທຍຸມຍາດເອົາໄປກິນ, ເຮືອນຂອງມາຣດາບິດາ ແລະອ້າຍ ກໍເພພັງລົງທັບຕາຍ. ນາງມີຄວາມທຸກຂ໌ໂທມະນັສຂັດສົນສິ້ນສະຕິ ຈົນເປືອຍກາຍບໍ່ມີເຄື່ອງນຸ່ງຫົ່ມ ທີ່ຈະຫົ່ມຄົງ ເດີນລະເມີເພີ້ສະຕິໄປຜູ້ດຽວ ພັດເຂົ້າໄປໃນວັດພຣະເຊຕະວັນ. ທີ່ພຣະສາສດາ ທຣົງສແດງພຣະທັມມເທສາ ຢູ່ໃນທ່າມກາງພຸທສບໍຣິສັທ. ພຣະອົງຄ໌ໄດ້ທອດພຣະເນຕຣເຫັນ ຈຶ່ງທຣົງເຕືອນໃຫ້ນາງກັບມີສະຕິ ແລ້ວຕຣັສເທສນາໃຫ້ດຳຣົງຢູ່ໃນໂສດາປັຕຕິຜົລ. ຄັນແລ້ວນາງກໍໄປບັຣພະຊາ ຢູ່ໃນສຳນັກ ນາງກິກຂຸນີ. ວັນນຶ່ງ ນັ່ງພິຈາຣະຕາເບິ່ງຄວາມສິ້ນຄວາມເສື່ອມຢູ່ ພຣະສາສດາ ປະທັບນັ່ງຢູ່ໃນພຣະຄັນລກຸຜີ ທຣົງຊາບດ້ວຍທິພຍ໌ຈັກຂຸ ຈຶ່ງເປັ່ງພຣະໂອກາສຣັສມີໄປ ແລ້ວຈຶ່ງຕຣັສພຣະຄາຖາດັ່ງທີ່ໄດ້ຍົກຂຶ້ນມາຂ້າງເທີງນີ້.

---

໑໔

ໂຍ ຈະ ວັສສະສະຕັງ ຊີເວ

ອະປັສສັງ ອະມະຕັງ ປະທັງ,
ເອກາຫັງ ຊີວິຕັງ ເສຍໂຍ
ປັສສະໂຕ ອະມະຕັງ ປະທັງ ໆ໑໑໕ໆ

## ເຣື່ອງ ນາງກີສາໂຄຕະມີ

ພຣະບໍຣົມສາສດາ ທຣົງຜາຣົພ ນາງກີສາໂຄຕະມີເຖຣີ. ມີເຣື່ອງເບື້ອງຕົ້ນວ່າທຣັພຍ໌ ໔໐ ໂກຜິຂອງເສຕຖີຄົນນຶ່ງ ໄດ້ກາຍເປັນຖ່ານໄຟໄປໝົດ. ເສຕຖີນັ້ນ ເສົ້າໂສກເສັຍໃຈ. ມີສຫາຍບອກອຸບາຍໃຫ້ວ່າ ຈົ່ງເອົາທຣັພຍ໌ທີ່ເປັນຖ່ານນັ້ນໄປວາງຂາຍທີ່ຕລາດ ເມື່ອມີໃຜທ້ວງວ່າ ເງິນ ຄຳ ຖ້າເປັນຜູ້ຍິງ ທ່ານຈົ່ງຂໍໃຫ້ລູກຊາຍຂອງທ່ານ, ຖ້າເປັນຜູ້ຊາຍ ກໍຈົ່ງຍົກລູກສາວໃຫ້ ມອບທຣັພຍ໌ ທັງໝົດໃຫ້ຜູ້ນັ້ນ. ເສຕຖີ ກໍກະທຳຕາມ. ຄົນທັງຫລາຍເຫັນຕ່າງກໍເວົ້າວ່າຖ່ານໄຟທັງນັ້ນ, ແຕ່ນາງກີສາໂຄະມີ ຄົນດຽວກ່າວວ່າ ເງິນຄຳ ເສຕຖີຈຶ່ງໃຫ້ຢູ່ກັບລູກຊາຍຂອງຕົນ ແລະ ຍົກທຣັພຍ໌ທັງໝົດໃຫ້. ເມື່ອນາງຢູ່ກັບສາມີ ກໍມີບຸຕຣ໌ຄົນນຶ່ງ ໃຫຍ່ມາພໍເດີນໄດ້ກໍຕາຍ. ນາງບໍ່ເຄີຍເຫັນຄົນຕາຍ ອູ້ມບຸຕຣ໌ໄປທ່ຽວຫາຢາ ເພື່ອປິ່ນປົວໃຫ້ກັບດີຂຶ້ນ ໃຜເຫັນກໍຫາວ່ານາງເປັນບ້າ. ຄັ້ງນັ້ນ ຍັງມີບັຕຫິຕຜູ້ນຶ່ງ ແນະນຳໃຫ້ໄປເຝົ້າພຣະສາສດາ ນາງກໍໄປເຝົ້າທູລຂໍຢາ. ພຣະສາສດາ ທຣົງສແດງພຣະທັມມະເທສນາ ໃຫ້ດຳຣົງຢູ່ໃນໂສດາປັຕຕິຜົລ ແລ້ວນາງຈຶ່ງຂໍບັຣພະຊາຢູ່ໃນ

ສຳນັກນາງກິກຂຸນີ. ວັນນຶ່ງ ນັ່ງເບິ່ງກດວງປະທີບທີ່ສົ່ງແສງສວ່າງຮຸ່ງເຮືອງ ແລ້ວກໍມອດດັບໄປ. ນາງຈຶ່ງນຳເອົາມາທຽບກັບອັຕກາພຂອງຕົນ.

ພຣະສາສດາ ປະທັບຢູ່ໃນພຣະຄັນຘກຸຝີ ທຣົງຊາບດ້ວຍທິພຍ໌ຈັກຂຸ ຈຶ່ງເປັ່ງພຣະໂອກາສຣັສມີໄປ ແລ້ວຈຶ່ງຕຣັສພຣະຄາຖາ ດັ່ງທີ່ກ່າວມາແລ້ວນີ້

---

໑໕

ໂຍ ຈະ ວັສສະສະຕັງ ຊີເວ
　　ອະປັສສັງ ທັມມະມຸຕຕະມັງ
ເອກາຫັງ ຊີວິຕັງ ເສຍໂຍ
　　ປັສສະໂຕ ທັມມະມຸຕຕະມັງ ໆ໑໑໕ໆ

ຜູ້ທີ່ເຫັນ ພຣະທັມມ໌ອັນປະເສີກ, ມີຊີວິຕຢູ່ພຽງວັນດຽວ ກໍຍັງປະເສີກກວ່າ ກາຣມີຊີວິຕຢູ່ຕັ້ງ ຮ້ອຍປີ ຂອງຜູ້ທີ່ບໍ່ເຫັນພຣະທັມມ໌.

# ເຣື່ອງ ນາງພະຫຸປຸຕຕິກາເຖຣີ

ພຣະບໍຣົມສາສດາ ທຣົງຜາຣົພ ນາງພະຫຸປຸຕຕິກາເຖຣີ ເປັນຜູ້ທີ່ມີບຸຕຣ໌ທິດາ ຫລາຍ. ຄັນສາມີຕາຍໄປແລ້ວ ນາງກໍໄດ້ແບ່ງ ທຣັພຍ໌ສົມບັຕິ-

ໃຫ້ແກ່ ບຸຕຣ໌ລິດາ ເຫລົ່ານັ້ນ ຕົນຈຶ່ງໄປອາສັຍບຸຕຣ໌ລິດາຢູ່. ເມື່ອເຫັນເຂົາ ປະຕິບັຕິບໍ່ໄດ້ຕາມໃຈຕົນກໍມີຄວາມເສັຍໃຈ ໄປບວຊເປັນກິກຂຸນີ ໝັ່ນທໍາຄວາມພຽຣຈເຈີນສມຕະລັມມ໌. ໃນວັນນຶ່ງ ຄິດເຖິງລັມມ໌ທີ່ພຣະຜູ້ມີພຣະກາຄເຈົ້າສແດງ. ພຣະສາສດາ ປະທັບຢູ່ໃນ ພຣະຄັນລກຸຝີ ທຣົງຊາບດ້ວຍທິພຍ໌ຈັກຂຸ ຈຶ່ງເປັ່ງໂອກາສຣັສມີໄປ ແລ້ວຈຶ່ງຕຣັສພຣະຄາຖາ ດັ່ງກ່າວນີ້.

---

## ຈົບສຫັສສະວັຄຄ໌ ທີ່ ໗

ຈົບ ສຫັສສະວັຄຄ໌ ທີ່ ๘

ຂຶ້ນປາປະວັຄຄ໌ ທີ່ ๙

# ປາປະວັຄຄ໌ ທີ່ ໙

## ໑

ອະກິຕຖະເວຖະ ກັລະຍາເຓ
ປາປາ ຈິຕຕັງ ນິວາຣະເຍ
ທັນລັງ ທິ ກະຣະໂຕ ປຸໝຸນັງ
ປາປັສມິງ ຣະມະຕີ ມະໂນ ຯ໑໑໖ຯ

## ເຣື່ອງ ພຣາຫມຕ໌ ຈູເຣກະສາຜົກ

ພຣະບໍຣົມສາສດາ ທຣົງຜາຣົພ ພຣຣຫມຕ໌ ຈູເຣກະສາຜົກ ທູກຂ໌ຈົນທີ່ມີຜ້າຫົ່ມຜືນດຽວ ຜັດປ່ຽນຫົ່ມກັນກັບກັຣຍາ ໄປຟັງລັມມ໌. ຜູ້ກັຣຍາໄປຕອນກາງເວັນ ຜູ້ຜົວໄປຕອນກາງຄືນ. ໃນຄືນວັນນຶ່ງ ພຣາຫມຕ໌ໄດ້ໄປຟັງລັມມ໌ ມີຄວາມເທລື້ອມໃສ ຢາກເປື້ອງຜ້າຫົ່ມອອກບູຊາລັມມ໌ ຄິດແລ້ວກໍຄິດອີກ ຕັ້ງແຕ່ຫົວຄ່ຳ ຮອດໃກ້ຊິແຈ້ງ ກໍຍັງຕັດສິນບໍ່ທັນໄດ້. ຕໍ່ມາໃນຍາມສຸດທ້າຍເກືອບຕາເວັນກຳລັງຈະພົ້ນຂອບຟ້າ ລາວຈຶ່ງຕັດສິນໃຈໄດ້ແລ້ວອຸທານຂື້ນວ່າ ເຮົາຊນະແລ້ວ ໆ .

ໃນເວລານັ້ນ, ພຣະເຈົ້າ ປະເສນທິໂກສົລ ສເດັຈປະທັບທຣົງລັມມ໌ຢູ່ໃທີ່ນັ້ນດ້ວຍ ໄດ້ທຣົງຊາບ ແລະ ທຣົງເທລື້ອມໃສ ຈຶ່ງພຣະຣາຊທານ-

ໂກຄະທຣັພຍ໌ ເປັນອັນມາກໃຫ້ແກ່ພຣາຫມຕ໌ ພຣະກິກຂຸ ທັງຫລາຍປະຊຸມ ສັຣເສີລ ພຣາຫມຕ໌ ຈູເອກະສາຜົກນັ້ນ. ພຣະສາສດາ ຈຶ່ງຕຣັສວ່າ ຖ້າວ່າ ພຣາຫມຕ໌ ໄດ້ບູຊາຕັ້ງແຕ່ຍາມຕົ້ນໆ ຈະໄດ້ບໍຣິໂກຄທຣັພຍ໌ ຍິ່ງກວ່ານັ້ນ ແລ້ວຈຶ່ງຕຣັສ ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາຂ້າງເທິງນີ້.

---

໔

ປາປັລເຈ ປຸຣິໂສ ກະຍິຣາ
ນະ ຕັງ ກະຍິຣາ ປຸນັປປຸນັງ
ນະ ຕັມຫິ ຈັນນັງ ກະຍິຣາຖະ
ທຸກໂຂ ປາປັສສະ ອຸຈຈະໂຍ ໆ໑໑໗ໆ

ຖ້າວ່າ ມີຄວາມຈຳເປັນຕ້ອງໄດ້ກະທຳຊົ່ວແລ້ວ ກໍບໍ່ຄວນທຳເປັນ ປະຈຳ ແລະ ບໍ່ຄວນພໍໃຈໃນການກະທຳນັ້ນ, ເພາະວ່າ ການສະສົມໄວ້ຊຶ່ງ ບາບນັ້ນນຳເອົາທຸກຂ໌ມາໃຫ້.

## ເຣື່ອງ ເສຍຍະສະກະກິກຂຸ

ພຣະບໍຣົມສາສດາ ທຣົງຜາຣົພ ພຣະເສຍຍະກະກິກຂຸ ທີ່ເປັນສັທ- ລິວິຫາຣິກ ຂອງ ພຣະໂລຂຸທາຍີ. ຄັນເມື່ອຄວາມກະສັນ ເກີດຂຶ້ນມາແລ້ວ

ພຣະເສຍຍະກະ ຈຶ່ງບອກ ພຣະໂລຣຸທາຍີ ໆ ກໍແນະນຳໃຫ້ຣະງັບອາງານະ ພຣະເສຍຍະກະ ກໍກະທຳຕາມ. ພຣະສາສດາ ທຣົງຊາບ ຈຶ່ງທຣົງຕິຕຽນເປັນມາກ ແລະໃຫ້ປະຊຸມສົງฆ໌ ທຣົງບັญญັຕິສິກຂາບົທຫ້າມ ແລ້ວຈຶ່ງຕຣັສພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາຂ້າງເທິງນີ້.

---

ฌ

ປຸญญັญເຈ ປຸຣິໂສ ກະຍິຣາ
ກະຍິຣາເຖນັງ ປຸນັປປຸນັງ
ຕັມຫິ ฉັນທັງ ກະຍິຣາຖະ
ສຸໂຂ ປຸญญັສສະ ອຸຈຈະໂຍ ໆ໑໑ໆ

ຖ້າວ່າ ຈະທຳຄວາມດີແລ້ວ ກໍຄວນທຳດີບ່ອຍ ໆ ແລະຄວນພໍໃຈໃນການທຳຄວາມດີນັ້ນ ເພາະວ່າ ການສະສົມອົບໂຮມໄວ້ຊຶ່ງຄວາມດີນັ້ນນຳສຸຂມາໃຫ້.

## ເຣື່ອງ ລາຊເທວທິດາ

ພຣະບໍຣົມມສາສດາ ທຣົງຜາຣົພ ລາຊເທວທິດາ. ຄາວເມື່ອເປັນ

ມະນຸສຢູ່ນັ້ນ ເປັນຊາວນາ ໄດ້ຖວາຍເຂົ້າຕອກ ແກ່ ພຣະມຫາກັສສປະເຖຣະ ຄັນສິ້ນຊີພດັບຂັນລ໌ໄປແລ້ວ ໄດ້ໄປເກີດໃນດາວດຶງສ໌ພິກົພ. ເທພທິດານີ້ ຊາບວ່າ ທິພຍ໌ສົມບັຕິນີ້ ຕົນໄດ້ ກໍຍ້ອນພຣະມຫາເຖຣະ ຈຶ່ງຢາກຈະສນອງ ຄຸນເພິ່ນ ດ້ວຍເຫຕຸນັ້ນ ຈຶ່ງມາປັດກວາດ ບໍຣິເວຣວິຫາຣ ຕັ້ງນ້ຳໃຊ້ນ້ຳຈັນ ໄວ້. ເທພທິດາ ກະທຳດັ່ງນີ້ເຖິງ ໓ ວັນ. ໃນວັນທີ່ ໓ ນີ້ ພຣະເຖຣະຈຶ່ງຮູ້ ຄັກ ແລ້ວຂັບໄລ່ຫ້າມບໍ່ໃຫ້ທຳຕໍ່ໄປ ເພາະຈະເປັນຕົວຢ່າງແກ່ກຸລບູຕຣ໌ໃນ ພາຍຫລັງ. ນາງລາຊເທພຍທິດາເສັຍໃຈ ຍົກມືໄຫວ້ຮ້ອງໄຫ້ຢູ່ໃນອາກາສ

ພຣະສາສດາໄດ້ສດັບສຽງນັ້ນຈຶ່ງຮັບສັ່ງແກ່ເທພຍທິດານັ້ນວ່າຄວາມ ສຳຣວມ ເປັນໜ້າທີ່ຂອງກັສສປະ. ການກະທຳບຸຌ ເປັນໜ້າທີ່ຂອງຜູ້ຕ້ອງ ການບຸຌ. ການກະທຳບຸຌເປັນສຸຂ ໃນໂລກນີ້ແລະໂລກໜ້າ. ແລ້ວຈຶ່ງຕຣັສ ຊຶ່ງພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາຂ້າງເທິງນັ້ນ.

---

໔

ປາໂປປິ ປັສສະຕິ ກັທຣັງ
ຍາວະ ປາປັງ ນະ ປັຈຈະຕິ
ຍະທາ ຈະ ປັຈຈະຕິງ ປາປັງ
ອະຖະ ປາໂປ ປາປານິ ປັສສະຕິ ໆ໑໑໙ໆ

ເມື່ອບາບຍັງບໍ່ທັນບໍ່ທັນສົ່ງຜົລໃຫ້ ຄົນຊົ່ວນັ້ນກໍ່ຍັງເຫັນວ່າບາບນັ້ນ ຍັງເປັນເປັນຂອງດີ, ເມື່ອໃດ ມັນຜລິຕຜົລ ເມື່ອນັ້ນແຫລະ ເຂົາຈຶ່ງຮູ້ຜົລຂອງບາບ.

໕

ພັທໂຣ ປິ ປັສສະຕິ ປາປັງ
ຍາວະ ພັທຣັງ ນະ ປັຈຈະຕິ,
ຍະທາ ຈະ ປັຈຈະຕິງ ພັທຣັງ
ອະຖະ ພັທໂຣ ພັທຣານິ ປັສສະຕິ ໑໑໘໐໑

ເມື່ອຄວາມດີ ຍັງບໍ່ທັນສົ່ງຜົລ ຄົນດີກໍ່ມອງເຫັນຄວາມດີ ນັ້ນ ເປັນຄວາມຊົ່ວ, ເມື່ອໃດຄວາມດີ ຜລິຕຜົລ ເມື່ອນັ້ນແຫລະ ເຂົາຈຶ່ງຈະເຫັນຜົລຂອງຄວາມດີ.

# ເຣື່ອງ ອນາຖະປິຕພິກະເສຕຖີ

ພຣະບໍຣົມສາສດາ ທຣົງຜາຣົພ ອນາຖະປິຕພິກະເສຕຖີ ບໍຣິຈາຄທຣັພຍ໌ ສ້າງວິຫາຣເຊຕວັນ ປແລ້ວບໍຣິຈາຄທານ ໃນພຣະສາສນາເນື່ອງນິຕຍ໌ ທຣັພຍ໌ສິນເງິນຄຳ ກໍ່ໝົດໄປເປັນລຳດັບ ເຖິງປານນັ້ນ ກໍ່ຍັງບໍຣິຈາຄຢູ່ບໍ່ເຊົາ ຈົນເທພດາຜູ້ສິງຢູ່ທີ່ຊຸ້ມປະຕູຊອງທ່ານ ມາຫ້າມໃຫ້ຫຍຸດການບໍ-ຣິຈາຄ ທ່ານເສຕຖີ ກໍ່ບໍ່ຟັງ ແລະຂັບໄລ່ເທພດານັ້ນໜີບໍ່ໃຫ້ຢູ່ໃນທີ່ນັ້ນ.

ເທພດາຮູ້ສຶກວ່າຕົນຜິດ ຈຶ່ງໄປຫາເທພດາ ທັງຫລາຍ ຕລອດເຖິງ ທ້າວ-ສັກກເທວຣາຊ ວິ່ງວອນ ຊ່ວຍໄປຂໍໂທສທ່ານເສຕຖີ ທ້າວສັກກະຈຶ່ງໃຫ້ອຸບາຍວ່າ ໃຫ້ນໍາທຣັພຍ໌ ອັນທາເຈົ້າຂອງບໍ່ໄດ້ໄປໃຫ້ເສຕຖີ ແລ້ວຂໍຂະມາໂທສ. ເທພດານັ້ນກໍກະທໍາຕາມ. ເມື່ອເສຕຖີຈະຮັບຂະມາໂທສ ເທພດາກໍກະທໍາຕາມ ເສຕຖີນັ້ນ ຈຶ່ງນໍາເອົາເທພດາໄປເຝົ້າ ພຣະອົງຄ໌ຈຶ່ງປະທານໂອວາສ ສອນເສຕຖີ ແລະ ເທພດາ ແລ້ວຈຶ່ງຕຣັສພຣະຄາຖາ ດັ່ງທີ່ກ່າວມາຂ້າງເທິງນັ້ນ.

---

໓

ມາວະມັញເញຖະ ປາປັສສະ
ນະ ມັຕຕັງ ອາຄະມິສສະຕິ
ອຸທະພິນທຸ ນິປາເຕນະ
ອຸທະກຸມໂພປິ ປູຣະຕິ
ປູຣະຕິ ພາໂລ ປາປັສສະ
ໂຖກະ ໂຖກັມປິ ອາຈິນັງ ໑໒໑໒

ຢ່າຖືຖືກຄວາມຊົ່ວວ່າ ພຽງໜ້ອຍດຽວນັ້ນ ຈັກບໍ່ສນອງຜົລຕອບແທນ, ນໍ້າ ທີ່ຕົກຈາກເວຫາອາກາສ ທີລະຫຍາດ ໆ ຍັງເຕັມໂທໄດ້.

ຄົນພາລທຳຄວາມຊົ່ວ ທີລະເລັກລະໜ້ອຍ ຍ່ອມເຕັມດ້ວຍຄວາມຊົ່ວໄດ້ເຊັ່ນ ກັນ ທັ້ນແລ.

## ເຣື່ອງ ອະສັຎຎຕຣະບໍຣິຂາຣຠິກຂຸ

ພຣະບໍຣົມສາສດາ ທຣົງຜາຣົພ ຠິກຂຸ ທີ່ບໍ່ເອົາໃຈໃສ່ນຳການເກັບ ມ້ຽນບໍຣິຂາຣ ເຄື່ອງໃຊ້ສອຍ ເຊັ່ນຕຽງ ຕັ່ງເປັນຕົ້ນ ເມື່ອໃຊ້ແລ້ວກໍປະຖິ້ມ ຊະຊາຍ. ເມື່ອເພື່ອນ ຠິກຂຸໄດ້ວ່າກ່າວຕັກເຕືອນ ກໍກ່າວວ່າສິ່ງເລັກ ໆ ນ້ອຍ ໆ ເທົ່ານັ້ນບໍ່ພໍໃຫ້ເສັຍຫາຍຍ້ອນ. ພຣະສາສດາທຣົງຊາບກໍທຣົງຮັບ ສັ່ງໃຫ້ຫາຕົວມາປະທານ ອນຸສາສນີ ແລ້ວຈຶ່ງຕຣັສພຣະຄາຖາ ດັ່ງທີ່ກ່າວມາ ຂ້າງເທິງນີ້.

---

໗

ມາວະມັຎເຎຖະ ປຸຎຎັສສະ
ນະ ມັຕຕັງ ອາຄະມິສສະຕິ
ອຸທະພິນທຸນິປາເຕນະ
ອຸທະກຸມໂຠປິ ປູຣະຕິ
ອາປູຣະຕິ ຘີໂຣ ປຸຎຎັສສະ

ໂຖກັງ ໂຖກັມປິ ອາຈິນັງ ໑໒໒໖

ຢ່າໄດ້ຖືຖືກບຸນວ່າ ມີພຽງໜ້ອຍດຽວ ຈັກບໍ່ສນອງຜົລຕອບ, ນ້ຳທີ່ຕົກລົງມາຈາກເວຫາອາກາສ ທີລະຫຍາດ ໆ ກໍຍັງເຕັມໄຫໄພໃຫ້ໄດ້. ນັກປຣາຊຍ໌ ສະສົມຮັບໂຮມບຸນທີລະນ້ອຍ ກໍຍ່ອມເຕັມດ້ວຍບຸນໄດ້ ເຊັ່ນກັນ.

# ເຣື່ອງ ພິຣາລະປທກະ ເສຕຖີ

ພຣະບໍຣົມສາສດາ ທຣົງຜາຣົພ ພິຣາລະປະທະກະເສຕຖີ ເຫັນເຂົາບອກບຸນ ຂ່າວບຸນ ເຮັດທານມາເຖິງເຮືອນເມື່ອໃດ ກໍອັດປະຕູເຮືອນໄວ້ໂລດ. ເຂົາຄິດໃນໃຈວ່າ ເຮັດເທົ່າທີ່ເຂົາເຮັດໄດ້ ໂຕເຮັດບໍ່ໄດ້ເສືອກໄປແຜ່ນຳຜູ້ອື່ນ. ເສຕຖີຂືນບໍ່ໄດ້ ກໍຫຍິບເອົາເຂົ້າສາຣ ຖົ່ວເຫລືອງ ຖົ່ວຂຽວ ອັນລະເລັກລະນ້ອຍໃຫ້ໄປ.

ໃນວັນຮຸ່ງຂຶ້ນ ຊາວບ້ານ ກໍພາກັນຈັດແຈງທຳທານລ້ຽງພຣະສົງຄ໌ ເສຕຖີ ກໍຂັດມີດແຫລມໃສ່ແອວໄປຮ່ວມ ໂດຍຄິດວ່າ ເມື່ອຊາຍຜູ້ນັ້ນເວົ້າສຽດສີໃສ່ຕົນວ່າ ໃຫ້ທານເລັກນ້ອຍພໍເປັນພິລີ ຕົນກໍຈະເອົາມີດແທງເຂົາໂລດ. ເມື່ອການທຳທານສິ້ນສຸດລົງ ບຸຣຸສຜູ້ຈັດການທ່ຽວຊັກຊວນເພື່ອນບ້ານ ທຳທານນັ້ນ ຈຶ່ງທູລ ພຣະຜູ້ມີພຣະກາຄເຈົ້າວ່າ ຂ້າແດ່ ພຣະອົງຄ໌ຜູ້ຈເຣີຍ ຂ້າພຣະອົງຄ໌ໄດ້ຊັກຊວນປະຊາຊົນ ບໍຣິຈາຄທານຕາມກຳລັງຂອງຕົນ

ຜູ້ລະເລັກລະໜ້ອຍ ຂໍຜົລບຸຜ ຈຶ່ງມີແກ່ຊຸມຊົນຜູ້ບໍຣິຈາຄນັ້ນທ້ອນ. ຝ່າຍເສຕຖີ ໄດ້ຍິນເຊັ່ນນັ້ນກໍປ່ຽນໃຈ ຮູ້ສຶກໂທສຂອງຕົນ ຈຶ່ງໄດ້ຂໍໂທສບຸຣຸສຜູ້ນັ້ນ. ພຣະສາສດາ ຈຶ່ງໄດ້ຕຣັສຊຶ່ງພຣະຄາຖາ ດັ່ງກ່າວມານີ້.

---

ຐ

ວາຕີໄຊວະ ກະຍັງ ມັຄຄັງ
ອັປປະສັຕໄຖ ມະຫັທລະໂນ
ວິສັງ ຊີວິຕຸກາໂມວະ
ປາປານິ ປະຣິວັຊຊະເຍ ໑໑໔໑໑

ພໍ່ຄ້າ ມີທຣັພຍ໌ສົມບັຕິມາກ ມີພັຄພວກໜ້ອຍ ຍ່ອມຫລີກຈາກເສັ້ນທາງ ທີ່ມີກັຍ. ຄົນຮັກຊີວິຕ ຍ່ອມລະເວັ້ນຈາກຢາພິສ ສັນໃດ, ບຸຄຄົລກໍຄວນຫລີກເວັ້ນຈາກບາບ ສັນນັ້ນ.

## ເຣື່ອງ ມຫາລນະພານິຊ

ພຣະບໍຣົມສາສດາ ທຣົງຜາຣົພ ມຫາລນະພານິຊ ຈັດແຈງສິ່ງຂອງໃສ່ກວຽນ ໕໐໐ ເຫລັ້ມ ເພື່ອນໍາເອົາໄປຄ້າຂາຍໃນທີ່ແຫ່ງນຶ່ງ ຈຶ່ງອາຣາ-

ລະນາ ພິກຂຸ ທັງຫລາຍ ຜູ້ປະສົງຄ໌ຈະເດີນທາງໄປຍັງທີ່ແຫ່ງນັ້ນ ໃຫ້ໄປພ້ອມກັນ ເພື່ອບໍ່ໃຫ້ລຳບາກໃນເຣື່ອງ ບິຕທາຫານ (ອາຫານການຈັນ)

ຄັນຈັດການຮຽບຮ້ອຍແລ້ວ ກໍພາກັນໄປເຖິງໝູ່ບ້ານແຄມດົງໃຫຍ່ແຫ່ງນຶ່ງ ແລະຫຍຸດພັກຢູ່ໃນທີ່ນັ້ນ. ມີພວກໂຈຣປະມານ ໕໐໐ ຮູ້ວ່າພານິຊນັ້ນຈະຜ່ານເຂົ້າໄປໃນດົງນັ້ນ ຈຶ່ງໄປພັກລັດທາງຢູ່ໃນກາງດົງ. ພານິຊຮູ້ຕົວທັນບໍ່ໄປ ແລະຕຽມຕົວຈະກັບຄືນ. ພວກໂຈຣຮູ້ທັນ ກໍກັບຄືນໄປລັດຢູ່ທາງກັບນັ້ນອີກ. ພານິຊຮູ້ຕົວ ກໍພັກຢູ່ໃນທີ່ນັ້ນຕໍ່, ລາວຈຶ່ງບອກເຫຕຸນັ້ນໃຫ້ພິກຂຸ ທັງຫລາຍຊາບ ໆ ກໍພາກັນກັບມາເຝົ້າ ພຣະສາສດາໃຫ້ທຣົງຊາບ. ພຣະອົງຄ໌ ຈຶ່ງຕຣັສພຣະຄາຖາ ດັ່ງທີ່ຍົກຂຶ້ນມາຂ້າງເທິງນີ້.

---

## ໙

ປາຕິມຫິ ເຈ ອະໂຕ ນາສສະ
ຫະເຣຍຍະ ປາຕິນາ ວິສັງ
ນາພພະຕັງ ວິສະມັນເວຕິ
ນັຕຖິ ປາປັງ ອະກຸພພະຕັງ ໑໑໔໑

ເມື່ອຝາມື ບໍ່ມີບາດແຜແລ້ວ ບຸຄຄົລ ຍ່ອມຈັບບາຍຢາພິສນັ້ນດ້ວຍ

ຝາມືໄດ້ ຢາພິສຍ່ອມບໍ່ຊຶມຊາບເຂົ້າໄປໃນຝາມືຂອງເຂົາໄດ້ (ອັນນີ້ ສັນໃດ) ບາບຍ່ອມບໍ່ມີແກ່ຜູ້ທີ່ບໍ່ທຳບາບ ສັນນັ້ນ.

# ເຣື່ອງ ນາຍກຸກກຸຕະມິຕຣ໌

ພຣະບໍຣົມສາສດາ ທຣົງຜາຣົພ ນາຍກຸກກຸຕະມິຕຣ໌. ໃນວັນນຶ່ງ ລາວໄດ້ນຳເອົາຊີ້ນ ບັນທຸກໃສ່ກວຽນເຂົ້າໄປຂາຍໃນເມືອງຣາຊຄຣຶຫ໌. ລິດາຂອງເສຕຖີໃນເມືອງນັ້ນ ແນມເຫັນນາຍພານ ກໍມີຈິຕ ປະຝິພັທລ໌ ຮັກໄຄ່ດ້ວຍບຸພເພສັນນິວາສ (ເຄີຍຮ່ວມສຸຂທຸກຂ໌ກັນມາແຕ່ຊາຕິປາງກ່ອນ) ເວລານາຍກຸກກຸຕະມິຕຣ໌ ເລີກຈາກຕລາດກັບມາ ລິດາຂອງເສຕຖີ ກໍອອກຕິດຕາມຫລັງກວຽນໄປຢູ່ດ້ວຍກັນກັບ ນາຍກຸກກຸຕະມິຕຣ໌ ຈົນມີລູກຊາຍ ໗ ຄົນ ໄດ້ລູກໄພ້ອີກ ໗ ຄົນ.

ພຣະສາສດາ ໄດ້ທອດພຣະເນຕຣ໌ເຫັນ ອຸປະນິສັຍໄສດາປັຕຕິຜົລ ຂອງນາຍພານ ກັບລູກຊາຍ ໗ ແລະ ລູກໄພ້ທັງ ໗ ນັ້ນ ພຣະອົງຄ໌ຈຶ່ງສເດັຈໄປປະທັບນັ່ງຢູ່ບ່ອນທີ່ນາຍພານຫ້າງແຮ້ວໄວ້ນັ້ນ. ບັງເອີນມື້ນັ້ນ ບໍ່ມີເນື້ອຕິດແຮ້ວຈັກຕົວເລີຍ. ຄັນນາຍພານ ເຫັນພຣະສາສດາ ປະທັບຢູ່ໃນທີ່ນັ້ນ ກໍເຂົ້າໃຈວ່າ ພຣະອົງຄ໌ປົດເນື້ອອອກຈາກແຮ້ວຂອງຕົນ ກໍມີໃຈໂກທຮ້າຍ ຍົກທະນູໃສ່ລູກຂຶ້ນຈະຍິງ ແຕ່ດ້ວຍພຣະພຸທລານຸກາພ ພານບໍ່ອາຈະຍິງໄດ້ ໂກ່ງຂາທະນູ ທຳທ່າວ່າຈະຍິງຢູ່ຢ່າງນັ້ນ. ຝ່າຍລູກຊາຍທັງ ໗ ເຫັນ

ບິດາຫາຍຕົວໄປເຫັງຜິດປົກຕິ ຈຶ່ງຖືທະນູອອກຕິດຕາມໄປເບິ່ງ ເຫັນພຣະຜູ້ມີພຣະກາຄເຈົ້າ ກໍເຂົ້າໃຈວ່າ ເປັນປັຈຈາມິຕຣ໌ (ສັຕຣູ) ກັບບິດາຂອງຕົນ ຕ່າງຄົນກໍໂກງທະນູຂຶ້ນຈະຍິງ ທຳທ່າຢູ່ຄືກັນກັບບິດາ.

ຝ່າຍກັຣຍາ ເຫັນສາມີແລະລູກຫາຍໄປດົນ ຕົນແລະລູກໄພ້ກໍອອກຕິດຕາມໄປເບິ່ງ, ຄັນເຫັນເຊັ່ນນັ້ນ ຈຶ່ງຮ້ອງຫ້າມສາມີແລະບຸຕຣ໌ວ່າ ຢ່າປະ-ທຸສຮ້າຍບິດາຂອງເຮົາ. ນາຍພານໄດ້ຍິນ ສຳຄັນວ່າ ພຣະຜູ້ມີພຣະກາຄເຈົ້າເປັນພໍ່ເຖົ້າ ແລະເມື່ອລູກໄດ້ຍິນ ກໍສຳຄັນວ່າ ພຣະອົງຄ໌ ເປັນພໍ່ປູ່ ຈຶ່ງພາກັນປ່ຽນຈິຕໃຈຮັກ ໃນພຣະຜູ້ມີພຣະກາຄເຈົ້າ ພາກັນວາງທະນູ ຄານເຂົ້າໄປຂໍໂທສ. ພຣະອົງຄ໌ຈຶ່ງທຣົງສແດງ ອະນຸປຸພພິກະຖາ ໃຫ້ນາຍພານລູກຊາຍແລະ ລູກໄພ້ ດຳຣົງຢູ່ໃນໂສດາປັຕຕິຜົລແລ້ວ ພຣະອົງຄ໌ຈຶ່ງສເດັຈກັບ.

ບັດນັ້ນ, ພຣະຍອດແກ້ວສັພພັຍຍູ ຈຶ່ງທຣົງສແດງເຣື່ອງນັ້ນ ໃຫ້ພຣະອານົນທ໌ຟັງ. ພຣະກິກຂຸ ທັງຫລາຍ ຈຶ່ງທູລຖາມວ່າ ເມື່ອຈົບພຣະສັມ-ມະເທສນາ ກັຣຍາ ຂອງນາຍພານ ບໍ່ໄດ້ສຳເຣັຈສັມມ໌ ອັນໃດບໍ່?

ພຣະພຸທສອົງຄ໌ ຈຶ່ງຕຣັສວ່າ ນາງໄດ້ສຳເຣັຈໂສດາປັຕຕິຜົລຕັ້ງແຕ່ຄາວທີ່ນາງຍັງເປັນເດັກຢູ່ພຸ້ນ. ພຣະກິກຂຸ ທັງຫລາຍ ສົງສັຍວ່າ ເປັນຫຍັງພຣະໂສດາບັນ ຈຶ່ງທຳປາຕາຕິບາຕ ພຣະສາສດາ ຈຶ່ງທຣົງສແດງວ່າ ພຣະໂສດາບັນ ບໍ່ທຳປາຕາຕິບາຕ ແລ້ວຈຶ່ງຕຣັສພຣະຄາຖາ ຕາມທີ່ໄດ້ຍົກຂຶ້ນມາກ່າວໄວ້ໃນຂ້າງຕົ້ນນີ້.

---

໑໐

ໂຍ ອັປປະທຸຝເຖຸນ ນະຣັສສະ ທຸສສະຕິ
ສຸທລັສສະ ໂປສັສສະ ອະນັງຄະນັສສ
ຕະເມວະ ພາລັງ ປັຈເຈຕິ ປາປັງ
ສຸຂຸໂມ ຣະໂຊ ປະຝິວາຕັງວະ ຂິຕໂຕ ໆ໑໔໕ໆ

ບາບນັ້ນ ຍ່ອມຕາມສນອງຜູ້ທີ່ໂງ່ງ່າວ ທີ່ທຳຮ້າຍບຸຄຄົລຜູ້ທີ່ບໍ່ທຳຮ້າຍຕອບ, ຜູ້ບໍຣິສຸທລິປາສຈາກກິເລສ ຄືດັ່ງຝຸລີ ທີ່ຄົນຫວ່ານທວນລົມ.(ຝຸລີຍ່ອມປິວກັບຄືນຫາຜູ້ທີ່ຫວ່ານ)

## ເຣື່ອງ ນາຍໂກກະສຸນະຂະລຸທທະກະ

(ນາຍພານໝາ)

ພຣະບໍຣົມສາສດາ ທຮງຜາຣົພ ນາຍພານໝາ ຊື່ວ່າ ໂກກະ ເຂົາພາໝູ່ໝາພານຂອງເຂົາ ໄປທ່ຽວລ່າເນື້ອໃນປ່າ. ວັນນັ້ນ ບັງເອີນບໍ່ໄດ້ເນື້ອ ກັບຄືນມາພໍ້ກັບ ພິກຂຸອົງໜຶ່ງ ຈຶ່ງຄິດວ່າ ການທີ່ເຮົາບໍ່ໄດ້ເນື້ອໃນວັນນີ້ ກໍຍ້ອນເຮົາມາພໍ້ກັບຄົນ ກາລະກິນີ ຄົນເຂັດ

ຄົນຂອງຫາກິນບໍ່ພານ ຈຶ່ງມີຄວາມໂກທເຄືອງ ຈູກສຸນັຂໄສ່ ກິກຂຸ ອົງຄ໌ນັ້ນ ໆ ກໍແລ່ນໄປປີນຂຶ້ນຕົ້ນໄມ້. ນາຍພານກໍແລ່ນຕິດຕາມໄປ ເອົາໄມ້ຊຸຕີນ ກິກຂຸ ອົງຄ໌ນັ້ນກໍດີ້ນໄປດິ້ນມາ ຈົນວ່າຜ້າຈີວຣຫລຸດ ຕົກລົງມາປົກຫົວນາຍພານ ຝ່າຍໝາເຫັນ ສຳຄັນວ່ານາຍພານເປັນ ກິກຂຸ ເລີຍພາກັນຫຸ້ມກັດນາຍພານໃຫ້ເຖິງແກ່ຄວາມຕາຍ.

ຄັນໝາ ເຫລົ່ານັ້ນ ຫລີກໜີໄປແລ້ວກິກຂຸກໍລົງມາຈາກຕົ້ນ ໄມ້. ກິກຂຸເກີດຄວາມສົງສັຍໃນ ເຣື່ອງສີລຂອງຕົນ ຈຶ່ງມາເຝົ້າທູລ ຖາມພຣະສາສດາ. ພຣະອົງຄ໌ ທຣົງສແດງວ່າ ເຈົ້ານັ້ນ ບໍ່ມີສີລດ່າງ ພ້ອຍ ໃນເຣື່ອງນັ້ນ ແລ້ວຈຶ່ງຕຣັສພຣະຄາຖາດັ່ງທີ່ຍົກຂຶ້ນມານັ້ນ.

---

໑໑

ຄັພກະເມເກ ອຸປະປັຊຊັນຕິ
　　ນິຣະຍັງ ປາປະກັມມິໂນ
ສັຄຄັງ ສຸຄະຕິໂນ ຍັນຕິ
　　ປະຣິນິພພັນຕິ ອະນາສະວາ ໑໑໔໖໑

ສັຕວ໌ບາງພວກ ກັບຄືນມາເກີດ ໃນໂລກນີ້ອີກ ພວກທີ່ທຳ

ບາບໄປເກີດໃນນະຣົກ, ພວກທີ່ທຳດີ ໄປສວັຣຄ໌, ພວກທີ່ໝົດຊຶ່ງອາສວະ ກິເລສ ປຣິນິພພານ.

## ເຣື່ອງ ມະນີກາຣອຸປະປາຕິສສະເຖຣະ

ພຣະບໍຣົມສາສດາ ທຣົງຜາຣົພ ພຣະຕິສສະເຖຣະ ຜູ້ເຂົ້າໄປສູ່ຕະກູລ ຂອງນາຍຊ່າງມະນີ (ຊ່າງເຈັຍຣະໄນແກ້ວ). ວັນນຶ່ງ ພຣະເຈົ້າປະເສນທິໂກສົລ ພຣະຣາຊທານແກ້ວ ໃຫ້ນາຍມະນີກາຣນັ້ນເຈັຍຣະໄນ. ນາຍມະນີກາຣ ກຳລັງນັ່ງຫັ່ນຊີ້ນ ມືເປື້ອນເລືອດຢູ່ຈຶ່ງວາງແກ້ວນັ້ນໄວ້ທີ່ຂຽງ ແລ້ວເຂົ້າໄປລ້າງມືຂ້າງໃນເຮືອນ.

ຂະນະນັ້ນ, ນົກຂຽນ ທີ່ນາຍມະນີກາຣລ້ຽງໄວ້ນັ້ນ ເຫັນແກ້ວສຳຄັນວ່າເປັນຊີ້ນ ຈຶ່ງຈິກກືນເສີຍ. ນາຍມະນີກາຣອອກມາບໍ່ເຫັນແກ້ວມະນີ, ສົງສັຍ ພຣະຕິສສະເຖຣະ ຊຶ່ງນັ່ງຢູ່ໃນທີ່ນັ້ນລັກເອົາໄປ. ຈຶ່ງຖາມເພິ່ນ ໆ ຕອບວ່າ ເຮົາບໍ່ໄດ້ເອົາໄປ. ນາຍມະນີກາຣ ຈຶ່ງຄິດວ່າ ຖ້າເຮົາຈະຖາມໂດຍດີບໍ່ໄດ້ ເຮົາຕ້ອງບີບຄັ້ນຖາມຈຶ່ງຈະໄດ້. ຄິດແລ້ວຈຶ່ງເອົາເຊືອກມາມັດຄໍພຣະເຖຣະ ແລ້ວຕີດ້ວຍທ່ອນໄມ້ຈົນຕາເຫລືອກອອກມາ ໂລຫິຕໄຫລອອກທາງຫູແລະທາງດັງ. ນົກຂຽນ

ເຫັນກໍແລ່ນເຂົ້າມາກິນໄລທີຕນັ້ນ. ນາຍມະຕິກາຣ ກໍາລັງໃຈຮ້າຍ ຈຶ່ງຕະນິກຂຽນນັ້ນຕາຍ. ຄັນນິກຂຽນຕາຍແລ້ວ ພຣະເຖຣະຈຶ່ງໄດ້ບອກຄວາມນັ້ນ. ນາຍມຕິກາຣ ຈຶ່ງເອົາມີດຜ່າທ້ອງນິກຂຽນ ໄດ້ຊຶ່ງແກ້ວມຕີແລ້ວ ກໍເກີດຄວາມສລົດໃຈ ຂໍໂທສພຣະເຖຣະເຈົ້າ ຢູ່ມາບໍ່ຊ້າ ພຣະເຖຣະ ກໍປຣິນິພພານ.

ຝ່າຍນິກຂຽນ ເມື່ອຕາຍໄປແລ້ວ ກໍມາຖືປຜິສົນຄິ ໃນທ້ອງຂອງກັຣຍາ ຂອງນາຍມຕິກາຣ. ນາຍມຕິກາຣ ທໍາກາລະກິຣິຍາຕາຍໄປແລ້ວ ໄປເກີດໃນນະຣົກ. ກັຣຍາ ໄປເກີດໃນເທວໂລກ.

ພຣະກິກຂຸ ທັງຫລາຍ ຈຶ່ງທູລຖາມສັມປຣາຍະກົພຂອງສັຕວ໌ເຫລົ່ານັ້ນ ແດ່ ພຣະສາສດາ ພຣະອົງຄ໌ ຈຶ່ງຕຣັສພຣະຄາຖາດັ່ງກ່າວ

---

໑໔

ນະ ອັນຕະຣິກເຂ ນະ ສມຸທທະມັຊເຊ
ນະ ປັພພະຕານັງ ວິວະຣັງ ປະວິສສະ
ນະ ວິຊຊະຕີ ໂສ ຊະຄະຕິປປະເທໂສ
ຍັຕຣັກີຕັງ ມຸຈເຈຍຍະ ປາປະກັມມາ໑໑໔ກາ໑

ບໍ່ວ່າ ຈະຢູ່ບົນທ້ອງຟ້າ, ບໍ່ວ່າ ຈະຢູ່ໃນທ່າມກາງ ມຫາສມຸທຣ໌, ບໍ່ວ່າ ຈະຢູ່ໃນຮ່ອມພູ. (ໃນສຖານທີ່ເຫລົ່ານີ້) ບໍ່ມີແມ່ນແຕ່ແຫ່ງດຽວ ທີ່ຜູ້ທຳກັມມ໌ຊົ່ວ ຈະໄປລີ້ຊ່ອນຢູ່ ຈະໜີພົ້ນຈາກກັມມ໌ຊົ່ວໄປໄດ້.

# ເຣື່ອງ ຕະໄຍຊົນ

ພຣະບໍຣົມສາສດາ ທຣົງຜາຣົພຄົນ ໓ ຄົນ. ຜູ້ທີ່ ໑ ໄຟໄໝ້ຫລັງຄາເຮືອນ, ກວ້ານຮອງກົ້ນໝໍ້ປິ່ວຂຶ້ນໄປໃນອາກາສ ໄປຄ້ອງຄໍກາ ຕົວນຶ່ງທີ່ບິນແສ່ວມາ ໄຟໄໝ້ຕົກລົງມາຕາຍ. ພຣະພິກຂຸ ທີ່ໄດ້ເຫັນ ຈຶ່ງໄປເຝົ້າທູລຖາມ ພຣະສາສດາ. ຄົນຜູ້ທີ່ ໒ ເຮືອສຳເພົາລຳນຶ່ງ ແລ່ນໄປໃນສມຸທຣ໌ແລ້ວ ຫຍຸດເສີຍຢູ່ ບໍ່ເຄື່ອນໄຫວຕໍ່ໄປ ຄົນໃນເຮືອຈຶ່ງໄດ້ສັນນິຖານວ່າຮອຍວ່າຈະມີຄົນ ກາລະກິນີເຂັດຂວາງຢູ່ໃນເຮືອນີ້ ຈຶ່ງຈັບສລາກສ່ຽງທວາຍເບິ່ງ. ສລາກ ກາລະກິນີ ຕົກຖືກກັຣຍານາຍສຳເພົາເຖິງ ໓ ເທື່ອ. ນາຍສຳເພົາ ບໍ່ມີທາງເລືອກ ກໍເອົາເຊືອກຜູກຄໍກັຣຍາ ຖ່ວງນໍ້າຕາຍ ເຮືອຈຶ່ງແລ່ນໄປໄດ້ເປັນປົກະຕິ. ພຣະພິກຂຸ ອາສັຍມາໃນເຮືອລຳນັ້ນ ຈຶ່ງໄດ້ໄປເຝົ້າທູລຖາມ ພຣະສາສດາ. ທີ່ ໓ ມີພຣະພິກຂຸ ພວກຫນຶ່ງ ມີ ໗ ອົງຄ໌ ດ້ວຍກັນເຂົ້າໄປອາສັຍຢູ່ໃນຖໍ້າ ໃນເວລາກາງຄືນ ມີສີລາກ້ອນໃຫຍ່ເທົ່າເຮືອນທໍ່ກິ້ງລົງມາອັດປາກຖໍ້າ ຈະເຮັດຢ່າງໃດ ກໍອອກບໍ່ໄດ້. ເວລາລ່ວງໄປໄດ້ ໗ ວັນ ສີລາກ້ອນນັ້ນ ຈຶ່ງກິ້ງອອກເອງ. ພຣະພິກຂຸ ທັງ ໗ ອົງຄ໌ນັ້ນຈຶ່ງໄດ້ພາ

ກັນໄປເຝົ້າ ທູລຖາມ ພຣະສາສດາ ພ້ອມກັບກິກຂຸ ໔ ພວກ.

ພຣະບໍຣົມສາສດາ ຈຶ່ງທຣົງສແດງບຸພພກັມມ໌ ຂອງ ສັຕວ໌ເຫລົ່າ ນັ້ນ ໂດຍລຳດັບ ດັ່ງນີ້ : ທີ່ ໑ ການັ້ນ ເຄີຍເປັນຊາວນາ ຮ້າຍໃຫ້ງົວທຶກ ຕົວນຶ່ງ ເມື່ອຈະທໍຣະມານມັນນັ້ນ ຈຶ່ງເອົາຟາງມາຜູກເຮັດເປັນວົງກົມ ສວມ ໃສ່ຄໍມັນແລ້ວ ເອົາໄຟຈູດຈົນມັນຕາຍ. ທີ່ ໔. ຜູ້ຍິງນັ້ນ ໃນຊາຕິປາງກ່ອນ ຮ້າຍໃຫ້ສຸນັຂວ່າໄປໃສ ມັນກໍຕາມຫລັງໄປ ຈົນຄົນອື່ນ ເຂົາເວົ້າເຍີ້ຍໃສ່ ຈຶ່ງເອົາໝໍ້ໃສ່ດິນຊາຍ ຜູກໃສ່ຄໍມັນຖ່ວງນ້ຳຕາຍ. ທີ່ ໓ ກິກຂຸ ໗ ອົງຄ໌ ນັ້ນ ໃນຊາຕນຶ່ງ ເຄີຍເປັນເດັກນ້ອຍລ້ຽງງົວ ເຫັນເຫັ້ຍຕົວນຶ່ງ ຊວນກັນ ໄລ່ຈັບ ມັນແລ່ນເຂົ້າໄປໃນໂພນປວກ ຈຶ່ງພາກັນອັດຮູມັນໄວ້ ແລ້ວລືມ ໄປ ໗ ວັນ ຈຶ່ງນຶກຂຶ້ນໄດ້ ແລ້ວຊວນກັນໄປໄຂຮູໃຫ້ມັນອອກ.

ໃນທີ່ສຸດ ອະດີຕນິທານ ພຣະພຸທສອົງຄ໌ ຈຶ່ງໄດ້ຕຣັສພຣະຄາຖານີ້

---

## ໑໓

ນະ ອັນຕະຣິກເຂ ນະ ສະມຸທທະມັຊເຊ
ນະ ປັພພະຕານັງ ວິວະຣັງ ປະວິສສະ
ນະ ວິຊຊະຕີ ໂສ ຊະຄະຕິປປະເທໂສ
ຍັຕະຣັຜກີຕັງ ນັປປະສະເຫຍຍະ ມັຈຈຸ ຯ໑໔໗ຯ

ບໍ່ວ່າ ຈະຢູ່ບົນທ້ອງຟ້າ, ບໍ່ວ່າຈະຢູ່ໃນທ່າມກາງ ມະຫາສະມຸທຣ໌, ບໍ່ວ່າຈະຢູ່ໃນຮ່ອມພູເຂົາເລິກ ກໍຕາມ ບໍ່ມີແມ່ນແຕ່ແຫ່ງດຽວ ທີ່ຄົນເຮົາອາສັຍຢູ່ແລ້ວ ຈະໜີພົ້ນຈາກຄວາມຕາຍໄປໄດ້.

## ເຣື່ອງ ສຸປປະພຸທທະສັກກະ

ພຣະບໍຣົມສາສດາ ທຣົງຜາຣົພ ສຸປປະພຸທທະ ສັກຍຣາຊ ຜູ້ເປັນພຣະຣາຊບິດາ ຂອງ ພຣະນາງພິມພາ ແລະພຣະເທວທັຕ ແຄ້ນພຣະທັຍໃນພຣະຜູ້ມີພຣະກາຄເຈົ້າວ່າ ປະຖິ້ມ ພຣະນາງພິມພາໃຫ້ເປັນແມ່ຮ້າງ ແລະໃຫ້ພຣະເທວທັຕ ບວຊແລ້ວ ຕັ້ງຢູ່ໃນຄວາມເປັນຜູ້ມີເວຣ. ວັນນຶ່ງ ໃຫ້ຄົນອັດທາງ ບໍ່ໃຫ້ສເດັຈດຳເນີນໄປ ກະທຳກັຕກິຈ. ພຣະສາສດາ ກໍສເດັຈກັບແລ້ວຮັບສັ່ງ ກັບພຣະອານົນທ໌ວ່າ ສຸປປະພຸທທະ ໄດ້ກະທຳກັມມ໌ອັນໜັກ ບໍ່ໃຫ້ທົນທາງແກ່ ພຣະພຸທທະ ເຊັ່ນເຮົາ. ໃນວັນທີ່ ໗ ແຜ່ນດິນຈະສູບຢູ່ທີ່ຕີນຂັ້ນໄດພາຍໃຕ້ຜາສາທ. ຄົນສອດແນມໄດ້ຟັງເຊັ່ນນັ້ນ ຈຶ່ງນຳຄວາມນັ້ນໄປທູລແດ່ ສຸປປະພຸທທະສັກຍຣາຊ ເມື່ອພຣະອົງຄ໌ ໄດ້ທຣົງຊາບ ກໍທຣົງດຳຣິວ່າ ຈະປັບພຣະສາສດາວ່າ ກ່າວເທັຈ, ຈຶ່ງໃຫ້ຂົນເຄື່ອງຣາຊູປະໂພຄຂຶ້ນໄປໄວ້ບົນຜາສາທຊັ້ນທີ່ ໗ ສເດັຈຂຶ້ນໄປປະທັບຢູ່ຂ້າງບົນ ແລ້ວໃຫ້ຄົນຊັກຂັ້ນໄດຂຶ້ນໄວ້ອັດປະຕູ. ຈັດເອົາຄົນທີ່ລ່ຳສັນໄວ້ທີ່ທວາຣລະ ໔ ຄົນ.

ສັ່ງວ່າ ຖ້າເຮົາຈະລົງມາຂ້າງລຸ່ມດ້ວຍຄວາມປະມາທ ກໍໃຫ້ຫ້າມໄວ້. ຄັນເຖິງວັນທີ່ ໆ ນຸງຄຸລອັສດຣ ຂອງ ສຸປປະພຸທລສັກຍຣາຊ ສິ່ງສຽງແຫນບໍ່ມີຫຍຸດຍັ້ງເລີຍ. ພຣະອົງຄ໌ຢາກຈະສເດັຈລົງ. ຂຕະນັ້ນ ທວາຣທັງຫລາຍກໍໄຂເອງ, ຂັ້ນໄດທີ່ຊັກຂຶ້ນໄວ້ ກໍມາກ່າຍຢູ່ຕາມເດີມ, ຄົນລໍ່າສັນທີ່ເຝົ້າປະຕູນັ້ນ ກໍກັບຊຸກພຣະອົງຄ໌ລົງຊໍ້າ ຕລອດເຖິງຂັ້ນໄດພາຍໃຕ້ຜາສາທ. ມຫາປກະພີ ກໍແຍກອອກຮັບສເດັຈໄປເກີດໃນອະເວຈີນະຣົກ.

ພຣະສາສດາ ຈຶ່ງໄດ້ຕຣັສຊຶ່ງ ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມານັ້ນ.

---

# ທັຕທະວັຄຄ໌ ທີ່ ໑໐
## ໝວດ ວ່າດ້ວຍ ໂທສທັຕທ໌

໑

ສັພເພ ຕະສັນຕິ ທັຕທັສສະ
ສັພເພ ພາະຍັນຕິ ມັຈຈຸໂນ
ອັຕຕານັງ ອຸປະມັງ ກັຕວາ
ນະ ຫະເນຍຍະ ນະ ຂາເຕຍຍະ ໑໔໙

ສັຕວ໌ ທັງຫລາຍ ຍ່ອມຢ້ານກົວ ຕໍ່ໂທສທັຕທ໌, ສັຕວ໌ທັງໝົດ ຍ່ອມຢ້ານຕາຍ ປຽບຕົນເອງໃສ່ກັບຜູ້ອື່ນ ຢ່າງນີ້ແລ້ວ ກໍບໍ່ຄວນຂ້າເອງ ບໍ່ຄວນສັ່ງໃຫ້ຄົນອື່ນຂ້າ.

## ເຣື່ອງ ຉັພພັຄຄີຍ໌ກິກຂຸ

ພຣະບໍຣົມສາສດາ ທຣົງປາຣົພ ກິກຂຸ ຉັພພັຄຄີຍ໌ ເມື່ອກິກຂຸ ສັຕຕຣະສະວັຄຄີຍ໌ ປັດກວາດເສນາສນະ ໄວ້ດີແລ້ວ ຈຶ່ງກ່າວວ່າ ທ່ານທັງຫລາຍຈົ່ງອອກໄປເສັຍ ເຮົາເປັນໃຫຍ່ກວ່າ, ເສນາສນະນີ້ ເປັນຂອງເຮົາ.

ກິກຂຸ ສັຕຕຣະສະວັຄຄີຍ໌ ຈຶ່ງກ່າວວ່າ ເຮົາບໍ່ຍອມໃຫ້ ເຮົາໄດ້ກວາດແຜ້ວໄວ້ກ່ອນແລ້ວ. ກິກຂຸ ຉັພພັຄຄີຍ໌ ຈຶ່ງໄດ້ຕີ ກິກຂຸ ສັຕຕຣສະວັຄຄີຍ໌ ໆ ມີຄວາມຢ້ານກົວ ຈຶ່ງໄດ້ຮ້ອງໄຫ້ດ້ວຍສຽງດັງ

ພຣະສາສດາທຣົງຊາບ ຈຶ່ງທຣົງບັດນັຕິສິກຂາບົທ ຫ້າມການປະຫານ ຕີບຕີກັນ. ແລ້ວ**ຈຶ່ງຕຣັສພຣະຄາຖາ** ດັ່ງທີ່ຍົກຂຶ້ນມາຂ້າງເທິງນີ້.

---

## ໔

ສັພເພ ຕະສັນຕິ ທັຕາທັສສະ
ສັພເພສັງ ຊີວິຕັງ ເສຍໂຍ
ອັຕຕານັງ ອຸປະມັງ ກັຕວາ
ນະ ຫະເນຍຍະ ນະ ฆາຕະເຍ ໆ໑໓໐ໆ

ສັຕວ໌ ທັງຫລາຍ ຍ່ອມຢ້ານກົວ ຕໍ່ໂທສທັຕທ໌, ສັຕວ໌ ທັງຫລາຍ ຮັກຊີວິຕວ໌ ຂອງຕົນ. ເມື່ອປຽບຕົນເອງ ກັບຄົນອື່ນ ຢ່າງນີ້ແລ້ວ, ບໍ່ຄວນຂ້າເອງ ແລະ ບໍ່ສັ່ງໃຫ້ຜູ້ອື່ນຂ້າ.

## ເຣື່ອງ ຉັພພັຄຄີຍ໌ກິກຂຸ

ພຣະບໍຣົມສາສດາ ທຣົງຜາຣົພ ພວກກິກຂຸ ຉັພພັຄຄີຍ໌ ດ້ວຍເຫຕຸ

ເໝືອນກັບທີ່ກ່າວເຖິງ ມາແລ້ວນັ້ນ. ໃນເຣື່ອງນີ້ ຠິກຂຸ ຈັພພັຄຄີຍ໌ ໄດ້ເງືອດມືຂຶ້ນວ່າຈະຕີ ຠິກຂຸສັຕຕຣະສະວັຄຄີຍ໌ ທີ່ເຄີຍຖືກທຸບຕີ ມາແລ້ວນັ້ນ ກໍຢ້ານກົວ ຈຶ່ງໄດ້ຮ້ອງໄຮຂຶ້ນ. ພຣະສາສດາ ທຣົງຊາບ ຈຶ່ງທຣົງບັຌຌັຕິສິກຂາບົທ ຫ້າມການເງືອດມືຈະຕີ. ແລ້ວຈຶ່ງຕຣັສພຣະຄາຖາ ດັ່ງກ່າວນີ້.

---

໓

ສຸຂະກາມານິ ຠູຕານິ
ໂຍ ທັຓເຑນະ ວິຫິງສະຕິ
ອັຕຕະໂນ ສຸຂະເມສາໂນ
ເປຈຈະ ໂສ ນະ ລະຠະເຕ ສຸຂັງ ໆ໑໓໑ໆ

ສັຕວ໌ ທັງຫລາຍ ລ້ວນແຕ່ ຕ້ອງການຄວາມສຸຂ. ຜູ້ທີ່ຕ້ອງການຄວາມສຸຂແກ່ຕົນ, ແຕ່ບຽດບຽນສັຕວ໌ອື່ນ ເມື່ອຕາຍໄປແລ້ວ ຍ່ອມບໍ່ໄດ້ຮັບຄວາມສຸຂ.

໔

ສຸຂະກາມານິ ຠູຕານິ
ໂຍ ທັຓເຑນະ ນະ ຫິງສະຕິ

ອັຕຕະໂນ ສຸຂະເມສາໂນ
ເປຈຈະ ໂສ ລະກະເຕ ສຸຂັງ ໑໑໓໔໑

ສັຕວ໌ ທັງຫລາຍ ລ້ວນແຕ່ ຕ້ອງການຄວາມສຸຂ, ຜູ້ທີ່ຕ້ອງການຄວາມສຸຂ ແກ່ຕົນ ບໍ່ບຽດບຽນ ສັຕວ໌ອື່ນ ເມື່ອຕາຍໄປແລ້ວ ຍ່ອມໄດ້ຮັບຊຶ່ງຄວາມສຸຂ.

# ເຣື່ອງ ສັມພະຫຸລະກຸມາຣ

ພຣະບໍຣົມສາສດາ ທຣົງຜາຣົພ ພວກກຸມາຣ ທັງຫລາຍ ທີ່ຫຸ້ມກັນຕີງູຢູ່ ພຣະພຸທສອົງຄ໌ ທ່ຽວບິຕຫບາຕ ໃນເມືອງສາວັຕຖີ ທອດພຣະເນຕຣ໌ເຫັນ ຈຶ່ງຮັບສັ່ງຖາມວ່າ ຕູເຈົ້າ ທັງຫລາຍ ເຮັດຫຍັງກັນ ກຸມາຣທັງຫລາຍ ເຫລົ່ານັ້ນ ຈຶ່ງທູລວ່າຕີງູ ພຣະເຈົ້າຂ້າ. ຕີມັນເພາະເຫຕຸໃດ? ເພາະຢ້ານມັນຕອດ ພຣະເຈົ້າຂ້າ. ພຣະອົງຄ໌ ຈຶ່ງໄດ້ຕຣັສພຣະຄາຖາດັ່ງກ່າວນີ້.

---

໕

ມາໂວ ຈະ ຜະຣຸສັງ ກັລຈິ
ວຸຕຕາ ປະຝິວະເທຍຍຸ ຕັງ

ທຸກຂາ ຫິ ສາຣັມກະກະຖາ
ປະຜິທັດຫາ ຜຸເສຍຍຸ ຕັງ. ໑໓໓໑

ຢ່າໄດ້ກ່າວຄຳຫຍາບຊ້າ ກ້າແຂງ ໃສ່ຜູ້ໃດ, ເມື່ອຖືກຜູ້ອື່ນ ດ່າວ່າ ເຂົາຈະໂຕ້ຕອບເຮົາ. ການເວົ້າຄຳຫຍາບຊ້າ ກ້າແຂງໃສ່ກັນນັ້ນ ເປັນເຫດ ໃຫ້ເກີດທຸກຂ໌ ອາຈລຸກລາມໄປເຖິງຂັ້ນລົງມື ປະຫຸສຮ້າຍກັນ.

໕

ສະເຈ ເນເຣສິ ອັຕຕານັງ
ກັງໄສ ອຸປະຫະໂຕ ຍະຖາ
ເອສະ ປັຕໂຕສິ ນິພພານັງ
ສາຣັມໂກ ເຕ ນະ ວິຊຊະຕິ ໑໓໔໑

ຖ້າວ່າ ທ່ານທຳຕົນ ໃຫ້ງຽບສງຽງໄດ້ ເໝືອນຄ້ອງ ຣະຄັງ ແຕກ ກໍນັບໄດ້ ວ່າທ່ານເຂົ້າເຖິງນິພພານແລ້ວ. ທ່ານບໍ່ຕ້ອງໄດ້ໄປທະເລາະວິວາທກັບໃຜອີກ

## ເຣື່ອງ ພຣະໂກດທະລານະເຖຣະ

ພຣະບໍຣົມສາສດາ ທຣົງຜາຣົພ ພຣະໂກດທະລານະເຖຣະ. ຕັ້ງແຕ່ ເພິ່ນບວຊແລ້ວ ມີຮູສຕຣີນຶ່ງ ທ່ຽວໄປກັບພຣະເຖຣະ ເໝືອນດັ່ງເງົາຕາມ

ຕົວໄປຕລອດ. ສ່ວນພຣະເຖຣະເອງ ບໍ່ເຫັນ ແຕ່ວ່າ ມຫາຊົນເຫັນ. ຂໍ້ນີ້ເປັນບຸພພະກັມມ໌. ໃນຄັ້ງພຸທຘສາສນາ ພຣະກັສສປະທົສພົລພຸ້ນ ພຣະເຖຣະ (ອົງຄ໌ດັ່ງກ່າວນີ້) ເປັນເທວະດາ ຕັ້ງແກ້ງ ເນຣະມິຕເປັນສຕຣີ ມາຢູ່ຂ້າງຫລັງ ຂອງຠິກຂຸ ອົງຄ໌ນຶ່ງ ແລະໃຫ້ຠິກຂຸ ສອງອົງຄ໌ ບໍ່ມັກ ຄຶກຽດຊັງ ສົງສັຍ ແຕກສາມັຄຄີກັນ. ກັມມ໌ນັ້ນ ນຳມາໃຫ້ຜົລໃນພຸທຘກາລນີ້.

ຠິກຂຸ ທັງຫລາຍ ຫາວ່າເພິ່ນເປັນຜູ້ທຸສິລ. ເພິ່ນກໍ່ກ່າວຫາ ຠິກຂຸ ທັງຫລາຍວ່າ ເປັນຜູ້ທຸສິລຄືກັນ. ພຣະຠິກຂຸ ເຫລົ່ານັ້ນ ຈຶ່ງເຂົ້າໄປທູລຊີ້ງ ເຣື່ອງດັ່ງກ່າວນັ້ນ ແດ່ ພຣະສາສດາ. ພຣະອົງຄ໌ຈຶ່ງຮັບສັ່ງໃຫ້ຫາຕົວມາຊຳຣະ ແລ້ວຈຶ່ງຕຣັສ ພຣະຄາຖາ ດັ່ງກ່າວນີ້.

໗

ຍະຖາ ທັຓເຫນະ ໂຄປາໂລ
ຄາໂວ ປາເຊຕິ ໂຄຈະຣັງ
ເອວັງ ຊະຣາ ຈະ ມັຈຈຸ ຈະ
ອາຍຸງ ປາເຊນຕິ ປາຓີນັງ ໑໓໕

ຄວາມແກ່ ແລະ ຄວາມຕາຍ ໄລ່ຕ້ອນອາຍຸສັຕວ໌ ທັງຫລາຍໄປເໝືອນດັ່ງ ເດັກນ້ອຍລ້ຽງງົວ ຖືທ່ອນໄມ້ ໄລ່ຕ້ອນຝູງງົວ ໄປສູ່ທີ່ຫາກິນ.

# ເຣື່ອງ ອຸໂບສຖະກັມມ໌

ພຣະບໍຣົມສາສດາ ທຣົງພາຣົພ ອຸໂບສຖະກັມມ໌ ການຮັກສາອຸໂບສົຖ ສິລ ຂອງພວກອຸບາສິກາ ອັນມີນາງ ວິສາຂາ ເປັນຕົ້ນ. ໃນວັນອຸໂບສົຖອັນນຶ່ງ ນາງວິສາຂາ ຖາມບັນດາ ອຸບາສິກາ ທັງຫລາຍ ເຫລົ່ານັ້ນວ່າ ທ່ານທັງຫລາຍ ຮັກສາອຸໂບສົຖ ເພື່ອປະໂຍຊນ໌ ອັນໃດ?

ພວກອຸບາສິກາ ຜູ້ແກ່ອາຍຸ ຕອບວ່າ ເພື່ອທິພຍ໌ສົມບັຕິ. ອຸບາສິກາອາຍຸປານກາງ ຕອບວ່າ ເພື່ອບໍ່ໃຫ້ສາມີໄປມີກັຣຍາອື່ນອີກ, ອຸບາສິກາທີ່ຍັງໜຸ່ມຢູ່ ຕອບວ່າເພື່ອໃຫ້ໄດ້ລູກກົກ ເປັນຜູ້ຊາຍ, ພວກອຸບາສິກາສາວນ້ອຍນັ້ນ ຕອບວ່າ ເພື່ອມີສາມີແຕ່ຍັງໜຸ່ມ.

ນາງວິສາຂາ ໄດ້ສດັບຖ້ອຍຄໍາ ຂອງ ອຸບາສິກາ ເຫລົ່ານັ້ນແລ້ວ ຈຶ່ງພາຕົວເຂົ້າເຝົ້າທູລຄວາມນັ້ນ ແດ່ ພຣະສາສດາ ໂດຍລໍາດັບ ພຣະອົງຄ໌ທຣົງສແດງ ພຣະທັມມິກະຖາ ແລ້ວຈຶ່ງຕຣັສ ພຣະຄາຖາດັ່ງທີ່ຍົກຂຶ້ນມານັ້ນ.

---

ໆ

ອະຖະ ປາປານິ ກັມມານິ
ກະຣັງ ພາໂລ ນະ ພຸຊຊະຕິ
ເສຫິ ກັມເມຫິ ທຸມເມໂຊ
ອັຄຄິທັຑໂຒວະ ຕັປປະຕິ ໆ໑໓໖ໆ

ຄົນພາລ ເວລາທຳຄວາມຊົ່ວ ກໍບໍ່ຮູ້ສຶກສຳນຶກເຖິງຜົລຂອງມັນ ຄົນບໍ່ມີ ປັນຍາ ມັກຈະເດືອດຮ້ອນ ເໝືອນໄຟໄໝ້ ຍ້ອນກັມມ໌ຊົ່ວຂອງຕົນ.

## ເຣື່ອງ ອຊະຄຣະເຜຕ

ພຣະບໍຣົມສາສດາ ທຣົງຜາຣົພ ອະຊະຄຣະເຜຕ ມີອັຕຕາພເໝືອນດັ່ງ ງູເຫລືອມ ຍາວປະມາຕ ໒໕ ໂຍຊນ໌. ແດງເຣືອງເຣື່ອ ເໝືອນແປວໄຟ. ເມື່ອ ພຣະໂມຄຄັລລານະ ລົງຈາກພູເຂົາ ຄິຊຊະກູຍ ໄດ້ເຫັນງູຕົວນັ້ນດ້ວຍທິພຍ໌ຈັກຂຸ ມາເລົ່າເຣື່ອງດັ່ງກ່າວ ກັບພຣະລັກຂະນະເຖຣະ ຕໍ່ໜ້າພຣະທີ່ນັ່ງ. ພຣະສາສດາ ຈຶ່ງທຣົງສແດງວ່າ ເຮົາໄດ້ເຫັນເໝືອນກັນ.

ພຣະກິກຂຸ ທັງຫລາຍ ຈຶ່ງທູລຖາມເຖິງບຸພພກັມມ໌ ຂອງເຜຕນັ້ນພຣະອົງຄ໌ ຈຶ່ງຕຣັສເຣື່ອງ ອດີຕກາລມາໃຫ້ຟັງວ່າ. ຄັ້ງພຣະສາສນາ ຂອງພຣະກັສສປະທົສພົລພຸທລເຈົ້າ ເຜຕນັ້ນເປັນໂຈຣ ທຳຮ້າຍ ສຸນງຄຸລເສຕຖີເຜົານາ ຕັດຂາງົວ ເອົາໄຟເຜົາເຮືອນຂອງເສຕຖີ ຢ່າງລະ ໗ ເທື່ອ ກໍຍັງບໍ່ພໍໃຈອີກ ຈຶ່ງໄປເຜົາ ພຣະຄັນລະກຸຜິ ທີ່ເສຕຖີສ້າງຖວາຍ ພຣະກັສສປະທົສພົລ ນັ້ນເສັຍອີກ. ຄັນແຕກກາຍທຳລາຍຂັນຄ໌ ແລ້ວໄປເກີດໃນ ອະເວຈີ-ນະຣົກ. ຕົກມາໃນພຸທລກາລນີ້ ໄດ້ເກີດເປັນ ອະຊຄຣະເຜຕ ມີໄຟໄໝ້ຢູ່ທີ່ພູເຂົາຄິຊຊະກູຍ ໃນທີ່ສຸດ ອະດີຕນິທານ ນີ້ແລ້ວ ພຣະຍອດແກ້ວ ສັພ-ພັນຍູ ຈຶ່ງໄດ້ຕຣັສ ພຣະຄາຖາ ດັ່ງທີ່ຍົກຂຶ້ນມາກ່າວໃນຂ້າງເທິງນີ້.

---

## ໙

ໂຍ ທັຕເທນະ ອະທັຕເທສຸ
ອັປປະທຸຍເຖນະ ທຸສສະຕິ
ທະສັນນະມັລລະຕະອັງ ຖານັງ
ຂິປປະເມວະ ນິຄັຈຈະຕິ ฯ໑໓໗ฯ

ຜູ້ທຳຮ້າຍລົງໂທສທັຕທ໌ ແກ່ບຸຄຄົລ ຜູ້ທີ່ບໍ່ບຽດບຽນໃຜ, ບໍ່ທຳຮ້າຍໃຜຍ່ອມໄດ້ຮັບຜົລຕອບສນອງ ສິບຢ່າງ,ຢ່າງໃດຢ່າງນຶ່ງ ທັນຕາເຫັນ.

## ໑໐

ເວທະນັງ ຜະຣຸສັງ ຊານິງ
ສະຣີຣັສສະ ຈະ ເພຣະນັງ
ຄະຣຸກັງ ວາປິ ອາພາລັງ
ຈິຕຕັກເຂປັງວະ ປາປຸເນ ฯ໑໓໘ฯ

(ຜູ້ທຳຮ້າຍ ຜູ້ທີ່ບໍ່ທຳຮ້າຍ) ຍ່ອມໄດ້ຮັບ ຄວາມທຸກຂະເວທນາຢ່າງຮ້າຍແຮງ, ໄດ້ຮັບຄວາມເສື່ອມເສັຍ, ຖືກທຳຮ້າຍຮ່າງກາຍ, ເຈັບປ່ວຍໜັກກາຍເປັນຄົນວິກົລຈຣິຕ.

## ໑໑

ອາຊະໂຕ ວາ ອຸປະສັຄຄັງ
ອັພກັກຂານັງ ວະ ທາອຸຕັງ
ປະອິກຂະຍັງ ວະ ຍາຕີນັງ
ໂກຄານັງ ວະ ປະກັງຄຸຕັງ ໆ໑໓໙ໆ

(ຜູ້ທຳຮ້າຍ ຜູ້ທີ່ບໍ່ທຳຮ້າຍ) ຍ່ອມຕ້ອງອາຊຍາ, ຖືກກ່າວຫາຢ່າງຮຸນແຮງ, ໄຮ້ຍາຕີ ຂາດມິດອ, ທຣັພຍ໌ສົມບັຕິ ກໍພິນາສ ຈິບຫາຍ.

## ໑໔

ອະຖະວາສສະ ອະຄາອານິ
ອັຄຄີ ທະຫະຕິ ປາວະໂກ
ກາຍັສສະ ເວທາ ທຸປປັລໂຍ
ນິຣະຍັງ ໂສ ອຸປປັຊຊະຕິ ໆ໑໔໐ໆ

(ຄົນທຳຮ້າຍ ຜູ້ທີ່ບໍ່ທຳຮ້າຍ) ບໍ່ວ່າ ບ້ານ ຫຣືວ່າ ເຮືອນຂອງເຂົາ ຍ່ອມຖືກໄຟໄໝ້ ເມື່ອຕາຍໄປ ເຂົາຜູ້ທີ່ໄຮ້ປັນຍາ ດັ່ງກ່າວນີ້ຍ່ອມຕົກນຣົກ

# ເຣື່ອງ ພຣະມຫາໂມຄຄັລລານະ

ພຣະບໍຣົມສາສດາ ທຣົງຜາຣົພ ພຣະມຫາໂມຄຄັລລານະ. ເຖຣະ. ພຣະມຫາເຖຣະ ໄດ້ຖືກພວກເດັຍຣຖີຍ໌ ຈ້າງພວກໂຈຣໃຫ້ມາຂ້າເພິ່ນ. ພຣະເຈົ້າ ອະຊາຕະສັຕຣູ ທຣົງສືບຈັບຕົວໄດ້ຄວາມຈິງ ແລ້ວໃຫ້ຈັບພວກເດັຍຣຖີຍ໌ ພ້ອມທັງພວກໂຈຣມາລົງໂທສ ດ້ວຍການຂຸດຂຸມຝັງເລິກພຽງໜ້າເອິກ ເອົາຫຍ້າແຫ້ງ ແລະເຟືອງປົກເອົາໄຟເຜົາທັງເປັນ.

ກິກຂຸ ທັງຫລາຍ ສົນທະນາກັນກ່ຽວເຣື່ອງ ພຣະໂມຄຄັລລານະເຖຣະ ພຣະສາສດາ ທຣົງນຳເອົາອດີຕນິທານມາສແດງໃຫ້ຟັງວ່າ: ຄັ້ງເມື່ອພຣະໂມຄຄັລລານະ ເປັນກຸລບຸຕຣ໌ ເພິ່ນໄດ້ຖືກກັຣຍາ ຍຸຍົງໃຫ້ຂ້າມາຣດາແລະບິດາຂອງຕົນ. ເມື່ອຕາຍໄປແລ້ວໄດ້ໄປໝົກໄໝ້ໃນນະຣົກ ຫລາຍແສນປີ ດ້ວຍວິບາກຂອງກັມມ໌ອັນນັ້ນ ຈຶ່ງຖືກເຂົາທຸບຕີຕາຍຢ່າງນີ້ ເຖິງຮ້ອຍອັຕຕະກາພ (ຮ້ອຍຊາຕິ) ພຣະໂມຄຄັລລານະ ເຖິງແກ່ຄວາມຕາຍ ສົມຄວນແກ່ກັມມ໌ຂອງຕົນແລ້ວ.

ສ່ວນພວກເດັຍຣຖີຍ໌ ກັບ ພວກໂຈຣນັ້ນ ທຳຮ້າຍຕໍ່ພຣະໂມຄຄັລລານະ ຜູ້ທີ່ບໍ່ໄດ້ທຳຮ້າຍ ຈຶ່ງໄດ້ຮັບໂທສ ປະຫາຣຊີວິຕອັນແສນທໍຣະມານເໝືອນກັນ. ໃນທີ່ສຸດແຫ່ງອດີຕນິທານນີ້ ພຣະຍອດແກ້ວສັພພັຌຍູ ຈຶ່ງໄດ້ຕຣັສ ພຣະຄາຖາ ທັງຫລາຍ ດັ່ງທີ່ໄດ້ຍົກຂຶ້ນມານັ້ນ.

---

# ໑໓

ນະ ນັຄຄະຈະຣິຍາ ນະ ຊະຜາ ນະ ປັງກາ
ນານາສະກາ ຕັຕາຫິລະສາຍິກາ ວາ
ຣະໂຊຊັສສັງ ອຸກກຸຜິກັປປະລານັງ
ໄສເລນຕິ ມັຈຈັງ ອະວິຕິຕາຕະກັງຂັງ ໑໑໔໑໑

ບໍ່ແມ່ນການ ປະພຶດຣ໌ຕົນເປັນຊີເປືອຍ, ບໍ່ແມ່ນການເກົ້າຜົມເປັນຈຸກ, ບໍ່ແມ່ນ ເອົາຂີ້ຕົມມາທາຮ່າງກາຍ, ບໍ່ແມ່ນການອົດອາຫານ, ບໍ່ແມ່ນນອນຕາມດິນກິນຕາມຫຍ້າ, ບໍ່ແມ່ນການເອົາຂີ້ຝຸ່ນມາໂພະໃສ່ຕົນຕົວ, ບໍ່ແມ່ນການນັ່ງຢ່ອງຢູ່. ການກະທຳ ແບບທໍຣະມານຕົນ ທັງໝົດ ທີ່ກ່າວມານີ້ ຈະຊ່ວຍເຮັດໃຫ້ຜູ້ທີ່ຍັງບໍ່ທັນພົ້ນຈາກຄວາມສົງສັຍ ເປັນຜູ້ບໍຣິສຸທຣິໄດ້.

## ເຣື່ອງ ພະຫຸກັຕາຫິກະກິກຂຸ

ພຣະບໍຣົມສາສດາ ທຣົງຜາຣົພ ກິກຂຸ ຜູ້ທີ່ມີບໍຣິຂານມາກຫລາຍ. ກິກຂຸອົງຄ໌ນີ້ ເມື່ອຄາວທີ່ເພິ່ນເປັນຄຣິຫັສຖ໌ຢູ່ນັ້ນ ເປັນຄົນມີຫຣັພຍ໌ສິນສົມບັຕິ ມາກລາຍ. ຄັນກັຣຍາຂອງເພິ່ນ ເຖິງແກ່ກັມມ໌ໄປແລ້ວ ເພິ່ນຈຶ່ງອອກບວຊ. ກ່ອນຈະອອກບວຊນັ້ນ ເພິ່ນໄດ້ສ້າງບໍຣິເວຣ ອັນກ້ວາງໃຫຍ່ ແລະໂຮງໄຟ, ສາງເກັບມ້ຽນເຄື່ອງຂອງໃຊ້ສອຍຕ່າງໆ. ເມື່ອບວຊມາແລ້ວ ກໍ

ເອີ້ນເອົາຂ້າທາສ ມາແຕ່ງອາຫາຣ ກາຣກິນໃຫ້ຕາມສະບາຍ. ສ່ວນເຄື່ອງນຸ່ງ ສຳຣັບກາງເວັນ ຊຸມນຶ່ງ ສຳຣັບກາງຄືນ ຊຸມນຶ່ງ ບໍ່ໃຫ້ຊ້ຳກັນ. ຠິກຂຸ ທັງຫລາຍໄດ້ເຫັນເຊັ່ນນັ້ນ ຈຶ່ງທູລຄວາມນັ້ນ ແດ່ ພຣະສາສດາ ພຣະອົງຄ໌ຈຶ່ງທຣົງຕິຕຽນ. ເມື່ອຖືກຕິຕຽນ ກໍບໍ່ດີໃຈໂຍນເຄື່ອງໃຊ້ຂອງສອຍ ຖິ້ມໝົດ ນຸ່ງແຕ່ຜ້າສະບົງຜືນດຽວ ເຂົ້າໄປຢືນຢູ່ທ່າມກາງຂອງບໍຣິຩັທ.

ພຣະສາສດາ ຈຶ່ງຕຣັສເຣື່ອງອະດີຕກາລຄື ໃນອະດີຕນັ້ນ ຠິກຂຸອົງຄ໌ນີ້ ເປັນຜີເສື້ອນ້ຳ ຕ້ອງກາຣຊຶ່ງ ຫິຣິ ໂອຕຕັປປະ ຄວາມລະອາຍ ແລະຄວາມຢ້ານກົວຕໍ່ບາບ ອັນເປັນເທວະທັມມ໌. ບັດນີ້ ບວຊມາໃນພຣະພຸທຘະສາສນາແລ້ວ ເລີຍປະຖິ້ມ ຫິຣິ-ໂອຕຕັປປະ ນັ້ນເສັຍ ນຸ່ງແຕ່ຜ້າສະບົງຜືນດຽວ ຢູ່ໃນທ່າມກາງບໍຣິຩັທ ອັນນີ້ ເປັນເພາະເຫຕຸໃດ?

ເມື່ອຠິກຂຸ ອົງຄ໌ນັ້ນໄດ້ຟັງດັ່ງນີ້ແລ້ວກໍເກີດຄວາມສລົດໃຈໄດ້ສະຕິເກີດ ຫິຣິໂອຕຕັປປະ ຫົ່ມຈີວຣ ຖວາຍບັງຄົມ ພຣະສາສດາ ແລ້ວນັ່ງຢູ່ໃນທີ່ສົມຄວນສ່ວນນຶ່ງ. ເມື່ອ ພຣະພຸທຘອົງຄ໌ ຈະທຣົງສແດງທັມມ໌ ຈຶ່ງໄດ້ຕຣັສ ຊຶ່ງພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາໃນຂ້າງຕົ້ນນີ້.

---

## ໑໔

ອະລັງກະໂຕ ເຈປິ ສະມັງ ຈະເຣຍຍະ
ສັນໂຕ ທັນໂຕ ນິຍະໂຕ ພຣ຺ຫະມະຈາຣີ

ສັພເພສຸ ກູເຕສຸ ນິສາຍະ ທັດຫັງ
ໂສ ພຸຣາຫມະໂຕ ໂສ ສະມະໂຕ ສະ ກິກຂຸ ໒໑໔໔໒

ເຖິງແມ່ນວ່າ ຈະແຕ່ງກາຍແບບໃດ ກໍຕາມ, **ຖ້າໃຈສງົບຣະງັບຄວບ ຄຸມຕົວໄດ້,** ມີຄວາມໝັ້ນຄົງ, ບໍຣິສຸທຄິ ສະອາດ, ບໍ່ບຽດບຽນຄົນອື່ນ (ຜູ້ ນັ້ນ) ຮຽກວ່າ ພຣາຫມຕ໌, ຮຽກວ່າ ສມຕະ ຫຣື ກິກຂຸ.

## ເຣື່ອງ ສັນຕະຕິ ມຫາອຳມາຕຍ໌

ພຣະບໍຣົມສາສດາ ທຣົງຜາຣົພ ສັນຕະຕິ ມຫາອຳມາຕຍ໌ ໄປຜາບ ປັຈຈາມິຕຣ໌ ໃນຊົນບົທ ເປັນທີ່ຮຽບຮ້ອຍແລ້ວກັບມາ. ພຣະເຈົ້າປະເສນທິ ໂກສົລ ຍິນດີໃຫ້ຂຶ້ນຄອງຣາຊສົມບັຕິ ເປັນເວລາ ໗ ວັນ. ບັດແລ້ວກໍໄດ້ ພຣະຣາຊທານ ຜູ້ຍິງ ຜູ້ທີ່ສລາດໃນການຟ້ອນລໍາ ຂັບຮ້ອງນາງນຶ່ງໃຫ້ເປັນ ຣາງວັລ.

ສັນຕະຕິ ມຫາອຳມາຕຍ໌ ນັ້ນ ໄດ້ເສພສຸຣາຢາເມົາຢູ່ເປັນເວລາ ໗ ວັນ. ໃນວັນຖ້ວນເຈັດ ກໍປະດັບຕົກແຕ່ງກາຍດ້ວຍເຄື່ອງອະລັງການຜ້າຜ່ອນ ທ່ອນສະໄບອັນສວຍງາມທີ່ສຸດ ແລ້ວຂຶ້ນຄໍຄົຊສານ (ຂຶ້ນຂີ່ຄໍຊ້າງ) ຕົວປະ-ເສີຖໄປສູ່ທ່ານ້ຳ ໄດ້ເຫັນພຣະສາສດາ ສເດັຈທ່ຽວໄປບິຕທບາຕ ຈຶ່ງກົ້ມ-ສຽຣຖວາຍບັງຄົມ ພຣະສາສດາ ໆ ທຣົງກະທໍາແຍ້ມພຣະໂອຍຖ໌ໃຫ້ຜາກົຍ

ພຣະອົງຄ໌ ຈຶ່ງຕຣັສວ່າ ສັນຕະຕິ ມຫາອຳມາຕຍ໌ ຈະມາສູ່ສຳນັກຂອງເຮົາ ທັງເຄື່ອງປະດັບ ແລ້ວຈັກສຳເຣັຈ ພຣະອຣຫັຕ ປຣິນິພພານໃນວັນນັ້ນແລ ເມື່ອ ສັນຕະຕິ ມຫາອຳມາຕຍ໌ ໄປຫລິ້ນນ້ຳ ແຕ່ເຊົ້າຍັງຄ່ຳ ແລ້ວກໍໄປສູ່-ອຸທະຍານ. ນັ່ງຊົມສຕຣີ ທີ່ພຣະເຈົ້າ ປະເສນະທິໂກສົລ ທຣົງພຣະຣາຊທານ ສແດງການຟ້ອນລຳ. ເວລານັ້ນສຕຣີນັ້ນເກີດລົມສັຕຖະອາຕ (ຫົວໃຈວາຍ) ທຳກາລກິຣິຍາ ລົ້ມຕາຍລົງ. ສັນຕະຕິ ມຫາອຳມາຕຍ໌ ໄດ້ເຫັນເຊັ່ນນັ້ນ ກໍໂສກເສົ້າເສັຽໃຈເປັນຢ່າງຍິ່ງ ບໍ່ແນມເຫັນຄົນອື່ນພໍທີ່ຈະຊ່ວຍດັບຄວາມໂສກນັ້ນໄດ້, ຈຶ່ງໄດ້ເຂົ້າໄປເຝົ້າ ພຣະສາສດາ ພຣະອົງຄ໌ຈຶ່ງທຣົງສແດງພຣະທັມມເທສນາ ໃຫ້ສຳເຣັຈ ພຣະອຣຫັຕ ແລ້ວປຣິນິພພານ.

ກິກຂຸ ທັງຫລາຍ ຈຶ່ງປະຊຸມກັນຜາຣົພ ສັນຕະຕິ ມຫາອຳມາຕຍ໌ວ່າ ຄວນຈະກ່າວວ່າຢ່າງໃດ. ພຣະພຸທຄອົງຄ໌ ຈຶ່ງຕຣັສພຣະຄາຖານີ້.

---

໑໕

ທີຣິນິເສໂລ ປຸຣິໂສ
　　ໂກຈີ ໂລກັສມິ ວິຊຊະຕິ
ໂຍ ນິທທັງ ອະປະໂພເຣຕິ
　　ອັສໂສ ກັທໂຣ ກະສາມິວະ ໆ໑໔໓ໆ

ຜູ້ທີ່ຫັກຫ້າມຈິຕໃຈໄວ້ ບໍ່ທຳຄວາມຊົ່ວ ເພາະ ລະອາຍບາບ ຍ່ອມຫາໄດ້ຍາກນັກໜາ ໃນໂລກນີ້. ຄົນເຊັ່ນນີ້ ຍ່ອມປຸກຕົວເອງໃຫ້ຕື່ນຢູ່ສເມີເໝືອນດັ່ງມ້າດີ ຣະວັງຕົວເອງ ບໍ່ໃຫ້ຖືກແສ້.

## ໑໕

ອັສໂສ ຍະຖາ ຠັທໂຣ ກະສາວິຜໂຖ
ອາຕາປິໂນ ສັງເວຄິໂນ ຠະວາຖະ
ສັທລາຍະ ສີເລນະ ຈະ ວິຣິເຍນະ ຈະ
ສະມາລິນາ ລັມມະວິນິຈຉະເຍນະ ຈະ
ສັມປັນນະວິຊຊາຈະຣະຓາ ປະຜິສສະຕາ
ປະຫິສສະຖະ ທຸກຂະມິທັງ ອະນັປປະກັງ ຯ໑໔໔ຯ

ລັມມດາມ້າດີ ເມື່ອຖືກລົງແສ້ ເທື່ອນຶ່ງ ຍ່ອມສຳນຶກ (ຄວາມຜິດ ຄັ້ງທຳອິດ) (ແລະພຍາຍາມແລ່ນໃຫ້ໄວ) ທ່ານທັງຫລາຍ ກໍຈົ່ງທຳເຊັ່ນນັ້ນ ອາສັຍ ສັທລາ ຄື ຄວາມພຽຣ, ສະມາລິ, ການວິນິຈສັຍລັມມ໌, ຄວາມສົມບູຣຕ໌ດ້ວຍຄວາມຮູ້ ແລະ ຄວາມປະພຶຕຣ໌ ແລະ ອາສັຍສະຕິ ທ່ານທັງຫລາຍ ກໍຈະລະຄວາມທຸກຂ໌ໄດ້ ບໍ່ແມ່ນໜ້ອຍເລີຍ.

# ໑໗

ອຸທະກັງ ຫິ ນະຍັນຕິ ເນຕຕິກາ
ອຸສຸກາຣາ ນະມະຍັນຕິ ເຕຊະນາ
ທາຣຸງ ນະມະຍັນຕິ ຕັຈຈະກາ
ອັຕຕານັງ ທະມະຍັນຕິ ສັພພະຕາ ໑໑໔໕)

ຊາວນາ ເປັ່ງນ້ຳເຂົ້ານາ, ຊ່າງເຮັດສອ ເຮັດທະນູ ເບັດ ດັດລູກສອ ລູກທະນູ ໃຫ້ຊື່ກົງ, ຊ່າງໄມ້ ຖາກໄມ້, ຄົນດີ ເຝິກຝົນ ຕົນເອງ.

## ເຣື່ອງ ສຸຂະສາມເຕຣ

ພຣະບໍຣົມສາສດາ ທຣົງຜາຣົພ ສຸຂະສາມເຕຣ ຜູ້ເປັນບຸຕຣ໌ ຂອງ ຕະກູລທີ່ອຸປກາກ ພຣະສາຣີບຸຕຣ໌ເຖຣະ ໃນເມືອງສາວັຕຖີ. ສາມເຕຣເປັນຜູ້ ທີ່ໄດ້ສ້າງສົມອົບຣົມບາຣະມີມາແຕ່ກ່ອນ. ເມື່ອອາຍຸໄດ້ ໗ ຂວບ ກໍບວຊ ເປັນສາມເຕຣ ຢູ່ໃນສຳນັກ ຂອງພຣະເຖຣະ. ໃນວັນນຶ່ງ ເພິ່ນໄດ້ໄປກັບ ພຣະອຸປັຊຊາຍ໌ ເຫັນຊາວນາ ເປັ່ງນ້ຳເຂົ້ານາ, ເຫັນຊ່າງເຮັດສອ ເຮັດທະນູ ເບັດລູກສອ ລູກທະນູໃຫ້ຊື່ກົງ, ຊ່າງໄມ້ ຖາກໄມ້ໄດ້ຕາມໃຈມັກ ຈຶ່ງຖືເອົາ ເປັນອາຣົມຕ໌ ຄິດຈະເຝິກຕົນເອງ ຈຶ່ງລາພຣະເຖຣະກັບວັດ ທຳຄວາມພຽຣ ສຳເຣັຈພຣະອຣຫັຕ ໃນວັນນັ້ນ. ກິກຂຸ ທັງຫລາຍສົນທະນາຜາຣົພກ່ຽວ ກັບສາມເຕຣ. ພຣະສາສດາ ຈຶ່ງຕຣັສ ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມານັ້ນ.

---

ຈົບ ທັຕາຫະວັຄຄ໌ ທີ່ ໑໐

ຂຶ້ນວັຄຄ໌ໃໝ່ ຄື ຊຣາວັຄຄ໌ ທີ່ ໑໑

# ຊຣາວັຄຄ໌ ທີ່ ໑໑

## ໝວດ ວ່າດ້ວຍຄວາມຊຣາ

໑

ໂກນຸ ຫາໂສ ກິມານັນໂທ
ນິຈຈັງ ປັຊຊະລິເຕ ສະຕິ
ອັນລະກາເຣນະ ໂອນັທລາ
ປະທີປັງ ນະ ຄະເວສະຖະ ຯ໑໔໖ຯ

ຈະພາກັນ ມົວເມົາ ມ່ວນຊື່ນ ເຮຮາກັນໄປ ເຮັດຫຍັງ ເດໜໍ່ ! ໃນເມື່ອວ່າໂລກນີ້ ກຳລັງລຸກເປັນແປວໄຟຢູ່ເນື່ອງນິຕຍ໌. ພວກທ່ານ ຖືກຄວາມມືດປົກປິດຕາຢູ່, ເປັນຫຍັງ ຈຶ່ງບໍ່ສແວງຫາຄວາມສວ່າງແດ່ ?

## ເຣື່ອງ ວິສາຂາສຫາຍິກາ

ພຣະບໍຣົມສາສດາ ທຣົງຜາຣົພ ພວກຜູ້ຍິງ ທີ່ເປັນສຫາຍຂອງນາງວິສາຂາ ມຫາອຸບາສິກາ. ເຂົາເຈົ້າ ເຫລົ່ານັ້ນ ມັກດື່ມສຸຣາຢາເມົາ ມ່ວນຊື່ນ ເຮຮາ. ສາມີຂອງຜູ້ຍິງ ເຫລົ່ານັ້ນ ໄດ້ມອບໃຫ້ ນາງວິສາຂາຕັກເຕືອນວ່າກ່າວສັ່ງສອນໃຫ້. ວັນນຶ່ງ ນາງວິສາຂາ ໄດ້ນຳເອົາ ຍິງພວກນັ້ນໄປສູ່-

ວິຫາຣ ເພື່ອຟັງທັມມ໌. ຜູ້ຍິງເຫລົ່ານັ້ນ ໄດ້ເອົາຂວດສຸຣາເຊື່ອງເຂົ້າໄປນໍາ ເພື່ອດື່ມ. ຄັນດື່ມມຶນເມົາແລ້ວກໍລືມຕົວ ສແດງອາການຜິດປົກຕິ ຢາກຈະຟ້ອນລໍາທໍາເພງໄປ ໃນຕໍ່ໜ້າພຣະທີ່ນັ່ງ ຂອງ ພຣະຜູ້ມີພຣະກາຄເຈົ້າ. ພຣະ ອິງຄ໌ ຈຶ່ງທຣົງດໍາຣິວ່າ ອັນນີ້ ເປັນອັນໃດກັນໄປແລ້ວ.

ພຣະອົງຄ໌ ທຣົງຊາບເຫຕຸອັນນັ້ນ ຈຶ່ງທຣົງກະທໍາປາຕິຫາຣິຍ໌ ໃຫ້ມືດມົນເປັນທີ່ໜ້າຢ້ານກົວ. ຜູ້ຍິງ ເຫລົ່ານັ້ນຕ່າງກໍພາກັນຕົກໃຈກົວຕໍ່ມຣຕະກັຍ ຣິທລິສຸຣານັ້ນກໍຫາຍໄປ. ພຣະສາສດາ ຈຶ່ງທຣົງສແດງພຣະທັມມິກະຖາ ປະກາສໂທສ ຂອງ ຄວາມປະມາທ ທີ່ເກີດມາຈາກ ສຸຣາຢາເມົາເຄື່ອງເສພຕິດຕ່າງ ໆ ດ້ວຍບາທພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາຂ້າງເທິງນີ້.

---

## ໔

ປັສສະ ຈິຕຕະກະຕັງ ພິມພັງ
　　ອະຣຸກາຍັງ ສະມຸສສິຕັງ
ອາຕຸຣັງ ພະຫຸສັງກັປປັງ
　　ຍັສສະ ນັຕຖິ ທຸວັງ ກິຕິ ໑໑໔໗໑

ຈົ່ງເບິ່ງຊຶ່ງຮ່າງກາຍ ອັນທີ່ວ່າສວຍງາມນີ້ເທີ້ນ ມັນເປັນສະກາພທີ່

ເຕັມໄປດ້ວຍບາດແຜ, ສ້າງຂຶ້ນມາດ້ວຍຮ່າງກະດູກ, ເຕັມໄປດ້ວຍໂຣຄກັຍໄຂ້ເຈັບ, ເຕັມໄປດ້ວຍຄວາມຄິດປາຖນາ ຫາຄວາມຈີຣັງຍັ້ງຍືນບໍ່ໄດ້.

# ເຣື່ອງ ນາງສິຣິມາ

ໃນກາລະຄັ້ງນຶ່ງ ພຣະບຣົມສາສດາ ທຣົງຜາຣົພ ນາງສິຣິມາ ນ້ອງສາວຂອງ ໝໍໂກມາຣກັຈ ເປັນຍິງຄະຕິກາ (ຍິງສາວສັງຄົມ) ທີ່ມີຮູປທຣົງສວຍງາມ. ຫາກມີບຸຣຸສ ທີ່ປາຖນາຈະນອນດ້ວຍຄືນນຶ່ງ ຕ້ອງໃຫ້ທຣັພຍ໌ນຶ່ງພັນ ກະຫາປະນະ. ພາຍຫລັງ ໄດ້ຟັງ ພຣະທັມມເທສນາ ໄດ້ສຳເຣັຈໂສດາປັຕຕິຜົລ.

ນັບຕັ້ງແຕ່ນັ້ນມາ ນາງກໍໄດ້ຖວາຍສັງຄທານ ແກ່ພຣະພິກຂຸສົງຄ໌ວັນລະ ໘ ອົງຄ໌ສເມີ ບໍ່ໄດ້ຂາດ. ພິກຂຸທີ່ໄປຮັບສັງຄພັຕແລ້ວ ມັກຈະພາກັນສັຣເສີນວ່າ ນາງສິຣິມານັ້ນ ສວຍງາມແທ້ໆ, ຈັດພັຕຕາຫາຣກໍປະຕີຕນິຣິສຊາຕດີ. ຄັ້ນນັ້ນ, ມີພິກຂຸ ອົງຄ໌ນຶ່ງ ຍັງບໍ່ເຄີຍເຫັນ ໄດ້ຍິນແຕ່ຂ່າວວ່າເປັນຜູ້ຍິງທີ່ສວຍງາມ ມີສເນຫາ ຈຶ່ງຄອຍຄ່ານອນເບິ່ງວ່າ ມື້ໃດໜໍຈຶ່ງຈະໄດ້ຕົກມາເຖິງວາຣະຂອງເຮົາ. ພໍວັນຮຸ່ງຂຶ້ນມື້ໃໝ່ ກໍຕົກມາເປັນວາຣະຂອງຕົນກໍຈັດແຈງຕຽມຕົວໄປແຕ່ເຊົ້າ. ເວລານັ້ນ, ນາງສິຣິມາບໍ່ສະບາຍເຈັບໄຂ້ຕັ້ງແຕ່ມື້ວານນີ້ ຈຶ່ງຈັດໃຫ້ຄົນໄປຖວາຍພັຕຕາຫາຣແທນ ສ່ວນຕົວນັ້ນໃຫ້ຄົນໂຊມຕົວມາເພື່ອນມັສກາຣ ພິກຂຸສົງຄ໌. ເມື່ອພິກຂຸອົງຄ໌ນັ້ນໄດ້ເຫັນສິຣິ-

ຮູປຂອງນາງ ກໍມີຄວາມສີເນຫາເພີ້ມທວີຂຶ້ນ ແລະນຳເອົາມາຄິດຢູ່ວ່າ ແມ່ນແຕ່ນາງບໍ່ໄດ້ແຕ່ງຕົວ ດ້ອຍຜ້າແຜ່ນແພສະໄບ ອັນສວຍງາມ ນາງກໍຍັງງາມເຖິງພຽງນີ້. ເມື່ອນາງຢູ່ດີສະບາຍ ນາງກໍຍິ່ງຈະງາມກວ່ານີ້ຫລາຍເທົ່າ. ຄັນກິກຂຸອົງຄ໌ນັ້ນກັບຄືນເຖິງກຸຜິແລ້ວ ກໍບໍ່ຍອມຈັນກັຕຕາຫາຣ ເຂົ້າຫ້ອງເອົາຜ້າຄຸມຫົວນອນເສັຍ. ເພື່ອນກິກຂຸ ຈະວ່າກ່າວຕັກເຕືອນພຽງໃດ ກໍບໍ່ເອື້ອເຟື້ອຟັງສຽງ. ໃນຕອນບ່າຍວັນນັ້ນເອງ ນາງສິຣິມາ ກໍເຖິງແກ່ກາຣກິຣິຍາຕາຍ ເຂົາຈຶ່ງນຳເອົາສົພນັ້ນໄປຍັງປ່າຊ້າ. ຄັນເຖິງວັນທີ່ ໔ ພຣະສາສດາທຣົງອະນຸຍາຕໃຫ້ກິກຂຸ ທັງຫລາຍໄປເບິ່ງ.

ບັດນີ້, ຈັກກ່າວເຖິງ ກິກຂຸ ອົງຄ໌ທີ່ນອນຊຶມຢູ່ບໍ່ຍອມຈັນອາຫາຣຕັ້ງ ໔ ວັນ ຈົນອາຫາຣໃນບາຕບູດເນົ່າ ເມື່ອໄດ້ຊາບວ່າ ພຣະສາສດາທຣົງອະນຸຍາຕໃຫ້ໄປເບິ່ງ ນາງສິຣິມາ ກໍດີໃຈ ຕະລີຕະລານລຸກຂຶ້ນ ຈັດແຈງຕົວລ້າງບາຕເຊັດບາຕ ແລ້ວກໍຕາມສເດັຈ ພຣະສາສດາໄປ ຄັນເຖິງປ່າຊ້າແລ້ວພຣະຍອດແກ້ວສັພພັຍຍູ ຈຶ່ງໄດ້ຕຣັສຊຶ່ງ ພຣະຄາຖາ ດັ່ງທີ່ຍົກຂຶ້ນມານັ້ນໃຫ້ ພຣະກິກຂຸ ອົງຄ໌ນັ້ນໄດ້ຟັງ ແລະ ສຳເຣັຈພຣະໂສດາປັຕຕິຜົລ.

---

ໞ

ປະຣິຊິຕຕັງ ອິທັງ ຣູປັງ

ໂຣຄະນີທາຫັງ ປະກັງຄຸຣັງ

ຠິຊຌະຕິ ປູຕິ ສັນເທໂຫ
ມະຣະຕັນຕັງ ຫິ ຊີວິຕັງ ໆ໑໔໘ໆ

ຮ່າງກາຍ (ຂອງສັຕວ໌) ແກ່ເຖົ້າ ຂີດງ່ອມ (ເນື້ອຫ່ຽວໜັງຍານ) ເປັນທີ່ອາສັຍ ຂອງໂຣຄາພຍາທິ ແຕກສລາຍໄປໄດ້ງ່າຍ. ຮ່າງກາຍອັນເນົ່າເໝັນນີ້ ຈັກແຕກພັງ ເພາະຊີວິຕສິ້ນສຸດລົງທີ່ ຄວາມຕາຍ.

## ເຣື່ອງ ນາງອຸຕຣາເຖຣີ

ພຣະສາສດາ ທຣົງຜາຣົພ ນາງອຸຕຣາເຖຣີ ເພິ່ນມີ ອາຍຸ ໑໒໐ ປີ. ວັນນຶ່ງ ເພິ່ນໄດ້ທ່ຽວບິຕທບາຕ ໄດ້ກັຕຕາຫານ ບໍ່ສົມຄວນແລ້ວ ກໍກັບມາສູ່ອາຣາມ. ໃນຣະຫວ່າງທາງນັ້ນ ໄດ້ພົ້ກິກຂຸ ອົງຄ໌ນຶ່ງ ຈຶ່ງຖວາຍບິຕທະບາຕທັງໝົດຂອງຕົນ ແກ່ກິກຂຸ ອົງຄ໌ນັ້ນ. ນາງກະທໍາຢູ່ຢ່າງນີ້ ເຖິງ ໓ ວັນ. ໃນວັນທີ່ ໔ ໄດ້ທ່ຽວໄປບິຕທບາຕອີກ ໄດ້ພົ້ກັບພຣະສາສດາ ໃນທາງແຄບ ຈຶ່ງຫລີກທາງຖວາຍ ແຕ່ກ້າວໄປຫຍຽບຊາຍຈີວຣ ຂອງຕົນເອງ ຈຶ່ງລົ້ມກິ້ງລົງໃນທີ່ນັ້ນ.

ພຣະສາສດາ ຈຶ່ງສເດັຈເຂົ້າໄປໃກ້ ແລ້ວກໍທຣົງປະທານຊຶ່ງພຣະລັມມີກະຖາ ດັ່ງທີ່ຍົກຂຶ້ນມາຂ້າງເທິງນີ້ ໃຫ້ນາງ ສໍາເຣັຈໂສດາປັຕຕິຜົລ.

---

๔

ຍານິມານິ ອະປັຕຖານິ
ອະລາພູເນວະ ສາຣະເທ
ກາໂປຕະການິ ອັຜກີນິ
ຕານິ ທິສວານະ ກາ ຣະຕີ ໆ໑໔໙ໆ

ກະດູກ ເຫລົ່ານີ້ ມີສີຂາວ ເໝືອນສີນົກກາງແກ ບໍ່ເປັນທີ່ຕ້ອງການຂອງໃຜ ທັງໝົດ. ຄືດັ່ງນໍ້າເຕົ້າ ໃນຣະດູແລ້ງ ເບິ່ງແລ້ວບໍ່ເປັນທີ່ໜ້າຍິນດີ ນ່າເລີຍ.

## ເຣື່ອງ ອະທິມານິກະກິກຂຸ

ພຣະບໍຣົມສາສດາ ທຣົງຜາຣົພ ພວກກິກຂຸ ຜູ້ທີ່ສໍາຄັນຕົນເອງວ່າ ສໍາເຣັຈ ມີຢູ່ປະມາຕ 500 ອົງຄ໌ ຮຽນພຣະກັມມກຖານ ໃນສໍານັກຂອງພຣະອົງຄ໌ແລ້ວ ອອກໄປກະທໍາຄວາມພຽຣຢູ່ໃນປ່າໄດ້ສໍາເຣັຈພຽງຊານ ເທົ່ານັ້ນ ແຕ່ສໍາຄັນຕົນວ່າ ສໍາເຣັຈ ພຣະອຣຫັຕ ຈຶ່ງພາກັນກັບມາ ເພື່ອຈະເຝົ້າທູລຄຸຕສົມບັຕິທີ່ຕົນໄດ້. ໃນກາລເມື່ອທ່ານເຫລົ່ານັ້ນມາເຖິງປະຕູເຂົ້າ ພຣະວິ-ຫາຣ ພຣະສາສດາ ຈຶ່ງຣັບສັ່ງໃຫ້ ພຣະອານົນທ໌ ໄປບອກກິກຂຸ ເຫລົ່ານັ້ນ ໃຫ້ໄປທີ່ປ່າຊ້າເສັຍກ່ອນ. ກິກຂຸພວກນັ້ນ ຄັນໄປເຫັນສົພສຕຣີ ທີ່ຍັງ

ຢູ່ໃນສການພດີ ກໍເກີດຄວາມກຳໜັດຍິນດີ. ບັດນັ້ນ ຈຶ່ງຮູ້ສຶກຕົນວ່າ ເຮົາຍັງບໍ່ທັນສຳເຣັຈ. ຂຕະນັ້ນ, ພຣະສາສດາ ທຣົງເປັ່ງພຣະໂອກາສຣັສມີໄປ ຄືກັບວ່າ ທຣົງປະທັບຢູ່ໃນທີ່ສະເພາະໜ້າ ແລ້ວຈຶ່ງຕຣັສ ພຣະຄາຖານີ້ ດັ່ງທີ່ໄດ້ຍົກຂຶ້ນມາຂ້າງເທິງນີ້ ໃຫ້ສຳເຣັຈ ພຣະອຣຫັຕ ທັງໝົດ.

---

## ໕

ອັຜກີນັງ ນະຄະຣັງ ກະຕັງ
　　ມັງສະໂລຫິຕະເລປະນັງ
ຍັຕຖະ ຊະຣາ ຈະ ມັຈຈຸ ຈະ
　　ມາໂນ ມັກໂຂ ຈະ ໂອຫິໂຕ ჲ໑໕໐ჲ

ຮ່າງກາຍອັນນີ້ ເປັນ"ອັຜກີນະຄຣ" (ເມືອງກະດູກ) ປົກປິດໄວ້ດ້ວຍຊີ້ນ ໜັງແລະໂລຫິຕ ເປັນທີ່ສຖິຕຢູ່ຂອງ ຊຣາ ເຖົ້າ, ມຣຕະ ຄວາມຕາຍເຍີ້ຫຍິ່ງຈອງຫອງ ພອງຕົວ ແລະ ຄວາມດູຖູກ ບຸນຄຸຕກັນ.

# ເຣື່ອງ ນາງຣູປະນັນທາເຖຣີ

ພຣະບໍຣົມສາສດາ ທຣົງຜາຣົພ ນາງຣູປະນັນທາເຖຣີ ຜູ້ເປັນລິດາ

ຂອງ ພຣະນາງໂຄຕະມີ ເຫັນພຣະຍາຕິວົງສ໌ ພາກັນອອກຜນວຊເປັນຈຳ ນວນຫລາຍ ຈຶ່ງໄປຜນວຊໃນສຳນັກ ກິກຂຸນີ. ເມື່ອຜນວຊແລ້ວ ບໍ່ປາຖນາ ທີ່ຈະເຂົ້າເຝົ້າ ພຣະສາສດາ ເພາະຢ້ານວ່າ ພຣະພຸທສອົງຄ໌ ຈະທຣົງຕິຮູປ ໂສມຂອງຕົນ. ແຕ່ໄດ້ຍິນເຂົາສັຣເສີນ ພຣະທັມມເທສນາຂອງພຣະອົງຄ໌ ຢູ່ເນື່ອງ ໆ. ວັນນຶ່ງ ໄດ້ແອບໄປຟັງທັມມ໌ກັບກິກຂຸນີ ທັງຫລາຍ. ພຣະ ສາສດາ ທຣົງຊາບ ຈຶ່ງທຣົງສແດງທັມມ໌ ໃຫ້ນາງເຫັນຄວາມປັ່ນປ່ວນປ່ຽນ ແປງຂອງ ປັນຈະຂັນສ໌ ໂດຍລຳດັບ. ເມື່ອນັ້ນ ນາງກໍຄາຍຄວາມກຳໜັດ ຍິນດີ ສຳເຣັຈໂສດາປັຕຕິຜົລ ແລ້ວພຣະອົງຄ໌ ຈຶ່ງໄດ້ຕຣັສຊຶ່ງ ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາຂ້າງເທິງນີ້.

---

ຜ

ຊີຣັນຕິ ເວ ຣາຊະຣະຖາ ສຸຈິຕຕາ

ອະໂຖ ສະຣີຣັມປິ ຊະຣັງ ອຸເປຕິ

ສະຕັນຈະ ທັມໂມ ນະ ຊະຣັງ ອຸເປຕິ

ສັນໂຕ ຫະເວ ສັພກີ ປະເວທະຍັນຕີ ໒໑໕໑໒

ຣາຊຣົຖ ອັນວິຈິຕງົດງາມນັ້ນ ກໍຍັງເກົ່າໄດ້, ແມ່ນແຕ່ຮ່າງກາຍ

ຂອງຄົນເຮົາ ກໍບໍ່ພົ້ນຈາກຄວາມແກ່ເຖົ້າຊຣາກາຣ. ສ່ວນທັມມ໌ຂອງສັປບຸຣຸສ ນັ້ນ ບໍ່ມີແກ່ເປັນ. ສັປບຸຣຸສ ທັງຫລາຍ ກ່າວທັມມ໌ ອັນນີ້.

## ເຣື່ອງ ພຣະນາງມັລລິກາເທວີ

ພຣະບໍຣົມສາສດາ ທຣົງຜາຣົພ ນາງມັລລິກາເທວີ ຜູ້ເປັນມເຫສີ ຂອງ ພຣະເຈົ້າ ປະເສນທິໂກສົລ. ພຣະນາງສິ້ນພຣະຊົນມ໌ໄປກ່ອນ ພຣະ ຣາຊາທຣົງອາລັຍເຖິງເປັນຢ່າງຍິ່ງ. ວັນນຶ່ງ ເມື່ອພຣະສາສດາ ສເດັຈບິຕຫະ ບາຕ ໄດ້ສເດັຈໄປສູ່ ພຣະຣາຊວັງ ພຣະຣາຊາທຣົງຕ້ອນຮັບສເດັຈ ແລະ ນິມົນຕ໌ ພຣະອົງຄ໌ເຂົ້າສູ່ ຜາສາທ, ແຕ່ພຣະສາສດາ ທຣົງພຣະປະສົງຄ໌ປະ ທັບທີ່ໂຮງຣົຖທີ່ນັ່ງ. ພຣະຣາຊາທູລຖາມເຖິງ ຄະຕິຂອງນາງ ພ້ອມທັງທູລ ຄວາມອາລັຍອາວອນ ເຖິງພຣະນາງ. ພຣະພຸທສອົງຄ໌ ທຣົງພຍາກຣຕ໌ວ່າ ພຣະນາງໄດ້ໄປເກີດໃນດຸສິຕພິກົພແລ້ວ. ພຣະພຸທສອົງຄ໌ ທຣົງພຣະທັມມີ ກະຖາປອບພຣະທັຍພຣະຣາຊາວ່າ ອັນນີ້ ເປັນທັມມດາຂອງສັງຂາຣ. ທຣົງ ຊີ້ພຣະຫັຕຖ໌ໄປຍັງ ຣາຊຣົຖຂອງພຣະອັຍຍະກາ ແລະ ຂອງພຣະຊນົກ ທັງ ຂອງ ພຣະຣາຊາເອງ ອັນເກົ່າແກ່ກວ່າກັນໂດຍລໍາດັບ ເປັນນິທັສນະຕົວຢ່າງ ແລ້ວຈຶ່ງຕຣັສຊຶ່ງ ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາ ໃນຂ້າງຕົ້ນນີ້.

---

ໆ

ອັປປັສສຸຕາຍັງ ປຸຣິໂສ
ພະລິວັທໂທວະ ຊີຣະຕິ
ມັງສານິ ຕັສສະ ວັທທະຕິ
ປັທທາ ຕັສສະ ນະ ວັທທະຕິ ໑໑໕໒໑

ຄົນໂງ່ ເຖົ້າແກ່ໄປລ້າ ໆ ເໝືອນກັບງົວເຖິກ ເນື້ອໜັງມັງສາ ຈເຣີນ ອ້ວນພີດີງາມ ແຕ່ປັທທາ ບໍ່ຈເຣີນ.

## ເຣື່ອງ ພຣະໂລຂຸທາຍີເຖຣະ

ພຣະບໍຣົມສາສດາ ທຣົງຜາຣົພ ພຣະໂລຂຸທາຍີເຖຣະ. ເມື່ອມທາຊົນ ທຳການມຸງຄຸລ ເພິ່ນຊ້ຳພັດສແດງ ສິ່ງທີ່ເປັນ ອະວະມຸງຄຸລ ຄືສິ່ງທີ່ບໍ່ເປັນມຸງຄຸລ. ພຣະກິກຂຸ ທັງຫລາຍ ຈຶ່ງທູລຄວາມນັ້ນ ແດ່ ພຣະສາສດາ ພຣະອົງຄ໌ຈຶ່ງທຣົງສແດງວ່າ ເພິ່ນບໍ່ໄດ້ເປັນພຽງແຕ່ໃນຊາຕິນີ້ເທົ່ານັ້ນດອກ ໃນຊາຕິປາງກ່ອນ ເພິ່ນກໍເປັນຄືກັນ ແລ້ວຈຶ່ງຕຣັສ ນິທານໃນອດີຕນັ້ນວ່າ ພຣະໂລຂຸທາຍີເຖຣະ ເປັນພຣາຫມຕ໌ຊື່ວ່າ ອັຄຄິທັຕຕະ ມີງົວສຳຣັບໄຖນາ ຢູ່ ໔ ຕົວ ຕາຍໄປຕົວນຶ່ງ ຈຶ່ງເຂົ້າໄປເຝົ້າ ພຣະເຈົ້າ ພາຣາຕະສີ ເພື່ອທູລຂໍພຣະຣາຊທານງົວອີກຕົວ ເພື່ອມາເຂົ້າຄູ່ກັນ. ເວລາທີ່ທູລຂໍນັ້ນ ຊ້ຳພັດທູລ

ຖວາຍງົວທີ່ຍັງເຫລືອຢູ່ນັ້ນ. ໃນທີ່ສຸດ ອດີຕນິທານ ພຣະອົງຄ໌ຈຶ່ງໄດ້ຕຣັສພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາຂ້າງເທິງນີ້.

---

ຐ

ອະເນກຊາຕິສັງສາຣັງ
ສັນລາວິສສັງ ອະນິພພິສັງ
ຄະຫະການັງ ຄະເວສັນໂຕ
ທຸກຂາ ຊາຕິ ປຸນັປປຸນັງ ໆ໑໕໓ໆ

ເມື່ອບໍ່ພົບເຫັນ ນາຍຊ່າງຜູ້ສ້າງເຮືອນ ເຮົາໄດ້ວຽນວາຍ ຕາຍເກີດໃນສົງສາຣ ນັບຊາຕິບໍ່ຖ້ວນ, ການເກີດແລ້ວ ເກີດອີກນັ້ນ ເປັນທຸກຂ໌

ໞ

ຄະຫະກາຣະກະ ທິຜໂຖສິ
ປຸນະ ເຄຫັງ ນະ ກາຫະສິ
ສັພພາ ເຕ ຜາສຸກາ ກັຄຄາ
ຄະຫະກູຜັງ ວິສັງຂະຕັງ

ວິສັງຂາຣະຄະຕັງ ຈິຕຕັງ
ຕັຕຫານັງ ຂະຍະມັຊຊະຄາ ໑໑໕໔໑

ນາຍຊ່າງສ້າງເຮືອນເອີຍ, ບັດນີ້ ເຮົາພົບເຫັນທ່ານແລ້ວ, ທ່ານຈະສ້າງເຮືອນ ບໍ່ໄດ້ອີກແລ້ວ ໄມ້ຂ້າວ ແລະໄມ້ສີຍົວ ເຮົາທຳລາຍ ໝົດແລ້ວ ຈິຕຂອງເຮົາ ບັຣລຸນິພພານ ໝົດຄວາມທະຍານຢາກແລ້ວ.

# ເຣື່ອງ ປຖົມໂພຄີ

ພຣະບໍຣົມສາສດາ ທຣົງຜາຣົພ ປຸຈຉາ ຂອງ ພຣະອານົນທເຖຣະ ຄາວເມື່ອພຣະອົງຄ໌ ປະທັບຢູ່ກ້ອງຣົ່ມຕົ້ນ ສຣີມຫາໂພຄີມົຕທົລ ພຣະອົງຄ໌ ທຣົງຜຈົນກັບພຍາມາຣ ໃຫ້ພ່າຍແພ້ໄປ ໃນເວລາທີ່ພຣະອາທິຕຍ໌ຍັງບໍ່ທັນອັສດົງຄົຕ. ໃນປຖົມຍາມ ທຣົງທຳລາຍຄວາມມືດ ອັນປົກປິດ ປຸພເພ-ນິວາສຍານ. ໃນມັຊຊິມຍາມທຣົງຊຳຣະລ້າງທິພຍ໌ຈັກຂຸຍານໃຫ້ບໍຣິສຸທຄີ ໃນປັຈສິມຍາມ ທຣົງອາສັຍ ພຣະກຣຸນາໃນໝູ່ສັຕວ໌ ຫຍັ່ງພຣະຍານລົງ ໃນປັຈຈຍາການ ພິຈາຣນາ ປັຈຈຍາການນັ້ນດ້ວຍ ອນຸໂລມ-ປຕິໂລມ.

ຄັນໃນເວລາຮຸ່ງສວ່າງ ພຣະອາທິຕຍ໌ພວມຈະພຸ່ງພົ້ນຂອບຟ້າທາງທິສບຸຣະພາ ກໍໄດ້ຕຣັສຮູ້ພຣະປຣມາກິເສກສັມມາສັມໂພທິຍານ ອັນມຫັສຈັຣຍ໌ ແລ້ວທຣົງເປັ່ງອຸທານເຍີຍຕັຕຫາ ດ້ວຍພຣະຄາຖາ ທີ່ໄດ້ຍົກຂຶ້ນມາ

ພາຍຫລັງທີ່ ພຣະອານົນທ໌ໄດ້ທູລຖາມ ຕາມທີ່ໄດ້ຍົກຂຶ້ນມາແລ້ວໃນຂ້າງ ເທິງນີ້ ຫັ້ນແລ.

໑໐

ອະຈະຣິຕວາ ພຸຣຫມະຈະຣິຍັງ
ອະລັທລາ ໂຍພພະເນ ລະນັງ
ຊິຕຕະໂກລຈາວະ ຊາຍັນຕິ
ຂີຕະມັຈເຊວະ ປັລລະເລ ୨໑໕໕୨

ເມື່ອຍັງຢູ່ ໃນວັຍໜຸ່ມສາວ, ບໍ່ທຳຕົວໃຫ້ດີ ແລະ ບໍ່ຫາທຣັພຍ໌ໄວ້ ພໍເຖິງວັຍ ແກ່ເຖົ້າ ພວກເຂົາຍ່ອມນັ່ງເຫງົາ ໂກ່ໂຊ່ ເໝືອນນົກຂຽນເຖົ້າ ຢືນຈັບເຈົ່າຢູ່ແຄມສະ ທີ່ໄຮ້ປາ ຫັ້ນແລ.

໑໑

ອະຈະຣິຕວາ ພຣຸຫມະຈະຣິຍັງ
ອະລັທລາ ໂຍພພະເນ ລະນັງ
ເສນຕິ ຈາປາຕິຂີຕະວາ
ປຸຣາຕານີ ອະນຸຕຖຸນັງ ୨໑໕໖୨

ເມື່ອຍັງຢູ່ໃນວັຍໜຸ່ມສາວ, ບໍ່ທຳຕົວໃຫ້ດີ ແລະ ບໍ່ຫາທຣັພຍ໌ໄວ້ ພໍເຖິງວັຍແກ່ຊະຣາມາ ພວກເຂົາ ຍ່ອມນອນທົນທຸກຂ໌ ຖອດຖອນຫົວໃຈ ຣຳຣິຣຳໄຣຄິດເຖິງຄວາມຫລັງທີ່ຜ່ານມາ ເໝືອນກັບທະນູທັກທີ່ໃຊ້ບໍ່ໄດ້.

## ເຣື່ອງ ມຫາລນະເສຕຖີບຸຕຣ໌

ພຣະບໍຣົມສາສດາ ທຣົງຜາຣົພ ມຫາລນະເສຕຖີບຸຕຣ໌ ທີ່ມີທຣັພຍ໌ ໘໐ ໂກຜ, ກັຣຍາ ກໍເປັນບຸຕຣ໌ເສຕຖີ ມີທຣັພຍ໌ ໘໐ ໂກຜ ເໝືອນກັນ ສອງຄົນຜົວເມັຍ ເອົາໃຈໃສ່ແຕ່ໃນເຣື່ອງ ສິລປະການດົນຕຣີ ຟ້ອນລຳຂັບ ຣ້ອງ ເທົ່ານັ້ນ. ທັງນີ້ ກໍຍ້ອນເຫັນວ່າ ທຣັພຍ໌ຂອງເຮົາກໍມີຫລາຍກິນຮອດ ມື້ຕາຍກໍບໍ່ໝົດ ແລະ ເຖິງຈະບໍ່ປະກອບ ສຸຣະກິຈການງານ ກໍບໍ່ເດືອດຣ້ອນ

ຄັນມາຣດາບິດາ ຂອງທັງ ທຳກາລກິຣິຍາຕາຍໄປແລ້ວ ກໍປະພຶຕຣ໌ ເປັນນັກເລງ ດື່ມສຸຣາຢາເມົາ ມີພວກນັກເລງ ແວດລອມເປັນບໍຣິວາຣຈັບ ຈ່າຍທຣັພຍ໌ໄປຢ່າງບໍ່ຢັ້ງ ທຣັພຍ໌ນັ້ນ ມີແຕ່ທາງອອກ ບໍ່ມີທາງໄດ້ ໃນທີ່ ສຸດຕ້ອງໄດ້ຂາຍບ້ານເຮືອນ ຣົ້ວສວນ ໄຣ່ນາ ຈົນໝົດກ້ຽງ ບໍ່ມີທີ່ຢູ່ອາສັຍ ຈຳຕ້ອງໄດ້ພາກັຣຍາ ໄປອາສັຍຊູ້ອື່ນຢູ່ ຄິດວ່າຈະອອກທ່ຽວຂໍທານ.

ໃນວັນນຶ່ງ ພຣະສາສດາ ທຣົງທອດພຣະເນຕຣ໌ ເຫັນເສຕຖີ ກັບ ກັຣຍານັ້ນ ຢືນຢູ່ທີ່ປະຕູສາລາ ຮັບໂກຊນະອັນເປັນເດືອນ ທີ່ກິກຂຸສາມເນຣ

ໃຫ້ຢູ່ ຈຶ່ງຕຣັສໃຫ້ພຣະອານົນທ໌ເບິ່ງແລ້ວ ຈຶ່ງທຣົງສແດງວ່າ ຫາກເສຕຖີ ກັບກັຣຍາ ບໍ່ຈັບຈ່າຍໃຊ້ ໂກຄທຣັພຍ໌ ໃຫ້ໝົດສິ້ນໄປ ໃນປຖົມວັຍ ແລ້ວ ປະກອບການງານຈັກເປັນເສຕຖີຊັ້ນທີ່ ໑ ໃນເມືອງນີ້. ຖ້າອອກບວຊ ສາມີ ຈັກເຖິງ ອຣຫັຕ. ກັຣຍາຈັກດຳຣົງຢູ່ໃນ ອນາຄາມີຜົລ. ຖ້າຍັງໂກຄສົມບັຕິ ບໍ່ໃຫ້ສິ້ນໄປໃນ ມັຊຊິມວັຍແລ້ວ ປະກອບລຸຣກິຈ ຈັກເປັນເສຕຖີຊັ້ນທີ່ ໑ ໃນເມືອງນີ້. ຖ້າອອກບວຊ ສາມີຈັກເປັນ ສກະທາຄາມີ, ກັຣຍາຈັກຕັ້ງຢູ່ໃນ ໂສດາປັຕຕິຜົລ.

ບັດນີ້ ເຂົາທັງສອງມາເສື່ອມຈາກໂກຄຜົລ ແລະ ສາມັຄຄຜົລ ທັງ ສອງປະການ ແລ້ວຈຶ່ງຕຣັສພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາແລ້ວນັ້ນ.

---

## ຈົບ ອຸຣາວັຄຄ໌ ທີ່ ໑໑

# ຈົບ ຂຸຣາວັຄຄ໌ ທີ່ ໑໑
# ຕໍ່ໄປນີ້ ເຣີ່ມ ອັຕຕະວັຄຄ໌ ທີ່ ໑໔

# ອັຕຕະ ວັຄຄ໌ ທີ່ ໑໔
## ໝວດ ວ່າດ້ວຍຕົນ

### ໑

ອັຕຕານັ່ນຈະ ປິຍັງ ຊັນຍາ
ຣັກເຂັຍຍະ ນັງ ສຸຣັກຂິຕັງ
ຕິຕຕະນັ່ນະຕະຣັງ ຍາມັງ
ປະຕິຊັຄເຄຍຍະ ປັຕທິໂຕ ໑໕໗

ຖ້າຮູ້ວ່າ ຕົນນັ້ນ ເປັນທີ່ຮັກແລ້ວ ກໍຄວນຮັກສາໄວ້ໃຫ້ດີ, ບັຕທິຕຄວນທະນຸຖນອມຕົນໄວ້, ບໍ່ທັງ ໓ ວັຍ ກໍໃຫ້ເປັນ ວັຍໃດ ວັຍນຶ່ງກໍໄດ້.

## ເຣື່ອງ ໂພທິຣາຊກຸມາຣ

ພຣະບໍຣົມສາສດາ ທຣົງພາຣົພ ໂພທິຣາຊກຸມາຣ ໃຫ້ນາຍຊ່າງສ້າງຜາສາທ ມີນາມວ່າ ໂກກະນະທະ ທີ່ງົດງາມທີ່ສຸດ ແລ້ວທຣົງຄິດຈະຂ້ານາຍຊ່າງ ເພາະຢ້ານວ່າ ນາຍຊ່າງຈະໄປສ້າງຜາສາທ ໃຫ້ແກ່ ກະສັຕິຍ໌ອົງຄ໌ ອື່ນບາດແລ້ວ ຜາສາທຂອງພຣະອົງຄ໌ ກໍຈະບໍ່ເປັນຜາສາທທີ່ໜ້າອັສຈັຣຍ໌.

ຄັນນາຍຊ່າງຮູ້ຕົວ ຈຶ່ງສ້າງຄຣຸທ ປະກອບເຄື່ອງຍົນຕ໌ ເມື່ອສຳເຣັຈແລ້ວ ກໍພາບຸຕຣ໌ ຠັຣຍາ ເຂົ້າໄປໃນຕົວຄຣຸທ ບິນໄປຍັງປ່າ ຫິມວັນຕປະເທສ.

ບັດນັ້ນ, ນາຍຊ່າງ ກໍສ້າງນຄຣນຶ່ງຂຶ້ນ ແລ້ວຕັ້ງຕົວເປັນພຣະຣາຊາ ນາມວ່າ ພຣະເຈົ້າຠັຜກະອາຫນະ ຢູ່ໃນນຄຣນັ້ນ. ສ່ວນພຣະຣາຊກຸາຣ ເມື່ອສ້າງຜາສາທສຳເຣັຈແລ້ວ ກໍດຳຣິວ່າ ຈະທຳການສລອງ ຈຶ່ງໄດ້ນິມົນຕ໌ ພຣະສາສດາ ແລະ ພຣະຠິກຂຸສົງຆ໌ໄປຈັນຠັຕຕາຫາຣ ເພື່ອເປັນສິຣິມຸງຄຸລ.

ໃນກາຣຕ້ອນຮັບສເດັຈນັ້ນ ພຣະຣາຊກຸມາຣ ໄດ້ປູຜ້າຂາວຕັ້ງແຕ່ຘໍຣະຓີປະຕູ ແລະ ອະຘິຩຖານວ່າ ຖ້າເຮົາຈະໄດ້ ໂອຣົສ ຫຣື ຘິດາ ຂໍພຣະສາສດາ ຈົ່ງຢຽບຜ້ານີ້ ຄັນພຣະສາສດາ ສເດັຈໄປເຖິງ ພຣະອົງຄ໌ບໍ່ທຣົງຢຽບຜ້ານັ້ນ. ເຖິງແມ່ນວ່າ ພຣະຣາຊກຸມາຣຈະທູລເຖິງ ໓ ຄັ້ງ ພຣະອົງກໍບໍ່ທຣົງຢຽບ ເພາະທຣົງຊາບວ່າ ພຣະຣາຊກຸມາຣຈະບໍ່ໄດ້ ໂອຣົສ ແລະ ຘິດາ ແລ້ວຈຶ່ງທຣົງສແດງບຸພພກັມມ໌ໃນອດີຕໃຫ້ຟັງວ່າ :

ຄັ້ງນຶ່ງ, ພຣະຣາຊກຸມາຣ ແລະ ພຣະມເຫສີ ພາກັນລົງສຳເພົາໄປໃນທະເລ. ຄັນເຮືອສຳເພົາແຕກ ສາມີແລະຠັຣຍາ ເກາະແຜ່ນກະດານປ່ອຍໃຫ້ຟອງທະເລຊັດພາໄປເຖິງຝັ່ງເກາະແຫ່ງນຶ່ງ. ບໍ່ມີອາຫາຣທີ່ຈະບໍຣິໂຠຄ ຈຶ່ງເອົາໄຂ່ນົກແລະຕົວນົກເປັນອາຫາຣ. ດ້ວຍກັມມ໌ອັນນັ້ນ ພຣະຣາຊກຸມາຣ ແລະ ມເຫສີ ຈຶ່ງເປັນໝັນ ບໍ່ໄດ້ໂອຣົສ ແລະ ຘິດາ.

ໃນທີ່ສຸດອດີຕນິທານ ພຣະຍອດແກ້ວສັພພັຎຍູ ຈຶ່ງຕຣັສພຣະຄາຖານີ້.

# ໔

ອັຕຕານະເມວະ ປະຖະມັງ
ປະຕິຣູເປ ນິເວສະເຍ
ອະຖັຍຍະມະນຸສາເສຍຍະ
ນະ ກະລິສເສຍຍະ ປັຕາທິໂຕ ໑໑໕ໆ໑

ຄວນປະຕິບັຕິຕົນ ທຳຕົນເອງ ໃຫ້ດີເສັຍກ່ອນ ແລ້ວຈຶ່ງຄ່ອຍສອນຄົນອື່ນເຂົາ. ບັຕທິຕ ເມື່ອທຳໄດ້ຢ່າງນີ້ ຈຶ່ງບໍ່ສ້າງມົລທິນໃຫ້ແກ່ຕົນ.

## ເຣື່ອງ ພຣະອຸປະນັນທະສັກຍບຸຕຣ໌

ພຣະບໍຣົມສາສດາ ທຣົງຜາຣົພ ພຣະອຸປະນັນທສັກຍບຸຕຣ໌ ເປັນຜູ້ສລາດໃນວິລີກາຣເທສນາ ສັ່ງສອນກິກຂຸອື່ນ ໃຫ້ເປັນຜູ້ສັນໂດຍ ພໍໃຈໃນສິ່ງທີ່ຕົນມີຕົນໄດ້, ສ່ວນຕົນນັ້ນ ເປັນຜູ້ມັກມາກ. ຄັ້ງນຶ່ງ ມີກິກຂຸ ໔ ອົງຄ໌ໄດ້ຜ້າສາຕົກ (ຜ້າເປັນຜືນ) ໔ ຜືນ ກັບຜ້າກັມພົລ ຜ້າທີ່ເຮັດດ້ວຍຂົນສັຕວ໌ຜືນນຶ່ງ ບໍ່ສາມາຖທີ່ຈະແບ່ງປັນກັນ ດ້ວຍຄວາມຍຸຕິທັມມ໌

ພຣະອຸປະນັນທະສັກຍບຸຕຣ໌ ທຳທ່າບໍ່ຢາກເຂົ້າຫຍຸ່ງກ່ຽວ. ກິກຂຸ ໔ ອົງຄ໌ນັ້ນ ວິງວອນ ຢາກໃຫ້ຊ່ວຍແບ່ງໃຫ້ ເພິ່ນຈຶ່ງກ່າວວ່າ. ຖ້າທ່ານ ທັງ ໔ ຟັງຄຳຂອງເຮົາ ໆ ຈຶ່ງຈະແບ່ງໃຫ້.

ກິກຂຸທັງ ໔ ອົງຄ໌ ກໍຍອມກະທຳຕາມ. ພຣະອຸປນັນທະ ແບ່ງຜ້າສາຜົກ ໔ ຜືນນັ້ນ ໃຫ້ຜູ້ລະຜືນ, ຜ້າກັມພົລນັ້ນ ຕົນເອົາເສັຍເອງ ເພາະຖືວ່າເປັນຜູ້ແບ່ງ. ກິກຂຸ ໔ ອົງຄ໌ນັ້ນເດືອດຮ້ອນບໍ່ພໍໃຈ ຈຶ່ງນຳເອົາເຣື່ອງນັ້ນຂຶ້ນທູລ ແດ່ ພຣະສາສດາ. ພຣະອົງຄ໌ທຣົງຕຣັສວ່າ ພຣະອຸປນັນທະ ເຮັດໃຫ້ທ່ານທັງ ໔ ເດືອດຮ້ອນ ບໍ່ແມ່ນໃນຊາຕິນີ້ ເທົ່ານັ້ນ ໃນອະດີຕ ເພິ່ນກໍເຄີຍເຮັດມາແລ້ວເໝືອນກັນ. ໃນອະດີຕທີ່ຜ່ານມາ ພຣະອຸປະນັນທະ ເປັນໝາຈອກ, ກິກຂຸ ທັງ ໔ ນັ້ນ ເປັນນາຄ ໄດ້ປາປາກຕົວນຶ່ງມາ ແບ່ງຕົກລົງກັນບໍ່ໄດ້ ຈຶ່ງຂໍໃຫ້ໝາຈອກຊ່ວຍແບ່ງໃຫ້. ໝາຈອກຕັດປາອອກເປັນ ໓ ຕ່ອນ ຕ່ອນຫາງ ເປັນຂອງນາຄ ທີ່ທ່ຽວໄປໃນນ້ຳຕື້ນ, ຕ່ອນຫົວເປັນຂອງນາກທີ່ທ່ຽວໄປໃນນ້ຳເລິກ, ສ່ວນຕ່ອນກາງນັ້ນ ຕົນເອົາເສັຍເອງ.

ໃນທີ່ສຸດແຫ່ງ ອດີຕນິທານ ພຣະຍອດແກ້ວສັພພັລຍູ ຈຶ່ງຕຣັສຊຶ່ງພຣະຄາຖາ ດັ່ງທີ່ຍົກຂຶ້ນມາແລ້ວ ນັ້ນແລ.

---

໓

ອັຕຕານັລຈະ ຕະຖາ ກະຍິຣາ
ຍະຖັລລະມະນຸສາສະຕິ
ສຸທັນໂຕ ວະຕະ ທະເມຖະ
ອັຕຕາ ຫິ ກິຣະ ທຸທທະໂມ ໑໑໕໙໑

ເຮົາສອນຄົນອື່ນຢ່າງໃດ ເຮົາກໍຄວນທຳຕົວ ຢ່າງນັ້ນ. ເຝິກຫັດຕົນເອງແລ້ວຈຶ່ງຄ່ອຍເຝິກຫັດຄົນອື່ນ ເພາະຕົວເຮົາເອງນັ້ນ ເຝິກຫັດຍາກທີ່ສຸດ

## ເຣື່ອງ ພຣະປະລານິກະຕິສສະເຖຣະ

ພຣະບໍຣົມສາສດາ ທຣົງຜາຣົພ ພຣະປະລານິກະຕິສສະເຖຣະ ຜູ້ເປັນຫົວໜ້າ ພຣະກິກຂຸ ທັງຫລາຍ ປະມາຓ ໕໐໐ ອົງຄ໌ ຮຽນກັມມຖານໃນສຳນັກ ພຣະອົງຄ໌ແລ້ວ ກໍພາກັນໄປບຳເພັງສມຕະລັມມ໌ ຢູ່ໃນປ່າແຫ່ງນຶ່ງ ພຣະເຖຣະ ຈຶ່ງໄດ້ໃຫ້ໂອວາທແກ່ກິກຂຸ ເຫລົ່ານັ້ນວ່າ ທ່ານທັງຫລາຍ ຈົ່ງເປັນຜູ້ບໍ່ປະມາທ ທຳສມຕະລັມມ໌ເຖີດ.

ໃນເວລາຣາຕຣີ ກິກຂຸ ທັງຫລາຍ ຈເຣີນສມຕະລັມມ໌ ພຣະເຖຣະແອບໄປນອນ. ເມື່ອກິກຂຸ ທັງຫລາຍນອນ ເພິ່ນກໍຕື່ນ ທ່ຽວໄປປຸກກິກຂຸທັງຫລາຍ ໃຫ້ຈເຣີນສມຕະລັມມ໌. ພຣະເຖຣະ ໄດ້ກະທຳຢູ່ ຢ່າງນີ້. ກິກຂຸທັງຫລາຍທົນບໍ່ໄຫວ ແມ່ນແຕ່ອົງຄ໌ນຶ່ງ ກໍບໍ່ໄດ້ສຳເຣັຈຫຍັງເລີຍ ຈຶ່ງຄິດວ່າ ອາຈາຣຍ໌ຂອງເຮົາ ທັງຫລາຍ ຄົງມີຄວາມພຽຣກ້າ ບໍ່ເປັນອັນຫລັບອັນນອນ ເໝືອນກັບພວກເຮົາ. ເຮົາທັງຫບາຍ ຈົ່ງຊ່ອຍກັນ ທະນຸຖນອມ ໃຫ້ເພິ່ນຈເຣີນສມຕະລັມມ໌ ໂດຍສະດວກເຖີດ. ເມື່ອວ່າແລ້ວ ກໍຊ່ອຍກັນປະຕິບັຕິພຣະເຖຣະຢູ່ ຄັນເຫັນເພິ່ນເອົາແຕ່ນອນ ຈຶ່ງພາກັນເວົ້າວ່າ ຕາຍແຫລ້ວ! ອາຈາຣຍ໌ ຂອງພວກເຮົາເອົາແຕ່ນອນເປັນໃຫຍ່ ດີແຕ່ເຕືອນພວກເຮົາ.

ຄັນອອກພັຣຊາແລ້ວ ຈຶ່ງພາກັນໄປເຝົ້າ ພຣະສາສດາ ທູລຄວາມນັ້ນ ແດ່ພຣະສາສດາ, ພຣະອົງຄ໌ ຈຶ່ງທຣົງເລົ່າເຣື່ອງໃນອົຕກາລ ທ່ານປະລານິກະຕິສສະເຖຣະເປັນໄກ່ຂັນ ທີ່ຂັນໃນເວລາບໍ່ແມ່ນເວລາຂັນ ແລະ ເຮັດໃຫ້ພິກຂຸ ເຫລົ່ານັ້ນ ໃນຄາວທີ່ເປັນມາຕົພ ເຂົ້າໃຈເວລາຜິດ ເໝືອນກັນ. ໃນທີ່ສຸດແຫ່ງ ອດີຕນິທານນີ້ ພຣະຍອດແກ້ວ ສັພພັຍຍູເຈົ້າ ຈຶ່ງໄດ້ຕຣັສພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາໃນຂ້າງຕົ້ນນີ້.

---

## ໔

ອັຕຕາ ຫິ ອັຕຕະໂນ ນາໂຖ
ໂກ ຫິ ນາໂຖ ປະໂຣສິຍາ
ອັຕຕະນາ ຫິ ສຸທັນເຕນະ
ນາຖັງ ລະພະຕິ ທຸລລະພັງ ໑໖໐໑

ເຮົາຕ້ອງເພິ່ງເຮົາເອງ, ບໍ່ມີຄົນອື່ນໃດ ຈະເປັນທີ່ເພິ່ງໄດ້ ບຸຄຄົລທີ່ຝຶກຝົນຕົນດີແລ້ວ ຍ່ອມໄດ້ທີ່ເພິ່ງ ອັນໄດ້ແສນຍາກ.

# ເຣື່ອງ ມາຣດາຂອງພຣະກຸມາຣກັສສະປະເຖຣະ

ພຣະບໍຣົມສາສດາ ທຣົງຜາຣົພ ມາຣດາ ຂອງ ພຣະກຸມາຣກັສສະ-ປະເຖຣະ ຊຶ່ງເປັນທິດາຂອງ ເສຕຖີ ໃນເມືອງຣາຊຄຣືຫ໌. ນາງມີອັລຍາສັຍ

ຕັ້ງແຕ່ຍັງນ້ອຍ ອ້ອນວອນ ມາຣດາບິດາ ຢາກຈະບວຊ ກໍບໍ່ໄດ້ສົມປະສົງຄ໌, ຄັນຈເຣີນວັຍ ໄດ້ສາມີ. ເມື່ອຕັ້ງຄັຣภ໌ ຍັງບໍ່ທັນຮູ້ສຶກຕົວ ກໍຂໍອະນຸຍາຕ ສາມີໄປບວຊ ສາມີກໍອະນຸຍາຕໃຫ້ ນາງຈຶ່ງໄປບວຊໃນສຳນັກ ນາງພິກຂຸນີ ທີ່ເປັນພັຄຝ່າຍ ພຣະເທວທັຕ. ຢູ່ຕໍ່ມາຄັຣภ໌ແກ່ ກໍຜາກົຍຊັດຂຶ້ນມາ. ພຣະ-ເທວທັຕຮູ້ ຈຶ່ງບັງຄັບໃຫ້ສຶກ ນາງຈຶ່ງກ່າວວ່າ ເຮົາບໍ່ໄດ້ບວຊອຸທິສ ພຣະເທວທັຕ ເຮົາບວຊອຸທິສ ພຣະສັມມາສັມພຸທຸເຈົ້າຕ່າງຫາກ. ພຣະພິກຂຸທັງຫລາຍ ຈຶ່ງພາຕົວເຂົ້າເຝົ້າ ທູລເນື້ອຄວາມນັ້ນ ແດ່ ພຣະສາສດາ ພຣະອົງຄ໌ ຈຶ່ງໃຫ້ຫາຕະກູລໃຫຍ່ ໆ ມີອນາຖບິຕທິກະ ແລະ ນາງວິສາຂາ ເປັນຕົ້ນ ໃຫ້ພິຈາຣະນາວ່າ "ກາລເວລາຂອງການຕັ້ງ ຄັຣภ໌ ຄືການມີທ້ອງນັ້ນມີຂຶ້ນເມື່ອໃດ?"

ນາງວິສາຂາ ພິຈາຣະນາເບິ່ງ ຢ່າງຖີ່ຖ້ວນແລ້ວ ຈຶ່ງຄຳນວນຄິດໄດ້ຄວາມວ່າ "ຄັຣภ໌ນັ້ນໄດ້ຕັ້ງຂຶ້ນຄາວເມື່ອນາງຍັງເປັນຄຣິຫັສຖ໌ຢູ່ພຸ້ນ ຈຶ່ງເປັນອັນວ່າ ນາງບໍ່ມີໂທສ.

ຄັນກາລຕໍ່ມາ, ນາງໄດ້ຄອດລູກເປັນຊາຍ ພຣະເຈົ້າປະເສນທິໂກສົລທຣົງຮັບເອົາໄປລ້ຽງໄວ້ໃຫ້ນາມວ່າ ກຸມາຣກັສສປະ. ເມື່ອໄດ້ຈເຣີນວັຍຂຶ້ນກໍອຸປສົມບົທເປັນພິກຂຸ. ເມື່ອເພິ່ນໄດ້ຟັງບັຍຫາພຍາກຣຕ໌ ຈາກສຳນັກຂອງພຣະສາສດາ ກໍໄດ້ບັຣລຸ ພຣະອຣຫັຕ.

ຝ່າຍ ພິກຂຸນີ ຜູ້ເປັນມາຣດາຂອງເພິ່ນນັ້ນ ຕັ້ງແຕ່ຄອດເພິ່ນອອກ-

ມາແລ້ວ ກໍມີແຕ່ຮ້ອງໄຫ້ ຮໍ່າໄຮຄຶດຮອດລູກ ຄິດຢາກເຫັນລູກ ທຸກວັນ-ເວລາ ນີຕາທັງສອງຊຸ່ມໄປດ້ວຍ ອັສສຸຊົລະທາ ນໍ້າຕານອງໜ້າ ຢູ່ຕລອດເວລາ ປາຖນາ ກາວະນາ ຢູ່ສເມີວ່າ ຂໍໃຫ້ໄດ້ເຫັນໜ້າລູກ.

ຢູ່ມາວັນນຶ່ງ, ນາງກໍໄດ້ພົບເຫັນ ພຣະກຸມາຣກັສສະປະ ທີ່ກໍາລັງທ່ຽວບິຕທະບາຕຢູ່ດ້ວຍກັນ ຈຶ່ງຮີບແລ່ນເຂົ້າມາຫາເພື່ອຈະຈັບບາຍ ແຕ່ບັງເອີນລົ້ມຟຸບລົງ. ພຣະກຸມາຣກັສສປະ ຈຶ່ງຄິດວ່າ ຖ້ານາຣດາໄດ້ຟັງຖ້ອຍຄໍາອັນນິ້ມນວນຊວນໃຫ້ມີຄວາມຮັກຫອມ ໃນຖານະແມ່ ແລະ ລູກ ຜູກພັນກັນແລ້ວ ກໍຈັກເປັນອຸປະສັຄຂັດຂວາງ ຕໍ່ການບັຣລຸ ມັຄຄ໌ຜົລ ເມື່ອຄິດໄດ້ດັ່ງນີ້ແລ້ວ ເພິ່ນຈຶ່ງກ່າວຄໍາ ອັນບໍ່ເປັນທີ່ໜ້າຟັງ. ເມື່ອນາງ ກິກຂຸນີ ໄດ້ຍິນເຊັ່ນນັ້ນ ກໍໝົດອາລັຍໃນລູກ ແລະ ບັຣລຸອຣຫັຕ ໃນວັນນັ້ນເອງ.

ພຣະກິກຂຸ ທັງຫລາຍ ຈຶ່ງປະຊຸມສົນທນາກັນ ກ່ຽວກັບເຣື່ອງ ພຣະກຸມາຣກັສສປະເຖຣະ. ພຣະສາສດາ ຈຶ່ງໄດ້ຕຣັສພຣະຄາຖາດັ່ງທີ່ໄດ້ກ່າວນັ້ນ.

---

໕

ອັຕຕະນາວະ ກະຕັງ ປາປັງ
ອັຕຕຣະຊັງ ອັຕຕະສັມກະວັງ
ອະກິມັຕຖະຕິ ທຸມເມລັງ
ວະຊີຣັງວັມຫະຍັງ ມະຕີ ໑໑໕໑໑

ບາບທີ່ຕົນທຳເອງ ຍ່ອມເກີດໃນຕົນເອງ ແລະ ຕົນເອງນັ້ນແລເປັນຜູ້ສ້າງໄວ້. (ບາບກັມມ໌ນັ້ນ) ຍ່ອມທຳລາຍຄົນໂງ່ໃຫ້ຍ່ອຍຍັບດັບໄປເໝືອນດັ່ງເພັຊຣ໌ ທີ່ທຳລາຍແກ້ວມະນີ.

## ເຣື່ອງ ມຫາກາລ ອຸບາສົກ

ພຣະບໍຣົມສາສດາ ທຣົງຜາຣົພ ມຫາກາລ ອຸບາສົກ ຜູ້ໂສດາບັນ ຜູ້ນຶ່ງ. ໃນວັນອຸໂບສົຖ ອຸບາສົກຜູ້ນີ້ ໄດ້ໄປຣັກສາສີລອຸໂບສົຖໃນພຣະວິຫາຣ ແລ້ວເລີຍຟັງຣັມມ໌ຕລອດແຈ້ງ. ໃນເຊົ້າວັນນັ້ນ ໄດ້ມີໂຈຣຄົນນຶ່ງໄດ້ໄປລັກທຣັພຍ໌ເຂົາມາ ແລະ ຫລົບໜີມາທາງພຣະວິຫາຣໄດ້ເຫັນອຸບາສົກຢືນລ້າງໜ້າຢູ່ນອກພຣະວິຫາຣ ໂຈຣຈຶ່ງເອົາຫໍ່ທຣັພຍ໌ທີ່ຕົນລັກມານັ້ນໄປລອບວາງໄວ້ເບື້ອງຫລັງ ອຸບາສົກນັ້ນ ເມື່ອເຈົ້າຂອງທຣັພຍ໌ຕິດຕາມມາ ໄປເຫັນຫໍ່ທຣັບຍ໌ນັ້ນ ຈຶ່ງເຂົ້າໃຈວ່າອຸບາສົກນັ້ນເປັນໂຈຣ ແລ້ວພາກັນທຸບຕີຈົນຕາຍ.

ກິກຂຸ ສາມເນຣ ທັງຫລາຍອອກໄປເຫັນ ຈຶ່ງນຳຄວາມນັ້ນຂຶ້ນທູລແດ່ ພຣະສາສດາ ພຣະອົງຄ໌ຈຶ່ງທຣົງສແດງເຣື່ອງ ອດີຕກາລໃຫ້ຟັງວ່າ : ຄັ້ງນຶ່ງ ມຫາກາລ ອຸບາສົກຜູ້ນີ້ ເປັນອຳມາຕຍ໌ຂອງພຣະເຈົ້າ ພາຣາຌະສີເຫັນກັຣຍາຂອງບຸຣຸສຜູ້ນຶ່ງ ມີຮູບງາມແລະຢາກໄດ້ ຈຶ່ງເອົາແກ້ວມະນີໄປຊຸກເຊື່ອງໄວ້ ແລ້ວພາໂລຫາວ່າ ລັກແກ້ວຈຶ່ງຈັບຕົວມາຂ້າເສັຍ. ຄັນຈຸຕິຈາກອັຕຕະກາພນັ້ນແລ້ວ ກໍໄປເກີດໃນອະເວຈີ ນະຣົກ. ດ້ວຍເສສວິບາກກັມມ໌-

(ເຈົ້າກັມມ໌-ນາຍເວຣ) ຈຶ່ງໄດ້ກັບມາທຸບຕີ ມຫາການ ໃຫ້ເຖິງແກ່ຄວາມຕາຍ ໃນຊາຕິນີ້. ໃນທີ່ສຸດອດີຕນິທານ ພຣະຍອດແກ້ວສັພພັລຍູເຈົ້າ ຈຶ່ງໄດ້ຕຣັສ ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາ ໃນເບື້ອງຕົ້ນນີ້ນັ້ນແລ.

---

໕

ຍັສສະ ອັຈຈັນຕະທຸສສີລະຍັງ
 ມາລຸວາ ສາລະມິໂວຕຖະຕັງ
ກະໂຣຕິ ໂສ ຕະຖັຕຕານັງ
 ຍະຖາ ນັງ ອິຈສະຕິ ທິໂສ ໑໑໕໔໑

ຄົນທີ່ທຸສີລ ກໍເໝືອນດັ່ງຕົ້ນໄມ້ ທີ່ເຄືອໄມ້ກົງວອຂຶ້ນຈົນຮົກຕົບ ກໍ (ດັ່ງດຽວ) ກັບຄົນທີ່ທຸສີລ ທຳຕົນເອງໃຫ້ອອດວາຍ ຈົບຫາຍ ບໍ່ຈຳເປັນຕ້ອງໄດ້ລໍຖ້າໃຫ້ສັຕຣູມາຄອຍກະທຳໃຫ້ດອກ.

## ເຣື່ອງ ພຣະເທວທັຕ

ພຣະບໍຣົມສາສດາ ທຣົງຜາຣົພ ພຣະເທວທັຕ. ວັນນຶ່ງ ພຣະກິກຂຸທັງຫລາຍ ປະຊຸມກັນຕິຕຽນວ່າ ພຣະເທວທັຕ ເປັນຄົນທຸສີລ ເປັນຄົນມີ

ລັມມ໌ອັນລາມົກ. ເມື່ອຕັຕຫາ ຄວາມປາຖນາຈເຣີຍຂຶ້ນແລ້ວ ກໍໄປຄົບຫາ ອຊາຕສັຕຣຸກຸມາຣ ຍັງລາກສັກກາຣະໃຫ້ເກີດຂຶ້ນ. ແລ້ວຊັກຊວນ ອຊາຕະ-ສັຕຣຸກຸມາຣ ຂ້າພຣະຣາຊບິດາ ແລ້ວຄົບຄິດກັນກັບ ອຊາຕສັຕຣຸກຸມາຣທໍາ ຄວາມພຍາຍາມ ເພື່ອຈະຂ້າ ພຣະຕຖາຄົຕເຈົ້າ ໂດຍປະການຕ່າງ ໆ.

ພຣະສາສດາ ໄດ້ສເດັຈໄປຍັງທີ່ປະຊຸມນັ້ນ ທຣົງສແດງພຣະລັມມີກະຖາ ແລ້ວຈຶ່ງຕຣັສ ພຣະຄາຖາດັ່ງທີ່ຍົກຂຶ້ນມາຂ້າງເທິງນີ້.

---

໗

ສຸກະຣານິ ອະສາລູນີ
ອັຕຕະໂນ ອະຫິຕານີ ຈະ
ຍັງ ເວ ຫິຕັລຈະ ສາລຸລຈະ
ຕັງ ເວ ປະຣະມະທຸກກະຣັງ ໑໑ຝັລ໑

ກັມມ໌ອັນທີ່ບໍ່ດີ ທັງທີ່ບໍ່ມີປະໂຍຊນ໌ໃຫ້ແກ່ຕົນນັ້ນ ທໍາໄດ້ງ່າຍ ແຕ່ວ່າ ກັມມ໌ທີ່ດີ ທັງມີປະໂຍຊນ໌ໃຫ້ແກ່ຕົນດ້ວຍນັ້ນ ທໍາໄດ້ຍາກແທ້ ໆ.

## ເຣື່ອງ ສັງຆເພທະປຣິສັກກະ

ພຣະບໍຣົມສາສດາ ທຣົງຜາຣົພເຖິງ ເຣື່ອງການພຍາຍາມທໍາລາຍ

ສົງຄ໌ ຂອງພຣະເທວທັຕ. ວັນນຶ່ງ ພຣະເທວທັຕ ພຍາຍາມເພື່ອຈະທຳລາຍສົງຄ໌ ເຫັນພຣະອານົນທ໌ ທ່ຽວໄປບິຕທບາຕ ຈຶ່ງບອກຄວາມປະສົງຄ໌ຂອງຕົນແກ່ເພິ່ນ. ພຣະອານົນທ໌ ຈຶ່ງເຂົ້າໄປທູລຄວາມນັ້ນແດ່ພຣະສາສດາ ພຣະອົງຄ໌ ຈຶ່ງທຣົງພຣະທັມມິກະຖາ ແລ້ວຈຶ່ງຕຣັສ ພຣະຄາຖາດັ່ງທີ່ຍົກຂຶ້ນມາໃນຂ້າງເທິງນີ້.

---

໗

ໂຍ ສາສນັງ ອະຣະຫັງ
ອະຣິຍານັງ ທັມມະຊີວິນັງ
ປະຕິກໂກສະຕິ ທຸມເມໂທ
ທິຕຖິງ ນິສສາຍະ ປາປິກັງ
ຜະລານິ ກັຕຖະກັສເສວະ
ອັຕຕະຄັຕຖາຍະ ຜັລລະຕິ ໑໑໕໔໑

ຄົນໄຮ້ປັນຍາ ມີຄວາມເຫັນຜິດ ຕິຕຽນຄຳສອນຂອງເຫລົ່າ ພຣະອະຣິຍະ ຜູ້ອະຣະຫັນຕ໌ ຜູ້ມີຊີວິຕຢູ່ໂດຍທັມມ໌. ເຂົາຜູ້ນັ້ນ ຍ່ອມເກີດມາເພື່ອຂ້າຕົວເອງ ເໝືອນຂີໄຜ່ ທີ່ຂ້າຕົ້ນໄຜ່ ສັນນັ້ນແລ.

# ເຣື່ອງ ພຣະກາລເຖຣະ

ພຣະບໍຣົມສາສດາ ທຣົງຜາຣົພ ພຣະກາລເຖຣະ. ຍັງມີສຕຣີນຶ່ງທີ່ຕັ້ງຢູ່ໃນຖານະ ເໝືອນກັບມາຣດາ ອຸປະຖາກຂອງເພິ່ນ. ສຕຣີນັ້ນ ໄດ້ຍິນເພື່ອນບ້ານ ສັຣເສີຍ ພຣະພຸທລເຈົ້າ ແລະ ພຣະທັມມເທສນາຂອງ ພຣະອົງຄ໌ ກໍມີຄວາມປະສົງຄ໌ຢາກຈະໄປຟັງທັມມ໌ ຈຶ່ງແຈ້ງຄວາມປະສົງຄ໌ຂອງຕົນໃຫ້ ພຣະກາລເຖຣະຮູ້ ໆ ໄດ້ຫ້າມໄວ້ເຖິງ ໓ ຄັ້ງ.

ໃນທີ່ສຸດ, ນາງບໍ່ໄດ້ບອກໃຫ້ເພິ່ນຮູ້ ແຕ່ໄດ້ສັ່ງໃຫ້ ທິດາຈັດແຈງດູແລວຽກບ້ານການເຮືອນ ໃຫ້ຮຽບຮ້ອຍ ແລ້ວກໍໄປຟັງທັມມ໌ ໃນວິຫາຣ. ໃນຂຕະນັ້ນ, ພຣະກາລເຖຣະ ໄປທີ່ເຮືອນຂອງສຕຣີນັ້ນ ແຕ່ບໍ່ເຫັນສຕຣີ ແລະ ຮູ້ວ່າ ນາງໄປຟັງທັມມ໌ ຂອງພຣະສາສດາ ຈຶ່ງຮີບໄປຫ້າມພຣະສາສດາ ວ່າ ສຕຣີຜູ້ນີ້ ເປັນຄົນໂງ່ ພຣະອົງຄ໌ ຢ່າໄດ້ທຣົງສແດງທັມມ໌ ທີ່ສຸຂຸມລະອຽດເລີຍ ຂໍຈົ່ງສແດງພຽງ ທານ ສີລ ເທົ່ານັ້ນ ກໍພໍແລ້ວ. ພຣະອົງຄ໌ທຣົງຊາບອັລຍາສັຍ ຂອງ ພິກຂຸນັ້ນ ຈຶ່ງຕຣັສຊຶ່ງພຣະຄາຖາ ດັ່ງທີ່ຍົກຂຶ້ນມານັ້ນ

---

ໜ

ອັຕຕະນາວະ ກະຕັງ ປາປັງ
ອັຕຕະນາ ສັງກິລິສສະຕິ

ອັຕຕະນາ ອະກະຕັງ ປາປັງ
ອັຕຕະນາວະ ວິສຸຊຊະຕິ
ສຸທລິ ອະສຸທລິ ປັຈຈັຕຕັງ
ນາຍໂຍ ອັຍຍັງ ວິໂສລະເຍ ໑໑໖໕໑

ຕົນທຳບາບເອງ ຕົນກໍຍ່ອມ ໄດ້ຮັບຄວາມເສົ້າໝອງເອງ. ຕົນບໍ່ທຳບາບ ຕົນກໍບໍ່ບໍຣິສຸທລິເອງ. ຄວາມບໍ່ບໍຣິສຸທລິ ຫລືວ່າ ຄວາມເສົ້າໝອງນັ້ນເປັນຂອງສະເພາະຕົນ. ຄົນອື່ນ ຈະເຮັດໃຫ້ຄົນອື່ນບໍ່ບໍຣິສຸທລິແທນກັນບໍ່ໄດ້.

## ເຣື່ອງ ຈຸລລະກາລະອຸບາສົກ

ພຣະບໍຣົມສາສດາ ທຣົງຜາຣົພ ຈຸລລະກາລະອຸບາສົກ. ໃນຣາຕຣີວັນນຶ່ງ ຈຸລລະກາລະ ອຸບາສົກຜູ້ນີ້ ໄດ້ໄປຟັງທັມມ໌ທີ່ວິຫາຣ ຄັນຮຸ່ງແຈ້ງມາແລ້ວ ກໍອອກຈາກວິຫາຣກັບຄືນບ້ານ. ຄັ້ງນັ້ນ ຍັງມີພວກໂຈຣ ຂຸດອຸໂມງຄ໌ຫລົບໜີຈາກເຈົ້າທຣັພຍ໌ມາທາງນັ້ນ ໂຍນຫໍ່ທຣັພຍ໌ໄວ້ຕໍ່ໜ້າ ອຸບາສົກນັ້ນແລ້ວຫລົບໜີໄປ. ເຈົ້າຂອງທຣັພຍ໌ໄລ່ຕິດຕາມມາ ເຫັນຫໍ່ທຣັພຍ໌ ກໍເຂົ້າໃຈວ່າ ອູບາສົກນັ້ນ ເປັນໂຈຣ ຈຶ່ງຫຸ້ມກັນທຸບຕີ. ພວກ ນາງທາສີ ທີ່ພາກັນໄປຕັກນ້ຳຍາມເຊົ້າ ເຫັນດັ່ງນັ້ນ ຈຶ່ງຊ່ວຍກັນຫ້າມໄວ້ ແລະ ຮັບຮອງວ່າບໍ່ແມ່ນໂຈຣ ອັນເປັນການຊ່ວຍປົດເປື້ອງອຸບສົກນັ້ນໃຫ້ພົ້ນຈາກຄວາມຕາຍ.

ເມື່ອ ກິກຂຸ ທັງຫລາຍ ຊາບຄວາມນັ້ນແລ້ວ ຈຶ່ງໄດ້ເຂົ້າເຝົ້າຂາບທູລ ແດ່ພຣະສາສດາ. ພຣະອົງຄ໌ ຈຶ່ງທຣົງສແດງ ພຣະລັມມິກະຖາ ດ້ວຍບາທພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາໃນຂ້າງເທິງນີ້.

---

## ໑໐

ອັຕຕະທັຕຖັງ ປະຣັຕເຖນະ
ພະຫຸນາປິ ນະ ຫາປະເຍ
ອັຕຕະທັຕຖະມະກິຍຍາຍະ
ສະທັຕຖະປະສຸໂຕ ສິຍາ ໆ໑໕໒ໆ

ເຖິງແມ່ນວ່າ ຈະທຳປະໂຍຊນ໌ ໃຫ້ແກ່ຜູ້ອື່ນ ມາກມາຍກ່າຍກອງພຽງໃດ ກໍຕາມ ກໍບໍ່ຄວນປະຖິ້ມ ຫລື ເມີນເສີຍຕໍ່ຈຸດໝາຍປາຍທາງຂອງຕົນ ແລະ ຄວນເອົາໃຈໃສ່ຂົນຂວາຍ.

## ເຣື່ອງ ພຣະອັຕຕະທັຕຖະເຖຣະ

ພຣະ ບໍຣົມສາສດາ ທຣົງຜາຣົພ ພຣະອັຕຕະທັຕຖະເຖຣະ. ໃນກາລເມື່ອ ພຣະອົງຄ໌ໃກ້ຈະທຣົງປົງພຣະຊົນມາຍຸ ສເດັຈດັບຂັນລ໌ ປຣິນິພພານທີ່

ສາລະວະໂນທະຍານ ນອກເມືອງ ກຸສິນາຣາ ໃນວັນວິສາຂະບູຊານັ້ນ. ຄັ້ງນັ້ນ ພຣະກິກຂຸ ສາວົກ ທັງຫລາຍ ທີ່ຍັງບໍ່ທັນບັຣລຸ ອຣະຫັຕນັ້ນ ຕ່າງກໍມີຄວາມເສົ້າສລົດໃຈ ບໍ່ໄດ້ອອກຫ່າງຈາກພຣະອົງຄ໌ ເຝົ້າປະຊຸມ ປຶກສາຫາຣືກັນເປັນກຸ່ມ ໆ. ສ່ວນ ພຣະອັຕຕະທັຕຖະເຖຣະ ມາດຳຣິວ່າ ເຮົາຈະບຳເພັນພຽຣໃຫ້ສຳເຣັຈພຣະອຣຫັຕ ໃນເວລາທີ່ພຣະສາສດາ ຍັງທຣົງພຣະຊົນມ໌ຢູ່ນີ້. ຄັນເພິ່ນດຳຣິ ເຊັ່ນນັ້ນແລ້ວ ເພິ່ນກໍຫລີກໄປບຳເພັນ ສມຕະລັມມ໌ຢູ່ແຕ່ຜູ້ດຽວ.

ພຣະ ກິກຂຸ ທັງຫລາຍ ຫາວ່າເພິ່ນບໍ່ມີຄວາມຈົງຮັກກັກດີ ໃນພຣະສາສດາ ຈຶ່ງໄດ້ນຳຄວາມນັ້ນ ຂຶ້ນຂາບທູລ. ພຣະອົງຄ໌ ຈຶ່ງໄດ້ຮັບສັ່ງໃຫ້ຫາຕົວມາ ແລ້ວຕຣັສຖາມ. ເພິ່ນກໍທູລຄວາມດຳຣິ ຂອງຕົນໃຫ້ພຣະອົງຄ໌ທຣົງຊາບ. ພຣະອົງຄ໌ຈຶ່ງທຣົງປະທານ ສາລຸການ ໃຫ້ກິກຂຸ ທັງຫລາຍຖືເອົາເປັນຕົວຢ່າງ ແລ້ວທຣົງສັຣເສີນ ລັມມານຸລັມມປຕິບັຕິ ແລ້ວຈຶ່ງຕຣັສຊຶ່ງພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາໃນຂ້າງເທີງນີ້.

---

## ຈົບ ອັຕຕະວັຄຄ໌ ທີ່໑໔

# ໂລກວັຄຄ໌ ທີ່ ໑໓
# ໝວດ ທີ່ວ່າດ້ວຍໂລກ

## ໑

ຫີນັງ ລັມມັງ ນະ ເສເວຍຍະ
ປະມາເທນະ ນະ ສັງວະເສ
ມິຈຉາທິຝຖິງ ນະ ເສເວຍຍະ
ນະ ສິຍາ ໂລກະວັຫຒະໂນ ໑໑໖໗໑

ຢ່າປະພຶຕຣ໌ ສິ່ງທີ່ຊົ່ວຊ້າ ເລວທຣາມ, ຢ່າຢູ່ດ້ວຍຄວາມປະມາທ, ຢ່າຢຶດຖື ຄວາມເຫັນຜິດ, ຢ່າທຳຕົນເປັນຄົນຮົກໂລກ.

## ເຣື່ອງ ກິກຂຸໜຸ່ມ

ພຣະບໍຣົມສາສດາ ທຣົງຜາຣົພ ກິກຂຸໜຸ່ມ ອົງຄ໌ນຶ່ງ ທະເລາະວິວາທກັບຫລານຂອງນາງວິສາຂາ ຕ່າງຄົນຕ່າງກໍເວົ້າໃຫ້ກັນວ່າ ຄົນຫົວຂາດ ຫລານຂອງນາງວິສາຂາ ຮ້ອງໄຫ້ໄປຟ້ອງຍາຍ. ນາງວິສາຂາ ກ່າວຖ້ອຍຄຳຊີ້ແຈງໃຫ້ເລີກແລ້ວກັນໄປ. ກິກຂຸນັ້ນ ຫາວ່າ ນາງວິສາຂາເຂົ້າຂ້າງຫລານຂອງຕົນ. ເວລານັ້ນ, ພຣະເຖຣະຜູ້ເປັນອຸປັຊຊາຍ໌ ຂອງກິກຂຸນັ້ນ ໄຕ່ຖາມ

ຊາບຄວາມແລ້ວຈຶ່ງກ່າວສອນ ກິກຂຸນັ້ນ ໆ ກັບກ່າວຫາວ່າ ພຣະອຸປັຊຊາຍ໌ ເຂົ້າກັບ ອຸປັຍກາຍິກາຂອງຕົນ. ໃນເວລານັ້ນ, ພຣະສາສດາ ທອດພຣະເນຕຣ໌ ເຫັນອຸປນິສັຍ ຂອງກິກຂຸອົງຄ໌ນັ້ນ ຈຶ່ງໄດ້ສເດັຈໄປໃນທີ່ນັ້ນ, ຣັບສັ່ງຖາມ ວ່າ ເປັນເຣື່ອງ ອັນໃດກັນ ນາງວິສາຂາຈຶ່ງທູລຄວາມນັ້ນ ຕັ້ງແຕ່ຕົ້ນໆມາ ພຣະສາສດາ ຈຶ່ງທຣົງອະນຸມັຕຄ້ອຍໄປຕາມ ພຣະກິກຂຸນັ້ນ, ຣັບສັ່ງນາງ ວິສາຂາວ່າ ເປັນຫຍັງຫລານຂອງທ່ານ ຈຶ່ງມາດ່າສາວົກຂອງເຮົາ. ຂຕະນັ້ນ ກິກຂຸ ອົງຄ໌ນັ້ນ ຈຶ່ງລຸກຂຶ້ນປະນົມມື ນ້ອມນມັສກາຣ ທູລວ່າ ພຣະອົງຄ໌ຍ່ອມ ທຣົງຊາບດີ. ອູປັຊຊາຍ໌ ຂອງຂ້າພຣະອົງຄ໌ ແລະ ນາງວິສາຂາ ບໍ່ຮູ້ເຖິງຊຶ່ງ ຄວາມຈິງອັນຄັກແນ່. ພຣະສາສດາ ຈຶ່ງແດງພຣະທັມມິກະຖາ ແລ້ວຈຶ່ງຕຣັສ ພຣະຄາຖາ ດັ່ງທີ່ຍົກຂຶ້ນມາ ໃນເບື້ອງຕົ້ນນັ້ນ.

---

໔

ອັຕຕົຍເກ ນັປປະມັຊເຊຍຍະ
ທັມມັງ ສຸຈະຣິຕັງ ຈະເຣ
ທັມມະຈາຣີ ສຸຂັງ ເສຕິ
ອັສມິງ ໂລເກ ປະຣັມຫິ ຈະ ໑໖໘໑

ລຸກຂຶ້ນເຖີດ ຢ່າໄດ້ມົວເມົາ ປະມາທຢູ່ເລີຍ, ຈົ່ງປະພຶຕຣ໌ ສຸຈຣິຕ

ລັມມ໌, ເພາະວ່າ ຜູ້ທີ່ປະພຶຕຣ໌ລັມມ໌ ຍ່ອມຢູ່ເປັນສຸຂ ທັງທີ່ຢູ່ໃນໂລກນີ້ ແລະ ໃນໂລກໜ້ານັ້ນດ້ວຍ.

໓

ລັມມັຌຈະເຣ ສຸຈະຣິຕັງ
    ນະ ຕັງ ທຸຈຈະຣິຕັງ ຈະເຣ
ລັມມະຈາຣີ ສຸຂັງ ເສຕິ
ອັສມິງ ໂລເກ ປະຣັມຫິ ຈະ ໆ໑໖໙ໆ

ຈົ່ງປະພຶຕຣ໌ ສຸຈະຣິຕລັມມ໌ ຢ່າໄດ້ປະພຶຕຣ໌ ທຸຈະຣິຕ ຜູ້ທີ່ປະພຶຕຣ໌ ລັມມ໌ ຍ່ອມຢູ່ເປັນສຸຂ ທັງໃນໂລກນີ້ ແລະໃນໂລກໜ້າດ້ວຍ.

# ເຣື່ອງ ພຣະເຈົ້າສຸທໂລທນະ

ພຣະບໍຣິສາສດາ ທຣົງ ຜາຣົພ ພຣະເຈົ້າ ສຸທໂລທນະ ມຫາຣາຊ. ໃນກາລເມື່ອ ພຣະຍອດແກ້ວສັພພັຌຌູ ສເດັຈ ພຣະນຄຣກບິລພັສດຸ໌ນັ້ນ. ຄັ້ງແຣກ ພ້ອມພຣະກີກຂຸສົງຆ໌ເປັນອັນມາກ ສເດັຈປະທັບຢູ່ທີ່ ນິໂຄຣລາ- ຣາມ ທຣົງສແດງລັມມ໌ ທຳລາຍມານະ ພຣະປະຍູຣຌາຕິ ທັງປວງແລ້ວ ຍັງ ຝົນໂບກຂຣພັສໃຫ້ຕົກລົງ ໃນຌາຕິສມາຄົມແລ້ວຈຶ່ງຕຣັສ ເວສັນຕຣຊາດົກ ອັນມີ ພຣະເຈົ້າສຸທໂລທນະມຫາຣາຊເປັນປະລານ ໃຫ້ມີຄວາມຊົມຊື່ນຍິນ-

ດີ. ໃນວັນຮຸ່ງເຊົ້ານີ້ໃໝ່ ພຣະຍອດແກ້ວສັພພັຍຍູ ພ້ອມດ້ວຍພຣະກິກຂຸ ເປັນອັນມາກ ໄດ້ອອກສເດັຈທ່ຽວບິຕຫບາຕ ໂດຍລຳດັບ.

ຝ່າຍພຣະເຈົ້າສຸທໂສທນະ ມຫາຣາຊ ເມື່ອກັບໄປຈາກ ນິໂຄຣທາ-ຣາມນັ້ນແລ້ວ ກໍຮັບສັ່ງໃຫ້ຕົກແຕ່ງກັຕາຫາຣ ແລະ ຈັດຕັ້ງອາສນະໄວ້ໃຫ້ເປັນທີ່ຮຽບຮ້ອຍ ເພື່ອພຣະພຸທລເຈົ້າ ແລະ ພຣະກິກຂຸສົງຜ໌ບໍຣິວາຣ ແຕ່ ບໍ່ໄດ້ອາຣາຣນາເຊີນສເດັຈ ກໍຍ້ອນເຂົ້າພຣະທັຍວ່າ ໂອຣົສຂອງເຮົານັ້ນ ເມື່ອບໍ່ສເດັຈມາທີ່ ຣາຊນິເວສນ໌ແລ້ວ ຈັກສເດັຈໄປທີ່ໃດ.

ຄັນທຣົງຊາບວ່າ ພຣະສາສດາ ສເດັຈໄປທ່ຽວບິຕຫບາຕ ເຊັ່ນນັ້ນ ຈຶ່ງຮີບສເດັຈອອກມາ ຖວາຍນມັສການແລ້ວຕຣັສວ່າ ເປັນຫຍັງ ພຣະລູກເຈົ້າ ມາທ່ຽວບິຕຫບາຕໃຫ້ບິດາຂາຍໜ້າ? ບັດນັ້ນ ພຣະສາສດາ ຈຶ່ງຕຣັສວ່າ ອາຕມາອຸຣັກສ໌ຕາມວົງສ໌ຕະກູລ. ພຣະຣາຊາ ຈຶ່ງຕຣັສຖາມວ່າ ຂໍ້ນີ້ເປັນວົງສ໌ຂອງເຮົາ ຫຣືວ່າຢ່າງໃດ?. ພຣະສາສດາ ຈຶ່ງຕຣັສວ່າ ບໍ່ແມ່ນວົງສ໌ຂອງພຣະອົງຄ໌, ແຕ່ເປັນວົງສ໌ຂອງອາຕມາຕ່າງຫາກ ເພາະວ່າ ພຣະພຸທລະເຈົ້າ ທັງຫລາຍ ທ່ຽວບິຕຫບາຕເຊັ່ນນີ້ ໆ ເປັນກິຈວັຕຣ. ບັດນັ້ນ ພຣະຍອດແກ້ວສັພພັຍຍູ ຈຶ່ງຕຣັສ ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາເບື້ອງຕົ້ນນັ້ນ

---

໔

ຍະຖາ ພຸພພຸຣະກັງ ປັສເສ
ຍະຖາ ປັສເສ ມະຣີຈິກັງ
ເອວັງ ໂລກັງ ອະເວກຂັນຕັງ
ມັຈຈຸຣາຊາ ນະ ປັສສະຕີ ໑໑໗໐໑

ຜູ້ທີ່ແນມເຫັນໂລກວ່າ ເປັນສິ່ງທີ່ ບໍ່ຈີຣັງ ຍັ້ງຍືນ ຫາສາຣະປະ-ໂຍຊນ໌ບໍ່ໄດ້ ເຊັ່ນດຽວກັບທີ່ຄົນແນມເບິ່ງ ຟອດນ້ຳ ແລະ ພຍັບແດດ. ຄົນເຊັ່ນນີ້ ພຍາມາຣຍ່ອມຫາບໍ່ເຫັນ.

## ເຣື່ອງ ວິປັສສກະກິກຂຸ

ພຣະບໍຣົມສາສດາ ທຣົງຜາຣົພ ພຣະວິປັສສກະ ກິກຂຸ ທີ່ມີຢູ່ດ້ວຍກັນປະມາຓ ໕໐໐ ອົງຄ໌. ເມື່ອໄດ້ຮຽນກັມມກຖານຈາກສຳນັກຂອງພຣະອົງຄ໌ແລ້ວ ກໍທູລລາໄປບຳເພັຍສມຕະລັມມ໌ຢູ່ໃນປ່າ ແຕ່ບໍ່ອາຈບັຣລຸລັມມ໌ວິເສສໄດ້ ຈຶ່ງດຳຣິວ່າ ເຮົາຈະໄປຂໍປ່ຽນ ພຣະກັມມກຖານໃໝ່. ໃນຣະຫວ່າງເດີນທາງມານັ້ນ ໄດ້ເຫັນພຍັບແດດ ຈຶ່ງຈເຣີຍ ມຣີຈິ ກັມມກຖານມາຕາມທາງແລະໃກ້ຈະເຖິງພຣະວິຫາຣ ເກີດຝົນຕົກໜັກ ນ້ຳຝົນໄຫລມາເກີດມີຟອດນ້ຳ

ຕັ້ງຂຶ້ນແລ້ວກໍແຕກໄປ. ກິກຂຸ ເຫລົ່ານັ້ນ ໄດ້ພາກັນຢືນເບິ່ງຢູ່ທີ່ໜ້າມຸຂ ກໍ ເລີຍພາກັນຖືເປັນອາຣົມຕ໌ວ່າ ອັນວ່າ ອັຕກາພນີ້ ກໍຄືກັນກັບຟອດນ້ຳ ເກີດ ຂຶ້ນແລ້ວ ກໍແຕກໄປ. ພຣະສາສດາ ປະທັບຢູ່ໃນພຣະຄັນລກຸຝີ ທອກພຣະ- ເນຕຣ໌ເຫັນ ກິກຂຸ ເຫລົ່ານັ້ນ ຈຶ່ງເປັ່ງພະໂອກາສຣັສມີໄປ ເໝືອນກັບວ່າຢູ່ ໃນທີ່ຊ້ອງໜ້າ ຂອງ ກິກຂຸ ເຫລົ່ານັ້ນ ແລ້ວຈຶ່ງຕຣັສພຣະຄາຖາ ດັ່ງທີ່ກ່າວ ມາຂ້າງເທິງນີ້.

---

## ໕

ເອຖະ ປັສສະຖິມັງ ໂລກັງ
ຈິຕັງ ຣາຊະຣະຖູປະມັງ
ຍັຕຖະ ພາລາ ວິສີທັນຕິ
ນັຕຖິ ສັງໂຄ ວິຊານະຕັງ ໑໑໗໑໑

ຕູເຈົ້າ ທັງຫລາຍ ຈົ່ງພາກັນມາເບິ່ງໂລກນີ້ ທີ່ວິຈິຕພິສດາຣງົດງາມ ເໝືອນກັນກັບຣາຊຣົຖທຣົງ. ໂລກອັນທີ່ວ່າ ສວຍງາມນີ້ແຫລະ ເຫລົ່າຄົນ ໂງ່ ທັງຫລາຍ (ພາກັນຕາຍໃຈຫລົງໄຫລ) ມົວສຸມຢູ່ ແຕ່ວ່າທ່ານຜູ້ຮູ້ບໍ່ໄດ້ ຕິດຂ້ອງຢູ່ເລີຍ.

# ເຣື່ອງ ອະກັຍຣາຊກຸມາຣ

ພຣະບໍຣົມສາສດາ ທຣົງຜາຣົພ ອະກັຍຣາຊກຸມາຣ ເປັນຣາຊໂອຣົສ ຂອງ ພຣະເຈົ້າພິມພິສາຣ ສເດັຈໄປຜາບປັຈຈາມິຣຕຣ໌ ໃນເຂຕຊົນບົທເປັນທີ່ຣຽບຣ້ອຍແລ້ວ ພຣະຣາຊບິດາ ທຣົງຍິນດີ ຈຶ່ງພຣະຣາຊທານ ນາງຟ້ອນລຳຂັບຮ້ອງນາງນຶ່ງ ແລະໃຫ້ສເວີຍຣາຊສົມບັຕິ ໗ ວັນ. ໃນວັນທີ່ ໗ ນັ້ນ ໄດ້ສເດັຈໄປສູ່ທ່ານ້ຳ ສົງສນານເປັນທີ່ສຳຣາຍແລ້ວ ກໍສເດັຈເຂົ້າສູ່ອຸທຍານ ປະທັບທອດພຣະເນຕຣ໌ ກາຣຟ້ອນລຳຂອງນາງນັ້ນ. ຂຕະນັ້ນ ນາງຟ້ອນໄດ້ທຳກາລະກິຣິຍາ ລົ້ມຕາຍລົງໃນປັຈຈຸບັນທັນດ່ວນ. ພຣະຣາຊກຸມາຣ ເຫັນກໍທຣົງໂສກເສົ້າຣະທົມ ພຣະທັຍ. ພຣະອົງຄ໌ ບໍ່ເຫັນໃຜທີ່ຈະຊ່ອຍຣະງັບຄວາມໂສກນັ້ນໄດ້ ເຫັນແຕ່ ພຣະສາສດາ ພຣະອົງຄ໌ດຽວ ຈຶ່ງສເດັຈເຂົ້າໄປເຝົ້າ ທູລຂໍໃຫ້ພຣະອົງຄ໌ຊ່ອຍດັບໂສກ.

ພຣະພຸທລອົງຄ໌ ຈຶ່ງທຣົງສແດງ ພຣະລັມມິກຖາ ຣະງັບຄວາມໂສກ ຂອງ ພຣະຣາຊກຸມາຣ ດ້ວຍບາທພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາໃນຂ້າງຕົ້ນ ຂອງເຣື່ອງນີ້ ນັ້ນແລ.

---

## ໕

ໂຍ ຈະ ປຸພເພ ປະມັຊຊະຕິ
ປັຈສາ ໂສ ນັປປະມັຊຊະຕິ

ໂສ ອິມັງ ໂລກັງ ປະກາເສຕິ
ອັພການ ມຸຕໂຕວະ ຈັນທິມາ ໑໗໒໑

ຜູ້ໃດທີ່ໄດ້ກະທຳບາບໄວ້ແລ້ວ ລະເວັ້ນຈາກການກະທຳບາບນັ້ນໄດ້ດ້ວຍການກະທຳດີ, ຜູ້ນັ້ນ (ຊື່ວ່າ) ເຮັດໃຫ້ໂລກນີ້ສວ່າງສໄວ ເໝືອນດັ່ງພຣະຈັນທຣ໌ ທີ່ພົ້ນຈາກເມຄໝອກ ສັນນັ້ນແລ.

## ເຣື່ອງ ພຣະສັມມັຊຊນະເຖຣະ

ໃນກາລະ ຄັ້ງນຶ່ງ, ພຣະບໍຣົມສາດາ ທຣົງຜາຣົພ ພຣະສັມມັຊຊນະເຖຣະ. ພຣະເຖຣະອົງຄ໌ນີ້ ເພິ່ນກວາດແຜ້ວເດີ່ນວັດສເມີບໍ່ໄດ້ມີການກຳນົດວ່າ ເປັນຍາມເຊົ້າ ຫຣືວ່າ ຍາມແລງ. ໃນວັນນຶ່ງ ເພິ່ນເຫັນ ພຣະເຣວຕະເຖຣະ ນັ່ງຢູ່ໃນທີ່ພັກກາງເວັນ ເພິ່ນອາຈຂົມຕາ ຈຶ່ງກ່າວຕິຕຽນຂຶ້ນວ່າ ພຣະກິກຂຸ ອົງຄ໌ນີ້ ສັງມາຂີ້ຄ້ານແທ້ ບໍຣິໂກຄອາຫານ ທີ່ເຂົາໃຫ້ດ້ວຍສັທລາແລ້ວມານັ່ງເສີຍຢູ່ ບໍ່ກວາດແຜ້ວວັດວາອາຣາມຫຍັງເລີຍ.

ວັນນຶ່ງ, ພຣະເຣວຕະ ເພິ່ນຈຶ່ງສອນວ່າ ການກວາດ ວັດວາອາຣາມນັ້ນ ກໍດີຢູ່ແລ ແຕ່ຕ້ອງໄດ້ແບ່ງປັນເວລາ ສາລຍາຍ "ທວັຕຕິງສາການ" ອາການ ໓໒ ຄື: ເກສາ ໂລມາ ນະຂາ ຯລຯ ມັຕຖະເກມັທທະລຸງຄັງ. ອະນຸໂລມ ປະຕິໂລມ. ໂດຍພິຈາຣະຕາໃຫ້ເຫັນວ່າ ບໍ່ເປັນແກ່ນສາຣ ບໍ່ຍັ້ງຍືນ

ຖາວຣ ອັຕຕະກາພນີ້ ມີຄວາມເສື່ອມສິ້ນໄປ. ບັດນັ້ນ, ພຣະສັມມັຊຊຸນະ ກໍ ດຳຣົງຢູ່ໃນໂອວາທ ຂອງ ພຣະເຣວຕະເຖຣະ. ໃນເວລາບໍ່ຊ້າເພິ່ນກໍໄດ້ສຳເຣັຈພຣະ ອຣຫັຕ. ບໍຣິເວຣພຣະອາຣາມນັ້ນ ກໍຣົກເຮື້ອໄປ ຍ້ອນບໍ່ມີຜູ້ປັດກວາດ. ພຣະກິກຂຸ ທັງຫລາຍ ຈຶ່ງຖາມເພິ່ນວ່າ ດຽວນີ້ ເປັນຫຍັງຈຶ່ງບໍ່ເຫັນທ່ານກວາດແຜ້ວເດີນວັດຄືເກົ່າ. ເພິ່ນຕອບວ່າ ແຕ່ກ່ອນມາ ເຮົາເປັນຜູ້ປະມາທ, ມາດຽວນີ້ ເຮົາບໍ່ເປັນຜູ້ປະມາທອີກແລ້ວ.

ກິກຂຸ ທັງຫລາຍ ຫາວ່າເພິ່ນອວດ ພຣະອຣຫັຕ ຈຶ່ງທູລຄວາມນັ້ນແດ່ ພຣະສາສດາ. ພຣະອົງຄ໌ ຈຶ່ງທຣົງຮັບຮອງວ່າ ເພິ່ນເວົ້າຕາມຄວາມເປັນຈິງ. ແລ້ວຈຶ່ງຕຣັສພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາຂ້າງເທິງນີ້.

---

## ໗

ຍັສສະ ປາປັງ ກະຕັງ ກັມມັງ
ກຸສະເລນະ ປະທີຍະຕິ
ໂສມັງ ໂລກັງ ປະກາເສຕິ
ອັພກາ ມຸຕໂຕວະ ຈັນທິມາ ໑໗໓

ຜູ້ໃດ ທີ່ໄດ້ກະທຳບາບໄວ້ແລ້ວ ຕໍ່ມາລະເວັ້ນໄດ້ດ້ວຍການກະທຳຊຶ່ງຄວາມດີ ທຽນຍ່ອມ ສ່ອງແສງໃຫ້ໂລກນີ້ ສວ່າງສໄວ ເໝືອນດັ່ງວ່າ ພຣະ

ຈັນທຣ໌ ທີ່ພົ້ນຈາກເມຄໝອກ ນັ້ນແລ.

# ເຣື່ອງ ພຣະອົງຄຸລິມາລເຖຣະ

ພຣະບໍຣົມສາສດາ ທຣົງປາຣົພ ພຣະອົງຄຸລິມາລເຖຣະ. ຄາວເມື່ອເພິ່ນເປັນຄຣິຫັສຖ໌ນັ້ນ ເພິ່ນເປັນໂຈຣ ທີ່ລືຊື່. ກ່າວກັນວ່າ ບຸຣຸຫທີ່ມີກໍາລັງແຮງເຕັມທີ່ ໔໐ ຄົນ ບໍ່ສາມາຖທີ່ຈະສູ້ກັບເພິ່ນໄດ້. ເພິ່ນໄດ້ຂ້າຄົນຫລາຍທີ່ສຸດ ຈົນນັບບໍ່ຖ້ວນ. ເພື່ອຢາກຮູ້ຈໍານວນທີ່ແນ່ນອນ ເພິ່ນຈຶ່ງໄດ້ຕັດນິ້ວມືຮ້ອຍເປັນພວງມາລັຍຄ້ອງຄໍໄວ້.

ພຣະບໍຣົມສາສດາ ໄດ້ສເດັຈໄປທໍຣະມານ ປາບໃຫ້ລະພຍົສຄວາມໂຫດຮ້າຍນັ້ນໄດ້ ແລ້ວຈຶ່ງທູລຂໍບັຣພຊາອຸປສົມບົທ. ເມື່ອອຸປສົມບົທແລ້ວເພິ່ນກໍຕັ້ງໜ້າບໍາເພັຍພຽຣ ສໍາເຣັຈ ພຣະອຣຫັຕ. ດໍາຣົງມາຍຸສັງຂາຣຄວນແກ່ກາລແລ້ວ ກໍປຣິນິພພານ.

ພຣະກິກຂຸ ທັງຫລາຍ ທີ່ບໍ່ຊາບຄວາມຈິງ ຈຶ່ງປະຊຸມສົນທນາກັນວ່າ ພຣະອົງຄຸລິມາລ ຄາວເມື່ອເປັນຄຣິຫັສຖ໌ນັ້ນ ໄດ້ຂ້າມນຸສຍ໌ເສັຍ ເປັນອັນ-ມາກ ດຽວນີ້ໄປເກີດແລ້ວໃນທີ່ໃດໜໍ ! ພຣະສາສດາ ໄດ້ສເດັຈມາໃນທີ່ປະຊຸມນັ້ນ ຈຶ່ງຕຣັສວ່າ ປຣິນິພພານແລ້ວ.

ຄັ້ງນຶ່ງ ພຣະກິກຂຸ ທັງຫລາຍ ປະຊຸມສົນທນາກັນ ແລະສົງສັຍວ່າ ພຣະອົງຄຸລິມາລ ເມື່ອເປັນຄຣິຫັສຖ໌ນັ້ນ ຂ້າມນຸສຍ໌ເສັຍເປັນຈໍານວນຫລາຍ

ປຣິນິພພານໄດ້ບໍ ?. ພຣະສາສດາ ທຣົງຮັບວ່າ : ດູຣາ ກິກຂຸ ທັງຫລາຍ ແຕ່ກ່ອນ ອົງຄຸລິມາລບໍ່ໄດ້ກັລຍາຕມິຕຣ໌ ຈຶ່ງກະທຳກັມມ໌ອັນລາມົກ. ພາຍ ຫລັງໄດ້ກັລຍາຕມິຕຣ໌ ແລ້ວເປັນຜູ້ບໍ່ປະມາທ ລະອະກຸສົລເສັຍ ດ້ວຍກຸສົລ ແລ້ວຈຶ່ງຕຣັສ ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາໃນຂ້າງເທິງນັ້ນແລ.

---

ຖ

ອັນລກູໂຕ ອະຍັງ ໂລໂກ
ຕະນຸເກຕຖະ ວິປັສສະຕິ
ສະກຸນໂຕ ຊາລະມຸຕໂຕອະ
ອັປໂປ ສັຄຄາຍະ ຄັຈຈະຕິ ໑໑໗໔໑

ໂລກນີ້ ມືດມົນ ມີໜ້ອຍຄົນນັກແລ ທີ່ຈະຮູ້ແຈ້ງ, ມີໜ້ອຍຄົນຈະ ໄປສວັຣຄ໌ ເໝືອນນົກ ທີ່ຕິດຂ່າຍ ນາຍພານ, ມີໜ້ອຍຕົວ ທີ່ຈະຫລຸດ ລອດໄປໄດ້.

## ເຣື່ອງ ເປສະກາຣລິດາ

ພຣະບໍຣົມສາສດາ ທຣົງປາຣົພ ເປສະກາຣລິດາ ລິດາຂອງນາຍຊ່າງ ຫູກ ເປັນຊາວເມືອງ ອາອະວີ. ນາງໄດ້ສດັບ ມຣຕະສຕິກະຖາ ກະຖາທີ່ວ່າ

ດ້ວຍການນີສະຕິຢູ່ສເມີວ່າເຮົາຕ້ອງຕາຍເປັນແນ່ ຈາກສຳນັກຂອງພຣະພຸທສະ ອົງຄ໌ແລ້ວ ນາງໄດ້ຈເຣີນຢູ່ ໓ ປີ. ພຣະອົງຄ໌ ໄດ້ທອດພຣະເນຕຣ໌ເຫັນ ອຸປນິສັຍ ໂສດາປັຕຕິຜົລຂອງນາງ ຈຶ່ງໄດ້ສເດັຈໄປເມືອງນັ້ນ ພ້ອມດ້ວຍ ກິກຂຸສົງຄ໌ ປະມານ ໕໐໐ ອົງຄ໌. ຊາວເມືອງໄດ້ພ້ອມກັນຈັດການຕ້ອນຮັບ ສເດັຈ ປະຊຸມກັນຟັງພຣະທັມມເທສນາ. ລຳດັບນັ້ນ, ພຣະບໍຣົມສາສດາ ຈຶ່ງ ທຣົງຖາມບັນຫາ ໃຫ້ທິດາຂອງນາຍຊ່າງຫູກຕອບ ດັ່ງນີ້:

໑. ນາງ ກຸມາຣິກາ ເຈົ້າມາແຕ່ໃສ ?

ຂ້າພຣະອົງຄ໌ ບໍ່ຮູ້.

໒. ນາງກຸມາຣິກາ ເຈົ້າຈັກໄປທີ່ໃດ ?

ຂ້າພຣະອົງຄ໌ ບໍ່ຮູ້.

໓. ນາງມາຣິກາ ເຈົ້າບໍ່ຮູ້ແທ້ບໍ ?

ຂ້າພຣະອົງຄ໌ ຮູ້

໔. ນາງມາຣິກາ ເຈົ້າຮູ້ແທ້ບໍ ?

ຂ້າພຣະອົງຄ໌ ບໍ່ຮູ້.

ດັ່ງນັ້ນ, ມຫາຊົນທີ່ບໍ່ຮູ້ເນື້ອຄວາມນັ້ນ ຈຶ່ງພາກັນຕິຕຽນວ່າ ນາງກຸ-ມາຣິການີ້ ທູລພຣະສັມມາສັມພຸທສເຈົ້າ ຫລິ້ນຕາມອຳເພີໃຈ. ພຣະສາສດາ ຈຶ່ງຮັບສັ່ງໃຫ້ ນາງກຸມາຣິກາ ອະທິບາຍຄວາມ ເພື່ອແກ້ຂໍ້ສົງສັຍຂອງມຫາ-

ມຫາຊົນນັ້ນ ເປັນລຳດັບໄປ ດັ່ງນີ້ :

໑. ບໍ່ຮູ້ວ່າ ເຮົາມາຈາກໃສ ຈຶ່ງມາເກີດໃນມນຸສຍ໌ໂລກນີ້.

໒. ບໍ່ຮູ້ວ່າ ເຮົາຈຸຕິຈາກອັຕະພາພນີ້ແລ້ວ ຈັກໄປເກີດໃນກົພໃດ,

໓. ຮູ້ຈັກຄວາມຈິງວ່າ ເຮົາຈັກຕ້ອງຕາຍເປັນແນ່.

໔. ບໍ່ຮູ້ວ່າ ເຮົາຈັກຕາຍເມື່ອໃດ ເວລາໃດ.

ໃນທີ່ສຸດ ບັຌຫາຂໍ້ນຶ່ງ ໆ ພຣະສາສດາເຈົ້າ ທຣົງປະທານສາລຸການ ແລ້ວຕຣັສພຣະຄາຖາ ດັ່ງທີ່ຍົກຂຶ້ນມາໃນຂ້າງຕົ້ນນີ້. (ສ່ວນນາງ ເປສກລິດາ ນັ້ນ ໄດ້ສຳເຣັຈ ໂສດາປັຕຕິຜົລ)

---

## ໗

ຫັງສາທິຈຈະປະເຖ ຍັນຕິ

ອາກາເສ ຍັນຕິ ອິທລິຍາ

ນີຍັນຕິ ລີຣາ ໂລກັມຫາ

ເຊຕວາ ມາຣັງ ສະວາຫະນັງ ໑໗໕໑

ພຣະຍາຫົງສ໌ ເຫີນຟ້າໄປຫາ ພຣະອາທິຕຍ໌ ຜູ້ມີຣິທລິ ເຫາະເຫີນເດີນອາກາສ. ນັກປຣາຊຌ໌ ອອກໄປຈາກໂລກ ເພາະເອົາຊນະພຣະຍາມາຣ ພ້ອມທັງກອງທັພ.

# ເຣື່ອງ ຕິງສະກິກຂຸ

ພຣະບໍຣົມສາດາ ທຣົງຜາຣົພ ກິກຂຸ ປະມາຓ ໓໐ ອົງຄ໌ ມີປົກຕິຢູ່ ໃນທິສ ພາກັນເຂົ້າໄປເຝົ້າພຣະອົງຄ໌. ພຣະອານົນທ໌ເຖຣະ ໄດ້ເຫັນກິກຂຸ ເຫລົ່ານັ້ນ ໃນເວລາທີ່ກະທຳວັຕຣ໌ປະຜິບັຕິ ແດ່ ພຣະສາສດາ ຈຶ່ງຍຸດຢູ່ຊຸ້ມ ປະຕູດ້ອຍຄິດວ່າ ເມື່ອພຣະສາສດາ ທຣົງກະທຳປຜິສັນຖານກັບກິກຂຸ ເຫລົ່າ ນັ້ນຢູ່ ເຣົາຈັກທຳວັຕຣ໌ປຜິບັຕິຢ່າງໃດໄດ້. ເມື່ອການປະຜິສັນຖານເສັຈສິ້ນ ແລ້ວ ຈຶ່ງເຂົ້າໄປກະທຳເຖີດ.

ຄັນເມື່ອ ພຣະສາສດາ ໄດ້ທຣົງກະທຳປຜິສັນຖານແກ່ ກິກຂຸ ເຫລົ່າ ນັ້ນ ຈຶ່ງຕຣັສສັມມິກຖາ ສາຣານິຍສັມມ໌. ກິກຂຸ ເຫລົ່ານັ້ນ ກໍໄດ້ບັຣລຸພຣະ ອຣຫັຕ ທັງໝົດ ແລ້ວເຫາະໄປໃນອາກາສ. ຝ່າຍພຣະອານົນທ໌ຢືນຄອຍຖ້າ ຢູ່ທີ່ຊຸ້ມປະຕູ ເຫັນວ່າດົນນານຫລາຍແລ້ວ ຈຶ່ງໄດ້ທູລຖາມ ພຣະສາສດາວ່າ ກິກຂຸ ປະມາຓ ໓໐ ອົງຄ໌ ມາໃນທີ່ນີ້ແລ້ວ ຫາຍໄປໃສ ພຣະເຈົ້າຂ້າ. ພຣະພຸທສອົງຄ໌ ທຣົງຕຣັສຕອບວ່າ ໄປແລ້ວ ອານົນທ໌. ໄປແລ້ວທາງໃດ ພຣະເຈົ້າຂ້າ. ໄປທາງອາກາສ ອານົນທ໌. ກິກຂຸ ເຫລົ່ານັ້ນ ເປັນຂີຕາສົພ ແລ້ວຫຣືຢ່າງໃດ ພຣະເຈົ້າຂ້າ. ເອີ! ອານົນທ໌ ທ່ານເຫລົ່ານັ້ນ ໄດ້ຟັງສັມມ໌ ໃນສຳນັກຂອງເຣົາແລ້ວ ເຖິງພຣະອຣຫັຕ. ໃນຂຓະນັ້ນ ຝູງຫົງສ໌ ໄດ້ບິນ ມາທາງອາກາສ ພຣະສາສດາ ຈຶ່ງຕຣັສແກ່ ພຣະອານົນທ໌ວ່າ ດູຣາ ອານົນທ໌

ອິທລິບາທ ໔ ອັນຜູ້ໃດ ຈເຣີນດີແລ້ວ ປະຜິບັຕິຕາມດີແລ້ວ ຜູ້ນັ້ນ ທຽນຍ່ອມໄປໄດ້ທາງອາກາສ ເໝືອນຫົງສ໌ ທັງຫລາຍນັ້ນແລ. ບັດນັ້ນ, ພຣະຍອດແກ້ວ ສັພພັຌຌູ ຈຶ່ງໄດ້ຕຣັສຊຶ່ງພຣະຄາຖາດັ່ງທີ່ກ່າວມານັ້ນ.

---

## ໑໐

ເອກະລັມມະມະຕີຕັສສະ
 ມຸສາວາທິສສະ ຊັນຕຸໂນ
ວິຕິຓຓະປະຣະໂລກັສສະ
ນັຕຖິປາປັງ ອະກາຣິຍັງ ໑໗໖໑

ຄົນທີ່ລ່ວງລະເມີດສີລ ຂໍທີ່ສີ່ ມັກເວົ້າຄວາມທີ່ບໍ່ມີຄວາມຈິງ, ບໍ່ຄຳນຶງເຖິງ ປະຣະໂລກ (ໂລກໜ້າ) ຜູ້ນັ້ນ ຈະບໍ່ທຳຄວາມຊົ່ວ ຍ່ອມບໍ່ມີ.

## ເຣື່ອງ ນາງຈິຌຈະມາຓະວິກາ

ພຣະບໍຣົມສາສດາ ທຣົງຜາຣົພ ນາງຈິຌຈະມາຓະວິກາ ຮັບອາສາ ພວກອັຌຌະຕິຕຖີຍ໌ ຜູ້ມີຄວາມອິສສາ ໃນພຣະພຸທລອົງຄ໌ ໄປທຳເປັນຜູ້ຍິງຖືພາມານ (ມີຄັຣກ໌) ອາຜ້າພັນທ້ອງໃຫ້ປຸ້ງ ແລ້ວຫົ່ມຜ້າຄຸມປົກປິດໄວ້ ເອົາ

ໄມ້ມາຕີມີ ຕີເທົ້າໃຫ້ບວມ ເພື່ອເຮັດໃຫ້ເປັນຄືວ່າ ມີຄັຣກ໌ແກ່ ເຂົ້າໄປ ໃຈທ ພຣະຜູ້ມີພຣະກາຄເຈົ້າ ທີ່ພວມສແດງພຣະທັມມເທສນາ ຢູ່ໃນທ່າມກາງ ພຸທລບໍຣິຫັທວ່າ ມຫາສມຕະ ທ່ານຮູ້ແຕ່ພຽງ ອກີຣິມຕ໌ສຳຣາລ ບໍ່ຮູ້ຈັກການຮັກສາຄັຣກ໌. ພຣະຜູ້ມີພຣະກາຄເຈົ້າ ຈຶ່ງຕຣັສວ່າ ດູຣາ ນ້ອງຍິງ ມີແຕ່ເຮົາກັບເຈົ້າ ສອງຄົນເທົ່ານັ້ນ ທີ່ຮູ້ຄວາມຈິງ ແລະ ຄວາມບໍ່ຈິງໃນເຣື່ອງນີ້. ນາງຈິญຈະມາຕະວິກາ ຈຶ່ງກ່າວຂຶ້ນວ່າ ກໍຢ່າງນັ້ນແລ ມຫາສມຕະ.

ໃນຂຕະນັ້ນ ກໍຮ້ອນໄປເຖິງ ສົມເດັຈ ອມຣິນທຣາລິຣາຊ. ພຣະອົງຄ໌ທຣົງພິຈາຣຕາເບິ່ງ ກໍທຣົງຊາບໂດຍປະຈັກສ໌ ຄັກແນ່ແລ້ວ ຈຶ່ງທຣົງສເດັຈມານິຣມິຕກາຍເປັນລູກໜູ ກັດເຊືອກທີ່ຮັດມີດທີລທ້ອງຂາດລົງແລ້ວໃຫ້ລົມພັດຜ້າສາມົກທີ່ຄຸມທ້ອງນັ້ນໃຫ້ປິວອອກໄປ.

ເມື່ອມຫາຊົນ ເຫັນດັ່ງນັ້ນ ກໍພາກັນໂກທແຄ້ນ ເຂົ້າທຸບຕີແກ່ລາກເອົານາງອອກໄປຈາກມຫາວິຫາຣ. ເມື່ອນາງຈິญຈະມາຕະວິກາ ຫລີກພົ້ນຄອງພຣະເນຕຣ໌ພຣະຕຖາຄົຕເຈົ້າໄປ ແຜ່ນດິນກໍສູບໄປເກີດໃນອເວຈີນຣົກ ພຣະກິກຂຸ ທັງຫລາຍ ປະຊຸມສົນທນາກັນ ກ່ຽວກັບນາງຈິญຈະມາຕະວິກາ ພຣະສາສດາ ໄດ້ສເດັຈມາໃນທີ່ປະຊຸມ ທຣົງສແດງພຣະທັມມິກຖາ ປະທຸມ-ຊາດົກ ແລ້ວຈຶ່ງຕຣັສພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາໃນຂ້າງເທິງນີ້.

---

## ໑໑

ນະ ເວ ກະທະຣິຍາ ເທວະໂລກັງ ວະຊັນຕິ
ພາລາ ຫະເວ ນັປປະສັງສັນຕິ ທານັງ
ທີໂຣ ຈະ ທານັງ ອະນຸໂມທະມາໂນ
ເຕເນວະ ໂສ ໂຫຕິ ສຸຂີ ປະຣັຕຖະ ໆ໑໗ໆ

ຄົນຂີ້ຖີ່ ບໍ່ມີທາງທີ່ຈະໄປເທວໂລກໄດ້ ຢ່າງແນ່ນອນ, ຄົນໂງ່ ຍ່ອມບໍ່ສັຣະ-ເສີນການໃຫ້ທານ ເລີຍ, ແຕ່ວ່າ ຄົນສລາດນັ້ນ ມີຄວາມຍິນດີໃນການໃຫ້ທານ ຍ້ອນເຫຕຸ ອັນນັ້ນແລ ທີ່ບັນດານໃຫ້ ເຂົາເຈົ້າໄດ້ຮັບຄວາມສຸຂໃນໂລກໜ້າ.

## ເຣື່ອງ ອສະທິສທານ

ພຣະບໍຣົມສາສດາ ທຣົງຜາຣົພ ອສະທິສະທານ ຂອງ ພຣະເຈົ້າປະເສນທິ-ໂກສົລ. ໃນກາລເບື້ອງຕົ້ນນັ້ນ, ພຣະເຈົ້າ ປະເສນທິໂກສົລ ກັບ ຊາວເມືອງໄດ້ທຳການແຂ່ງຂັນກັນໃນການທຳທານ ຄື ຕ່າງຝ່າຍ ຕ່າງກໍທວີການທານຂຶ້ນໄປເລື້ອຍ ໆ ພຣະເຈົ້າ ປະເສນທິໂກສົລ ກະທຳແບບນັ້ນ ຈົນເຫລືອວິສັຍທີ່ຊາວເມືອງຈະກະທຳໄດ້ ຄື ທຣົງບໍຣິຈາຄທຣັພຍ໌ໃນວັນນຶ່ງ ເຖິງ ໑໔ ໂກຍິ ແລະ ສິ່ງຂອງຕ່າງ ໆ ຈົນກຳນົດຣາຄາບໍ່ໄດ້.

ຄັ້ງນັ້ນ ມີອຳມາຕຍ໌ ໔ ທ່ານ ຄື ກາຣະອຳມາຕຍ໌ ໑, ຊຸຕທະອຳມາຕຍ໌ ໑. ກາຣະອຳມາຕຍ໌ ບໍ່ມີຄວາມເຫລື້ອມໃສໃນພຣະຣາຊກຸສົລອັນນັ້ນ, ສ່ວນຊຸຕທະອຳມາຕ ນັ້ນ ມີຄວາມເຫລື້ອມໃສໃນພຣະຣາຊກຸສົລ ອສະທິສະທານ. ພຣະສາສດາ ທຣົງຊາບ-ວາຣະຈິຕຂອງ ມຫາອຳມາຍ໌ ທັງສອງນັ້ນ ຈິ່ງທຣົງພຣະດຳຣິວ່າ ຖ້າເຮົາຈະກະທຳ ອະນຸໂມທະນາໃຫ້ສົມຄວນແກ່ພຣະຣາຊາ ແຕ່ສີສະຂອງກາຣະອຳມາຕຍ໌ ກໍຈະແຕກອອກເປັນ ໆ ສ່ຽງ, ສ່ວນຊຸຕທະອຳມາຕຍ໌ນັ້ນ ຈັກດຳຣົງຢູ່ໃນໂສດາປັຕຕິຜົລ. ທຣົງອາສັຍພຣະກຣຸຕາໃນກາຣະມຫາອຳມາຕຍ໌ ຈິ່ງຕຣັສພຣະຄາຖາ ໔ ບາທອະນຸໂມທະນາ ແລ້ວສເດັຈກັບ ພຣະວິຫາຣ.

ພຣະເຈົ້າ ປະເສນທິໂກສົລ ທຣົງເສັຍພຣະທັຍ ຈິ່ງສເດັຈຕາມໄປເຝົ້າ ທູລຖາມເຫຕຸ ແດ່ ພຣະສາສດາ ພຣະອົງຄ໌ຈິ່ງສແດງເຫຕຸດັ່ງກ່າວມານັ້ນໃຫ້ທຣົງຊາບ. ພຣະມຫາຣາຊາ ຈິ່ງທຣົງລົງໂທສ ກາຣະອຳມາຕຍ໌ ໃຫ້ອອກໜີຈາກແວ່ນແຄວ້ນແລະພຣະຣາຊທານສົມບັຕິໃຫ້ ຊຸຕທະອຳມາຕຍ໌ ສເວີຍ ໆ ວັນ ແລ້ວທູລຄວາມນັ້ນ ແດ່ພຣະສາດາ. ພຣະອົງຄ໌ ຈິ່ງໄດ້ຕຣັສ ພຣະຄາຖາ ດັ່ງທີ່ຍົກຂຶ້ນມາຂ້າງເທິງນີ້.

---

## ໑໔

ປະກັພຍາ ເອກະຣັຊເຊນະ
　　ສັຄຄັສສະ ຄະມະເນນະ ວາ
ສັພພະໂລກາລິປປັຈເຈນະ
　　ໂສຕາປັຕຕິຜະລັງ ວະຣັງ ฯ໑໗ฯ

ການຂຶ້ນສວັນຄ໌ ຄືການສເວີຍສຸຂໃນສວັນຄ໌, ຄວາມເປັນເອກຣາຊ ທີ່ຍິ່ງໃຫຍ່ໃນທົ່ວທັງແຜ່ນດິນ, ຄວາມມີອລິປະຕັຍ ໃນໂລກທັງປວງນັ້ນຖ້າ ທຽບກັບໂສດາປັຕຕິຜົລແລ້ວ ໆ ນັ້ນ ຍິ່ງໃຫຍ່ກວ່າສິ່ງທັງໝົດ ດັ່ງທີ່ກ່າວ ມາແລ້ວນີ້.

# ເຣື່ອງ ອນາຖະບິຕຫິກປຸຕຕກະຖາ

ໃນກາລະຄັ້ງນຶ່ງ ພຣະບໍຣົມສາສດາ ທຣົງປາຣົພ ບຸຕຣ໌ຂອງອນາ-ຖບິຕຫິກເສຕຖີ ມີນາມວ່າກາລະ ບໍ່ເດີນຕາມຮອຍ ຂອງເສຜຖີຜູ້ເປັນບິດາ ບຸຕຣ໌ຜູ້ນີ້ເປັນມິຈສາທິຜຖິ. ເສຜຖີນີ ຜູ້ເປັນມາຣດາ ມີຄວາມເປັນຫວ່ງທີ່ ຈະໃຫ້ນາຍ ກາລະ ມີສັທລາໃນພຣະພຸທລສານາ ຈຶ່ງອອຍໃຈດ້ວຍທຣັພຍ໌ ວ່າ, ດູຣາ ລູກເອີຍ ຖ້າເຈົ້າໄປຣັກສາອຸໂບສົຖສີລ ຟັງລັມມ໌ໃນພຣະວິຫາຣ ແລ້ວ ບິດາຈະໃຫ້ເຈົ້າ ໑໐໐ ກະຫາປຕະ. ນາຍກາລະ ຢາກໄດ້ທຣັພຍ໌ຈຶ່ງ ຮັບປາກກັບເສຕຖີຜູ້ເປັນບິດາ. ຄັນເຖິງເວລາກໍໄປ ແຕ່ບໍ່ໄດ້ຟັງລັມມ໌ ໄປລີ້ ນອນຢູ່ ພໍ່ຕື່ນເຊົ້າ ກໍກັບມາ. ເສຕຖີຍິນດີໃຫ້ທຣັພຍ໌ຕາມສັນຍາ.

ໃນວັນຮຸ່ງຂຶ້ນມື້ໃໝ່ ທ່ານເສຕຖີກ່າວກັບບຸຕຣ໌ອີກວ່າ ຖ້າເຈົ້າໄປຟັງ ລັມມ໌ຈົດຈຳມາໄດ້ບົທນຶ່ງ ບິດາຈະໃຫ້ເຈົ້າ ພັນ ກະຫາປຕະ ນາຍກາລະກໍ ຮັບປາກກັບບິດາອີກ. ຄັນເຖິງເວລາກໍໄປສູ່ວິຫາຣ ໂດຍຄິດວ່າ ຄັນເຮົາຈົດ ຈຳ ລັມມະ ໄດ້ບົທນຶ່ງແລ້ວກໍຈະກັບໄປ. ພຣະສາສດາ ຈຶ່ງທຣົງກະທຳບໍ່ໃຫ້

ນາຍກາລະ ກໍາໜົດຈົດຈໍາໄດ້. ບັດນັ້ນ ນາຍກາລະຈຶ່ງຕັ້ງໃຈຟັງໂດຍເຄົາຣົພ ໄດ້ດໍາຣົງຢູ່ໃນໂສດາປັຕຕິຜົລໃນຄືນວັນນັ້ນ. ໃນວັນຮຸ່ງຂຶ້ນ ຈຶ່ງກັບໄປບ້ານ ພ້ອມດ້ວຍກິກຂຸສົງຆ໌ ອັນມີພຣະພຸທຸລເຈົ້າ ເປັນປະລານ. ເສຜກີຈຶ່ງຈັດ ການລ້ຽງດູ ພຣະກິກຂຸສົງຆ໌. ເມື່ອສໍາເຣັຈຕກັຕຕກິຈແລ້ວ ກໍ່ຍົກທຣັພຍ໌ ພັນ ກະຫາປຕະ ມາຖວາຍແກ່ບຸຕຣ໌ຕາມສັญญາ ຕໍ່ໜ້າທີ່ນັ່ງ ນາຍກາລະມີ ຄວາມລະອາຍບໍ່ຮັບ. ເສຜກີ ຈຶ່ງທູລເຣື່ອງນັ້ນ ຕັ້ງແຕ່ຕົ້ນມາ ຖວາຍພຣະ ສາສດາ. ພຣະອົງຄ໌ ຈຶ່ງໄດ້ຕຣັສພຣະຄາຖາ ດັ່ງທີ່ຍົກຂຶ້ນມາໃນເບື້ອງຕົ້ນ ນັ້ນໃຫ້ຟັງ.

---

## ຈົບ ໂລກວັຄຄ໌ ທີ່ ໑໓

# ພຸທລວັຄຄ໌ ທີ່ ໑໔

## ໝວດ ວ່າດ້ວຍພຣະພຸທລເຈົ້າ

### ໑

ຍັສສະ ຊິຕັງ ນາວະຊີຍະຕິ
ຊິຕະມັສສະ ໂນ ຍາຕິ ໂກຈິ ໂລເກ
ຕັງ ພຸທລະມະນັນຕະໂຄຈະຣັງ
ອະປະທັງ ເກນະ ປະເທນະ ເນສສະຖະ ໆ໑໕ໆໆ

ພຣະພຸທລເຈົ້າ ພຣະອົງຄ໌ໃດ ທຣົງຊນະກິເລສໄດ້ເດັດຂາດ. ກິເລສທີ່ພຣະອົງຄ໌ ທຣົງຊນະແລ້ວນັ້ນ ບໍ່ຕິດຕາມພຣະອົງຄ໌ໄປອີກ. ພຣະພຸທລເຈົ້າ ພຣະອົງຄ໌ນັ້ນ ທຣົງມີ ພຣະສັພພັລລຸຕລາຓ ອັນຫາທີ່ສຸດບໍ່ໄດ້. ພຣະອົງຄ໌ບໍ່ສເດັຈໄປຕາມທາງຂອງກິເລສນັ້ນແລ້ວ, ພວກທ່ານຈະນຳພຣະອົງຄ໌ໄປຕາມທາງເສັ້ນໃດອີກ.

### ໔

ຍັສສະ ຊາລິນີ ວິສັຕຕິກາ
ຕັຓຫາ ນັຕຖິ ກຸຫິລຈະ ເນຕະເວ
ຕັງ ພຸທລະມະນັນຕະໂຄຈະຣັງ

ອະປະທັງ ເກນະ ປະເຫນະ ເນສສະຖະ ໆ໑໘໐ໆ

ພຣະພຸທສເຈົ້າ ພຣະອົງຄ໌ໃດ ບໍ່ມີຕັຕຫາ ເໝືອນຕານ່າງ ອັນມີພິສ ອັນຮ້າຍຂາດ. ພຣະພຸທສເຈົ້າ ພຣະອົງຄ໌ນັ້ນ ທຣົງມີພຣະສັພພັຍຍຸຕະຍາຕ ອັນທາທີ່ສຸດບໍ່ໄດ້ແລ້ວ, ບໍ່ໄປຕາມທາງຂອງກິເລສອີກແລ້ວ. ພວກເຈົ້າ ຈະນຳພາພຣະອົງຄ໌ໄປຕາມທາງເສັ້ນໃດອີກໜໍ່ ?

# ເຣື່ອງ ມາຣທິດາ

ພຣະຜູ້ມີພຣະກາຄເຈົ້າ ທຣົງຜາຣົພ ນາງຕັຕຫາ, ນາງອໍຣະດີ ແລະນາງຣາຄາຜູ້ເປັນທິດາຂອງ ພຣະຍາ ວສະວະດີມາຣ ໆ ນັ້ນ ຄອຍຈອບມອງມາຣົບກວນພຣະອົງຄ໌ ຕັ້ງແຕ່ຄາວທີ່ ພະອົງຄ໌ ຍັງເປັນ ມຫາສັຕວ໌ເຈົ້າທີ່ຍັງຢູ່ໃນຣາຊສົມບັຕິ. ໃນຄາວທີ່ພຣະອົງຄ໌ທຣົງມ້າກັຕກຸກະ ອັນມີນາຍຈັນນະເປັນສຫາຍ ສເດັຈອອກ ມຫາກິເນສກຣົມ (ອອກທຣົງຜນວຊ) ຄັ້ງນັ້ນພຣະຍາມາຣມາຢືນຂວາງທາງຢູ່ທີ່ ປະຕູທວາຣພຣະນຄຣ ກ່າວຫ້າມວ່າ ດູຣາສິທສັຕຖະກຸມາຣ ຈົ່ງກັບຄືນສູ່ພຣະນຄຣເຖີດ ຍັງອີກ ໗ ວັນ ຈັກຣ໌ແກ້ວຈະເກີດຂຶ້ນແກ່ທ່ານ. ທ່ານຈະໄດ້ເປັນ ພຣະບໍຣົມຈັກຣພັດິ. ພຣະອົງຄ໌ ຈຶ່ງຕຣັສຕອບວ່າ ເຮົາກໍຮູ້ຢູ່ເໝືອນກັນ ແຕ່ ເຮົາບໍ່ປາຖນາ ຈັກຣພັດິຣາຊ.

ນັບຕັ້ງແຕ່ບັດນັ້ນ ເປັນຕົ້ນມາ ພຣະຍາມາຣ ກໍຄອຍສເວງຫາຊ່ອງທາງທີ່ຈະທຳຮ້າຍ ຕິດຕາມ ມຫາສັຕວ໌ເຈົ້າ ຢູ່ເຖິງ ໗ ປີ. ສ່ວນມຫາສັຕວ໌ເຈົ້າ ຄັນສເດັຈອອກບັຣພຊາແລ້ວ ກໍທຣົງປະຖິ້ມຊຶ່ງແນວທາງປະຜິບັຕິແບບທໍຣະມານຕົນເອງ (ທຸກຣກິຣິຍາ) ຫັນມາບຳເພັນພຽຣໂດຍຊອບ ກໍໄດ້ສຳເຣັຈ ພຣະປຣະມາກິເບກສົມໂພລິຍາຕ ຕະ ໂພລິມົຕທົລ ສເດັຈປະທັບສເວີຍວິມຸຕຕິສຸຂຢູ່ ຕະ ທີ່ນັ້ນ ເປັນເວລາ ໗ ວັນ, ແລ້ວສເດັຈໄປປະທັບພາຍໃຕ້ ໄມ້ອະຊະປາລະນິໂຄຣລ, ໄມ້ມຸຈຈລິນທ໌ ໄມ້ ຣາຊາຍຕນະ ສຖານທີ່ລະ ໗ ວັນຕາມລຳດັບ ແລ້ວກໍສເດັຈກັບມາປະທັບພາຍໃຕ້ໄມ້ ອຊະປາລະນິໂຄຣລນັ້ນອີກ.

ໃນກາລະບັດນັ້ນ ໆ ເອງ ພຣະຍາມາຣ ມາດຳຣິອີກວ່າ ບັດນີ້ ສິທ-ລັຕຖຣາຊກຸມາຣ ພົ້ນຈາກວິສັຍຂອງເຮົາໄປເສັຽແລ້ວ ກໍມີຄວາມໂສກເສົ້າເປັນທຸກຂ໌ ເປັນຮ້ອນ. ຝ່າຍລິດາທັງສາມ ຂອງພຣະຍາມາຣ ເຫັນບິດາເປັນທຸກຂ໌ ເປັນຮ້ອນເຊັ່ນນັ້ນ ກໍໄດ້ອາສາ ທີ່ຈະເຮັດໃຫ້ພຣະສັມມາສັມພຸທລະເຈົ້າ ຕົກມາຢູ່ພາຍໃຕ້ວິສັຍຂອງຕົນອີກ. ບັດນັ້ນ ຕ່າງຄົນຕ່າງກໍນິຣະມິຕກາຍເປັນຜູ້ຕັ້ງຢູ່ໃນປະຖົມວັຍ (ສາວນ້ອຍ) ມັຊຊິມະວັຍ (ສາວຣາມ) (ປຈລິວັຍ) ສາວແກ່ ມີວັຕຕະອັນງາມຍິ່ງນັກໜາເຂົ້າໄປທູລອິ່ນອອ້ຍວ່າ ຂ້າແດ່ ພຣະສມະຕະເຈົ້າພວກນ້ອງທັງສາມ ຂໍມອບກາຍຖວາຍຕົວເປັນຂ້າພຣະບາທ. ຕະ ບັດນັ້ນ ພຣະສາສດາຈຶ່ງທຣົງຂັບໄລ່ໄສສົ່ງ ລິດາຂອງພຣະຍາມາຣທັງ ໓ ນັ້ນໃຫ້ໜີໄປ ແລ້ວຈຶ່ງຕຣັສຊຶ່ງ

ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາໃນຂ້າງເທິງແລ້ວນີ້ນັ້ນ ຫັ້ນແລ.

---

໓

ເຍ ຊານັປປະສຸຕາ ລີຣາ
ເນກຂັມມູປະສະເມ ຣະຕາ
ເທວາປິ ເຕສັງ ປິຫະຍັນຕິ
ສັມພຸທລານັງ ສະຕີມະຕັງ ໑໑໖໑໑

ເຫລົ່າ ເທວະດາ ທງຽນຍ່ອມ ຣັກລີຣະຊົນ ຜູ້ທີ່ຂົນຂວາຍໃນກັມມະ
ຖານ, ຍິນດີ ໃນນິພພານ ອັນເປັນສຖານທີ່ສງົບ, ມີສະຕິ ແລະ ຮູ້ແຈ້ງຊຶ່ງ
ສັຈຈະລັມມ໌.

## ເຣື່ອງ ຍມກະປາຜິຫາຣິຍ໌

ພຣະບໍຣົມສາສດາ ທຣົງຜາຣົພ ເທວດາ ແລະ ມນຸສຍ໌ທັງຫລາຍ
ເປັນອັນມາກກ ໃນກາລເມື່ອ ພຣະອົງຄ໌ທຣົງສແດງຊຶ່ງ ຍມກະປາຜິຫາຣິຍ໌
ທີ່ ນຄຣສາວັຕຖີ ແລ້ວສເດັຈໄປຈຳພັຣຫາ ທີ່ດາສຕິງສາກົພົພ ສແດງພຣະ
ອກິລັມມ໌ ໂຜດພຸທລມາຣດາ ໃຫ້ດຳຣົງຢູ່ໃນໂສດາປັຕຕິຜົລ. ຄັນວ່າອອກ
ພັຣຫາແລ້ວ ພຣະຍອດແກ້ວສັພພັຄຍູ ຈຶ່ງໄດ້ເສເດັຈຈາກດາວດິງສເທວະ
ໂລກ ລົງມາສູ່ ມນຸສໂລກ ທີ່ເມືອງ ສັງກັສສະນຄຣ. ໃນເວລານັ້ນ, ເທພ-

ຍດາ, ມນຸສຍ໌ນິກຣເບື້ອງບົນ ນັບແຕ່ ພຣຫັມໂລກ ລົງມາ ເບື້ອງຕ່ຳ ນັບ
ແຕ່ອເວຈີຂຶ້ນມາ ເບື້ອງຂວາງຕລອດແສນຈັກວາຣ ໄດ້ແລເຫັນກັນທັງໝົດ
ເປັນທີ່ຍິນດີຂອງ ສັພສັຕວ໌ ທັງຫລາຍ.

ລຳດັບນັ້ນ, ພຣະສາຣີບຸຕຣ໌ເຖຣະ ຈຶ່ງຂາບທູລ ພຣະສາສດາ ວ່າ ຂ້າ
ແດ່ ພຣະອົງຄ໌ຜູ້ຈເຣີຍ ວັນນີ້ ເທວດາ ແລະ ມນຸສຍ໌ ທັງຫລາຍ ພາກັນ
ຍິນດີປາຖນາຕໍ່ ພຣະອົງຄ໌. ພຣະ ດາສາດາ ຈຶ່ງຕຣັສວ່າ ດູຣາ ສາຣີບຸຕຣ໌
ລັມມດາ ພຣະພຸທລເຈົ້າ ທັງຫລາຍ ຜູ້ພ້ອມດ້ວຍຄຸຓ ເຫັນປານນີ້ ທຽມ
ຍ່ອມ ເປັນທີ່ຍິນດີ ເປັນທີ່ຮັກໄຄ່ ຂອງ ເທວດາ ແລະ ມນຸສຍ໌ທັງປວງ.
ບັດນັ້ນ, ພຣະພຸທລອົງຄ໌ ຈຶ່ງຕຣັສພຣະຄາຖາດັ່ງທີ່ໄດ້ຍົກຂຶ້ນໃນຂ້າງເທິງນີ້

---

## ໔

ກິຈໂຉ ມະນຸສສະປະຝິລາໂກ
ກິຈຉັງ ມັຈຈານະ ຊີວິຕັງ
ກິຈຉັງ ສັທລັມມັສສະວະນັງ
ກິຈໂຉ ພຸທລານະມຸປປາໂທ ໑໘໒

ການທີ່ໄດ້ເກີດມາເປັນ ມນຸສຍ໌ ເປັນການທີ່ຫາໄດ້ຍາກ, ການມີຊີ

ວິຕ (ການດຳຣົງຊີວິຕ) ຂອງມນຸສຍ໌ນັ້ນ ຍາກລຳບາກ, ການທີ່ຈະໄດ້ຟັງຊຶ່ງ ທັມມ໌ຂອງສັປບຸຣຸສ ກໍເປັນການຫາໄດ້ຍາກ.

## ເຣື່ອງ ເອຣກະປັຕຕະນາຄຣາຊ

ພຣະບໍຣົມສາສດາ ທຣົງຜາຣົພ ພຍານາຄເອຣກະປັຕ. ໃນຄັ້ງພຸທ-ທະສາສນາ ພຣະກັສສປະພຸທທເຈົ້າພຸ້ນ. ພຍານາຄຕົນນີ້ ເປັນກິກຂຸ. ເວລາຈວນຈະທ່າກາລະກິຣິຍາ ເພິ່ນເກີດມີຄວາມຮ້ອນໃຈວ່າ ສີລຂອງຕົນບໍ່ບໍຣິສຸທທິ ເພາະເຮັດໃຫ້ໃບໄຄ້ນ້ຳຂາດ. ຄັນຈຸຕິຈາກອັຕພາພນັ້ນແລ້ວ ໄດ້ໄປເກີດເປັນ ພຍານາຄ ມີນາມວ່າ ເອຣກະປັຕ ມີປະສົງຄ໌ຢາກຈະຮູ້ການເກີດຂຶ້ນຂອງພຣະພຸທທເຈົ້າ ຈຶ່ງຜູກບົທເພງຂັບຮ້ອງ ໃຫ້ລິດາຂອງຕົນ ນັ່ງຂັບຮ້ອງເພງນັ້ນຢູ່ເໜືອພັງພານຂອງຕົນ ແລ້ວປະກາສວ່າ ຜູ້ໃດຕອບເພງນີ້ໄດ້ຈະຍົກລິດາໃຫ້ຜູ້ນັ້ນ ເອົາໄປເປັນກັຣຍາ. ໃນກາລະຄັ້ງນັ້ນ, ພຣະສາສດາໄດ້ບັງເກີດຂຶ້ນແລ້ວໃນໂລກ ພຣະອົງຄ໌ ຈຶ່ງປະທານເພງຂັບຮ້ອງ ໃຫ້ແກ່ອຸຕຕຣະມານົພ ໄປຂັບຕອບ ລິດາຂອງພຍານາຄ. ເມື່ອອຸຕຣະມານົພ ທ່ອງຈຳບົທເພງນັ້ນໄດ້ແລ້ວ ກໍນຳເອົາໄປຂັບຕອບລິດາ ຂອງພຍານາຄ. ເມື່ອພຍານາຄໄດ້ສດັບກໍຮູ້ຄັກວ່າ ບັດນີ້ ມີພຣະພຸທທເຈົ້າ ໄດ້ບັງເກີດຂຶ້ນແລ້ວໃນໂລກ ກໍມີຄວາມໂສມນັສຍິນດີເປັນຢ່າງຍິ່ງ ຈຶ່ງເຂົ້າໄປຖວາຍ ນມັສການພຣະພຸທທເຈົ້າ ພ້ອມດ້ວຍອຸຕຣະມານົພ. ບັດນັ້ນ ພຍານາຄ ຈຶ່ງລຸກຢືນຂຶ້ນ

ຮ້ອງໄຫ້ ທູລປະວັຕິຂອງຕົນ ແກ່ ພຣະສາສດາ.

ພຣະອົງຄ໌ຈຶ່ງຕຣັສພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາໄວ້ໃນຂ້າງຕົ້ນນີ້.

---

## ໕

ສັພພະປາປັສສະ ອະກະຣະນັງ
ກຸສະລັສສູປະສັມປະທາ
ສະຈິຕຕະປະຣິໂຍທະປະນັງ
ເອຕັງ ພຸທລານະ ສາສະນັງ ॥໑໘໓॥

ການບໍ່ກະທຳຊຶ່ງບາບ ທຸກປະການ, ການກະທຳແຕ່ຄວາມດີ, ການທຳໃຈໃຫ້ຜ່ອງໃສ. ອັນນີ້ແຫລະ ເປັນຄຳສອນຂອງພຣະພຸທລເຈົ້າ ທັງຫລາຍ

## ໖

ຂັນຕີ ປະຣະມັງ ຕະໂປ ຕີຕິກຂາ
ນິພພານັງ ປະຣະມັງ ວະທັນຕີ ພຸທລາ
ນະ ຫິ ປັພພະຊິໂຕ ປະຣູປະຂາຕີ
ສະມະໂຕ ໂຫຕິ ປະຣັງ ວິເຫຖະຍັນໂຕ ॥໑໘໔॥

ຂັນຕີ ຄື ຄວາມອົດທົນ ອົດກັ້ນ ເປັນຕະບະ ຄວາມພຽຣທີ່ຍອດຍິ່ງ ນິພພານນັ້ນ ທ່ານຜູ້ຮູ້ ທັງຫລາຍ ກ່າວວ່າ ເປັນສິ່ງທີ່ຍອດຢ້ຽມ. ຜູ້ທີ່ຍັງທຳຮ້າຍຜູ້ອື່ນຢູ່ນັ້ນ ບໍ່ຈັດວ່າ ເປັນບັຣພຊິຕ ແລະ ຜູ້ທີ່ຍັງບຽດບຽນຜູ້ອື່ນຢູ່ ກໍບໍ່ຈັດໄດ້ວ່າ ເປັນສມຕະ.

ໆ

ອະນູປະວາໂທ ອະນູປະຆາໂຕ

ປາຕິໂມກເຂ ຈະ ສັງວະໂຣ

ມັຕຕັຍຍຸຕາ ຈະ ພັຕຕັສະມິງ

ປັນຕັຍຈະ ສະຍະນາສະນັງ

ອະທິຈິຕເຕ ຈະ ອາໂຍໂຄ

ເອຕັງ ພຸທຍານະ ສາສະນັງ ໑໑໘໕໑

ບໍ່ວ່າຮ້າຍໃຫ້ໃຜ ບໍ່ເວົ້າກະທົບກະແທກໃຫ້ຜູ້ໃດ,ສຳຣວມຣະວັງໃນພຣະປາຕິໂມກຂ໌, ຮູ້ຈັກປະມານ ໃນການບໍຣິໂພຄອາຫານ, ຢູ່ໃນເສນາສນະອັນສງົບສງັດ, ເຝິກຫັດຈິຕໃຈໃຫ້ສງົບ, ອັນນີ້ (ທີ່ກ່າວມານີ້) ຄືຄຳສອນຂອງ ພຣະພຸທຍເຈົ້າ ທັງຫລາຍແລ.

# ເຣື່ອງ ອານັນທະເຖຣະປັຨຫາ

ພຣະບໍຣົມສາສດາ ທຣົງຜາຣົພ ປັຨຫາ ຂອງ ພຣະອານົນທ໌ເຖຣະ ໃນວັນນຶ່ງ ພຣະອານົນທ໌ເຖຣະເຈົ້າ ໄດ້ເຂົ້າເຝົ້າທູລຖາມ ເຣື່ອງ ອຸໂບສົຖ ຂອງ ພຣະພຸທລເຈົ້າ ທັງຫລາຍ. ພຣະສາສດາ ທຣົງສແດງວ່າ ກາຣທຳຊຶ່ງ ອຸໂບສົຖ ຂອງພຣະພຸທລເຈົ້າ ທັງຫລາຍນັ້ນ ຕ່າງກັນ. ສ່ວນໂອວາທຄາຖາ ນັ້ນເໝືອນກັນ ທຸກ ໆ ພຣະອົງຄ໌.

ເມື່ອຈະທຣົງສແດງຊຶ່ງ ໂອວາທຄາຖາ ຈຶ່ງຕຣັສຊຶ່ງພຣະຄາຖາ ດັ່ງ ທີ່ໄດ້ຍົກຂຶ້ນມາ ໃນຂ້າງເທິງນີ້.

---

ຖ

ນະ ກະຫາປະຕະວັສເສນະ
ຕິຕຕິ ກາເມສຸ ວິຊຊະຕິ
ອັປປັສສາທາ ທຸກຂາ ກາມາ
ອິຕິ ວິຨຍາຍະ ປັຕຫິໂຕ ໑໑ຖ໖໑

ລ

ອະປິ ທິພເພສຸ ກາເມສຸ
ຣະຕິງ ໂສ ນາລິຄັຈຉະຕິ

ຕັຓຫັກຂະຍະອະໂຕ ໂທຕິ
ສັມມາສັມພຸທສະສາວະໂກ ୨໑໗໗୨

ເຖິງແມ່ນວ່າ ເງິນຕຣານັ້ນ ຈະໄຫລມາເທມາ ເໝືອນດັ່ງຫ່າຝົນກໍຕາມ, ແຕ່ຄວາມຢາກຄື ຕັຓຫາ ຂອງຄົນນັ້ນ ບໍ່ມີເມື່ອງອີ່ມ. ອັນວິສັຍຂອງກາມນັ້ນ ທີ່ຈິງແລ້ວ ມີຄວາມສຸຂໜ້ອຍ, ເຕັມໄປດ້ວຍຄວາມທຸກຂ໌ສາຣະພັດ. ເມື່ອບັຓຫິຕ ທີ່ເປັນສາວົກຂອງ ພຣະພຸທສເຈົ້າ ຮູ້ຄັກຢ່າງນີ້ແລ້ວ ຍ່ອມບໍ່ມີຄວາມຍິນດີໃນກາມາຣົມຕ໌ ເຖິງແມ່ນວ່າ (ກາມາຣົມຕ໌ນັ້ນ) ຈະເປັນທິພຍ໌ ກໍຕາມ, ແຕ່ມີຄວາມຍິນດີໃນທາງສິ້ນກິເລສຕັຓຫານັ້ນກວ່າ.

## ເຣື່ອງ ອນະກິຣະຕະກິກຂຸ

ພຣະບໍຣົມສາສດາ ທຣົງຜາຣົພ ພຣະກິກຂຸ ອົງຄ໌ນຶ່ງ ບໍ່ມີຄວາມຍິນດີໃນການອອກບວຊ ຄິດຢາກສິກ. ພຣະກິກຂຸ ທັງຫລາຍຈຶ່ງໄດ້ນຳຕົວໄປເຝົ້າ ພຣະສາສດາ ທູລຄວາມນັ້ນ ໃຫ້ພຣະອົງຄ໌ທຣົງຊາບ.

ພຣະອົງຄ໌ ຈຶ່ງຕຣັສຖາມ ກິກຂຸ ອົງຄ໌ນັ້ນວ່າ ປັຈຈັຍ ເຄື່ອງທີ່ຈະລ້ຽງຊີພຂອງທ່ານນັ້ນມີຢູ່ແລ້ວບໍ ? ເພິ່ນທູລຕອບວ່າ ຂ້າພຣະອົງຄ໌ ມີຢູ່ ໑໐໐ ກະຫາປະຕະ ບິດາໄດ້ມອບໃຫ້ ແລະ ສັ່ງນ້ອງຊາຍໄວ້ ກ່ອນທີ່ເພິ່ນຈະທຳກາລະກິຣິຍາ (ຕາຍ). ພຣະອົງຄ໌ ຈຶ່ງໃຫ້ຄຳນວນເບິ່ງການໃຊ້ຈ່າຍທີ່

ຈະຕ້ອງໄດ້ຊື້ ເຄື່ອງໃຊ້ສອຍໃນຈຳນວນ ໑໐໐ ກະຫາປະຕະນັ້ນເຊັ່ນວ່າຊື້ງົວ, ຊື້ພືຊ, ຊື້ເຂົ້າປູກ, ຊື້ແອກ-ໄຖ ແລະ ຈົກສຽມ ທີ່ຈຳເປັນເຫລົ່ານີ້. ຄັນກົກຂຸ ອົງຄ໌ນັ້ນ ຄຳນວນເບິ່ງແລ້ວ ໑໐໐ ກະຫາປະຕະນັ້ນ ບໍ່ພໍ. ພຣະສາສດາ ຈຶ່ງຕຣັສວ່າ ດູຣາ ກົກຂຸ ກະຫາປະຕະ ຂອງທ່ານນັ້ນນ້ອຍຫລາຍ. ທ່ານ ອາສັຍ ກະຫາປະຕະ ເຫລົ່ານີ້ແລ້ວ ຈະເຮັດໃຫ້ຄວາມຕ້ອງການຂອງທ່ານພຽງພໍໄດ້ຢ່າງໃດ. ບັດນັ້ນ ພຣະພຸທລອົງຄ໌ ຈຶ່ງຕຣັສ ມັນທາຕຸຣາຊ-ຊາດົກ ໃຫ້ຟັງ ແລ້ວຈຶ່ງຕຣັສພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາໃນຂ້າງຕົ້ນນີ້.

---

## ໑໐

ພະຫຸງ ເວ ສະຣະຕັງ ຍັນຕິ<br>
ປັພພະຕານິ ວະນານິ ຈະ<br>
ອາຣາມຣຸກຂະ ເຈຕະຍານິ<br>
ມະນຸສສາ ກະຍະຕັຊຊິຕາ ໆ໑໘ໆ

ຄົນເປັນຈຳນວນມາກ ເມື່ອກັຍພິບັຕ ເຂົ້າມາເຖິງຕົວແລ້ວ ພາກັນຍຶດເອົາສິ່ງຕ່າງ ໆ ເປັນທີ່ເພິ່ງອາສັຍເຊັ່ນ ພູຜາ ປ່າໄມ້ ໄຮ່ນາ ເຮືອສວນ ແລະ ເຈດີຍ໌ ເຫລົ່ານີ້.

## ໑໑

ເນຕັງ ໂຂ ສະຣະຕັງ ເຂມັງ
ເນຕັງ ສະຣະຕະມຸຕຕະມັງ
ເນຕັງ ສະຣະຕະນາຄັມມະ
ສັພພະທຸກຂາ ປະມຸຈຈະຕິ ໆ໑໙໒ໆ

(ທີ່ເພິ່ງ ດັ່ງກ່າວນັ້ນ) ບໍ່ແມ່ນທີ່ເພິ່ງ ອັນປອດກັຍ, ບໍ່ແມ່ນທີ່ເພິ່ງ ອັນສູງສຸດ. ຫາກວ່າ ອາສັຍທີ່ເພິ່ງແບບນັ້ນ ກໍຈະບໍ່ພົ້ນຈາກທຸກຂ໌ ທັງປວງ ໄປໄດ້.

## ໑໔

ໂຍ ຈະ ພຸທສັຌຈະ ສັມມັຌຈະ
ສັງພັຌຈະ ສະຣະຕັງ ຄະໂຕ
ຈັຕຕາຣິ ອະຣິຍະສັຈຈານິ
ສັມມັປປັຌຌາຍະ ປັສສະຕິ ໆ໑໙໐ໆ

## ໑໕

ທຸກຂັງ ທຸກຂະສະມຸປປາທັງ
ທຸກຂັສສະ ຈະ ອະຕິກກະມັງ

ອະຣິຍັສຈັຍກັງຄີກະ ມັຄຄັງ
ທຸກຂູປະສະມະຄາມີນັງ ໑໑໙໑໑

ຜູ້ທີ່ນ້ອມເອົາ ພຣະພຸທສ໌ ພຣະທັມມ໌ ແລະ ພຣະສົງຄ໌ດ້ວຍ ວ່າເປັນທີ່ເພິ່ງອາສັຍ ແລະ ເຫັນອະຣິຍະສັຈຈ໌ ດ້ວຍປັສສາອັນຊອບ ຄື ທຸກຂ໌ ເຫຕຸໃຫ້ເກີດທຸກຂ໌, ຄວາມດັບທຸກຂ໌ ແລະ ອະຣິຍະມັຄຄ໌ ມີອົງຄ໌ແປດອັນ ເປັນທາງດັບທຸກຂ໌.

໑໔

ເອຕັງ ໂຂ ສະຣະຕັງ ເຂມັງ
ເອຕັງ ສະຣະຕະມຸຕຕະມັງ
ເອຕັງ ສະຣະຕະມາຄັມມະ
ສັພພະທຸກຂາ ປະມຸຈຈະຕິ ໑໑໙໒໑

ອັນທີ່ກ່າວມານີ້ນັ້ນແລ ຄືທີ່ເພິ່ງອັນປອດກັຍ ຄື ທີ່ເພິ່ງ ອັນສູງສຸດ ຄົນເຮົາ ເມື່ອອາສັຍທີ່ເພິ່ງ ຢ່າງນີ້ ທຽນຍ່ອມພົ້ນຈາກທຸກຂ໌ ທັງປວງໄດ້.

# ເຣື່ອງ ອັຄຄິທັຕຕະປຸໂຣຫິຕ

ພຣະບໍຣົມສາສດາ ທຣົງຜາຣົພ ປຸໂຣຫິຕາຈາຣຍ໌ຜູ້ນຶ່ງ ຊື່ວ່າ ອັຄ-ຄິທັຕຕະ ຂອງພຣະເຈົ້າ ປະເສນທິໂກສົລ. ເພິ່ນເຫັນກັຍໃນພະຣາວາສ ລະສົມບັຕິ ອອກບວຊເປັນຣືສີ ຕັ້ງອາສົມຢູ່ຣະຫວ່າງ ນຄຣ ອັງຄະມຄລະຣາຊ ແລະ ນຄຣກຸຣຸຣາຊ ຕໍ່ກັນ. ມີຜູ້ສັທລາອອກບວຊຕາມ ປະມາຓ ໑ ໝື່ນຄົນ

ໃນກາລະຄັ້ງນັ້ນ, ພຣະສາສດາ ໄດ້ທອດພຣະເນຕຣ໌ເຫັນ ອຸປນິສັຍອຣຫັຕຜົລ ຂອງ ອັຄຄິທັຕຕະດາບົສ ກັບອັນເຕວາສິກ ທັງຫລາຍ ຈຶ່ງຮັບສັ່ງໃຫ້ ພຣະໂມຄັລລານະເຖຣະ ໄປທໍຣະມານໃຫ້ໂອວາສ ແກ່ດາບົສເຫລົ່ານັ້ນ. ພຣະເຖຣະເຈົ້າ ຈຶ່ງເຂົ້າໄປຫາ ອັຄຄິທັຕຕະດາບົສ ຂໍອາສັຍພັກຢູ່ດ້ວຍ ອັຄຄິທັຕຕະດາບົສ ກໍບໍ່ຍົມ ແຕ່ບອກໃຫ້ໄປພັກຢູ່ທີ່ກອງດິນຊາຍ ອັນເປັນທີ່ຢູ່ຂອງພຣະຍານາຄຕົວນຶ່ງ. ພຣະໂມຄຄັລລານະເຖຣະ ໄດ້ເຂົ້າໄປໃນທີ່ນັ້ນ ແລະໄດ້ທໍຣະມານ ພຣະຍານາຄນັ້ນໃຫ້ໝົດພຍົສທີ່ຮ້າຍຂາດ.

ເມື່ອອັຄຄິທັຕຕະ ເຫັນເຊັ່ນນັ້ນ ກໍເກີດຄວາມເຫລື້ອມໃສ ແລະໝູ່ດາບົສ ເຫັນອິທລິເຊັ່ນນັ້ນ ກໍເຫລື້ອມໃສ ພາກັນກະທໍາອັລຊະລີນ້ອມໄຫວ້ ກ່າວຄໍາສັຣເສີລ. ໃນຂຓະນັ້ນ, ພຣະສາສດາເຈົ້າ ໄດ້ສເດັຈໄປໃນທີ່ນັ້ນ ເມື່ອພຣະໂມຄຄັລລານະເຖຣະ ເຫັນພຣະສາສດາສເດັຈເຂົ້າໄປ ກໍໄດ້ລຸກຂຶ້ນ ນມັສການ ພວກຣືສີເຫັນ ຈຶ່ງຖາມ ພຣະໂມຄຄັລລານະເຖຣະວ່າ ຜູ້ນີ້ໃຫຍ່ກວ່າທ່ານອີກບໍ? ພຣະເຖຣະ ຈຶ່ງຕອບວ່າ ໃຫຍ່ກວ່າເຮົາ ເພິ່ນເປັນຄຣູຂອງ

ເຮົາອີກ ແລະ ເຮົານັ້ນ ເປັນສິສຍ໌ຂອງເພິ່ນ. ພວກດາບົສເຫລົ່ານັ້ນ ກໍນຶກອັສຈັຣຍ໌ ຈຶ່ງພາກັນທຳອັຍຊະລີນ້ອມໄຫວ້. ພຣະສາສດາ ຈຶ່ງໄດ້ຮັບສັ່ງຖາມ ອັຄຄິທັຕຕະດາບົສວ່າ ດູຣາ ອັຄຄິທັຕຕະ ເຈົ້າໃຫ້ໂອວາທສາວົກຂອງເຈົ້າ ແນວໃດ. ອັຄຄິທັຕຕະ ທູລວ່າ ຂ້າພຣະອົງຄ໌ ໃຫ້ໂອວາທແກ່ເຂົາເຈົ້າວ່າ ທ່ານທັງຫລາຍ ຈົ່ງນ້ອມເອົາ ພູຜາ ປ່າໄມ້ ອາຣາມເຈດີຍ໌ ຕົ້ນໄມ້ວ່າເປັນທີ່ເພິ່ງອາສັຍ. ເມື່ອທ່ານທັງຫລາຍ ເຂົ້າເຖິງສິ່ງເຫລົ່ານີ້ວ່າເປັນທີ່ເພິ່ງເປັນ ສະຣະຕະແລ້ວ ກໍຈັກພົ້ນຈາກທຸກຂ໌ໄດ້. ເມື່ອພຣະອົງຄ໌ ຈັກທຣົງປະທານໂອວາທ ຈຶ່ງໄດ້ຕຣັສພຣະຄາຖາ ດັ່ງທີ່ໄຍກຂຶ້ນມາຂ້າງຕົ້ນນີ້ນັ້ນແລ.

---

## ໑໕

ທຸລລະໂພ ປຸຣິສາຊັຍໂຍ
　　ນະ ໂສ ສັພພັຕຖະ ຊາຍະຕິ
ຍັຕຖະ ໂສ ຊາຍະຕິ ທີໂຣ
　　ຕັງ ກຸລັງ ສຸຂະເມທະຕີ ຯ໑໙໓ຯ

ບຸຣຸສ ອາຊາໄນຍ໌ນັ້ນ ຫາໄດ້ຍາກທີ່ສຸດ, ເຂົາຍ່ອມບໍ່ເກີດໃນຕະກູລທົ່ວໄປ. ຄົນສລາດເຊັ່ນນີ້ຖ້າເກີດໃນຕະກູລໃດ ຕະກູລນັ້ນທຽນຍ່ອມຈເຣີນ

ມີຄວາມຮຸ່ງເຮືອງ ມີຄວາມສຸຂ ແທ້ດີຫລີ.

# ເຣື່ອງ ອານັນທະບັณທາ

ພຣະບໍຣົມສາສດາ ທຣົງຜາຣົພ ບັณທາ ຂອງ ພຣະອານົນທ໌ ເຖຣະ. ໃນໂອກາສນຶ່ງ: ພຣະອານົນທ໌ເຖຣະເຈົ້າ ໄດ້ເຂົ້າເຝົ້າ ທູລຖາມພຣະສາສດາວ່າ ຂ້າແດ່ ພຣະອົງຄ໌ຜູ້ຈເຣີญ ບຸຣຸສອາຊາໄນຍ໌ ຍ່ອມເກີດຂຶ້ນໃນທີ່ໃດ ? ພຣະສາສດາ ຈຶ່ງຕຣັສວ່າ ດູຣາ ອານົນທ໌ ອັນຂຶ້ນຊື່ວ່າ ບຸຣຸສອາຊາໄນຍ໌ແລ້ວ ຍ່ອມບໍ່ໄປເກີດໃນທີ່ທັງປວງຄື ທີ່ອຶ່ນ ໄປເລີຍ ແຕ່ຈະໄປເກີດ ໃນຕະກູລ ຂັຕຕິຍະມຫາສາລ ແລະ ພຣາຫມຕ໌ ມຫາສາລ ໃນ ທັງ ໔ ຕະກູລນີ້ ຕະກູລໃດ ຕະກູລນຶ່ງ ເທົ່ານັ້ນ ດັ່ງນີ້ ແລ້ວຈຶ່ງຕຣັສພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາຂ້າງເທີງນັ້ນແລ.

---

## ໑໙໔

ສຸໂຂ ພຸທລານະມຸປປາໂທ
ສຸຂາ ສັທລັມມະເທສນາ
ສຸຂາ ສັງຄັສສະ ສາມັຄີ
ສະມັຄຄານັງ ຕະໂປ ສຸໂຂ ໑໑໙໔໑

ການອຸບັດຂຶ້ນ ຂອງ ພຣະພຸທສເຈົ້າ ທັງຫລາຍນັ້ນ ທຽນຍ່ອມນຳ ມາຊຶ່ງຄວາມສຸຂ. ການສແດງຊຶ່ງພຣະສັທລັມມ໌ນັ້ນ ທຽນຍ່ອມໃຫ້ເກີດສຸຂ ຄວາມພ້ອມພຽງກັນ ຂອງໝູ່ຄຕະ ທຽນຍ່ອມໃຫ້ເກີດສຸຂ. ຄວາມພຍາ-ຍາມຂອງໝູ່ຄຕະ ທີ່ພ້ອມພຽງກັນ ທຳໃຫ້ເກີດສຸຂ.

## ເຣື່ອງ ສັມພະຫຸລະກິກຂຸ

ພຣະບໍຣົມສາສດາ ທຣົງຜາຣົພ ກະຖາ ຄວາມຄິດຄວາມເຫັນ ຂອງ ກິກຂຸ ທັງຫລາຍ ທີ່ປະຊຸມສົນທະນາກັນວ່າ ດູຣາ ທ່ານຜູ້ມີອາຍຸ ທັງຫລາຍ ໃນໂລກນີ້ ມີຫຍັງໜໍ ທີ່ວ່າ ຈະເປັນສຸຂ. ບາງອົງຄ໌ ກ່າວວ່າ ຄວາມເປັນ ພຣະຣາຊາ ມຫາກະษັຕຣິຍ໌ ນັ້ນແລ ເປັນສຸຂ. ມີບາງພວກ ກ່າວຂຶ້ນວ່າ ກາມນັ້ນແລ ເປັນສຸຂ. ບາງພວກອີກ ກ່າວວ່າ ການບໍຣິໂກຄອາຫານທີ່ມີຣົສ ແຊບນົວດີ ນັ້ນແລ ເປັນສຸຂ.

ພຣະສາດາ ໄດ້ສເດັຈໄປໃນທີ່ປະຊຸມນັ້ນ ແລ້ວຈຶ່ງຕຣັສ ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາ ໃນຂ້າງເທິງນີ້.

---

໑໗

ປູຊາຣະເຫ ປູຊະຍະໂຕ

ພຸທເຣ ຍະທິຈະ ສາວະເກ
ປະປັລຈະສະມະຕິກກັນເຕ
ຕິຕຕະໂສກະປະຣິທທະເວ ໑໙໕໑

ການບູຊາ ທ່ານຜູ້ທີ່ຄວນແກ່ການບູຊາ ກໍຄື ພຣະພຸທລເຈົ້າ ຫລືວ່າ ສາວົກຂອງ ພຣະພຸທລເຈົ້າ ຜູ້ພົ້ນຈາກກິເລສ ເຄື່ອງເສົ້າໝອງ ໝົດຄວາມໂສກເສົ້າຮ່ຳໄຮ ສງົບຣະງັບ.

## ໑໙

ເຕ ຕາທິໂສ ປູຊະຍະໂຕ
ນິພພຸເຕ ອະກຸໂຕ ກະເຍ
ນະ ສັກກາ ປຸລລັງ ສັງຂາຕຸງ
ອິເມຕຕະມະປິ ເກນະຈິ ໑໙໖໑

ການບູຊາ ບຸຄຄົລ ເຊັ່ນນັ້ນ ເປັນການບູຊາ ທີ່ປອດກັຍ ໂດຍປະການທັງປວງແລ, ຄື ບໍ່ມີຜູ້ໃດສາມາຖທີ່ຈະຄຳນວນນັບບຸລ ຂອງບຸຄຄົລຜູ້ນີ້ວ່າ "ເຂົາໄດ້ບຸລ ມີປະມາຕເທົ່ານີ້"

# ເຣື່ອງ ສຸວັຕຕະເຈດີຍ໌

ພຣະບໍຣົມສາສດາ ໄດ້ສເດັຈໄປຈາກເມືອງ ສາວັຕຖີ ໄປຍັງເມືອງ ພາຣາຓະສີ ພ້ອມດ້ວຍ ກິກຂຸສົງໜ໌ ບໍຣິວາຣໝູ່ໃຫຍ່. ເມື່ອສເດັຈໄປເຖິງ ສາລພຣະກູມິ ແຫ່ງນຶ່ງ ທີ່ຕັ້ງຢູ່ໃນຣະຫວ່າງທາງໃກ້ ໆ ກັບບ້ານຂອງທ່ານ ໂຕໄທຍະພຣາຫມຕ໌. ເມື່ອທຣົງພັກ ໃນທີ່ນັ້ນແລ້ວ ຈຶ່ງຮັບສັ່ງໃຫ້ ພຣະ ອານົນທ໌ ໄປຮຽກພຣາຫມຕ໌ທີ່ກຳລັງໄຖນາຢູ່ນັ້ນມາເຝົ້າ. ເມື່ອມາເຖິງແລ້ວ ພຣາຫມຕ໌ນັ້ນ ແທນທີ່ຈະຖວາຍ ອະກິວາທພຣະຜູ້ມີພຣະກາຄເຈົ້າ ແຕ່ໄປ ໄຫວ້ສາລພຣະກູມິ ແລ້ວຢືນຢູ່. ພຣະຜູ້ມີພຣະກາຄເຈົ້າ ຕຣັສ ຖາມວ່າ "ພຣາຫມຕ໌ ທ່ານສຳຄັນວ່າ ທີ່ນີ້ ເປັນຫຍັງ?"

ພຣາຫມຕ໌ ຂາບທູລວ່າ ເປັນເຈດີຍ໌ສຖານຕາມປະເພຕີ ຂອງພວກ ຂ້າພຣະອົງຄ໌. ພຣະຜູ້ມີພຣະກາຄເຈົ້າ ຕຣັສສັຣເສີຜວ່າ ພຣາຫມຕ໌ ທ່ານ ໄຫວ້ ກໍດີຢູ່ແລ້ວ. ກິກຂຸ ທັງຫລາຍ ໄດ້ຟັງ ພຣະພຸທລະດຳຣັສ ກໍເກີດມີ ຄວາມສົງສັຍກັນຂຶ້ນວ່າ ຍ້ອນເຫຕຸອັນໃດໜໍ ພຣະຜູ້ມີພຣະກາຄເຈົ້າຈຶ່ງຕຣັສ ສັຣເສີຜ ການໄຫວ້ສາລພຣະກູມິ ຢ່າງນີ້.

ເມື່ອຈະແກ້ຂໍ້ສົງສັຍ ຂອງກິກຂຸ ທັງຫລາຍ ເຫລົ່ານັ້ນ ຈຶ່ງຕຣັສວ່າ ທີ່ນີ້ ເປັນເຈດີຍ໌ຄຳ ຂອງ ພຣະສັມມາສັມພຸທລເຈົ້າ ແລ້ວທຣົງສແດງພຸທ-ລານຸກາພໃຫ້ພຣະເຈດີຍ໌ຜາກົຜ ແກ່ສາຍຕາຂອງປະຊາຊົນ ແລະ ກິກຂຸທັງ ຫລາຍ ປະຊາຊົນມີໃຈເຫລື້ອມໃສ. ພຣະອົງຄ໌ຈຶ່ງຕຣັສພຣະຄາຖາດັ່ງກ່າວ

---

# ຈົບ ພຸທສວັຄຄ໌ ທີ່ ໑໔

# ສຸຂວັຄຄ໌ ທີ່ ໑໕
## ໝວດ ວ່າດ້ວຍຄວາມສຸຂ

໑

ສຸສຸຂັງ ວະຕະ ຊີວາມະ
ເວຣິເນສຸ ອະເວຣິໂນ
ເວຣິເນສຸ ມະນຸສເສສຸ
ວິະຣາມະ ອະເວຣິໂນ ຯ໑໙໗ຯ

ໃນໝູ່ມນຸສນັ້ນ ມີການຈອງເວຣກັນ. ແຕ່ວ່າ ເຮົາບໍ່ຈອງເວຣກັບໃຜ ອັນນີ້ ເປັນຕາໜ້າຢູ່ ແທ້ໜໍ ! ໃນໝູ່ມນຸສນັ້ນ ເຕັມໄປດ້ວຍເວຣ ແຕ່ວ່າ ພວກເຮົາ ຢູ່ປາສຈາກເວຣ.

໔

ສຸສຸຂັງ ວະຕະ ຊີວາມະ
ອາຕຸເຣສຸ ອະນາຕຸຣາ

ອາຕຸເຣສຸ ມະນະສເສສຸ
ວິຫະຣາມະ ອະນາຕຸຣາ ໑໙໘

ໃນໝູ່ ມນຸສ ໃນໂລກນີ້ ຜູ້ມີກິເລສ, ສ່ວນພວກເຮົານັ້ນ ໝົດກິເລສແລ້ວ, ສັງມາຢູ່ສຸຂສະບາຍແທ້ເດ. ໃນໝູ່ມນຸສ ຜູ້ມີກິເລສນັ້ນ, ພວກເຮົາຢູ່ປາສຈາກກິເລສ.

ລ

ສຸສຸຂັງ ວະຕະ ຊີວາມະ
ອຸສສຸກເກສຸ ອະນຸສສຸກາ
ອຸສສຸກເກສຸ ມະນຸສເສສຸ
ວິຫະຣາມະ ອະນຸສສຸກາ ໑໙໙

ໃນໝູ່ມນຸສ ຜູ້ມີຄວາມກະວົນກະວາຍຮ້ອນຮົນ, ພວກເຮົາ ບໍ່ກະວົນກະວາຍຮ້ອນຮົນ ອັນໃດ. ສັງມາຢູ່ສຸຂສະບາຍແທ້ເດ. ໃນໝູ່ມນຸສ ຜູ້ມີຄວາມຮ້ອນຮົນ ກະວົນກະວາຍ. ພວກເຮົາ ຢູ່ປາສຈາກຄວາມກະວົນກະວາຍ

# ເຣື່ອງ ການຫ້າມພຣະຍາຕິວົງສ໌

ພຣະບໍຣົມສາສດາ ທຣົງຜາຣົພ ພວກພຣະຍາຕິວົງສ໌ ວິວາທກັນ ດ້ວຍເຫຕຸ ທີ່ພວກກັມມກຣ ຂອງ ສັກຍະ ແລະ ໂກລິຍະ ທຳນາອາສັຍແມ່ນ້ຳ ໂຣຫິຕີ ຊຶ່ງຢູ່ໃນຣະຫວ່າງ ກຣຸງກະບິລພັສດຸ໌ ແລະ ກຣຸງເທວທຫະ ເຮັດຝາຍກັ້ນນ້ຳ ແລ້ວເກີດທະເລາະວິວາທກັນຂຶ້ນ. ເຫຕຸການຕ໌ ອັນນັ້ນໄດ້ລຸກລາມໄປເຖິງ ເຈົ້ານາຍຂອງຕົນ. ກສັຕຣິຍ໌ ທັງສອງນຄຣນີ້ ຕ່າງກໍຍົກກຳລັງອອກ ເພື່ອທຳສົງຄາມກັນ.

ເມື່ອ ພຣະສາສດາ ໄດ້ທອດພຣະເນຕຣ໌ເຫັນ ຈຶ່ງສເດັຈໂດຍທາງນການາສ ປະທັບນັ່ງຂັດສະມາລິໃນອາກາສ ຕະ ທ່າມກາງແມ່ນ້ຳ ໂຣ-ຫິຕີນັ້ນ. ພຣະ ຍາຕິ ທັງຫລາຍ ໄດ້ເຫັນພຣະອົງຄ໌ ເຊັ່ນນັ້ນ ກໍພາກັນວາງອາວຸຸດ ຖວາຍນມັສການ. ພຣະສາສດາ ຈຶ່ງຕຣັສຖາມວ່າ :

ດູຣາ ມຫາຣາຊ ທັງຫລາຍ ນ້ຳ ກັບ ກສັຕຣິຍ໌ ອັນໃດຈະມີຣາຄາຫລາຍກວ່າກັນ. ພຣະຍາຕິ ທັງຫລາຍ ຈຶ່ງທູລວ່າ ນ້ຳນັ້ນ ມີຣາຄາໜ້ອຍ ກສັຕຣິຍ໌ ມີຄ່າກຳໜົດບໍ່ໄດ້. ບັດນັ້ນ, ພຣະອົງຄ໌ ຈຶ່ງຕຣັສວ່າ ສົມຄວນແລ້ວບໍ ທີ່ທ່ານ ທັງຫລາຍ ມາອາສັຍນ້ຳ ທີ່ມີປະມາຕໜ້ອຍດຽວນີ້ ເອົາມາເປັນເຫຕຸໃຫ້ ກສັຕຣິຍ໌ ທີ່ຫາຄ່າບໍ່ໄດ້ນັ້ນ ຈິບຫາຍເສັຍ.

ບັດນັ້ນ, ພຣະພຸທລອົງຄ໌ ຈຶ່ງທຣົງສແດງ ພຣະລັມມິກຖາ ແລ້ວຈຶ່ງຕຣັສຊຶ່ງ ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາໃນຂ້າງເທິງນີ້.

໔

ສຸສຸຂັງ ວະຕະ ຊີວາມະ
ເຍ ສັງ ໂນ ນັຕຖິ ກິໝຈະນັງ
ປີຕິກັກຂາ ກະວິສສາມະ
ເທວາ ອາກັສສະຣາ ຍະຖາ ໑໔໐໐໑

ພວກເຮົານັ້ນ ບໍ່ມີກິເລສ ເສົ້າໝອງໃຈ, ສັງມາຢູ່ສຸຂສະບາຍແທ້ໜໍ່ ພວກເຮົານັ້ນ ມີປີຕິ ເປັນກັກຫາຫາຣ ປານກັບວ່າ ເທລົ່າ ອາກັສຣພຣົຫມ.

## ເຣື່ອງ ມາຣ

ພຣະບໍຣົມສາສດາ ທຣົງຜາຣົພ ມາຣ. ຄາວເມື່ອ ພຣະຜູ້ມີພຣະກາຄເຈົ້າ ສເດັຈເຂົ້າໄປສູ່ ພຣາຫມຕະຄາມ ເພື່ອບິຕທບາຕ. ພວກມາຣເຂົ້າໄປສິງຊາວບ້ານ ເພື່ອບໍ່ໃຫ້ພຣະສາສດາ ໄດ້ບິຕທບາຕ ແລ້ວກ່າວຖ້ອຍຄຳເຍາະເຍີ້ຍ ພຣະສາສດາວ່າ ພຣະສມຕະ ທ່ານບໍ່ໄດ້ອາຫາຣແດ່ບໍ. ເມື່ອທ່ານບໍ່ໄດ້ອາຫາຣ ທ່ານບໍ່ຫິວບໍ?.

ບັດນັ້ນ, ພຣະອົງຄ໌ ຈຶ່ງຕຣັສຕອບມາຣວ່າ ດູຣາ ມາຣ ເຖິງແມ່ນວ່າບໍ່ໄດ້ອາຫາຣ ເຮົາກໍມີປີຕິສຸຂ ເປັນອາຫາຣ ເໝືອນ ອາກັສຣພຣົຫມສະນັ້ນ ແລ້ວຈຶ່ງໄດ້ຕຣັສພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາໃນຂ້າງເທິງ

໕

ຊະຍັງ ເວຣັງ ປະສະວະຕິ
ທຸກຂັງ ເສຕິ ປະຣາຊິໂຕ
ອຸປະສັນໂຕ ສຸຂັງ ເສຕິ
ຫິຕະວາ ຊະຍະປະຣາຊະຍັງ ໆ໔໐໑ໆ

ຜູ້ທີ່ແພ້ເຂົາ ຍ່ອມກໍ່ໃຫ້ເກີດເວຣ, ຜູ້ທີ່ພ່າຍແພ້ ຍ່ອມຢູ່ເປັນທຸກຂ໌ ຜູ້ທີ່ລະເສັຍ ຊຶ່ງຄວາມຜາບແພ້ ແລະ ຄວາມພ່າຍແພ້ ນັ້ນແຫລະຢູ່ເປັນສຸຂ.

## ເຣື່ອງ ໂກສົລຣາຊປຣາຊັຍ

ພຣະບໍຣົມສາສດາ ທຣົງຜາຣົພ ຊຶ່ງຄວາມປຣາຊັຍ ຂອງພຣະເຈົ້າປະເສນທິໂກສົລ. ຕົ້ນເຫຕຸນັ້ນ ມີຢູ່ວ່າ ພຣະເຈົ້າໂກສົລນັ້ນ ອາສັຍກາສິກະຄາມ ກະທຳສົງຄາມ ກັບພຣະເຈົ້າ ອຊາຕສັຕຣູ ຜູ້ເປັນ ພຣະຣາຊກາຄີໄນຍ໌ ພຣະເຈົ້າ ອຊາຕສັຕຣູ ໄດ້ຮັບໄຊຍ໌ໃນສົງຄາມກັບ ພຣະເຈົ້າ ໂກສົລ ເຖິງ ໓ ຄັ້ງ. ພຣະເຈົ້າໂກສົລ ທຣົງດຳຣິວ່າ ເຮົາບໍ່ອາຈທີ່ຈະຍັງທາຣົກ ຜູ້ທີ່ຍັງບໍ່ທັນໝົດກິ່ນນ້ຳນົມ ໃຫ້ປຣາຊັຍໄດ້, ເຮົາຈະຢູ່ໄປເພື່ອຫຍັງ ເຮົາມ້ຽນຕາຍດີກວ່າ. ເມື່ອທຣົງດຳຣິ ດັ່ງນີ້ແລ້ວ ກໍບໍ່ຍອມສເວີຍພຣະກະຍາຫາຣທຣົງບັຣທົມ ເໜືອພຣະແທ່ນ ມັລຈາອາສນ໌.

ພຣະພິກຂຸ ທັງຫລາຍ ຊາບຄວາມນັ້ນແລ້ວ ຈຶ່ງເຂົ້າເຝົ້າທູລພຣະສາສດາ ພຣະພຸທສອົງຄ໌ ຈຶ່ງຕຣັສ ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາໃນເບື້ງຕົ້ນນັ້ນ ຫັ້ນແລ.

໕

ນັຕຖິ ຣາຄະສະໂມ ອັຄຄິ
ນັຕຖິ ໂທສະສະໂມ ກະລິ
ນັຕຖິ ຂັນຂະສະມາ ທຸກຂາ
ນັຕຖິ ສັນຕິປະຣັງ ສຸຂັງ ໑໔໐໔໑

ບໍ່ມີໄຟໃດ ທີ່ຈະສເມີເໝືອນ ຣາຄະ, ບໍ່ມີໂທສ ຄວາມໂກທໃດ ທີ່ຈະສເມີດ້ວຍ ໂທສະ, ບໍ່ມີທຸກຂ໌ໃດ ທີ່ຈະສເມີເໝືອນ ປັນຈະຂັນຂ໌, ບໍ່ມີຄວາມສຸຂໃດ ທີ່ຈະສເມີດ້ວຍຄວາມສງົບ.

## ເຣື່ອງ ອັນຍຕຣະກຸລທາຣິກາ

ພຣະບໍຣົມສາສດາ ທຣົງຜາຣົພ ນາງກຸມາຣິກາ ຄົນນຶ່ງ ມາຣດາບິດາຂອງນາງ ຈັດງານ ອາວາຫະມຸງຄຸລໃຫ້ນາງ ຈຶ່ງໄດ້ນິມົນຕ໌ພຣະສາສດາ

ພ້ອມດ້ວຍ ພຣະພິກຸສົງຄ໌ ສເດັຈໄປໃນການມຸງຄຸລນັ້ນ.

ນາງກຸມາຣິການັ້ນເປັນຍິງກຳລັງຂຶ້ນສາວໃໝ່ໄດ້ເຮັດວຽກການ ຕ່າງ ຕ່າງ ມີການກອງນ້ຳຖວາຍ ພຣະພິກຂຸ ເປັນຕົ້ນ ແລະ ຍ່າງໄປຍ່າງມາຢູ່ບໍ່ໄດ້ຂາດ. ສ່ວນຊາຍຜູ້ທີ່ຈະເປັນສາມີ ໄດ້ຢືນເບິ່ງນາງນັ້ນດ້ວຍຄວາມກຳໜັດ ໃຫ້ຕາມືດ ຕາລາຍ ໄປໝົດ ຈົນບໍ່ຮູ້ທີ່ຈະປະຜົບັຕິ ບໍຣິການ ພຣະພຸທລເຈົ້າ ແລະ ພຣະພິກຂຸສົງຄ໌ ຄິດຢູ່ແຕ່ວ່າ ເຮົາຈະເອົາຈາໂອບອ້ອມນາງ ຢ່າງນັ້ນ ຢ່າງນີ້. ພຣະສາສດາ ທຣົງຊາບອັລຍາສັຍ ຂອງຊາຍຜູ້ນັ້ນແລ້ວ ຈຶ່ງທຣົງ ບັຣດານ ບໍ່ໃຫ້ຊາຍຜູ້ນັ້ນເຫັນຍິງສາວຜູ້ນັ້ນ ແລ້ວທຣົງສແດງພຣະລັມມິກະ ຖາ ດັ່ງທີ່ໄດ້ຍົກຂຶ້ນມາຂ້າງຕົ້ນນີ້ (ທຳໃຫ້ ບ່າວ ສາວ ທັງ ໒ ນັ້ນສຳເຣັຈ ໂສດາປັຕຕິຜົລ).

---

ໆ

ຊິຄັຈຉາ ປະຣະມາ ໂຣຄາ
　　ສັງຂາຣາ ປະຣະມາ ທຸກຂາ
ເອຕັງ ຄັຕະວາ ຍະຖາກູຕັງ
　　ນິພພານັງ ປະຣະມັງ ສຸຂັງ ໆ໔໐ໆ

ຄວາມຫິວກະຫາຍ ເປັນໂຣຄທີ່ຮ້າຍແຮງ, ສັງຂານ ເປັນທຸກຂ໌-

ຍິ່ງ, ເມື່ອເຮົາມາຮູ້ຄວາມຈິງ ຢ່າງນີ້ແລ້ວ (ຄົນສລາດ ຈຶ່ງທຳພຣະນິພພານ) ໃຫແຈ້ງ) ພຣະນິພພານນັ້ນ ເປັນສຸຂ ຢ່າງຍິ່ງ.

# ເຣື່ອງ ອັລລະຕຣະອຸບາສົກ

ພຣະບໍຣົມສາສດາ ທຣົງຜາຣົພ ອຸບາສົກຜູ້ນຶ່ງ ລາວເປັນຊາຍທຸຄຄະຕະຍາກໄຮ້ເຂັນໃຈ ເປັນຊາວເມືອງ ອາລະວີ. ພຣະພຸທລອົງຄ໌ ໄດ້ທອດພຣະເນຕຣ໌ເຫັນອຸປະນິສັຍ ໂສດາປັຕຕິຜົລ ຈຶ່ງໄດ້ສເດັຈໄປເມືອງ ອາລະວີ ພ້ອມດ້ວຍ ກິກຂຸສົງຂ໌ໝູ່ໃຫຍ່. ຊາວເມືອງໄດ້ຈັດການຕ້ອນຮັບສເດັຈເປັນການໃຫຍ່ ມີການຕົກແຕ່ງ ກັຕຕາຫານຖວາຍ. ເວລານັ້ນ ຊາຍທຸຄຄະຕະຜູ້ນັ້ນ ໄປທ່ຽວຫາງົວຢູ່. ຄັນເຫັນງົວແລ້ວ ກໍໄດ້ມາສູ່ງານບຸຍຕ້ອນຮັບພຣະສາສດາພ້ອມດ້ວຍກິກຂຸສົງຂ໌. ພຣະສາສດາ ທຣົງຮັບສັ່ງໃຫ້ ໄວຍາວັຈະກອ (ເຈົ້າໜ້າທີ່ຮັບຜິດຊອບໃນການຈັດກັຕຕາຫານ) ຈັດອາຫານໃຫ້ຊາຍທຸຄຄຕະ ຜູ້ນັ້ນ ບໍຣິໂກຄເພື່ອບັຣເທົາຄວາມຫິວໃຫ້ແລ້ວກ່ອນ ຈຶ່ງຕຣັສອະນຸປຸພພິກະຖາ ປະກາສຈະຕຸຣາຣິຍສັຈ. ການສແດງພຣະທັມມິກະຖານັ້ນຈົບລົງ ຊາຍທຸຄຄະຕະ ກໍໄດ້ດຳຣົງຢູ່ໃນ ໂສດາປັຕຕິຜົລ.

ກິກຂຸ ທັງຫລາຍ ທີ່ຕາມສເດັຈ ຈຶ່ງກ່າວຜາຣົພເຣື່ອງນັ້ນ. ບັດນັ້ນ, ພຣະອົງຄ໌ ຈຶ່ງທຣົງ ສແດງພຣະທັມມິກຖາ ດ້ວຍບາທພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາໄວ້ ໃນຂ້າງຕົ້ນນີ້ ຫັ້ນແລ.

---

໗

ອາໂຣຄຍະປະຣະມາ ລາພາ

ສັນຕຸຜກີປະຣະນັງ ລະນັງ

ວິສສາສະປະຣະມາ ຍາຕິ

ນິພພານັງ ປະຣະມັງ ສຸຂັງ ໒໐໔໒

ຄວາມບໍ່ມີ ໂຣຄາພຍາຘິ ເປັນລາພ ອັນປະເສີກ, ຄວາມຮູ້ຈັກພໍ ເປັນທຣັພຍ໌ ຢ່າງຍິ່ງ. ຄວາມຄຸ້ນເຄີຍ ໄວ້ວາງໃຈກັນ ເປັນຍາຕິທີ່ດີເລີສ, ພຣະນິພພານ ເປັນສຸຂ ຢ່າງຍິ່ງແລ.

## ເຣື່ອງ ພຣະເຈົ້າ ປະເສນທິໂກສົລ

ພຣບໍຣົມສາສດາ ທຣົງຜາຣົພ ພຣະເຈົ້າປະເສນທິໂກສົລ. ແຕ່ກ່ອນ ນັ້ນ ພຣະອົງຄ໌ ມີຮ່າງກາຍອ້ວນ ອຶດອາດ ບໍ່ມີຄວາມຜາສຸຂ ຍ້ອນການບໍຣິ-ໂພຄ ຄື ບໍ່ມີປະມານໃນການບໍຣິໂພຄອາຫານ ນັ້ນເອງ. ຄັນໄດ້ສດັບພຸທສ ພາສິຕທີ່ ວ່າດ້ວຍໂທສຂອງການບໍຣິໂພຄເກີນຄວນ. ພຣະອົງຄ໌ ຈຶ່ງທຣົງ ລົດ ພຣະກະຍາຫານ ສເວີຍແຕ່ພໍຄວນ. ຕັ້ງແຕ່ນັ້ນມາ ກໍທຣົງພຣະສຳຣານ ມີພຣະກາຍ ຄ່ອງແຄ້ວສລະສລວຍ. ແຕ່ກ່ອນ ພຣະອົງຄ໌ໄດ້ກະທຳສົງຄາມ

ກັບພຣະເຈົ້າ ອຊາຕສັຕຣູ. ມາບັດນີ້ ກໍມີໄມຕຣີອັນດີ ຕໍ່ກັນແລ້ວ ແລະໄດ້ພຣະຣາຊທານ ນາງ ວະຊິຣະກຸມາຣີຣາຊສິດາ ແກ່ພຣະເຈົ້າ ອຊາຕສັຕຣູ ທັງແກ້ວມະນີຂອງເກົ່າທີ່ເປັນຂອງ ພຣະເຈົ້າກຸສຣາຊ ຕົກມາເປັນຂອງພຣະອົງຄ໌ແຕ່ແລ້ວກໍຫາຍໄປເສັຍ. ບັດນີ້ ແກ້ວນັ້ນ ກໍໄດ້ກັບຄືນມາຢູ່ຕາມເດີມ.

ພຣະອົງຄ໌ ມີພຣະຣາຊປະສົງຄ໌ຈະກ່ຽວດອງກັບ ພຣສາສດາ ຈຶ່ງຂໍໃຫ້ ສັກຍະຣາຊສິດາ ໄດ້ກັບນາງ ວາສກະຂັຕຕິຍາ ຂອງ ມຫານາມສັກຍະ-ຣາຊ ມາເປັນ ມເຫສີ ເພື່ອເປັນທາງວິສາສະ ກັບ ພຣະສາວົກ ທັງຫລາຍ. ດ້ວຍອາສັຍເຫຕຸເຫລົ່ານີ້. ພຣະເຈົ້າປະເສນທິໂກສົລ ຈຶ່ງໄດ້ເຂົ້າເຝົ້າ ທູລຄວາມນີ້ແດ່ ພຣະສາສດາ. ພຣະອົງຄ໌ ຈຶ່ງຕຣັສພຣະຄາຖາດັ່ງທີ່ຍົກຂຶ້ນມາໃນຂ້າງເທິງນີ້ ຫັ້ນແລ.

---

ໜ

ປະວິເວກະຣະສັງ ປິຕະວາ
ຣະສັງ ອຸປະສະມັສສະ ຈະ
ນິທທະໂຣ ໂຫຕິ ນິປປາໂປ
ສັມມະປິຕິ ຣະສັງ ປີວັງ ໑໔໐໕໑

ເມື່ອໄດ້ຊີມຣົສ ແຫ່ງວິເວກ ຄວາມສງົບສງັດ ແລະຣົສຊາຕແຫ່ງພຣະນິພພານ ອັນສງົບ, ໄດ້ດື່ມຣົສ ແຫ່ງຄວາມເອີບອີ່ມ ໃນພຣະສັມມ໌,

ບຸຄຄົລຈະໝົດບາບກັມມ໌ ໝົດຄວາມທຸກຂ໌ຮ້ອນ.

໑໐

ສາທຸ ທັສສະນະມະຣິຍານັງ
ສັນນິວາໂສ ສະທາ ສຸໂຂ
ອະທັສສະເນນະ ພາລານັງ
ນິຈຈະເມວະ ສຸຂີ ສິຍາ ๆ໒໐໖ๆ

ການໄດ້ພົບພໍ້ກັບ ພຣະອຣິຍະເຈົ້ານັ້ນ ເປັນຄວາມດີ, ການຢູ່ຮ່ວມກັບເພິ່ນ ໃຫ້ເກີດຄວາມສຸຂ ທຸກເມື່ອ. ຫາກບໍ່ຄົບຄ້າສະມາຄົມກັບຄົນພາລເສັຍເລີຍໄດ້ ກໍຍິ່ງດີ. ຄົນເຮົານັ້ນ ອາຈມີຄວາມສຸຂ ເປັນນິຈນິຣັນດຣ໌

໑໑

ພາລັສສະ ສັງຄະຕະຈາຣີ ຫິ
ທີຜະມັທລານະ ໂສຈະຕິ
ທຸກໂຂ ພາເລຫິ ສັງວາໂສ
ອະມິຕເຕເນວະ ສັພພະທາ
ຄີໂຣ ຈະ ສຸຂະສັງວາໂສ
ຍາຕີນັງວະ ສະມາຄະໂມ ๆ໒໐໗ๆ

ຜູ້ທີ່ຄົບຄ້າສະມາຄົມ, ການຢູ່ຮ່ວມກັບຄົນພາລນັ້ນ ຍ່ອມໂສກເສົ້າ ແລະ ທຸກຂ໌ ທໍຣະມານໄປອີກນານ ເພາະວ່າ ຄົນພາລນັ້ນ ເໝືອນກັບສັຕຣູ. ສ່ວນ ການຢູ່ຮ່ວມກັບ ນັກປຣາຊຍ໌ ບັຕທິຕນັ້ນ ມີແຕ່ຄວາມສຸຂ ເໝືອນກັບການຢູ່ຮ່ວມກັບຍາຕິມິຕຣ໌.

## ໑໔

ຕັສມາ ຫິ,
ລິຣັຍຈະ ປັຍຍັຍຈະ ພະຫຸສສຸຕັຍຈະ
ໂລເຣຍຫະສີລັງ ວະຕະວັນຕະ ມະຣິຍັງ
ຕັງ ຕາທິສັງ ສັປປຸຣິສັງ ສຸເມລັງ
ພະເຊຖະ ນັກຂັຕຕະປະຖັງວະ ຈັນທິມາ. ໒໑໐໗໑

ເພາະເຫຕຸນັ້ນທັ້ນແລ (ຄົນເຮົາ) ຈຶ່ງຄວນປະພຶຕຣ໌ຕາມຜູ້ທີ່ເປັນນັກປຣາຊຍ໌ ຜູ້ມີຄວາມສລາດ ມີການສຶກສາຮ່ຳຮຽນ, ມີສີລາຈາຣວັຕຣ໌ ອັນດີງາມເປັນທີ່ຮັກ, ເປັນພຣະອຣິຍະ, ເປັນສັປບຸຣຸສ, ມີປັຍຍາດີ ສະເໝືອນພຣະຈັນທຣ໌ ທີ່ໄປຕາມທາງແຫ່ງໝູ່ດາວນັກຂັຕຣິກຂ໌.

# ເຣື່ອງ ທ້າວສັກກະ

ພຣະບໍຣົມສາສດາ ທຣົງຜາຣົພ ທ້າວສັກກະມຫາຣາຊ. ໃນຄາວທີ່ພຣະອົງຄ໌ ທຣົງປົງອາຍຸສັງຂາຣແລ້ວນັ້ນ ກໍໄດ້ປະຊວນເປັນທ້ອງບິດມີພຣະໂລຫິຕໄຫລອອກ. ຄັ້ງນັ້ນ ທ້າວໂກສີຍ໌ອມະຣິນທາລິຣາຊ ສເດັຈມາຖວາຍການອະພິບາລຣັກษາ. ເວລາທີ່ຈະເຊີນການຊນະພຣະບັງຄົນ (ພາຊະນະໃສ່ອຸຈຈາຣະ)ໄປນັ້ນ ໄດ້ວາງໃສ່ບົນພຣະສຽຣ ໂດຍບໍ່ໄດ້ທຣົງຂີ້ດຽດ ແມ່ນການສແດງພຣະພັກຕຣ໌ບິດບຽນ ກໍບໍ່ມີເລີຍ. ຄັນເມື່ອພຣະອົງຄ໌ ຫາຍຈາກພຣະປະຊວນແລ້ວ ກໍສເດັຈກັບສູ່ເທວໂລກ.

ກິກຂຸ ທັງຫລາຍ ປະຊຸມສົນທະນາກັນ ກ່າວສັຣເສີຍ ທ້າວສັກກະ ພຣະສາສດາ ໄດ້ສເດັຈໄປໃນທີ່ປະຊຸມນັ້ນ ແລ້ວຕຣັສວ່າ ດູຣາ ກິກຂຸທັງຫລາຍ ການທີ່ທ້າວສັກກະ ກະທຳເຊັ່ນນັ້ນ ບໍ່ເປັນທີ່ໜ້າອັສຈັຣຍ໌ດອກ ເພາະວ່າ ເຮົາໄດ້ກະທຳໃຫ້ທ້າວສັກກະ ບັຣລຸໂສດາປັຕຕິຜົລ ປ່ຽນອັຕການແກ່ ເປັນອັຕການໜຸ່ມ ແລ້ວຈຶ່ງຕຣັສ ພຣຄາຖາ ທັງຫລາຍ ດັ່ງທີ່ໄດ້ຍົກຂຶ້ນມາໄວ້ໃນຂ້າງເທິງນີ້ນັ້ນ ຫັ້ນແລ.

---

## ຈົບ ສຸຂວັຄຄ໌ ທີ່ ໑໕

## ຈົບ ສຸຂວັຄຄ໌ ທີ່ ໑໕
ວັຄຄ໌ຕໍ່ໄປແມ່ນ
## ປິຍະວັຄຄ໌ ທີ່ ໑໖

# ປິຍວັຄຄ໌ ທີ່ ໑໖

## ໝວດ ວ່າດ້ວຍຄວາມຮັກ

### ໑

ອະໂຍເຄ ຍຸຍຊະມັຕຕານິ
ໂຍຄັສມິຍຈະ ອະໂຍຊະຍັງ
ອັຕຖັງ ຫິຕະວາ ປິຍັຄຄາຫີ
ປິເຫາຕັຕຕານຸໂຍຄິນັງ ໆ໒໐໙ໆ

ການພະຍາຍາມ ໃນສິ່ງທີ່ບໍ່ຄວນພະຍາຍາມ, ບໍ່ພະຍາຍາມ ໃນສິ່ງທີ່ຄວນພະຍາຍາມ. ລະເລີຍເພີກເສີຍໃນສິ່ງທີ່ເປັນປະໂຍຊນ໌ ແຕ່ໄປຕິດຢູ່ໃນປິຍາຣົມຕ໌. ອັນວ່າ ຄົນເຊັ່ນນີ້ ມີແຕ່ໄປອິສສາບັງບຽດ ຜູ້ທີ່ພະຍາຍາມຊ່ວຍຕົນເອງ ເທົ່ານັ້ນແລ.

### ໒

ມາ ປິເຍຫິ ສະມາຄັຕຈິ
ອັປປິເຍຫິ ກຸທາຈະນັງ
ປິຍານັງ ອະທັສສະນັງ
ອັປປິຍານັງຍຈະ ທັສສະນັງ ໆ໒໑໐ໆ

ຈຶ່ງຢ່າໄດ້ຕິດຢູ່ ໃນສິ່ງທີ່ເຮົາຮັກ ຫຣື ບໍ່ຮັກ. ການພັດພາກຈາກສິ່ງທີ່ຮັກ ແລະ ຫວງແຫນນັ້ນ ເປັນທຸກຂ໌. ການພົບພໍ້ກັບສິ່ງທີ່ເຮົາບໍ່ຮັກກໍເປັນທຸກຂ໌ແລ.

໓

ຕັສະມາ ປິຍັງ ນະ ກະຍິຣາ
ປິຍາປາໂຍ ຫິ ປາປະໂກ
ຄັນຖາ ເຕສັງ ນະ ວິຊັນຕິ
ເຍສັງ ນັຕຖິ ປາປິຍັງ ໒໑໑໒

ເພາະເຫຕຸດັ່ງນັ້ນແລ ຈຶ່ງບໍ່ຄວນຮັກໃນສິ່ງໃດ ເພາະວ່າ ການພັດພາກຈາກຂອງຮັກ ຂອງຊອບໃຈນັ້ນເປັນທຸກຂ໌. ຜູ້ທີ່ໝົດຄວາມຮັກ ແລະ ຄວາມບໍ່ຮັກແລ້ວ ເຄື່ອງຜູກພັນກໍພອຍໝົດໄປດ້ວຍ.

## ເຣື່ອງ ຕະໂຍບັຣພະຊິຕ

ພຣະບໍຣົມສາສດາ ທຣົງຜາຣົພ ບັຣພະຊິຕ ໓ ອົງຄ໌. ເຫຕຸການຕ໌ໃນເບື້ອງຕົ້ນນັ້ນ ກ່າວວ່າ ໃນຕະກູລນຶ່ງ ມີຢູ່ ໓ ຄົນດ້ວຍກັນຄື, ໑. ບິດາ, ໒. ມາຣດາ, ໓. ບຸຕຣ໌. ຜູ້ເປັນບຸຕຣ໌ ມີຄວາມເຫລື້ອມໃສໃນພຣະພຸທສະສາສນາ ອ້ອນວອນ ມາຣດາບິດາ ຢາກໄປບວຊ ແຕ່ ມາຣດາ ບິດາບໍ່ຍອມ

ເມື່ອເປັນເຊັ່ນນັ້ນ ບຸຕຣ໌ຈຶ່ງໄດ້ໜີໄປບວຊ. ບິດາທ່ງອຕິດຕາມຫາ ໄປເຫັນ ບຸຕຣ໌ບວຊຢູ່ແລ້ວ. ດ້ວຍອຳນາຈແຫ່ງຄວາມຮັກໃນບຸຕຣ໌ ກໍເລີຍບວຊຕາມ ຝ່າຍມາຣດາ ເຫັນສາມີແລະບຸຕຣ໌ບວຊ ກໍເລີຍໄປບວຊຕາມ ໃນສຳນັກຂອງ ນາງກິກຂຸນີ. ທັງສາມຄົນນີ້ ເມື່ອບວຊແລ້ວ ກໍມີແຕ່ໄປຫາກັນ ແລະ ສົນ-ທະນາກັນ ທຸກເຊົ້າເຢັນ ບໍ່ສາມາຖທີ່ຈະແຍກຈາກກັນໄດ້.

ພຣະສາສດາ ທຣົງຊາບ ຈຶ່ງຮັບສັ່ງໃຫ້ຫາຕົວມາສະສາງ ແລ້ວທຣົງ ສແດງພຣະທັມມິກະຖາ. ເມື່ອພຣະອົງຄ໌ຕຣັສ ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາ ນັ້ນ ຈົບລົງ ຄົນທັງ ໓ ກໍໄດ້ພາກັນລາສິກຂາ.

---

## ໔

ປິຍະໂຕ ຊາຍະເຕ ໂສໂກ
ປິຍະໂຕ ຊາຍະເຕ ກະຍັງ
ປິຍະໂຕ ວິປປະມຸຕຕັສສະ
ນັຕຖິ ໂສໂກ ກຸໂຕ ກະຍັງ ໑໔໑໔໑

ທີ່ໃດ ມີຄວາມຮັກ ທີ່ນັ້ນ ມີໂສກ, ທີ່ໃດມີ ຄວາມຮັກ ທີ່ນັ້ນ ມີ ກັຍ. ເມື່ອບໍ່ມີຄວາມຮັກເສັຍແລ້ວ ຄວາມໂສກ ແລະ ກັຍ ກໍບໍ່ມີ.

# ເຣື່ອງ ອັຎຎະຕຣະກຸຏຸມພີ

ພຣະບໍຣົມສາສດາ ທຣົງຜາຣົພ ກຸຏຸມພີ ຄົນຮັ່ງມີຜູ້ນຶ່ງ. ເມື່ອລູກຊາຍຕາຍແລ້ວ ລາວບໍ່ສາມາຖທີ່ຈະອົດກັ້ນ ຄວາມທຸກຂ໌ຄວາມໂສກນຳລູກນັ້ນໄດ້. ລາວບໍ່ມີທາງອອກ ແຕ່ລະມື້ແຕ່ລະວັນ ກໍໄປຮ້ອງໄຫ້ຮ່ຳໄຮຫາລູກຢູ່ທີ່ປ່າຊ້າ ພຣະສາສດາ ໄດ້ທອດພຣະເນຕຣ໌ເຫັນອຸປນິສັຍໂສດາປັຕຕິຜົລ ຈຶ່ງໄດ້ສເດັຈໄປຍັງເຮືອນຂອງ ກຸຏຸມພີ ຄົນຮັ່ງມີ ຜູ້ນັ້ນ. ທຣົງສແດງຊຶ່ງພຣະຘັມມີກຖາ ເຄື່ອງຣະງັບຄວາມໂສກ ແລ້ວຈຶ່ງຕຣັສພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມານັ້ນ. ກຸຏຸມພີ ຜູ້ນັ້ນ ກໍໄດ້ບັຣລຸ ໂສດາປັຕຕິຜົລ.

---

## ໕

ເປມະໂຕ ຊາຍະເຕ ໂສໂກ
ເປມະໂຕ ຊາຍະເຕ ກະຍັງ
ເປມະໂຕ ວິປປະມຸຕັສສະ
ນັຕຖິ ໂສໂກ ກຸໂຕ ກະຍັງ ໒໔໑໓໒

ທີ່ໃດ ມີຄວາມຮັກ ທີ່ນັ້ນແລ ມີຄວາມໂສກ, ທີ່ໃດມີຄວາມຮັກ ທີ່ນັ້ນແລ ມີກັຍ, ເມື່ອບໍ່ມີຄວາມຮັກເສັຍແລ້ວ ໂສກ ກັຍ ກໍບໍ່ມີເລີຍ.

# ເຣື່ອງ ນາງວິສາຂາອຸບາສິກາ

ພຣະບໍຣົມສາສດາ ທຣົງຜາຣົພ ນາງວິສາຂາອຸບາສິກາ ໄດ້ຕັ້ງ ນາງສຸທັຕຕິ ຊຶ່ງເປັນຘິດາຂອງລູກຊາຍ ໃຫ້ທຳໜ້າທີ່ເປັນ ໄວຍາວັຈກຣ ແກ່ພຣະຠິກຂຸສົງຆ໌ ຢູ່ທີ່ເຮືອນແຫນຕົນ. ຄັນວ່າ ນາງສຸທັຕຕິ ທຳກາລະກິຣິຍາຕາຍໄປແລ້ວ ນາງວິສາຂາ ບໍ່ອາຈທີ່ຈະອົດກັ້ນຄວາມໂສກເສົ້າໄວ້ໄດ້ ຈຶ່ງຮ້ອງໄຫ້ ໄປເຝົ້າພຣະສາສດາ ພຣະອົງຄ໌ ຈຶ່ງສແດງພຣະຘັມມິກະຖາ ເຄື່ອງຣະງັບຄວາມໂສກ. ແລ້ວຈຶ່ງຕຣັສ ພຣະຄາຖາດັ່ງທີ່ໄດ້ຍົກຂຶ້ນມາແລ້ວນັ້ນ.

---

໖

ຣະຕິຍາ ຊາຍະເຕ ໂສໂກ
ຣະຕິຍາ ຊາຍະເຕ ຠະຍັງ
ຣະຕິຍາ ວິປປະມຸຕຕັສສະ
ນັຕຖິ ໂສໂກ ກຸໂຕ ຠະຍັງ ຯ໔໑໔ຯ

ທີ່ໃດ ມີຄວາມຍິນດີ ຊອບໃຈ ທີ່ນັ້ນ ມີໂສກ, ທີ່ໃດມີຄວາມຍິນດີຊອບໃຈທີ່ນັ້ນມີຠັຍ ເມື່ອບໍ່ມີຄວາມຍິນດີຊອບໃຈແລ້ວ ທີ່ນັ້ນບໍ່ມີໂສກ ຠັຍ

# ເຣື່ອງ ກສັຕຣິຍ໌ ລິຈຈວີ

ພຣະບໍຣົມສາສດາ ທຣົງຜາຣົພ ກສັຕຣິຍ໌ລິຈຈວີ ທີ່ປະດັບພຣະອົງຄ໌ ດ້ວຍເຄື່ອງ ສັພພາກຣຕວິກູສິຕ ວິຈິຕບັຣຈົງທີ່ສວຍງາມຍິ່ງ (ເຄື່ອງທຣົງ) ຕົ້ນຍົສ ເໝືອນກັບວ່າ ເທພດາ ໃນດາວດຶງສາພິກົພ ສເດັຈປະພາສຣາຊອຸທະຍານ. ໄດ້ມີການຍາດແຍ່ງ ຜູ້ຍິງນຄຣໂສເພຕີນາງນຶ່ງ. ຄວາມຂັດແຍ່ງກັນນັ້ນ ມີເຖິງຂັ້ນ ປະຫັຕປະຫາຣກັນ ຢ່າງນອງເລືອດ.

ຄັ້ງນັ້ນ, ພຣະສາສດາ ພ້ອມດ້ວຍ ພຣະກິກຂຸສົງຄ໌ ສເດັຈທ່ຽວບິຕທບາຕ ໃນເມືອງເວສາລີ. ພໍພຣະອົງຄ໌ ທອດພຣະເນຕຣ໌ ເຫັນແລ້ວຈຶ່ງ ຕຣັສພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາຂ້າງຕົ້ນນີ້.

---

໗

ກາມະໂຕ ຊາຍະເຕ ໂສໂກ
ກາມະໂຕ ຊາຍະເຕ ກະຍັງ
ກາມະໂຕ ວິປປະມຸຕຕັສສະ
ນັຕຖິ ໂສໂກ ກຸໂຕ ກະຍັງ ໆ໒໑໕ໆ

ທີ່ໃດ ມີຄວາມມັກໃຄ່ ທີ່ນັ້ນ ທຽນຍ່ອມ ມີຄວາມໂສກ, ທີ່ໃດມີຄວາມມັກໃຄ່ ທີ່ນັ້ນ ທຽນຍ່ອມມີກັຍ. ທີ່ໃດ ບໍ່ມີຄວາມມັກໃຄ່ ເສັຍແລ້ວ

ທີ່ນັ້ນ ທາງນຍ່ອມ ຄວາມໂສກ ແລະ ກັຍ ກໍບໍ່ມີ.

ກຼ

ຕັຕຫາຍະ ຊາຍະເຕ ໂສໂກ
ຕັຕຫາຍະ ຊາຍະຍະເຕ ກະຍັງ
ຕັຕຫາຍະ ວິປປະມຸຕຕັສສະ
ນັຕຖິ ໂສໂກ ກຸໂຕ ກະຍັງ ໆ໒໑໕ໆ

ທີ່ໃດ ມີການທະເຍີ້ ທະຍານຢາກ ທີ່ນັ້ນ ທາງນຍ່ອມມີໂສກ, ທີ່ໃດ ມີຄວາມທະເຍີ້ ທະຍານຢາກ ທີ່ນັ້ນ ທາງນຍ່ອມ ມີກັຍ. ເມື່ອໃດ ບໍ່ມີຄວາມ ທະຍານຢາກເສັຍແລ້ວ ທີ່ນັ້ນ ທາງນຍ່ອມ ບໍ່ມີໂສກ ແລະ ບໍ່ມີກັຍດ້ວຍ.

## ເຣື່ອງ ອັຍຍະຕຣະພຣາຫມນ໌

ພຣະບໍຣົມສາສດາ ທຣົງຜາຣົພ ພຣາຫມນ໌ຜູ້ນຶ່ງ ທີ່ເປັນຄົນ ຂີ້ຖີ່ໜຽວແໜ້ນ ໄປທຳນາຢູ່ໃນທີ່ແຫ່ງນຶ່ງ. ພຣະສາສດາ ທຣົງທອດພຣະ ເນຕຣ໌ເຫັນ ໂສດາປັຕຕິຜົລ ຂອງລາວ ຈຶ່ງໄດ້ສເດັຈໄປສົນທະນາປາສັຍ ກັນ ກັບລາວຢູ່ບ່ອຍ ໆ ຈົນວ່າລາວ ມີຄວາມນັບຖື ເປັນສະຫາຍ. ໃນມື້ນຶ່ງ ລາວກ່າວວ່າ ພຣະໂຄດົມ ຜູ້ຈເຣີຍ ຖ້າວ່າ ເຮົາໄດ້ເຂົ້າປາ ບໍຣິບູຣ໌ແລ້ວ ເຮົາຈະແບ່ງໃຫ້ ພຣະສະຫາຍແດ່. ໃນຄືນມື້ນຶ່ງ ມີຝົນຕົກໜັກ ໄດ້ເຮັດໃຫ້

ເຂົ້າຂອງລາວ ເສັຍຫາຍໝົດ. ຕື່ນເຊົ້າມາ ເມື່ອລາວໄປເຫັນ ກໍມີຄວາມເສັຍໃຈ ໂສກເສົ້າເປັນຢ່າງຍິ່ງ. ພຣະສາສດາ ຈຶ່ງສເດັຈໄປທີ່ບ້ານຂອງລາວ ແລ້ວຈຶ່ງໄດ້ຕຣັສ ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາໃນເບື້ອງຕົ້ນນີ້.

---

ໜ

ສີລະທັສສະນະສັມປັນນັງ
ທັມມັຕຖັງ ສັຈຈະວາທີນັງ
ອັຕຕະໂນ ກັມມະກຸພພານັງ
ຕັງ ຊະໂນ ກຸຣຸເຕ ປິຍັງ ໑໒໑໗໑

ຜູ້ທີ່ ປະພຶຕຣ໌ດີ ມີຄວາມເຫັນ ຖືກຕ້ອງ ເປັນຜູ້ຢູ່ໃນທຳນອງຄອງທັມມ໌ ເວົ້າຈາ ແຕ່ຄຳສັຕຍ໌ຄຳຈິງ ປະຕິບັຕິໜ້າທີ່ຂອງຕົນ ສົມບູຣຕ໌. ຄົນທັງຫລາຍ ຍ່ອມເທີດທູນ ບູຊາ ດ້ວຍຄວາມຮັກ.

# ເຣື່ອງ ປັຝຈະສຕທາຣົກ

ພຣະບໍຣົມສາສດາ ທຣົງຜາຣົພ ທາຣົກ ໕໐໐ ຄົນ ໄດ້ພາກັນໄປຫລິ້ນໃນສວນແຫ່ງນຶ່ງ ໃນວັນມຫໍຣະສົພ ແລະໄດ້ພົບພໍ້ກັບພຣະສາສດາ

ພ້ອມດ້ວຍ ກິກຂຸສົງໝ໌ ໃນກາງທາງ. ຄັນພວກເຂົາເຈົ້າ ແນມເຫັນພຣະມຫາກັສປະ ເຖຣະ ກໍມີຄວາມເຫລື້ອມໃສ ຖວາຍຂນົມຂອງຕົນ ໆ ແກ່ພຣະມຫາກັສປະເຖຣະເຈົ້າ. ພຣະກິກຂຸ ທັງຫລາຍ ພາກັນຕິຕຽນວ່າທາຣິກາ ເຫລົ່ານັ້ນ ທໍາບຸຌເພາະເຫັນແກ່ໜ້າ. ພຣະສາສດາ ຈຶ່ງໄດ້ທຣົງສແດງພຣະທັມມິກະຖາ ແລ້ວຕຣັສ ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາຂ້າງເທິງນີ້ ແລະຍັງທາຣິກາ ເຫລົ່ານັ້ນ ໃຫ້ສໍາເຣັຈໂສດາປັຕຕິຜົລ.

---

## ໑໐

ຉັນທະຊາໂຕ ອະນັກຂາເຕ
 ມະນະສາ ຈະ ຜຸໂຕ ສິຍາ
ກາເມສຸ ອັປປະຝິພັທລະຈິຕໂຕ
 ອຸທລັງໂສໂຕຕິ ວຸຈຈະຕິ ໒໔໑໘໒

ພຣະອນາຄາມີ ຜູ້ທີ່ ມີໃຈຝັກໄຝ່ໃນ ພຣະນິພພານ ຄືບັຣລຸມັຄຄ໌ຜົລເບື້ອງຕ່ໍາ (ໂສດາປັຕຕິ, ສະກະທາຄາມີ, ອະນາຄາມີ) ໝົດປຝິພັທຣັກໄຄ່ໃນກາມຈຶ່ງໄດ້ຮັບນາມວ່າ "ຜູ້ທວນກະແສ" ບໍ່ກັບຄືນມາສູ່ໂລກນີ້ອີກ

# ເຣື່ອງ ພຣະອນາຄາມິເຖຣະ

ພຣະບໍຣົມສາສດາ ທຣົງຜາຣົພ ພຣະອນາຄາມິເຖຣະ ອົງຄ໌ນຶ່ງ ບັນດາ ສິສຍານຸສິສຍ໌ ຂອງເພິ່ນຖາມເຖິງຄຸຕວິເສສ ທີ່ມີຢູ່ໃນເພິ່ນ. ພຣະເຖຣະມີຄວາມລະອາຍຍ້ອນຄິດວ່າ ແມ່ນແຕ່ ຄຣືຫັສຖ໌ ກໍສໍາເຣັຈອນາຄາມິຜົລໄດ້ ເມື່ອເຮົາໄດ້ ພຣະອຣຫັຕແລ້ວ ຈຶ່ງຈະບອກພວກສິສ ໃນພາຍຫລັງ. ພຣະເຖຣະເຈົ້າ ຍັງບໍ່ທັນບອກ ໄດ້ທໍາກາລະກິຣິຍາເສັຍກ່ອນ ແລະ ໄດ້ໄປເກີດໃນສຸທລາວາສເທວໂລກ. ບັນດາສິສຍານຸສິສ ຂອງເພິ່ນໄດ້ຮ້ອງໄຫ້ໄປເຝົ້າ ພຣະສາສດາ. ພຣະອົງຄ໌ທຣົງສແດງພຣະລັມມິກຖາ ເຄື່ອງຣະງັບໂສກແລ້ວຈຶ່ງຕຣັສພຣະຄາຖາ ທີ່ຍົກມາຂ້າງເທິງນີ້ ຍັງກິກຂຸເຫລົ່ານັ້ນໃຫ້ສໍາເຣັຈໂສດາປັຕຕິຜົລ.

---

## ໑໑

ຈິຣັປປະວາສີ ປຸຣິສັງ
ທູຣະໂຕ ໂສຕຖິມາຄະຕັງ
ຌາຕິມິຕຕາ ສຸຫັຊຊາ ຈະ
ອະກິນັນທະຕິ ອາຄະຕັງ ໆ໔໑໙ໆ

ບຸຣຸສ ຜູ້ທີ່ຈາກຍາຕິ ມິຕຣ໌ໄປໄກ ເປັນເວລາດົນນານ ເມື່ອກັບມາ ດ້ວຍຄວາມສວັສດີ ຍາຕິມິຕຣ໌ ກໍມີຄວາມດີອົກດີໃຈຕ້ອນຮັບ.

## ໑໒

ຕະເຖວະ ກະຕະປຸຍຍັມປິ
ອັສມາ ໂລກາ ປະຣັງ ຄະຕັງ
ປຸຍຍານິ ປະຕິຄັຄຄັນຕິ
ປິຍັງ ຍາຕີວະ ອາຄະຕັງ ໆ໒໒໐ໆ

ບຸຍທີ່ຄົນຜູ້ທຳໄວ້ ໃນໂລກນີ້ ທຽນຍ່ອມ ຕ້ອນຮັບ ຜູ້ທີ່ຈາກໄປ ເໝືອນຍາຕິທີ່ຮັກ ມາຈາກທີ່ໄກ ຝູງຊົນຍ່ອມເຕັມໃຈຕ້ອນຮັບ.

## ເຣື່ອງ ນັນທິຍະ

ພຣະບໍຣົມສາສດາ ທຣົງປາຣົພ ນັນທິຍະ ບຸຣຸສ ທີ່ເປັນບຸຕຣ໌ ໃນ ຕະກູລທີ່ເຫລື້ອມໃສໃນພຣະພຸທສາສນາ ເຂົາເປັນອນຸຊາຕບຸຕຣ໌ ດຳເນີນ ຕາມຮອຍ ມາຣດາບິດາ. ຄັນເມື່ອ ມາຣດາບິດາ ທຳກາລະກິຣິຍາ ຕາຍໄປ ແລ້ວ ກໍໄດ້ເປັນ ມຫາທານບໍດີ ຖວາຍທານ ແກ່ພຣະກິກຂຸສົງຄ໌ ເປັນການ ໃຫຍ່ ແລະ ໃຫ້ທານແກ່ຄົນ ອນາຖາຍາກຈົນດ້ວຍ ແລະສ້າງສາລາ ໔ ມຸຂ

໔ ຫລັງ ທີ່ປ່າ ອິສິປຕນະມຫາວິຫາຣ ພ້ອມດ້ວຍເຄື່ອງເສນາສນະ ບໍຣິ-
ຂາຣ ຖວາຍແກ່ສົງฆ໌ ອັນມີ ພຣະພຸທທເຈົ້າ ເປັນປະທານ ແລ້ວຫລັ່ງນ້ຳ
ທັກຂິໂນທົກ ຕົກລົງເໜືອ ພຣະຫັດຖ໌ ຂອງ ພຣະຕຖາຄົຕເຈົ້າ.

ຂຕະນັ້ນ, ຜາສາທທິພຍ໌ ທີ່ສຳເຣັຈແລ້ວດ້ວຍແກ້ວ ໆ ປະການທີ່
ໃຫຍ່ ໑໒ ໂຍຊນ໌ ສູງ ໑໐໐ ໂຍຊນ໌ ເຕັມໄປດ້ວຍໝູ່ເທພທິດາ ກໍເກີດ
ຂຶ້ນໃນເທວໂລກ. ວັນນຶ່ງ, ພຣະມຫາໂມຄຄັລລານະ ເຖຣະ ໄດ້ທ່ຽວຈາຣິກ
ໃນເທວໂລກ ເຫັນຜາສາທທິພຍ໌ນັ້ນ ຈຶ່ງຖາມເທພບຸຕຣ໌ ທັງຫລາຍວ່າ :
ນັນທິຍຜາສາທທິພຍ໌ ຫລັງນີ້ເປັນຂອງໃຜ ? ເທພບຸຕຣ໌ ຈຶ່ງຮຽນວ່າຂອງ
ນັນທິຍະ. ຝ່າຍໝູ່ເທພທິດາ ທີ່ເຝົ້າຄອຍຢູ່ທີ່ຜາສາທນັ້ນ ຈຶ່ງໄດ້ສັ່ງກັບພຣະ
ໂມຄຄັລລານະເຖຣະ ໃຫ້ຊ່ວຍບອກ ນັນທິຍະ ຮີບມາໃນທີ່ນີ້ໂດຍໄວເຖີດ.
ຄັນພຣະໂມຄຄັລລານເຖຣະ ກັບຈາກເທວໂລກແລ້ວ ຈຶ່ງເຂົ້າເຝົ້າທູລເຣື່ອງ
ນັ້ນ ແດ່ ພຣະສາສດາ. ພຣະອົງຄ໌ຕຣັສ ພຣະຄາຖາດັ່ງທີ່ຍົກຂຶ້ນມາໃນຂ້າງ
ຕົ້ນນັ້ນນັ້ນ ທັ້ນແລ.

---

ຈົບ ປິຍວັຄຄ໌ ທີ່ ໑໖

# ໂກລວັຄຄ໌ ທີ່ ໑໗
## ໝວດ ວ່າດ້ວຍຄວາມໂກລ

໑

ໂກລັງ ຊະເຫ ວິປປະຊະເຫຍຍະ ມານັງ
ສັງໂຍຊະນັງ ສັພພະມະຕິກກະເມຍຍະ
ຕັງ ນາມະຣູປັສມິມະສັຊຊະມານັງ
ອະກິຍຈະນັງ ນານຸປະຕັນຕິ ທຸກຂາ ໑໔໑໑

ຄວນລະເວັ້ນຈາກຄວາມໂກລຮ້າຍ ແລະ ມານະ ກາຣຖືຕົວ, ຈົ່ງເອົາຊນະກິເລສ ເຄື່ອງຜູກມັດທຸກຢ່າງ, ຜູ້ທີ່ບໍ່ຕິດຢູ່ໃນນາມຣູປ ໝົດຊິ່ງກິເລສແລ້ວ ທຸກຂ່ອມ ຄາດແຄ້ວຈາກຄວາມທຸກຂ໌.

## ເຣື່ອງ ນາງໂຣຫິຕີຂັຕຕິຍກັຍຍາ

ພຣະບໍຣົມສາສດາ ທຣົງຜາຣົພ ນາງໂຣຫິຕີຂັຕຕິຍກັຍຍາ ເປັນກນິຍຖາກິຕີ (ນ້ອງສາວ) ຂອງພຣະອນຸຣຸທທເຖຣະ ພຣະນາງເປັນໂຣຄເຮື້ອນ ມີຄວາມລະອາຍ ຈຶ່ງລີ້ພຣະອົງຄ໌ຢູ່ ບໍ່ໃຫ້ໃຜເຫັນ. ພຣະເຖຣະ ໄປ

ແນະນຳໃຫ້ບໍຣິຈາຄເຄື່ອງປະດັບ ເພື່ອສ້າງສາລາ ສຳຣັບນັ່ງອາສັຍ ໂຣຄນັ້ນຈຶ່ງຈະຫາຍ. ນາງກໍກະທຳຕາມ. ຄັນສ້າງແລ້ວ ຈຶ່ງນິມົນຕ໌ ພຣະຠິກຂຸສົງຆ໌ ມີພຣະພຸທຘເຈົ້າເປັນປະຘານ ຖວາຍຠັຕຕາຫາຣ ເປັນການສລອງ. ພຣະຜູ້ມີພຣະຠາຄເຈົ້າ ຣັບສັ່ງໃຫ້ຫານາງ ໂຣຫິຓີ ອອກມາ ແລ້ວຕຣັສເທສນາຊຶ່ງບຸພພກັມມ໌ ໃນຄັ້ງ ອະດີຕກາລ ມີດັ່ງນີ້.

"ນາງໂຣຫິຓີນັ້ນ ໄດ້ເປັນ ມເຫສີຂອງພຣະເຈົ້າ ພາຣາຓສີ ມີຄວາມອິສສາ ໃນນາງສນົມ ນາງນຶ່ງ ຄິດຈະທຳໃຫ້ເສັຍໂສມ ຈຶ່ງເອົາຢາພິສໄປເກາະໄວ້ ບົນທີ່ນັ່ງ ທີ່ນອນຂອງນາງ ແລ້ວໂຣຍໃສ່ສີສະຂອງນາງ ຄືກັບວ່າເຮັດຫລິ້ນ. ນາງສນົມນັ້ນ ກໍຄັນເກົາເປັນຕຸ່ມໄປໝົດຕົນຕົວ. ດ້ວຍກັມມ໌ອັນນັ້ນຕາມມາໃຫ້ຜົລ. ນາງໂຣຫິຓີ ຈຶ່ງເປັນໂຣຄເຮື້ອນ.

ໃນທີ່ສຸດ ແຫ່ງອດີຕນິທານ ພຣະພຸທຘອົງຄ໌ ຈຶ່ງຕຣັສພຣະຄາຖາດັ່ງທີ່ຍົກຂຶ້ນມາ ໃນຂ້າງເທິງນີ້.

---

## ໔

ໂຍ ເວ ອຸປປະຕິຕັງ ໂກຘັງ
ຣະຖັງ ຠັນຕັງວະ ຘາຣະເຍ

ຕະມະຫັງ ສາຣະຖິງ ພຣູມິ
ຣັສມີຄາໂຫ ອິຕະໂຣ ຊະໂນ ໑໔໔໑

ຜູ້ໃດ ຍັບຍັ້ງໄວ້ຊຶ່ງຄວາມໂກລໄດ້ ໃນທັນທີ ເໝືອນດັ່ງວ່ານາຍສາຣະຖີ ຫຍຸດຣົຖ ທີ່ກຳລັງແລ່ນຢູ່ນັ້ນໄວ້ໄດ້. ຜູ້ນັ້ນແລ ທີ່ເຮົາເອີ້ນໄດ້ ວ່າ "ນາຍສາຣຖີ" ສ່ວນຄົນນອກນີ້ ໄດ້ແຕ່ພຽງຊື່ວ່າ "ຜູ້ຖືເຊືອກ".

# ເຣື່ອງ ອັຝຝຕຣະກິກຂຸ

ພຣະບໍຣົມສາສດາ ທຣົງຜາຣົພ ພຣະກິກຂຸ ອົງຄ໌ນຶ່ງ. ໃນສມັຍທີ່ພຣະອົງຄ໌ ຍັງບໍ່ທັນບັນຍັດ ສິກຂາບົທ ຫ້າມການທຳລາຍຕົ້ນໄມ້. ກິກຂຸອົງຄ໌ໃດ ຢາກຈະເຣັດເສນາສນະທີ່ຢູ່ອາສັຍ ໄປເຫັນຕົ້ນໄມ້ຄິດວ່າຈະຕັດເອົາມາເຣັດກຸຜິ ແຕ່ຕົ້ນໄມ້ຕົ້ນນັ້ນ ມີເທວດາລູກອ່ອນ ອາສັຍຢູ່ມາອ້ອນວອນເພິ່ນບໍ່ໃຫ້ຕັດ ເພິ່ນກໍບໍ່ຟັງ ເພິ່ນຕັດຈົນວ່າມີດພ້າເພິ່ນຟັນຖືກແຂນຂອງລູກຂອງເທວດາຂາດ ເທວດານັ້ນໂກລເຄືອງ ຄິດຈະຂ້າ ກິກຂຸອົງຄ໌ນັ້ນເສັຍ ແຕ່ກັບມີສຕິຍັບຍັ້ງໄວ້ກ່ອນ ແລະຄິດວ່າ ກິກຂຸອົງຄ໌ນັ້ນ ເປັນຜູ້ມີສີລ ຖ້າວ່າຈະຂ້າ ກໍຈະຕ້ອງໄດ້ໄປທົນທຸກຂ໌ໃນອະບາຍ ແລະເທວດາອົງຄ໌ອື່ນກໍຈະເອົາເປັນຕົວຢ່າງ. ອີກຢ່າງພຣະກິກຂຸ ກໍເປັນຜູ້ມີເຈົ້າຂອງເຮົາຄວນນຳເອົາເຣື່ອງ

ນີ້ເຂົ້າໄປຂາບທູລ ພຣະສາສດາ. ຄິດແລ້ວກໍຣ້ອງໄຫ້ໄປເຝົ້າພຣະສາສດາ ທູລເຫຕຸກາຣຕ໌ນັ້ນແດ່ພຣະອົງຄ໌. ພຣະສາສດາ ທຣົງສແດງພຣະສັມມີກະຖາ ແລ້ວຕຣັສພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມານັ້ນ ເຮັດໃຫ້ເທວດານັ້ນ ສໍາເຣັຈ ໂສດາປັຕຕິຜົລ ແລ້ວທຣົງປະທານຕົ້ນໄມ້ ທີ່ຢູ່ໃກ້ກັບພຣະຄັນລກຸຜີນັ້ນໃຫ້ ເທວດານັ້ນຢູ່.

*(ເຫຕຸກາຣຕ໌ ດັ່ງກ່າວນີ້ໄດ້ເກີດຂຶ້ນ ໃນຕົ້ນພຸທສກາລ ກ່ອນພຣະ ພຸທສເຈົ້າ ທຣົງບັຍຍັຕິ ສິກຂາບົທ ທີ່ຫ້າມກິກຂຸ ທໍາລາຍພືຊຊງວ)*

---

ໝ

ອັກໂກເລນະ ຊິເນ ໂກລັງ
ອະສາລຸງ ສາລຸນາ ຊິເນ
ຊິເນ ກະທະຣິຍັງ ທາເນນະ
ສັຈເຈນາລີກະວາທີນັງ ໑໔໔໑

ຄວນເອົາຊະນະຄວາມໂກລຣ້າຍ ດ້ວຍຄວາມບໍ່ໂກລຣ້າຍຕອບ, ຄວນ ເອົາຊະນະຄວາມໂກລຣ້າຍ ດ້ວຍຄວາມດີ, ຄວນເອົາຊະນະຄົນຂີ້ຖີ່ ດ້ວຍກາຣ ໃຫ້, ຄວນເອົາຊະນະຄົນທີ່ເວົ້າ ແຫລວໄຫລໄລເລ ໂດຍທີ່ບໍ່ມີຄວາມຈິງນັ້ນ ດ້ວຍຄວາມສັຕຍ໌ ຄວາມຈິງ.

# ເຣື່ອງ ນາງອຸຕຕຣາອຸບາສິກາ

ໃນກາລະຄັ້ງນຶ່ງ ພຣະບໍຣົມສາສດາ ທຣົງຜາຣົພ ນາງອຸຕຕຣາອຸບາ-ສິກາ ຜູ້ເປັນໂສດາບັນ ທີ່ເປັນລິດາຂອງປຸຕຕະເສຍກີ ໄດ້ສາມີທີ່ເປັນບຸຕຣ໌ຂອງເສຍກີ ໃນນຄຣຣາຊຄຣິຫ໌. ບຸຕຣ໌ຂອງເສຍກີຜູ້ນັ້ນ ເປັນມິຈສາທິຍກີດ້ວຍເຫຕຸນີ້ ນາງອຸຕຕຣາຈຶ່ງບໍ່ໄດ້ທຳທານແກ່ ພຣະກິກຂຸຕາມຄວາມປະສົງຄ໌ຈຶ່ງໄປຈ້າງ ນາງສິຣິມາ ທີ່ເປັນຍິງ ນຄຣໂສເພຕີ ມາຢູ່ກັບສາມີຂອງຕົນ. ເພື່ອວ່າ ນາງຈະໄດ້ຫລີກອອກໄປທຳກາຣກຸສົລ ຕາມຄວາມປາຖນາຂອງຕົນ. ສ່ວນນາງ ສິຣິມານັ້ນ ໄດ້ໂອກາສ ແລະຄິດທີ່ຈະແຍ່ງທີ່ ເປັນແມ່ເຮືອນໄດ້ທຳຮ້າຍ ກ່າວຮ້າຍ ນາງອຸຕຕຣາ ຕ່າງ ໆ ນາ ໆ ແຕ່ນາງອຸຕຕຣານັ້ນບໍ່ໂກລຮ້າຍຕອບ.

ໃນກາລຕໍ່ມາພາຍຫລັງ ນາງສິຣິມາ ຮູ້ສຶກໂທສຂອງຕົນ ຈຶ່ງເຂົ້າໄປຂໍໂທສ ນາງອຸຕຕຣາ ໆ ໄດ້ນຳຕົວນາງສິຣິມາ ໄປເຝົ້າ ພຣະສາສດາ ທູລຄວາມນັ້ນ ແດ່ ພຣະອົງຄ໌ໃຫ້ທຣົງຊາບ. ພຣະສາສດາ ຈຶ່ງໄດ້ສແດງຊຶ່ງພຣະລັມມີກຖາ ແລ້ວຕຣັສພຣະຄາຖາ ດັ່ງທີ່ຍົກຂຶ້ນມາ ໃນເບື້ອງຕົ້ນນັ້ນໃຫ້ນາງຟັງ ແລະ ນາງ ສິຣິມາ ກໍໄດ້ສຳເຣັຈ ໂສດາປັຕຕິຜົລ.

---

໔

ສັຈຈັງ ກະເຕ ນະ ກຸຊເຊຍຍະ
ທັຊຊາ ອັປປັງປິ ຍາຈິໂຕ
ເອເຕຫິ ຕີຫິ ຖາເນຫິ
ຄັຈເຈ ເທວານະ ສັນຕິເກ ໑໔໔໑

ຄວນກ່າວແຕ່ຄຳສັຕຍ໌ ຄຳຈິງ ເທົ່ານັ້ນ ບໍ່ຄວນໂກລຮ້າຍ ແມ່ນແຕ່ເຂົາຂໍ ສິ່ງຂອງເລັກ ໆ ນ້ອຍ ໆ ກໍຄວນໃຫ້. ດ້ວຍການປະພຶບັຕິ ທັງ ລ ຂໍ້ ທີ່ກ່າວມານີ້ (ຄົນເຮົາ) ກໍອາຈໄປສວັຣຄ໌ໄດ້.

## ເຣື່ອງ ພຣະໂມຄຄັລລານະ ປັຓຫາ

ພຣະບໍຣົມສາສດາ ທຣົງຜາຣົພ ປັຓຫາ ຂອງ ພຣະໂມຄຄັລລານະເຖຣະ ໃນວັນນຶ່ງ ພຣະເຖຣະເຈົ້າໄດ້ທ່ຽວຈາຣິກໄປໃນເທວໂລກ ເພິ່ນໄດ້ຖາມ ໝູ່ເທວດາທີ່ມານມັສການເພິ່ນນັ້ນວ່າ ທ່ານໄດ້ທຳກຸສົລອັນໃດໄວ້ ຈຶ່ງມາໄດ້ສົມບັຕິ ອັນເປັນທິພຍ໌ ເຊັ່ນນີ້ ?

ໝູ່ເທພລິດາ ເຫລົ່ານັ້ນມີຄວາມລະອາຍ ບໍ່ຢາກບອກ ພຣະເຖຣະເຈົ້າ ກໍຈ່າຈີ້ ຈຳໄຊ ໃຫ້ເຂົາເຈົ້າບອກຈົນໄດ້. ເທພລິດາ ບາງອົງຄ໌ຮຽນວ່າ ບໍ່ໄດ້ທຳກຸສົລ ອັນໃດໃຫຍ່ໂຕເທົ່າໃດ ເປັນແຕ່ພຽງຮັກສາສັຈຈະ

ຢ່າງດຽວ. ບາງອົງຄ໌ກໍຮຽນວ່າ ໄດ້ບໍຣິຈາຄວັຕຖຸ ອັນນັ້ນ ອັນນີ້ ແຕ່ພຽງເລັກນ້ອຍ ແລະ ມີບາງອົງຄ໌ ກ່າວວ່າ ບໍ່ໄດ້ກະທຳຫຍັງຫລາຍ ມີພຽງບໍ່ກະທຳຄວາມໂກລຮ້າຍ ເທົ່ານັ້ນ. ຄັນພຣະເຖຣະເຈົ້າ ກັບຈາກເທວໂລກແລ້ວ ຈຶ່ງມາເຝົ້າ ພຣະສາສດາ ທູລຄວາມນັ້ນ ແດ່ ພຣະອົງຄ໌. ພຣະສາສດາ ຈຶ່ງໄດ້ຕຣັສ ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາ ໃນຂ້າງຕົ້ນນີ້.

---

## ໕

ອະຫິງສະກາ ເຍ ມຸນະໂຍ
   ນິຈຈັງ ກາເຍນະ ສັງວຸຕາ
ເຕ ຍັນຕິ ອັຈຈຸຕັງ ຖານັງ
   ຍັຕຖະ ຄັນຕວາ ນະ ໂສຈະເຣ ໆ ໔໔໕ ໆ

ພຣະມຸນີ ຜູ້ເປັນນັກປຣາຊຍ໌ ຜູ້ບໍ່ບຽດບຽນໃຜ ຄວບຄຸມ*ກາຍ*ຢູ່ເປັນນິຈ ທຽນຍ່ອມ ໄປຍັງຖິ່ນ ນິຣັນດຣ ທີ່ສັລຈຣໄປແລ້ວ ຄືເມືອງແກ້ວນິຣະພານ. *ອັນເປັນເມືອງທີ່ຫາຄວາມໂສກເສົ້າບໍ່ມີແລ.*

(໑. ຄວບຄຸມກາຍ ໝາຍເຖິງ ກາຍ, ວາຈາ ແລະ ໃຈດ້ວຍ)

# ເຣື່ອງ ກິກຂຸ ທູລຖາມບັຌຫາ

ພຣະບໍຣົມສາສດາ ທຣົງ ຜາຣົພ ບັຌຫາຂອງ ກິກຂຸ ທັງຫລາຍ ເຣື່ອງໃນເບື້ອງຕົ້ນນັ້ນ ມີຢູ່ວ່າ ນີພຣຫມຕ໌ ແລະ ພຣາຫມຕີ (ຍິງຊາຍ) ໔ ຄົນ ເປັນຊາວເມືອງສາເກຕ. ໃນຊາຕິປາງກ່ອນ ເຄີຍເປັນ ບິດາມາຣດາ ຂອງພຣະຕຖາຄົຕເຈົ້າ ເຖິງ ໕໐໐ ຊາຕິ. ຄັນເມື່ອມາໃນຊາຕິນີ້ ພຣາຫມຕ໌ ແລະ ພຣາຫມຕີ ນັ້ນ ໄດ້ເຫັນ ພຣະຜູ້ມີພຣະກາຄເຈົ້າ ກໍເກີດມີຄວາມຮັກ ເໝືອນບຸຕຣ໌ ຖືຕົນວ່າ ເປັນພຸທສບິດາ ພຸທສມາຣດາ ໄດ້ອາຣາທະນາເຊີນ ສເດັຈ ໃຫ້ໄປຮັບກັຕຕາຫາຣ ທີ່ເຮືອນຂອງຕົນ ຕລອດໄຕຣມາສ. ພຣະ ອົງຄ໌ ໄດ້ປະທານທັມມິກຖາ ໃຫ້ພຣາຫມຕ໌ ທັງ ໔ ໄດ້ບັຣລຸມັຄຄ໌ຜົລຈົນ ເຖິງ ອຣຫັຕ ແລ້ວນິພພານ.

ພຣະກິກຂຸ ທັງຫລາຍ ທີ່ບໍ່ຊາບຕົ້ນເຫຕຸ ຈຶ່ງທູລຖາມສັມປຣາຍກົພ ຂອງ ພຣາຫມຕ໌ ແລະ ພຣາຫມຕີ ທັງສອງ ພຣະອົງຄ໌ ຈຶ່ງໄດ້ຕຣັສພຣະ ຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາ ໃນເບື້ອງຕົ້ນນັ້ນ ໃຫ້ຟັງ.

---

໖

ສະທາ ຊາຄະຣະມານານັງ
ອະໂຫຣັຕຕານຸສິກຂິນັງ

ນິພພານັງ ອະສິມຸຕຕານັງ
ອັຍກັງ ຄັຈຈັນຕິ ອາສະວາ ໆ໔໔ຜົໆ

ອັນວ່າ ບຸຄຄົລ ຜູ້ທີ່ຕື່ນຢູ່ຕລອດເວລາ ເອົາໃຈໃສ່ໃນການສຶກສາ ທຸກທິພາຣາຕຣິກາລ, ມີໃຈນ້ອມໄປສູ່ ພຣະນິພພານ, ອາສະວະ ຂອງທ່ານ ທງູນຍ່ອມ ອັນຕຣະລານ ຫາຍສາບສູນໄປ.

# ເຣື່ອງ ນາງປຸຕຕະທາສີ

ພຣະບໍຣົມສາສດາ ທຣົງປາຣົພ ນາງທາສີ ຂອງເສຕຖີ ໃນພຣະ ນຄຣຣາຊຄຣິຫ໌ຊື່ວ່າ ນາງປຸຕຕະ. ໃນວັນນຶ່ງ ເສຕຖີ ໃຊ້ໃຫ້ນາງ ປຸຕຕະ ທຳການຊ່ອມເຂົ້າ (ຕຳເຂົ້າ) ທັງວັນທັງຄືນ ກໍບໍ່ໝົດ. ຄັນຕົກເຖິງກາງຄືນ ຈຶ່ງໄດ້ໄຕ້ໄຟຊ່ອມເຂົ້າ ຕົນຕົວກໍຊຸ່ມໄປດ້ວຍເຫື່ອ ຈຶ່ງອອກໄປນັ່ງຕາກລົມ ຢູ່ຂ້າງນອກ ເພື່ອເຊົາເມື່ອຍ ແນມໄປທາງພູເຂົາ ຄິຊຸຊະກູຜ ກໍເຫັນແສງປະ ທີປ ຂອງ ພຣະກິກຂຸສົງຄ໌ ນຽງ ໆ ຢູ່ ຈຶ່ງຄຶດວ່າ ເຮົາເປັນຄົນທຸກຂ໌ຍາກ ເຂັນໃຈ ບໍ່ໄດ້ຫລັບບໍ່ໄດ້ນອນໃນເວລານີ້ ສ່ວນພຣະກິກຂຸສົງຄ໌ ທັງຫລາຍ ກໍບໍ່ໄດ້ນອນ ຍ້ອນເຫຕຸໃດເດໜໍ ຈຶ່ງບໍ່ໄດ້ຫລັບໄດ້ນອນ. ອັນນີ້ ຣອຍວ່າ ຄວາມບໍ່ຜາສຸຂ ອາຈມີແກ່ ພຣະຜູ້ເປັນເຈົ້າ ທັງຫລາຍ. ຄັນຕື່ນເຊົ້າຂຶ້ນມາ ນາງກໍ ເອົາຣຳອ່ອນມາເຮັດເປັນແປ້ງເຂົ້າຈີ່ ເມື່ອຈີ່ສຸກແລ້ວ ກໍເອົາຫໍ່ໃສ່ພົກ ຜ້າ ຍ່າງໄປຕັກນ້ຳ ຄຶດວ່າຈະເອົາໄປກິນແກ້ຫິວໃນກາງທາງ. ໃນເວລາເຊົ້າ

ນັ້ນ ກໍໄດ້ໄປພົ້ ພຣະສາສດາ ອັນມີ ພຣະອານົນທ໌ຕິດຕາມ ກໍເກີດມີຄວາມ
ເຫລື້ອມໃສ ຈຶ່ງຄວ້າເອົາແປ້ງເຂົ້າຈີ່ອອກຈາກພົກ ນ້ອມຖວາຍພຣະສາສດາ
ພຣະສາສດາ ກໍທຣົງຮັບເອົາ ແລ້ວກໍທຣົງອະນຸໂມທະນາ.

ນາງປຸຕຕະທາສີ ຈຶ່ງມາຮໍາເພິງວ່າ ພຣະອົງຄ໌ຄົງຈະບໍ່ສເວີຍ. ພຣະ
ສາສດາ ທຣົງຊາບອາຮຈິຕຂອງນາງ ຈຶ່ງປະທັບນັ່ງສເວີຍໃຫ້ນາງເຫັນ. ໃນ
ເມື່ອສໍາເຣັຈກັຕຕກິຈແລ້ວ ພຣະອົງຄ໌ ຈຶ່ງໄດ້ຮຽກ ນາງປຸຕຕະມາ ຮັບສັ່ງ
ວ່າ ເມື່ອຄືນນີ້ ເຈົ້ານຶກວ່າ ສາວົກຂອງເຮົານັ້ນເປັນທຍັງ. ນາງກໍທູລຕາມທີ່
ນາງຄິດນັ້ນ ແດ່ ພຣະສາສດາ ພຣະອົງຄ໌ຈຶ່ງໄດ້ຕຣັສ ພຣະຄາຖາ ດັ່ງທີ່ຍົກ
ຂຶ້ນມານັ້ນ.

---

ໆ

ໄປຮາຕະເນຕັງ ອະຕຸລະ
　　ເນຕັງ ອັຊຊຸຕະນາມິວະ
ນິນທັນຕິ ຕຸຕຫີມາສີນັງ
　　ນິນທັນຕິ ພະຫຸການີນັງ
ມິຕະກາຕິມປິ ນິນທະຕິ
ນັຕຖິ ໂລເກ ອະນິນທິໂຕ ໆ໑໔໗ໆ

ດູຣາ "ອະຕຸລ ເອີຍ"ອັນວ່າ ເຣື້ອງສັບສໍນິນທານີ້ ມີມາຕັ້ງແຕ່ປະຖົມບູຣົມກັປພຸ້ນ ບໍ່ແມ່ນຈະເກີດມີຂຶ້ນ ໃນປັຈຈຸບັນນີ້ດອກ. ນັ່ງຢູ່ເສີຍ ໆ ເຂົາກໍນິນທາ, ເວົ້າຫລາຍເຂົາກໍນິນທາ, ເວົ້າໜ້ອຍເຂົາກໍນິນທາ. ບໍ່ມີໃຜດອກນ່າໃນໂລກນີ້ ທີ່ຈະບໍ່ຖືກນິນທາ.

## ໗໘

ນະ ຈາຫຸ ນະ ຈະ ກະວິສສະຕິ
ນະ ເຈຕະຣະຫິ ວິຊຊະຕິ
ເອກັນຕັງ ນິນທິໂຕ ໂປໂສ
ເອກັນຕັງ ວາ ປະສັງສິໂຕ ໆ໒໗໘ໆ

ບໍ່ວ່າ ໃນອະດີຕ ໃນປັຈຈຸບັນ ທັງທີ່ ໃນອະນາຄົຕດ້ວຍ ຄົນທີ່ຖືກສັຣເສີນ ຢ່າງດຽວ ຫຣືວ່າ ຄົນຈະຖືກນິນທາ ແຕ່ພຽງຢ່າງດຽວ ຍ່ອມບໍ່ມີ.

## ໙

ຍັຍເຈ ວິຍຍູ ປະສັງສັນຕິ
ອະນຸວິຈຈະ ສຸເວ ສຸເວ

ອັຈຉິທທະວຸຕຕິງ ເມຘາວິງ
ປັຎຎາສີລະສະມາຫິຕັງ ຯ໒໒໙ຯ

ນັກປຣາຊຌ໌ ຜູ້ທີ່ຣິ່ນຕອງ ພິນິຈພິຈາຣະນາຢ່າງຖ້ວນຖີ່ແລ້ວ ຈິ່ງສັຣເສີຎຜູ້ທີ່ມີປັຎຎາ ເຖິງພ້ອມດ້ວຍສີລ ແລະ ສະມາຘິ ດຳເນີນຊີວິຕອັນຫາທີ່ຕິບໍ່ໄດ້.

# ໑໐

ເນກຂັງ ຊັມໂພນະທັສເສວະ
ໂກ ຕັງ ນິນທິຕຸ ມະຣະຫະຕິ
ເທວາປິ ຕັງ ປະສັງສັນຕິ
ພຸຣຫມຸນາປິ ປະສັງສິໂຕ ຯ໒໓໐ຯ

ບໍ່ມີໃຜດອກນາ ທີ່ຈະໄປນິນທາ ເພິ່ນຜູ້ທີ່ເປັນເຫມືອນດັ່ງ ແທ່ງຄຳຊຸມພູນຸທ ຫມູ່ມະນຸສແລະເຫລົ່າເທພຍດາ ກໍເຊີຍຊົມ ແມ່ນແຕ່ ພຣະພຣົຫມ ກໍຍ້ອງສັຣເສີຎ.

## ເຣື່ອງ ອະຕຸລອຸບາສົກ

ພຣະບໍຣົມສາສດາ ທຣົງປາຣົພ ອຸບາສົກຜູ້ນຶ່ງຊື່ວ່າ ອະຕຸລະ. ວັນນຶ່ງ

ອະຕຸລະ ອຸບາສົກ ພ້ອມດ້ວຍອຸບາສົກອີກ ປະມາຫ ໕໐໐ ຄົນ ໄດ້ພາກັນໄປ ຟັງລັມມ໌ ຂອງພຣະເຣວຕະ. ຄັນວ່າ ພຣະເຣວຕະ ບໍ່ສແດງ ອຸບາສົກ ກໍໂກລ ຮ້າຍຂຶ້ນ ແລ້ວກໍພາກັນໄປຍັງສຳນັກຂອງ ພຣະສາຣີບຸຕຣ໌ ເຖຣະ, ຄັນພຣະ ສາຣີບຸຕຣ໌ເຖຣະ ສແດງ ອະກິລັມມ໌ອັນລະອຽດສຸຂຸມໄປ ກໍສແດງຄວາມໂກລ ຮ້າຍວ່າ ສແດງຫລາຍໂພດ ເລີກແລບໂພດ. ຈາກນັ້ນ ເຂົາເຈົ້າກໍພາກັນໄປ ຍັງສຳນັກຂອງ ພຣະອານົນທ໌. ຄັນພຣະອານົນທ໌ສແດງລັມມ໌ນ້ອຍໄປ ກໍຮ້າຍ ວ່າ ຕັ້ງແກ້ງສແດງນ້ອຍ ຈຶ່ງພາກັນໄປເຝົ້າ ພຣະສາສດາ ທູລເຣື່ອງຣາວຕ່າງ ຕ່າງແຕ່ຕົ້ນ ໃຫ້ຫຣົງຊາບ.

ພຣະພຸທລອົງຄ໌ ຈຶ່ງທຣົງສແດງ ພຣະລັມມິກຖາ ແລ້ວຈຶ່ງຕຣັສພຣະ ຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາໄວ້ ໃນຂ້າງເທິງນີ້.

---

## ໑໑

ກາຍັປປະໂກປັງ ຣັກເຂຍຍະ
ກາຍເຍນະ ສັງວຸໂຕ
ກາຍະທຸຈຈະຣິຕັງ ຫິຕວາ
ກາເຍນະ ສຸຈະຣິຕັງ ຈະເຣ ໑໔໓໑໑

ເຮົາຄວນຄວບຄຸມການກະທຳຄືກາຍຂອງ (ຄວາມຈັ່ງໄຮທາງກາຍ)

ຄວນສຳຣວມ ຣະມັດຣະວັງ ການກະທຳທາງກາຍ, ລະກາຍທຸຈຣິຕ, ປະພຶຕຣ໌ກາຍສຸຈຣິຕ.

## ໑໔

ອະຈີປະໂກປັງ ຣັກເຂຍຍະ
 ອາຈາຍະ ສັງວຸໂຕ ສິຍາ
ອະຈີທຸຈຈະຣິຕັງ ຫິຕວາ
 ອາຈາຍະ ສຸຈະຣິຕັງ ຈະເຣ ໑໔໓໔໑

ເຮົາຄວນສຳຣວມຣະວັງອາຈາ ຄວາມຄະນອງ ອາຈາ ເວົ້າແຕ່ຄຳຈິງຄຳສຸພາບ ເວັ້ນຈາກ ອາຈາທຸຈຣິຕ ປະພຶຕຣ໌ແຕ່ອາຈາ ສຸຈຣິຕ.

## ໑໕

ມະໂນປະໂກປັງ ຣັກເຂຍຍະ
 ມະນະສາ ສັງວຸໂຕ
ມະໂນທຸຈຈະຣິຕັງ ຫິຕວາ
 ມະນະສາ ສຸຈະຣິຕັງ ຈະເຣ ໑໔໓໓໑

ເຮົາຄວນຄວບຄຸມ ຄວາມຄະນອງທາງໃຈ ຣະມັດຣະວັງ ຄວາມຄິດ, ເວັ້ນຈາກ ມະໂນທຸຈຣິຕ ປະພຶຕຣ໌ມໂນສຸຈຣິຕ.

## ໑໔

ກາເຍນະ ສັງວຸຕາ ລືຣາ
ອະໂຖ ວາຈາຍະ ສັງວຸຕາ
ມະນະສາ ສັງວຸຕາ ລືຣາ
ເຕ ເວ ສຸປະຣິສັງວຸຕາ ໑໔໓໔໑

ທ່ານຜູ້ມີປັນຍາ ທຽນຍ່ອມ ສຳຣວມຣະວັງ ກາຍ
ວາຈາ ໃຈ ທ່ານເຫລົ່ານັ້ນ ນັບໄດ້ວ່າ ເປັນຜູ້ສຳຣວມດີແລ້ວ ແທ້ຈິງ.

## ເຣື່ອງ ຈັພພັຄຄິຍະ ກິກຂຸ

ພຣະບໍຣົມສາສດາ ທຣົງປາຣົພ ກິກຂຸ ຈັພພັຄຄິຍະ ພວກ ໖ ອັນມີ
໑ ບັຕຫຸກະ, ໒. ໂລຫິຕະກະ, ໓. ກຸມມະຊະກະ, ໔. ອັສສະຊິ, ໕, ປຸນັພ
ພະສຸກະ. ໖. ເມຕຕິຍະ. ພັຄພວກຂອງເພິ່ນນີ້ ໄດ້ມີຊື່ວ່າ ຈັພພັຄຄິຍະ

ໃນວັນນຶ່ງ, ພຣະກິກຂຸ ພວກນີ້ ຖືໄມ້ເທົ້າສອງມື, ໃສ່ຣອງເທົ້າໄມ້
ພາກັນເດີນຈົງກົມຢູ່ພລານຫີນ. ພຣະສາສດາ ໄດ້ສດັບສຽງກຸກກັກ ໆ ຈຶ່ງ
ຮັບສັ່ງ ຖາມພຣະອານົນທ໌ວ່າ: ອານົນທ໌ ສຽງດັ່ງນັ້ນ ແມ່ນຫຍັງ ?

ຄັນພຣະອານົນທ໌ທູລໃຫ້ຊາບແລ້ວ ຈຶ່ງທຣົງບັນຍັຕິສິກຂາບົທ
ຫ້າມກິກຂຸ ທັງຫລາຍ ບໍ່ໃຫ້ໃສ່ຮອງເທົ້າໄມ້ ແລ້ວຕຣັສວ່າສັມມັນຽມກິກຂຸ

ຄວນຮັກສາມັຣຍາທ ໃຫ້ຮຽບຮ້ອຍ. ບັດນັ້ນ ພຣະພຸທສອົງຄ໌ ຈຶ່ງໄດ້ຕຣັສ ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາ ໃນເບື້ອງຕົ້ນນີ້.

---

## ຈົບ ໂກສວັຄຄ໌ ທີ່ ໑໗

# ມລວັຄຄ໌ ທີ່ ໑໘

## ໝວດ ວ່າດ້ວຍ ມົລທິນ ຄວາມເສົ້າໝອງ

໑

ປັຓຑຸປະລາໂສວະ ທານິສິ
ຍະມະປຸຣິສາປິ ຈະ ຕັງ ອຸປັຏຐິຕາ
ອຸຍໂຍຄະມຸເຂ ຈະ ຕິຏຐະຕິ
ປາເຖຍຍັມປິ ຈະ ເຕ ນະ ວິຊຊະຕິ ໆ໒໓໕ໆ

ບັດນີ້ ທ່ານແກ່ເຖົ້າ ເໝືອນດັ່ງໃບໄມ້ເຫລືອງແລ້ວ, ຈ່າຍົມພິບາລ ຫລື ຍົມທູຕ ກຳລັງລໍຖ້າທ່ານຢູ່, ທ່ານກຳລັງຈະຈາກໄປໄກ, ແຕ່ວ່າສບຽງ ອາຫາຣການເດີນທາງໄກ ຂອງທ່ານ ຍັງບໍ່ທັນມີເທື່ອ.

໒

ໂສ ກະໂຣຕິ ທີໂປມັຕຕະໂນ
ຂິປປັງ ວາຍາມະ ປັຓຑິໂຕ ກະວະ
ນິທລັນຕະມະໂລ ອະນັງຄະໂນ
ທິພພັງ ອະຣິຍະຖູເມຫິສິ ໆ໒໓໖ໆ

ທ່ານຈິ່ງສ້າງທີ່ເພິ່ງ ໃຫ້ແກ່ຕົນເອງ, ຮີບພຍາຍາມຂົນຂວາຍຫາປັນຍາໃສ່ຕົວ. ເມື່ອທ່ານໝົດມົລທິນ ໝົດກິເລສແລ້ວທ່ານກໍ່ຈັກເຂົ້າເຖິງທິພຍភູມິ ຂອງ ພຣະອຣິຍະ.

໓

ອຸປະນີຕະອະໂຍ ທານີສີ
ສັມປະຍາໂຕສີ ຍະມັສສະ ສັນຕິເກ
ວາໂສປີ ຈະ ເຕ ນັຕຖິ ອັນຕະຣາ
ປາເຖຍຍັງ ປີ ຈະ ເຕ ນະ ວິຊຊະຕິ ໆ໒໓໗ໆ

ບັດນີ້ ທ່ານກຳລັງຈະເຖິງອາຍຸຂັຍແລ້ວ, ທ່ານ ຍ່າງເຂົ້າໄປໃກ້ສຳນັກພຍາມັຈຈຸຣາຊແລ້ວເດ. ທີ່ພັກຣະຫວ່າງທາງ ຂອງທ່ານ ກໍ່ບໍ່ມີ. ສບຽງເດີນທາງ ຂອງທ່ານ ກໍ່ບໍ່ໄດ້ຫາໄວ້.

໔

ໂສ ກະໂຣຫິ ທີປະມັຕຕະໂນ
ຂິປປັງ ວາຍາມະ ປັຕຈິໂຕ ກະວະ
ນິທທັນຕະມະໂລ ອະນັງຄະໂນ
ນະ ປຸນະ ຊາຕິຊະຣັງ ອຸເປຫິສີ ໆ໒໓໘ໆ

ຈຶ່ງສ້າງທີ່ເພິ່ງ ໃຫ້ແກ່ຕົນເອງ, ຮີບຂົນຂວາຍຫາປັນຍາໃສ່ຕົນ. ເມື່ອທ່ານໝົດມົລທິນ ໝົດກິເລສແລ້ວ ທ່ານ ກໍຈັກບໍ່ມາເກີດ ມາເປັນອີກ ຕໍ່ໄປ.

# ເຣື່ອງ ໂຄຆາຕບຸຕຣ໌

ພຣະບໍຣົມສາສດາ ທຮົງປາຣົພ ບຸຕຣ໌ຂອງນາຍໂຄຆາຕ(ຄົນຂ້າງົວ) ບິດາຂອງລາວ ເປັນຄົນຂ້າງົວຂາຍລ້ຽງຊີພ . ມື້ໃດ ຖ້າບໍ່ມີຊີ້ນງົວ ມື້ນັ້ນບໍ່ ບໍຣິໂភຄອາຫາຣ. ມື້ຫນຶ່ງຊີ້ນງົວບໍ່ມີ ລາວຈຶ່ງໄປຫລັງບ້ານ ເອົາມີດຕັດລີ້ນ ງົວທັງເປັນ ມາປີ້ງກິນກັບເຂົ້າ. ພໍຈະຈັບຕ່ອນລີ້ນງົວເຂົ້າໃສ່ປາກ ລີ້ນຂອງ ລາວ ກໍຂາດຕົກລົງໃສ່ຊາມເຂົ້າ. ລາວໄດ້ສເວີຍຜົລຂອງກັມມ໌ ທີ່ເຫັນໃນ ທິຍກະທັມມ໌ (ທັນຕາເຫັນ). ຮ້ອງຄາງຄືກັນກັບງົວ.

ເມື່ອທໍາກາລະກິຣິຍາ ຕາຍໄປແລ້ວ ກໍໄປເກີດໃນອະເວຈີ ມຫານະ ຣົກ. ສ່ວນບຸຕຣ໌ ຂອງນາຍໂຄຆາຕ ເຫັນເຊັ່ນນັ້ນ ກໍຢ້ານກົວຕໍ່ກັຍອັນນັ້ນ. ຈຶ່ງໄດ້ຫລົບໜີໄປຢູ່ເມືອງຕັກກະສີລາ ມີບຸຕຣ໌ກັຣຍາ ໃນເມືອງນັ້ນ. ພາຍ ຫລັງຕໍ່ມາ ບຸຕຣ໌ຂອງລາວ ໄດ້ກັບມາຢູ່ເມືອງ ສາວັຕຖີ ເປັນຜູ້ເຫລື້ອມໃສ ໃນພຣະພຸທສາສນາ ຈຶ່ງກັບໄປຮັບເອົາບິດາມາຢູ່ນໍາ. ວັນນຶ່ງ ໄດ້ນິມົນຕ໌ ພຣະກິກຂຸສົງฆ໌ ມີພຣະພຸທເຈົ້າ ເປັນປະທານ ມາຮັບກັຕຕາຫາຣທີ່ເຮືອນ ຂອງຕົນ. ເມື່ອເສັຈກັຕຕກິຈແລ້ວ ກໍນິມົນຕ໌ ພຣະຍອດແກ້ວສັພພັญญູ ອະ ນຸໂມທນາ ເພື່ອບິດາຂອງຕົນ. ພຣະອົງຄ໌ ຈຶ່ງຕຣັສພຣະຄາຖາດັ່ງທີ່ກ່າວນີ້.

## ໕

ອະນຸປຸພເພນະ ເມສາວີ
ໂຖກັງ ໂຖກັງ ຂະເຓ ຂະເຓ
ກັມມາໂຣ ຣະຊະຕັສເສວະ
ນິທສະເມ ມະລະມັຕຕະໂນ ໆ໒໓໙ໆ

ຄົນທີ່ມີປັນຍາ ຄວນກຳຈັດປັດເປົ່າ ມົລທິນ ຄວາມເສົ້າໝອງ ຂອງຕົນອອກ ທີລະໜ້ອຍ ໆ ທຸກ ໆ ຂະນະ ໂດຍລຳດັບ ເໝືອນກັບນາຍຊ່າງຕີຄຳ ທີ່ປັດເປົ່າຂີ້ສນິມ ອອກຈາກຄຳນັ້ນແລ.

## ເຣື່ອງ ອັນຍະຕຣະພຣາຫມຕ໌

ພຣະບໍຣົມສາສດາ ທຣົງຜາຣົພ ພຣາຫມຕ໌ຄົນນຶ່ງ ໄດ້ກະທຳບຸນກຸສົລມາເປັນລຳດັບ. ໃນຕອນຕົ້ນໆ ນັ້ນ ໄດ້ເຫັນກິກຂຸອົງຄ໌ນຶ່ງ ຢືນຫົ່ມຈີວຣ ຢູ່ໃນທີ່ແຫ່ງນຶ່ງເປັນປະຈຳ ແລະທີ່ນັ້ນ ຣົກເຮື້ອ ເຕັມໄປດ້ວຍຫຍ້າ ລາວຈຶ່ງຖາກຖາງທີ່ນັ້ນໃຫ້ແປນ ແລ້ວກໍເອົາຊາຍມາຖົມໃຫຣາບພຽງ ຕໍ່ມາກໍປຸກ ຜາມພໍກັນແດດກັນຝົນ ຕໍ່ມາປຸກເປັນສາລານ້ອຍ ຈັດການສລອງລ້ຽງພຣະກິຂຸສົງຆ໌ ມີພຣະພຸທສເຈົ້າ ເປັນປະທານ. ໃນງານສລອງນັ້ນ ໄດ້ທູລປະວັຕິການຕ໌ ເບື້ອງຕົ້ນ ທີ່ຈເຣີນເຕີບໂຕໂດຍລຳດັບມາຈົນເປັນສາລາ.

ເມື່ອພຣະພຸທລອົງຄ໌ ຈະທຣົງ ອະນຸໂມທນານັ້ນ ພຣະອົງຄ໌ ທຣົງ ຕຣັສ ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນໄວ້ໃນເບື້ອງຕົ້ນນີ້.

---

໕

ອະຍະສາວະ ມະລັງ ສະມຸຜກິຕັງ
ຕະທຸຜກາຍະ ຕະເມວະ ຂາທະຕິ
ເອວັງ ອະຕິໂລນະຈາຣິນັງ
ສານິ ກັມມານິ ນະຍັນຕິ ທຸຄຄະຕິງ ໆ໔໐ໆ

ຂີ້ສນິມ ເກີດຈາກເຫລັກ ທຽນຍ່ອມ ກັດເຫລັກ ສັນໃດ, ກັມມ໌ທີ່ ຄົນທຳໄວ້ນັ້ນ ທຽນຍ່ອມ ນຳເຂົາໄປສູ່ທຸຄຕິ ກໍສັນນັ້ນ ຫັ້ນແລ

## ເຣື່ອງ ພຣະຕິສສະເຖຣະ

ພຣະບໍຣົມສາສດາ ທຣົງຜາຣົພ ພຣະກິກຂຸ ອົງຄ໌ນຶ່ງ ຊື່ວ່າ ຕິສສະ ເຖຣະມີຈີວຣ ເນື້ອລະອຽດດີຜືນນຶ່ງ ຊຶ່ງເປັນທີ່ພໍໃຈຂອງເພິ່ນຫລາຍ. ເພິ່ນ ຍັງບໍ່ທັນໄດ້ໃຊ້ສອຍເທື່ອ ກໍໄດ້ທຳກາລກິຣິຍາໄປເສັຍກ່ອນ. ຄັນທຳກາລະ ກິຣິຍາແລ້ວ ໄດ້ໄປເກີດເປັນບົ້ງກະເລັນ ຢູ່ໃນຈີວຣນັ້ນ. ສົງຄ໌ໄດ້ຕົກລົງ ກັນວ່າ ຈະຈັດການແຈກຈີວຣນັ້ນ ບົ້ງກະເລັນຕົວນັ້ນ ກໍແລ່ນຮ້ອງອ ົນອຽນ

ຮ້ອງວ່າບໍ່ຍອມໃຫ້. ພຣະສາສດາ ທຣົງຊາບດ້ວຍທິພຍໂສຕ ຈຶ່ງທຣົງຫ້າມ ພຣະກິກຂຸ ໃຫ້ເຍື້ອນໄປກ່ອນ ຈົນກວ່າຈະລ່ວງໄປໄດ້ ໗ ວັນແລ້ວຈຶ່ງຄ່ອຍຈັດການແຈກຢາຍກັນ. ໃນວັນທີ່ ໗ ບິງກະເລັນ ກໍທຳກາລກິຣິຍາໄປເກີດໃນ ດຸສິຕພິກົພ.

ບັດນັ້ນ ພຣະອົງຄ໌ຈຶ່ງທຣົງອະນຸຍາຕິໃຫ້ແຈກຈີວຣນັ້ນ. ພຣະກິກຂຸທັງຫລາຍ ມີຄວາມສົງສັຍ ບໍ່ຊາບເຫຕຸ ຈຶ່ງໄດ້ທູລຖາມ. ພຣະພຸທສອົງຄ໌ທຣົງສແດງເຫຕຸນັ້ນ ດັ່ງທີ່ກ່າວມາແລ້ວນັ້ນ ຈຶ່ງຕຣັສພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາໄວ້ ໃນຂ້າງເທິງນີ້.

---

## ໗

ອະສັຊຊາຍະມະລາ ມັນຕາ
 ອະນຸຜຖານະມະລາ ຒະຣາ
ມະລັງ ວັຕຕັສສະ ໂກສັຊຊັງ
 ປະມາໂທ ຣັກຂະໂຕ ມະລັງ ໒໔໑໖

ການບໍ່ທ່ອງ ບໍ່ເລົ່າບົທຮຽນ ພຣະທັມມ໌ ຫລືຕຳຣາຕ່າງໆ ທີ່ຮຽນມານັ້ນເປັນມົລທິນ ຫລົງລືມ, ເຮືອນຊານບ້ານຊ່ອງ ທີ່ຢູ່ອາສັຍ ບໍ່ບົວຣະບັຕ

ຊ່ອມແປງ ກໍຍ່ອມຜຸພັງ. ຮ່າງກາຍ ຜິວພັຕວັຕຕະ ຂີ້ຄ້ານ ບໍ່ບົວຣະບັຕ ຂັດສີ ກໍຍ່ອມເສົ້າໝອງ. ນາຍຣັກສາຍາມ ປະມາທ ເລີນເລີ້ເຜີສະຕິ ຍ່ອມເປັນອັນຕຣາຍ ຄືເປັນມົລທິນ.

# ເຣື່ອງ ພຣະໂລຣຸທາຍີ

ພຣະບໍຣົມສາສດາ ທຣົງຜາຣັພ ພຣະໂລຣຸທາຍີເຖຣະ ເປັນຄົນຂີ້ ອວດ. ໃນວັນນຶ່ງ ມີປະຊາຊົນ ຜູ້ໄດ້ໄປຟັງລັມມ໌ກັບມາ ແລ້ວກ່າວສັຣເສີນ ພຣະສາຣີບຸຕຣ໌ ເຖຣະ ແລະ ພຣະໂມຄຄັລລານະ ເຖຣະ ທັງ ໒ ອົງຄ໌ນັ້ນ. ພຣະໂລຣຸທາຍີເຖຣະ ຈຶ່ງກ່າວຂຶ້ນວ່າ ຖ້າທ່ານ ທັງຫລາຍ ໄດ້ຟັງລັມມ໌ໃນສຳນັກຂອງເຮົາແລ້ວ ກໍຈັກກ່າວສັຣເສີນ ຄຸຕຂອງເຮົາຍິ່ງກວ່ານີ້.

ໃນວັນນຶ່ງ ຝູງຊົນໄດ້ປະຊຸມກັນ ບໍຣິຈາຄທານ ແລະໄດ້ອາຣາລນາໃຫ້ ພຣະໂລຣຸທາຍີ ສແດງລັມມ໌ ເພິ່ນກໍຮັບຄຳອາຣາລນາ ແລ້ວຂຶ້ນໄປ ບົນລັມມາສນ໌ ຈັບຄັນຕາລະບັຕຣ໌ ໂຍກໄປໂຍກມາ ຄິດຫາລັມມ໌ທີ່ຈະສແດງ ບໍ່ອອກ ຈຶ່ງຂໍຜັດເວລາໄປໃສ່ເວລາໃໝ່ ວ່າເວລານີ້ສແດງບໍ່ໄດ້ ເອົາຕອນຄ່ຳດີກວ່າ ເຖິງຕອນຄ່ຳມາ ກໍຂໍຜັດໄປໃສ່ ກາງຄືນ ເຖິງກາງຄືນມາ ກໍຂໍຜັດໄປໃສ່ຕອນໃກ້ຮຸ່ງ ຄັນຕອນໃກ້ຮຸ່ງ ກໍສແດງບໍ່ໄດ້ ກໍເລີຍຜັດຕໍ່ໄປອີກ. ຝູງຊົນເລີຍພາກັນຂັບໄລ່ ພຣະໂລຣຸທາຍີ ໆ ແລ່ນກະອິກະອາດໄປພລາດລົ້ມຢູ່ທີ່ ວິຈ (ວິຈກຸຜີ) ຫ້ອງຖ່າຍນັ້ນເອງ.

ພຣະກິກຂຸ ທັງຫລາຍ ປະຊຸມສົນທະນາ ກ່ຽວກັບເຣື່ອງ ພຣະໂລ-ຂຸທາຍິເຖຣະ. ພຣະພຸທສອົງຄ໌ ຈຶ່ງໄດ້ຕຣັສຊຶ່ງ ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາໄວ້ ໃນຂ້າງຕົ້ນນີ້.

---

ກ

ມະລິຕຖິຍາ ທຸຈຈະຣິຕັງ
    ມັຈເຈຣັງ ທະທະໂຕ ມະລັງ
ມະລາ ເວ ປາປະກາ ສັມມາ
    ອັສມິງ ໂລເກ ປະຣັມຫິ ຈະ ໑໔໔໑

ຄວາມປະພຶຕຣ໌ ເສັຍຫາຍ ເປັນມົລທິນ ຂອງ ສຕຣີ, ຄວາມຂີ້ຖີ່ ເປັນມົລທິນ ຂອງຜູ້ໃຫ້, ຄວາມຊົ່ວທຸກຊນິດ ເປັນມົລທິນ ທັງໃນໂລກນີ້ ແລະ ໃນໂລກໜ້າ.

ຄ

ຕະໂຕ ມະລາ ມະລະຕະຣັງ
    ອະວິຊຊາ ປະຣະມັງ ມະລັງ
ເອຕັງ ມະລັງ ປະຫັຕວານະ

## ນິມມະລາ ໂຫຖະ ກິກຂະໂວ ໒໑໔໓໒

ມົລທິນ ຄວາມເສົ້າໝອງ ທີ່ຍິ່ງໃຫຍ່ກວ່າ ມົລທິນທັງຫລາຍ ນັ້ນ ກໍແມ່ນ ອະວິຊຊາ ຄວາມໂງ່ງ່າວ ນັບເປັນມົລທິນຊັ້ນຍອດ. ດູຣາ ກິກຂຸ ທັງຫລາຍ, ທ່ານ ທັງຫລາຍ ຈົ່ງກຳຈັດປັດເປົ່າ ມົລທິນຊນິດນີ້ ແລະ ຈົ່ງ ເປັນຜູ້ປາສຈາກມົລທິນ ທັງຫລາຍເທີ້ນ.

# ເຣື່ອງ ອັຎຎຕຣະກຸລບຸຕຣ໌

ພຣະບໍຣົມສາສດາ ທຣົງຜາຣົພ ກຸລບຸຕຣ໌ຜູ້ນຶ່ງ ທີ່ເປັນອຸບາສົກ ມີ ຄວາມເຫລື້ອມໃສ ໃນພຣະພຸທຘສາສນາ ມີກັຣຍາເປັນຄົນປະພຶຕຣ໌ນອກໃຈ ເລີຍມີຄວາມກະດ້າງກະເດື່ອງ ບໍ່ກ້າເຂົ້າຮ່ວມໃນທີ່ຊຸມຊົນ. ວັນນຶ່ງ ລາວໄດ້ ເຂົ້າເຝົ້າ ທູລຄວາມນັ້ນ ແດ່ ພຣະສາສດາ, ພຣະອົງຄ໌ ຈຶ່ງໄດ້ຕຣັສເຣື່ອງ ໃນອະດີຕກາລ ທີ່ເຄີຍມີມາວ່າ ມີກັຣຍາ ຂອງເສຕຖີ ຄົນນຶ່ງ ປະພຶຕຣ໌ນອກ ໃຈສາມີ ໆ ກໍມີຄວາມເສັຽໃຈ. ທ່ານ ທິສາປາໂມກຂ໌ ຜູ້ເປັນອາຈາຣຍ໌ໄດ້ຮູ້ ເຫຕຸນັ້ນ ຈຶ່ງກ່າວສອນເສຕຖີນັ້ນວ່າ ຜູ້ຍິງໃນໂລກນີ້ ເປັນສາຘາຣຓະແກ່ ຜູ້ ຊາຍ ເໝືອນແມ່ນ້ຳ, ຫົນທາງ, ໂຮງສຸຣາ, ໂຮງລົມມສະກາ, ສາລາ, ບໍ່ນ້ຳ ສະນັ້ນ. ໃນທີ່ສຸດ ແຫ່ງ ອະດີຕນິທານນັ້ນ ພຣະຍອດແກ້ວ ສັພພັຎຎູ ຈຶ່ງໄດ້ຕຣັສຊຶ່ງພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາໃນເບື້ອງຕົ້ນນີ້.

## ໑໐

ສຸຊີວັງ ອະຫິຣິເກນະ
  ກາກະສູເຣນະ ລັງສິນາ
ປັກຂັນທິນາ ປະຄັພເກນະ
  ສັງກິລິຍເຖນະ ຊີວິຕັງ ໆ໔໔ໆ

ຄົນທີ່ໄຮ້ຢາງອາຍ ມີຄວາມກ້າຫານຄືດັ່ງກາ, ມັກທຳລາຍຜູ້ອື່ນໃນທາງລັບຫລັງ ມັກເອົາໜ້າ ອວດດີ ມີພຣືຕິກັມມ໌ ຄວາມປະພຶຕຣ໌ສົກປົກ ຄົນເຊັ່ນນີ້ ມີຄວາມເປັນຢູ່ງ່າຍ. *(ມີຄວາມເປັນຢູ່ຢ່າງໄອ່ໂຖງ)*

## ໑໑

ຫິຣີມະຕາ ຈະ ທຸຊຊີວັງ
  ນິຈຈັງ ສຸຈິຄະເວສິນາ
ອະລີເນນັປປະຄັພເກນະ
  ສຸທລາຊີເວນະ ປັສສະຕາ ໆ໔໕ໆ

ສ່ວນຄົນທີ່ມີ ຫິຣິ ຄວາມລະອາຍຕໍ່ບາບ ທຸຈຣິຕ ຝັກໄຝ່ຫາຄວາມບໍຣິສຸທລິຢູ່ເປັນນິຕຍ໌ ບໍ່ຂີ້ຄ້ານ ອ່ອນນ້ອມຖ່ອມຕົວ ມີຄວາມເປັນຢູ່ບໍຣິສຸທລິ

ມີປັນຍາ ເຊັ່ນນີ້ ມີຄວາມເປັນຢູ່ລຳບາກ. (ແຕ່ມີຄວາມສຸຂ ບໍ່ເດືອດຮອນ)

## ເຣື່ອງ ພຣະຈູຣະສາຣີກິກຂຸ

ພຣະຜູ້ມີພຣະກາຄເຈົ້າ ທຣົງຜາຣົພ ພຣະຈູຣະສາຣີກິກຂຸ ຜູ້ເປັນສັທລິວິຫາຣິກ (ສິສ) ຂອງ ພຣະສາຣີບຸຕຣ໌ເຖຣະ ເພິ່ນປະພຶຕຣ໌ເວຊກັມມ໌ ຫາລັງງຊີພ ດ້ວຍກາຣເປັນໝໍ່ຢາ. ໃນວັນນຶ່ງ ເພິ່ນໄດ້ໂກຊນະອັນປະຕີຕຍ້ອນ ຄື ທີ່ເກີດມາຈາກເວຊກັມມ໌ (ກາຣໃຫ້ຢາປົວພຍາລີ) ນັ້ນ. ເພິ່ນນຳເອົາໂກຊນະນັ້ນ ໄປຖວາຍ ພຣະສາຣີບຸຕຣ໌ເຖຣະ ຜູ້ເປັນອຸປັຊຊາຍ໌ຂອງຕົນ. ພຣະມຫາເຖຣະ ນັ່ງເສີຍຢູ່ ບໍ່ຍອມຮັບເອົາ. ພຣະກິກຂຸ ທັງຫລາຍຊາບຄວາມນັ້ນ ຈຶ່ງໄດ້ນຳເຣື່ອງນັ້ນ ເຂົ້າເຝົ້າທູລ ພຣະສາສດາ. ພຣະຍອດແກ້ວສັພພັຌຍູ ໄດ້ຕຣັສ ພຣະຄາຖາ ດັ່ງທີ່ໄດ້ຍົກມາໃນຂ້າງຕົ້ນນີ້.

---

### ໑໔

ໂຍ ປາຕະມະຕິປາເຕຕິ
ມຸສາວາທັຌຈະ ກາສະຕິ
ໂລເກ ອະທິນນັງ ອາທິຍະຕິ
ປະຣະທາຣັຌຈະ ຄັຈຈະຕິ ໑໔໔໑໑

## ໑ລ

ສຸຣາເມຣະຍະປານັຌຈະ
ໂຍ ນະໂຣ ອະນຸຍຸຌຊະຕິ
ອິເຂວະເມໂສ ໂລກັສມິງ
ມູລັງ ຂະນະຕິ ອັຕຕະໂນ ໑໔໗໑

(໑໔-໑ລ) ຜູ້ໃດ ທຳການຂ້າສັຕວ໌ ລັກທຣັພຍ໌ ກ່າວຄຳບໍ່ສັຕຍ໌ ບໍ່ຈິງ ປະພຶຕຣ໌ລ່ວງເກີນ ລູກ ແລະ ກັຣຍາຂອງຜູ້ອື່ນ, ດື່ມສຸຣາເມຣັຍຢາເສພຕິດ ເປັນເນື່ອງນິຕຍ໌ ບຸຄຄົລ ຜູ້ນັ້ນຊື່ວ່າ ທຳລາຍຖອນຮາກຖອນໂຄນ ຂອງຕົນ ເອງ ໃນໂລກນີ້.

## ໑໔

ເອວັງ ໂພ ປຸຣິສະ ຊານາຫີ
ປາປະທັມມາ ອສັຌຌະຕາ
ມາ ຕັງ ໂລໂພ ອະທັມໂມ ຈະ
ຈິຣັງ ທຸກຂາຍະ ຣັນທະຍຸງ ໑໔໘໑

ຈົ່ງຮູ້ເຖີດນ່າ ບຸຣຸສ ທັງຫລາຍ ອັນວ່າ ຄວາມຊົ່ວຮ້າຍ ບໍ່ແມ່ນວ່າ ເປັນຂອງທີ່ຈະຄວບຄຸມໄດ້ງ່າຍ. ຂໍຄວາມໂລພ ແລະ ຄວາມຊົ່ວ ຈົ່ງຢ່າໄດ້

ແກ່ລາກ ກະຊາກທ່ານໄປໃສ່ຄວາມທຸກຂ໌ຕລອດກາລອັນຍາວນານ ນັ້ນເລີຍ.

## ເຣື່ອງ ປັຌຈະອຸບາສິກ

ໃນກາລະຄັ້ງນຶ່ງ ພຣະບໍຣົມສາສດາ ທຣົງຜາຣົພ ອຸບາສິກ ໕ ຄົນ ທີ່ພາກັນຮັກສາສີລ ໕ ຄົນລະຂໍ້. ຄົນນຶ່ງຮັກສາສີລ ຂໍ້ທີ່ ໑ ລະເວັ້ນຈາກ ການຂ້າສັຕວ໌, ຄົນທີ່ສອງ ຮັກສາສີລ ຂໍ້ທີ່ ໒ ລະເວັ້ນຈາກການລັກຂະໂມຍ ສິ່ງຂອງທີ່ເຈົ້າຂອງເຂົາບໍ່ໄດ້ໃຫ້. ຄົນທີ່ສາມ ຮັກສາສີລ ຂໍ້ທີ່ ໓ ລະເວັ້ນ ຈາກການປະພຶຕຣ໌ຜິດມິຈສາຈາຣ. ຄົນທີ່ສີ່ ຮັກສາສີລ ຂໍ້ທີ່ ໔ ລະເວັ້ນຈາກ ການກ່າວຄໍາຕົວະລ່າຍຮັກສາສັຈຈະ.. ຄົນທີຫ້າ ຮັກສາສີລ ຂໍ້ທີ່ ໕ ລະເວັ້ນ ຈາກການດື່ມສຸຣາ ຢາເສພຕິດທຸກຊນິດ. ໃນຈໍານວນບຸຄຄົລ ທັງ ໕ ນີ້ ໃຜ ຮັກສາສີລຂໍ້ໃດ ກໍ່ວ່າຢ່າງນັ້ນດີ. ມີຄວາມຂັດແຍ່ງ ຖົກຖຽງກັນ. ເຂົາເຈົ້າກໍ່ ພາກັນເຂົ້າໄປເຝົ້າ ທູລຂໍພຣະພຸທໂຊວາທ. ພຣະຍອດແກ້ວສັພພັຌຌູ ຈຶ່ງ ໄດ້ຕຣັສ ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາໃນເບື້ອງຕົ້ນນີ້.

---

### ໑໕

ທະຫາຕິ ເວ ຍະຖາສັທລັງ
ຍຖາປະສາທະນັງ ຊະໂນ
ຕັຕຖະ ໂຍ ມັງກຸໂຕ ໂຫຕິ

ປະເຣສັງ ປານະໂກຊະເນ
ນະ ໄຂ ທິວາ ວາ ຣັຕຕິງ ວາ
ສະມາລິງ ອະລິຄັຈສະຕິ (໒໔໙

ປະຊາຊົນ ຍ່ອມໃຫ້ທານຕາມສັທລາ. ຜູ້ໃດຄິດອິສສາ ໃນເຂົ້າແລະນ້ຳ ຂອງຄົນອື່ນ ເຂົາຜູ້ນັ້ນ ຍ່ອມບໍ່ໄດ້ຮັບຄວາມສງົບໃຈ ບໍ່ວ່າຈະເປັນກາງເວັນ ຫຣືວ່າ ກາງຄືນ ກໍຕາມ.

## ໑໕

ຍັສສະ ເຈຕັງ ສະມຸຈສິນນັງ
ມູລະຄັຈຈັງ ສະມູຫະຕັງ
ສະ ເວ ທິວາ ວາ ຣັຕຕິງ ວາ
ສະມາລິງ ອະລິຄັຈສະຕິ ໒໕໐໒

ຜູ້ໃດເລີກຄິດ(ອິສສາ) ເຊັ່ນນັ້ນແລ້ວ ເຂົາຜູ້ນັ້ນ ທຽມຍ່ອມໄດ້ຮັບຄວາມສງົບໃຈ ທັງໃນເວລາກາງເວັນ ແລະ ໃນເວລາກາງຄືນ.

# ເຣື່ອງ ຕິສສະທຫຣະ

ພຣະບໍຣົມສາສດາ ທຣົງຜາຣົພ ກິກຂຸໜຸ່ມ ອົງຄ໌ນຶ່ງ ທີ່ຊື່ວ່າ ຕິສສະ ເພິ່ນເປັນຊາວຊົນບົທ ໄປບວຊຢູ່ໃນເມືອງສາວັຕຖີ ມັກຈະເວົ້າອວດອ້າງວ່າ ຍາຕິພີ່ນ້ອງຂອງເພິ່ນນັ້ນ ເປັນຜູ້ຖວາຍທານ ດ້ວຍໂພຊນາຫາຣ ອັນເລີສ ແລ້ວຕິຕຽນທານຂອງຄົນອື່ນວ່າ ທານສູ້ຍາຕິຂອງຕົນບໍ່ໄດ້.

ພຣະກິກຂຸ ທັງຫລາຍ ນຳເອົາເຣື່ອງນັ້ນ ເຂົ້າຂາບທູລ ແດ່ ພຣະສາສດາ ພຣະອົງຄ໌ ຈຶ່ງຕຣັສພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາໃນຂ້າງເທິງນີ້.

---

### ໑໗

ນັຕຖິ ຣາຄະສະໂມ ອັຄຄິ
    ນັຕຖິ ໂທສະສະໂມ ຄະໂຫ
ນັຕຖິ ໂທສະສະມັງ ຊາລັງ
    ນັຕຖິ ຕັຕຫາສະມາ ນະທີ ຯ໒໕໑ຯ

ບໍ່ມີໄຟໃດ ທີ່ຈະສເມີເໝືອນ ຣາຄະຄວາມກຳໜັດຍິນດີໃນກາມ, ບໍ່ມີເຄາະຫ໌ກັມມ໌ ອັນໃດ ທີ່ຈະສເມີເໝືອນ ໂທສະ, ບໍ່ມີຕາໜ່າງດັກສັຕວ໌ຊນິດໃດ ທີ່ຈະສເມີເໝືອນ ໂມຫະ, ບໍ່ມີນ້ຳໃດ ທີ່ຈະສເມີເໝືອນຕັຕຫາ.

# ເຣື່ອງ ປັນຈະອຸບາສົກ

ໃນກາລະຄັ້ງນຶ່ງ ພຣະບໍຣົມສາສດາ ທຣົງຜາຣົພ ອຸບາສົກ ๕ ຄົນ ທີ່ຊວນກັນໄປຟັງທັມມ໌ ທີ່ວິຫາຣ. ຄົນນຶ່ງນັ່ງຟັງ ມີຄວາມເພີດເພີນຈເຣີນໃຈ ຈົນຫລັບໄຫລເຄີບເຄີ້ມໄປ ຍ້ອນນິສັຍເຄີຍຖືກຳເນີດ ເກີດເປັນງູມາກ່ອນ, ຄົນນຶ່ງ ນັ່ງເອົານີ້ວຂີດຂຽນແຜ່ນດິນຫລິ້ນ ຍ້ອນມີນິສັຍເຄີຍເກີດເປັນຂີ້ໄສ້ເດືອນມາກ່ອນ. ຄົນນຶ່ງນັ່ງຈັ່ງໄຮນີສັ່ນຕົ້ນໄມ້ ເພາະໄດ້ນິສັຍທີ່ມີມາຄາວທີ່ເກີດເປັນລີງ ໃນຊາຕິປາງກ່ອນ, ຄົນນຶ່ງ ນັ່ງແຫງນໜ້າເບິ່ງຟ້າອາກາສ ຍ້ອນເຄີຍເປັພຣາຫມຕໍດູຣືກຍ໌ ດູດາວ.

ທ່ານ ພຣະອານົນທ໌ ເຫັນດັ່ງນັ້ນ ຈຶ່ງທູລຖາມ ພະສາສດາວ່າ ສັຕວ໌ທັງຫລາຍ ອາສັຍກັມມ໌ອັນໃດ ຈຶ່ງບໍ່ອາຈຟັງທັມມ໌ດ້ວຍຄວາມເຄົາຣົພ.ພຣະພຸທທອົງຄ໌ ຈຶ່ງໄດ້ຕຣັສ ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາແລ້ວນີ້.
(ກາຣທີ່ຄົນທັງຫລາຍ ໃນຂຕະທີ່ນັ່ງຟັງທັມມ໌ນັ້ນ ບໍ່ເອົາໃຈໃສ່ກໍຍ້ອນວ່າມີປັຈຈັຍ ນີສັຍ ທີ່ຕິດມາແຕ່ຊາຕິປາງກ່ອນ)

---

## ໑໗

ສຸທັສສັງ ວັຊຊະມັຌເຌສັງ
ອັຕຕະໂນ ປະນະ ທຸທທະສັງ
ປະເຣສັງ ຫິ ໂສ ວັຊຊານີ

ໂອປຸນາຕິ ຍະຖາ ກຸສັງ
ອັຕຕະໂນ ປະນະ ຉາເທຕິ
ກະລິງອະ ກິຕວາ ສະໂກ ຯ໔໕໔ຯ

ໂທສຂອງຄົນອື່ນນັ້ນ ເຫັນໄດ້ງ່າຍ, ສ່ວນໂທສຂອງຕົນເອງນັ້ນ ເຫັນໄດ້ຍາກ. ຄົນເຮົາມັກຈະເປີດເຜີຍໂທສຂອງຄົນອື່ນເຂົາ ເໝືອນກັນກັບການໂຮຍຂີ້ແກບ ແຕ່ພ້ອມກັນນັ້ນ ກໍພຍາຍາມປົກປິດໂທສຂອງຕົນໄວ້ ບໍ່ຕ່າງຫຍັງກັບນັກເລງ ການພນັນ (ໄພ້-ໂປ)

## ເຣື່ອງ ເມຕາຫະກະເສຕຖີ

ພຣະບໍຣົມສາສດາ ທຣົງຜາຣົພ ເມຕາຫກະເສຕຖີ ຜູ້ມີບຸລຍາລິການ ທີ່ຍິ່ງໃຫຍ່. ພຣະພຸທລອົງຄ໌ ທຣົງທອດພຣະເນຕຣ໌ເຫັນ ອຸປນິສັຍໂສດາປັຕຕິຜົລ ຂອງທ່ານເສຕຖີ ພ້ອມດ້ວຍນາງຈັນທປະທຸມ ຜູ້ກັຣຍາ ແລະທ່ານ ລນັລໄຊຍ໌ເສຕຖີ ຜູ້ເປັນບຸຕຣ໌ ພ້ອມທັງນາງ ສຸມົນເທວີ ຜູ້ເປັນລູກໄພ້ ແລະ ນາງວິສາຂາ ຜູ້ເປັນຫລານສາວ ແລະ ນາຍບຸຣຕະທາສ. ພຣະອົງຄຈຶ່ງສເດັຈໄປສູ່ ກັທທິຍະນຄຣ. ເມື່ອເມຕາຫກະ ເສຕຖີ ຊາບຂ່າວວ່າ ພຣະສາສດາ ສເດັຈມາຍັງ ພຣະນຄຣ ຈຶ່ງພ້ອມກັນມາຄອຍຮັບສເດັຈ ທີ່ການທາງ. ພວກເດັຍຣຖີຍ໌ ໄດ້ເຫັນ ຈຶ່ງຫ້າມເສຕຖີໄວ້ ແລະ ກ່າວໂທສ

ພຣະສາສດາ ຕ່າງ ໆ ນາ ໆ ເສຕຖີ ກໍບໍ່ຟັງ. ຄັນມາເຝົ້າ ພຣະສາສດາ ໄດ້ຟັງທັມມເທສນາ ສຳເຣັຈໂສດາປັຕຕິຜົລແລ້ວ ຈຶ່ງທູລຄວາມນັ້ນ ແດ່ພຣະສາສດາໃຫ້ທຣົງຊາບ. ພຣະຍອດແກ້ວ ສັພພັຍຍູ ຈຶ່ງຕຣັສພຣະຄາຖາ ດັ່ງທີ່ຍົກຂຶ້ນມານັ້ນ.

---

# ໑໙

ປະຣະວັຊຊານຸປັສສິສສະ
　　ນິຈຈັງ ອຸຊຊຈານະສັຍຍິໂນ
ອາສະວາ ຕັສສະ ວັທທັນຕິ
　　ອາຣາ ໂສ ອາສວັກຂະຍາ ໆ໔໕໓ໆ

ຜູ້ທີ່ຈ້ອງມອງຈັບຕາເບິ່ງ ແຕ່ໂທສຂອງຄົນອື່ນ ຢູ່ຕລອດເວລາ ເພື່ອຈະຈັບຜິດ, ເຂົາຜູ້ນັ້ນ ທຽນຍ່ອມ ໜາດ້ວຍກິເລສອາສວະ ບໍ່ມີທາງທີ່ຈະເລີກລະໄດ້.

## ເຣື່ອງ ອຸຊຊຈານສັຍຍີເຖຣະ

ພຣະບໍຣົມສາສດາ ທຣົງປາຣົພ ພຣະເຖຣະອົງຄ໌ນຶ່ງ ຊື່ວ່າ ພຣະ

อุชฌานสัญญี เพิ่นเป็นคนมักกล่าวโทสผู้อื่น ท่งอแสะหาโทส ภิกขุ ทั้งหลายๆ จึ่งฆาบทูล ความประพึตร์ของเพิ่น แด่ พระสาสดา พระ องค์ จึ่งตรัส พระคาถา ดั่งกล่าว ที่ยกขึ้นมาไว้ในข้างเทิงนี้.

---

## ๒๐

อากาเสอะ ปะทัง นัตถิ
สะมะโณ นัตถิ พาหิโร
ปะปัญจาภิระตา ปะชา
นิปปะปัญจา ตะถาคะตา ๖๔๕๔๖

บ่มีรอยเท้า ในอากาส, สมณะ *พายนอกสาสนานี้* บ่มี. สัตว์ พากันยินดีในกิเลสที่กีดขวางพระนิพพาน. พระตถาคต ทั้งหลาย หมดกิเลสนั้นแล้ว.

(คำว่า นอกสาสนา หมายความว่า นอกพระพุทธสาสนา)

## ๒๑

อากาเสอะ ปะทัง นัตถิ
สะมะโณ นัตถิ ภาหิโร

ສັງຂາຣາ ສັສສະຕາ ນັຕຖິ
ນັຕຖິ ພຸທສານະມິຍຊິຕັງ ໒໔໕໕໒

ບໍ່ມີ ຮອຍເທົ້າໃນອາກາສ, ບໍ່ມີສມຕະ ນອກສາສນານີ້, ບໍ່ມີສັງຂາຣ ທີ່ທ່ຽງແທ້, ບໍ່ມີຄວາມຫວັ່ນໄຫວ ສໍາຣັບ ພຣະພຸທສເຈົ້າ.

## ເຣື່ອງ ສຸກັທທະ

ພຣະບໍຣົມສາສດາ ທຣົງຜາຣົພ ສຸກັທທະປຣິພາຊົກ. ຄາວເມື່ອພຣະສາສດາ ທຣົງປະທັບຢູ່ ໃນສາລະວັນ ຂອງ ມັລລະກະສັຕຣິຍ໌ ກຣຸງກຸສິນາຣາ ສເດັຈບັຣທົມເໜືອພຣະແທ່ນ ທີ່ປຣິນິພພານ. ສຸກັທທະປຣິພາຊົກ ເຂົ້າໄປເຝົ້າ ທູລຖາມບັນຫາ. ພຣະອານົນທ໌ເຖຣະ ເຫັນວ່າ ບໍ່ແມ່ນໂອກາສທີ່ສົມຄວນ ຈຶ່ງຫ້າມສຸກັທທະ ບໍ່ໃຫ້ເຂົ້າເຝົ້າ. ພຣະສາສດາ ທຣົງຊາບ ຈຶ່ງປະທານໂອກາສໃຫ້ແກ່ ສຸກັທທະປຣິພາຊົກ ໆ ຈຶ່ງທູລຖາມບັນຫາ ໓ ຂໍ້ ຄື:

໑. ອັນທີ່ຊື່ວ່າ ຮອຍໃນອາກາສ ມີຫຣືບໍ່ ?
໒. ອັນທີ່ຊື່ວ່າ ສມຕະນອກພຸທສສາສນາ ມີຫຣືບໍ່ ?
໓. ສັງຂາຣ ທັງຫລາຍ ຊື່ວ່າ ເປັນຂອງທ່ຽງ ມີຫຣືບໍ່ ? ດັ່ງນີ້.

ເມື່ອ ພຣະອົງຄ໌ ທຣົງພຍາກອຕ໌ ປັນຫາຈຶ່ງໄດ້ຕຣັສ ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາ ໃນຂ້າງຕົ້ນນິທານນີ້.

## ຈົບ ມລອັຄຄ໌ ທີ່ ໑໗

# ວັຄຄ໌ ຕໍ່ໄປນີ້ ແມ່ນ
# ສັນນັຍາວັຄຄ໌
# ທີ່ ໑໙

# ສັມມັຍກວັຄຄ໌ ທີ່ ໑໙
## ໝວດ ວ່າດ້ວຍ ຄວາມທ່ຽງສັມມ໌

໑

ນະ ເຕນະ ໂຫຕິ ສັມມັຍໂກ
ເຍນັຕຖັງ ສະຫະສາ ນະເຍ
ໂຍ ຈະ ອັຕຖັງ ອະນັຕຖັນຈະ
ອຸໂກ ນິຈເຈີຍຍະ ປັຕທິໂຕ ໑໔໕໖໑

ຜູ້ທີ່ຕັດສິນຄວາມ ໂດຍຫຸນຫັນພລັນແລ່ນ ຜູ້ນັ້ນ ບໍ່ແມ່ນຜູ້ທີ່ມີຊື່ງຄວາມທ່ຽງສັມມ໌. ບັຕທິຕ ຜູ້ເພີ່ນສລາດ ທຽນຍ່ອມ ວິນິຈສັຍຄະດີດ້ວຍຄວາມຣອບຄອບ ສອບຖາມທັງຝ່າຍຖືກ ແລະ ຝ່າຍຜິດ (ຈຶ່ງຈັດວ່າເປັນຜູ້ທີ່ທ່ຽງສັມມ໌)

໔

ອະສາຫະເສນະ ສັມເມນະ
ສະເມນະ ນະຍະຕີ ປະເຣ
ສັມມັສສະ ຄຸຕໂຕ ເມສາວີ
ສັມມັຍໂກຕິ ປະວຸຈຈະຕິ ໑໔໕໗໑

ບັຕທິຕ ຜູ້ທີ່ຕັດສີນຜູ້ອື່ນ ໂດຍຄວາມຮອບຄອບ ໂດຍທ່ຽງລັມມ໌ ສມ່ຳສເມີຖືເອົາຄວາມຖືກຕ້ອງເປັນໃຫຍ່ ຜູ້ນີ້ໄດ້ສມະຍານາມວ່າຜູ້ທ່ຽງລັມມ໌

## ເຣື່ອງ ວິນິຈສັຍ ມຫາອາມາຕຍ໌

ພຣະບໍຣົມສາສດາ ທຣົງຜາຣົພ ພວກວິນິຈສັຍ ມຫາອາມາຕຍ໌ ເປັນຕຸລາການ ພິພາກສາໂດຍອຍຸຕິລັມມ໌ (ບໍ່ມີຄວາມທ່ຽງລັມມ໌) ເມື່ອໄດ້ຮັບສີນບົນຂອງຝ່າຍໃດ ກໍຕັດຕິເຂົ້າຝ່າຍນັ້ນ. ໃນວັນນຶ່ງ ພຣະພິກຂຸ ທັງຫລາຍ ໄດ້ຍ່າງໄປທາງສາລ ວິນິຈສັຍ (ສາລຍຸຕິລັມມ໌) ກໍເລີຍພັກຢູ່ທີ່ນັ້ນອື່ອຄາວ ເພາະຝົນຕົກໜັກ. ເມື່ອຊາບຄວາມການວິນິຈສັຍ ພິຈາຣະນາຊື່ງຄະດີ ເຊັ່ນນັ້ນແລ້ວ ຈຶ່ງທູລຄວາມນັ້ນ ແດ່ ພຣະສາສດາ. ພຣະອົງຄ໌ຈຶ່ງໄດ້ຕຣັສພຣະຄາຖາ ດັ່ງທີ່ຍົກຂຶ້ນມາຂ້າງຕົ້ນນີ້.

---

## ໓

ນະ ເຕນະ ປັຕທິໂຕ ໂຫຕິ
ຍາວະຕາ ພະຫຸ ພາສະຕິ
ເຂມີ ອະເວຣີ ອະພະໂຍ
ປັຕທິໂຕຕິ ປະວຸຈຈະຕິ ໆ໒໕໘ໆ

ກາຣເປັນພຽງແຕ່ວ່າ ເວົ້າຫລາຍ ຝ່າຍທ່າງນັ້ນ ບໍ່ຈັດໄດ້ວ່າ ເປັນບັຓທິຕ. ຄົນທີ່ປະພຶຕຮ໌ຕົນໃຫ້ກະເສີມສຳຣາຄ ບໍ່ມີເວຣ ບໍ່ມີກັຍ ຜູ້ນັ້ນຈຶ່ງຮຽກໄດ້ວ່າ ເປັນບັຓທິຕ.

# ເຣື່ອງ ຈັພພັຄຄິຍກິກຂຸ

ພຣະບໍຣົມສາສດາ ທຣົງພາຣົພ ພຣະກິກຂຸ ພວກຈັພພັຄຄີຍ໌ ຫລົ້ນຝອກເຢົ້າກັນຄືເດັກນ້ອຍ ຢູ່ໃນວັດ ກໍມີ ຢູ່ໃນບ້ານ ກໍມີ. ພວກເພິ່ນບໍ່ມີຄວາມລະອາຍ ກ່າວຍົກຍ້ອງກັນເອງວ່າເປັນບັຓທິຕ. ພຣະກິກຂຸ ທັງຫລາຍນຳຄວາມນັ້ນ ຂຶ້ນຂາບທູລ ແດ່ ພຣະສາສດາ ພຣະອົງຄ໌ ຈຶ່ງຕຣັສພຣະຄາຖາດັ່ງທີ່ຍົກຂຶ້ນມາ ໃນຂ້າງເທິງນີ້.

---

## ໔

ນະ ຕາວາຕາ ສັມມະລະໄຣ
ຍາວະຕາ ພະຫຸ ກາສະຕິ
ໂຍ ຈະ ອັປປັມປິ ສຸຕວານະ
ສັມມັງ ກາເຍນະ ປັສສະຕິ
ສະ ເວ ສັມມະລະໄຣ ໂຫຕິ
ໂຍ ສັມມັງ ນັປປະມັຊຊະຕິ ໆ໔໕ລໆ

ບຸຄຄົລ ບໍ່ນັບໄດ້ວ່າ ເປັນຜູ້ທຣົງທັມມ໌ ຍ້ອນເຫຕຸ ພຽງແຕ່ວ່າ ເປັນຄົນທີ່ເວົ້າໄດ້ຫລາຍ. ສ່ວນຜູ້ໃດ ເຖິງແມ່ນວ່າໄດ້ສດັບຮັບຟັງໜ້ອຍ ກໍຕາມ ແຕ່ເຫັນທັມມ໌ດ້ວຍໃຈ, ບໍ່ປະມາທໃນທັມມ໌ ຜູ້ນັ້ນແລເຮົາຮຽກວ່າ ຜູ້ທຣົງທັມມ໌.

## ເຣື່ອງ ພຣະເອກຸທານເຖຣະ

ໃນກາລະຄັ້ງນຶ່ງ, ພຣະບໍຣົມສາສດາ ທຣົງພາຣົພ ພຣະເອກຸທານະ ເຖຣະ ເປັນອຣຫັຕຂີຕາສົພ, ເພິ່ນນັ້ນ ອາສັຍຢູ່ໃນປ່າແຫ່ງນຶ່ງ. ຄັນວ່າ ເຖິງວັນອຸໂບສົຖມາແລ້ວ ເພິ່ນກ່າວຄາຖາອຸທານ ອັນນຶ່ງສເມີ ບໍ່ໄດ້ຂາດ. ເທພຍດາ ທີ່ອາສັຍຢູ່ໃນປ່ານັ້ນ ຖວາຍສຽງສາທຸການກຶກກ້ອງ ເໝືອນກັບ ວ່າ ແຜ່ນດິນຊຸດ. ວັນນຶ່ງ ມີກິກຂຸ ໒ ອົງຄ໌ ເປັນຜູ້ທຣົງພຣະໄຕຣປິຜົກ ມີ ສິສບໍຣິວາຣ ອົງຄ໌ລະ ໕໐໐ ໄປໃນທີ່ນັ້ນ ພຣະເຖຣະເຈົ້າ ຈຶ່ງເຊື້ອເຊີນໃຫ້ ສແດງທັມມ໌. ເມື່ອກິກຂຸທັງສອງ ສແດງທັມມ໌ແລ້ວ ເທພຍດາກໍບໍ່ສາທຸການ ຄັນພຣະເຖຣະ ກ່າວອຸທານຄາຖານັ້ນ ຈົບລົງ ເທພຍດາ ທັງຫລາຍ ກ່າວ ສາທຸການ. ບັນດາສິສ ຂອງກິກຂຸ ທັງສອງອົງຄ໌ນັ້ນ ຈຶ່ງໂພນທະນາຕິຕຽນ ເທພຍດາວ່າ ເຫັນແກ່ໜ້າ.

ຄັນພວກເພິ່ນກັບມາເຖິງພຣະເຊຕວັນວິຫາຣ ຈຶ່ງທູລຄວາມນັ້ນ ແດ່ ພຣະສາສດາ. ພຣະອົງຄ໌ຈຶ່ງຕຣັສພຣະຄາຖາ ດັ່ງກ່າວນີ້.

---

## ໕

ນະ ເຕນະ ເຖໂຣ ໂຫຕິ
ເຍນັສສະ ປະລິຕັງ ສິໂຣ
ປະຣິປັກໂກ ວະໂຍ ຕັສສະ
ໂມຂະຊິຕາໂຕຕິ ວຸຈຈະຕິ ໆ໔໙໐ໆ

ເປັນພຽງແຕ່ວ່າ ຜົມຫງອກ ເທົ່ານັ້ນ ຍັງບໍ່ທັນນັບໄດ້ວ່າ ເຖຣະ ເທື່ອ ເພິ່ນນັ້ນເຖົ້າແກ່ແຕ່ ວັຍ ຈຶ່ງເອີ້ນໄດ້ວ່າ ຄົນແກ່ລ້າ ໆ.

## ໖

ຍັມຫິ ສັຈຈັລຈະ ລັມໂມ ຈະ
ອະຫິງສາ ສັລລະໂມ ທະໂມ
ສະ ເວ ວັນຕະມະໂລ ລີໂຣ
ໂສ ເຖໂຣຕິ ປະວຸຈຈະຕິ ໆ໔໙໑ໆ

ຜູ້ໃດມີ ສັຈຈະ ຄຸຕລັມມ໌ ບໍ່ບຽດບຽນ, ສຳຣວມຣະວັງ ຂົ່ມໃຈ ມີຄວາມສລາດ ປາສຈາກມົລທິນໂທສ ຜູ້ນັ້ນແລ ເຣົາຣຽກວ່າ ເຖຣະ.

# ເຣື່ອງ ລະກຸຕະຜະກະກັຫທິຍເຖຣະ

ພຣະບໍຣົມສາດາ ທຣົງຜາຣົພ ພຣະ ກຸຕຜະກະກັຫທິຍເຖຣະ. ໃນວັນນຶ່ງ ມີພຣະກິກຂຸປະມາຕ ໓໐ ອົງຄ໌ ມາເຝົ້າພຣະສາສດາ ໄດ້ເຫັນພຣະເຖຣະອອກໄປຈາກທີ່ເຝົ້າ ພຣະອົງຄ໌ຈຶ່ງຕຣັສຖາມ ກິກຂຸ ທັງຫລາຍ ເຫລົ່ານັ້ນວ່າ ເມື່ອທ່ານເຂົ້າມາ ທ່ານເຫັນ ພຣະເຖຣະອົງຄ໌ນັ້ນ ຫຣືບໍ່. ກິກຂຸ ທັງຫລາຍເຫລົ່ານັ້ນ ທູລວ່າ ບໍ່ເຫັນ ພຣະເຈົ້າຂ້າ. ເຫັນແຕ່ສາມເຕຣນ້ອຍອົງຄ໌ນຶ່ງ. ພຣະອົງຄ໌ ຈຶ່ງຕຣັສວ່າ ນັ້ນແຫລະ ເຖຣະ. ກິກຂຸ ຈຶ່ງທູລຖາມວ່າພຣະເຖຣະນ້ອຍແທ້. ພຣະພຸທລອົງຄ໌ ຈຶ່ງທຣົງຕຣັສ ພຣະຄາຖານີ້.

---

ກໆ

ນະ ວາກກະຣະຕະມັຕເຕນະ

ວັຕຕະໂປກຂະຣະຕາຍະ ວາ

ສາລຸຣູໂປ ນະໂຣ ໂຫຕິ

ອິສສຸກີ ມັຈຈະຣີ ສະໂກ ໒໔໙໔໒

ບໍ່ແມ່ນວ່າ ເວົ້າຈາຄ່ອງແຄ້ວ, ບໍ່ແມ່ນຍ້ອນມີຜິວພັຣຕສວຍງາມ ທີ່ເຮັດໃຫ້ເປັນຄົນດີໄດ້ ຖ້າຫາກວ່າ ເຂົາຍັງມີຄວາມອິສສາ ຣິษຍາ, ມີຄວາມ

ຂີ້ຖີ່ໜງວແໜ້ນ ມີເລ່ຫລ່ຽມຢູ່ ເຂົາກໍເປັນຄົນດີ ບໍ່ໄດ້ຢູ່ນັ້ນເອງ.

ໆ

ຍັສສະ ເຈຕັງ ສະມຸຈຈິນນັງ
ມູລະຄັຈຈັງ ສະມູຫະຕັງ
ສະ ວັນຕະໂທໂສ ເມລາວີ
ສາລຸຣູໂປຕິ ວຸຈຈະຕິ ໆ໔ຜໝໆ

ຄົນຜູ້ໃດ ທີ່ລະຄວາມອິສສາ ຣິຫຍາ ເປັນຕົ້ນ ຕັດອອກໄດ້ຢ່າງເດັດຂາດ, ຄົນສລາດ ປາສຈາກກິເລສ ເຊັ່ນນີ້ໄດ້ແລ້ວ ຮຽກວ່າ ຄົນດີ.

# ເຣື່ອງ ສັມພະຫຸລະກິກຂຸ

ພຣະບໍຣົມສາສດາ ທຣົງຜາຣົພ ພຣະກິກຂຸ ຫລາຍອົງຄ໌ ເປັນຜູ້ມັກໄຄ່ ໃນລາພສັກກາຣະ ເຂົ້າເຝົ້າ ທູລຂໍໃຫ້ພຣະອົງຄ໌ ທຣົງບັງຄັບ ກິກຂຸທີ່ຮຽນຣັມມ໌ ໃນສຳນັກກິກຂຸອື່ນໆ ມາແລ້ວນັ້ນ ຕ້ອງໃຫ້ສອບຊ້ອມ ໃນສຳນັກຂອງຕົນເສັຽກ່ອນ ຈຶ່ງອອກໄປສາລຍາຍຣັມມ໌ໄດ້.

ພຣະສາສດາ ທຣົງຊາບຄວາມປະສົງຄ໌ ຂອງ ກິກຂຸ ເຫລົ່ານັ້ນ ຈຶ່ງບໍ່ທຣົງອະນຸຍາຕໃຫ້ເຮັດ ແລ້ວຈຶ່ງຕຣັສພຣະຄາຖາ ດັ່ງກ່າວນີ້.

---

## ໙

ນະ ມຸຕາຫະເກນະ ສະມະໂຕ
ອັພພະໂຕ ອະລິກັງ ກະຕັງ
ອິຈຉາ ໂລກະສະມາປັນໂນ
ສະມະໂຕ ກິງ ກະວິສສະຕິ ໆ໔໖໔ໆ

ຄົນທີ່ແຖຫົວໂລ້ນ ໄຮ້ສີລວັຕຮ໌, ກ່າວຄຳບໍ່ສັຕຍ໌ ບໍ່ຈິງ ບໍ່ນັບວ່າເປັນ ສະມະຕະ, ເຂົາມີແຕ່ຄວາມຢາກ ແລະ ຄວາມໂລພໂລພາ (ຢ່າງນີ້) ຈັກເປັນ ສະມະຕະ ໄດ້ຢ່າງໃດ.

## ໑໐

ໂຍ ຈະ ສະເມຕິ ປາປານິ
ອະຕຸງຖູລານິ ສັພພະໂສ
ສະມິຕັຕຕາ ຫິ ປາປານັງ
ສະມະໂຕຕິ ປະວຸຈຈະຕິ ໆ໔໖໕ໆ

ຜູ້ທີ່ຣະງັບດັບເສັຍ ຊຶ່ງບາບ ທັງຫລາຍ ທັງນ້ອຍ ແລະ ໃຫຍ່, (ຜູ້ນັ້ນ) ແລ ຮຽກວ່າສະມະຕະ ເປັນຜູ້ສງົບຣະງັບ ເພາະເລີກລະບາບໄດ້.

# ເຣື່ອງ ຫັຕຖກະຠິກຂຸ

ພຣະບໍຣົມສາສດາ ທຣົງຜາຣົພ ຫັຕຖກະຠິກຂຸ ພຣະຠິກຂຸອົງຄ໌ນີ້ ເພິ່ນມັກເວົ້າຕລົບຕແລງ ປີ້ນໄປປີ້ນມາ. ວັນນຶ່ງ ເພິ່ນໄດ້ນັດພົບກັບພວກເດັຍຣຖີຍ໌ ໃຫ້ໄປປະຊຸມໃນທີ່ແຫ່ງນຶ່ງ ເພື່ອສົນທະນາກັນ. ຄັນເຖິງເວລາກຳນົດກັນ ເພິ່ນກໍໜີໄປທາງອື່ນເສັຍ. ໃນເມື່ອຍັງບໍ່ທັນເຖິງເວລາ ເພິ່ນຊ້ຳພັດໄປເຖິງທີ່ນັດໝາຍກ່ອນ ແລະພວກເດັຍຣຖີຍ໌ ເຂົາກໍບໍ່ທັນມາ ດັ່ງນີ້ເປັນຕົ້ນ. ບັດນັ້ນ ເພິ່ນຈຶ່ງເວົ້າອວດວ່າພວກເດັຍຣຖີຍ໌ຢ້ານເພິ່ນຈຶ່ງບໍ່ມາຕາມນັດ ພຣະສາສດາ ທຣົງຊາບ ຈຶ່ງຮັບສັ່ງໃຫ້ນຳຕົວເຂົ້າມາສອບສວນ ແລ້ວທຣົງເທສນາສັ່ງສອນ ຕຣັສພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມານັ້ນ.

---

## ໑໑

ນະ ເຕນະ ຠິກຂຸ ໂສ ໂຫຕິ
ຍາວະຕາ ຠິກຂະເຕ ປະເຣ
ວິສສັງ ຘັມມັງ ສະມາທາຍະ
ຠິກຂຸ ໂຫຕິ ນະ ຕາວະຕາ ຯ໒໖໖ຯ

ຜູ້ທີ່ພຽງແຕ່ວ່າ ຂໍຠິກຂາຈາກຜູ້ອື່ນ, ຜູ້ນັ້ນ ບໍ່ຊື່ວ່າ ເປັນຠິກຂຸ. ຖ້າຍັງປະພຶຕຣ໌ຕົນເໝືອນຊາວບ້ານຢູ່ ກໍຍັງບໍ່ໄດ້ຊື່ວ່າ ເປັນຠິກຂຸ.

໑໔

ໂຍລະ ປຸລລັລຈະ ປາປັລຈະ
ພາເທຕວາ ພຣາຫ໌ມະຈະຣິຍະວາ
ສັງຂາຍະ ໂລເກ ຈະຣະຕິ
ສະ ເວ ກິກຂູຕິ ວຸຈຈະຕີ ໑໔ລືກໆ

ຜູ້ໃດລະເສັຍຊຶ່ງບຸລ ແລະບາບໄດ້ທຸກຊນິດ ດຳຣົງຊີວິຕປະເສີກສຸດຢູ່ໃນໂລກມະນຸສດ້ວຍປັລລາ ຜູ້ນັ້ນແລ ຮຽກວ່າ ກິກຂຸ.

## ເຣື່ອງ ອັລລຕຣະພຣາຫມຕ໌

ພຣະບໍຣົມສາສດາ ທຣົງຜາຣົພ ພຣາຫມຕ໌ຄົນນຶ່ງ ບວຊພາຍນອກພຸທລສາສນາ ທ່ຽວກິກຂາຈາຣ (ບິຕທບາຕ) ລ້ຽງຊີວິຕ. ພຣາຫມຕ໌ ຜູ້ນີ້ມາຄິດໄດ້ວ່າ ພຣະສມຕະໂຄດົມ ທຣົງຮຽກສາວົກຂອງພຣະອົງຄ໌ ຜູ້ທີ່ທ່ຽວໂຄຈຣ ບິຕທບາຕວ່າ ກິກຂຸ. ສ່ວນເຮົານີ້ ກໍທ່ຽວກິກຂາຈາຣ ເໝືອນກັນເຮົາກໍຄວນຈະຮຽກຕົນວ່າ ເປັນກິກຂຸໄດ້. ເຂົາຈຶ່ງໄດ້ເຂົ້າໄປເຝົ້າ ທູລຄວາມນັ້ນ ແດ່ ພຣະສາສດາ. ພຣະພຸທລອົງຄ໌ ຈຶ່ງໄດ້ຕຣັສ ພຣະຄາຖາ ດັ່ງກ່າວທີ່ໄດ້ຍົກຂຶ້ນມາ ໃນຂ້າງຕົ້ນນີ້.

---

## ໑໓

ນະ ໂມເນນະ ມຸນີ ໂຫຕີ
ມູຍຫະຮູໂປ ອະວິທທະສຸ
ໂຍ ຈະ ຕຸລັງວະ ປັຄຄັຍຫະ
ອະຣະມາທາຍະ ປັຕຫິໂຕ ໆ໔໖໘ໆ

ຄົນໂງ່ຈ້າທຳທ່າ ນັ່ງນິ້ງຢູ່ ບໍ່ຮູ້ຫຍັງ (ຜູ້ນັ້ນ) ບໍ່ນັບວ່າເປັນມຸນີ (໑) ສ່ວນຜູ້ມີປັນຍາ ທຳຕົນເໝືອນຖືຄັນຊັ່ງຕາຊິງ ລະຖິ້ມຄວາມຊົ່ວ ເລືອກເອົາແຕ່ຄວາມດີ. (໑) ນັກປຣາຊຸ໌ ບັຕຫິຕ)

## ໑໔

ປາປານິ ປະຣິວັຊເຊຕິ
ສະ ມຸນີ ເຕນະ ໂສ ມຸນີ
ໂຍ ມຸນາຕິ ອຸໂກ ໂລເກ
ມຸນີ ເຕນະ ປະວຸຈຈະຕິ ໆ໔໖໙ໆ

ດ້ວຍປະຜິປະທາ ດັ່ງທີ່ກ່າວມາໃນຂໍ້ທີ່ ໑໓ ນັ້ນ ຮຽກໄດ້ວ່າ ເປັນມຸນີ ແລະຜູ້ທີ່ຮູ້ໂລກນີ້ ທັງໂລກໜ້າດ້ວຍ ຜູ້ນັ້ນຄວນໄດ້ ສມະຍານາມວ່າ ມຸນີ.

# ເຣື່ອງ ເດັຍຣຖີຍ໌

ພຣະບໍຣົມສາສດາ ທຣົງຜາຣົພ ພວກເດັຍຣຖີຍ໌. ໃນເມື່ອພຣະອົງຄ໌ ທຣົງອະນຸຍາຕ ໃຫ້ກິກຂຸ ທັງຫລາຍ ທຳພິທີ ອະນຸໂມທະທານໄດ້. ເມື່ອ ຄົນທັງຫລາຍ ໄດ້ຍິນໄດ້ຟັງຄຳອະນຸໂມທະນານັ້ນ ກໍມີຄວາມປີຕິຍິນດີເປັນ ຢ່າງຍິ່ງ ຈຶ່ງພາກັນທຳສັກກາຣະບູຊາ ພຣະກິກຂຸສົງພ໌ ເປັນອັນມາກ.

ພວກເດັຍຣຖີຍ໌ ຈຶ່ງທ່ຽວໂພນທະນາວ່າ ສາວົກຂອງ ພຣະສມະນະ ໂຄດົມ ເປັນຜູ້ເວົ້າຫລາຍ. ພວກເຮົາທີ່ເປັນ ມຸນີ ນັ້ນ ຈະນັ່ງນິ້ງຢູ່. ພຣະ ສາສດາ ທຣົງຊາບເຣື່ອງນີ້ ຈຶ່ງຕຣັສພຣະຄາຖາ ດັ່ງທີ່ຍົກຂຶ້ນມາຂ້າງເທິງນີ້.

---

## ໑໕

ນະ ເຕນະ ອະຣິໂຍ ໂຫຕິ
ເຍນະ ປານານິ ຫິງສະຕິ
ອະຫິງສາ ສັພພະປານານັງ
ອະຣິໂຍຕິ ປະວຸຈຈະຕິ ໑໘໗໐໑

ບຸຄຄົລໃດ ທີ່ຍັງບຽດບຽນສັຕວ໌ຢູ່, ບຸຄຄົລຜູ້ນັ້ນ ບໍ່ນັບໄດ້ວ່າເປັນ ອາຣະຍະຊົນ. ເພາະເຂົາບໍ່ບຽດບຽນສັຕວ໌ທັງປວງ ເຂົາຈຶ່ງຊື່ວ່າອາຣະຍະຊົນ

# ເຣື່ອງ ອະຣິຍະພາລິສິກະ

ພຣະບໍຣົມສາສດາ ທຣົງຜາຣົພ ນາຍພານເບັດຜູ້ນຶ່ງ ຊື່ວ່າ ອຣິຍະ. ພຣະອົງຄ໌ ທອດພຣະເນຕຣ໌ເຫັນ ໂສດາປັຕຕິຜົລ ຂອງນາຍພານຜູ້ນີ້ ຈຶ່ງໄດ້ສເດັຈໄປໃນສຳນັກຂອງເຂົາ ແລະ ມີຣັບສັ່ງຖາມວ່າ ທ່ານຊື່ວ່າຢ່າງໃດ? ພານເບັດຈຶ່ງທູລວ່າ ຂ້າພຣະອົງຄ໌ຊື່ວ່າ ອະຣິຍະ. ພຣະອົງຄ໌ ຈຶ່ງຕຣັສວ່າ ຜູ້ທຳປາຓາຕິບາຕ (ຂ້າສັຕວ໌ຢູ່) ບໍ່ຊື່ວ່າ ອະຣິຍະ. ອະຣິຍະ ຕ້ອງບໍ່ບຽດບຽນສັຕວ໌ ດັ່ງນີ້. ບັດນັ້ນ ພຣະອົງຄ໌ ຈຶ່ງຕຣັສພຣະຄາຖາ ດັ່ງທີ່ກ່າວມານີ້.

---

### ໑໖

ນະ ສີລັພພະຕະມັຕເຕນະ
 ພາຫຸສັຈເຈນະ ວາ ປະນະ
ອະຖະວາ ສະມາຘິລາເຠນະ
 ວິຈິຕຕະສະຍະເນນະ ວາ ຯ໒໗໑ຯ

### ໑໗

ຜຸສາມິ ເນກຂັມມະສຸຂັງ
 ອະປຸຖຸຊຊະນະເສວິຕັງ

ກີກຂຸ ວິສສາສະມາປາທີ
ອັປປັຕໂຕ ອສະວັກຂະຍັງ ໑໔໗໔໑

໑໕-໑໗. ກີກຂຸ ເອີຍ! ອັນວ່າ ພຽງແຕ່ສີລາຈາຣວັຕຣ໌, ມີກູນິ ປຣິຍັຕິ ຄືງແກ່ການຮຽນ ການສຶກສາ, ບໍ່ທຳຄວາມພຽຣ ປະຕິບັຕິຈົນໄດ້ຊານ ອາສັຍຢູ່ໃນສຖານທີ່ ອັນສງົບສງັດ ເທົ່ານັ້ນ, ຖ້າກຳຈັດກິເລສຍັງບໍ່ໄດ້ ທັງ ໝົດ ທ່ານກໍຢ່າຟ້າວນີ້ງນອນໃຈວ່າ ໄດ້ຮັບຄວາມສຸຂ ໃນການບັຣພຊາ ທີ່ ສາມັນຊົນທົ່ວໄປ ບໍ່ໄດ້ສຳຜັສ.

## ເຣື່ອງ ສັມພຫຸລະກີກຂຸ

ພຣະບໍຣົມສາສດາ ທຣົງຜາຣົພ ກີກຂຸ ຜູ້ທີ່ເຖິງພ້ອມດ້ວຍ ສີລາ ທິຄຸຕເປັນອັນມາກ. ບາງພວກ ກໍສົມບູຣຕ໌ດ້ວຍສີລ, ບາງພວກ ກໍສົມບູຣຕ໌ ດ້ວຍລຸດົງຄ໌, ບາງພວກເປັນ ພຫູສຸຕ, ບາງພວກ ມັກອາສັຍຢູ່ໃນເສນາສນະ ອັນສງົບສງັດ, ບາງພວກສົມບູຣຕ໌ດ້ວຍຊານສະມາບັຕິ. ພຣະກີກຂຸ ເຫລົ່າ ນັ້ນ ມາເຂົ້າໃຈວ່າ ພຣະອຣຫັຕ ເປັນຂອງບໍ່ຍາກ ຈະເອົາຍາມໃດ ຕ້ອງການ ຍາມໃດ ກໍໄດ້ ຢູ່ໃນກຳມືແລ້ວ.

ໃນວັນນຶ່ງ, ຈຶ່ງໄດ້ພາກັນໄປເຂົ້າເຝົ້າ ພຣະສາສດາ ທູລຄວາມດຳຣິ ນັ້ນ ໃຫ້ທຣົງຊາບ. ພຣະຍອດແກ້ວສັພພັຍຍູ ຈຶ່ງໄດ້ຕຣັສພຣະຄາຖານີ້.

---

# ມັຄຄວັຄຄ໌ ທີ່ ໒໐

## ໝວດ ວ່າດ້ວຍທາງ

໑

ມັຄຄານັຜຖັງຄິໂກ ເສຜໂຖ
　　ສັຈຈານັງ ຈະຕຸໂຣ ປະທາ
ວິຣາໂຄ ເສຜໂຖ ລັມມານັງ
　　ທິປະທານັຌຈະ ຈັກຂຸມາ ຯ໒໗໓ຯ

ຍອດແຫ່ງ ມັຄຄາ ທັງຫລາຍນັ້ນ ໄດ້ແກ່ ອັຜຖັງຄິກະມັຄຄ໌, ຍອດແຫ່ງສັຈຈະ ໄດ້ແກ່ ອະຣິຍະສັຈຈ໌ ໔ ປະການ, ຍອດແຫ່ງລັມມ໌ ໄດ້ແກ່ ຄວາມປາສຈາກຣາຄະ, ຍອດແຫ່ງມະນຸສ (ສັຕວ໌ ໒ ເທົ້າ) ໄດ້ແກ່ ພຣະຜູ້ເຫັນແຈ້ງ.

໒

ເອສະວະ ມັຄໂຄ ນັຕຖັຌໂຌ
　　ທັສສະນັສສະ ວິສຸທລິຍາ

ເອຕັລຫິ ຕຸມເຫ ປະຜິປັຊຊະຖະ
ມາຣັສເສຕັງ ປະໂມຫະນັງ ໆ໒໗໔ໆ

ມີທາງດຽວນີ້ ເທົ່ານັ້ນ ບໍ່ມີທາງອື່ນ ທີ່ຈະນຳໄປສູ່ຄວາມບໍຣິສຸທລິແຫ່ງທັສນະ. ພວກທ່ານ ຈົ່ງເດີນໄປຕາມທາງເສັ້ນນີ້ເຖີ້ນ. ທາງເສັ້ນນີ້ພລາມາຣ ມັກເດີນຫລົງສເມີ.

໓

ເອຕັລຫິ ຕຸມເຫ ປະຜິປັນນາ
ທຸກຂັສສັນຕັງ ກະຣິສສະຖະ
ອັກຂາໂຕ ເວ ມະຍາ ມັຄໂຄ
ອັລລາຍະ ສັລລະສັຕຖະນັງ ໆ໒໗໕ໆ

ເມື່ອເດີນຕາມທາງສາຍນີ້ແລ້ວ ພວກທ່ານຈະໝົດທຸກຂ໌. ທາງສາຍນີ້ເຮົາໄດ້ຊີ້ບອກໄວ້ ຫລັງຈາກທີ່ເຮົາໄດ້ຮູ້ຊຶ່ງວິລີຖອນລູກສອ ຄື ກິເລສ.

໔

ຕຸມເຫຫິ ກິຈຈັງ ອາຕັປປັງ
ອັກຂາຕາໂຣ ຕະຖາຄະຕາ

ປະຜີປັນນາ ປະໄມກຂັນຕິ
ຊາຍີໂນ ມາຣະພັນລະນາ ໆ໒໗໓ໆ

ພວກທ່ານ ທັງຫລາຍ ຈົ່ງທຳຄວາມພຽຣເຖິດ, ພຣະຕະຖາຄົຕນັ້ນເປັນພຽງຜູ້ຊີ້ບອກທາງ ເທົ່ານັ້ນ. ຜູ້ທີ່ບຳເພັລຊານ ເດີນຕາມທາງສາຍນີ້ ກໍຈັກພົ້ນຈາກເຄື່ອງຜູກຂອງ ພລາມາຣ.

# ເຣື່ອງ ປັຌຈະສຕະກິກຂຸ

ພຣະບໍຣົມສາສດາ ທຣົງຜາຣົພ ພຣະກິກຂຸ ປະມາຕ ໕໐໐ ອົງຄ໌ໄດ້ປະຊຸສົນທະນາກັນ ກ່ຽວກັບຫົນທາງທີ່ຈະສັລຈຣໄປມາທາງເທົ້າວ່າ ໃນທີ່ນັ້ນ ໆ ເປັນຢ່າງນັ້ນ ໆ ບໍ່ຄືກັນໄປໝົດ. ພຣະຕຖາຄົຕ ໄດ້ສເດັຈໄປຍັງທີ່ປະຊຸມກັນນັ້ນ ທຣົງສແດງພຣະລັມມິກະຖາ ແລ້ວຕຣັສພຣະຄາຖາ ດັ່ງກ່າວ ທີ່ໄດ້ຍົກຂຶ້ນມາ ໃນຂ້າງຕົ້ນນີ້.

---

* ໕

ສັພເພ ສັງຂາຣາ ອະນິຈຈາ
ຍະທາ ປັຌຌາຍະ ສັສສະຕິ

ອະຖະ ນິພພິນທະຕິ ທຸກເຂ
ເອສະ ມັຄໂຄ ວິສຸທລິຍາ ໑໔໗໗໑

"ສັງຂາຣ ທັງຫລາຍ ທັງປວງບໍ່ທ່ຽງ" ເມື່ອໃດ ບຸຄຄົລເຫັນແຈ້ງດ້ວຍປັຌຌາ ດັ່ງນີ້, ເມື່ອນັ້ນ, ເຂົາຍ່ອມໜ່າຍໃນທຸກຂ໌. ອັນນີ້ ເປັນທາງແຫ່ງຄວາມບໍຣິສຸທລິ.

## ໕

ສັພເພ ສັງຂາຣາ ທຸກຂາຕິ
ຍະທາ ປັຌຌາຍະ ປັສສະຕິ
ອະຖະ ນິພພິນທະຕິ ທຸກເຂ
ເອສະ ມັຄໂຄ ວິສຸທລິຍາ ໑໔໗໗໒

"ສັງຂາຣ ທັງຫລາຍ ທັງປວງ ເປັນທຸກຂ໌" ເມື່ອໃດ ບຸຄຄົລເຫັນແຈ້ງດ້ວຍປັຌຌາ ດັ່ງນີ້, ເມື່ອນັ້ນ ເຂົາຍ່ອມໜ່າຍໃນທຸກຂ໌. ອັນນີ້ ເປັນທາງແຫ່ງຄວາມບໍຣິສຸທລິ.

## ໗

ສັພເພ ລັມມາ ອະນັຕຕາ
ຍະທາ ປັຌຌາຍະ ປັສສະຕິ

ອະຖະ ນິພພິນທະຕິ ທຸກເຂ
ເອສະ ມັຄໂຄ ວິສຸທຄິຍາ ໑໔໗ລ໑

"ລັມມ໌ ທັງຫລາຍ ເປັນ ອນັຕຕາ" ບໍ່ແມ່ນຕົນຕົວ, ເມື່ອໃດບຸຄ-ຄົລເຫັນແຈ້ງດ້ວຍປັນຍາ ດັ່ງນີ້ ເມື່ອນັ້ນແລ ເຂົາຍ່ອມເບື່ອໜ່າຍໃນທຸກຂ໌

# ເຣື່ອງ ອະປະຣະປັນຈະສຕະກິກຂຸ

ພຣະບໍຣົມສາສດາ ທຣົງຜາຣົພ ກິກຂຸ ປະມານ ໕໐໐ ອົງຄ໌ອີກພວກນຶ່ງ. ກິກຂຸ ທັງຫລາຍ ເຫລົ່ານັ້ນ ຮຽນກັມມຖານ ໃນສໍານັກຂອງພຣະອົງຄ໌ແລ້ວໄປກະທໍາຄວາມພຽຣຢູ່ໃນປ່າ ຍັງບໍ່ທັນບັຣລຸ ອຣຫັຕ ຈຶ່ງກັບມາເຝົ້າ ພຣະອົງຄ໌ ທູລຂໍປ່ຽນກັມມຖານໃໝ່ ພຣະພຸທລອົງຄ໌ ຈຶ່ງປະທານພຣະຄາຖາ ດັ່ງທີ່ຍົກຂຶ້ນມາໃນຂ້າງເທິງນີ້.

---

໗

ອຸຍຖານະກາລັມຫິ ອະນຸຍຖະທາໂນ
ຍຸວາ ພະລີ ອາລະສິຍັງ ອຸເປໂຕ
ສັງສັນນະສັງກັປປະມະໂນ ກຸສີໂຕ
ປັນຍາຍະ ມັຄຄັງ ອະລະໂສ ນະ ວິນທະຕິ ໑໔໗໐໑

ຄົນເຮົາ ເມື່ອຄາວຍັງໜຸ່ມແໜ້ນ ແຂງແຮງຢູ່ ແຕ່ຂີ້ຄ້ານ ບໍ່ຂຍັນ ໝັ່ນພຽຣໃນເວລາທີ່ຄວນຂຍັນ ມີຄວາມຄິດຕົກຕ່ຳ. ຄົນຂີ້ຄ້ານ ຍ່າງເຕື້ອຍ ເຕື້ອຍ ເມື່ອຍລ້າ ເຊັ່ນນີ້ ຍ່ອມບໍ່ພົບພໍ້ຫົນທາງແຫ່ງ ປັນຍາ.

## ເຣື່ອງ ປະທານກັມມິກະຕິສສະ ພິກຂຸ

ພຣະບໍຣົມສາສດາ ທຣົງປາຣົພ ພຣະປະທານກັມມິກະຕິສສະ ພິກຂຸ ເພິ່ນໄດ້ເຫັນ ພຣະອົງຄ໌ ທຣົງທຳປະຝິສັນຖາຣຕ້ອນຮັບ ພິກຂຸ ທັງຫລາຍ ຜູ້ທີ່ໄດ້ຮຽນກັມມຖານພ້ອມກັບຕົນ ໄປຈເຣີນສມຕະທັມມ໌ ສຳເຣັຈພຣະ ອຣຫັຕແລ້ວມາເຝົ້າພຣະພຸທສອົງຄ໌. ເພິ່ນກໍ່ມີປະສົງຄ໌ຢາກໃຫ້ພຣະສາສດາ ທຣົງທຳປະຝິສັນຖານກັບຕົນ ຄືກັນ. ເພິ່ນຈຶ່ງຂມັງຂມໍ່ຟ້າວໄປເດີນຈົງກຣົມ ໃນທີ່ແຫ່ງນຶ່ງ ເຫງົານອນລົ້ມລົງຂາຫັກ ຈຶ່ງຮ້ອງໂຮຂຶ້ນ. ພຣະພິກຂຸ ທັງ ຫລາຍ ກໍ່ຊ່ອຍກັນຈັດແຈງພຍາບາລເພິ່ນຈົນຫາຍດີ. ຍ້ອນອຸບັຕິເຫຕຸນັ້ນ ເພິ່ນຈຶ່ງບໍ່ໄດ້ໄປພິກຂາຈາຣ. ພຣະສາສດາ ໄດ້ສເດັຈມາສແດງໂທສຂອງຜູ້ ທີ່ກະທຳຊຶ່ງກິຈກັມມ໌ ອັນຄວນກະທຳກ່ອນ ເອົາມາກະທຳພາຍຫລັງ ແລ້ວຈຶ່ງ ຕຣັສ ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາຂ້າງຕົ້ນນີ້.

---

ຝ

ວາຈານຸຣັກຂີ ມະນະສາ ສຸສັງວຸໂຕ
ກາເຍນະ ຈະ ອະກຸສະລັງ ນະ ກະຍິຣາ
ເອເຕ ຕະໂຍ ກັມມະປະເຖ ວິໂສຣະເຍ
ອາຣາຣະເຍ ມັຄຄັງ ອິສິປປະເວທິຕັງ໚໔໘໑໚

ຄວນສຳຣວມ ຣະມັດຣະວັງ ວາຈາ ແລະໃຈ, ບໍ່ຄວນທຳບາບທາງກາຍ, ຄວນຊຳຣະແຜ້ວຖາງທາງ ກັມມ໌ ກາຣກະທຳທັງ ໓ ນີ້ໃຫ້ສະອາດ ບໍຣິສຸທຸລິ ເມື່ອເຮັດໄດ້ເຊັ່ນນີ້ ເຂົາກໍຈະໄປພົບກັບຫົນທາງທີ່ ພຣະພຸທຸລເຈົ້າທັງຫລາຍ ທຣົງສແດງໄວ້ນັ້ນ.

## ເຣື່ອງ ສຸກຣເຜຕ

ພຣະບໍຣົມສາສດາ ທຣົງຜາຣົພ ສຸກຣເຜຕ (ເຜຕທີ່ມີຕົວເປັນຄົນມີຫົວເປັນໝູ) ຍ້ອນບຸພພກັມມ໌ ຄັ້ງເມື່ອເຜຕຕົວນີ້ ເປັນກິກຂຸ ໃນສາສນາຂອງ ພຣະກັສສປະພຸທຸລເຈົ້າ. ເຂົາກ່າວວາຈາຍຸຍົງ ພຣະເຖຣະ ໔ ອົງຄ໌ຜູ້ມີສີລາລິຖຸຕອັນດີ ໃຫ້ຄຽດຊັງບາດໝາງແຕກສາມັຄຄີກັນ. ດ້ວຍກັມມ໌ອັນນັ້ນ ຈຶ່ງໄປໄໝ້ຢູ່ໃນນະຣົກ ອະເວຈີ ສິ້ນພຸທຸລັນດຣ(໑) ນຶ່ງ. ຕົກມາໃນພຸທຸລກາລນີ້ ຈຶ່ງເກີດມາເປັນ ສຸກຣເຜຕ ຢູ່ທີ່ ພູເຂົາຄິຊຸຊະກູຜ.

ເມື່ອພຣະໂມຄຄັລລານະເຖຣະ ເຫັນແລ້ວ ຈຶ່ງເລົ່າໃຫ້ພຣະລັກຂຕະ ໃນທີ່ສະເພາະພຣະພັກຕຣ໌ ຂອງພຣະສາສດາ. ພຣະພຸທທອົງຄ໌ ຈຶ່ງຕຣັສຊຶ່ງ ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາໃນຂ້າງຕົ້ນນີ້.

(໑) ຕລອດພຸທທະກັປປ໌ນຶ່ງ.

---

## ໑໐

ໂຍຄາ ເວ ຊາຍະເຕ ພູຣິ
ອະໂຍຄາ ພູຣິສັງຂະໂຍ
ເອຕັງ ທ຺ເວທາປະຖັງ ຍັຕວາ
ພະວາຍະ ວິພະວາຍະ ຈະ
ຕະຖັຕຕານັງ ນິເວເສຍຍະ
ຍະຖາ ພູຣິ ປະວັທທະຕິ ໒໘໒໔໒

ປັນຍາເກີດມີຂຶ້ນໄດ້ ກໍຍ້ອນຕັ້ງໃຈ ພິນິຈພິຈາຣະນາ, ປັນຍາເສື່ອມໄປ ກໍຍ້ອນບໍ່ໄດ້ຕັ້ງໃຈພິນິຈພິຈາຣະນາ. ເມື່ອເຮົາມາຮູ້ທາງຈເຣີນ ແລະ ທາງ ແຫ່ງຄວາມເສື່ອມ ຂອງປັນຍານີ້ແລ້ວ ເຮົາກໍຄວນທຳຕົນໄປໃນວິຖີທາງທີ່ ຈະເຮັດໃຫ້ ປັນຍາຈເຣີນ.

# ເຣື່ອງ ພຣະໂປຖິລະເຖຣະ

ພຣະບໍຣົມສາສດາ ຫຣົງຜາຣົພ ພຣະໂປຖິລະເຖຣະ ຜູ້ຫຣົງພຣະ-ໄຕຣປິຜົກ ເປັນອາຈາຣຍ໌ ບອກພຣະລັມມ໌ແກ່ ກິກຂຸ ທັງຫລາຍ. ວັນນຶ່ງ ເພິ່ນໄດ້ຍິນ ພຣະສາສດາ ຕຣັສຮຽກເພິ່ນວ່າ ກິກຂຸ ຜູ້ມີຄັມກີຣ໌ເປົ່າ ກໍຄິດ ສັງເວຊສລົດໃຈ ເຂົ້າໄປຂໍອາສັຍຢູ່ນໍາກິກຂຸ ຜູ້ຊີຕາສົພມີຢູ່ ປະມາຕ ໓໐ ອົງຄ໌ ໃນປ່າແຫ່ງນຶ່ງ. ເພິ່ນເຂົ້າໄປຫາ ພຣະເຖຣະກ່ອນ ຂໍໃຫ້ເພິ່ນເປັນທີ່ເພິ່ງ ພຣະເຖຣະບໍ່ຮັບ ຈຶ່ງເຂົ້າໄປຫາ ກິກຂຸອົງຄ໌ອື່ນໂດຍລໍາດັບ ຈົນວ່າໄປເຖິງສາມເຕຣ ອາຍຸ ໗ ຂວບ ເປັນທີ່ສຸດ. ສາມເຕຣແກ້ງເຮັດບິດບັງບໍ່ຢາກຮັບ. ເພິ່ນຈຶ່ງອ້ອນວອນ ໂດຍປະການຕ່າງ ໆ. ຄັນເຫັນວ່າເພິ່ນໝົດທິຜຖິ ມານະແລ້ວ ຈຶ່ງກ່າວວ່າ ທ່ານອາຈາຣຍ໌ ໂພນປວກແຫ່ງນຶ່ງ ມີຮູ ຢູ່ ໖ ຮູ. ມີເຫັ້ຍເຂົ້າໄປຢູ່ໃນຮູນັ້ນ ຮູ ນຶ່ງ. ຄົນຢາກຈະຈັບເອົາເຫັ້ຍນັ້ນ ກໍຈົ່ງອັດ ໕ ຮູເສັຍ ຈົ່ງຄອຍຈັບໃນຮູ ທີ່ເຫັ້ຍເຂົ້າໄປນັ້ນ. ອັນນີ້ ສັນໃດ ທ່ານອາຈາຣຍ໌ ຈົ່ງອັດທວາຣທັງ ໕ ນັ້ນເສັຍ ແລ້ວກໍານົດການງານໃນ ມະໂນທວາຣ ສັນນັ້ນເຖີດ.

ເມື່ອ ກິກຂຸນັ້ນ ໄດ້ຟັງເຊັ່ນນັ້ນແລ້ວ ກໍເຫັນແຈ້ງ ເພາະຕົນກໍເປັນພຫູສູຕຢູ່ແລ້ວ. ບັດນັ້ນ ຈຶ່ງເຣີ່ມບໍາເພັຌ ສມຕະລັມມ໌. ພຣະສາສດາ ຈຶ່ງຫຣົງເປັ່ງ ພຣະໂອກາສໄປ ຊຶ່ງເໝືອນກັບວ່າ ພຣະອົງຄ໌ ຫຣົງປະທັບຢູ່ໃນທີ່ສະເພາະໜ້າ ຂອງ ກິກຂຸ ອົງຄ໌ນັ້ນ ແລ້ວຕຣັສພຣະຖາດັ່ງທີ່ຍົກຂຶ້ນມານັ້ນ

## ໑໑

ອະນັງ(໑) ລິນທະຖະ ມາ ຣຸກຂັງ(໔)
ອະນະໂຕ ຊາຍະເຕ ກະຍັງ
ເຈຕວາ ອະນັລຈະ ອະນະຖຸລຈະ
ນິພພານາ ໂທຖະ ກິກຂະໂວ ๆ໔ໆ໓ๆ

ດູຣາ ກິກຂຸ ທັງຫລາຍ ພວກທ່ານ ຈົ່ງຖາງປ່າ(໑) (ຄືຣາຄະ) ແຕ່ຢ່າ ໄດ້ຕັດຕົ້ນໄມ້ແທ້ ໆ(໔) ກັຍຍ່ອມເກີດຈາກປ່າ ແລະ ພຸ່ມໄມ້.ເມື່ອ ຕັດແລ້ວ ຈັກເປັນຜູ້ບໍ່ມີປ່າ, (ບໍ່ມີກັຍ)

(໑)-(໔) ຄຳວ່າປ່າ ແລະ ຕົ້ນໄມ້ໃນທີ່ນີ້ໝາຍເຖິງ ຣາຄະ, ໂທສະ ແລະ ໂມຫະ ນັ້ນເອງ.

---

## ໑໔

ຍາວັລຫິ ອະນະໂຖ ນະ ລິຊຊະຕິ
ອະນຸມັຕໂຕປິ ນະຣັສສະ ນາຣິສຸ
ປະຜິພັທລະມະໂນອະ ຕາວະ ໂສ
ວັຈໂຈ ຂີຣະປະໂກວະ ມາຕະຣິ ๆ໔ໆ໔ๆ

ຕາບໃດ ທີ່ ບຸຣຸສ ຍັງຕັດຄວາມກຳໜັດຍິນດີ ໃນສຕຣີ ບໍ່ໄດ້ແມ່ນແຕ່-

ນ້ອຍດຽວ ບໍ່ຂາດແລ້ວ, ຕາບນັ້ນ, ເຂົາກໍຍັງຄົງມີຈິຕຜູກພັນຢູ່ໃນກົພ ອັນນີ້ ກໍເໝືອນລູກງົວ ທີ່ຍັງບໍ່ທັນຢ່ານົມ ກໍຍັງຕິດແມ່ງົວໄປສັນນັ້ນແລ.

## ເຣື່ອງ ພຣະມຫັລກະເຖຣະ

ພຣະບໍຣົມສາສດາ ທຣົງຜາຣົພ ກິກຂຸ ເຖົ້າແກ່ (ພຣະທົວພໍ່ທົວຕາ) ທີ່ເຂົ້າບວຊເມື່ອແກ່ ຫລາຍອົງຄ໌. ພຣະກິກຂຸ ເຫລົ່ານີ້ ຄາວເປັນຄຣືຫັສຖ໌ ເປັນຄົນຮັ່ງມີ ຊວນກັນອອກບວຊ ແລະ ໄດ້ສ້າງບັຣຕະສາລາຂຶ້ນຫລັງນຶ່ງ ໃນທີ່ສຸດແຫ່ງວິຫາຣ ຄືຕັ້ງຢູ່ແຄມວັດ ແລ້ວກໍພາກັນຢູ່ໃນທີ່ນັ້ນດ້ວຍກັນ. ຝ່າຍກັຣຍາເກົ່າ ຂອງ ກິກຂຸ ອົງຄ໌ນຶ່ງຊື່ວ່າ ນາງມະລຸຣະປາຕິກາ ເປັນຜູ້ອຸປະຖາກ ຈັດຫາບິຕາຫບາຕມາຖວາຍ ພຣະກິກຂຸ ເຫລົ່ານັ້ນບໍ່ໃຫ້ລຳບາກ.

ຄັນນາງ ມະລຸຣະປາຕິກາ ທຳກາລະກິຣິຍາ ຕາຍໄປແລ້ວ. ກິກຂຸທັງຫລາຍ ເຫລົ່ານັ້ນ ກໍໄປປະຊຸມກັນ ທີ່ບັຣຕະສາລາ ກອດຄໍກັນຮ້ອງໄຫ້ ຮ່ຳຣິຮ່ຳໄຣຫາ ຕ່າງ ໆ ນາ ໆ. ເພື່ອນກິກຂຸ ອື່ນເຫັນເຂົ້າ ຈຶ່ງນຳຄວາມນັ້ນມາສົນທະນາກັນ ທີ່ລົມມສາລາ ແລ້ວນຳຂຶ້ນຂາບທູລ ແດ່ ພຣະສາສດາ ໆ ໄດ້ສເດັຈໄປຍັງທີ່ປະຊຸມນັ້ນ ຈຶ່ງຕຣັສພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາເປັນອຸທາຫາຣຕ໌ ໃນຂ້າງຕົ້ນນີ້ ນັ້ນແລ.

---

## ໑໓

ອຸຈຈິນທັງ  ສິເນຫະມັຕຕະໂນ
ກຸມຸທັງ  ສາຣະທິກັງວະ ປາຕິນາ
ສັນຕິມັຕຕະເມວະ  ພຣູຫະຍະ
ນິພພານັງ ສຸຄະເຕນະ ເທສິຕັງ ໑໔໗໕໑

ຈົ່ງຖອນຄວາມຮັກອອກຈາກຕົນ ເໝືອນຄົນຫລົກດອກບົວ ທີ່ເກີດໃນຣະດູຮ້ອນ, ຈົ່ງເພີ້ມພູນແນວທາງ ແຫ່ງສັນຕິ ຄື ນິພພານ ທີ່ພຣະພຸທທເຈົ້າ ທຣົງສແດງໄວ້ແລ້ວ.

## ເຣື່ອງ ສັທທິວິຫາຣິກ ຂອງພຣະສາຣີບຸຕຣ໌

ພຣະບໍຣົມສາສດາ ທຣົງຜາຣົພ ສັທທິວິຫາຣິກ ຂອງພຣະສາຣີບຸຕຣ໌ເຖຣະ ຜູ້ເປັນບຸຕຣ໌ຂອງນາຍຊ່າງຕີຄຳ. ພຣະເຖຣະເຈົ້າ ສອນໃຫ້ຈເຣີນຊຶ່ງອະສຸກະກັມມຖານ ຢູ່ເຖິງ ໔ ເດືອນ ກໍບໍ່ສຳເຣັຈອັນໃດຈັກຢ່າງ. ພຣະເຖຣະເຈົ້າ ຈຶ່ງນຳຕົວໄປເຝົ້າ ພຣະສາສດາ ໆ ຈຶ່ງປະທານດອກບົວ ແກ່ກິກຂຸນັ້ນໃຫ້ບໍຣິກັມມ໌ ໂລຫິຕະກະສິຕ ເພິ່ນກໍໄດ້ສຳເຣັຈ ໃນພຣະກັມມຖານອັນນັ້ນ. ຄັນເຫັນດອກບົວຫ່ຽວ ເສົ້າໝອງ ຈຶ່ງກຳໜົດທຽບໃສ່ ອຸປາທິນນະກະສັງຂາຣ ເຫັນຄວາມເປັນຂອງບໍ່ທ່ຽງ ເປັນທຸກຂ໌ເປັນອະນັຕຕາຜາກົຜໃຫ້ເຫັນ

ພຣະສາສດາ ຈຶ່ງທຣົງເປັ່ງພຣະໂອກາສໄປ ເໝືອນກັບວ່າທຣົງປະທັບຢູ່ໃນທີ່ສະເພາະໜ້າ ແລ້ວຈຶ່ງຕຣັສພຣະຄາຖາ ທີ່ຍົກມາໄວ້ໃນເບື້ອງຕົ້ນນັ້ນແລ.

---

## ໑໔

ອິທະ ວັສສັງ ວະສິສສາມິ
　　ອິທະ ເຫມັນຕະຄິມຫິສຸ
ອິຕິ ພາໂລ ວິຈິນເຕຕິ
　　ອັນຕະຣາຍັງ ນະ ພຸຊຊະຕິ ໒໔໗໖໒

"ເຮົາຈັກຢູ່ໃນທີ່ນີ້ ຕລອດຣະດູຝົນ"
　　"ເຮົາຈັກຢູ່ໃນທີ່ນີ້ຕລອດຣະດູໜາວ ແລະ ຣະດູຮ້ອນ"
ອັນພວກຄົນໂງ່ ຄົນພາລ ມັກຈະຄິດຢ່າງນີ້ ໂດຍບໍ່ຮູ້ອັນຕຣາຍທີ່ຈະຕົກມາເຖິງຕົວເອງ.

## ເຣື່ອງ ມຫາທະນະພານິຊ

ພຣະບໍຣົມສາສດາ ທຣົງຜາຣົພ ມຫາທະນະພານິຊ ເປັນຊາວເມືອງພາຣາດະສີ ຈັດແຈງສິນຄ້າບັນທຸກໃສ່ກວຽນ ໄປຄ້າທີ່ເມືອງສາວັຕຖີ ຜ່ໄປ

ເຖິງກາງທາງເກີດຝົນຕົກໜັກເຖິງ ໆ ວັນ ກໍເລີຍພັກຢູ່ໃນທີ່ນັ້ນ. ພຣະສາສດາ ໄດ້ຕຣັສແກ່ ພຣະອານົນທ໌ວ່າ ອີກ ໆ ວັນ ມັຈຈຸຣາຊຈັກປົງຊີວິຕມຫາລົນະພານິຊ. ພຣະອານົນທ໌ ຈຶ່ງທູລຂໍໂອກາສ ໄປຕັກເຕືອນສັ່ງສອນ. ມຫາລົນະພານິຊ ກໍມີຄວາມເຫລື້ອມໃສ ຈຶ່ງນິມົນຕ໌ ພຣະກິກຂຸສົງຄ໌ ມີພຣະພຸທຣເຈົ້າ ເປັນປະລານ ແລ້ວບໍຣິຈາຄ ມຫາທານ, ພຣະອົງຄ໌ ກໍທຣົງອະນຸໂມທະນາ ແລ້ວຈຶ່ງຕຣັສ ພຣະຄາຖາ ດັ່ງທີ່ຍົກຂຶ້ນມານີ້.

---

## ໑໕

ຕັງ ປຸຕຕະປະສຸສັມມັຕຕັງ
ພຸຍາສັຕຕະມະນະສັງ ນະຣັງ
ສຸຕຕັງ ຄາມັງ ມະໂຫໂฆອະ
ມັຈຈຸ ອາທາຍະ ຄັຈຈະຕິ ໆ໔໗ໆ

## ເຣື່ອງ ນາງກີສາໂຄຕະມີ

ພຣະບໍຣົມສາສດາ ທຣົງຜາຣົພ ນາງກີສາໂຄຕະມີ. ເມື່ອບຸຕຣ໌ຂອງນາງຕາຍແລ້ວ ກໍອູ້ມບຸຕຣ໌ນັ້ນ ໄປທ່ຽວຫາຂໍຢາ ໂດຍຫວັງວ່າຈະປິ່ນປົວບຸຕຣ໌ໃຫ້ຟື້ນຄືນຊີພມາ. ຜູ້ໃດໄດ້ເຫັນເຂົ້າ ກໍເໝົາເອົາວ່າ ນາງເປັນບ້າ.

ຄັ້ງນັ້ນ, ມີບັຕທິຕຜູ້ນຶ່ງ ແນະນຳໃຫ້ນາງໄປເຝົ້າ ພຣະສາສດາ ທີ່

ພຣະວິຫາຣເຊຕວັນ ນາງກໍໄດ້ເຂົ້າໄປເຝົ້າ ທູລຂໍຢາ. ພຣະບໍຣົມສາສດາ ທຣົງ ສແດງພຣະທັມມເທສນາສັ່ງສອນ ໃຫ້ຟື້ນຄືນສະຕິມາໄດ້ ແລ້ວຈຶ່ງ ຕຣັສ ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາ ໃນຂ້າງເທິງນີ້.

---

## ໑໘

ນະ ສັນຕິ ປຸຕຕາ ຕາຕາຍະ
ນະ ປິຕາ ນະປິ ພັນຣະວາ
ອັນຕະເກນາລິປັນນັສສະ
ນັຕຖິ ຍາຕີສຸ ຕານະຕາ ໆ໒໘໘ໆ

ບຸຕຣ໌ ກໍປ້ອງກັນໄວ້ ບໍ່ໄດ້, ບິດາ ຫຣືວ່າ ຍາຕິພີ່ນ້ອງ ກໍປ້ອງ ກັນໄວ້ບໍ່ໄດ້. ຄົນເຮົາ ເມື່ອເຖິງຄາວຈະຕາຍ ໝູ່ຍາຕິ ແລະ ໃຜ ໆ ກໍປ້ອງ ກັນໄວ້ບໍ່ໄດ້ທັງນັ້ນ.

## ໑໙

ເອຕະມັຕຖະວະສັງ ຍັຕວາ
ປັຕທິໂຕ ສີລະສັງວຸໂຕ
ນິພພານະຄະມະນັງ ມັຄຄັງ
ຂິປປະເມວະ ວິໂສທະເຍ ໆ໒໘໙ໆ

ເມື່ອມາຮູ້ຊຶ່ງຄວາມຈິງ ຂໍ້ນີ້ແລ້ວ, ບັຕຫິຕ ຜູ້ທີ່ສລາດ ຜູ້ສຳຣວມໃນສີລ, ຄືນຜູ້ສລາດ ສຳຣວມຣະວັງໃນສີລ, ບໍ່ຄວນຊັກຊ້າ ໃນການຕຽມເນື້ອຕຽມຕົວ ໄປສູ່ພຣະນິພພານ.

# ເຣື່ອງ ນາງປະຜາຈາຣາເຖຣີ

ພຣະບໍຣົມສາສດາ ທຣົງຜາຣົພ ນາງປະຜາຈາຣາເຖຣີ. ເມື່ອບິດາ, ມາຣດາ ແລະ ອ້າຍ ຂອງນາງຕາຍ ດ້ວຍຄວາມໂສກເສົ້າເສັຍໃຈ ອັນຈະຫາອັນໃດມາປຽບບໍ່ໄດ້ ນາງໝົດສະຕິ ລະເມີເພີ້ຝັນໄປ ຈົນເປືອຍກາຍ ບໍ່ນຸ່ງຫົ່ມຜ້າແພຫຍັງ ຍ່າງຊັດເຊເຂົ້າໄປໃນ ພຣະວິຫາຣ ເຊຕວັນ. ໃນຂຕະນັ້ນ, ພຣະສາສດາ ພວມສແດງ ພຣະທັມມະເທສນາ ຢູ່ໃນທ່າມກາງ ພຸທສບໍຣິສັທ. ພຣະອົງຄ໌ ໄດ້ທອດພຣະເນຕຣ໌ເຫັນ ຈຶ່ງທຣົງເຕືອນໃຫ້ນາງມີສະຕິ ແລ້ວຈຶ່ງຕຣັສ ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາໃນຂ້າງຕົ້ນນີ້.

---

# ຈົບ ມັຄຄວັຄຄ໌ ທີ່ ໒໐

# ປະກິດຕະກະວັຄຄ໌ ທີ່ ໔໑

## ໝວດ ປົກຍ່ອຍຕ່າງ ໆ

## ໑

ມັດຕາສຸຂະປະຣິຈຈາຄາ
    ປັສເສ ເຈ ວິປຸລັງ ສຸຂັງ
ຈະເຊ ມັດຕາສຸຂັງ ທີໂຣ
    ສັມປັສສະ ວິປຸລັງ ສຸຂັງ ໆ໔໙໐ໆ

ຖ້າບຸຄຄົລ ເຫັນວ່າ ຈະໄດ້ສຸຂ ອັນຍິ່ງໃຫຍ່ ດ້ວຍການສລະສຸຂອັນເລັກ ໆ ນ້ອຍ ໆ, ນັກປຣາຊຸ໌ ກໍຄວນສລະສຸຂອັນນັ້ນ ເພື່ອເຫັນແກ່ຄວາມສຸຂ ອັນຍິ່ງໃຫຍ່ນັ້ນ.

## ເຣື່ອງ ອັຕຕໂນບຸພພກັມມ໌

ພຣະບໍຣົມສາສດາ ທຣົງຜາຣົພ ບຸພພກັມມ໌ຂອງພຣະອົງຄ໌. ໃນເມື່ອເມືອງໄພສາລີ ເກີດທຸພກິກຂັຍ (ເຂົ້າຢາກໝາກແພງ) ຝູງມນຸຊຍ໌ທີ່ຢາກຈົນ ກໍລົ້ມຕາຍ ເປັນຈຳນວນຫລາຍ ຈົນຊາກສົພເນົ່າເປື່ອຍເໝັນສະເອືອນ ເປື້ອນເປະໄປທົ່ວເມືອງ ດ້ວຍກິ່ນເໝັນອັນນັ້ນ ທຳໃຫ້ເກີດໂຣຄ

ອະຫິວາຕກະ ທັງໝູ່ ອະມນຸຸຫຍ໌ ກໍເຂົ້າໄປຢູ່ ເປັນອັນມາກ.

ຊາວນະຄອນ ໄດ້ປະຊຸມປຶກສາຫາລືກັນ ເພື່ອຫາທາງແກ້ໄຂຕ່າງໆ ນາ ໆ ໄພພິບັດອັນນັ້ນ ກໍບໍ່ສງົບ. ເຂົາເຈົ້າ ຈຶ່ງພ້ອມກັນເຂົ້າໄປເຝົ້າ ທູລນິມົນຕ໌ ພຣະສາສດາ ຊຶ່ງໃນເວລານັ້ນ ພຣະອົງຄ໌ສເດັຈປະທັບຢູ່ໃນ ພຣະນຄອນ ຣາຊຄຣຶຫ໌. ບັດນັ້ນ ເຂົາເຈົ້າໄດ້ຈັດແຈງພຣະນຄອນໃຫ້ສະອາດເພື່ອຕ້ອນຮັບສເດັຈ. ຄັນພຣະອົງຄ໌ສເດັຈມາແລ້ວ ໄພເຫລົ່ານັ້ນ ກໍສງົບລົງ.

ໃນກາລເມື່ອ ພຣະອົງຄ໌ ສເດັຈມາ ແລະ ສເດັຈກັບ ໝູ່ເທພຍດາມນຸຸຫຍ໌ ຕລອດເຖິງນາຄຄຣຸທ ໄດ້ກະທຳສັກກາຣະບູຊາ ເປັນມໂຫຣານຍິ່ງໃຫຍ່. ຄັນສເດັຈກັບຄືນສູ່ກຣຸງຣາຊຄຣຶຫ໌ແລ້ວ ພຣະກິກຂຸທັງຫລາຍປະຊຸມກັນກ່າວສັຣເສີນ ພຸທຸສານຸກາພ. ພຣະອົງຄ໌ ຈຶ່ງຕຣັສວ່າ ອັນນັ້ນ ບໍ່ແມ່ນພຸທສານຸກາພ ແຕ່ເປັນອານຸກາພຂອງກາຣເສັຍສລະ ໃນອະດີຕຊາຕິ ທີ່ເຮົາພຣະອົງຄ໌ ໄດ້ກະທຳມາ. ໃນທີ່ສຸດ ພຣະອົງຄ໌ ຈຶ່ງຕຣັສພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາໃນເບື້ອງຕົ້ນນີ້.

---

## ໔

ປະຣະທຸກຂູປະລາເນນະ

ໂຍ ອັຕຕະໂນ ສຸຂະມິຈສະຕິ

ເວຣະສັງສັຄຄະສັງສັຍໂກ
ເວຣາ ໂສ ນະ ປະຣິມຸຈຈະຕິ ໒໔໙໑໒

ຜູ້ໃດທີ່ປາຖນາຄວາມສຸຂ ເພື່ອຕົວ ດ້ວຍການກໍ່ທຸກຂ໌ ໃຫ້ແກ່ຜູ້ອື່ນນັ້ນ ຍ່ອມເປັນຜູ້ສ້າງເວຣກັມມ໌ ຕິດພັນກັນໄປເໝືອນລູກໂສ້ ບໍ່ມີທາງທີ່ຈະສິ້ນສຸດລົງໄດ້.

# ເຣື່ອງ ກຸກກຸຜັຕາຫະຂາທິກາ

ພຣະບໍຣົມສາສດາ ທຣົງປາຣົພ ນາງກຸມາຣີຄົນນຶ່ງ ມັກກິນໄຂ່ໄກ່. ນາງໄກ່ ເຫັນນາງກຸມາຣີ ນຳເອົາໄຂ່ຂອງຕົນໄປກິນເລື້ອຍ ໆ ກໍ່ຄຽດຂຶ້ນຄິດອາພາຕຈອງເວຣ ກັບນາງກຸມາຣີກາ. ບັດນັ້ນ ນາງກຸມາຣີກາ ແລະ ແມ່ໄກ່ຕົວນັ້ນ ກໍ່ຈອງເວຣຕໍ່ກັນ ຄື ແມ່ໄກ່ ຕາຍໄປເກີດເປັນ ແມວ, ນາງກຸມາຣີກາ ຕາຍໄປເກີດເປັນ ເສືອເຫລືອງ, ແມວຕາຍໄປເກີດເປັນກວາງ, ເສືອເຫລືອງຕາຍໄປເກີດເປັນ ນາງກຸລະທິດາ, ສ່ວນກວາງຕາຍໄປເກີດປັນນາງ ຍັກຂິຕີ.ໃນຊາຕິທີ່ ໔ ນີ້ເປັນຊາຕິສຸດທ້າຍ. ນາງຍັກຂິນີ ກິນລູກນາງກຸລະທິດາ ໔ ຄັ້ງ, ຄັ້ງທີ່ ໕ ນາງກຸລະທິດາ ໄດ້ຫອບລູກເຂົ້າໄປໃນພຣະເຊຕະວັນວິຫານທີ່ພຣະສາສດາ ກຳລັງສແດງທັມມ໌ຢູ່ໃນທ່າມກາງບໍຣິສັທ ພຣະອົງຄ໌ ທຣົງສແດງພຣະທັມມິກະຖາ ດ້ວຍບາທພຣະຄາຖາ ດັ່ງກ່າວມານັ້ນ.

---

໓

ຍັງ ຫິ ກິຈຈັງ ຕະທະປະວິທສັງ
ອະກິຈຈັງ ປະນະ ກະຍີຣະຕິ
ອຸນນະຣານັງ ປະມັຕຕານັງ
ເຕສັງ ວັຑທັນຕິ ອາສະວາ ໆ໔໙໔ໆ

ສິ່ງທີ່ຄວນທຳ ຊຳພັດບໍ່ທຳ ໄປທຳໃນສິ່ງທີ່ບໍ່ຄວນທຳ. ອາສວະກິເລສ ຍ່ອມຈເຣີນ ແກ່ພວກເຂົາຜູ້ທີ່ຖືຕົວ ແລະ ມົວເມົາປະມາທຢູ່.

໔

ເຍສັລຈະ ສຸສະມາຣັທລາ
ນິຈຈັງ ກາຍະຄະຕາ ສະຕິ
ອະກິຈຈັງ ເຕ ນະ ເສວັນຕິ
ກິຈເຈ ສາຕັຈຈະກາຣີໂນ
ສະຕານັງ ສັມປະຊານານັງ
ອັຍກັງ ຄັຈຈັນຕິ ອາສະວາ ໆ໔໙໓ໆ

ບຸຄຄົລໃດ ທີ່ມີສະຕິຈິດຈໍ່ ຄື ຈເຣີນສະຕິ ຢູ່ໃນກາຍເປັນນິຕຍ໌ ບໍ່

ທຳສິ່ງທີ່ບໍ່ຄວນທຳ, ທຳສະເພາະສິ່ງ ທີ່ຄວນທຳສເມີ, ສ່ວນບຸຄຄົລຜູ້ມີສະຕິສັມປະຊັນຍະ ພ້ອມຢູ່ສເມີນັ້ນ ຍ່ອມມີອາສວະທີ່ຈະໝົດໄປ ເທົ່ານັ້ນ.

## ເຣື່ອງ ກັທທິຍະກິກຂຸ

ພຣະບໍຣົມສາສດາ ທຣົງຜາຣົພ ພວກກັທທິຍະຣກິກຂຸ ຜູ້ທີ່ສາລະວົນຂົນຂວາຍຢູ່ນຳແຕ່ການປະດັບປະດາ ເກີບ (ຣອງເທົ້າ) ບໍ່ເອົາໃຈໃສ່ໃນການສຶກສາຮ່ຳຮຽນ ປະຖິ້ມວັຕຣ໌ປະຕິບັຕຣ໌ຂອງຕົນ. ພຣະອົງຄ໌ ທຣົງຊາບໃຫ້ຫາຕົວມາປະທານ ເທສນາສັ່ງສອນ ແລ້ວຈຶ່ງຕຣັສ ພຣະຄາຖາເຫລົ່ານີ້.

---

## ໕

ມາຕະຣັງ(໑) ປິຕະຣັງ(໒) ຫັນຕວາ
ຣາຊາໂນ ທ໌ເວ ຈະ ຂັຕຕິຍາ
ຣັຜກັງ ສານຸຈະຣັງ(໓) ຫັນຕວາ
ອະນີໂຍ ຍາຕິ ພຣາຫມະໂຕ ໆ໒໙໔ໆ

ພຣາຫມຕ໌ ຂ້າມາຣດາ ຂ້າບິດາ ຂ້າຂັຕຕິຍຣາຊອີກ ໒ ອົງຄ໌ ທຳລາຍຣັກພ້ອມທັງເຈົ້າໜ້າທີ່ສ່ວຍສາອາກຣເສັຍແລ້ວສັຣຈຣໄປຢ່າງໄຮ້ທຸກຂ໌

໕

ມາຕະຣັງ ປິຕະຣັງ ຫັນຕ໌ວາ
ຣາຊາໂນ ທ໌ເວ ຈະ ໂສຕຖິຍາ
ເວຍັຄພະປັນຈະມັງ(໔) ຫັນຕ໌ວາ
ອະນີໂພ ຍາຕິ ພຣາຫມະໂນ ໆ໒໙໕ໆ

ພຣາຫມຜ໌ ຂ້າມາຣດາ ຂ້າບິດາ ຂ້າກະສັຕຣິຍ໌ ຜູ້ທີ່ຄົງແກ່ຣຽນ ອີກ ໔ ອົງຄ໌ ທຳລາຍທາງເດີນ ໕ ສາຍຂອງ ພຍັຄພ໌ຮ້າຍ (ເສືອຮ້າຍ) ແລ້ວສັນຈຣໄປ ຢ່າງປອດກັຍ.

## ເຣື່ອງພຣະລະກຸຕະກະກັທລິຍະເຖຣະ

ພຣະບໍຣົມສາສດາ ທຣົງຜາຣັພ ພຣະລະກຸຕະກະກັທລິຍະເຖຣະ ທີ່ເຂົ້າເຝົ້າ ພຣະພຸທລອົງຄ໌ແລ້ວກັບໄປ. ຄັ້ງນັ້ນ, ມີກິກຂຸ ອາຄັນຕຸກະ ເປັນອັນມາກ ທີ່ມາເຝົ້າ ພຣະສາສດາ ເໝືອນກັນ ໄດ້ພົ້ກັບເພິ່ນເດີນສວນທາງອອກໄປ. ເມື່ອກິກຂຸ ເຫລົ່ານັ້ນເຂົ້າເຝົ້າແລ້ວ ພຣະສາສດາ ຈຶ່ງຕຣັສວ່າ ດູຣາ ກິກຂຸ ທັງຫລາຍ ທ່ານເຫັນກິກຂຸ ທີ່ເດີນສວນທາງກັບທ່ານອອກໄປນັ້ນ ກິກຂຸ ອົງຄ໌ນັ້ນ ໄດ້ຂ້າມາຣດາ ບິດາແລ້ວ ພົ້ນທຸກຂ໌ ເຖິງພຣະນິພພານ

ຂຕະນັ້ນ, ກິກຂຸ ເຫລົ່ານັ້ນ ເກີດຄວາມສົງສັຍ ແນມເບິ່ງກັນແລະກັນ ເພາະບໍ່ຊາບໃນພຣະພຸທລາລິບາຍ ຈຶ່ງໄດ້ທູລຖາມ. ພຣະອົງຄ໌ ຈຶ່ງໄດ້ຕຣັສ ພຣະຄາຖາ ດັ່ງທີ່ຍົກຂຶ້ນມາ ໃນຂ້າງຕົ້ນນີ້.

---------------

(ພຣະຄາຖາ ທີ່ ໕) (໑) ມາຕະຣັງ ມາຣດາ- ຕັຕຫາ,(໔) ປິຕະຣັງ ບິດາ-ອະຕິມານະ ເຍີ່ຫຍິ່ງຈອງຫອງ. (ນ)ສານຸຈະຣັງ- ນັນທິຣາຄະ ຄວາມກຳໜັດຍິນດີ,

(ພຣະຄາຖາທີ່ ຜ) (໔) ເວຍຍັຄພະປັຍຈະມັງ-ທາງເດີນ ໕ ສາຍຂອງພຍັຄຮ້າຍ- ນິວຣ ໕ ຄື ວິຈິກິຈຉາ ຄວາມສົງສັຍ)

------------------------------------------

ກ

ສຸປປະພຸທລັງ ປະພຸຊຊັນຕິ
ສະທາ ໂຄຕະມະສາວະກາ
ເຍສັງ ທິວາ ຈະ ຣັຕໂຕ ຈະ
ນິຈຈັງ ພຸທລະຄະຕາ ສະຕິ ໑໔ລຜ໑

ພຣະສາວົກ ຂອງພຣະໂຄດົມພຸທລເຈົ້າ ຜູ້ຣະລຶກເຖິງພຣະພຸທລຄຸຕຢູ່ເປັນນິຕຍ໌ ທັງກາງເວັນ ແລະ ກາງຄືນ ຕື່ນຢູ່ດີແລ້ວສເມີ.

ຖ

ສຸປປະພຸທສະ ປະພຸຊຊັນຕິ
ສະທາ ໂຄຕະມະສາວະກາ
ເຍສັງ ທິວາ ຈະ ຣັຕໂຕ ຈະ
ນິຈຈັງ ສັມມະຄະຕາ ສະຕີ ໑໔ລກ໑

ພຣະສາວົກ ຂອງ ພຣະໂຄດົມພຸທສເຈົ້າ ຜູ້ຣຳລຶກ ເຖິງພຣະສັມມະຄຸຕ ຢູ່ເປັນນິຕຍ໌ ທັງກາງເວັນ ແລະ ກາງຄືນ ຕື່ນຢູ່ດີແລ້ວສເມີ.

ລ

ສຸປປະພຸທສະ ປະພຸຊຊັນຕິ
ສະທາ ໂຄຕະມະສາວະກາ
ເຍສັງ ທິວາ ຈະ ຣັຕໂຕ ຈະ
ສະທາ ສັງພະຄະຕາ ສະຕີ ໑໔ລຖ໑

ພຣະສາວົກ ຂອງ ພຣະໂຄດົມພຸທສເຈົ້າ ຜູ້ຣະລຶກເຖິງ ພຣະສັງພະຄຸຕຢູ່ເປັນນິຈ ທັງກາງເວັນ ແລະ ກາງຄືນ ທຽນຍ່ອມ ຕື່ນຢູ່ດີແລ້ວສເມີ.

## ໑໐

ສຸປປະພຸທລະ ປະພຸຊຸ້ນຕິ
ສະທາ ໂຄຕະມະສາວະກາ
ເຍສັງ ທິວາ ຈະ ຣັຕໂຕ ຈະ
ສະທາ ກາຍະຄະຕາ ສະຕິ ໆ໔ລລໆ

ພຣະສາວົກ ຂອງ ພຣະໂຄດົມພຸທລເຈົ້າ ຜູ້ຣະລຶກເຖິງສກາພຄວາມເປັນຈິງ ຂອງ ຮ່າງກາຍຢູ່ເປັນນິຕຍ໌ ທັງກາງເວັນ ແລະ ກາງຄືນ ຍ່ອມຕື່ນຢູ່ດີແລ້ວສເມີ.

## ໑໑

ສຸປປະພຸທລະ ປະພຸຊຸ້ນຕິ
ສະທາ ໂຄຕະມະສາວະກາ
ເຍສັງ ທິວາ ຈະ ຣັຕໂຕ ຈະ
ອະທິງສາຍະ ຣະໂຕ ມະໂນ ໆສ໐໐ໆ

ພຣະສາວົກ ຂອງ ພຣະໂຄດົມພຸທລເຈົ້າ ຜູ້ມີໃຈຍິນດີ ໃນຄວາມບໍ່ບຽດບຽນຢູ່ເປັນນິຕຍ໌ ທັງກາງເວັນ ແລະ ກາງຄືນ ຍ່ອມຕື່ນຢູ່ດີແລ້ວສເມີ.

# ໑໔

ສຸປປະພຸທທັງ ປະພຸຊຊັນຕິ
ສະທາ ໂຄຕະມະສາວະກາ
ເຍສັງ ທິວາ ຈະ ຣັຕໂຕ ຈະ
ກາວະນາຍະ ຣະໂຕ ມະໂນ ໆ໓໐໑ໆ

ພຣະສາວົກ ຂອງ ພຣະໂຄດົມພຸທທເຈົ້າ ຜູ້ມີໃຈຍິນດີ ໃນການ ຈເຣີນກາວະນາ ຢູ່ເປັນນິຕຍ໌ ທັງກາງເວັນ ແລະ ກາງຄືນ ຍ່ອມຕື່ນດີຢູ່ສເມີ

## ເຣື່ອງ ນາຍທາຣຸສາກະຜິກະ

ພຣະບໍຣົມສາສດາ ທຣົງຜາຣົພ ນາຍທາຣຸສາກະຜິກະ ບິດາຂອງ ລາວ ເປັນຄົນ ເຫລື້ອມໃສໃນພຣະພຸທທສາສນາ, ບຸຕຣ໌ກໍເປັນສັມມາທິຜກິ ຕາມບິດາ ເຂົາເຄີຍໄປຫລິ້ນຕີຄີ ກັບບຸຕຣ໌ຂອງພວກມິຈສາທິຜກິ ຄົນນຶ່ງ ໃນເວລາທີ່ຕີຄີໄປນັ້ນ ເຂົາຣະລຶກເຖິງ ພຣະພຸທທຄຸຕໄປນຳ ແລະໄດ້ຊນະ ບຸຕຣ໌ຂອງ ມິຈສາທິຜກິ ທຸກເທື່ອ ຈົນບຸຕຣ໌ຂອງມິຈສາທິຜກິຍອມ.

ໃນວັນນຶ່ງ, ບິດາຂອງເຂົາພາໄປຫາຟືນໃນປ່າ ແລະຈອດກວຽນໄວ້ ໃນທີ່ໃກ້ໆ ກັບປ່າຊ້າ ປ່ອຍໃຫ້ງົວໄປທ່ຽວຫາກິນຈົນເຖິງຕາເວັນໃກ້ຈະຕົກ ງົວນັ້ນໄດ້ຕິດຕາມຝູງງົວໄປໃນເມືອງ ຈົນຄ່ຳມືດກໍບໍ່ເຫັນມາ. ນາຍ ສາກະ-

ຜິກະ ຕິດຕາມໄປເຫັນງົວໃນເມືອງ ກໍເປັນເວລາຄ່ຳມືດ ນາຍທວາຣອັດປະຕູເມືອງອອກມາບໍ່ໄດ້ ກໍຈຳເປັນຕ້ອງໄດ້ເຝົ້າກວຽນຢູ່ໃນທີ່ນັ້ນ ແຕ່ຜູ້ດຽວ. ໃນເວລາກາງຄືນ ເຂົານອນ ກໍຣະລຶກເຖິງ ພຣະພຸທລຄຸຕ. ໝູ່ອະມນຸຫຍ໌ໃນປ່າຊ້ານັ້ນ ໄດ້ຊ່ວຍກັນ ອະກິບາລຣັກຫາ ບໍ່ໃຫ້ເປັນອັນຕຣາຍ. ໃນພາຍຫລັງມາ ພຣະເຈົ້າ ແຄວ້ນ ມຄົລ ທຣົງຊາບພຣືຕິກັມມ໌ ອັນນັ້ນ ຈຶ່ງໄດ້ພາເດັກຊາຍນັ້ນໄປເຝົ້າ ພຣະສາສດາ ທຣົງສັຣເສີນ ພຣະພຸທລານຸສສຕິ ແລະທູລຖາມເຖິງລັມມ໌ຢ່າງອື່ນວ່າ ຍັງມີລັມມ໌ອື່ນອີກຢູ່ບໍ່, ພຣະພຸທລອົງຄ໌ ຈຶ່ງໄດ້ຕຣັສ ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາໄວ້ໃນຂ້າງເທິງນີ້.

---

໑໖

ທຸປປັພພັຊຊັງ ທຸຣະກິຣະມັງ
ທຸຣາວາສາ ฆະຣາ ທຸກຂາ
ທຸກໂຂສະມານະສັງວາໂສ
ທຸກຂານຸປະຕິຕັທລະຄູ
ຕັສມາ ນະ ຈັທລະຄູ ສິຍາ
ນະ ຈະ ທຸກຂານຸປະຕິໂຕ ສິຍາ ໆ໑໐໔ໆ

ການສລະໂລກິຍວິສັຍອອກບວຊນັ້ນ ກໍຍາກ, ການຈະຍິນດີໃນເພສບັຣພຊິຕ

ການຢູ່ຄອງເຮືອນບໍ່ດີ ກໍເປັນທຸກຂ໌, ການຢູ່ຮ່ວມກັນ ເປັນໝູ່ຄຕະທີ່ (ບໍ່ມີທັມມ໌ສເມີກັນ) ກໍເປັນທຸກຂ໌, ການທ່ອງທ່ຽວຢູ່ໃນສັງສາຣວັຍ ກໍເປັນທຸກຂ໌ ເພາະເຫຕຸນັ້ນ ຈຶ່ງບໍ່ຄວນທ່ອງທ່ຽວຢູ່ໃນສັງສາຣວັຍ ແລະ ບໍ່ຄວນແສ່ຫາຄວາມທຸກຂ໌ ໃສ່ຕົນ.

## ເຣື່ອງ ວັຊຊີປຸຕຕກະບຸຕຣ໌

ພຣະບໍຣົມສາສດາ ທຣົງຜາຣົພ ພຣະກິກຂຸ ຜູ້ເປັນຣາຊບຸຕຣ໌ຂອງກະສັຕຣິຍ໌ວັຊຊີ ທີ່ລະວາຣະ(໑) ການຂຶ້ນຄອງຣາຊສົມບັຕິ ອອກທຣົງຜນວຊໄປອາສັຍຢູ່ໃນໄພຣສົຕທ໌ (ປ່າ) ແຫ່ງນຶ່ງ ໃນທີ່ບໍ່ຫ່າງໄກຈາກພຣະນຄອນໄພສາລີ. ວັນນຶ່ງ ໄດ້ຍິນສຽງດົນຕຣີກຶກກ້ອງ ຂອງນັກຂັຕຣີກຍ໌ໃນເມືອງຈຶ່ງເກີດຄວາມສັງເວຊສລົດໃຈຂຶ້ນມາວ່າ ຕົນນີ້ໄດ້ກາຍມາເປັນຄົນຕ່ຳຊ້າ ມາຢູ່ໃນປ່າ ເໝືອນໄມ້ທີ່ເຂົາຖິ້ມແລ້ວ ແລະ ເກີດມີຄວາມກະວົນກະວາຍ ຢາກຈະສິກ ຈຶ່ງເຂົ້າໄປເຝົ້າ ທູລຄວາມນັ້ນ ແກ່ ພຣະສາສດາ ພຣະອົງຄ໌ຈຶ່ງໄດ້ສແດງພຣະທັມມເທສນາສັ່ງສອນ ແລ້ວທຣົງຕຣັສ ພຣະຄາຖາດັ່ງທີ່ໄດ້ຍົກຂຶ້ນມາ ໃນເບື້ອງຕົ້ນນັ້ນ.

(໑) ການຂຶ້ນຄອງຣາຊສົມຂອງ ກະສັຕຣິຍ໌ວັຊຊີນັ້ນ ມີການຜັດປ່ຽນກັນໃນບັນດາເຊື້ອພຣະວົງສ໌ ຄ້າຍໆ ກັບປະຊາທິປະໄຕໃນສມັຍນີ້

---

## ໑໔

ສັທໂລ ສີເລນະ ສັມປັນໂນ
ຍະໂສ ໂກຄະສະມັປປິໂຕ
ຍັງ ຍັງ ປະເທສັງ ກະຊະຕິ
ຕັຕຖະ ຕັຕເຖວະ ປູຊິໂຕ ໆ໑໐ໆ

ຜູ້ທີ່ມີສັທລາ ສົມບູຣຕ໌ດ້ວຍສິລ ພຽບພ້ອມໄປດ້ວຍໂກຄທຣັພຍ໌ດ້ວຍຍົສ ຈະໄປໃນປະເທສໃດ ໆ ກໍຕາມ ທຽນຍ່ອມ ໄດ້ຮັບຄວາມນັບຖືໃນປະເທສນັ້ນ ໆ.

## ເຣື່ອງ ຈິຕຕະຄຫບໍດີ

ພຣະບໍຣົມສາສດາ ທຣົງຜາຣົພ ຈິຕຕະຄຣືຫບໍດີ ເປັນຊາວເມືອງມັຈຈິກາສິຕທ໌. ວັນນຶ່ງ ເພິ່ນຢາກຈະໄປເຝົ້າ ພຣະສາສດາ ຕະ ເມືອງສາວັຕຖີ ຈຶ່ງໄດ້ເດີນທາງອອກຈາກເມືອງ ພ້ອມດ້ວຍບໍຣິຟັທ ເປັນອັນມາກໃນຣະຫວ່າງກາງທາງນັ້ນ ໝູ່ເທພຍດາ ໄດ້ບໍາຣຸງລ້ຽງດ້ວຍ ໂກຊນາຫາຣໃຫ້ເປັນສຸຂສໍາຣາລ ທົ່ວເຖິງກັນ. ເວລາເຂົ້າເຝົ້າ ພຣະສາສດາ ເທພຍດາກໍບັນດາລດອກໄມ້ທິພຍ໌ໃຫ້ຕົກລົງມາເໝືອນຫ່າຝົນ. ເວລາຈະເດີນທາງກັບກໍບັນດາລຣັຕນະທັງ ໆ ໃຫ້ເຕັມກວຽນຂອງ ຄຣືຫບໍດີ. ຄັນຄຣືຫບໍດີກັບ

ແລ້ວ ພຣະອານົນທ໌ ຈຶ່ງທູລຖາມວ່າ ລາພສັກການະ ທີ່ເກີດຂຶ້ນ ແກ່ ຄຣືຫະ ບໍດີນັ້ນ ເປັນເພາະເຂົາມາເຝົ້າ ພຣະອົງຄ໌, ຫຣືວ່າ ໄປໃນທີ່ອື່ນ ກໍເກີດຂຶ້ນ ພຣະອົງຄ໌ ຈຶ່ງຕຣັສວ່າ ເຖິງແມ່ນວ່າ ເຂົາຈະໄປໃນທີ່ແຫ່ງອື່ນ ກໍເກີດຂຶ້ນ ເໝືອນກັນ. ພຣະອົງຄ໌ ໄດ້ຊົມເຊີຍ ຄຣືຫບໍດີ ໂດຍປະການຕ່າງ ໆ ແລ້ວ ຈຶ່ງຕຣັສ ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາໄວ້ ໃນເບື້ອງຕົ້ນນີ້.

---

## ໑໔

ທູເຣ ສັນໂຕ ປະກາເສນຕິ
　　ຫິມະວັນໂຕ ວະ ປັພພະໂຕ
ອະສັນເຕຕຖະ ນະ ທິສສັນຕິ
　　ຣັຕຕິຂິຕຕາ ຍະຖາ ສະຣາ ໑໓໐໔໑

ຄົນດີ ທຽນຍ່ອມ ເປັນທີ່ຜາກົຕເດັ່ນ ເໝືອນພູເຂົາ ຫິມະພານຕ໌, ຄົນບໍ່ດີ ເຖິງຈະຢູ່ໃກ້ ໆ ກໍບໍ່ຜາກົຕເຫັນ ເໝືອນລູກສອ ທີ່ເຂົາຍິງໄປໃນ ຍາມຣາຕຣີ.

## ເຣື່ອງ ນາງຈູຣະສຸກັທທາ

ພຣະບໍຣົມສາສດາ ທຣົງຜາຣົພ ນາງຈູຣະສຸກັທທາ ນາງເປັນລິດາ

ຂອງ ອນາຖບິຕທິກະ ເສຍກີ ໄດ້ໄປຢູ່ກັບສາມີ ທີ່ເມືອງ ອຸຄຄະນຄອ ຕະກູລ ຂອງສາມີ ເປັນມິຈສາທິຍກີ ນັບຖື ພວກອະເຈລກະ. ພໍ່ຜົວ ແນະນໍາ ໃຫ້ນາງເຫລື້ອມໃສໃນພວກ ອະເຈລກະນັ້ນແດ່, ນາງບໍ່ເຫລື້ອມໃສ ແຖມ ໄປຕິຕຽນ ພວກອະເຈລກະນັ້ນຕື່ມແລະໄປສັຣເສີນ ພຣະມຫາສມຕະຕ່າງໆ ພໍ່ຜົວ ແລະ ແມ່ຜົວ ຈຶ່ງຖາມວ່າ ເຈົ້າອາຈສແດງ ຫຣື ນິມົນຕ໌ສມຕະຂອງ ເຈົ້າມາໄດ້ບໍ? ນາງຕອບຮັບສວ່າໄດ້. ບັດນັ້ນ, ນາງກໍໄດ້ຣະລຶກເຖິງ ພຣະ ພຸທສຄຸຕ ອລັຫກາມ ເຊີນສເດັຈພຣະສາສດາ ພ້ອມດ້ວຍ ກິກຂຸສົງຄ໌ມາ ຮັບກັຕຕາຫາຣ ທີ່ສຖານຂອງຕົນ ໃນ ເມືອງອຸຄຄະນຄອ.

ໃນວັນນັ້ນ, ອນາຖບິຕທິກເສຍກີ ທູລອາຣາຣນາເຊີນສເດັຈ ພຣະ ສາສດາ ໄປຮັບກັຕຕາຫາຣ ຕະ ສຖານທີ່ຂອງຕົນ. ພຣະສາສດາບໍ່ທຣົງຮັບ ແລະ ຮັບສັ່ງວ່າ ໄດ້ຮັບ ອາຣາຣະນາ ຂອງ ສຸກັທທາເສັຍກ່ອນແລ້ວ. ທ່ານ ເສຍກີ ອັສຈັຣຍ໌ໃຈ ຈຶ່ງທູລວ່າ ນາງສຸກັທທາ ຢູ່ໄກເຖິງ ອຸຄຄນຄອພຸ້ນ ມານິມົນຕ໌ເມື່ອໃດ. ພຣະອົງຄ໌ ຈຶ່ງຕຣັສ ພຣະຄາຖາ ດັ່ງທີ່ຍົກຂຶ້ນມາໃນຂ້າງ ເທິງນີ້.

---

## ໑໕

ເອກາສະນັງ ເອກະເສຍຍັງ

ເອໂກ ຈະຣະມະຕັນທິໂຕ

ເອໂກ ທະມະຍະມັຕຕານັງ
ອະນັນເຕ ຣະມິໂຕ ສີຍາ ໆ໓໐໕ໆ

ກິກຂຸ ຄວນ ນັ່ງ ນອນ ຢູ່ໃນສຖານທີ່ ອັນສງົບສງັດ ຄືປ່າ, ສັຄ ຈຣໄປຜູ້ດຽວ ເປັນຜູ້ບໍ່ຂີ້ຄ້ານ ຂຍັນໝັ່ນພຽຣ ຄວບຄຸມຕົນເອງ ເປັນຜູ້ຍິນ ດີໃນທີ່ອັນສງັດຄື ປ່າ.

## ເຣື່ອງ ພຣະເອກວິຫາຣິເຖຣະ

ພຣະບໍຣົມສາສດາ ທຣົງຜາຣົພ ພຣະເອກວິຫາຣິເຖຣະ ເພິ່ນເປັນ ຜູ້ມັກຢູ່ອົງຄ໌ດຽວ ບໍ່ມັກຄຸກຄີຢູ່ກັບໝູ່ຄຓະ. ກິກຂຸ ທັງຫລາຍ ໄດ້ເຫັນຊຶ່ງ ຄວາມປະພຶຕຣ໌ຂອງເພິ່ນ ຈຶ່ງໄດ້ນຳຄວາມນັ້ນ ຂຶ້ນຂາບທູລ ແດ່ ພຣະສາສ-ດາ. ພຣະອົງຄ໌ ຈຶ່ງທຣົງປະທານ ສາທຸການ ໃຫ້ກິກຂຸ ທັງຫລາຍ ຖືເອົາ ເປັນຕົວຢ່າງ ແລ້ວຈຶ່ງຕຣັສ ພຣະຄາຖາ ດັ່ງທີ່ຍົກຂຶ້ນມາໃນຂ້າງເທີງນີ້.

---

## ຈົບ ປະກິຕຕກວັຄຄ໌ ທີ່ ໔໑

# ນິຣຍວັຄຄ໌ ທີ່ ໔໔

## ໑

ອະພູຕະວາທີ   ນະຣະຍັງ ອຸເປໂຕ
ໂຍ ວາປິ ກັຕວາ ນະ ກະໂຣມີຕິ ຈາຫະ
ອຸໂພປິ ເຕ ເປຈຈະ ສະມາ ພະວັນຕິ
ນິຫີນະກັມມາ ມະນຸຊາ ປະຣັຕຖະ ໑໕໐໖໑

ຄົນທີ່ເວົ້າບໍ່ມີຄວາມຈິງ (ຂີ້ຕົວະ) ສເມີ ກັບຄົນທີ່ເຮັດແລ້ວ ຊ້ຳພັດເວົ້າວ່າ "ຂ້າບໍ່ໄດ້ເຮັດ" ສອງຄົນນີ້ ຕົກນຣົກເໝືອນກັນ. ມນຸຜຍ໌ ໔ ຈຳພວກນີ້ ເມື່ອຕາຍໄປແລ້ວ ມີກັມມ໌ຊົ່ວ ໃນໂລກໜ້າເໝືອນກັນ.

## ເຣື່ອງ ສຸນທຣີປຣິພາຊິກາ

ກິຣະ ດັ່ງໄດ້ຍິນມາວ່າ ໃນສມັຍນຶ່ງນັ້ນ ພຣະບໍຣົມສາສດາ ທຣົງພຣະຜາຣົພ ນາງສຸນທຣີປຣິພາຊິກາ ອາສາກັບພວກ ອັລລະເດັຍຣຖີຍ໌ ໄປຕັ້ງແກ້ງທຳອຸບາຍ ຄືກັບວ່າ ຕົນຢູ່ໃນກຸຜິດຽວກັນ ກັບ ພຣະພຸທລອົງຄ໌ ໃນເວລາກາງຄືນ. ປະຊາຊົນບາງພວກ ເກີດມີຄວາມສົງສັຍ ໃນ ພຣະສາສດາແລ້ວໂພນທະນາຕິຕຽນກັນໄປຕ່າງ ໆ. ພວກອັລລະເດັຍຣຖີຍ໌ ມີຄວາມປະ

ສິ່ງທີ່ຈະເປົ່າຂ່າວນີ້ອອກໄປໃຫ້ກ້ວາງຂວາງ ຈຶ່ງໄປຈ້າງພວກນັກເລງສຸຣາ ໃຫ້ຂ້າ ນາງສຸນທຣີ ແລ້ວນຳເອົາສົພໄປເຊື່ອງໄວ້ໃນທີ່ໃກ້ ໆ ກັບພຣະ ຄັນລະກຸຜີ ຂອງພຣະສາສດາ ແລ້ວແກ້ງໄປຄົ້ນຫາສົພ ຄັນໄດ້ສົພມາແລ້ວ ກໍໂພນທະນາ ກ່າວໂທສຕ່າງ ໆ. ພຣະເຈົ້າ ປະເສທີໂກສົລ ທຣົງສືບສວນ ຄະດີໄດ້ຄວາມຈິງ ແລ້ວໃຫ້ລົງໂທສພວກ ອັຌຌະເດັຍຣຖີຍ໌.

ກິກຂຸ ທັງຫລາຍ ໄດ້ນຳຄວາມນັ້ນ ຂຶ້ນຂາບທູລ ແດ່ ພຣະສາສດາ ພຣະອົງຄ໌ ຈຶ່ງຕຣັສພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາໃນຂ້າງເທິງນີ້.

---

໔

ກາສາວະ ກັຕກາ ພະຫະໂວ
ປາປະທັມມາ ອະສັຌຌະຕາ
ປາປາ ປາເປຫິ ກັມເມຫິ
ນິຣະຍັງ ເຕ ອຸປປັຊຊະເຣ ໆມ໐ກໆ

ຄົນທີ່ນຸ່ງຫົ່ມ ຜ້າກາສາວະພັສຕຣ໌ ມີຈໍານວນມາກ ທີ່ທຳຄວາມຊົ່ວ ບໍ່ສຳຣວມຣະວັງ. ຄົນຊົ່ວ ເຫລົ່ານັ້ນ ທຽມຍ່ອມ ຕົກນຣົກ ຍ້ອນກັມມ໌ຊົ່ວ.

# ເຣື່ອງ ທຸກຂປີຣິຕະສັຕວ໌

ພຣະບໍຣົມສາສດາ ທຣົງຜາຣົພ ສັຕວ໌ທັງຫລາຍ ອັນຜົລກັມມ໌ບຽດ

ບຽນ ບີບຄັ້ນ. ສັຕວ໌ພວກນັ້ນ ໄດ້ເປັນກິກຂຸລາມົກ ກິກຂຸຊົ່ວຮ້າຍ ທູສີລມີຢູ່ໃນຄັ້ງ ສາສນາ ພຣະກັສສປະທົສພົລ. ເມື່ອຕົກມາໃນສາສນານີ້ ກໍ່ໄດ້ສເວີຍຜົລກັມມ໌ອັນນັ້ນ ຢູ່ທີ່ພູເຂົາຄິຊຊະກູຍ ມີກາຍຕົກແຕ່ງນຸ່ງຫົ່ມຄືກັບເຄື່ອງບໍຣິຂາຣ (໑) ອັນຮຸ່ງເຮືອງເໝືອນດັ່ງແປວໄຟ. ພຣະໂມຄຄັລລານະເຖຣະໄດ້ໄປເຫັນ ຈຶ່ງກ່າວກັບພຣະ ລັກຂຕະເຖຣະ ໃນທີ່ສະເພາະ ພຣະພັກຕຣ໌ ຂອງ ພຣະສາສດາ. ພຣະພູທລອົງຄ໌ ຈຶ່ງໄດ້ຕຣັສພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາໃນຂ້າງເທິງນນີ້.

---

# ມ

ເສຍໂຍ ອະໂຍຄຸໂຣ ກຸຕໂຕ
ຕັຕໂຕ ອັຄຄິສິຂູປະໂມ
ຍັຌເຈ ກຸຌເຊຍຍະ ທຸສສີໂລ
ຣັຌກະປິຕຫັງ ອະສັຌຌະໂຕ ໑໓໐໗໑

ຄົນທຸສີລ ບໍ່ມີການສຳຣວມຣະວັງ ກືນກິນກ້ອນເຫລັກແດງທີ່ລຸກເປັນໄຟ ຍັງດີກວ່າການບໍຣິໂກຄອາຫານ ທີ່ຊາວບ້ານນຳມາຖວາຍ.

(໑) ບໍຣິຂາຣ- ຜ້າໄຕຣຈີວຣ.

# ເຣື່ອງ ວັຄຄຸມຸທາຄີຣີຍະພິກຂຸ

ພຣະບໍຣົມສາສດາ ທຣົງຜາຣົພ ພວກວັຄຄຸມຸທາຄີຣີ ພິກຂຸ ທີ່ພາກັນເວົ້າອວດ ອຸຕຣິມນຸສສັມມ໌ (໑) ລ້ຽງຊີພ ໃນຄາວທີ່ເກີດທຸພກິກຂພັຍ ພຣະອົງຄ໌ ທຣົງຊາບ ຈຶ່ງທຣົງຕິຕຽນ ໂດຍອເນກປຣິຍາຍ ແລ້ວທຣົງບັນຍັຕິ ສິກຂາບົທ ຫ້າມພິກຂຸ ບໍຣິພັທທົ່ວໄປ. ເມື່ອຈະທຣົງປະທານໂອວາທສັ່ງສອນ ພິກຂຸ ເຫລົ່ານັ້ນ ຈຶ່ງຕຣັສພຣະຄາຖາ ດັ່ງທີ່ຍົກຂຶ້ນມາໄວ້ໃນຂ້າງຕົ້ນນີ້.

---

໔

ຈັຕຕາຣິ ຖານານິ ນະໂຣ ປະມັຕໂຕ
ອາປັຊຊະຕິ ປະຣະທາຣູປະເສວີ
ອະປັຍຍະລາພັງ ນະ ນິກາມະເສຍຍັງ
ນິນທັງ ຕະຕິຍັງ ນິຣະຍັງ ຈະຕຸຕຖັງຯລ໐ລຯ

ຄົນທີ່ມົວເມົາ ລ່ວງເກີນເມັຍທ່ານ ເປັນນິຕຍ໌ ທຽນຍ່ອມ ໄດ້ຮັບເຄາະຮ້າຍ ສີ່ສຖານຄື: ໑. ໄດ້ຮັບບາປກັມມ໌, ໒. ນອນບໍ່ເປັນສຸຂ, ໓. ເສັຍຊື່ສຽງ, ໔. ຕົກນະຣົກ.

(໑) ສັມມ໌ອັນຍິ່ງຂອງມະນຸສຍ໌ ຄື: ມັຄຄ໌ຜົລ ນິພພານ.

## ໕

ປຸຄຄະລາໂພ ຈະ ຄະຕິງ ຈະ ປາປິກາ
ພີຕັສສະ ພີຕາຍະ ຣະຕີ ຈະ ໂຖກິກາ
ຣາຊາ ຈະ ທັຄທັງ ຄະຣຸກັງ ປະເຕຕີ
ຕັສມາ ນະໂຣ ປະຣະທາຣັງ ນະເສເວ ໑໖໑໐໑

ສຖານນຶ່ງ ໄດ້ຮັບບາປ, ສຖານສອງ ໄດ້ພົບຊາຕິຊົ່ວຮ້າຍໃນອນາຄົຕ, ສະຖານສາມ ທັງຄູ່ມີສຸຂຊົ່ວແລ່ນ ແຕ່ສະດຸ້ງໃຈຢູ່ເປັນນິຕຍ໌, ສຖານສີ່ ພຣະຣາຊາຍ່ອມລົງໂທສຢ່າງໜັກ. ສະນັ້ນ ຈຶ່ງບໍ່ຄວນຜິດກັຣຍາຂອງຄົນອື່ນ.

# ເຣື່ອງ ເຂມກເສຕຖີບຸຕຣ໌

ພຣະບໍຣົມສາສດາ ທຣົງຜາຣົພ ບຸຕຣ໌ຂອງເສຕຖີທີ່ຊື່ວ່າ ເຂມກະເປັນຫລານຂອງ ທ່ານ ອນາຖບິຕພິກເສຕຖີ ລາວເປັນຄົນມີຮູບທຣົງທີ່ສວຍງາມຜູ້ຍິງໃດໄດ້ເຫັນແລ້ວມັກ ຈຶ່ງເປັນທາງໃຫ້ເຂົາປະພຶຕຣ໌ການມິຈ-ຉາຈາຣຢູ່ເນື່ອງນິຕຍ໌. ທ່ານ ອນາຖບິຕພິກເສຕຖີ ຈຶ່ງນຳຕົວຫລານຊາຍນັ້ນເຂົ້າເຝົ້າ ພຣະສາສດາ ທູລຂໍໃຫ້ທຣົງສແດງລັມມ໌ສັ່ງສອນ. ພຣະອົງຄ໌ຈຶ່ງໄດ້ຕຣັສ ພຣະຄາຖາ ດັ່ງທີ່ຍົກຂຶ້ນມາໃນຂ້າງຕົ້ນນີ້.

---

ຜ

ກຸໄສ ຍະຖາ ທຸຄຄະຫີໂຕ
ຫັຕຖະເມວານຸກັນຕະຕິ
ສາມັລລັງ ທຸປປະຣາມັຕຖັງ
ນິຣະຍາຍູປະກັຑເຜະຕິ ໆ໑໑ໆ

ຫຍ້າຄາ ທີ່ຄົນຈັບບໍ່ດີ ທຽມຍ່ອມ ບາດມືໄດ້ສັນໃດ, ພຣົຫມຈັຣຍ໌ ທີ່ຄົນປະພຶຕຣ໌ບໍ່ດີ ທຽມຍ່ອມ ກະຊາກລາກເອົາຄົນນັ້ນ ລົງສູ່ນຣົກ ສັນນັ້ນ.

ກ

ຍັງກິລຈິ ສິຖິລັງ ກັມມັງ
ສັງກິລິຕຖັລຈະ ຍັງ ວະຕັງ
ສັງກັສສະຣັງ ພຣຫມະຈະຣິຍັງ
ນະ ຕັງ ໂຫຕິ ມະຫັປຜະລັງ ໆ໑໔ໆ

ຄົນທຳອັນໃດບໍ່ໜັກແໜ້ນ ລະເຫລີງ ມີຂໍ້ວັຕຣ໌ປະຜິບັຕິເສົ້າໝອງ ປະພຶຕຣ໌ພຣົຫມຈັຣຍ໌ດ້ວຍຄວາມບໍ່ເຕັມໃຈ ບໍ່ເປັນໄປເພື່ອຜົລອັນໄພສາລ

ກູ

ກະຍິຣາ ເຈ ກະຍິຣາເຖນັງ
ທັຣຫະມະນັງ ປະຣັກກະເມ
ສະຖິໂລ ຫິ ປະຣິພພາໂຊ
ກິຍໂຍ ອາກິຣະເຕ ຣະຊັງ ໆລ໑ລໆ

ຖ້າຈະກະທຳແລ້ວ ກໍຈົ່ງກະທຳຈິງ ໆ ແລະ ພຍາຍາມໃຫ້ໝັ້ນຄົງ ເພາະວ່າ ເພສບັຣພະຊິຕທີ່ບໍ່ເອົາຈິງເອົາຈັງນັ້ນ ມີແຕ່ຈະເຂັ່ຍເອົາຂຸລີ ຂີ້ຝຸ່ນ ຄືກິເລສ ມາໃສ່ຕົວ ເທົ່ານັ້ນ.

## ເຣື່ອງ ທຸພພະຈະກິກຂຸ

ພຣະບໍຣົມສາສດາ ທຣົງຜາຣົພ ກິກຂຸ ທີ່ວ່າຍາກສອນຍາກ ອົງຄ໌ນຶ່ງ ມີກິກຂຸອີກອົງຄ໌ນຶ່ງ ໄດ້ມາຖາມເຣື່ອງກາຣຫລິກຫຍ້າກັບເພິ່ນວ່າ ມີໂທສຢ່າງໃດ. ເມື່ອວ່າແລ້ວ ກໍສແດງກາຣຫລິກຫຍ້າໃຫ້ ກິກຂຸອົງຄ໌ນັ້ນເບິ່ງວ່າ ມັນຊິເປັນຫຍັງ ພຣະກິກຂຸ ທັງຫລາຍ ໄດ້ນຳເອົາເຣື່ອງນັ້ນຂຶ້ນຂາບທູລ ແດ່ ພຣະສາສດາ ພຣະອົງຈຶ່ງທຣົງຕິຕຽນ ໂດຍອເນກປຣິຍາຍ ແລ້ວຈຶ່ງຕຣັສ ພຣະຄາຖາ ດັ່ງທີ່ຍົກຂຶ້ນມາໃນຂ້າງເທິງນີ້.

---

໔

ອະກະຕັງ ທຸກກະຕັງ ເສຍໂຍ
ປັຈສາ ຕັປປະຕິ ທຸກກະຕັງ
ກະຕັສຈະ ສຸກະຕັງ ເສຍໂຍ
ຍັງ ກັຕວາ ນານຸຕັປປະຕິ ໆ໓໑໔ໆ

ອັນວ່າ ຄວາມຊົ່ວນັ້ນ ບໍ່ທຳເສັຍເລີຍ ຍ່ອມເປັນການດີ ທຳແລ້ວ ຍ່ອມເດືອດຮ້ອນ ໃນພາຍຫລັງ, ຈິ່ງມາທຳຄວາມກດີກັນ ດີກວ່າ ເພາະວ່າ ທຳແລ້ວ ບໍ່ເດືອດຮ້ອນ ໃນພາຍຫລັງ.

## ເຣື່ອງ ອິສສາປກຕະອິຕຖີ

ພຣະບໍຣົມສາສດາ ທຣົງຜາຣົພ ຜູ້ຍິງຂີ້ຫຶງຄົນນຶ່ງ ສາມີໄດ້ທາສີ ໃນເຮືອນ ເປັນກັຣຍານ້ອຍ. ວັນນຶ່ງ ສາມີບໍ່ຢູ່ ນາງຈິ່ງຈັບນາງທາສີ ແລ້ວ ເອົາເຊືອກຜູກ ເອົາມີດຕັດຫູ ແລະ ຕັດດັງເສັຍ. ແລ້ວເອົາເຂົ້າໄປເຊື່ອງໄວ້ ໃນຫ້ອງ. ຄັນວ່າ ສາມີກັບມາແລ້ວ ກໍແກ້ງຊວນສາມີໃຫ້ໄປຟັງທັມມ໌ ທີ່ ພຣະເຊຕວັນວິຫາຣ. ເວລານັ້ນ ມິດຍາຕິຂອງນາງມາທີ່ເຮືອນໄດ້ໄຂປະຕູເຂົ້າ ໄປໃນເຮືອນ ເຫັນນາງທາສີນັ້ນ ກໍມີຄວາມສົງສານ ປ່ອຍໃຫ້ນາງທາສີນັ້ນ ອອກໄປ. ນາງທາສີຈິ່ງອອກໄປຍັງ ພຣະເຊຕວັນວິຫາຣ ຂາບທູລຄວາມ ນັ້ນ ແດ່ ພຣະສາສດາ ໃນທ່າມກາງບໍຣິສັທ ພຣະອົງຄ໌ຈິ່ງຕຣັສພຣະຄາຖາ ດັ່ງທີ່ຍົກຂຶ້ນມານີ້.

## ໑໐

ນະຄະຣັງ ຍະຖາ ປັຈຈັນຕັງ
ຄຸຕຕັງ ສັນຕະຣະພາຫິຣັງ
ເອວັງ ໂຄເປຖະ ອັຕຕານັງ
ຂະໂຓ ເວ ມາ ອຸປັຈຈະຄາ
ຂະຓາຕີຕາ ຫິ ໂສຈັນຕິ
ນິຣະຍັມຫິ ສະມັປປິຕາ ໆນ໑໕ໆ

ທ່ານ ຈົ່ງປ້ອງກັນຕົນໃຫ້ດີ ເໝືອນດັ່ງເມືອງຊາຍແດນ ທີ່ເຂົາປ້ອງກັນເຂັ້ມແຂງ ທັງພາຍໃນ ແລະ ພາຍນອກ, ທ່ານຢ່າໄດ້ປ່ອຍປະລະເລີຍໂອກາສໃຫ້ຜ່ານໄປໂດຍໄຮ້ປະໂຍຊນ໌ ເພາະວ່າ ຜູ້ທີ່ເສັຍໂອກາສນັ້ນເມື່ອຕົກນະຣົກ ຍ່ອມໂສກເສົ້າ.

## ເຣື່ອງ ອາຄັນຕຸກະ ກິກຂຸ

ພຣະບໍຣົມສາສດາ ທຣົງຜາຣົພ ກິກຂຸ ອາຄັນຕຸກະ ເປັນອັນມາກ. ພຣະກິກຂຸ ເຫລົ່ານັ້ນ ໄດ້ພາກັນໄປຈໍາພັຣຍາ ຢູ່ທີ່ປັຈຈັນຕະປະເທສແຫ່ງນຶ່ງ ໃນເດືອນຕົ້ນນັ້ນ ກໍຢູ່ດີສະບາຍ ຈາກນັ້ນໄປ ກໍຢູ່ບໍ່ເປັນສຸຂ ຍ້ອນວ່າພວກໂຈຣບຽດບຽນ ທີ່ໂຄຈຣເຂົ້າໄປໃນໝູ່ບ້ານ. ຄັນອອກພັຣຍາແລ້ວກໍ

ເຂົ້າມາເຝົ້າ ພຣະສາສດາ ທູລຄວາມນັ້ນ ແດ່ ພຣະອົງຄ໌ໃຫ້ທຣົງຊາບ ພຣະອົງຄ໌ຈຶ່ງຕຣັສວ່າ ດູຣາ ກິກຂຸ ທັງຫລາຍ ອັນທີ່ຊື່ວ່າ ກາຣຢູ່ສໍາຣາລເປັນນິຕຍ໌ນັ້ນ ເປັນສິ່ງທີ່ບຸຄຄົລຫາໄດ້ຍາກ ກິກຂຸຄວນຈະຣັກສາຕົນ ເໝືອນຢ່າງມນຸສຍ໌ຣັກສາເມືອງສົນນັ້ນແລ. ເມື່ອພຣະອົງຄ໌ຕຣັສຢ່າງນີ້ແລ້ວ ຈຶ່ງຕຣັສ ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາ ໃນເບື້ອງຕົ້ນນັ້ນແລ.

---

## ໑໑

ອະລັຊຊິຕາເຍ ລັຊຊັນຕິ
ລັຊຊິຕາເຍ ນະ ລັຊຊະເຣ
ມິຈສາທິຍກິສະມາທານາ
ສັຕຕາ ຄັຈຈັນຕິ ທຸຄຄະຕິງ ໆ໓໑໖ໆ

ລະອາຍ ໃນສິ່ງທີ່ບໍ່ຄວນລະອາຍ, ບໍ່ລະອາຍໃນສິ່ງທີ່ຄວນລະອາຍ. ຜູ້ທີ່ມີຄວາມເຫັນຜິດ ຢ່າງນີ້ ທຽມຍ່ອມ ໄປສູ່ທຸຄຄະຕິ.

## ໑໘

ອະວະເຍ ຈະ ວະຍະທັສສິໂນ
ວະເຍ ຈະ ອະວະຍະທັສສິໂນ

ມິຈຈາທິຜກີສະມາທານາ
ສັຕຕາ ຄັຈຈັນຕິ ທຸຄຄະຕິງ ຯ໑໓ຯ

ສິ່ງບໍ່ເປັນທີ່ໜ້າຢ້ານກົວ ເຫັນວ່າ ເປັນທີ່ໜ້າຢ້ານກົວ, ສິ່ງເປັນທີ່ໜ້າຢ້ານກົວ ຊ້ຳພັດໄປເຫັນວ່າບໍ່ເປັນສິ່ງໜ້າຢ້ານກົວ. ຜູ້ທີ່ມີຄວາມເຫັນຜິດຢ່າງນີ້ ທຽນຍ່ອມໄປສູ່ ທຸຄຄະຕິ.

## ເຣື່ອງ ນິຄັຕກະ

ພຣະບໍຣົມສາສດາ ທຣົງຜາຣົພ ພວກນິຄຣົຕກ໌. ໃນວັນນຶ່ງ ກິກຂຸທັງຫລາຍ ປະຊຸມສົນທະນາກັນວ່າ ພວກນິຄຣົຕກ໌ ຍັງມີຄວາມລະອາຍນຸ່ງຜ້າ ດີກວ່າ ພວກອະເຈລກະ ທີ່ບໍ່ນຸ່ງຫົ່ມຜ້າເລີຍ (ນັກບວຊທີ່ເປືອຍກາຍ) ພວກນິຄຣົຕກ໌ ໄດ້ຍິນເຊັ່ນນັ້ນ ຈຶ່ງກ່າວຖ້ອຍຄຳໂຕ້ຖຽງກັບ ກິກຂຸ ທັງຫລາຍ ຕ່າງ ໆ ນາ ໆ. ກິກຂຸ ທັງຫລາຍ ຈຶ່ງນຳຄວາມນັ້ນ ຂຶ້ນຂາບທູລແດ່ ພຣະສາສດາ ພຣະອົງຄ໌ ຈຶ່ງຕຣັສ ພຣະຄາຖາ ດັ່ງທີ່ຍົກຂຶ້ນມານັ້ນ.

---

### ໑໓

ອະວັຊເຊ ວັຊຊະມະຕິໂນ
ວັຊເຊ ຈະ ອະວັຊຊະມະຕິໂນ

ມິຈຈາທິຏກິສະມາທານາ
ສັຕຕາ ຄັຈຈັນຕິ ທຸຄຄະຕິງ ฯ໓໑໗ฯ

ຜູ້ທີ່ເຫັນວ່າ ສິ່ງທີ່ບໍ່ມີໂທສ ເປັນສິ່ງທີ່ມີໂທສ ແຕ່ສິ່ງທີ່ມີໂທສຊ້ຳພັດເຫັນວ່າ ເປັນສິ່ງທີ່ບໍ່ມີໂທສ. ຜູ້ທີ່ມີຄວາມເຫັນຜິດ ເຊັ່ນນີ້ ຍ່ອມໄປສູ່ທຸຄຄະຕິ.

໑໔

ວັຊຊັຎ ຈະ ວັຊຊະໂຕ ຎັຕວາ
ອະວັຊຊັຎ ຈະ ອະວັຊຊະໂຕ
ສັມມາທິຏກິສະມາທານາ
ສັຕຕາ ຄັຈຈັນຕິ ສຸຄຄະຕິງ ฯ໓໑໘ฯ

ຜູ້ທີ່ເຫັນໂທສ ວ່າເປັນໂທສ, ເຫັນຖືກວ່າ ເປັນຖືກ ຜູ້ທີ່ມີຄວາມເຫັນຖືກ ເຊັ່ນນີ້ ທຽນຍ່ອມ ໄປສູ່ສຸຄະຕິ.

## ເຣື່ອງ ຕິຜກິຍສາວົກ

ພຣະບໍຣົມສາສດາ ທຣົງຜາຣົພ ພວກຕິຜກິຍະສາວົກ ທີ່ຫ້າມບຸຕຣ໌

ຂອງຕົນ ບໍ່ໃຫ້ໄຫວ້ ແລະ ບໍ່ໃຫ້ເຂົ້າໄປຫາ ພວກສມຕະສັກຍະບຸຕຣ໌. ໃນວັນນຶ່ງ, ບຸຕຣ໌ຂອງເຂົາໄດ້ໄປຫລິ້ນນຳບຸຕຣ ຂອງ ອຸບາສົກ ຂ້າງພຣະເຊຕວັນວິຫາຣ ທີ່ວນ້ຳເລີຍແລ່ນເຂົ້າໄປໃນພຣະວິຫາຣ ໄດ້ຟັງພຣະທັມມະເທສນາ ເກີດມີອະຈລະສັທລາ ຄວາມເຫລື້ອມໃສຢ່າງບໍ່ຫວັ່ນໄຫວ ໜັກແໜ້ນ ຢຶດໝັ້ນໃນ ພຣະໄຕຣສຣຕະຄົມ ແລ້ວກັບໄປເລົ່າໃຫ້ບິດາຟັງ ໆ ກໍມີຄວາມໂທສນັສ ຄຽດແຄ້ນໃຫ້ບຸຕຣ. ຄົນໄດ້ຟັງຄຳອລິບາຍຂອງເພື່ອນບ້ານກໍຫາຍຄວາມໂກທແຄ້ນ ແລ້ວຈຶ່ງນຳເອົາບຸຕຣໄປສູ່ພຣະວິຫາຣເຊຕວັນມອບຕົວຖວາຍແດ່ ພຣະສາສດາ. ເມື່ອພຣະອົງຄ໌ຈະສແດງທັມມ໌ໃຫ້ເຂົາກັບຕົວມາເປັນ ສັມມາທິຜກີ ຈຶ່ງຕຣັສພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາຂ້າງຕົ້ນນີ້

---

## ຈົບ ນິຣຍວັຄຄ໌ ທີ່ ໒໒

# ຈົບ ນິຣຍວັຄຄ໌ ທີ່ ໑໔
# ໃນວັຄຄ໌ຕໍ່ໄປນີ້ເປັນ

# ນາຄວັຄຄ໌ທີ່ ໑໕

# ນາຄວັຄຄ໌ ທີ່ ໒໓

## ໑

ອະຫັງ ນາໂຄວະ ສັງຄາເມ
ຈາປາໂຕ ປະຕິຕັງ ສະຣັງ
ອະຕິວາກຍັງ ຕິຕິກຂິຕຕັງ
ທັສສີໂນ ຫິ ພະຫຸຊຊະໂນ ໆ໓໒໐ໆ

ເຮົາ ຈັກອົດທົນຕໍ່ຄໍາເວົ້າສຽດສີຂອງຄົນອື່ນ ເໝືອນພຍາຄັຊສານໃນສນາມຣົບ ທີ່ທົນຕໍ່ລູກສອນ ອັນພວກສັຕຣູ ປ່ອຍອອກໄປຈາກຄັນທະນູ ເພາະວ່າ ຄົນໂດຍມາກນັ້ນ ທຸສີລ.

## ໒

ທັນຕັງ ນະຍັນຕິ ສະມິຕິງ
ທັນຕັງ ຣາຊາກິຣູຫະຕິ
ທັນໂຕ ເສຍໂກ ມະນຸສເສສຸ
ໂຍຕິວາກຍັງ ຕິຕິກຂະຕິ ໆ໓໒໑ໆ

ຊ້າງທີ່ມີການເຝິກຫັດດີແລ້ວ ເຂົານຳເອົາໄປໃນທີ່ຊຸມນຸມຂອງຊ້າງທີ່ເຝິກຫັດແລ້ວ ພຣະຣາຊາກໍຂຶ້ນທຮົງ. ໃນໝູ່ມນຸຍ໌ ຜູ້ທີ່ເຝິກຝົນຕົນໄດ້ຍ່ອມຮູ້ຈັກອົດທົນ ຕໍ່ຄຳລ່ວງເກີນນັ້ນ ເປັນຜູ້ປະເສີຖແລ.

໓

ອະຣະມັສສະຕຣາ ທັນຕາ

ອາຊານີຍາ ຈະ ສິນລິຍາ

ກຸຍຊະຣາ ຈະ ມະຫານາຄາ

ອັຕຕະທັນໂຕ ຕະໂຕ ວະຣັງ ໑໓໔໑

ມ້າອັສດຣ ມ້າອາຊາໄນຍ໌ ຈາກລຸ່ມແມ່ນ້ຳສິນລຸ ແລະ ພຍາກຸຍຊຣທີ່ຜ່ານການເຝິກຝົນ ເປັນຢ່າງດີ ນັບວ່າ ເປັນສັຕວ໌ທີ່ປະເສີຖ, ແຕ່ບຸຄຄົລຜູ້ທີ່ເຝິກຝົນຕົນດີແລ້ວ ຍ່ອມປະເສີຖກວ່ານັ້ນ.

## ເຣື່ອງພຣະພຸທລອົງຄ໌

ພຣະບໍຣົມສາສດາ ທຮົງຜາຣົພ ກ່ຽວກັບພຣະອົງຄ໌ເອງ ຄັ້ງເມື່ອພຣະອົງຄ໌ ໄດ້ທອດພະເນຕຣ໌ເຫັນອຸປນິສັຍອນາຄາມິຜົລ ຂອງ ພຣາຫມຕ໌ ແລະ ນາງພຣາຫມຕີ ຜູ້ເປັນບິດາມາຣດາ ນາງມາຄັນທີຍ໌ ໃນແຄ້ວນກຸຣຸ

ຈຶ່ງເດັຈໄປ ຕະ ທີ່ນັ້ນ ພຣາຫມຕ໌ ໄດ້ເຫັນພຣະບໍຣິມຣູປຂອງພຣະສາສດາ ດາ ງາມພ້ອມດ້ວຍພຣະລັກຂຕະ ຈຶ່ງທູລຖວາຍ ລິດາຂອງຕົນ. ພຣະອົງຄ໌ບໍ່ ທຣົງຮັບ ແຕ່ ພຣະອົງຄ໌ທຣົງສແດງເຖິງໂທສ ຂອງການຄຸຕ ໃຫ້ສອງ ສາມີກັຣຍາ ດໍາຣົງຢູ່ໃນ ອະນາຄາມິຜົລ.

ສ່ວນນາງມາຄັນທີຍ໌ ມີຄວາມຄຽດແຄ້ນ ພຣະສາສດາວ່າ ແກ້ງຕິ ຕຽນຄົນ ຈຶ່ງຜູກອາໝາຕ ໃນພຣະອົງຄ໌ ຕັ້ງແຕ່ຄັ້ງນັ້ນ ເປັນຕົ້ນມາ. ຕໍ່ມາ ພາຍຫລັງ ນາງໄດ້ເປັນມເຫສີ ຂອງ ພຣະເຈົ້າອຸເທນ ຕະ ເມືອງໂກສັມພີ ເຫັນພຣະອົງຄ໌ ສເດັຈເຂົ້າໄປໃນ ພຣະນຄອນັ້ນ ຈຶ່ງໃຊ້ຄົນໃຫ້ໄປປ້ອຍດ່າ ທັງຂັບໄລ່ ອອກຈາກພຣະນຄອ. ພຣະອານົນທ໌ ຈຶ່ງທູລເຊີນສເດັຈໄປຍັງທີ່ ອື່ນ. ພຣະອົງຄ໌ ຈຶ່ງຕຣັສວ່າ ອທິກຣຕ໌ ເກີດໃນທີ່ໃດ ໃຫ້ຣະງັບໃນທີ່ນັ້ນ ແລ້ວຈຶ່ງໄປຕໍ່ພາຍຫລັງ. ການອົດທົນຕໍ່ຖ້ອຍຄໍາ ທີ່ເຂົາກ່າວລ່ວງເກີນນັ້ນ ເປັນການະຂອງເຮົາ ແລ້ວຈຶ່ງຕຣັສພຣະຄາຖາ ດັ່ງທີ່ຍົກຂຶ້ນມາໃນຂ້າງຕົ້ນ.

---

໔

ນະ ຫີ ເວເຣຫິ ຍາເນຫີ
    ຄັຈເຉຍຍະ ອະ ຄະຕັງ ທີສັງ
ຍະຖາຕຕະນາ ສຸທັນເຕນະ
    ທັນໂຕ ທັນເຕນະ ຄັຈຈະຕີ ໑໓໔໓໑

ເປັນທີ່ແນ່ນອນວ່າ ທີ່ດິນບໍ່ມີການເຝິກຝົນຕົນເອງ ໃຫ້ດີແລ້ວຍ່ອມບໍ່ສາມາຖທີ່ຈະນຳຕົນ (ເປັນພາຫະນະ) ໄປສູ່ດິນແດນທີ່ຍັງບໍ່ເຄີຍໄປ(໑)ນັ້ນໄດ້ ຜູ້ທີ່ຈະເດີນທາງໄປໄດ້ ກໍມີແຕ່ຜູ້ທີ່ເຝິກຝົນ ຄອບຄຸມຕົນເອງໄດ້ ເທົ່ານັ້ນ. (໑) ພຣະນິພພານ.

# ເຣື່ອງ ທັຕຖາຈຣິຍບຸພພາຈາຣຍ໌

ພຣະບໍຣົມສາສດາຈາຣຍ໌ ທຣົງພາຣົພ ພິກຂຸ ຜູ້ທີ່ເຄີຍເປັນ ຫັຕ-ຖາຈາຣຍ໌(ຄວານຊ້າງ). ໃນວັນນຶ່ງ, ພິກຂຸອົງຄ໌ນີ້ ພ້ອມດ້ວຍເພື່ອນ ພິກຂຸອີກຫລາຍອົງຄ໌ ໄດ້ໄປທີ່ຝັ່ງແມ່ນ້ຳ ອະຈີຣະວະດີ ເຫັນນາຍຄວານຊ້າງ ກຳລັງເຝິກຫັດຊ້າງຍ້ອຍຕົວນຶ່ງຢູ່ (ຊ້າງຮ້າຍ) ພິກຂຸ ອດີຕ ນາຍຄວານຊ້າງ ນີ້ກ່າວຂຶ້ນວ່າ ຖ້ານາຍຄວານ ເອົາຂໍສັບລົງທີ່ກົງນັ້ນ ຊ້າງກໍຈະເຊື່ອອາຣະວາດ. ນາຍຄວານຊ້າງໄດ້ຍິນກໍເຮັດຕາມທີ່ພິກຂຸອົງຄ໌ນັ້ນວ່າ. ຊ້າງຕົວນັ້ນກໍທຳຕາມທີ່ນາຍຄວານສັ່ງ ທຸກປະການ.

ຄັນກັບມາຍັງ ພຣະວິຫານແລ້ວ ພິກຂຸ ທັງຫລາຍ ຈຶ່ງນຳຄວາມນັ້ນ ຂຶ້ນຂາບທູລ ແດ່ພຣະສາສດາ. ພຣະອົງຄ໌ ຈຶ່ງທຣົງສັ່ງສອນໃຫ້ເຝິກຝົນຕົນ ແລ້ວຈຶ່ງຕຣັສ ພຣະຄາຖາ ດັ່ງທີ່ຍົກຂຶ້ນມາໃນຂ້າງຕົ້ນນີ້.

---

# ໕

ສະນະປາລະໂກ ນາມະ ກຸນຊະໂຣ
ກະຒຸກັປປະເວທະໂນ ທຸນນິວາຣະໂຍ
ພັທໂສ ກະພະອັງ ນະກຸນຊະຕິ
ສຸມະຣະຕິ ນາຄະວັນຕັສສະ ກຸນຊະໂຣ ໆ໓໔໕ໆ

ຊ້າງຍ້ອຍຕົວນຶ່ງ ທີ່ຊື່ວ່າ ສນະປາລະກະ ເປັນຊ້າງຮ້າຍ ທີ່ຢູ່ໃນຣະດູ ຊ້າງຍ້ອຍ ຊຶ່ງນາຍຄວານລ່າມໂສ້ໄວ້ ບໍ່ມີໃຜທີ່ຈະຄວບຄຸມມັນໄດ້. ມັນບໍ່ຍອມກິນອາຫາຣ. ພຍາກຸນຊຣ ມີຈິຕຣະລຶກເຖິງແຕ່ປ່າຊ້າງ ທີ່ຕົນເຄີຍຢູ່.

## ເຣື່ອງ ປຣິຊິຕາຕະພຣາຫມຕາບຸຕຣ໌

ພຣະບໍຣົມສາສດາ ທຣົງຜາຣົພ ບຸຕຣ໌ ໔ ຄົນຂອງພຣາຫມຕ໌ເຖົ້າຜູ້ນຶ່ງ. ໃນເມື່ອມາຣດາ ທຳກາລກິຣິຍາ ຕາຍໄປແລ້ວ, ພຣາຫມຕ໌ເຖົ້າຜູ້ທີ່ເປັນບິດາ ຈຶ່ງແບ່ງປັນທຣັພຍ໌ສົມບັຕິ ທັງໝົດ ໃຫ້ແກ່ບຸຕຣ໌ທັງ ໔ ນັ້ນ ແລ້ວຈຶ່ງອາສັຍບຸຕຣ໌ຢູ່. ຄັນເຫັນບຸຕຣ໌ ບໍ່ປະຕິບັຕິຕາມດັ່ງທີ່ຕົນມັກ ກໍມີຄວາມໂສກເສົ້າເສັຍໃຈ ຈຶ່ງໜີອອກໄປບວຊເປັນຕາພຣະຂາວ ທ່ຽວຂໍທານລ້ຽງຊີພ. ບໍ່ຫລິງເຫັນໃຜພໍທີ່ຈະເພິ່ງໄດ້ ຈຶ່ງໄດ້ເຂົ້າໄປເຝົ້າ ພຣະສາສດາ ທູລຄວາມນັ້ນໃຫ້ທຣົງຊາບ. ພຣະອົງຄ໌ ຈຶ່ງປະທານ ພຣະຄາຖາກາບິຕໃຫ້

ພຣາຫມຕ໌ ນຳເອົາໄປກ່າວໃນທີ່ປະຊຸມ. ເມື່ອບຸຕຣ໌ທັງ ໔ ໄດ້ຟັງກໍປ່ຽນໃຈມາດຳຣົງຕົນຢູ່ໃນ ປິຕຸປັຜຖານະທັມມ໌ ທັມມ໌ວ່າດ້ວຍການອຸປັຜຖາກບິດາມາຣດາ. ພຣະສາສດາ ຈຶ່ງ ອະນຸໂມທະນາຍົກເປັນຕົວຢ່າງ. ຄາວເມື່ອພຣະອົງຄ໌ ສເວີຍພຣະຊາຕິເປັນຊ້າງ ລ້ຽງມາຣດາ ຢູ່ໃນປ່າຫິມພານຕ໌, ພຣະເຈົ້າພາຣາຓະສີ ທຣົງຊາບ ຮັບສັ່ງໃຫ້ນາຍຫັຕຖາຈາຣຍ໌ໄປຈັບມາໄດ້ ແລະໃຫ້ລ້ຽງດູດ້ວຍໂພຊນາຫານຕ່າງ ໆ. ຊ້າງຕົວນັ້ນ ກໍບໍ່ປາຖນາຈະບໍຣິໂພຄພຣະຣາຊາຈຶ່ງຮັບສັ່ງຖາມ ຊ້າງນັ້ນກໍທູລຄວາມທີ່ຕົນກະທຳຢູ່ ໃຫ້ທຣົງຊາບ. ພຣະເຈົ້າພາຣາຓະສີ ທຣົງມີຄວາມເຫລື້ອມໃສ ຈຶ່ງໃຫ້ປ່ອຍຊ້າງນັ້ນກັບຄືນໄປຢູ່ໃນປ່າຕາມເດີມ.

ໃນທີ່ສຸດ ແຫ່ງອດີຕນິທານນີ້ ພຣະອົງຄ໌ ຈຶ່ງຕຣັສພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາ ໃນຂ້າງຕົ້ນນີ້.

---

ຜ

ມິທທີ ຍະທາ ໂຫຕິ ມະຫັຄພະໂສ ຈະ
ນິທທາຍິຕາ ສັມປະຣິວັຕຕະສາຍີ
ມະຫາວະຣາໂຫວະ ນິວາປະປຸຜໂຖ
ປຸນັປປຸນັງ ຄັພພະມຸເປຕິ ມັນໂທ ໑໙໔໕໑

ຄົນກິນຫລາຍ (ບໍ່ຮູ້ປະມານ ໃນການບໍຣິໂພຄ) ສະລຶມສະລື ນິນຕາ ບໍ່ຂຶ້ນ ມັກນອນ ກິ້ງເກືອກລີເລືອໄປມາໃນທີ່ນອນ ເໝືອນສຸກຣ ທີ່ເຂົາເກືອດ້ວຍເສສອາຫານ. ຄົນໂງ່ງ່າວ ເຊັ່ນນັ້ນ ຍ່ອມວຽນຕາຍວຽນເກີດ ບໍ່ຮູ້ຈັກຈົບ.

## ເຣື່ອງ ພຣະເຈົ້າປເສນທິໂກສົລ

ພຣະບໍຣົມສາສດາ ທຣົງປາຣົພ ພຣະເຈົ້າ ປະເສນທິໂກສົລ. ວັນນຶ່ງ ພຣະອົງຄ໌ ສເວີຍ ພຣະກຍາຫານຫລາຍເກີນພໍດີ ຮູ້ສຶກອຶດອັດພຣະທັຍບໍ່ຜາສຸກ ຈຶ່ງໄປເຝົ້າທູລຄວາມນັ້ນແດ່ ພຣະສາສດາ. ເມື່ອພຣະອົງຄ໌ຈະທຣົງສແດງໂທສ ຂອງການທີ່ບໍຣິໂພຄອາຫານເກີນສ່ວນ ຈຶ່ງຕຣັສພຣະຄາຖາດັ່ງທີ່ໄດ້ຍົກຂຶ້ນມາໃນຂ້າງຕົ້ນນີ້.

---

ໆ

ອິທັງ ປຸເຣ ຈິຕຕະມະຈາຣິ ຈາຣິກັງ

ເຍນະ ອິຈຈະກັງ ຍັຕຖະກາມັງ ຍະຖາສຸຂັງ

ຕະທັຊຊະຫັງ ນິຄຄະເຫສສາມິ ໂຍນິໂສ

ຫັຕຖິ ປະກິນນັງ ອິຍະ ອັງກຸສັຄຄະໂຫ ໆ໓໒໖ໆ

ແຕ່ກ່ອນນັ້ນ ໃຈຂອງຂ້າ ໄດ້ທ່ຽວໄປໃນອາຣົມຕ໌ ຕາມທີ່ປາຖນາ ຕາມຄວາມມັກໄຄ່ຊອບໃຈ ຕາມສະບາຍ, ແຕ່ວ່າ ໃນບັດນີ້ ຂ້າຈັກບັງຄັບມັນ ດ້ວຍໂຍນິໂສມນະສິການ (ອຸບາຍອັນແຍບຄາຍ) ເໝືອນດັ່ງຄວານຊ້າງຖືຂໍ ທີ່ບັງຄັບຊ້າງຍ້ອຍ.

## ເຣື່ອງ ສານຸສາມເນຣ

ພຣະບໍຣົມສາສດາ ທຣົງຜາຣົພ ສານຸສາມເນຣ ເປັນບຸຕ໌ຂອງອຸບາສິກາ ຜູ້ນຶ່ງ. ສາມເນຣເຖິງພ້ອມດ້ວຍວັຕຣ໌ປະຕິບັຕິ ທັງເປັນຜູ້ສລາດໃນການເທສນາ ວ່າກ່າວ. ຕໍ່ມາພາຍຫລັງ ມີຄວາມກະສັນຢາກສິກ ຈຶ່ງໄປຫາມາຣດາ ຜາຣົພເຫຕຸນັ້ນໃຫ້ຟັງ ມາຣດາບໍ່ພໍໃຈໄດ້ຫ້າມໄວ້. ຂຕະນັ້ນ ມີນາງຍັກຂິຕີຕົນນຶ່ງ ໄດ້ເຄີຍເປັນມາຣດາ ຂອງສາມເນຣນັ້ນມາໃນອດີຕຊາຕິເມື່ອຊາບເຫຕຸນັ້ນ ຈຶ່ງປາຖນາ ບໍ່ຢາກໃຫ້ສາມເນຣນັ້ນສິກ ຈຶ່ງມາເຂົ້າສິງສາມເນຣນັ້ນ ແລ້ວທຳອາການຕ່າງ ໆ. ອຸບາສິກາ ຜູ້ເປັນມາຣດາຕົກໃຈຢ້ານສາມເນຣນັ້ນ ທຳກາລກິຣິຍາ (ຕາຍ) ຈຶ່ງຮ້ອງໄຫ້ຮ່ຳໄຣ ແລະຊາວບ້ານກໍພາກັນມາຫຸ້ມເບິ່ງ. ຄັນນາງຍັກຂິຕີ ອອກໄປແລ້ວ ສາມເນຣໄດ້ສະຕິຮູ້ສຶກຕົນ ມືນຕາຂຶ້ນມາເຫັນມາຣດາຮ້ອງໄຫ້ ແລະ ຜູ້ຄົນອຸ່ນອາຍຢູ່ເຊັ່ນນັ້ນ ຈຶ່ງໄດ້ຖາມມາຣດາ ໆ ໄດ້ເລົ່າເຫຕຸການຕ໌ໃຫ້ຟັງ ແລ້ວກ່າວຕັກເຕືອນ ສັ່ງສອນໂດຍປະການຕ່າງໆ ສາມເນຣຮູ້ສຶກສລົດໃຈໃຫ້ປະຕິຍານວ່າ ຈະບໍ່ສິກ

ຕໍ່ມາພາຍຫລັງ ເມື່ອໄດ້ອຸປສົມບົທເປັນກິກຂຸແລ້ວ ພຣະສາສດາໄດ້ທຣົງເທສນາສັ່ງສອນ ໃຫ້ເຝິກຫັດຈິຕ ແລ້ວຈຶ່ງຕຣັສພຣະຄາຖາ ດັ່ງທີ່ຍົກຂຶ້ນມາໃນຂ້າງຕົ້ນນີ້.

---

໗

ອັປປະມາທະຣະຕາ ໂຫຖະ
 ສະຈິຕຕະມະນຸຣັກຂະຖະ
ທຸຄຄາ ອຸທລະຣະຖັຕຕານັງ
 ປັງເກ ສັນໂນອະ ກຸຍຊະໂຣ ໆ໓໒໗ໆ

ພວກທ່ານຈົ່ງຍິນດີ ໃນຄວາມບໍ່ປະມາທ, ຈົ່ງຣະມັດຣະວັງ ຈິຕຂອງຕົນ ຈົ່ງຖອດຖອນຕົນ ອອກຈາກຫລົ່ມພົງກິເລສ ເໝືອນພຍາຊ້າງທີ່ຕິດຢູ່ໃນຫລົ່ມພົງ ຍ່ອມພຍາຍາມຊ່ອຍຕົນເອງ.

# ເຣື່ອງ ປາເວຣະກະຫັຕຖີ

ພຣະບໍຣົມສາສດາ ທຣົງຜາຣົພ ຊ້າງຕົວນຶ່ງຊື່ ປາເວຣະກະ ຂອງພຣະເຈົ້າ ປະເສນະທິໂກສົລ ເມື່ອຄາວທີ່ຍັງໜຸ່ມຢູ່ນັ້ນ ເປັນຊ້າງທີ່ມີກຳລັງເຄີຍເຂົ້າໃນການສົງຄາມ. ຄັນເມື່ອແກ່ລົງມາແລ້ວ ກຳລັງກໍອ່ອນນ້ອຍຖອຍ

ລິງ. ໃນວັນນຶ່ງ ໄດ້ໄປທ່ຽວຫາກິນ ຫລິງລົງໄປຕິດຢູ່ໃນຫລົ່ມພົງ ຢູ່ໃນ
ສະນ້ຳຂື້ນບໍ່ໄດ້. ພຣະເຈົ້າ ໂກສົລ ຈຶ່ງຕຣັສຮັບສັ່ງໃຫ້ນາຍຄວານ ຈັດການ
ເອົາຊ້າງຂຶ້ນ. ນາຍຄວານຈຶ່ງຈັດການເໝືອນດັ່ງກອງທັພໂດຍ ຕີກອງເສິກ
ໃຫ້ເອີກກະເຫຣີກ ເໝືອນກັບຈະອອກທັພ ປະເວຣກະທັຕຖີ ກໍເກີດມານະ
ກຳລັງໃຈຮຶກເຫີມ ຂຶ້ນຈາກຫລົ່ມພົງໄດ້ ໂດຍເຣວພລັນ.

ພຣະກິກຂຸ ທັງຫລາຍ ໄດ້ເຫັນເຊັ່ນນັ້ນແລ້ວ ຈຶ່ງນຳຄວາມນັ້ນ ຂຶ້ນ
ຂາບທູລ ແດ່ ພຣະສາສດາ. ພຣະອົງຄ໌ ຈຶ່ງຕຣັສສອນ ກິກຂຸ ທັງຫລາຍ
ໃຫ້ເອົາຢ່າງຊ້າງນັ້ນ. ແລ້ວຈຶ່ງຕຣັສ ພຣະຄາຖາ ດັ່ງທີ່ຍົກຂຶ້ນມາໃນຂ້າງຕົ້ນ
ນັ້ນແລ.

---

## ໙

ສະເຈ ລະເກຖະ ນິປະກັງ ສະຫາຍັງ
ສັທລິງ ຈະຣັງ ສາລຸວິຫາຣິ ລິຣັງ
ອະກິກຸຍຍະ ສັພພານິ ປະຣິສສະຍານິ
ຈະເຣຍຍະ ເຕນັຕຕະມະໂນ ສະຕີມາຯ໓໒໘ຯ

ຖ້າວ່າໄດ້ສະຫາຍ ທີ່ເຂົ້າກັບຕົນໄດ້ ມີຄວາມປະພຶຕຣ໌ດີ ມີຄວາມ
ສລຽວສລາດ ໄປໃນທີ່ໃດ ກໍຄວນໄປກັບສະຫາຍເຊັ່ນນັ້ນ ຢ່າຫາແຕ່ຄວາມ

ສຸຂຄວາມສະບາຍ ຄວນມີສະຕິຣະວັງຕົວບຸກບືນຜ່ານຜ່າ ອັນຕຣາຍທັງປວງ.

## ໑໐

ໂນ ເຈ ລະເພຖະ ນິປະກັງ ສະຫາຍັງ
ສັທລິງ ຈະຣັງ ສາລຸວິທາຣິ ລີຣັງ
ຣາຊາວະ ຣັຒກັງ ວິຊິຕັງ ປະຫາຍະ
ເອໂກ ຈະເຣ ມາຕັງຄະຣັລເລວະ ນາໂຄ ໆ໓໒໙ໆ

ຖ້າວ່າຫາສະຫາຍ ທີ່ມີຄວາມປະພຶຕຣ໌ດີ ມີຄວາມສລຽວແລະສລາດ ທີ່ເຂົ້າກັບຕົນບໍ່ໄດ້ແລ້ວ, ທ່ານກໍຄວນສັລຈຣໄປຄົນດຽວ ເໝືອນດັ່ງພຣະຣາຊາ ສລະຣາຊສົມບັຕິ ແລະ ແວ່ນແຄວ້ນ ທ່ຽວໄປອົງຄ໌ດຽວ ຫຼືບໍ່ກໍເຮັດຄືພລາຊ້າງ ລະອອກຈາກໂຂງ (ຝູງ) ທ່ຽວໄປຕົວດຽວໃນປ່າ.

## ໑໑

ເອກັສສະ ຈະຣິຕັງ ເສຍໂຍ
ນັຕຖິ ພາເລ ສະຫາຍະຕາ
ເອໂກ ຈະເຣ ນະ ຈະ ປາປານິ ກະຍິຣາ
ອັປໂປສສຸໂກ ມາຕັງຄະຣັລເລວະ ນາໂຄ ໆ໓໓໐ໆ

ການທ່ອງທ່ຽວໄປຄົນດຽວນັ້ນ ດີກ່ວາ ປະເສີຖກ່ວາ ເພາະຄວາມເປັນ ມິຕຣ໌ສະຫາຍຢູ່ໃນຄົນພາລນັ້ນບໍ່ມີ ແລະ ບໍ່ຄວນທຳບາປ, ບໍ່ຄວນດີ້ນຣົນຂົນຂວາຍຈົນເກີນໄປ, (ຈົ່ງທຳຕົວ) ເໝືອນພຍາຊ້າງທ່ຽວໄປໃນປ່າພຽງຕົວດຽວ.

# ເຣື່ອງ ສັມພະຫຸລະພິກຂຸ

ພຣະບໍຣົມສາສດາ ທຣົງຜາຣົພ ພຣະພິກຂຸ ເປັນອັນມາກ ອັນມີພຣະອານົນທ໌ ເປັນປະລານ ທີ່ພາກັນເຂົ້າໄປເຝົ້າ ພຣະຜູ້ມີພຣະພາຄເຈົ້າຄາວທີ່ພຣະອົງຄ໌ ສເດັຈອອກໄປຈຳພັຣษາ ໃນປ່າຣັກຂິຕວັນ ເພື່ອຫລີກໜີຈາກການວິວາທຜິດຖຽງກັນ ຂອງ ພິກຂຸ ຊາວເມືອງໂກສັມພີ. ກ່ອນທີ່ຈະເຂົ້າໄປໃນປ່ານັ້ນ ພຣະອານົນທ໌ ໃຫ້ພິກຂຸ ທັງຫລາຍ ຖ້າຢູ່ຂ້າງນອກກ່ອນເພິ່ນເຂົ້າໄປແຕ່ອົງຄ໌ດຽວ. ເວລານັ້ນ, ຊ້າງ ປາຣິເລຍຍະກະ ແນມເຫັນຈຶ່ງຈັບເອົາທ່ອນໄມ້ແລ່ນມາ ພຣະອົງຄ໌ ຈຶ່ງຕຣັສຫ້າມໄວ້ ຊ້າງນັ້ນກໍຫຍຸດຢູ່ຄັນເຫັນ ພຣະອານົນທ໌ມາເຝົ້າ ບໍ່ວາງບໍຣິຂານຂອງຕົນ ລົງໃນທີ່ປະທັບຂອງພຣະສາສດາ ຊ້າງນັ້ນ ກໍມີຄວາມເຫລື້ອມໃສ. ພຣະອານົນທ໌ ຈຶ່ງທູລຄວາມທີ່ຕົນໃຫ້ ພິກຂຸ ເຫລົ່ານັ້ນ ພັກຢູ່ພາຍນອກ ໃຫ້ທຣົງຊາບ ພຣະອົງຄ໌ຈຶ່ງປະທານໂອກາສ. ເມື່ອທ່ານເຫລົ່ານັ້ນ ເຂົ້າເຝົ້າແລ້ວ ກໍທູລຖາມເຖິງ ຜາສຸກວິຫານ ພຣະອົງຄ໌ ຈຶ່ງຕຣັສພຣະຄາຖາ ດັ່ງທີ່ຍົກຂຶ້ນມາໃນຂ້າງຕົ້ນນັ້ນ.

## ໑໔

ອັຕຖັມຫິ ຊາຕັມຫິ ສຸຂາ ສະຫາຍາ
ຕຸຜກີ ສຸຂາ ຍາ ອິຕະຣິຕະເຣນະ
ປຸຌຌັງ ສຸຂັງ ຊີວິຕະສັງຂະຍັມຫິ
ສັພພັສສະ ທຸກຂັສສະ ສຸຂັງ ປະຫານັງ໌໓໓໑໌

ມີເພື່ອນຕາຍ ກໍມີຄວາມສຸຂ, ຍິນດີ ເທົ່າທີ່ຫາມາໄດ້ ກໍມີຄວາສຸຂ, ທຳບຸຌໄວ້ ເຖິງຄາວຈະຕາຍ ກໍມີຄວາມສຸຂ, ລະທຸກຂ໌ໄດ້ ທັງໝົດ ກໍມີ ຄວາມສຸຂ.

## ໑໓

ສຸຂາ ເມຕເຕຍຍະຕາ(໑) ໂລເກ
ອະໂຖ ເປຕເຕຍຍະຕາ ສຸຂາ
ສຸຂາ ສາມັຌຌະຕາ ໂລເກ
ອະໂຖ ພຣາຫມັຌຌະຕາ(໔) ສຸຂາ ໌໓໓໔໌

ປະຝິບັຕິຊອບ ຕໍ່ມາຣດາ(໑) ກໍເປັນສຸຂ, ປະຝິບັຕິຊອບ ຕໍ່ບິດາກໍ ເປັນສຸຂ, ປະຝິບັຕິຊອບຕໍ່ສມຓະ ກໍເປັນສຸຂ, ປະຝິບັຕິຊອບຕໍ່ພຣະຜູ້ປະເສີຖ ກໍ ເປັນສຸຂ ແລ. (໑) ຜູ້ປະຕິບັຕຊອບ, (໔) ພຣະພຸທສເຈົ້າ ແລະ ພຣະອຣຫັຕ.

## ໑໔

ສຸຂັງ ຍາວະ ຊະຣາ ສີລັງ
ສຸຂາ ສັທລາ ປະຕິຕາ
ສຸໂຂ ປັນຍາປະຕິລາໂພ
ປາປານັງ ອະກະຣະຫັງ ສຸຂັງ ฯລฯລฯ

ສີລ ທຳໃຫ້ເກີດຄວາມສຸຂ ຕາບເທົ່າເຖິງຊຣາກາລ, ສັທລາ ທີ່ຕັ້ງໝັ້ນແລ້ວ ທຳໃຫ້ເກີດສຸຂ, ປັນຍາທີ່ໄດ້ມາແລ້ວ ທຳໃຫ້ເກີດສຸຂ, ການບໍ່ກະທຳບາປ ໂດຍປະການທັງປວງ ທຳໃຫ້ເກີດສຸຂ.

## ເຣື່ອງມາຣ

ພຣະບໍຣົມສາສດາ ທຣົງຜາຣົພມາຣ ທີ່ເຂົ້າເຝົ້າພຣະອົງຄ໌ທູລໃຫ້ສເດັຈອອກສເວີຍຣາຊສົມບັຕິ. ພຣະອົງຄ໌ຕຣັສຖາມເຖິງຄວາມປະສົງຄ໌ຂອງມາຣ ໆ ຈຶ່ງທູລວ່າ ພຣະອົງຄ໌ ບໍຣິບູຣຕ໌ດ້ວຍ ອິທລິບາທທັງ ໔ ອາຈະອລິຍຖານ ໃຫ້ພູເຂົາຫລວງ ເປັນຄຳທັງແທ່ງ ກໍໄດ້. ຖ້າພຣະອົງຄ໌ອອກສເວີຍຣາຊແລ້ວ ຂ້າພຣະອົງຄ໌ກໍຈັກໄດ້ຄຳນຳແດ່. ພຣະສາສດາຕຣັສຕອບວ່າ ໔ ເທົ່າພູເຂົາຄຳ ກໍຍັງບໍ່ພໍແກ່ຄົນໆ ດຽວ. ໂອວາທຂອງເຮົາກັບຂອງທ່ານເປັນຄົນລະຢ່າງ ເຮົາບໍ່ຕ້ອງການຫາຣືກັບທ່ານ. ແລ້ວຈຶ່ງຕຣັສພຣະຄາຖານີ້.

---

# ຕັຕຫາ ວັຄຄ໌ ທີ່ ໒໔
## ໝວດ ວ່າດ້ວຍ ຕັຕຫາ

໑

ມະນຸຊັສສະ ປະມັຕຕະຈາຣິໂນ
ຕັຕຫາ ວັໝໝະຕິ ມາລຸວາ ວິຍະ
ໂສ ປະຣິປຸລະວະຕິ ຫຸຣາຫຸຣັງ
ຜະລະມິຈລັງ ວະນັສມິງວານະໂຣ ໆລລ໔ໆ

ຕັຕຫາ ຄື ຄວາມຢາກ ຍ່ອມຈເຣີນເພີ່ມພູລ ເໝືອນກັບເຄືອໄມ້ ໃນບຸຄຄົລ ຜູ້ທີ່ມີຊີວິຕຢູ່ ດ້ວຍຄວາມປະມາທ. ເຂົາຍ່ອມກະໂດດໂລດເຕັ້ນ ຈາກກົພນີ້ ໄປສູ່ກົພໜ້າ ເໝືອນກັບລີງທີ່ກະໂດດຈາກງ່າໄມ້ຕົ້ນນີ້ໄປຍັງຕົ້ນໜ້າ ເພື່ອຊອກຫາໝາກໄມ້ນັ້ນແລ.

໔

ຍັງ ເອສາ ສະຫະຕິ ຊັມມີ
ຕັຕຫາ ໂລເກ ວິສັຕຕິກາ

ໂສກາ ຕັສສະ ປະວັທທັນຕິ
ອະພິວຸຕຖັງວະ ວິຣະຕັງ ໆ໓໓໕ໆ

ຕັນຫາ ອັນລາມົກ ທີ່ມີພິສຮ້າຍ ເມື່ອເຂົ້າຄອບງຳບຸຄຄົລໃດ ໃນໂລກ ບຸຄຄົລນັ້ນ ຫຼຸນຍ່ອມ ມີແຕ່ຄວາມໂສກເສົ້າ ເໝືອນກັບຫຍ້າທີ່ຖືກຝົນຕົກຮ່າຍ່ອມງອກງາມ.

໓

ໂຍ ເຈຕັງ ສະຫະເຕ ຊັມມິງ
ຕັນຫັງ ໂລເກ ທຸຣັຈຈະຍັງ
ໂສກາ ຕັມຫາ ປະປະຕັນຕິ
ອຸທະພິນທຸວະ ໂປກຂະຣາ ໆ໓໓໖ໆ

ຜູ້ໃດ ທີ່ເອົາຊນະຊຶ່ງຕັນຫາລາມົກ ທີ່ຈະເອົາຊນະໄດ້ຍາກນີ້ ຄວາມໂສກຍ່ອມຕົກໄປຈາກຜູ້ນັ້ນ ເໝືອນດັ່ງຢາດນ້ຳທີ່ຕົກໄປຈາກໃບບົວນັ້ນແລ.

໔

ຕັງ ໂວ ວະທາມິ ພັທທັງ ໂວ
ຍາວັນເຕຕຖະ ສະມາຄະຕາ

ຕັຕຫາຍະ ມູລັງ ຂະນະຖະ
ອຸສີຣັຕໄຖວະ ວີຣະຕັງ
ມາ ໂວ ນະຣ໌ງ໌ະ ໂສໂຕວະ
ມາໄຣ ກັລຊີ ປຸນັປປຸນັງ ຯລຯ

ເຮົາຂໍບອກຄວາມນີ້ ແກ່ທ່ານ ທັງຫລາຍວ່າ: ພວກທ່ານ ຈົ່ງເປັນຜູ້ມີໂຊຄດີ ທີ່ມາຊຸມນຸມກັນ ຕະ ທີ່ນີ້. ຂໍໃຫ້ພວກທ່ານ ຈົ່ງຂຸດຮາກແຫ່ງຕັຕຫາ ເໝືອນການຫລົກຫຍ້າຮີກ, ພວກທ່ານຢ່າໄດ້ປ່ອຍໃຫ້ພວກມານມາກຸກກວນທ່ານຢູ່ບ່ອຍໆ ຄືດັ່ງກະແສນ້ຳທີ່ຄ່ອຍໆ ເຊາະຕົ້ນອໍ້ໃຫ້ລົ້ມ.

## ເຣື່ອງ ກະປິລມັຈຉະ

ພຣະບໍຣົມສາສດາ ທຣົງຜາຣົພ ປາຊນິດນຶ່ງ ຄືປາວຽນໄຟ ທີ່ເຂົາໃຫ້ຊື່ວ່າ ປາກະປິລ ທີ່ມີກິ່ນປາກເໝັນທີ່ສຸດ. ການທີ່ມີກິ່ນປາກເໝັນນັ້ນກໍຍ້ອນ ບຸພພະກັມມ໌ໃນຊາຕິປາງກ່ອນ ຄັ້ງສາສນາ ກັສສປະສັມມາສັມພຸທລເຈົ້າພຸ້ນ. ປາຕົວນີ້ ເປັນກິກຂຸ ພຫູສູຕ ມີບໍຣິວານມາກ. ຍ້ອນລາພສັກກາຣະເປັນເຫຕຸໃຫ້ເພິ່ນມີຕັຕຫາ ຄວາມໂລພເກີດຂຶ້ນ ກ່າວປັ້ນ ພຣະລັມມວິນັຍວ່າບໍ່ແມ່ນລັມມວິນັຍ ແລະສແດງສິ່ງທີ່ບໍ່ແມ່ນລັມມວິນັຍວ່າ ເປັນລັມມວິນັຍຄັນທ່ານກາລກິຣິຍາໄປແລ້ວ ໄດ້ໄປບັງເກີດໃນອເວຈີ ມຫານຣົກ ສິ້ນພຸທ-

ສົນດຣນຶ່ງ(໑). ຕົກມາໃນພຸທສກາລນີ້ ໄດ້ເກີດເປັນປາຢູ່ໃນແມ່ນໍ້າ ອຈິຣະ
ວະດີ ຊາວປະມົງຈັບໄດ້ ເຫັນວ່າເປັນປາປລາດຈຶ່ງນໍາເອົາໄປຖວາຍ ພຣະ
ເຈົ້າ ປະເສນທິໂກສົລ ພຣະຣາຊາຈຶ່ງມັເຄີຣຳເອົາປານັ້ນ ໄປຍັງພຣະວິຫາຣ
ເຝົ້າພຣະສາສດາ ພຣະອົງຄ໌ ຈຶ່ງທຣົງສແດງບຸພພກັມມ໌ຂອງປາ ຕາມທີ່ໄດ້
ເຫລົ່ານາໃຫ້ຟັງນັ້ນ ແລ້ວຈຶ່ງປະທານສັມມິກຖາ ດ້ວຍບາທພຣະຄາຖາ ດັ່ງ
ທີ່ກ່າວມາແລ້ວນີ້. (໑)ໃນຣະຍະພຣະພຸທສເຈົ້າອົງຄ໌ນຶ່ງ.

---

## ໕

ຍະຖາປິ ມູເລ ອະນຸປັທທະເວ ທັຣະເຫ
ຈິນໂນປິ ຣຸກໂຂ ປູນະເຣນະ ຣູຫະຕິ
ເອວັມປິ ຕັຕຫານຸສະເຍ ອະນູຫະເຕ
ນິພພັຕຕະຕິ ທຸກຂະມິທັງ ປຸນັປປຸນັງ ຯ໓໓໘ຯ

ອັນວ່າຕົ້ນໄມ້ນັ້ນ ເມື່ອຣາກຂອງມັນ ຍັງແຂງແຮງຢູ່ ບໍ່ທັນຖືກ ທໍາ
ລາຍເທື່ອ ເຖິງຈະຖືກຕັດຕົ້ນແລ້ວມັນກໍຍັງປົ່ງຂຶ້ນເລື້ອຍໄປ, ອັນນີ້ ສັນໃດ
ຕັຕຫາ ເມື່ອທໍາລາຍເຊື້ອຂອງມັນຍັງບໍ່ທັນໝົດສິ້ນ ຄວາມທຸກຂ໌ນີ້ ກໍຍ່ອມ
ເກີດຂຶ້ນໄດ້ ສັນນັ້ນ ຫັ້ນແລ.

ຝ

ຍັສສະ ຈັຕຕິງສະຕິ ໂສຕາ
 ມະນາປັສສະວະນາ ຖຸສາ
ວາຫາ ວະຫັນຕິ ທຸທທິຍຖິ
 ສັງັປປາ ຣາຄະນິສສິຕາ ໆ໓໓໙ໆ

ກະແສແຫ່ງຕັຕຫາ ໓໖ ສາຍ ທີ່ໄຫລແຮງໄປສູ່ອາຣົມຕ໌ ອັນເປັນທີ່ໜ້າປາຖນາ (ເມື່ອມັນໄຫລ) ຖ້ວມທົ່ນຈິຕໃຈຂອງຜູ້ໃດ ຄວາມຄິດຄະນຶງທີ່ແຝງດ້ວຍຣາຄະນັ້ນ ຍ່ອມຈະຊັກນຳເຂົາໃຫ້ຄິດຂເວໄປໃນທາງຜິດໄດ້.

ຖ

ສະວັນຕິ ສັພພະທິ ໂສຕາ
 ລະຕາ ອຸພກິຊຊາ ຕິຕຖະຕິ
ຕັລຈະ ທິສວາ ລະຕັງຊາຕັງ
 ມູລັງ ປັລລາຍະ ຈິນທະຖະ ໆ໓໔໐ໆ

ກະແສນ້ຳ ຄື ຕັຕຫາ ທຽນຍ່ອມໄຫລໄປຍັງທຸກທັ່ນ ທຸກແຫ່ງ, ເຄືອໄມ້ ຄື ກິເລສກໍ່ຍ່ອມກັ່ງອຂຶ້ນຣົກໄປທົ່ວ. ເມື່ອເຫັນເຄືອໄມ້ກັ່ງອຂຶ້ນ

ອີກແລ້ວ ພວກທ່ານຈິ່ງຕັດຮາກຂອງມັນດ້ວຍມີດ ຄື ປັນຍາ.

ຖ

ສະຣິຕານິ ສິເນຫິຕານິ ຈະ
ໂສມະນັສສານິ ກະວັນຕິ ຊັນຕຸໂນ
ເຕ ສາຕະສິຕາ ສຸເຂສິໂນ
ເຕ ເວ ຊາຕິຊະຣູປະຄາ ນະຣາ ໑໙໔໑໑

ສັຕວ໌ ທັງຫລາຍ ມີແຕ່ໂສມນັສຍິນດີ ຊຸ່ມໃຈໄປດ້ວຍຄວາມຮັກ ສເນ່ຫາຊາບຊຶມໄປໃນການາຣົມຕ່າງໆ. ພວກເຂົາໄຝ່ຝັນສແວງຫາແຕ່ຄວາມສຸຂ ພວກເຂົາ ກໍຕ້ອງເກີດຕ້ອງແກ່ຢູ່ເລື້ອຍໄປ.

ທ

ຕະສິນາຍະ ປຸຣັກຂະຕາ ປະຊາ
ປະຣິສັປປັນຕິ ສະໂສວະ ພາລິໂຕ
ສັໂຍຊະນະສັງຄະສັຕຕາ
ທຸກຂະມຸເປນຕິ ປຸນັປປຸນັງ ຈິຣາຍະ ໑໙໔໔໒

ຝູງສັຕວ໌ ທີ່ຕິດກັບຕັຕຫາ ກະເສືອກກະສົນ ເໝືອນກະຕ່າຍທີ່ຕິດບ້ວງ. ສັຕວ໌ ທັງຫລາຍ ທີ່ຕິດຢູ່ໃນກິເລສ ເຄື່ອງຜູກມັດ ຍ່ອມປະສົບກັບທຸກຂ໌ຢູ່ ບ່ອຍ ໆ ຕລອດການນານ.

## ໑໐

ຕະສິຕາຍະ ປຸຣັກຂະຕາ ປະຊາ
ປະຣິສັປປັນຕິ ສະໄສວະ ພາລິໄຕ
ຕັສມາ ຕະສິຕັງ ວິໂນທະເຍ
ກິກຂຸ ອາກັງຂັງ ວິຣາຄະມັຕຕະໂນ ໆລ໔ລໆ

ຝູງສັຕວ໌ ທີ່ຕິດກັບຕັຕຫາ ຍ່ອມກະເສືອກກະສົນ ເໝືອນກະຕ່າຍທີ່ຕິດບ້ວງ, ສະນັ້ນ ກິກຂຸ ເມື່ອຫວັງຈະໃຫ້ກິເລສ ຈາງຫາຍໄປ ກໍຄວນທຳລາຍ ຕັຕຫາເສັຍ.

## ເຣື່ອງ ສູກະຣະໄປຕິກາ

ພຣະບໍຣົມສາສດາ ທຣົງຜາຣົພ ນາງ(໑) ລູກສຸກຣກິນຄູຕ(໔)ຕົວນຶ່ງ ນາງລູກສຸກຣຕົວນີ້ ໃນພຸທລກາລ ແຫ່ງ ພຣະກກຸສັນລພຸທລເຈົ້ານັ້ນ ນາງໄດ້ເກີດເປັນ ນາງໄກ່, ຈຸຕິຈາກນາງໄກ່ ມາເກີດເປັນຣາຊລິດາ ມີນາມວ່າ

(໑) ຄຳວ່ານາງນີ້ ໝາຍຄວາມວ່າ ຕົວແມ່. (໔) ໝູກິນຄູຕ ກໍຄືໝູກິນຂີ້

ນາງອຸພພະຣີ, ຈຸຕິຈາກອັຕຕາພນັ້ນ ເປັນຣາຊທິດາ ໄດ້ໄປເກີດໃນພຣົຫມະໂລກ. ຕົກມາໃນພຸທທກາລ ພຣະໂຄດົມພຸທທເຈົ້າ ເຮົານີ້ ໄດ້ເກີດເປັນນາງລູກສຸກຣ. *ຕໍ່ຈາກນີ້ໄປ ເກີດເປັນ ມນຸສຍ໌* ຄື: ເກີດເປັນສຕຣີ ໃນເມືອງສຸວັຕຕກູມິ, ໃນເມືອງ ພາຣາຕະສີ, ໃນເມືອງ ສຸປາຣກະປັຍຍນະ, ໃນເມືອງ ຄາວິຣະປັຍຍນະ, ໃນເມືອງ ອະນຸຣາທະ ແລະ ເກາະກັນຕະຄາມໂດຍລໍາດັບ ແລ້ວໄດ້ເປັນກັຣຍາຂອງ ລະກຸຕທະກະອະຕິມພຣ ຜູ້ທີ່ເປັນອາມາຕຍ໌ຂອງ ພຣະເຈົ້າ ທຸທກະຄາມນີ (ແຫ່ງປະເທສ ສຣີ ລັງກາ) ຂໍອະນຸຍາຕສາມີອອກບວຊເປັນ ກິກຂຸນີ ທີ່ຕິສສມຫາວິຫາຣ ໃນລັງກາທວີປ. ກະທໍາພຽຣໄດ້ສໍາເຣັຈ ພຣະອຣຫັຕ ໃນອັຕກາພນີ້.

ພຣະສາສດາ ສເດັຈເຂົ້າໄປ ໂຄຈຣບິຕທບາຕ ໃນກຣຸງຣາຊຄຣິຫ໌ໄດ້ທອດພຣະເນຕຣ໌ເຫັນ ລູກນາງສາວສຸກຣຕົວນັ້ນ ກໍທຣົງກະທໍາຊຶ່ງຄວາມແຍ້ມພຣະໂອຍກ໌ ໃຫ້ຜາກົຍ. ພຣະອົງຄ໌ ຈຶ່ງຕຣັສເຣື່ອງ ນາງລູກສຸກຣນັ້ນໃຫ້ກິກຂຸ ຜູ້ຕາມສເດັຈນັ້ນ ເກີດທັມມສັງເວຊ. ເມື່ອຈະປະກາສໂທສແຫ່ງຣາຄຕັຕຫານັ້ນ ພຣະພຸທທອົງຄ໌ ຈຶ່ງຕຣັສຊຶ່ງພຣະຄາຖາ ດັ່ງທີ່ໄດຍົກຂຶ້ນມາໃນຂ້າງຕົ້ນນີ້.

---

# ໑໑

ໂຍ ນິພພະນັຍໂກ ວະນາທິມຸຕໂຕ
ວະນະມຸຕໂຕ ວະນະເມວະ ທາວະຕິ
ຕັງ ປຸຄຄະລັງ ເອຖະ ປັສສະຖະ
ມຸຕໂຕ ພັນທະນະເມວະ ທາວະຕິ ໆ໓໔໔ໆ

ບຸຄຄົລຜູ້ໃດ ທີ່ສລະຈາກເພສ ຜູ້ຄອງເຮືອນ ມາຖືເພສເປັນ ບັຣພະຊິຕ ທີ່ ປາສຈາກເຮືອນ ພົ້ນຈາກກິເລສແລ້ວ ຍັງແລ່ນກັບຄືນໄປ່ຫາປ່ານັ້ນອີກ.

## ເຣື່ອງ ວິພະກັນຕະກະ ກິກຂຸ

ພຣະບໍຣົມສາສດາ ທຣົງຜາຣົພ ກິກຂຸຜູ້ທີ່ລາສິກຂາອອກໄປ ອົງຄ໌ ນຶ່ງ ທີ່ເປັນສິສ ຂອງ ພຣະມຫາກັສສປະ ໄດ້ສຳເຣັຈຣູປຊານທັງ ໔. ວັນ ນຶ່ງ ເພິ່ນໄດ້ເຫັນສຕຣີຣູປງາມ ເພິ່ນເກີດມີຈິຕປະຜິພັທສ໌ ຮັກໄຄ່ ຈຶ່ງໄດ້ ລາສິກຂາອອກໄປຢູ່ກັບ ສຕຣີນັ້ນ. ເພິ່ນໄດ້ຫາລ້ຽງຊີພດ້ວຍໂຈຣະກັມມ໌. ເຂົາຈັບໄດ້ ແລ້ວທຳພັນທະນາການ ຜູກມັດ ທ່ຽວຕະເວນ ໃຫ້ປະຊາຊົນ ເຫັນ ເພື່ອຈະປະຫາຣຊີວິຕ. ພຣະມຫາກັສສປເຖຣະ ທ່ຽວໄປບິຕທບາຕ ແລເຫັນ ຈຶ່ງເຕືອນສະຕິ ກາວະນາທີ່ຕົນເຄີຍສັ່ງສົມມາ. ເມື່ອເຂົາໄດ້ສະຕິ ຈຶ່ງຍຶດໝັ້ນໃນກາວະນານັ້ນ ບໍ່ຫວັ່ນໄຫວສະທົກສະທ້ານຢ້ານກົວແຕ່ປະການ

ໃດ. ຣາຊບຸຣຸສທັງຫລາຍ ແລເຫັນຄວາມອັສຈັຣຍ໌ ກໍນໍາຄວາມນັ້ນຂຶ້ນຂາບທູລ ແດ່ ພຣະຣາຊາ ໆ ຈຶ່ງສເດັຈໄປເຝົ້າ ທູລເຫຕຸນັ້ນ ແດ່ ພຣະສາສດາ ພຣະອົງຄ໌ ຈຶ່ງຕຣັສ ພຣະຄາຖາ ດັ່ງໄດ້ຍົກຂຶ້ນມາໃນຂ້າງຕົ້ນນີ້.

---

## ໑໔

ນະ ຕັງ ທັຣຫັງ ພັນລະນະມາຫຸ ລີຣາ
ຍະທາຍະສັງ ທາຣຸຊະປັພພະຊັລຈະ
ສາຣັຕຕະຣັຕຕາ ມະຕິກຸຕາຫະເລສຸ
ປຸຕເຕສຸ ທາເຣສຸ ຈະ ຍາ ອະເປກຂາ ໑໓໔໕໑

ບັຕທິຕ ທ່ານຜູ້ຮູ້ກ່າວວ່າ ເຄື່ອງຈອງຈໍາ ທີ່ເຮັດດ້ວຍເຫລັກ, ດ້ວຍໄມ້, ດ້ວຍເສັ້ນປ່ານ ຫລືເສັ້ນໄໝ ກໍບໍ່ໝັ້ນຄົງໜຽວແໜ້ນ ຍ່ອມແກ້ ຫລື ຫລຸດໄດ້ງ່າຍ ແຕ່ວ່າ ຄວາມປາຖນາ ຢາກໄດ້ ເພັຊຣ໌ພອຍເຄື່ອງປະດັບ ລູກ ແລະ ກັຣຍາ ນັ້ນ ໝັ້ນໜຽວກວ່າເຄື່ອງຈອງຈໍາໃດ ທັງໝົດ.

## ໑໕

ເອຕັງ ທັຣຫັງ ພັນລນະມາຫຸ ລີຣາ
ໂອຫາຣິນັງ ສິຖິລະທຸປປະມຸລຈັງ

ເອຕັງປີ ເຈຕຸອາ ປະອິພພະຊຸນຕີ
ອະນະເປກຂີໂນ ການະສຸຂັງ ປະຫາຍະ ໆລ໌ຜົໆ

ບັຕທິຕ ທ່ານຜູ້ຮູ້ກ່າວວ່າ ເຄື່ອງຈອງຈຳຊນິດທີ່ໝັ້ນຄົງ ໜຽວແໜ້ນທີ່ສຸດນັ້ນ ມັກແກ່ລາກຄົນລົງໄປໃນທີ່ຕ່ຳ ເໝືອນກັບວ່າຜູກຫລົມໆ ແຕ່ແກ້ໄດ້ຍາກ. ທ່ານຜູ້ຮູ້ ທັງຫລາຍ ຈຶ່ງທຳລາຍ ເຄື່ອງຈອງຈຳນີ້ເສັຍ ແລະ ລະການສຸຂ ອອກບວຊໂດຍບໍ່ຫ່ວງໄຍນຳເລີຍ.

# ເຣື່ອງ ພັນລະນາກາຣ

ພຣະບໍຣົມສາສດາ ທຣົງຜາຣົພ ເຣື່ອງຄຸກ ໃນເມືອງສາວັຕຖີ ທີ່ມີການປິດລ້ອມ ເປັນຢ່າງດີ ທັງເຄື່ອງພັນລະນາກາຣ ຈອງຈຳນັກໂທສນັ້ນກໍໝັ້ນຄົງທີ່ສຸດ. ກິກຂຸ ຊາວຊົນບົທໄດ້ໄປເຫັນແລ້ວ ຈຶ່ງເຂົ້າເຝົ້າ ທູລຖາມພຣະສາສດາວ່າ ເຄື່ອງຜູກທີ່ໝັ້ນຄົງແຂງແຮງ ຍິ່ງກວ່ານີ້ ຍັງມີຢູ່ອີກບໍ?

ພຣະອົງຄ໌ ຕຣັສວ່າ ເຄື່ອງຜູກທີ່ວ່ານັ້ນ ບໍ່ສຳຄັນ ເທົ່າເຄື່ອງຜູກ ຄືຕັຓຫາ ຍາກທີ່ບຸຄຄົລຈະປົດອອກໄດ້ ບັດນັ້ນ ພຣະພຸທສອົງຄ໌ ຈຶ່ງໄດ້ນຳເອົາອດີຕນິທານ ມາເທສນາສູ່ຟັງວ່າ :

ຄັ້ງນຶ່ງ ພຣະໂພລິສັຕວ໌ ປາຖນາທີ່ຈະບວຊ ຈຶ່ງບອກກັບກັຣຍາ ໆ

ຂໍພັດໄປກ່ອນ ຄອດບຸຕຣແລ້ວຈຶ່ງຄ່ອຍບອຊ ຄັນວ່າຄອດບຸຕຣແລ້ວ ເພິ່ນຊ້ຳພັດຂໍພັດໄປວ່າ ພໍໃຫ້ບຸຕຣຢ່ານົມເສັຽກ່ອນ. ຄັນບຸຕຣຢ່ານົມ ນາງກໍຕັ້ງຄັຣກ໌ອີກ. ພຣະໂພທິສັຕວ໌ ເຫັນວ່າບໍ່ໄດ້ຄວາມ ຈຶ່ງໜີກັຣຍາອອກໄປບອຊເປັນຣືສີ ບຳເພັນພຽຣ ສຳເຣັຈຊານ ສະມາບັຕິ ຢູ່ສຸຂສຳຣາຍ ໃນປ່າຫິມະພານຕ໌.

ໃນທີ່ສຸດແຫ່ງອດີຕນິທານນີ້ ຈຶ່ງຕຣັສພຣະຄາຖາ ດັ່ງກ່າວມານັ້ນ.

---

## ໑໔

ເຍ ຣາຄະຣັຕຕານຸປະຕັນຕິ ໂສຕັງ
　　ສະຍັງ ກະຕັງ ມັກກະຜະໂກວະ ຊາລັງ
ເອຕັມປິ ເຊຕ໌ວາ ວະຊັນຕິ ທີຣາ
ອະນະເປກຂີໂນ ສັພພະທຸກຂັງ ປະຫາຍະ ໆ໓໔໗ໆ

ຜູ້ທີ່ຖືກຣາຄະຄອບງຳ ຫຽນຍ່ອມຕົກ ໄປຕາມກະແສແຫ່ງຕັນຫາເໝືອນແມງມຸມຕົກລົງໃສ່ໄຍທີ່ມັນຖັກໄວ້ເອງ. ຜູ້ສລາດ ທຳລາຍເຄື່ອງຈອງຈຳນີ້ ອອກບອຊໂດຍທີ່ບໍ່ ມີຄວາມຫ່ວງໄຍນຳແຕ່ຢ່າງໃດ.

# ເຣື່ອງ ນາງເຂມາ

ພຣະບໍຣົມສາສດາ ທຣົງຜາຣົພ ພຣະນາງເຂມາອັຄຄະມເຫສີ ຂອງ ພຣະເຈົ້າພິມພິສາຣ ພຣະນາງ ເປັນຜູ້ມີຣູປໂສມອັນສວຍງາມ ໄດ້ຊາບວ່າ ພຣະສາສດາ ທຣົງສແດງສໂທສ ຫຣື ທຣົງຕິຕຽນ ບຸຄຄົລ ທີ່ຫລົງໄຫລ ໃນເຣື່ອງ ຣູປ ພຣະນາງຈຶ່ງບໍ່ກ້າສເດັຈ ໄປຍັງພຣະເວຬຸວັນວິຫາຣ.

ໃນວັນນຶ່ງ, ພຣະນາງໄດ້ຟັງ ເພງຂັບທີ່ ພັຣຓາຄວາມງາມຂອງ ພຣະເວຬຸວັນວິຫາຣ ທີ່ພຣະເຈົ້າ ພິມພິສາຣ ທຣົງປະພັນທ໌ ໃຫ້ຄົນຂັບຣ້ອງ ພຣະນາງມີຄວາມຕິດໃຈ ພຣະນາງຈຶ່ງໄດ້ຕັດສິນໃຈເຂົ້າໄປໃນພຣະວິຫາຣ. ຂະນະນັ້ນ ພຣະພຸທຘອົງຄ໌ທຣົງຊາບວາຣະຈິຕ ຂອງພຣະນາງ ຈຶ່ງທຣົງເນຣະມິຕ ໃຫ້ມີສຕຣີທີ່ສວຍງາມ ນັ່ງຖວາຍງານພັດຢູ່ ແລະໃຫ້ສຕຣີນັ້ນແກ່ເຖົ້າ ລົງຍັງເຫລືອແຕ່ຊາກກະດູກ. ເມື່ອນາງເຂມາເຫັນ ກໍເກີດຘັມມສັງເວຊເຫັນ ຄວາມສິ້ນໄປແຫ່ງສັງຂາຣເມື່ອນາງພຣຈາຣະຓາໄປຕາມ ກໍດຳຣົງຢູ່ໃນ ໂສດາປັຕຕິຜົລ. ບັດນັ້ນພຣະອົງຄ໌ຈຶ່ງຕຣັສຌພຣະຄາຖາ ໃຫ້ພຣະນາງເຂມາສຳເຣັຈ ພຣະອຣຫັຕ ເປັນອັຄຄະສາວິກາ ດ້ວຍປະການດັ່ງນີ້

໑໕

ມຸຌຈະ ປຸເຣ ມຸຌຈະ ປັຈຉະໂຕ
ມັຊເຌ ມຸຌຈະ ຠະວັສສະຕິ
ສັພພັຕຖະ ວິມຸຕຕະມາໂນ
ນະປຸນະ ຊາຕິຊະຣັງ ອຸເປຫິສີ ໆ໓໔໘ໆ

ທ່ານ ຈົ່ງປ່ອຍ ຈົ່ງວາງ ຊຶ່ງອດີຕ ອນາຄົຕ ແລະ ປັຈຈຸບັນ ແລະ ວາງຕົນໃຫ້ຢູ່ເໜືອ ຄວາມມີ ຄວາມເປັນ. ເມື່ອໃຈຫລຸດພົ້ນຈາກທຸກຢ່າງ ທີ່ກ່າວມານີ້ໄດ້ແລ້ວ ພວກທ່ານ ກໍຈັກບໍ່ມາເກີດແລ້ວເກີດອີກ ຕໍ່ໄປ.

## ເຣື່ອງ ອຸຄຄະເສນະເສຍກີບຸຕຣ໌

ພຣະບໍຣົມສາສດາ ທຣົງຜາຣົພ ເສຍກີບຸຕຣ໌ຊື່ງວ່າ ອຄຸຄະເສນະ ໄດ້ລິດາຂອງພວກເຕັ້ນລໍາຫລິ້ນໄມ້ສ້າວສູງ (ແບບກາຍສິລປ໌) ເປັນກັຣຍາ ຍ້ອນບຸພພະກັມມ໌ ທີ່ທໍາໄວ້ແລ້ວ ໃນຊາຕິປາງກ່ອນ ຄັ້ງສາສນາ ຂອງ ພຣະ ກັສສປະທົສພົລ. ສອງຄົນກັຣຍານີ້ ໄດ້ຖວາຍທານແກ່ ພຣະຂີຕາສົພ ອົງຄ໌ນຶ່ງ ຈຶ່ງຕັ້ງຄວາມປາຖນາໄວ້ວ່າ ຂໍໃຫ້ເປັນຜູ້ມີສ່ວນໃນລັມມ໌ ທີ່ທ່ານ ໄດ້ເຫັນແລ້ວ. ເມື່ອພຣະເຖຣະເຈົ້າຊາບວ່າ ຄວາມປາຖນານັ້ນ ຈະສໍາເຣັຈ ກໍທໍາຄວາມຍິ້ມແຍ້ມໃຫ້ຜາກົຍ. ສອງຄົນຜົວເມັຍ ເຫັນດັ່ງນັ້ນ ຈຶ່ງເວົ້າຕໍ່ ກັນວ່າ ທ່ານເປັນບຸຕຣ໌ຂອງພວກຫລິ້ນລະຄອນ ເພິ່ນຈຶ່ງທໍາອາການເຊັ່ນນັ້ນ ຕົກມາໃນ ພຸທລກາລນີ້ ກັຣຍາຈຶ່ງເກີດເປັນລິດາ ຂອງ ນັກເຕັ້ນລໍາ. ຢູ່ມາ ໃນວັນນຶ່ງ ໄດ້ໄປສແດງການເຕັ້ນລໍາ ທີ່ ເມືອງຣາຊຄຣິຫ໌ ກໍາລັງໄຕ່ລວດ ຢູ່ເບື້ອງບົນນັ້ນ ພຣະສາສດາ ໄດ້ສເດັຈໄປ ເທສນາສັ່ງສອນ ຈຶ່ງໄດ້ຕຣັສ ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາເປັນອຸທາຫຣຕ໌ ໃນເບື້ອງຕົ້ນນີ້.

---

## ໑໖

ວິຕັກກະມະຖິຕັສສະ ຊັນຕຸໂນ
ຕິພພະຣາຄັສສະ ສຸການຸປັສສິໂນ
ກິຍໂຍ ຕັຓຫາ ປະວັທຓະຕິ
ເອສະ ໂຂ ທັຣທັງ ກະໂຣຕິ ພັນລະນັງ ຯ໓໔໙ຯ

ຜູ້ທີ່ເປັນທາສ ແຫ່ງວິຕັກະຈຣິຕ (ມີນິສັຍຄິດຫຍຸ້ງເຫຍິງ ກຸ້ມໃຈ) ມີຈິຕຕິດພັນ ກຳຫນັດຍິນດີຢູ່ໃນສິ່ງທີ່ສວຍງາມນັ້ນ ມີແຕ່ຈະເພີ້ມພູນຄວາມຢາກໃຫ້ຫລາຍຂຶ້ນ ເປັນເຄື່ອງຜູກພັນໃຫ້ແໜ້ນເຂົ້າຕື່ມ.

## ໑໗

ວິຕັກກູປະສະເມ ຈະ ໂຍ ຣະໂຕ
ອະສຸກັງ ກາວະຍະຕີ ສະທາ ສະໂຕ
ເອສະ ໂຂ ພຸຍັນຕິກາທະຕິ
ເອສັຈຈິນທະຕິ ມາຣະພັນລະນັງ ຯ໓໕໐ຯ

ຜູ້ທີ່ຕັ້ງໃຈ ຣະງັບຈິຕທີ່ຄິດແຕກສ່ານນັ້ນໄວ້ ດ້ວຍການຈເຣີນ ຊຶ່ງອະສຸກະກັມມການມີສະຕິຄຸມຢູ່ ເພື່ອກຳຈັດຕັຓຫາໃຫ້ສິ້ນໄປ ທຳລາຍເຄື່ອງຜູກຂອງມາຣ.

# ເຣື່ອງ ຈູຣະສຸຄຄທະບັຕຫິຕ

ພຣະບໍຣົມສາສດາ ທຣົງຜາຣົພ ພິກຂຸອົງຄ໌ນຶ່ງ ທີ່ກະສັນຢາກສິກຈົນຮ່າງກາຍຈ່ອຍຜອມ ດ້ວຍໂຣຄ ຮັກຜູ້ຍິງ. ພຣະພິກຂຸ ທັງຫລາຍຊາບຊຶ່ງຄວາມນັ້ນ ຈຶ່ງໄດ້ນຳເອົາເພິ່ນ ໄປເຝົ້າພຣະສາສດາ. ພຣະອົງຄ໌ ຈຶ່ງທຣົງສແດງອດີຕນິທານ ຄັ້ງເມື່ອ ພິກຂຸອົງຄ໌ນັ້ນ ເປັນຈູຣະສຸຄຄທະບັຕຫິຕ ໄປຮຽນສິລປະ ໃນສຳນັກອາຈາຣຍ໌ ທິສາປາໂມກຂ໌ ທີ່ເມືອງຕັກກະສິລາ ເມື່ອເວລາຈະກັບ ທ່ານອາຈາຣຍ໌ ມີຄວາມຍິນດີ ຍົກບຸຕຣີໃຫ້ຄົນນຶ່ງ. ຈູຣສຸຄຄະທະບັຕຫິຕ ໄດ້ພານາງມາສູ່ເມືອງ ພາຣາຕສີ ໃນຣະຫວ່າງທາງນັ້ນ ໄດ້ພົບກັບພວກໂຈຣ ໕໐ ຄົນທີ່ປາກທາງເຂົ້າດົງແຫ່ງນຶ່ງ ແລະ ໄດ້ຍິງພວກໂຈຣຕາຍ ໔໙ ຄົນ ດ້ວຍລູກສອ ໔໙ ລູກ ຜິດລູກນຶ່ງ. ພໍໝົດລູກສອ ຈຶ່ງກະໂດດເຂົ້າປ້ຳຫົວໜ້າໂຈຣໃຫ້ລົ້ມລົງແລ້ວ ຈຶ່ງບອກໃຫ້ນາງສົ່ງດາບມາໃຫ້ ສ່ວນນາງນຶກຮັກໂຈຣຢູ່ ຈຶ່ງແກ້ງສົ່ງດ້າມດາບໃຫ້ໂຈຣ ໆ ຈັບດ້າມດາບໄດ້ແລ້ວ ກໍຂ້າ ຈູຣະສຸຄຄທະບັຕຫິຕໃຫ້ຕາຍ. ບັດນັ້ນ ໂຈຣກໍພານາງໄປຍັງຝັ່ງແມ່ນ້ຳ ເກັບເອົາສິ່ງຂອງແລ້ວ ກໍຂ້າມນ້ຳໜີໄປ. ຕົກມາໃນຊາຕິນີ້ ນາງນັ້ນ ໄດ້ມາເກີດເປັນຍິງ ທີ່ ພິກຂຸໜຸ່ມຮັກໃນບັດນີ້ ນີ້ແລ.

ໃນທີ່ສຸດ ແຫ່ງອດີຕນິທານນີ້ ພຣະພຸທສອົງຄ໌ ຈຶ່ງທຣົງສັ່ງສອນໃຫ້ພິກຂຸໜຸ່ມ ຕັດຣາຄະ ຕັຕຫາ ທີ່ເກີດຂຶ້ນເພາະອາສັຍຍິງ ຜູ້ນັ້ນແລ້ວຈຶ່ງໄດ້ ຕຣັສພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາໃນເບື້ອງຕົ້ນນີ້.

---

## ໑໗

ນີຍຽັງຄະໂຕ ອະສັນຕາສີ
ວີຕະຕັຓໂຫ ອະນັງຄະໂຓ
ອັຈຈີນຫິ ກະອະສັລລານີ
ອັນຕິໂມຍັງ ສະມຸສສະໂຍ ໆ໓໕໑ໆ

ພຣະອຣຫັນຕ໌ ຜູ້ບັຣລຸເຖິງຈຸດໝາຍປາຍທາງແລ້ວ, ໝົດຊື່ງຄວາມສະດຸ້ງຕົກໃຈກົວ ໝົດກິເລສ ຕັຓຫາ, ຫັກລູກສອ ຄືຕົວກິເລສ ປະຈໍາກົພແລ້ວ, ຣ່າງກາຍນີ້ ເປັນຣ່າງກ່າຍສຸດທ້າຍຂອງເພິ່ນແລ້ວ.

## ໑໘

ວີຕະຕັຓໂຫ ອະນາທາໂນ
ນິຣຸຕຕິປະທະໂກວິໂທ(໑)
ອັກຂະຣານັງ ສັນນິປາຕັງ
ຊັຍລາ ປຸພພາປະຣານີ ຈະ
ສະເວ ອັນຕິມະສາຣີໂຣ
ມະຫາປັນໂຍ ມະຫາປຸຣິໂສຕິ ວຸຈຈະຕິ ໆ໓໕໔ໆ

ພຣະອຣຫັນຕ໌ ເພິ່ນເປັນຜູ້ໝົດຕັຕຫາ ບໍ່ຍຶດໝັ້ນ ຖືໝັ້ນ ເປັນຜູ້ມີຄວາມສລາດໃນພາษາ ຮູ້ທັງອັຕຖ໌ແລະພຍັນຊນະ(໑) ລຳດັບ ໜ້າ ຫລັງ ສະຣີຣະຂອງເພິ່ນນີ້ ເປັນສຣີຣະສຸດທ້າຍ ຮຽກວ່າ ມຫາປຣາຊญ໌ ມຫາບຸຣຸษ

## ເຣື່ອງ ມາຣ

ພຣະບໍຣົມສາສດາ ທຣົງປາຣົພ ມາຣ. ໃນຣາຕຣີນຶ່ງ ມາຣນັ້ນໄດ້ເນຣະມິຕ ກາຍເປັນຊ້າງ ມາຄຸກຄາມ ພຣະຣາຫຸລ ອົງຄ໌ອຣຫັນຕ໌ ທີ່ຈຳວັດຢູ່ທີ່ໜ້າມຸຂ ພຣະຄັນທະກຸຕິ ຂອງພຣະສາສດາ. ພຣະອົງຄ໌ທຣົງຊາບ ຈຶ່ງຕຣັສວ່າ ດູຣາ ມາຣ ອັນວ່າໜ້າຂອງເຈົ້ານັ້ນ ບໍ່ອາຈທີ່ຈະທຳໃຫ້ລູກຂອງຂ້າຢ້ານກົວໄດ້ແລ້ວ ເພາະວ່າ ລູກຂອງຂ້າ ເປັນຄົນກ້າຫານ ດັ່ງນີ້ແລ້ວ ຈຶ່ງໄດ້ຕຣັສ ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາໃນຂ້າງຕົ້ນນີ້.

(໑) ພາษາສາສຕຣ໌, ອັກษຣສາສຕຣ໌ ໃນທີ່ນີ້ ໝາຍເຖິງຄວາມຮູ້ໃນດ້ານ ພາษາ ແລະ ອັກษຣ ໔ ຢ່າງຄື: ຄວາມໝາຍຂອງພາษາ ໑, ພຣະທັມມ໌ ໑, ຄຳສັພທ໌ ໑, ປະຕິພານ ໂວຫາຣ ໑.

---

## ໔໐

ສັພພາພິພູ ສັພພະວິທູຫະມັສມິ
ສັພເພສຸ ທັມເມສຸ ອະນູປະລິຕໂຕ

ສັພພັລຊະໂຫ ຕັณຫັກຂະໂຍ ວິມຸຕໂຕ
ສະຍັງ ອະກິລລາຍະ ກະມຸທທິເສຍຍັງໆລ໕ລໆ

ເຮົານີ້ເປັນຜູ້ແພ້ ທຸກຢ່າງ, ຜູ້ຕຣັສຣູ້ ທຸກຢ່າງ, ບໍ່ໄດ້ຕິດຂ້ອງຢູ່ໃນອັນໃດ ທັງໝົດ, ເຮົາຕັດຂາດອອກຈາກ ທຸກຢ່າງ, ເຮົາເປັນອິສຣະ ເພາະເຮົາໝົດສິ້ນ ຕັณຫາ, ເຮົາຕຣັສຣູ້ດ້ວຍຕົວເຮົາເອງ ແລ້ວເຮົາຈະໄປອ້າງເອົາຜູ້ໃດວ່າ ເປັນຄຣູ ຂອງເຮົາ.

# ເຣື່ອງ ອຸປະກາຊີວົກ

ພຣະບໍຣົມສາສດາ ທຣົງປາຣົພ ອຸປະກາຊີວົກ. ໃນຄາວທີ່ ພຣະພຸທລະອົງຄ໌ ທຣົງຕຣັສຣູ້ ພຣະອນຸຕຕຣະສັມມາສັມໂພລິລາณ ແລ້ວກໍ່ສເດັຈຈາກໂພລິມົນທົລ ໄປຍັງເມືອງ ພາຣາณະສີ ເພື່ອສແດງລັມມຈັກຣ໌ ແກ່ພຣະປັณຈວັຄຄີຍ໌ ณະ ປ່າອິສິປົຕທາຍວັນ ແລະ ໃນຣະຫວ່າງທາງນັ້ນໄດ້ພົບກັບ ອຸປກາຊີວົກ. ເຂົາເຫັນພຣະອົງຄ໌ ມີພຣະຈວີວັณณ໌ອັນບໍຣິສຸທລິຜ່ອງໃສ ຄິດອັສຈັຣຍ໌ໃຈ ຈຶ່ງທັກທາຍຖາມວ່າ ດູຣາ ທ່ານຜູ້ມີອາຍຸ ທ່ານບວຊສະເພາະໃຜ (ໃນສຳນັກຂອງໃຜ) ໃຜເປັນສາສດາຂອງທ່ານ ໆ ພໍໃຈໃນພຣະລັມມ໌ ຄຳສອນຂອງໃຜ ດັ່ງນີ້.

ເມື່ອພຣະອົງຄ໌ຈະທຣົງຕອບນັ້ນ ຈຶ່ງຕຣັສພຣະຄາຖາດັ່ງທີ່ກ່າວມານີ້.

## ໘໑

ສັພພະ ທານັງ ທັມມະທານັງ ຊິນາຕິ
ສັພພະ ຣະສັງ ທັມມະຣະໂສ ຊິນາຕິ
ສັພພະ ຣະຕິງ ທັມມະຣະຕີ ຊິນາຕິ
ຕັຕຫັກຂະໂຍ ສັພພະທຸກຂັງ ຊິນາຕິ ໆ໓໕໔ໆ

ການໃຫ້ທັມມ໌ເປັນທານ ເລີສກວ່າ ການໃຫ້ທັງປວງ, ຣົສແຫ່ງພຣະທັມມ໌ ເລີສກວ່າ ຣົສທັງປວງ, ຄວາມຍິນດີໃນທັມມ໌ ເລີສກວ່າ ຄວາມຍິນດີ ໃນສິ່ງທັງປວງ. ຄວາມສິ້ນໄປແຫ່ງຕັຕຫາ ຍ່ອມຊນະທຸກຂ໌ ທັງປວງ (ເປັນສຸຂ ຢ່າງຍິ່ງ)

## ເຣື່ອງ ສັກກະເທວຣາຊ

ພຣະບໍຣົມສາສດາ ທຣົງຜາຣົພ ທ້າວສັກກະເທວຣາຊ ຜູ້ເປັນຈອມແດ່ງ ເທພຍດາ ທັງຫລາຍ ໄດ້ເຂົ້າເຝົ້າ ພຣະຍອດແກ້ວ ສັພພັຍຍູ ທູລຖາມບັຍຫາ ໔ ຂໍ້ ດັ່ງນີ້ :

໑. ການໃຫ້ອັນໃດ ປະເສີກຍິ່ງ ?

໒. ຣົສອັນໃດ ປະເສີກຍິ່ງ ?

໓. ຄວາມຍິນດີໃນອັນໃດ ປະເສີກຍິ່ງ ?

໔. ຄວາມສິ້ນໄປແຫ່ງຕັຓຫາ ປະເສີກ ຢ່າງໃດ ?

ເມື່ອ ພຣະຍອດແກ້ວສັພພັຓຍູ ຈະຫຣົງຕອບບັຓຫາ ເຫລົ່ານັ້ນ ພຣະອົງຄ໌ ຈິ່ງໄດ້ຕຣັສ ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາ ໃນເບື້ອງຕົ້ນນິທານ ນີ້ນັ້ນແລ.

---

## ໒໔

ຫະນັນຕິ ໂກຄາ ທຸມເມທັງ
ໂນ ຈະ ປາຣະຄະເວສິໂນ
ໂກຄະ ຕັຓຫາຍະ ທຸມເມໂທ
ຫັນຕິ ອັຓເຓວະ ອັຕຕະນັງ ໆໞ໕໕ໆ

ໂກຄທຣັພຍ໌ ຍ່ອມທຳລາຍຄົນໂງ່ ແຕ່ວ່າ ທຳລາຍຄົນທີ່ຝັກໄຝ່ຫາ ພຣະນິພພານບໍ່ໄດ້ ເພາະວ່າ ຍ້ອນຄວາມໂລພໃນໂກຄທຣັພຍ໌ ຄົນໂງ່ຍ່ອມ ທຳລາຍຄົນອື່ນ (ແລະ ຜົລທີ່ສຸດ ກໍທຳລາຍຕົນເອງ).

ທຳລາຍຄົນອັ້ນ (ແລະ ຜົລທີ່ສຸດ ກໍທຳລາຍຕົນເອງ).

# ເຣື່ອງ ອປຸຕຕກະເສຍກີ

ພຣະບໍຣົມສສດາ ທຣົງຜາຣົພ ເສຍກີ ທີ່ບໍ່ມີບຸຕຣ໌ ເປັນຜູ້ຂີ້ຖີ່ໜຽວແໜ້ນທີ່ສຸດ ເຖິງຈະມີສົມບັດ ກໍບໍ່ເປັນປະໂຍຊນ໌ໃຫ້ແກ່ຕົນ. ເມື່ອທ່ານກາລະກິຣິຍາແລ້ວ ສົມບັດ ກໍຕົກເປັນຂອງຫລວງໝົດ.. ພຣະເຈົ້າ ປະເສນທິໂກ-ສົລ ສເດັຈເຂົ້າໄປເຝົ້າ ພຣະສາສດາ ທູລເຫລົ່າເຣື່ອງນັ້ນ ທັງໝົດຖວາຍພຣະສາສດາ ໃຫ້ທຣົງຊາບ. ພຣະອົງຄ໌ ຈຶ່ງຕຣັສບຸພພກັມມ໌ ຂອງ ເສຍກີນັ້ນ ໂດຍສັງເຂປວ່າ ກາຣທີ່ໄດ້ມາເປັນເສຍກີ ກໍເພາະໃຫ້ຄົນຖວາຍບິຕທະບາຕ ແກ່ພຣະປັຈເຈກະໂພລິ ຊື່ວ່າ ຕະຄຣະສິຂີ. ກາຣທີ່ມີສົມບັດແລ້ວບໍ່ເປັນປະໂຍຊນໃຫ້ແກ່ຕົນນັ້ນ ກໍເພາະວ່າ ໄດ້ແລເຫັນບິຕທບາຕນັ້ນ ປະ-ຕີຕ (ເປັນອາຫາຣຊັ້ນດີ) ເກີດຄວາມເສັຍດາຍວ່າ ບໍ່ຄວນຖວາຍ ໃຫ້ທາສກັມມກຣ ກິນດີກວ່າ.

ເມື່ອເສຍກີນັ້ນ ທຳກາລກິຣິຍາຕາຍໄປແລ້ວ ກໍໄດ້ໄປໄໝ້ຢູ່ໃນນະຣົກຊື່ວ່າມະຫາໂຣຣຸວະ ເພາະຂ້າຫລານຕ້ອງກາຣສົມບັຕິ. ໃນທີ່ສຸດແຫ່ງພຣະທັມມເທສນານັ້ນ ພຣະພຸທລອົງຄ໌ ຈຶ່ງຕຣັສພຣະຄາຖາດັ່ງຍົກຂຶ້ນມານີ້.

---

## ໔໙

ຕິຕະໂທສານິ ເຂຕຕານິ
ຣາຄະໂທສາ ອະຍັງ ປະຊາ

ຕັສມາ ຫິ ວິຕະຣາເຄສຸ
ທິນນັງ ໂຫຕິ ມະຫັປຜະລັງ ໆ໓໕໖ໆ

ອັນວ່າ ຫຍ້າ ຍ່ອມທຳໃຫ້ທີ່ໄຮ່ ທີ່ນາ ເສັຍຫາຍ, ສ່ວນຣາຄະນັ້ນທຳໃຫ້ຄົນ ເສັຍຫາຍ. ເພາະສະນັ້ນ ທານທີ່ຖວາຍ ແກ່ຜູ້ປາສຈາກຣາຄະຈຶ່ງມີຜົລມາກ ມຫາສາລ.

## ໒໔

ຕິຕະໂທສານິ ເຂຕຕານິ
ໂທສະໂທສາ ອະຍັງ ປະຊາ
ຕັສມາ ຫິ ວິຕະໂທເສສຸ
ທິນນັງ ໂຫຕິ ມະຫັປຜະລັງ ໆ໓໕໗ໆ

ອັນວ່າ ຫຍ້າ ຍ່ອມທຳໃຫ້ ທີ່ໄຮ່ທີ່ນາ ເສັຍຫາຍ, ສ່ວນວ່າຄວາມໂກທຮ້າຍນັ້ນ ທຳໃຫ້ຄົນເສັຍຫາຍ, ເພາະສະນັ້ນ,ທານທີ່ຖວາຍ ແກ່ທ່ານຜູ້ປາສະ ຈາກຄວາມໂກທຮ້າຍ ຈຶ່ງມີຜົລມາກ ມຫາສາລ.

## ໒໕

ຕິຕະໂທສານິ ເຂຕຕານິ
ໂມຫະໂທສາ ອະຍັງ ປະຊາ

ຕັສມາ ຫິ ວີຕະໂມເຫສຸ
ທິນນັງ ໂຫຕິ ມະຫັປຜະລັງ ໆ໓໕໘ໆ

ອັນວ່າ ຫຍ້າ ຍ່ອມທຳໃຫ້ ທີ່ໄຮ່ທີ່ນາ ເສັຍຫາຍ, ສ່ວນໂມຫະນັ້ນ ທຳໃຫ້ຄົນເສັຍຫາຍ, ເພາະສະນັ້ນ, ທານທີ່ຖວາຍ ແກ່ຜູ້ທີ່ ປາສຈາກໂມຫະຍ່ອມມີ ຜົລມາກ ມຫາສາລ.

໔໖

ຕິຕາະໂທສານິ ເຂຕຕານິ
ອິຈຉາໂທສາ ອະຍັງ ປະຊາ
ຕັສມາ ຫິ ວິຄະຕິຈເຉສຸ
ທິນນັງ ໂຫຕິ ມະຫັປຜະລັງ ໆ໓໕໙ໆ

ອັນວ່າ ຫຍ້າ ຍ່ອມທຳໃຫ້ທີ່ໄຮ່ ທີ່ນາ ເສັຍຫາຍ ສ່ວນຄວາມຢາກຍ່ອມທຳໃຫ້ຄົນເສັຍຫາຍ. ທານທີ່ຖວາຍ ແກ່ຜູ້ທີ່ປາສຈາກຄວາມຢາກນັ້ນຍ່ອມມີຜົລມາກ ມຫາສາລແລ.

## ເຣື່ອງ ອັງກຸຣເທວບຸຕຣ໌

ພຣະບໍຣົມສາສດາ ທຣົງພຣະຜາຣົພ ອັງກຸຣະເທວບຸຕຣ໌. ໃນຄາວທີ່

ພຣະອິງຄ໌ ຂຶ້ນໄປໂຜດ ພຣະພຸທຄມາຣດາ ທີ່ ດາວດຶງສາເທວໂລກ ນັ້ນ ປະທັບ ຕາະ ບັຕທຸກັມພົລສິລາອາສນ໌ ພາຍໃຕ້ຕົ້ນໄມ້ປາຣິກັຈຕະກະຊາຕ ຄັ້ງນັ້ນ, ເທພບຸຕຣ໌ ໔ ອົງຄ໌ ເຝົ້າຢູ່ໃນເທວສະມາຄົມນັ້ນ ຄື ອັງກຸຣະເທວະ ບຸຕຣ໌ ແລະເຄີຍໄດ້ໃຫ້ທານ ແກ່ ມຫາຊົນເຖິງໝື່ນປີ. ອິນທກະເທວບຸຕຣ໌ ເຄີຍໄດ້ຖວາຍ ກິກຂາຫາຣຈອງນຶ່ງແກ່ ພຣະອນຸຣຸທຣະ ແຕ່ເປັນຜູ້ມີສັກດາ ມາກກວ່າ ອັງກຸຣະເທວບຸຕຣ໌ ຍ້ອນເຫຕຸວ່າ ປຜິຄາຫົກສົມບັຕິຍິ່ງກວ່າ.

ເມື່ອພຣະອົງຄ໌ ຈະທຣົງສແດງ ທັກຂິໄຕຍບຸຄຄົລ ຈຶ່ງຕຣັສ ພຣະ ຄາຖາ ທັງຫລາຍ ດັ່ງທີ່ໄດ້ຍົກຂຶ້ນມາ ໃນຂ້າງເທິງນີ້.

---

# ຈົບ ຕັຕຫາວັຄຄ໌ ທີ່ ໑໔

# ເຣີ່ມ ກິກຂຸວັຄຄ໌ ທີ່ ໔໕
ໃນໜ້າຕໍ່ໄປ

# ກິກຂຸວັຄຄ໌ ທີ່ ໔໕

## ໝວດ ວ່າດ້ວຍ ກິກຂຸ

໑

ຈັກຂຸນາ ສັງວະໂຮ ສາຊຸ
      ສາຊຸ ໂສເຕນະ ສັງວະໂຮ
ພາເນນະ ສັງວະໂຮ ສາຊຸ
      ສາຊຸ ຊິວຫາຍະ ສັງວະໂຮ ໆລໆ

ການສຳຮວມຣະວັງ ທາງຕາ ເປັນການດີ,
ການສຳຮວມຣະວັງ ທາງຫູ ເປັນການດີ,
ການສຳຮວມຣະວັງ ທາງດັງ ເປັນການດີ
ການສຳຮວມຣະວັງ ທາງລີ້ນ ເປັນການດີ

໔

ກາເຍນະ ສັງວະໂຮ ສາຊຸ
      ສາຊຸ ວາຈາຍະ ສັງວະໂຮ
ມະນະສາ ສັງວະໂຮ ສາຊຸ

ສາຣຸ ສັພພັຕຖະ ສັງວະໂຣ
ສັພພັຕຖະ ສັງວຸໂຕ ກິກຂຸ
ສັພພະທຸກຂາ ປະມຸຈຈະຕີ ໆນຜ໑ໆ
ການສຳຣວມ ທາງກາຍ ເປັນການດີ,
ການສຳຣວມ ທາງວາຈາ ເປັນການດີ,
ການສຳຣວມ ທາງໃຈ ເປັນການດີ,
ກິກຂຸ ຜູ້ທີ່ສຳຣວມ ທຸກທາງ ຍ່ອມພົ້ນຈາກທຸກທັງປວງແລ.

## ເຣື່ອງ ປັລຈະກິກຂຸ

ພຣະບໍຣົມສາສດາ ທຣົງຜາຣົພ ກິກຂຸ ๕ ອົງຄ໌ ອົງຄ໌ນຶ່ງສຳຣວມທາງຈັກຂຸທວາຣ, ອົງຄ໌ນຶ່ງສຳຣວມທາງ ໂສຕະທວາຣ, ອົງຄ໌ນຶ່ງ ສຳຣວມທາງພານະທວາຣ, ອົງຄ໌ນຶ່ງ ສຳວມທາງກາຍທວາຣ, ອົງຄ໌ໃດສຳຣວມທາງໃດກໍເຂົ້າໃຈວ່າ ທາງນັ້ນເປັນຂອງຍາກກວ່າທາງອື່ນ ຈຶ່ງເກີດຂັດແຍ່ງກັນແລ້ວພ້ອມກັນໄປເຝົ້າພຣະສາສດາ ທູລຂໍພຣະວິນິຈສັຍ. ພຣະອົງຄ໌ຈຶ່ງທຣົງສແດງວ່າ ການສຳຣວມທາງຣະວັງທາງໃດກໍດີ ແລະ ສຳຣວມໝົດທຸກທາງກໍ ຍິ່ງດີ ແລະເປັນການສຳຣວມທີ່ຖືກຕ້ອງ ທີ່ສຸດ.

ເມື່ອພຣະອົງຄ໌ດັ່ງນີ້ແລ້ວ ຈຶ່ງຕຣັສພຣະຄາຖາ ດັ່ງທີ່ກ່າວມານັ້ນແລ.

---

ສ

ຫັຕຖະສັນຍະໂຕ ປາທະສັນຍະໂຕ
ວາຈາສັນຍະໂຕ ສັນຍະຕັຕຕະໂມ
ອັຊຊັຕຕະຣະໂຕ ສະມາຫິໂຕ
ເອໂກ ສັນຕຸສິໂຕ ຕະມາຫຸ ພິກຂຸ ໆສລ໔ໆ

ຜູ້ທີ່ສຳຣວມມື ສຳຣວມເທົ້າ ສຳຣວມວາຈາ ສຳຣວມກາຍ ມີຄວາມຍິນດີໃນການບຳເພັນ ວິປັສສະນາ ມີໃຈເປັນສະມາທິ ສັນໂດສຍິນດີຢູ່ດຽວດາຍນັ້ນ ໄດ້ຊື່ວ່າ ພິກຂຸ.

## ເຣື່ອງ ພຣະຫັງສະຂາຕກະພິກຂຸ

ພຣະບໍຣົມສາສດາ ທຣົງຜາຣົພ ພິກຂຸ ອົງຄ໌ນຶ່ງ ເປັນຜູ້ຊຳນານໃນການດີດກ້ອນ ຫີນແຮ່. ໃນວັນນຶ່ງ ພິກຂຸອົງຄ໌ດັ່ງກ່າວນີ້ ນັ່ງສົນທະນາຢູ່ກັບເພື່ອນພິກຂຸດ້ວຍກັນ ເຫັນຫົງສ໌ຕົວນຶ່ງບິນມາ ຈຶ່ງກ່າວວ່າ ເຮົາຈະດີດກ້ອນຫີນແຮ່ນີ້ໃສ່ແກ່ນຕາຫົງສ໌ ຂ້າງນີ້ໃຫ້ທະລຸໄປຍັງຂ້າງນັ້ນ ເພື່ອນພິກຂຸ ບໍ່ເຊື່ອ. ເມື່ອເວົ້າແລ້ວ ເພິ່ນຈຶ່ງດີດກ້ອນຫີນແຮ່ນັ້ນຂຶ້ນໄປ ຖືກແກ່ນຕາຫົງສ໌ ຫົງສ໌ຕົວນັ້ນກໍຕົກລົງມາ. ພິກຂຸ ທັງຫລາຍເຫັນເຊັ່ນນັ້ນ ຈຶ່ງນຳຄວາມນັ້ນຂຶ້ນຂາບທູລ ແດ່ ພຣະສາສດາ ພຣະອົງຄ໌ກໍທຣົງຕິຕຽນ ແລ້ວຈຶ່ງຕຣັສຊຶ່ງພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມານັ້ນ.

໔

ໂຍ ມຸຂະສັນຍະໂຕ ພິກຂຸ
ມັນຕະພາຕີ ອະນຸທທະໂຕ
ອັຕຖັງ ທັມມັນຈະ ທີເປຕິ
ມະທຸຣັນຕັສສະ ພາສິຕັງ ໆ໓໖໓ໆ

ພິກຂຸ ຜູ້ທີ່ສຳຣວມປາກ ເວົ້າຈາດ້ວຍປັນຍາ ບໍ່ມີມານະ ຖືຕົວ ອະທິບາຍ ຊີ້ແຈງຕໍາຣາ (ພຣະທັມກີຣ໌) ແລະໃຈຄວາມຖືກຕ້ອງ ຖ້ອຍຄໍາຂອງພິກຂຸນັ້ນ ຍ່ອມມ່ອນ ແລະ ອ່ອນຫວານ.

## ເຣື່ອງ ໂກກາລິກະ ພິກຂຸ

ພຣະບໍຣົມສາສດາ ທຣົງຜາຣົພ ໂກກາລິກະພິກຂຸ ສາວົກຂອງພຣະເທວະທັຕ ຖືກແຜ່ນດິນສູບ ໄປເກີດໃນປະທຸມະນຣົກ ດ້ວຍກັມມ໌ທີ່ປ້ອຍດ່າພຣະອັຄຄະສາວົກ ທັງສອງພຣະອົງຄ໌. ໃນວັນນຶ່ງ, ພຣະພິກຂຸ ທັງຫລາຍນັ່ງປະຊຸມສົນທະນາກັນວ່າ ໂກກາລິກະພິກຂຸ ຕ້ອງຖືກແຜ່ນດິນສູບເພາະປາກຂອງຕົນ.

ພຣະສາສດາ ໄດ້ສເດັຈໄປຍັງທີ່ປະຊຸມນັ້ນ ທຣົງເທສນາ ກັຈຈປະຊາດົກ ທີ່ວ່າດ້ວຍເຣື່ອງເຕົ່າຕົວນຶ່ງ. ເຕົ່າຕົວນັ້ນ ເປັນສະຫາຍກັບຫົງສ໌ ໔

ຕົວ. ເຕົ່າຢາກຈະໄປຍັງສະແຫ່ງນຶ່ງ ທີ່ ພູເຂົາຈິຕຕະກູຜ ຈຶ່ງຂໍໃຫ້ຫົງສ໌ຜູ້ເປັນສະຫາຍ ຄາບທ່ອນໄມ້ຕົວລະຂ້າງ ສ່ວນຕົນຈະຄາບທາງກາງ ບິນໄປທາງອາກາສ. ເດັກນ້ອຍ ທັງຫລາຍ ເຫັນຫົງສ໌ຈຶ່ງຮ້ອງກັນມາເບິ່ງ ແລະເວົ້າວ່າ ຫົງສ໌ຫາມເຕົ່າ ເຕົ່າໄດ້ຍິນຄິດຢາກຮ້ອງບອກວ່າ ເຕົ່າຕ່າງຫາກ ທີ່ຫາບຫົງສ໌ ພໍອ້າປາກອອກ ກໍຫລຸດອອກຈາກໄມ້ຄານຫາມ ຕົກລົງມາຕາຍ.

ໃນທີ່ສຸດ ອດີຕນິທານ ພຣະອົງຄ໌ຈຶ່ງປະທານພຣະໂອວາທ ສອນພິກຂຸ ທັງຫລາຍ ແລ້ວຈຶ່ງຕຣັສພຣະຄາຖາ ດັ່ງຍົກຂຶ້ນມານັ້ນ.

---

໕

ລັມມາຣາໂມ ລັມມະຣະໂຕ
ລັມມັງ ອະນຸວິຈິນຕະຍັງ
ລັມມັງ ອະນຸສສະຣັງ ພິກຂຸ
ສັທລັມມາ ນະ ປະຣິຫາຍະຕິ ໆ໓໓໔ໆ

ພິກຂຸ ຜູ້ທີ່ຢູ່ໃນລັມມ໌ ມີຄວາມຍິນດີໃນລັມມ໌, ພິນິຈພິຈາຣະຕາຊຶ່ງພຣະລັມມ໌ ແລະ ຣະລຶກເຖິງພຣະລັມມ໌ ຢູ່ສເມີບໍ່ໄດ້ຂາດ ຍ່ອມບໍ່ເສື່ອມຈາກພຣະສັທລັມມ໌.

# ເຣື່ອງ ພຣະທັມມາຣາມະເຖຣະ

ພຣະບໍຣົມສາສດາ ທຣົງປາຣົພ ພຣະທັມມາຣາມະເຖຣະ. ຄາວເມື່ອພຣະພຸທທອົງຄ໌ ທຣົງປົງພຣະຊົນມາຍຸສັງຂາຣ ຈະສເດັຈດັບຂັນສ໌ປະຣິນິພ-ພານ ໃນວັນ ວິສາຂະປຸຕຕະມີ (ເດືອນຫົກເພັງ) ນັ້ນ. ພຣະພິກຂຸ ທັງຫລາຍ ພາກັນສລົດໃຈ ບໍ່ໄດ້ລະໝີຈາກທີ່ເຝົ້າ ປະຊຸມປຶກສາຫາຣືກັນເປັນຈຸເປັນພວກໆ. ຝ່າຍພຣະທັມມາຣາມະເຖຣະ ມາດຳຣິວ່າ ເຮົາຈະບຳເພັຍພຽຣໃຫ້ສຳເຣັຈພຣະອຣຫັຕ ໃນຣະຫວ່າງທີ່ພຣະສາສດາ ຍັງດຳຣົງພຣະຊົນມ໌ຢູ່ນີ້.

ຄັນເພິ່ນຄິດດັ່ງນີ້ແລ້ວ ເພິ່ນກໍຫລີກໄປບຳເພັຍສມຕະທັມມ໌ຢູ່ແຕ່ຜູ້ດຽວ. ພຣະພິກຂຸ ທັງຫລາຍ ກ່າວຫາວ່າ ເພິ່ນບໍ່ມີຄວາມຈົງຣັກພັກດີໃນ ພຣະສາສດາ ແລ້ວຈຶ່ງນຳເອົາຄວາມນັ້ນ ຂຶ້ນຂາບທູລ ແດ່ພຣະອົງຄ໌ໃຫ້ທຣົງຊາບ ພຣະອົງຄ໌ ຈຶ່ງປະທານສາທຸການ ຮັບສັ່ງໃຫ້ ພິກຂຸ ທັງຫລາຍຖືເອົາເປັນຕົວຢ່າງ. ແລະ ທຣົງສັຣເສີນທັມມານຸທັມມະປະຕິບັຕິ ການປະຕິບັຕິທັມມ໌ສົມຄວນແກ່ທັມມ໌

ບັດນັ້ນ ພຣະພຸທທະອົງຄ໌ ຈຶ່ງໄດ້ສແດງ ພຣະທັມມິກະຖາ ສົມຄວນແກ່ເຫຕຸການຕ໌ ດັ່ງກ່າວນັ້ນ ແລ້ວຈຶ່ງໄດ້ຕຣັສ ຊຶ່ງພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາໃນຂ້າງຕົ້ນນີ້ ໃຫ້ພຣະເຖຣະເຈົ້າ ສຳເຣັຈພຣະອຣຫັຕ.

---

໑

ສະລາກັງ ນາຕິມັญเญยยะ
นาญเญสัງ ปิຫະยັງ จะเธ
อັญเญสັງ ปิຫະยັງ ภิกຂຸ
ສະมາธิງ นาธิถัจฉะติ ໓໖໑໕໓

ບໍ່ຄວນດູໝິ່ນ ລາກຂອງຕົນ ແລະ ບໍ່ຄວນອິສສາລາພ ຂອງຜູ້ອື່ນ ເມື່ອກິກຂຸຍັງມີຈິຕໃຈ ອິສສາລາກຂອງຜູ້ອື່ນຢູ່ແລ້ວ ໃຈຍ່ອມບໍ່ເປັາະມາລິ

໗

ອັປປະລາໂກຕິ ເຈ ກິກຂຸ
ສະລາກັງ ນາຕິມັญญະຕິ
ຕັງ ເວ ເທວາ ປະສັງສັນຕິ
ສຸທລາຊີວິ ອະຕັນທິຕັງ ໓໖໑໑໓

ກິກຂຸນັ້ນ ເຖິງແມ່ນວ່າ ຈະມີລາກໜ້ອຍ ກໍ່ບໍ່ຖືຖູກລາກຂອງຕົນ ຄື ມີຄວາມຍິນດີໃນລາກທີ່ຕົນມີນັ້ນ, ມີອາຊີພບໍ່ຣິສຸທລິ ບໍ່ຂີ້ຄ້ານ ທຽນຍ່ອມ ໄດ້ຮັບຄວາມຊົມເຊີຍຈາກ ທວຍເທພຍ໌.

# ເຣື່ອງ ພິກຂຸບໍຣິວາຣ ຂອງ ພຣະເທວະທັຕ

ພຣະບໍຣົມສາສາດາ ທຣົງພຣະປາຣົພ ພິກຂຸ ອົງຄ໌ນຶ່ງ ທີ່ໄປຄົບຄ້າສະມາຄົມ ກັບ ພິກຂຸທີ່ເປັນຝ່າຍຂອງ ພຣະເທວະທັຕ. ວັນນຶ່ງ ພິກຂຸທີ່ເປັນຝ່າຍຂອງ ພຣະເທວະທັຕນັ້ນ ໄດ້ເຫັນເພິ່ນທ່ຽວບິຕທບາຕ ຈຶ່ງຊັກຊວນໃຫ້ໄປຢູ່ນຳ ໂດຍໃຫ້ເຫຕຸຜົລວ່າ ລາທສັກກາຣະຂອງເຮົານັ້ນ ມີຫລາຍ. ພິກຂຸອົງຄ໌ນັ້ນ ກໍຕົກລົງໄປຢູ່ນຳ. ເພິ່ນຢູ່ໄດ້ ສອງສາມວັນ ກໍກັບມາ.

ພຣະພິກຂຸ ທັງຫລາຍຊາບຄວາມນັ້ນ ຈຶ່ງໄດ້ນຳຄວາມນັ້ນ ຂຶ້ນຂາບ ທູລ ແດ່ພຣະສາສາດາ ໃຫ້ທຣົງຊາບ. ພຣະອົງຄ໌ຈຶ່ງຮັບສັ່ງ ໃຫ້ຫາຕົວມາ ຊໍາຣະສະສາງ ເພິ່ນກໍທູລຮັບວ່າ ເປັນຄວາມຈິງ. ພຣະອົງຄ໌ ຈຶ່ງປະທານ ພຣະທັມມິກະຖາ ສັ່ງສອນ ແລ້ວຕຣັສ ພຣະຄາຖາດັ່ງທີ່ຍົກຂຶ້ນມານັ້ນແລ.

---

ໆ

ສັພພະໂສ ນາມະຣູປັສມິງ
ຍັສສະ ນັຕຖິ ມະມາຍິຕັງ
ອະສະຕາ ນະ ຈະ ໂສຈະຕິ
ສະ ເວ ພິກຂູຕິ ວຸຈຈະຕິ ໆ໓໖໗ໆ

ຜູ້ທີ່ບໍ່ຍຶດໝັ້ນ ຖືໝັ້ນ ໃນນາມຣູປ ໂດຍປະການທັງປວງວ່າ "ກູ" "ຂອງກູ" ບໍ່ວ່າຈະໃນຣູປ ຫລື ໃນນາມ ກໍຕາມ. ຄື ເມື່ອບໍ່ມີກໍບໍ່ເສົ້າໂສກເສັຍໃຈ. ເຂົາຜູ້ນັ້ນແລ ທີ່ເຮົາຮຽກວ່າ ກິກຂຸ.

# ເຣື່ອງ ປັຌຈັຄຄະຫາຍກະພຣາຫມຕ໌

ພຣະບໍຣົມສາສາດາ ທຣົງຜາຣົພ ປັຌຈັຄຄະຫາຍກະພຣາຫມຕ໌ ທີ່ເປັນຜູ້ຍິນດີ ໃນການບໍຣິຈາຄທານ ຖ້າຍັງບໍ່ທັນໃຫ້ທານເສັຍກ່ອນແລ້ວ ມື້ນັ້ນ ລາວຈະບໍ່ບໍຣິໂກຄອາຫາຣ. ພຣະສາສດາ ທອດພຣະເນຕຣ໌ເຫັນ ອຸປະນິສັຍ ອນາຄາມີຜົລ ຂອງພຣາຫ໌ມຕ໌ນັ້ນ ກັບທັງ ພຣາຫມຕີ ຜູ້ກັຣຍາ. ບັດນັ້ນ, ພຣະອົງຄ໌ ຈຶ່ງສເດັຈໄປບິຕຫບາຕ ປະທັບຢືນຢູ່ທີ່ກົງປະຕູ ພອມພຣາຫມຕ໌ ນັ່ງຜິນໜ້າເຂົ້າໄປໃນເຮືອນ ບໍຣິໂກຄອາຫາຣຢູ່. ສ່ວນນາງພຣາຫມຕີ ນັ່ງປະຕິບັຕິສາມີ ໃນເວລາບໍຣິໂກຄ ແນມເຫັນພຣະສາສດາແລ້ວຄິດວ່າ ຖ້າພຣາຫມຕ໌ ຜູ້ເປັນສາມີຂອງເຮົາ ເຫັນພຣະສມຕະໂຄດົມເຂົ້າແລ້ວ ກໍຈະເອົາອາຫາຣທີ່ເປັນສ່ວນຂອງຕົນນັ້ນຖວາຍ ເຮົາກໍບໍ່ອາຈທີ່ຈະຈັດອາຫາຣໃໝ່ໃຫ້ທັນກັບຄວາມຕ້ອງການໄດ້. ນາງຈຶ່ງໄດ້ຢືນບັງ ບໍ່ໃຫ້ພຣາຫມຕ໌ ຜູ້ເປັນສາມີ ເຫັນພຣະສາສດາ. ເມື່ອດົນພໍສົມຄວນແລ້ວຈຶ່ງໄດ້ເສື້ອງຕາເບິ່ງ ເພື່ອຢາກຮູ້ວ່າ ພຣະສາສດາ ສເດັຈໄປແລ້ວຫລືຍັງ. ເມື່ອເຫັນພຣະສາສດາ ຍັງປະທັບຢືນຢູ່ ຄິດຢາກຈະເວົ້າອອກມາກໍຢ້ານສາມີໄດ້ຍິນ

จึ່ງໃຊ້ປາກບິດບຸ້ຍອອກມາ ເພື່ອບອກໃຫ້ພຣະສາສດາຊາບວ່າ ນິມົນຕ໌ໄປ ໂຜດຂ້າງໜ້າ ຄື ໄປຍັງເຮືອນອື່ນ ພຣະສາສດາສັ່ນພຣະສຽຣຕອບວ່າ ເຮົາ ບໍ່ໄປ. ນາງພຣາຫມຕີ ເຫັນເປັນຂອງຂົບຂັນ ອົດກັ້ນຫົວໄວ້ບໍ່ຢູ່ ຈຶ່ງໄດ້ ຫົວກິກໆ ອອກມາ. ຝ່າຍຕາພຣາຫມຕ໌ ໄດ້ຍິນສຽງຫົວ ງວາກໜ້າມາເຫັນ ພຣະສາສດາ ຈຶ່ງລຸກຂຶ້ນ ຖືຖາດອາຫາຣທີ່ບໍຣິໂພຄເຫລືອຢູ່ເຄິ່ງນຶ່ງນັ້ນມາ ທູລວ່າ ກັຕຕາຫາຣສ່ວນອື່ນບໍ່ມີ ມີແຕ່ທີ່ບໍຣິໂພຄເຫລືອຢູ່ນີ້ ຖ້າບໍ່ທຣົງຣິຕິ ຕຽນແລ້ວ ກໍຂໍທຣົງຮັບເອົາ. ພຣະສາສດາ ຕຣັສຕອບວ່າ "ອາຫາຣທີ່ບໍ່ທັນ ບໍຣິໂພຄ ກໍດີ ບໍຣິໂພຄຄ້າງຢູ່ ກໍດີ ອາຫາຣທີ່ເປັນເງື່ອນ ກໍດີ ຄວນແກ່ເຮົາ ທັງໝົດ ເຮົານັ້ນເປັນເໝືອນດັ່ງ ປຣະທັຕຕູປະຊີວີເຜຕ (ຜູ້ທີ່ມີຊີວິຕຢູ່ດ້ວຍ ຂອງທີ່ຄົນອື່ນໃຫ້) ເມື່ອພຣາຫມຕ໌ ໄດ້ຟັງພຣະສາສດາ ຖ່ອມພຣະອົງຄ໌ ເຊັ່ນນັ້ນ ກໍມີຈິຕເຫລື້ອມໃສ ກ່າວຂຶ້ນວ່າ ເປັນທີ່ອັສຈັຣຍ໌ຈິງ ດັ່ງນີ້ຈຶ່ງທູລ ຖາມວ່າ ພຣະສມຕະໂຄດົມ ຜູ້ຈເຣີນ ພຣະອົງຄ໌ ຕຣັສຮຽກສາວົກຂອງ ພຣະອົງຄ໌ວ່າ ກິກຂຸ ດັ່ງນີ້ ດ້ວຍເຫຕມີປະມາຕພຽງໃດ (ບໍ່ມີອັນໃດທີ່ຈະ ປຽບປານໄດ້ເລີຍ).

ເມື່ອພຣະອົງຄ໌ຈະທຣົງກ່າວຕອບພຣາຫມຕ໌ນັ້ນ ພຣະອົງຄ໌ຈຶ່ງຕຣັສ ຊຶ່ງພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາໃນຂ້າງຕົ້ນນີ້.

---

## ໙

ເມຕຕາວິຫາຣີ ໂຍ ພິກຂຸ
ປະສັນໂນ ພຸທຣະສາສະເນ
ອະຣິຄັຈເຈ ປະທັງ ສັນຕັງ
ສັງຂາຣູປະສະມັງ ສຸຂັງ ໆ໓໖໗ໆ

ພິກຂຸ ຜູ້ຢູ່ດ້ວຍເມຕຕາ, ມີຄວາມເຫລື້ອມໃສໃນພຣະພຸທຣສາສນາ ຄວນບັຣລຸເຖິງສະພາວະອັນສງົບສງັດອັນເປັນສຸຂ ຣະງັບດັບເສັຍຊຶ່ງສັງຂາຣ

## ໑໐

ສິຍຈະ ພິກຂຸ ອິມັງ ນາວັງ
ສິຕຕາ ເຕ ລະຫຸເມສສະຕິ
ເຊຈຸຕວາ ຣາຄັຍຈະ ໂທສັຍຈະ
ຕະໂຕ ນິພພານະເມຫິສິ ໆ໓໖໘ໆ

ດູຣາ ພິກຂຸ ທ່ານຈົ່ງວິດນ້ຳ ສະນ້ຳ ອອກຈາກເຮືອລຳນີ້, ເມື່ອໃດ ນ້ຳອອກໝົດແລ້ວ ເຮືອຈັກແລ່ນໄວ ທຳລາຍ ຣາຄະ ໂທສະ (ໂມຫະ) ເສັຍ ແລ້ວ ທ່ານກໍຈັກໄປເຖິງ ພຣະນິພພານ.

## ໑໑

ປັຈຈະ ຈິນເທ ປັຈຈະ ຊະເທ
ປັຈຈະ ຈຸຕຕະຣິ ການະເຍ
ປັຈຈະ ສັງຄາຕິໂຄ ກິກຂຸ
ໂອຊະຕິຕາໂຕຕິ ອຸຈຈະຕິ ໆລາງ໐ໆ

ທ່ານຈົ່ງຕັດອອກ ຫ້າ ລະຖິ້ມ ຫ້າ, ທຳໃຫ້ຈະເລີນເຕີບໂຕອີກ ຫ້າ ພົ້ນຈາກເຄື່ອງຜູກພັນ ຫ້າຊນິດ ກິກຂຸ ຈຶ່ງໄດ້ຊື່ວ່າ ຜູ້ຂ້າມນ້ຳ.

## ໑໔

ຊາຍະ ກິກຂຸ ມາ ຈະ ປະມາໂທ
ມາ ເຕ ກາມຄຸເຕ ກະມັສສຸ
ມາ ໂລຫະຄຸອັງ ຄິລີ ປະມັຕໂຕ
ມາ ກັນທິ ທຸກຂະມິທັນຕິ ທຍຸທະມາໂນ ໆລາງ໑ໆ

ດູຣາ ກິກຂຸ ຈົ່ງຈເຣີນກາອະນາເຖີດ, ຢ່າມົວປະມາທ ຢ່າປ່ອຍໃຈ ວຽນວົນຢູ່ໃນກາມຄຸຕ, ຢ່າເຜີກືນກິນກ້ອນເຫລັກແດງ ຢ່າປ່ອຍໃຫ້ຄວາມທຸກຂ໌ເຜົາຜານເສັຍເອງ ແລ້ວມົວແຕ່ຈົ່ມວ່າ "ໂອໜ໋ ອັນນີ້ທຸກຂ໌ແທ້ໆ".

໑໓

ນັຕຖິ ຊານັງ ອະປັຍຍັສສະ
ນັຕຖິ ປັຍຍາ ອະຊາຍິໂນ
ຍັມຫິ ຊານັຍຈະ ປັຍຍາ ຈະ
ສະ ເວ ນິພພານະສັນຕິເກ ໆ໓໗໒ໆ

ເມື່ອບໍ່ມີປັຍຍາ ກໍ່ບໍ່ມີຄວາມເພັ່ງພິນິຈພິຈາຣະຕາ, ເມື່ອບໍ່ມີກາຣພິນິຈພິຈາຣະຕາ ກໍ່ບໍ່ມີປັຍຍາ. ຜູ້ໃດມີທັງກາຣພິນິຈພິຈາຣະຕາ ແລະ ມີປັຍຍາ ຜູ້ນັ້ນ ນັບວ່າ ຢູ່ໃກ້ພຣະນິພພານ.

໑໔

ສຸຍຍາຄາຣັງ ປະວິຍຖັສສະ
ສັນຕະຈິຕຕັສສະ ກິກຂຸໂນ
ອະມານຸສີ ຣະຕີ ໂຫຕິ
ສັມມາ ຄັມມັງ ວິປັສສະໂຕ ໆ໓໗໓ໆ

ກິກຂຸ ຜູ້ໄປສູ່ທີ່ສງັດ ມີໃຈສງົບ ເຫັນແຈ້ງຊຶ່ງພຣະຄັມມ໌ໂດຍຊອບ ທຽນຍ່ອມ ໄດ້ຮັບຄວາມຍິນດີ ທີ່ສາມັຍມນຸຊຍ໌ ບໍ່ເຄີຍໄດ້ຊີມຣົສຊາຕເລີຍ

## ໑໕

ຍະໂຕ ຍະໂຕ ສັມມະສະຕິ
ຂັນທານັງ ອຸທະຍັພພະຍັງ
ລະທະຕິ ປີຕິປາໂມກຂັງ
ອະມະຕັນຕັງ ວິຊານະຕັງ ໆ໓໗໔ໆ

ບໍ່ວ່າເມື່ອໃດ ພຣະອຣຫັນຕ໌ ພິຈາຣະນາເຫັນຊຶ່ງ ຄວາມເກີດ ແລະ ຄວາມດັບ ແຫ່ງຂັນທ໌ ທັງຫລາຍ ເພິ່ນຍ່ອມໄດ້ປີຕິ ແລະ ປາໂມທຍ໌ ຊຶ່ງ ເປັນສິ່ງທີ່ ອມະຕະ ສຳຣັບທ່ານ ຜູ້ຮູ້ ທັງຫລາຍ.

## ໑໖

ຕັຕຣາຍະມາທິ ພະວະຕິ
ອິທະ ປັຒຒັສສະ ພິກຂຸໂນ
ອິນທຣິຍະຄຸຕຕິ ສັນຕຸຕຖິ
ປາຕິໂມກເຂ ຈະ ສັງວະໂຣ
ມິຕເຕ ພະຊັສສຸ ກັລຍານເຕ
ສຸທທາຊີເວ ອະຕັນທິເຕ ໆ໓໗໕ໆ

ສິ່ງທຳອິດ ທີ່ທິກຂຸ ຜູ້ມີປັນຍາ ຈະຕ້ອງທຳ ໃນພຣະສາສນານີ້ ກໍຄື ສຳຣວມອິນທຣີຍ໌ ມີຄວາມຍິນດີ ພໍໃຈ ໃນສິ່ງຕົນມີຕົນໄດ້ ຣະມັດຣະວັງ ໃນພຣະວິນັຍບັນຍັດ, ຄົບຄ້າສະມາຄົມກັບ ກັລຍານມິຕຣ໌ຜູ້ທີ່ຂຍັນຂັນແຂງ ຜູ້ມີອາຊີວະສະອາດ.

໑໗

ປະຕິສັນຖາຣະວຸຕຸຍັສສະ
 ອາຈາຣະກຸສະໂລ ສີຍາ
ຕະໂຕ ປາໂມຊຊະພະຫຸໂລ
 ທຸກຂັສສັນຕັງ ກະຣິສສະຕິ ຯລຯ

ອັນວ່າ ທິກຂຸນັ້ນ ຄວນຮູ້ຈັກການປະຕິສັນຖານ ຕ້ອນຮັບ ສລາດໃນ ມັຣຍາທທີ່ຄວນປະພຶຕຣ໌ ເພາະວ່າ ຄຸຕລັມມນັ້ນ(໑) ທິກຂຸ ຈະມີແຕ່ຄວາມ ປາໂມທຍ໌ ໝົດທຸກຂ໌ໃນທີ່ສຸດແລ.

## ເຣື່ອງ ທິກຂຸ ອະດີດໂຈຣ

ພຣະບໍຣົມສາສດາ ທຣົງຜາຣົພ ທິກຂຸຫລາຍອົງຄ໌ທີ່ເຄີຍເປັນໂຈຣ ມາກ່ອນ ທິກຂຸເຫລົ່ານີ້ ຄາວເມື່ອເປັນໂຈຣນັ້ນ ໄດ້ພາກັນໄປປຸ້ນສະດົມ-

(໑) ຂໍ້ປະຕິບັຕິ ທີ່ກ່າວນີ້ເປັນຄຸຕລັມມ໌ຊ່ວຍໃຫ້ທິກຂຸມີຄວາມຍິນດີ ມີສຸຂ.

ຕາມຄາມເຂຕຕ່າງ ໆ ແລະໃນວັນນຶ່ງໄດ້ພາກັນໄປປຸ້ນເຮືອນ ອຸບາສິກາຜູ້ນຶ່ງ ໃນເວລານັ້ນ ອຸບາສິກາຜູ້ນັ້ນພ້ອມດ້ວຍ ປະຊາຊົນ ເປັນຈຳນວນຫລາຍ ຈັດຂຶ້ນເປັນພິເສສ. ພຣະພິກຂຸ ທີ່ຖືກນິມົນຕ໌ມາສແດງລັມມ໌ ໃນຄືນນັ້ນ ແມ່ນ ບຸຕຣ໌ຂອງອຸບາສິກາ ເຈົ້າຂອງເຮືອນທີ່ພວກໂຈຣ ຈະພາກັນໄປປຸ້ນໃນຄືນນັ້ນ. ຜູ້ທີ່ເປັນຫົວໜ້າໂຈຣໄປແອບ ຫຣືຝົກຢູ່ໃນລັມມສາລາ ເພື່ອຈະທຳຮ້າຍອຸບາສິກາຜູ້ນັ້ນຢູ່. ເວລານັ້ນ ໄດ້ມີຄົນໄປບອກ ອຸບາສິກາວ່າດຽວນີ້ມີພວກໂຈຣກຳລັງຈະເຂົ້າປຸ້ນເຮືອນ ແລະຈະຂົນເອົາສິ່ງຂອງຕ່າງ ໆໄປຢູ່ ອຸບາສິກາຕອບວ່າ ຫາກພວກໂຈຣຕ້ອງການອັນໃດ ທີ່ມີຢູ່ໃນເຮືອນ ກໍຂໍໃຫ້ເຂົາເຈົ້າຂົນເອົາໄປເສັຽ ແຕ່ເຮົາຈະຟັງລັມມ໌ ດັ່ງນີ້ ເຖິງ ໓ ຄັ້ງ. ຫົວໜ້າໂຈຣໄດ້ຍິນອຸບາສິກາ ເວົ້າເຊັ່ນນັ້ນ ກໍຮູ້ສຶກເສົ້າໃຈວ່າ ເຮົານີ້ກຳລັງຈະທຳບາບ ແຕ່ເຈົ້າຂອງເຮືອນ ຜູ້ທີ່ເຮົາຈະທຳໂຈຣກັມມ໌ຢູ່ນີ້ ທຳບຸຍ ກໍເກີດຄວາມສລົດໃຈລະອາຍບາບ ແລະມີຄວາມເຫລື້ອມໃສ ອັສຈັຣຍ໌ໃຈ ຈຶ່ງຮີບກັບໄປບອກພວກເພື່ອນ ຂົນເອົາຫຣັພຍ໌ສົມບັຕິທີ່ຂົນເອົາໄປນັ້ນ ເອົາກັບຄືນໄປໄວ້ຕາມເດີມ ແລ້ວພ້ອມກັນມາຂໍໂທສ ອຸບາສິກາ. ພວກໂຈຣເຫລົ່ານັ້ນ ໄດ້ຊວນກັນມາບວຊໃນພຣະພຸທລສາສນາ ທັງໝົດ. ຄັນບວຊແລ້ວກໍໄດ້ພາກັນໄປຈເຣີນສມຕະລັມມ໌ ຢູ່ທີ່ພູເຂົາແຫ່ງນຶ່ງ.

ພຣະບໍຣົມສາສດາ ໄດ້ທຣົງເປັ່ງພຣະໂອກາສໄປ ເໝືອນກັບວ່າປະທັບນັ່ງຢູ່ໃນທີ່ສະເພາະໜ້າ ແລ້ວຕຣັສພຣະຄາຖານີ້ ໃຫ້ສຳເຣັຈອຣຫັຕ.

---

໑໗

ອັສສິກາ ວິຍະ ປຸປຜານິ
ມັທທະວານິ ປະມຸຍຈະຕິ
ເອວັງ ຣາຄັຍຈະ ໂທສັຍຈະ
ວິປປະມຸຍເຈຖະ ກິກຂະໂວ ฯ໓໗໗ฯ

ດອກຊ້ອນທີ່ບານເບັ່ງເຕັມທີ່ແລ້ວ ກໍຫ່ຽວແຫ້ງແລະຫລົ່ນອອກສັນໃດ. ດູຣາ ກິກຂຸ ທັງຫລາຍ ຈົ່ງສລັດຕັດຂາດຊຶ່ງ ຣາຄະ ແລະ ໂທສະນັ້ນຖິ້ມໄປ (ເໝືອນກັນກັບກີບດອກຊ້ອນທີ່ຫ່ຽວແຫ້ງ) ສັນນັ້ນເຖີດ.

## ເຣື່ອງ ປັຍຈສຕະ ກິກຂຸ

ພຣະບໍຣົມສາສດາ ທຣົງຜາຣົພ ກິກຂຸ ປະມາຓ ໕໐໐ ອົງຄ໌ ທີ່ໄດ້ຮຽນພຣະກັມມກຖານ ໃນສຳນັກ ຂອງພຣະອົງຄ໌ແລ້ວ ກໍພາກັນໄປຈເຣີຍຊຶ່ງສມຕະລັມມ໌ຢູ່ໃນປ່າ. ໃນວັນນຶ່ງ, ໄດ້ເຫັນດອກຊ້ອນບານໃນຍາມເຊົ້າພໍເຖິງຍາມແລງ ຕາເວັນຄ້າຍຄ່ຳ ດອກນັ້ນ ກໍຫ່ຽວ ແລະຫລົ່ນອອກຈາກຂັ້ວຂອງມັນ. ພວກເພິ່ນນຳເອົາມາພິຈາຣະຕາວ່າດອກຊ້ອນຫລົ່ນອອກຈາກຂັ້ວສັນໃດເຮົາກໍຄວນທຳໃຫ້ ກິເລສ ຫລົ່ນອອກຈາກເຮົາສັນນັ້ນ ພຣະບໍຣົມສາສດາ ທຣົງຊາບ ອາຣະຈິຕ ຂອງພຣະກິກຂຸ ເຫລົ່ານັ້ນ ຈຶ່ງທຣົງເປັ່ງຊຶ່ງ

ພຣະໂອກາສໄປຍັງ ກິກຂຸ ເຫລົ່ານັ້ນ ປະດຸຈດັ່ງ ປະທັບນັ່ງຢູ່ໃນທີ່ສະເພາະໜ້າ ແລ້ວຈຶ່ງຕຣັສ ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາ ໃນເບື້ອງຕົ້ນນີ້ ໃຫ້ຟັງ

---

## ໑໙

ສັນຕະກາໂຍ ສັນຕະວາໂຈ
ສັນຕະມະໂນ ສຸສະມາຫິໂຕ
ວັນຕະໂລກາມິໂສ ກິກຂຸ
ອຸປະສັນໂຕຕິ ວຸຈະຈະຕິ ຯລຯ

ກິກຂຸ ຜູ້ທີ່ມີກາຍສງົບ ມີວາຈາສງົບ ມີໃຈສງົບ ມີຄວາມຕັ້ງໝັ້ນ ລະເສັຍຊຶ່ງໂລກາມິສ (໑)ໄດ້ນັ້ນ ຮຽກວ່າ ຜູ້ມີຄວາມສງົບຢ່າງແທ້ຈິງ.

## ເຣື່ອງ ພຣະສັນຕະກາຍເຖຣະ

ພຣະບໍຣົມສາສດາ ທຣົງປາຣົພ ພຣະສັນຕະກາຍເຖຣະ ທ່ານຜູ້ມີກາຽສງົບຣະງັບ ມີກິຣິຍາ ມັຣຍາທອັນງາມ ຍ້ອນເພິ່ນຕິດນິສັຍມາແຕ່ຊາຕປາງກ່ອນ ຄາວເພິ່ນເກີດເປັນຣາຊສີຫ໌. ຕາມນິສັຍຂອງຣາຊສີຫ໌ນັ້ນ ເມື່ອຈະ-

---

(໑) ໂລກາມິສ - ອາມິສ ຄືວັຕຖຸສິ່ງຂອງຕ່າງໆໃນໂລກ.

ນອນຍ່ອມກຳນົດຮູ້ ອາການຂອງກາຍຂອງຕົນກ່ອນວ່າຢູ່ໃນທ່າໃດ. ຄັນວ່າ ຕື່ນຂຶ້ນມາ ກໍຮູ້ວ່າ ອາການນັ້ນຜິດປົກຕິໄປໃນເວລາຫລັບ ກໍຕັກເຕືອນຕົນ ວ່າ ອັນນີ້ບໍ່ສົມຄວນ. ເມື່ອເຫັນອາການຍັງຢູ່ຄືງທີ່ ຈຶ່ງລຸກຂຶ້ນເປົ່ງສີຫນາທ ໓ ຄັ້ງ ແລ້ວທ່ຽວໄປຫາອາຫານ.

ພຣະກິກຂຸ ທັງຫລາຍ ໄດ້ເຫັນກາຍສະມາຈານ ການຣະມັດຣະວັງ ກາຍ ຂອງເພິ່ນງົດງາມຮຽບຮ້ອຍ ຈຶ່ງທູລແດ່ ພຣະສາສດາ. ພຣະອົງຄ໌ຈຶ່ງ ຕຣັສສັ່ງສອນ ກິກຂຸ ທັງຫລາຍ ໃຫ້ເອົາຢ່າງ ພຣະສັນຕະກາຍເຖຣະ ແລ້ວ ຈຶ່ງຕຣັສ ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາໃນເບື້ອງຕົ້ນນີ້.

---

# ໔໐

ອັຕຕະນາ ໂຈທະຍັຕຕານັງ
ປະຕິມັງເສຕະມັຕຕະນາ
ໂສ ອັຕຕະຄຸຕໂຕ ສະຕິມາ
ສຸຂັງ ກິກຂຸ ວິຫາຫິສິ ฯລฯ

ຈົ່ງເຕືອນຕົນ ດ້ວຍຕົນເອງ, ຈົ່ງພິຈາຣະນາຕົນ ດ້ວຍຕົນເອງ, ກິກຂຸ ທັງຫລາຍ ເອີຍ ຖ້າທ່ານຄຸ້ມຄອງຕົນເອງໄດ້ ມີສະຕິຮອບຄອບແລ້ວ ທ່ານກໍຈະຢູ່ເປັນສຸຂ.

# ໔໑

ອັຕຕາ ຫິ ອັຕຕະໂນ ນາໂຖ
ອັຕຕາ ຫິ ອັຕຕະໂນ ຄະຕິ
ຕັສມາ ສັໝຍະມັຕຕານັງ
ອັສສັງ ພັທຣັງ ວະ ວານິໂຊ ၁ၼၵ໐၁

ຕົນນັ້ນແລເປັນທີ່ເພິ່ງຂອງຕົນເອງ, ຕົນມີທາງເດີນ ເປັນຂອງຕົນ, ເພາະສະນັ້ນ, ຕົນຄວນຄວບຄຸມຕົນ ເໝືອນພໍ່ຄ້າມ້າ ທນຸຖນອມມ້າດີໄວ້.

## ເຣື່ອງ ພຣະນັງຄລະກູຜະເຖຣະ

ພຣະບໍຣົມສາສດາ ທຣົງຜາຣົພພຣະນັງຄລະກູຜະເຖຣະ. ພຣະເຖຣະອົງຄ໌ນີ້ ຄາວທີ່ເພິ່ນເປັນຄຣືຫັສຖ໌ຢູ່ນັ້ນ ເພິ່ນເປັນຄົນ ທຸຄຕະ ນຸ່ງຫົ່ມຜ້າເກົ່າ ຮັບຈ້າງເຂົາທ່າງານລ້ຽງຊີພ. ເພິ່ນເຫັນໂທສໃນພຣາວາສວິສັຍ ຈຶ່ງມາບວຊໃນພຣະພຸທສສາສນາ. ເມື່ອບວຊແລ້ວ ເພິ່ນກໍຍັງເກັບເອົາໄຖ ແລະ ຜ້ານຸ່ງຫົ່ມຜືນເກົ່ານັ້ນມາເຊື່ອງໄວ້ໃນທີ່ແຫ່ງນຶ່ງ. ຄັນເພິ່ນກະສັນຢາກສິກເກີດຂຶ້ນ ຍາມໃດ ເພິ່ນກໍຍ່າງໄປເບິ່ງ ບໍຣິຂາຣ ທີ່ເພິ່ນເຊື່ອງໄວ້ນັ້ນ. ເພິ່ນກ່າວຕັກເຕືອນສັ່ງສອນຕົນເອງ ຈົນໝົດຄວາມຢາກສິກແລ້ວຈຶ່ງກັບມາ ພຣະພິກຂຸ ທັງຫລາຍ ເຫັນເພິ່ນເຮັດ ດັ່ງນັ້ນ ຈຶ່ງຖາມວ່າ ທ່ານໄປເຮັດ

ຫຍັງໃນທີ່ນັ້ນບ່ອຍ ໆ, ທ່ານຕອບວ່າ ໄປຫາ ທ່ານອາຈາຣຍ໌. ຄັນເພິ່ນສໍາເຣັຈ ພຣະອຣຫັຕ ແລ້ວ ກໍບໍ່ໄດ້ໄປໃນທີ່ນັ້ນອີກ. ທີນທາງທີ່ເພິ່ນທ່ຽວໄປນັ້ນ ກໍຣົກເຮື້ອ.

ພຣະກິກຂຸ ທັງຫລາຍ ຈຶ່ງຖາມເພິ່ນວ່າ ດຽວນີ້ ເປັນຫຍັງໜໍ ຈຶ່ງບໍ່ເຫັນທ່ານໄປຫາທ່ານອາຈາຣຍ໌ ຄືແຕ່ກ່ອນ ? ເພິ່ນຕອບວ່າ ດຽວນີ້ເຮົາບໍ່ກ່ຽວຂ້ອງກັບທ່ານອາຈາຣຍ໌ອີກແລ້ວ. ຄວາມກ່ຽວຂ້ອງກັນ ເຮົາຕັດເສັຍແລ້ວ. ພຣະກິກຂຸ ທັງຫລາຍ ກ່າວຫາເພິ່ນວ່າ ອວດພຣະອຣຫັຕຜົລ ຈຶ່ງໄປເຝົ້າທູລ ພຣະສາສດາ ພຣະອົງຄ໌ ທຣົງຮັບຮອງວ່າ ເພິ່ນກ່າວຕາມຄວາມເປັນຈິງ ແລ້ວຈຶ່ງຕຣັສ ພຣະຄາຖາ ດັ່ງທີ່ຍົກຂຶ້ນມາໃນເບື້ອງຕົ້ນນີ້.

---

## ໑໘

ປາໂມຊຊະພະຫຸໂລ ກິກຂຸ
ປະສັນໂນ ພຸທລະສາສເນ
ອະທິຄັຈເຉ ປະທັງ ສັນຕັງ
ສັງຂາຣູປະສະມັງ ສຸຂັງ ໆ໓໗໑ໆ

ກິກຂຸ ຜູ້ທີ່ເຕັມໄປດ້ວຍ ຄວາມປາໂມທຍ໌ ຍິນດີ, ມີຄວາມເຫລື້ອມ

ໃນໃສພຣະພຸທສາສນາ ທຽນຍ່ອມ ບັຣລຸເຖິງ ສະການະອັນສງົບສງັດ ທີ່ເປັນສຸຂ ຣະງັບສັງຂາຣ.

## ເຣື່ອງ ພຣະວັກກະລິເຖຣະ

ພຣະບໍຣົມສາສດາ ທຣົງຜາຣົພ ພຣະວັກກະລິເຖຣະ ຄາວທີ່ເພິ່ນຍັງເປັນຄຣືຫັສຖ໌ ຢູ່ນັ້ນ ເພິ່ນເຫັນຮ່າງກາຍຂອງພຣະອົງຄ໌ ສວຍງາມເບິ່ງແລ້ວກໍເປັນທີ່ໜ້າເຫລື້ອມໃສ ສັທລາເປັນຢ່າງຍິ່ງ ຈຶ່ງໄດ້ເຂົ້າມາບວຊ ດ້ວຍຄິດວ່າ ຈະເຫັນພຣະອົງຄ໌ຢູ່ຕລອດ. ຄັນບວຊ ກໍບໍ່ຮ່ຳຮຽນ ບໍ່ຈເຣີນກັມມຖານການະນາ ເຝົ້າແຕ່ຄອຍຕິດຕາມ ພຣະສາສດາແຕ່ຢ່າງດຽວ. ພຣະອົງຄ໌ຈຶ່ງໄດ້ຕຣັສສອນວ່າ ດູຣາ ວັກກະລິ ທ່ານຈະມາເຝົ້າດູ ຮ່າງກາຍ ອັນເນົ່າເປື່ອຍນີ້ເຮັດຫຍັງ. ຜູ້ໃດ ເຫັນທັມມ໌ ຜູ້ນັ້ນ ເຫັນເຮົາ, ຜູ້ໃດ ບໍ່ເຫັນທັມມ໌ ຜູ້ນັ້ນບໍ່ເຫັນເຮົາ ດັ່ງນີ້. ພຣະວັກກະລິ ກໍບໍ່ຟັງ ຂືນເຝົ້າຕາມຢູ່ເລື້ອຍໄປ. ພຣະອົງຄ໌ ຈຶ່ງໄດ້ທຣົງປະນາມຂັບໄລ່ໃຫ້ໜີໄປ.

ພຣະວັກກະລິ ເສັຍໃຈ ຂຶ້ນໄປເທິງພູເຂົາ ຄິຊຊະກູຜ ຈະກະໂດດລົງມາໃຫ້ຕາຍ. ພຣະພຸທສອົງຄ໌ ຈຶ່ງໄດ້ທຣົງເປັ່ງ ພຣະໂອການໄປ ສແດງໃຫ້ ພຣະວັກກະລິເຫັນ ຕຣັສຮຽກໃຫ້ເກີດປີຕິປາໂມທຍ໌ຍິນດີ ແລ້ວຈຶ່ງຕຣັສພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາ ໃນຂ້າງຕົ້ນນີ້.

---

## ໔໖

ໂຍ ຫະເວ ທະຫະໂຣ ກິກຂຸ
ຍຸຍຊະຕິ ພຸທລະສາສະເນ
ໂສ ມັງ ໂລກັງ ປະກາເສຕິ
ອັພກາ ມຸຕໂຕວະ ຈັນທິມາ ໑໖໗໔໑

ເຖິງແມ່ນວ່າ ຈະເປັນກິກຂຸໜຸ່ມ ກໍຕາມ, ແຕ່ອຸທິສຕົນ ເພື່ອພຣະສາສນາແລ້ວ ທ່ານຍ່ອມເປັນປະທີປ ສ່ອງໂລກໃຫ້ສວ່າງ ເໝືອນດັ່ງພຣະຈັນທຣ໌ ທີ່ພົ້ນຈາກເມກໝອກ.

## ເຣື່ອງ ສຸມນະສາມເນຣ

ພຣະບໍຣົມສາສດາ ທຣົງຜາຣົພ ສຸມນະສາມເນຣ ອາຍຸ ໆ ຂວບທີ່ເປັນສິສຍ໌ ຂອງ ພຣະອະນຸຣຸທລເຖຣະ ໄດ້ສໍາເຣັຈພຣະອຣຫັຕ ໃນເວລາທີ່ແຖຜົມບັຣພຊາ. ຄັນບວຊແລ້ວ ພຣະອນຸຣຸທລເຖຣະ ຈຶ່ງໄດ້ພາມາເຝົ້າພຣະສາສດາ ທີ່ ບຸພພາຣາມ. ຄັນມາເຖິງບຸພພາຣາມແລ້ວ ແຕ່ຍັງບໍ່ທັນເຂົ້າເຝົ້າ ພຣະສາສດາ ພຣະກິກຂຸ ທັງຫລາຍ ໄດ້ເຫັນ ສຸມນະສາມເນຣນັ້ນ ມີບາງພວກ ຈັບສີສະ ບາງພວກ ກໍຈັບຫູ, ບາງພວກ ກໍຈັບແຂນ ຢອກສາມະເນຣ ຫລິ້ນ.

ພຣພຸະສາສດາ ໄດ້ທອດພຣະເນຕຣ໌ເຫັນກິຣິຍາ ຂອງ ກິກຂຸເຫລົ່ານັ້ນ. ພຣອົງຄ໌ ຢາກຈະສແດງຄຸດາ ຂອງສາມເດຣນັ້ນໃຫ້ຜາກົຍ ຈຶ່ງຕຣັສຮຽກ ພຣະອານົນທ໌ມາ ໃຫ້ສາມເດຣທີ່ສາມາຖ ໄປເອົານ້ຳທີ່ສະອາໃນດາດມາໃຫ້ ເພື່ອຈະລ້າງພຣະບາທ. ພຣະອານົນທ໌ເຖຣະ ໄດ້ປະຊຸມສາມເດຣທັງຫລາຍ ແລ້ວຖາມໂດຍລຳດັບ ກໍບໍ່ມີອົງຄ໌ໃດສາມາຖ ຄົນໄປເຖິງ ສຸມະນະສາມເດຣ ເພິ່ນກໍຕອບຮັບວ່າໄດ້. ແລ້ວຈຶ່ງຈັບເອົາໝໍ້ອາງລິງບິນບ່າ ເຫາະໄປຍັງ ຫິມວັນຕະປະເທສ ນຳເອົານ້ຳມາຖວາຍ ພຣະສາສດາໄດ້ຕາມພຣະປະສົງຄ໌.

ພຣະສາສດາ ໄດ້ທຣົງຍົກຍ້ອງສາມເດຣນັ້ນ ໂດຍປະກາຣຕ່າງ ໆ ແລ້ວປະທານ ອຸປສົມບົທວ່າ ເອຫິ ກິກຂຸ ທ່ານຈົ່ງເປັນກິກຂຸ ຕັ້ງແຕ່ນີ້ນີ້ເປັນຕົ້ນໄປ. ຄັ້ນນັ້ນ, ກິກຂຸ ທັງຫລາຍ ປະຊຸມສັຣເສີນ ອານຸກາພ ຂອງສາມເດຣນັ້ນ. ພຣະອົງຄ໌ ຈຶ່ງສເດັຈມາຍັງ ທີ່ປະຊຸມ ແລ້ວຈຶ່ງຕຣັສຊຶ່ງພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາ ໃນຂ້າງຕົ້ນນີ້.

---

# ຈົບ ກິກຂຸວັຄຄ໌ ທີ່ ໔໕

# ພຸຣາຫຸມຓວັຄຄ໌ ທີ່ ໒໖

## ໑

ຉິນທະ ໂສຕັງ ປະຣັກກັມມະ
ກາເມ ປະນູທະ ພຸຣາຫມຓະ
ສັງຂາຣານັງ ຂະຍັງ ຌັຕຸວາ
ອະກະຕັຌຌູສິ ພຣາຫມຓະ ฯລฯ

ທ່ານ ພຣາຫມຓ໌ເອີຍ ທ່ານຈົ່ງພຍາຍາມຫຍຸດກະແສ (ຕັຓຫາ) ແລະບັນເທົາກາມ ທັງຫລາຍ ໃຫ້ເບົາບາງລົງ. ພຣາຫມຓ໌ເອີຍ ເມື່ອທ່ານ ຮູ້ຄວາມສິ້ນໄປ ຂອງການປຸງແຕ່ງ ທັງຫລາຍ ທ່ານກໍຈະຮູ້ສິ່ງທີ່ບໍ່ປຸງແຕ່ງ (ພຣະນິພພານ).

## ເຣື່ອງ ປະສາທພະຫຸລະພຣາຫມຓ໌

ພຣະບໍຣົມສາສດາ ທຣົງຜາຣົພ ພຣາຫມຓ໌ ຜູ້ທີ່ມີຄວາມເຫລື້ອມ ໃສສັທລາມາກ ໄດ້ຖວາຍກັຕຕາຫານ ແກ່ ກິກຂຸ ທັງຫລາຍ ໃນເຣືອນ ຂອງຕົນວັນລະ ໑໖ ອົງຄ໌ເປັນປະຈຳ. ເວລາຖວາຍອາຫານນັ້ນ ຮຽກກິກຂຸ ຫລາຍວ່າ ພຣະອຣຫັນຕ໌. ກິກຂຸ ເຫລົ່ານັ້ນ ບໍ່ພໍໃຈໃນການຮຽກເຊັ່ນ ນັ້ນ

ຈຶ່ງບໍ່ໄປສູ່ເຮືອນຂອງພຣາຫມຕ໌ນັ້ນ ຝ່າຍພຣາຫມຕ໌ມີຄວາມໂສກເສົ້າ ຈຶ່ງໄປເຝົ້າ ທູລຄວາມນັ້ນ ແດ່ ພຣະສາສດາ ພຣະອົງຄ໌ຕຣັສຮຽກ ກິກຂຸ ທັງຫລາຍ ເຫລົ່ານັ້ນມາຖາມໄດ້ຄວາມວ່າ ກິກຂຸ ເຫລົ່ານັ້ນ ບໍ່ຍິນດີ ໃນອາທະ ທີ່ພຣາຫມຕ໌ຮຽກ ຢ່າງນັ້ນ ຈຶ່ງຕຣັສຖາມວ່າ ທ່ານ ທັງຫລາຍ ຍິນດີອາທະ ທີ່ເຂົາຮຽກ ເຊັ່ນນັ້ນບໍ່? ກິກຂຸ ເຫລົ່ານັ້ນ ຈຶ່ງທູລວ່າ ບໍ່ຍິນດີ ໃຫ້ຮຽກ ເຊັ່ນນັ້ນ. ພຣະອົງຄ໌ ຈຶ່ງຕຣັສວ່າ ຖ້າເຊັ່ນນັ້ນ ກໍບໍ່ເປັນອາບັຕິ ເພາະເຂົາຮຽກດ້ວຍຄວາມເຫລື້ອມໃສ. ທ່ານທັງຫລາຍ ຄວນພຍາຍາມຕັດ ຕັຓຫາ ໃຫ້ບັລລຸ ອຣຫັຕ ສົມດັ່ງເຂົາຮຽກເຖີດ ແລ້ວຈຶ່ງຕຣັສພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາ ໃນຂ້າງຕົ້ນນີ້ນັ້ນແລ.

---

## ໒

ຍະທາ ທ໌ວະເຍສຸ ທັມເມສຸ
ປາຣະຄູ ໂຫຕິ ພ໌ຣາຫມະໂຓ
ອະຖັສສະ ສັພເພ ສັງໂຍຄາ
ອັຕ໌ຖັງ ຄັຈສັນຕິ ຊານະໂຕ ໆ໓໘໔ໆ

ເມື່ອໃດ ພຣາຫມຕ໌ ເຂົ້າເຖິງຝັ່ງນັ້ນ ຄື ພຣະນິພພານ ດ້ວຍການ ປະຕິບັຕິທັມມ໌ ທັງສອງ (ສມຖະແລະວິປັສສນາ) ເມື່ອນັ້ນເຄື່ອງຜູກພັນ ທັງປວງຂອງເຂົາຜູ້ຮູ້ ຍ່ອມສິ້ນໄປ.

# ເຣື່ອງ ສັມພະຫຸລະຠິກຂຸ

ພຣະບໍຣົມສາສດາ ທຣົງຜາຣົພ ພຣະຠິກຂຸ ປະມາຓ ໓໐ ອົງຄ໌ ເປັນຜູ້ທີ່ມັກໄປຢູ່ໃນທິສຕ່າງໆ. ໃນກາລະຄັ້ງນຶ່ງ ພວກເພິ່ນທັງຫລາຍ ໄດ້ພ້ອມກັນ ເຂົ້າມາເຝົ້າ ພຣະສາສດາ ທີ່ພຣະເຊຕວັນວິຫາຣ. ພຣະສາຣີບຸຕຣ໌ເຖຣະ ເຫັນອຸປນິສັຍ ພຣະອຣຫັຕ ຂອງທ່ານເຫລົ່ານັ້ນ ຈຶ່ງເຂົ້າໄປເຝົ້າ ພຣະສາສດາ ທູລຖາມວ່າ (ຠັນເຕ ຠະຄະວາ) ຂ້າແດ່ ພຣະອົງຄ໌ ຜູ້ຈເຣີນ ອັນທີ່ ພຣະອົງຄ໌ຮຽກວ່າ ຘັມມ໌ ໒ ຢ່າງນັ້ນ ຄືອັນໃດແດ່?

ພຣະອົງຄ໌ ຕຣັສວ່າ ຘັມມ໌ ໒ ຢ່າງນັ້ນ ຄື ສມຖະຢ່າງ ໑, ແລະ ວິປັສສນາ ຢ່າງ ໑. ແລ້ວຈຶ່ງຕຣັສພຣະຄາຖາ ດັ່ງທີ່ຍົກຂຶ້ນມາຂ້າງຕົ້ນນີ້.

---

໓

ຍັສສະ ປາຣັງ ອະປາຣັງ ວາ
ປາຣາປາຣັງ ນະ ວິຊຊະຕິ
ວີຕັຕທະຣັງ ວິສັງຍຸຕຕັງ
ຕະມະຫັງ ພ຺ຣູມິ ພ຺ຣາຫ຺ມະຓັງ ໓໘໕

ຜູ້ໃດ ບໍ່ມີຝັ່ງນີ້ ຫຣື ຝັ່ງພຸ້ນ ຫຣືວ່າ ບໍ່ມີທັງ ໒ ຝັ່ງ. ບໍ່ມີຄວາມ

ກັງວົນໃຈ ເປັນອິສຣະ ຜູ້ນັ້ນ ເຮົາຮຽກວ່າ ພຣາຫມຕ໌.

## ເຣື່ອງ ມາຣ

ພຣບໍຣົມສາສດາ ທຣົງຜາຣົພມາຣ ທີ່ແປງເພສເປັນ ບຸຣຸສມາເຝົ້າ ທູລຖາມວ່າ ກັນເຕ ພຣະເຈົ້າຂ້າ, ທີ່ພຣະອົງຄ໌ ຕຣັສວ່າ ປາຣະ ຝັ່ງນັ້ນວ່າ ຢ່າງໃດ. ພຣະສາສດາ ທຣົງຊາບວ່າ ມາຣ ແລ້ວຕຣັສວ່າ ດູຣາ ມາຣ ເຈົ້າ ຈະຕ້ອງການຝັ່ງນັ້ນ ໄປເຮັດຫຍັງ, ຝັ່ງນັ້ນແມ່ນທ່ານທີ່ປາສຈາກ ຣາຄະ ເທົ່ານັ້ນຄວນຈະໄປເຖິງ ບໍ່ແມ່ນວິສັຍ ຂອງເຈົ້າ ແລ້ວຈຶ່ງຕຣັສພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາ ໃນຂ້າງເທິງນີ້.

---

໔

ຊາຍິງ ວິຣະຊະມາສີນັງ
ກະຕະກິຈຈັງ ອະນາສະວັງ
ອຸຕຕະມັຕຖັງ ອະນຸປປັຕຕັງ
ຕະມະຫັງ ພຸຣູມິ ພຸຣາຫມະຕັງ ໆລໆຜົໆ

ຜູ້ໃດບໍາເພັນຊານ ປາສຈາກກິເລສ ຢູ່ຜູ້ດຽວ ໝົດກາຣະກິຈທີ່ຈະຄວນທໍາ ໝົດອາສວະກິເລສ ບັຣລຸເຖິງຈຸດໝາຍປາຍທາງແລ້ວ ຜູ້ນັ້ນແລທີ່ເຮົາຮຽກວ່າ ພຣາຫມຕ໌.

## ເຣື່ອງ ອັນຍະຕຣະພຣາຫມຕ໌

ພຣະບໍຣົມສາສດາ ທຣົງຜາຣົພ ພຣາຫມຕ໌ ຄົນນຶ່ງ. ພຣາຫມຕ໌ຜູ້ນີ້ ຄິດວ່າ ພຣະສາສດາ ຮຽກສາວົກ ຂອງພຣະອົງຄ໌ວ່າ ພຣາຫມຕ໌ ເຮົາກໍເປັນ ພຣາຫມຕ໌ ໂດຍຊາຕິ ແລະ ໂຄຕຣ໌ ເຮົາກໍຄວນຮຽກຢ່າງນັ້ນດ້ວຍ. ຄັນດໍາຣິເຊັ່ນນັ້ນແລ້ວ ຈຶ່ງເຂົ້າໄປເຝົ້າ ທູລເນື້ອຄວາມນັ້ນ ແດ່ ພຣະສາສດາ ພຣະອົງຄ໌ ຕຣັສວ່າ ເຮົາບໍ່ໄດ້ຮຽກ ບຸຄຄົລວ່າ ເປັນພຣາຫມຕ໌ ຍ້ອນຊາຕິ ແລະ ໂຄຕຣ໌, ເຮົາຮຽກ ບຸຄຄົລວ່າ ເປັນພຣາຫມຕ໌ ເພາະ ບັຣລຸປະໂຍຊນ໌ສູງສຸດ ໂດຍລໍາດັບ. ແລ້ວຈຶ່ງຕຣັສພຣະຄາຖາ ດັ່ງທີ່ຍົກຂຶ້ນມາໃນຂ້າງຕົ້ນນີ້

---

໕

ທີອາ ຕະປະຕິ ອາທິຈໂຈ
ຣັຕຕິມາກາຕິ ຈັນທິມາ
ສັນນັທໂຣ ຂັຕຕິໂຍ ຕະປະຕິ
ຊາຍີ ຕະປະຕິ ພຼຣາຫຼມະໂຕ

ອະຖະ ສັພພະມະໂຫຣັຕຕິງ
ພຸທໂຮ ຕະປະຕິ ເຕຊະສາ ໆລໆຖາໆ

ພຣະອາທິຕຍ໌ ສວ່າງ ໃນເວລາກາງເວັນ, ພຣະຈັນທຣ໌ສວ່າງ ໃນເວລາກາງຄືນ. ນັກຣົບສງ່າງາມ ໃນເວລາ ສວມອາວຸຣປ້ອງກັນຕົວທີ່ຈະເຂົ້າສນາມຣົບ, ພຣາຫມຕ໌ ສງ່າງາມ ເມື່ອເຂົ້າຊານ ແຕ່ ພຣະພຸທຣເຈົ້ານັ້ນສງ່າງາມ ທັງກາງເວັນແລະ ກາງຄືນ.

# ເຣື່ອງ ພຣະອານົນທ໌ເຖຣະ

ພຣະບໍຣົມສາສດາ ທຣົງຜາຣົພ ພຣະອານົນທ໌ເຖຣະ. ໃນວັນນຶ່ງເປັນວັນ ມຫາປະວໍຣະຕາ. ພຣະເຖຣະ ໄດ້ເຫັນຄວາມສວ່າງສໄວໄພໂຣຈນ໌ຂອງພຣະອາທິຕຍ໌. ຄວາມແຈ່ມໃສຂອງພຣະຈັນທຣ໌, ເຫັນຄວາມສງ່າງາມຂອງ ພຣະເຈົ້າ ປະເສນທິໂກສົລ ທຣົງເຄື່ອງສັຣພາພຣຕ໌ (ເຄື່ອງເຕັມຍົສ) ສເດັຈໄປສູ່ວິຫາຣ ເຫັນຄວາມຮຸ່ງເຮືອງ ຂອງ ພຣະກາລຸທາຍິເຖຣະຜູ້ກຳລັງນັ່ງເຂົ້າຊານຢູ່. ເບິ່ງຄວາມສວ່າງສໄວໄພໂຣຈນ໌ ຂອງພຣະພຸທຣເຈົ້າຈຶ່ງທູລສັຣເສີຍ ພຣະສຣີໂຣກາສ ຂອງ ພຣະສາສດາວ່າຍອດຢ້ຽມກວ່າແສງສວ່າງ ທັງປວງ. ພຣະອົງຄ໌ ຈຶ່ງຕຣັສພຣະຄາຖາ ດັ່ງທີ່ຍົກຂຶ້ນມານັ້ນ.

---

໖

ພາຫິຕະ ປາໂປ ຫິ ພຼຣາຫມະໂຕ
ສະມະຈະຣິຍາ ສະມະໂຕຕິ ວຸຈຈະຕິ
ປັພພາຊະຍະມັຕຕະໂນ ມະລັງ
ຕັສມາ ປັພພະຊິໂຕຕິ ວຸຈຈະຕິ ໆ໓໘໘ໆ

ຜູ້ທີ່ຊື່ວ່າ ພຣາຫມຕ໌ນັ້ນ ກໍຍ້ອນວ່າ ລະເສັຍຊຶ່ງບາປໄດ້, ທີ່ຊື່ວ່າ ສະມະຕະ ກໍຍ້ອນມີ ຈັຣຍາມັຣຍາທສງົບສງ່ຽມ, ທີ່ຊື່ວ່າ ບັຣພະຊິຕ ກໍຍ້ອນວ່າ ລະມົລທິນໄດ້.

# ເຣື່ອງ ອັລລະຕຣະບັຣພະຊິຕ

ພຣະບໍຣົມສາສດາ ທຣົງຜາຣົພ ບັຣພະຊິຕ ອົງຄ໌ນຶ່ງ ທີ່ບວຊພາຍນອກ ພຣະພຸທສາສນາ ເພິ່ນຄິດວ່າ ພຣະສມຕະໂຄດົມ ຮຽກສາວົກຂອງພຣະອົງຄ໌ຜູ້ບວຊແລ້ວວ່າ ບັຣພຊິຕ ເຮົາກໍບວຊແລ້ວ ເໝືອນກັນ ເຮົາກໍຄວນຮຽກເຮົາໄດ້ວ່າ ເປັນບັຣພຊິຕ ເຊັ່ນນັ້ນໄດ້ຄືກັນ.

ເມື່ອຄິດດັ່ງນີ້ແລ້ວ ຈຶ່ງເຂົ້າໄປເຝົ້າທູລຄວາມນັ້ນ ແດ່ ພຣະສາສດາ. ພຣະອົງຄ໌ ຈຶ່ງໄດ້ທຣົງຕຣັສ ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາໄວ້ ໃນຂ້າງຕົ້ນນິທານນີ້ ໃຫ້ເຫັນເຖິງ ຄຸຕລັມມ໌ ຂອງຜູ້ທີ່ເປັນສມຕະ.

໗

ນະ ພຣາຫ຺ມະຕັສສະ ປະຫະເຣຍຍະ
ນາສສະ ມຸຍເຈຖະ ພຣາຫມະໂຕ
ທິ ພຣາຫ຺ມະຕັສສະ ຫັນຕາຣັງ
ຕະໂຕ ທິ ຍັສສະ ມຸຍຈະຕິ ໆ໓໘໙ໆ

ບໍ່ຄວນ ກຸກກວນ (ເກາະຜິດ) ກັບພຣາຫມຕ໌ ຄື ນັກບວຊ ແລະ ພຣາຫມຕ໌ກໍ່ບໍ່ຄວນສແດງຄວາມໂກລແຄ້ນຕອບ. ຄົນທີ່ກຸກກວນພຣາຫມຕ໌ ເປັນຄົນທີ່ໜ້າຕິຕຽນ ແຕ່ວ່າ ພຣາຫມຕ໌ຜູ້ໂກລແຄ້ນຕອບນັ້ນ ເປັນທີ່ໜ້າ ຕ່ຳໜິຕິຕຽນ ຫລາຍກວ່າ.

໘

ນະ ພຣາຫ຺ມະຕັສເສຕະທະກິຍຈິ ເສຍໂຍ
ຍະທານິເສໂຄ ມະນະໂສ ປິເຍຫິ
ຍະໂຕ ຍະໂຕ ຫິງສະມະໂນ ນິວັຕຕະຕິ
ຕະໂຕ ຕະໂຕ ສັມມະຕິເມວະ ທຸກຂັງ ໆ໓໙໐ໆ

ບໍ່ມີອັນໃດຈະດີ ສຳຣັບ ພຣາຫມຕ໌ ເທົ່າກັບການ ຫັກຫ້າມໃຈ ຈາກສິ່ງທີ່ຊອບໃຈ ເມື່ອໃດ ເຂົາບໍ່ບຽດບຽນຄົນອື່ນ ເມື່ອນັ້ນແລ ຄວາມ-

ທຸກຂ໌ ກໍສງົບລົງ.

## ເຣື່ອງ ພຣະສາຣີບຸຕຣ໌ເຖຣະ

ພຣະບໍຣົມສາສດາ ທຣົງຜາຣົພ ພຣະສາຣີບຸຕຣ໌ເຖຣະ. ດັ່ງນີ້, ຍັງ ມີພຣາຫມຕ໌ ຜູ້ນຶ່ງ ເປັນຄົນມິຈສາທິຜຖິ ໄດ້ຍິນເຂົາສັຣເສີຼ ທ່ານ ພຣະ ສາຣີບຸຕຣ໌ເຖຣະວ່າ ເພິ່ນບໍ່ໂກຣແຄ້ນໃຫ້ຜູ້ໃດ ກໍຄິດຢາກຈະທົດລອງເບິ່ງ. ວັນນຶ່ງ ໄດ້ໄປພົ້ກັບເພິ່ນ ໃນເວລາທີ່ເພິ່ນກໍາລັງ ທ່ຽວບິຕທບາຕຢູ່ ຈຶ່ງ ເອົາຝ່າມືຕີບຫລັງເພິ່ນຢ່າງແຮງ ຄັນເຫັນເພິ່ນບໍ່ໂກຣຮ້າຍໃຫ້ ກໍມີຄວາມ ເຫລື້ອມໃສຂໍຂະມາໂທສ ແລ້ວນິມົນຕ໌ເພິ່ນ ຮັບກັຕຕາຫາຣທີ່ເຮືອນຂອງ ຕົນ. ດັ່ງນັ້ນ, ຄັ່ງນັ້ນ, ມີປະຊາຊົນບາງພວກ ຮູ້ວ່າ ພຣາຫມຕ໌ ທຸບຕີ ພຣະເຖຣະ ຜູ້ ບໍ່ມີຄວາມຜິດອັນໃດ ກໍພາກັນໂກຣແຄ້ນ ຊຸກຊອນກັນ ຈະໄປທີ່ເຮືອນຂອງ ພຣາຫມຕ໌ ຈະທໍາຮ້າຍພຣາຫມຕ໌ ຄັນເຫັນພຣາຫມຕ໌ ກັບໃຈມີສັທລາໃນ ພຣະເຖຣະ ແລ້ວກໍພາກັນເລີກໜີໄປ.

ພຣະກິກຂຸ ທັງຫລາຍ ປະຊຸມສົນທະນາກັນ ກ່ຽວກັບເຣື່ອງນັ້ນ. ພຣະສາສດາ ໄດ້ສເດັຈໄປໃນທີ່ປະຊຸມນັ້ນ ຈຶ່ງຕຣັສ ພຣະຄາຖາ ດັ່ງທີ່ໄດ້ ຍົກຂຶ້ນມາໃນເບື້ອງຕົ້ນນັ້ນ.

---

ຝ

ຍັສສະ ກາເຍນະ ວາຈາຍະ

ມະນະສາ ນັຕຖິ ທຸກກະຜັງ
ສັງວຸຕັງ ຕິຫິ ຖາເນຫິ
ຕະມະຫັງ ພຸຣູມິ ພຣາຫຸມະຕັງ ໆ໓໙໑ໆ

ຜູ້ໃດ ບໍ່ມີຄວາມຊົ່ວທາງກາຍ, ວາຈາ ໃຈ, ສຳຣວມຣະວັງ ທັງສາມທວາຣນີ້, ຜູ້ນັ້ນ ເຮົາຮຽກວ່າ ພຣາຫມຕ໌.

## ເຣື່ອງ ນາງມຫາປະຊາບໍດີໂຄຕະມີ

ພຣະບໍຣົມສາສດາ ທຣົງຜາຣັພ ນາງມຫາປະຊາບໍດີ ໂຄຕະມີ ໄດ້ຮັບອຸປະສົມບົທ ດ້ວຍຮັບຄຣຸລັມມ໌ ໆ. ຕໍ່ມາພາຍຫລັງ ມີສຽງກ່າວກັນວ່າ ນາງໂຄຕະມີ ບອຊບໍ່ມີອຸປັຊຊາຍະອາຈາຣຍ໌ ຖືເອົາຜ້າກາສາວພັສຕຣ໌ ດ້ວຍມືຂອງຕົນເອງ. ຄັ້ງນັ້ນ, ນາງກິກຊຸນີ ທັງຫລາຍ ເກີດມີຄວາມສົງສັຍເລີຍບໍ່ ທຳອຸໂບສົຖ ປະວໍຣະຕາດ້ວຍ ຈຶ່ງໄດ້ພາກັນເຂົ້າເຝົ້າ ທູລຄວາມນັ້ນແດ່ ພຣະສາສດາ ພຣະອົງຄ໌ ຈຶ່ງຕຣັສວ່າ ເຮົາເປັນຜູ້ໃຫ້ຄຣຸລັມມ໌ ໆ ແກ່ນາງ ປະຊາບໍດີໂຄຕມີ, ເຮົາເອງ ເປັນອຸປັຊຊາຍະ ເຮົາເອງ ເປັນອາຈາຣຍ໌ທ່ານ ທັງຫລາຍ ບໍ່ຄວນຕິ ບໍ່ຄວນຣິ ບໍ່ຄວນສົງສັຍ ໃນຂໍ້ດານັ້ນ.

ແລ້ວຈຶ່ງຕຣັສ ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາໄວ້ ໃນຂ້າງຕົ້ນນີ້.

---

## ໑໐

ຍັມຫາ ທັມມັງ ວິຊາເນຍຍະ
 ສັມມາສັມພຸທທະເທສິຕັງ
ສັກກັຈຈັງ ຕັງ ນະມັສເສຍຍະ
 ອັຄຄິຫຸຕຕັງວະ ພຣາຫມະໂຕ ໆ໓໙໒ໆ

ເມື່ອຮູ້ທັມມ໌ ທີ່ ພຣະພຸທທເຈົ້າ ທຣົງສແດງ ຈາກບຸຄຄົລໃດ ກໍ່ຄວນເຄົາຣົພ ນອບນ້ອມ ບຸຄຄົລນັ້ນ ເໝືອນດັ່ງພຣາຫມຓ໌ ບູຊາໄຟ.

## ເຣື່ອງ ພຣະສາຣີບຸຕຣ໌ເຖຣະ

ພຣະບໍຣົມສາສດາ ທຣົງຜາຣົພ ພຣະສາຣີບຸຕຣ໌ເຖຣະ. ໃນຄາວທີ່ເພິ່ນຍັງສແວງຫາ ໂມກຂທັມມ໌ຢູ່ນັ້ນ ເພິ່ນໄດ້ຟັງອຣິຍສັຈຈ໌ ໂດຍຫຍໍ້ຈາກພຣະອັສສຊິເຖຣະ ແລ້ວບັຣລຸໂສດາປັຕຕິຜົລ. ພາຍຫລັງ ເພິ່ນໄດ້ດຳຣົງຢູ່ໃນອັຄຄສາວົກ ບາຣມີງູມີ, ເມື່ອເພິ່ນຮູ້ວ່າ ພຣະອັສສຊິເຖຣະ ຢູ່ ຕະທີ່ໃດ ເພິ່ນກໍ່ປະຄອງອັນຊລີ ນ້ອມນມັສກາຣໄປຍັງທິສນັ້ນ.

ພຣະກິກຂຸ ທັງຫລາຍ ທີ່ເຂົ້າໃຈຜິດ ເຄີຍກ່າວຕິຕຽນເພິ່ນວ່າໄຫວ້ທິສອັນເປັນກິຈຂອງນັກບວຊພາຍນອກພຸທທສາສນາ. ພຣະສາສດາ ຮັບສັ່ງໃຫ້ຫາຕົວມາຖາມ. ເພິ່ນຈຶ່ງທູລວ່າ ເຣື່ອງນີ້ ພຣະອົງຄ໌ທຣົງຊາບດີແລ້ວ.

ພຣະອົງຄ໌ ທຣົງສແດງເຫຕຸນັ້ນ ໃຫ້ກິກຂຸ ທັງຫລາຍຊາບ ແລ້ວຈຶ່ງໄດ້ ຕຣັສພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາໃນຂ້າງຕົ້ນນີ້.

---

## ໑໑

ນະ ຊະຜາຫິ ນະ ໂຄຕເຕຫິ
　　ນະ ຊັຈຈາ ໂຫຕິ ພຸຣາຫຸມະໂຕ
ຍັມຫິ ສັຈຈັລຈະ ລັມໂມ ຈະ
　　ໂສ ສຸຈິ ໂສ ພຸຣາຫຸມະໂຕ ໆ໑໑ລ໑ໆ

ບໍ່ແມ່ນຍ້ອນຈິ່ງຜົມໄວ້ຍາວເປັນຈຸກ, ບໍ່ແມ່ນຍ້ອນ ໂຄຕຣ໌ ຍ້ອນ ຕະກູລ, ບໍ່ແມ່ນຍ້ອນກຳເນີດ ທີ່ເກີດ (ເກີດໃນຕະກູລສູງສັກດິ) ທີ່ເຮັດໃຫ້ ຄົນເປັນ ພຣາຫມຕ໌. ໃຜ ໆ ກໍຕາມ ທີ່ມີສັຈຈະ ແລະ ທຣົງລັມມ໌ ຜູ້ນັ້ນ ທຽນຍ່ອມ ບໍຣິສຸທລິເລີສລ້ຳ ແລະ ເປັນ ພຣາຫມຕ໌.

## ເຣື່ອງ ຊຜົລພຣາຫມຕ໌

ພຣະບໍຣົມສາສດາ ທຣົງຜາຣົພ ຊະຜົລະພຣາຫມຕ໌ ຜູ້ນຶ່ງ. ເຂົາຜູ້ ນັ້ນ ເຊື່ອວ່າ ເຮົາເກີດໃນຕະກູລພຣາຫມຕ໌ ເປັນສຸຊາຕິ (ຊາຕິບໍຣິສຸທລິ)

ທັງຝ່າຍມາຣດາ ແລະ ບິດາ. ພຣະສມຕະໂຄດົມ ຮຽກສາວົກ ຂອງພຣະອົງຄ໌ວ່າ ພຣາຫມຕ໌ ດັ່ງນີ້ ເຮົາກໍຄວນຈະຮຽກເຮົາວ່າ ເປັນພຣາຫມຕ໌ ກໍໄດ້. ຄັນດໍາຣິດັ່ງນີ້ແລ້ວ ຈຶ່ງເຂົ້າໄປເຝົ້າທູລຄວາມນັ້ນ ແດ່ ພຣະສາສດາ ພຣະອົງຄ໌ ຈຶ່ງໄດ້ຕຣັສ ພຣະຄາຖາ ດັ່ງທີ່ຍົກຂຶ້ນມາໃນເບື້ອງຕົ້ນນີ້.

---

໑໔

ກິງ ເຕ ຊະຜາ ຫິ ທຸມເມທະ
ກິງ ເຕ ອະຊິນະສາຜິຍາ
ອັພກັນຕະຣັງ ເຕ ຄະຫະຕັງ
ພາຫິຣັງ ປະຣິມັຊຊະສິ ໆ໓໙໔ໆ

ເຈົ້າຄົນໂງ່ ເອີຍ, ຈິ່ງຜົມໄວ້ຍາວແລະໜັງສັຕວ໌ນັ້ນ ຈະມີປະໂຍຊນ໌ຫຍັງ ສໍາຣັບເຈົ້າ. ພາຍນອກເຈົ້າ ສະອາດສົດໃສ ແຕ່ ພາຍໃນເຈົ້ານັ້ນຮົກ.

## ເຣື່ອງ ກຸຫະກະພຣາຫມຕ໌

ພຣະບໍຣົມສາສດາ ທຣົງຜາຣົພ ກຸຫາກະພຣາຫມຕ໌ ໆ ຜູ້ມັກຂີ້ຕົວະຜູ້ນຶ່ງ ທີ່ປະພຶຕຣ໌ຕົນ ເໝືອນກັບເຈັຍ ຄື ຂຶ້ນຕົ້ນໄມ້ແລ້ວ ເອົາເທົ້າເກາະງ່າ

ໄມ້ ເອົາຫົວທ້ອຍລົງມາ ຮ້ອງປະກາສວ່າ ທ່ານທັງຫລາຍ ຈົ່ງເອົາສິ່ງນັ້ນສິ່ງນີ້ ໃຫ້ເຮົາ ຖ້າບໍ່ໃຫ້ເຮົາຈະປ່ອຍຕົວເຮົາໃຫ້ຕົກລົງມາຕາຍ ຈະເປັນເຫຕຸໃຫ້ບ້ານເມືອງຈິບຫາຍອາຍອອດ. ປະຊາຊົນທີ່ຢ້ານບ້ານເມືອງ ຈິບຫາຍໄປຕາມຄໍາປະກາສຂອງຊາຍຜູ້ນັ້ນ ກໍເອົາວັຕຖຸສິ່ງຂອງຕ່າງ ໆ ໄປໃຫ້ເຂົາຕາມປະສົງຄ໌.

ພຣະກິກຂຸ ທັງຫລາຍ ໄດ້ນໍາເອົາເຣື່ອງນັ້ນ ຂາບທູລ ແດ່ ພຣະສາສດາ ພຣະອົງຄ໌ ຈຶ່ງຕຣັສວ່າ ເຂົາບໍ່ໄດ້ຕົວະຄົນພຽງແຕ່ໃນຊາຕິນີ້ເທົ່ານັ້ນແມ່ນແຕ່ໃນຊາຕິປາງກ່ອນ ເຂົາກໍຕົວະຕົ້ມ ປະຊາຊົນເໝືອນກັນ. ບັດນັ້ນ, ພຣະອົງຄ໌ ຈຶ່ງຕຣັສ ອດີຕກາລ ນິທານ ໃນຄັ້ງທີ່ພຣາຫມຓ໌ນັ້ນ ເປັນດາບົສຂີ້ຕົວະທໍາກົລອຸບາຍ ໃຫ້ພຍາເຫັ້ຍນັບຖື ໂດຍຈະເອົາພຍາເຫັ້ຍມາບໍຣິໂກຄແຕ່ພຍາເຫັ້ຍຮູ້ທັນ ຈຶ່ງແລ່ນເຂົ້າໄປໃນຈອມປວກ ແລ້ວກ່າວຄໍາເຍາະເຍີ້ຍເມື່ອພຣະອົງຄ໌ ຈະທຣົງສແດງຖ້ອຍຄໍາ ຂອງພຍາເຫັ້ຍເຍີ້ຍດາບົສນັ້ນ ຈຶ່ງຕຣັສຊຶ່ງພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາ ໃນເບື້ອງຕົ້ນນີ້.

---

໑໖

ປັງສຸກູລະທະຣັງ ຊັນຕຸງ
ກິສັງ ຂະມະນິສັນຖະຕັງ
ເອກັງ ວະນັສມິງ ຊາຍັນຕິ

ຕະມະຫັງ ພຣູມິ ພຣາຫມະຕັງ ໑໓໙໕໑

ຜູ້ທຮົງ ຜ້າບັງສຸກຸລ ຜອມຈົນເຫັນແຕ່ເສັ້ນເອັນ ບຳເພັນຊານຢູ່ໃນປ່າປ່ຽວ ແຕ່ຜູ້ດຽວນັ້ນ ເຮົາຮຽກວ່າ ພຣາຫມຕ໌.

## ເຣື່ອງ ນາງ ກີສາໂຄຕະມີ

ພຣະບໍຣົມສາສດາ ທຮົງຜາຣົພ ພຣະນາງກີສາໂຄຕະມີ ເປັນຜູ້ເລີສກວ່າ ພຣະເຖຣີ ທັງຫລາຍ ທີ່ຖືຜ້າບັງສຸກຸລເປັນວັຕຣ. ວັນນຶ່ງ ນາງເຫາະໄປ ເພື່ອຈະເຂົ້າເຝົ້າ ພຣະສາສດາ ທີ່ພູເຂົາຄິຊຊະກູຜ ຄັນເຫັນທ້າວສັກກະພ້ອມດ້ວຍ ເທວບໍຣິສັທ ເຝົ້າຢູ່ກ່ອນແລ້ວ ກໍກັບໄປ. ທ້າວສັກກະຈຶ່ງທູລຖາມວ່າ ຜູ້ທີ່ມານັ້ນ ແລ້ວກັບໄປ ແມ່ນຜູ້ໃດ ພຣະເຈົ້າຂ້າ ?

ພຣະສາສດາ ຈຶ່ງຕຣັສຕອບວ່າ ນາງກີສາຖຄຕະມີ ແລ້ວພຣະອົງຄ໌ກໍທຮົງສແດງຄຸຕສົມບັຕິຂອງນາງ ດັ່ງພຣະຄາຖາ ທີ່ໄດ້ຍົກຂຶ້ນມາຂ້າງຕົ້ນນີ້

---

໑໔

ນະ ຈາຫັງ ພຣາຫມະຕັງ ພຣູມິ
ໂຍນິຊັງ ມັຕຕິສັມກະວັງ
ໂພວາທີ ນາມະ ໂສ ໂຫຕິ

ສະເວ ໂຫຕິ ສະກິຎຈະໂນ
ອະກິຎຈະນັງ ອະນາທານັງ
ຕະມະຫັງ ພຣູມິ ພ຺ຣາຫ຺ຓັງ ໆ໓໙໖ໆ

ພຽງແຕ່ວ່າ ເກີດມາ ໃນຕະກູລພຣາຫມຓ໌ ຫຣືວ່າ ມີມາຣດາ ເປັນ ພຣາຫມຓ໌ ເທົ່ານັ້ນ ເຮົາບໍ່ຮຽກເຂົາວ່າເປັນ ພຣາຫມຓ໌ ຫາກເຂົາຍັງມີກິເລສຢູ່ ເຂົານັ້ນເປັນພຣາຫມຓ໌ ພຽງແຕ່ຊື່. ຜູ້ໃດໝົດກິເລສ ບໍ່ຢຶດໝັ້ນ ຖືໝັ້ນ ໃນສິ່ງທັງປວງ ເຮົາຮຽກ ຜູ້ນັ້ນວ່າ ເປັນພຣາຫມຓ໌.

## ເຣື່ອງ ພຣາຫມຓ໌

ພຣະບໍຣົມສາສດາ ທຣົງຜາຣົພ ພຣາຫມຓ໌ ຜູ້ນຶ່ງ. ພຣາຫມຓ໌ ຜູ້ນັ້ນ ຄິດວ່າ ພຣະສມຕະໂຄດົມ ຮຽກສາວົກຂອງພຣະອົງຄ໌ວ່າ ພຣາຫມຓ໌ ເຮົາກໍເກີດໃນກຳເນີດ ພຣາຫມຓ໌ ເຮົາກໍຄວນຮຽກເຮົາວ່າ ພຣາຫມຓ໌ ກໍ ໄດ້. ເມື່ອຄິດເຊັ່ນນັ້ນແລ້ວ ຈຶ່ງເຂົ້າໄປເຝົ້າ ທູລເນື້ອຄວາມນັ້ນ ແດ່ ພຣະສາສດາ. ພຣະອົງຄ໌ ຈຶ່ງຕຣັສພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາໃນຂ້າງຕົ້ນນີ້.

---

## ໑໕

ສັພພະສັຎໂຍຊະນັງ ເຊຕ຺ວາ

ໂຍ ເວ ນະ ປະຣິຕັສສະຕິ
ສັງຄາຕິຄັງ ວິສັງຍຸຕຕັງ
ຕະມະຫັງ ພຣູມິ ພຣາຫມະຕັງ ໆ໓໙໗ໆ

ຜູ້ໃດຕັດກິເລສ ເຄື່ອງຜູກພັນໄດ້ ໝົດສິ້ນ ບໍ່ມີຄວາມຫວາດຫວັ່ນ ຢ້ານກົວອັນໃດ, ໝົດພັນລະ ເປັນອິສຣະ ຈາກເຄື່ອງຈອງຈໍາ ຄື ຕົວກິເລສ ຜູ້ນັ້ນແລ ເຮົາຮຽກວ່າ ພຣາຫມຕ໌.

## ເຣື່ອງ ອຸຄຄະເສນະ

ພຣະບໍຣົມສາສດາ ທຣົງຜາຣົພ ບຸຕຣ໌ເສຖີຜູ້ນຶ່ງ ຊື່ອຸຄຄະເສນະ ໄດ້ຟັງ ພຣະທັມມເທສນາ ໃນຂຕະທີ່ຕົນພວມຢືນຢູ່ປາຍໄມ້ໄຕ່ລວດ(໑) ໄດ້ສໍາເຣັຈພຣະອຣຫັຕ ພ້ອມດ້ວຍປະຕິສັມພິທາ ແລ້ວລົງມາຖວາຍບັງຄົມ ພຣະສາສດາ ທູລຂໍບັຣພະຊາອຸປສົມບົທ ພຣະພຸທທອົງຄ໌ກໍປະທານໃຫ້ດ້ວຍ ວິທີ ເອຫິ ພິກຂຸ ອຸປສົມບົທ. ຄັ້ງນັ້ນ, ພິກຂຸ ທັງຫລາຍ ຈຶ່ງໄດ້ຖາມພຣະ ເຖຣະວ່າ ເມື່ອທ່ານຈະລົງຈາກປາຍໄມ້ ທ່ານບໍ່ຢ້ານບໍ ? ພຣະເຖຣະຕອບວ່າ ເຮົາໝົດຄວາມຢ້ານແລ້ວ. ພິກຂຸ ທັງຫລາຍຫາວ່າ ເພິ່ນອວດ ອຣຫັຕຜົລ ຈຶ່ງທູລຄວາມນັ້ນ ແດ່ ພຣະສາສດາ ພຣະອົງຄ໌ທຣົງຮັບຮອງວ່າ ເພິ່ນກ່າວ ຕາມຄວາມຈິງ. ແລ້ວຈຶ່ງຕຣັສພຣະຄາຖາດັ່ງທີ່ໄດ້ຍົກຂຶ້ນມາຂ້າງຕົ້ນນີ້.

---

## ໑໖

ເຈຕ຺ວາ ນັຕລິງ ອະຣະຕັຍຈະ
ສັນທານັງ ສະຫະນຸກກະມັງ
ອຸກຂິຕຕະປະລິໝັງ ພຸທລັງ
ຕະມະຫັງ ພ຺ຣູມິ ພ຺ຣາຫ຺ມະຕັງ ฯ໓໙໙ฯ

ຜູ້ທີ່ຕັດປອກ (ຄວາມໂກຣ) ເຊືອກໜັງ (ຕັຫາ) ເຊືອກປ່ານ (ຄວາມເຫັນຜິດ) ພ້ອມທັງ ອະນຸສັຍ ກິເລສ ຖອດໄມ້ສລັກໄລ ຄື ອະວິຊຊາ ຮູ້ແຈ້ງອະຣິຍສັຈແລ້ວ ເຮົາຮຽກວ່າ ພຣາຫມຕ໌.

## ເຣື່ອງພຣາຫມຕ໌ ໔ ຄົນ

ພຣະບໍຣົມສາສດາ ທຣົງຜາຣົພ ພຣາຫມຕ໌ ໔ ຄົນ ຕ່າງກໍມີງົວຜູ້ຜູ້ລະໂຕ ຊື່ວ່າ ຈູຣະໂຣຫິຕະ ໂຕນຶ່ງ, ມຫາໂຣຫິຕະ ໂຕນຶ່ງ. ຕ່າງຄົນຕ່າງກໍອວດວ່າ ງົວຂອງຕົນແຮງ ຢາກຈະທົດລອງແຮງຂອງງົວ ໔ ໂຕນັ້ນວ່າໂຕໃດຈະແຮງກວ່າກັນ. ໃນການແຂ່ງຂັນກັນນີ້ ເຂົາເອົາດິນຊາຍບັນທຸກໃສ່ເຕັມກວຽນ ແລ້ວໃຫ້ງົວສອງໂຕນັ້ນລາກໄປ ງົວທັງສອງ ບໍ່ສາມາຖທີ່ຈະລາກໄປໄດ້ ຈົນເຊືອກທີ່ຜູກນັ້ນຂາດ.

ພຣະກິກຂຸ ທັງຫລາຍ ໄດ້ເຫັນ ຈຶ່ງນຳເອົາເຣື່ອງນັ້ນ ຂຶ້ນຂາບທູລ

ແດ່ ພຣະສາສດາ ພຣະອົງຄ໌ ຈຶ່ງຕຣັສວ່າ ປອກ ແລະ ເຊືອກທັງຫລາຍນັ້ນ ເປັນເຄື່ອງຜູກພາຍນອກ ທ່ານທັງຫລາຍ ຄວນຕັດປອກ ຕັດເຊືອກພາຍໃນຄື *ປອກ*ຄືຄວາມໂກລ ເຊືອກຄື ຕັຓຫາ ອັນເປັນພາຍໃນແລ້ວ (ຈຶ່ງຈະຫລຸດພົ້ນໄປໄດ້. ແລ້ວພຣະອົງຄ໌ຈຶ່ງຕຣັສ ພຣະຄາຖາ ດັ່ງທີ່ຍົກຂຶ້ນມາໃນເບື້ອງຕົ້ນນີ້.

ປອກ ຄຳນີ້ ມີກ່າວໄວ້ໃນ ເວສັນຕຣຊາດົກວ່າ ຕັຓຫາ ຮັກລູກເໝືອນດັ່ງປອກສຸບຄໍ, ຕັຓຫາຮັກເມັຍ ເໝືອນດັ່ງປ້ປອກຜູກສອກ ຕັຓຫາຮັກສົມບັຕິເຂົ້າຂອງ ເໝືອນດັ່ງປອກສຸບຕີນ.

---

## ໑໗

ອັກໂກສັງ ວະລະພັນລັຓຈະ
　　ອະທຸຍໂກ ໂຍ ຕິຕິກຂະຕິ
ຂັນຕີ ພະລັງ ພະລານີກັງ
　　ຕະມະຫັງ ພຸຣູມິ ພຸຣາຫມະຕັງ ຯລຯ

ຜູ້ໃດບໍ່ໂກລຮ້າຍ, ອົດທົນຕໍ່ການດ່າປ້ອຍ ແລະ ການລົງໂທສຈອງຈຳ ມີຂັນຕິເປັນກຳລັງ ຜູ້ນັ້ນແລ ທີ່ເຮົາຮຽກວ່າ ພຣາຫມຕ໌.

# ເຣື່ອງ ອັກໂກສກະຠາຣະທວາຊະ

ພຣບໍຣົມສາສດາ ທຣົງພຣະຜາຣົພຊຶ່ງ ອັກໂກສະກະຠາຣະທວາຊະ ພຣາຫມຓ໌ ຜູ້ທີ່ ປ້ອຍດ່າ ພຣະພຸທຘອົງຄ໌. ໃນວັນນຶ່ງ ໄດ້ມີກາຣປະຊຸມ ບັນດາ ພຣາຫມຓ໌ ຜູ້ທີ່ເປັນມິຈຉາທິຏຐິ, ເວັ້ນໄວ້ແຕ່ນາງ ຘະນັຍຊານີ ພຣາຫມຓີ ເປັນສັມມາທິຏຐິ ຜູ້ໂສດາບັນ ແລະເປັນເອື້ອຍໄພ້ ຂອງທ່ານ ອັກໂກສະກະຠາຣະທວາຊະ ທີ່ເຂົ້າຮ່ວມກອງປະຊຸມນັ້ນ.

ນາງພຣາຫມຓີ ຜູ້ນີ້ ໃນວລາໃດ ທີ່ລາວເຮັດພັ້ງພາດເຜີ ຫຣື ຈາມໄອ ກໍຈະອຸທານຂຶ້ນວ່າ "ນະໂມ ຕັສສະ ຠະຄະວະໂຕ ອະຣະຫະໂຕ ສັມມາ ສັມພຸທຘັສສະ" ດັ່ງນີ້ ສເມີ.

ໃນວັນປະຊຸມກັນນັ້ນ ນາງພລາດລົ້ມ ຈຶ່ງກ່າວອຸທານນັ້ນຂຶ້ນດ້ວຍ ສຽງດັງ. ພຣາຫມຓ໌ ຜູ້ເປັນສາມີ ກໍດ່າປ້ອຍ ນາງພຣາຫມຓີນັ້ນຕ່າງ ໆ ນາ ໆ ແລະຄິດຈະໂຕ້ຖຽງ ກັບ ພຣະຜູ້ມີພຣະຠາຄເຈົ້າ ຈຶ່ງເຂົ້າໄປເຝົ້າ ແຕ່ ບໍ່ແດງຄວາມເຄົາຣົພ ແລ້ວຖາມບັຍຫາຘັມມ໌ ພຣະອົງຄ໌ ກໍທຣົງສແດງໃຫ້ ພຣາຫມຓ໌ນັ້ນ ເກີດຄວາມເຫລື້ອມໃສ ແລ້ວບວຊ ສໍາເຣັຈ ພຣະອຣຫັຕ.

ຍ້ອນວ່າອ້າຍຂອງຕົນ ໄປບວຊນີ້ແລ ອັກໂກສະກະຠາຣະທວາຊະ ຈຶ່ງ ເຂົ້າໄປໂຕ້ບັຍຫາ ກັບພຣະສາສດາອີກ ແຕ່ ພຣະສາສດາ ທົນຕໍ່ກາຣ ໂກຘຮ້າຍຂອງພຣາຫມ໌ ແລ້ວທຣົງສັ່ງສອນໃຫ້ພຣາຫມຓ໌ ເກີດສັທຘາໃນ ພຣະອົງຄ໌. ຠິກຂຸ ທັງຫລາຍ ປະຊຸມສັຣເສີຍ ຂັນຕິຄຸຓ ພຣະອົງຄ໌ຈຶ່ງຕຣັສ ພຣະຄາຖາ ດັ່ງທີ່ຍົກຂຶ້ນມານັ້ນ.

## ໑໗

ອັກໂກລະນັງ ອະຕະວັນຕັງ
ສີລະວັນຕັງ ອະນຸສສະທັງ
ທັນຕັງ ອັນຕິມະສາຣີຣັງ
ຕະມະຫັງ ພຣູມິ ພຣາທມະນັງ ໆ໔໐໐ໆ

ຜູ້ໃດ ບໍ່ມັກໂກລຮ້າຍ ເປັນຜູ້ທຣົງສີລ, ໝົດກິເລສ ເຝິກຝົນຕົນ ມີຊີວິຕຢູ່ໃນໂລກນີ້ ເປັນຄັ້ງສຸດທ້າຍ. ຜູ້ນັ້ນ ເຮົາຮຽກວ່າ ພຣາຫມຕ໌.

## ເຣື່ອງ ພຣະສາຣີບຸຕຣ໌ ເຖຣະ

ໃນກາລະຄັ້ງນຶ່ງ, ພຣະບໍຣົມສາສດາ ທຣົງຜາຣົພ ເຖິງເຣື່ອງ ພຣະສາຣີບຸຕຣ໌ ວັນນຶ່ງ, ເພິ່ນໄດ້ທ່ຽວໄປບິຕຫບາຕ ພ້ອມກິກຂຸ ເປັນຈຳນວນມາກ ພໍໄປເຖິງເຮືອນມາຣດາ ຂອງເພິ່ນ ທີ່ ນາລກະຄາມ. ມາຣດາ ຂອງເພິ່ນນັ້ນ ເປັນມິຈສາທິຍກີ ບໍ່ເຊື່ອໃນພຣະສາສດາ.

ຄັນນາງ ເຫັນພຣະສາຣີບຸຕຣ໌ ພາກິກຂຸ ທັງຫລາຍມາ ເປັນຈຳນວນຫລາຍ ຈຳເປັນຕ້ອງຮັບຮອງ ລ້ຽງດູໄປຕາມສົມຄວນ ບາດແລ້ວກໍປ້ອຍດ່າພຣະສາຣີບຸຕຣ໌ໄປຕ່າງ ໆ ນາ ໆ. ຍ້ອນວ່າ ນາງຄຽດແຄ້ນ ພຣະສາຣີບຸຕຣ໌ປະລະທຣັພຍ໌ສົມບັຕິໄປບວຊ. ເຖິງຈະເປັນຢ່າງນັ້ນ ພຣະສາຣີບຸຕຣ໌ ກໍບໍ່ໂຕ້

ຕອບ ບໍ່ໄດ້ໂກລຮ້າຍມາຣດາ ຂອງເພິ່ນ ແຕ່ຢ່າງໃດ.

ຄັນກັບຄືນມາຍັງ ນາລັນທາແລ້ວ ກິກຂຸ ທັງຫລາຍ ຈຶ່ງປະຊຸມກັນ ສັຣເສີຍຄຸຓ ຂອງພຣະເຖຣະ ທີ່ບໍ່ໂກລຮ້າຍໃຫ້ແກ່ ມາຣດາ. ພຣະສາສດາ ໄດ້ສເດັຈໄປຍັງ ທີ່ປະຊຸມນັ້ນ ທຣົງຊາບຄວາມນັ້ນແລ້ວ ພຣະຍອດແກ້ວ ສັພພັຍຍູ ຈຶ່ງຕຣັສ ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາໃນເບື້ອງຕົ້ນນີ້.

---

໑໙

ວາຣິ ໂປກຂະຣະປັຕເຕວະ
ອາຣັຄເຄຣິວະ ສາສະໂປ
ໂຍ ນະ ລິມປະຕິ ກາເມສຸ
ຕະມະຫັງ ພ຺ຣູມິ ພ຺ຣາຫ຺ມະຓັງ ຯ໔໐໑ຯ

ຜູ້ໃດບໍ່ຕິດຢູ່ໃນກາມ, ເໝືອນດັ່ງຢາດນ້ຳ ທີ່ບໍ່ຕິດຢູ່ໃນໃບບົວແລະ ເມັດຜັກກາດ ບໍ່ຕິດຕັ້ງຢູ່ປົນປາຍເຂັມໄດ້ ຜູ້ນັ້ນເຮົາຮຽກວ່າ ພຣາຫມຓ.

## ເຣື່ອງ ນາງອຸບົລວັຓຓາເຖຣີ

ພຣະບໍຣົມສາສດາ ທຣົງ ພຣະຜາຣົພ ນາງອຸບົລວັຓຓາເຖຣີ. ໃນ

ເວລາທີ່ ນັນທະມານົພ ປະທຸສຮ້າຍ (ຂົ່ມຂືນຊຳເຮົາ) ພຣະນາງນັ້ນແລ້ວ ມະຫາຊົນກ່າວກັນວ່າ ພຣະຂີຕາສົພ ຜູ້ສິ້ນອາສວະແລ້ວ ເນື້ອໜັງຍັງສົດຊື່ນຢູ່ ບໍ່ແມ່ນໄມ້ແຫ້ງ ຫຣື ໂພນປອກ ຄົງຍັງຍິນດີໃນກາມນັ້ນຢູ່.

ພຣະສາສດາ ໄດ້ສເດັຈມາຍັງທີ່ປະຊຸມນັ້ນ ຕຣັສວ່າ ຂີຕາສົພ ບໍ່ຍິນດີໃນກາມ ເໝືອນນໍ້າໃນໃບບົວ ແລະ ແກ່ນ-ເມັດ ຜັກກາດ ທີ່ປາຍແຫ່ງເຫລັກແຫລມ ບໍ່ຕິດຕັ້ງຢູ່ໄດ້. ພຣພະຂີຕາສົພ ກໍສັນນັ້ນ. ບັດນັ້ນ ພຣະອົງຄ໌ ຈຶ່ງໄດ້ຕຣັສ ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາໃນຂ້າງຕົ້ນນີ້.

---

## ໔໐

ໂຍ ທຸກຂັສສະ ປະຊານາຕິ
　　ອິເຂວະ ຂະຍະມັຕຕະໂນ
ປັນນະການັງ ວິສັງຍຸຕຕັງ
　　ຕະມະຫັງ ພຸຣູມິ ພຸຣາຫມະຕັງ ໑໔໐໔໑

ຜູ້ທີ່ຮູ້ຊຶ່ງທຸກຂ໌ ດັບທຸກຂ໌ໄດ້ ໃນໂລກນີ້, ຜູ້ນັ້ນ ຍ່ອມໝົດການະແບກຫາມ ກິເລສ ເປັນອິສຣະຈາກກິເລສ ເຮົາຮຽກຜູ້ນັ້ນວ່າ ພຣາຫມຕ໌.

# ເຣື່ອງ ອັຍຍະຕຣະພຣາຫມນ໌

ພຣະບໍຣົມສາສດາ ທຣົງພຣະຜາຣົພ ພຣາຫມນ໌ ຜູ້ນຶ່ງ ພຣາຫມນ໌ ຜູ້ທີ່ກ່າວເຖິງນີ້ ມີທາສຄົນນຶ່ງ ໄດ້ໜີໄປບວຊໂດຍບໍ່ໄດ້ຮັບອະນຸຍາຕຈາກ ພຣາຫມນ໌ ຜູ້ເປັນນາຍຈ້າງ. ເມື່ອເພິ່ນບວຊແລ້ວ ກໍຕັ້ງໜ້າບໍາເພັນພຽຣ ຈົນສໍາເຣັຈ ພຣະອຣຫັຕ. ໃນເວລານັ້ນ, ພຣະສາສດາ ຍັງບໍ່ທັນບັນຍັຕິ ພຣະວິນັຍເຣື່ອງການບວຊທາສ. ພຣາຫມນ໌ ຜູ້ເປັນນາຍໄດ້ທ່ຽວຕິດຕາມ ຫາມາ ນານແລ້ວແຕ່ ບໍ່ເຫັນ.

ໃນວັນນຶ່ງ, ພຣາຫມນ໌ໄດ້ໄປເຫັນເພິ່ນທ່ຽວບິຓທບາຕ ກັບພຣະ ສາສດາ ຈຶ່ງເຂົ້າໄປຈັບຊາຍຈີວຣຂອງເພິ່ນໄວ້ ເພື່ອບໍ່ໃຫ້ໜີໄປ. ພຣະ ສາສດາ ທຣົງທອດພຣະເນຕຣ໌ເຫັນ ຈຶ່ງຮັບສັ່ງຖາມວ່າ ເປັນຢ່າງໃດກັນ. ພຣາຫມນ໌ ຜູ້ນັ້ນ ຈຶ່ງທູລວ່າ ກິກຂຸ ອົງຄ໌ນີ້ ເປັນທາສຂອງຂ້າພຣະອົງຄ໌ ພຣະສາສດາ ຈຶ່ງຕຣັສວ່າ ກິກຂຸອົງຄ໌ນີ້ ເປັນຜູ້ມີການະ ອັນປົງເສັຍແລ້ວ. ພຣາຫມນ໌ໄດ້ຍິນຮັບສັ່ງເຊັ່ນນັ້ນກໍເຂົ້າໃຈໄລດວ່າ ເພິ່ນເປັນພຣະອຣຫັນຕ໌ ແລ້ວກໍປ່ອຍໃຫ້ເພິ່ນໄປ. ພຣະສາສດາຈຶ່ງຕັສພຣະຄາຖາ ດັ່ງທີ່ກ່າວມານັ້ນ.

---

## ໔໑

ຄັມກີຣະປັຍຍັງ ເມຍາວິ
　　ມັຄຄາມັຄຄັສສະ ໂກວິທັງ

ອຸຕຕະມັຕຕັງ ອະນຸປປັຕຕັງ
ຕະມະຫັງ ພຣູມິ ພຸຣາຫະມະຕັງ ໆ໔໐໓ໆ

ຜູ້ທີ່ມີປັນຍາ ເລິກເຊິ່ງ ສລຽວສລາດ ເລືອກຫາ ຊ່ອງທາງວ່າ ອັນໃດຜິດແລະອັນໃດຖືກ ທຽນຍ່ອມ ບັລລຸເຖິງຈຸດໝາຍປາຍທາງອັນອຸດົມ ໂດຍລຳດັບ ເຮົາຮຽກຜູ້ນັ້ນວ່າ ເປັນພຣາຫມຕ໌.

# ເຣື່ອງ ນາງເຂມາພິກຂຸນີ

ພຣະບໍຣົມສາສດາ ທຣົງພຣະຜາຣົພ ນາງ ເຂມາພິກຂຸນີ. ໃນຣາຕຣີ ນຶ່ງ ນາງຄະໄດ້ໄປເຝົ້າພຣະສາສດາທທີ່ພູເຂົາຄະຊຸະກູຜ ເມື່ອໄດ້ເຫັນທ້າວ ສັກກະ ຜູ້ເປັນຈອມແຫ່ງຫວຍເທພຍ໌ ນມັສສການ ພຣະສາສດາຢູ່ກ່ອນ ແລ້ວຈຶ່ງຢືນໃນອາກາສ ຖວາຍບັງຄົມ ພຣະສາສດາ ແລ້ວກໍກັບໄປ. ທ້າວ ສັກກະເທວຣາຊ ໄດ້ທອດພຣະເນຕຣ໌ເຫັນ ຈຶ່ງທູລຖາມວ່າ ແມ່ນໃຜທີ່ມາ ຢືນຖວາຍບັງຄົມແລ້ວກັບໄປ. ພຣະສາສດາ ຈຶ່ງຕຣັສບອກວ່າ ຜູ້ນັ້ນຄືນາງ ເຂມາພິກຂຸນີ ເປັນຊູ້ມີປັນຍາສລຽວສລາດ ແລເວຈຶ່ງຕຣັສ ພຣະຄາຖາ ດັ່ງ ທີ່ໄດ້ຍົກຂຶ້ນມາໃນຂ້າງຕົ້ນນີ້.

---

# ໔໔

ອະສັງສັຕຖັງ ຄະຫັຕເຖຫິ
ອະນາຄາເຣຫິ ຈູກະຍັງ
ອະໂນກະສາຣິງ ອັປປິຈສັງ
ຕະມະຫັງ ພຣູມິ ພຣາຫມະຕັງ ໒໔໗໔໑

ຜູ້ທີ່ບໍ່ກຸກກີ້ວ ຄຸກຄີ ສນິດສນົມຢູ່ກັບບຸຄຄົລ ທັງສອງຝ່າຍ ຄື ຝ່າຍຄຣືຫັສຖ໌ ແລະ ບັຣພະຊິຕ (ອະນາຄາຣິກ) ທ່ຽວໄປຄົນດຽວ ບໍ່ຕິດຢູ່ກັບຖິ່ນ ສັນໂດຫ ເຮົາຮຽກຜູ້ນັ້ນວ່າ ເປັນພຣາຫມຕ໌.

## ເຣື່ອງ ພຣະປັພກາຣະວາສີດິສສະເຖຣະ

ພຣະບໍຣົມສາສດາ ທຣົງຜາຣັພ ພຣະປັພກາຣະວາສີດິສສເຖຣະ: ເມື່ອເພິ່ນຮຽນ ກັມມຖານ ໃນສຳນັກຂອງພຣະອົງຄ໌ແລ້ວ ໄດ້ອອກໄປອາສັຍຢູ່ທີ່ເງີບຜາແຫ່ງນຶ່ງ ອັນເປັນທີ່ສະບາຍ. ແຕ່ເງີບແຫ່ງນັ້ນ ໄດ້ມີເທວະດາ ອົງຄ໌ນຶ່ງອາສັຍຢູ່ກ່ອນແລ້ວ. ເທວດາບໍ່ປາຖນາໃຫ້ເພິ່ນຢູ່ ແຕ່ບໍ່ສາມາຖທີ່ຈະໃຫ້ເພິ່ນອອກໜີໄປໄດ້ ແລະກໍບໍ່ສາມາຖຈະທຳຮ້າຍເພິ່ນ ດ້ວຍອຳນາຈສີລອັນບໍຣິສຸທລິຂອງເພິ່ນ, ນັບຕັ້ງເພິ່ນອຸປສົມບົທ ເປັນຕົ້ນມາ. ເພື່ອຈະຫາວິທີຂັບໄລ່ ພຣະເຖຣະອອກຈາກເງີບຜາແຫ່ງນັ້ນ ເທວະດານັ້ນ ຈຶ່ງໄປ

ເຂົ້າສິງ ບຸຕຣ໌ຂອງ ອຸບາສິກາ ຜູ້ເປັນອຸປັຝກາຍິກາຂອງພຣະເຖຣະ ແລ້ວອອກປາກວ່າ ເຮົາບໍ່ຕ້ອງການເຄື່ອງສັງເວີຍ ອັນໃດທັງໝົດ ຖ້າທ່ານຂໍນ້ຳລ້າງເທົ້າ ພຣະປັພກາຣະວາສີດິສສະເຖຣະ ມາຣິດສີສະບຸຕຣ໌ຂອງທ່ານແລ້ວເຮົາກໍຈະໄປ.

ໃນວັນຮຸ່ງຂຶ້ນ ພຣະເຖຣະ ກໍໄປບິຕຫບາຕ ອຸບາສິກາ ກໍກະທຳດັ່ງທີ່ບຸຕຣ໌ຊາຍບອກນັ້ນ. ຄັນພຣະເຖຣະກັບມາຈາກບິຕຫບາຕ ເທວະດາຈຶ່ງມາໄລ່ເພິ່ນອອກຈາກເງີບຜານັ້ນ ໂດຍກ່າວຫາເພິ່ນວ່າ ກະທຳເວຊກັມມ໌ ເປັນໝໍຢາປົວຄົນ ມີສີລດ່າງພ້ອຍແລ້ວ ຄືເປັນຜູ້ມີສີລບໍ່ບໍຣິສຸທລີ. ພຣະເຖຣະເຫັນວ່າການກະທຳນັ້ນບໍ່ເປັນເວຊກັມມ໌ ແລ້ວກໍເລີຍສຳຣວຈເບິ່ງສີລຂອງຕົນນັບຕັ້ງແຕ່ມື້ອຸປສົມບົທ ເປັນຕົ້ນມາ ເຫັນວ່າບໍ່ດ່າງພ້ອຍ ແມ່ນແຕ່ໜ້ອຍດຽວ. ເພິ່ນກໍເກີດປີຕິເປັນກຳລັງ ເມື່ອປີຕິຣະງັບລົງແລ້ວ ກໍໄດ້ສຳເຣັຈພຣະອຣຫັຕ ໃນເວລານັ້ນເອງ.

ຄັນອອກພັຣຫາແລ້ວ ເພິ່ນກໍໄດ້ມາເຝົ້າ ພຣະສາສດາ ພຣະອົງຄ໌ໄດ້ທຣົງຍົກຍ້ອງ ສັຣເສີນ ໃນການທີ່ຫລີກອອກຈາກໝູ່ຄຕະ ໄປຢູ່ທີ່ເງີບຜາ ຈົນໄດ້ບັຣລຸພຣະອຣຫັຕ ແລ້ວຈຶ່ງຕຣັສພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາໃນຂ້າງຕົ້ນນີ້.

---

# ໔໑

ນິທາຍະ ທັດາທັງ ກູເຕສຸ
ຕະເສສຸ ຖາວະເຣສຸ ຈະ
ໂຍ ນະ ຫັນຕິ ນະ ຆາເຕຕິ
ຕະມະທັງ ພຣູມິ ພຣາຫຸມຕັງ ໑໔໐໕໑

ຜູ້ທີ່ງົດເວັ້ນ ຈາກການບຽດບຽນ ສັຕວ໌ອື່ນ ຄົນອື່ນ ບໍ່ວ່ານ້ອຍ ຫລື ໃຫຍ່, ບໍ່ທຳການຂ້າເອງທັງບໍ່ສັ່ງໃຫ້ຜູ້ອື່ນຂ້າ ເຮົາຮຽກຜູ້ນັ້ນວ່າ ພຣາຫມຕ໌

## ເຣື່ອງ ອັຣຸຕຕຣະກິກຂຸ

ພຣະບໍຣົມສາສດາ ທຮົງຜາຣົພ ກິກຂຸ ອົງຄ໌ນຶ່ງ ທີ່ຮຽນກັມມຖານ ໃນສຳນັກຂອງພຣະອົງຄ໌ ແລ້ວອອກໄປບຳເພັຍພຽຣຢູ່ໃນປ່າ ຈົນສຳເຣັຈ ພຣະອຣຫັຕ ບັດນັ້ນ ເພິ່ນຄິດຢາກມາເຝົ້າ ພຣະສາສດາ ຈຶ່ງອອກເດີນທາງ ມາ. ໃນຣະຫວ່າງທາງນັ້ນ ເພິ່ນເຫັນສຕຣີຄົນນຶ່ງ ຜິດຖຽງກັນກັບສາມີ ໜີອອກຈາກເຮືອນ ເພື່ອຈະໄປສູ່ຕະກູລຂອງຕົນ ເມື່ອເຫັນກິກຂຸຍ່າງຜ່ານ ມາ ນາງກໍຍ່າງຕາມຫລັງເພິ່ນໄປ. ຄັນສາມີອອກຕິດຕາມມາ ກໍມາພໍ້ກັຣຍາ ຂອງຕົນຍ່າງຕາມຫລັງ ພຣະກິກຂຸອົງຄ໌ນັ້ນ. ເມື່ອເຫັນເຊັ່ນນັ້ນ ກໍເຂົ້າໃຈ ວ່າ ກິກຂຸ ເພິ່ນລັກກັຣຍາຂອງຕົນໄປ ຈຶ່ງເຂົ້າໄປຕົບຕີເພິ່ນ ໃຫ້ສົມກັບ

ຄວາມໂກລແຄ້ນຂອງຕົນແລ້ວ ກໍພາພັຣຍາຂອງຕົນກັບຄືນບ້ານ.

ຄັນເພິ່ນ ເດີນທາງມາເຖິງ ພຣະເຊຕວັນວິຫາຣແລ້ວ ກິກຂຸ ທັງ ຫລາຍ ກໍຕ້ອນຮັບເພິ່ນຕາມສມຕະກິຈ. ເມື່ອເຫັນສີສະຂອງເພິ່ນໄຄ່ ບວມ ຊຽວໄປໝົດ ຈຶ່ງຖາມເພິ່ນ ເພິ່ນກໍເລົ່າເຣື່ອງທີ່ເປັນມານັ້ນ ໃຫ້ກິກຂຸ ທັງ ຫລາຍຟັງ.

ກິກຂຸ ທັງຫລາຍ ຈຶ່ງຖາມເພິ່ນວ່າ ເມື່ອເຂົາທໍາເຊັ່ນນັ້ນ ເພິ່ນກໍໄດ້ ໂກລຮ້າຍ ຕອບໂຕ້ເຂົາຄືນບໍ? ເພິ່ນຕອບວ່າ ຄວາມໂກລຮ້າຍຂອງເຮົານັ້ນ ບໍ່ມີ ຈຶ່ງບໍ່ໄດ້ໂກລຮ້າຍຕອບ. ກິກຂຸ ທັງຫລາຍ ຫາວ່າ ເພິ່ນນັ້ນ ເວົ້າອວດ ອຣຫັຕຜົລ ແລ້ວຈຶ່ງນໍາຄວາມນັ້ນຂຶ້ນຂາບທູລ ແດ່ ພຣະສາສດາ ພຣະອົງຄ໌ ຈຶ່ງຕຣັສວ່າ ຂີຕາສົພ ບໍ່ມີໂກລຮ້າຍໃຫ້ໃຜ. ແລ້ວຈຶ່ງຕຣັສ ພຣະຄາຖາດັ່ງ ທີ່ໄດ້ຍົກຂຶ້ນໄວ້ ໃນຂ້າງຕົ້ນນີ້.

---

## ໖໕

ອະຄິຣຸທລັງ ວິຣຸທເຂສຸ
　　ອັຕຕະທັຕເຫສຸ ນິພພຸຕັງ
ສາທາເນສຸ ອະນາທານັງ
　　ຕະມະທັງ ພຸຣູມິ ພຣາຫມະຕັງ ໑໔໐ຜົ໑

ອັນວ່າ ໃຜຜູ້ໃດ ກໍດີ ທີ່ບໍ່ໂກລຮ້າຍ ໃນທ່າມກາງຂອງກຸ່ມຊົນທີ່ໂກລຮ້າຍ ມີຄວາມສງົບສງ່ຽມ ໃນທ່າມກາງຂອງກຸ່ມຊົນຜູ້ຫາຣຕາໂທດຮ້າຍ ບໍ່ມີຄວາມຍຶດໝັ້ນ ຖືໝັ້ນ ໃນທ່າມກາງ ຂອງກຸ່ມຊົນ ຜູ້ຍຶດໝັ້ນ ຖືໝັ້ນ ຜູ້ນັ້ນແລ ທີ່ເຣົາຮຽກວ່າ ເປັນພຣາຫມຕ໌.

## ເຣື່ອງ ສາມເຕຣ ໔ ອົງຄ໌(໑)

ພຣະບໍຣົມສາສດາ ທຣົງຜາຣົພ ສາມເຕຣ ໔ ອົງຄ໌ ຄື: ສັງກິຈຈະສາມເຕຣ, ປັຕຫິຕະສາມເຕຣ, ໂສປາກະ ສາມເຕຣ ແລະ ເຣວຕະ ສາມະເຕຣ. ສາມເຕຣ ທັງ ໔ ອົງຄ໌ນີ້ມີອາຍຸ ໗ ຂວບເທົ່າກັນ.

ໃນກາລະຄັ້ງນຶ່ງ, ຍັງມີນາງ ພຣາຫມຕີ ຄົນນຶ່ງ ຢາກຈະທຳບຸຍລ້ຽງພຣາຫມຕ໌ ຄື ພຣະກິກຂຸຈຶ່ງບອກໃຫ້ສາມີ ໄປນິມົນຕ໌ ພຣະກິກຂຸ ໔ ອົງຄ໌. ແຕ່ ພຣະ ອົງຄ໌ທີ່ມີໜ້າທີ່ຮັບຜິດຊອບ ເຣື່ອງການຮັບນິມົນຕ໌ນັ້ນ ໄດ້ສົ່ງສາເຕຣອະຣຫັນຕ໌ ໔ ອົງຄ໌ນີ້ໄປຕາມນິມົນຕ໌. ເມື່ອ ນາງພຣາຫມຕີ ຜູ້ກັຣຍາ ໄດ້ເຫັນກໍບໍ່ດີໃຈ ໂກລຮ້າຍໃຫ້ສາມີວ່າ ເປັນຫຍັງຈຶ່ງໄປນິມົນຕ໌ ເອົາ ກິກຂຸ ຫຣື ພຣາຫມຕ໌ ຣຸ່ນ ເດັກ ຣຸ່ນລູກຂອງເຣົາມາ ເຣົາຕ້ອງການ ພຣາຫມຕ໌ ອາຍຸແກ່ ແລ້ວໃຫ້ສາມເຕຣທັງ ໔ ນັ້ນພັກຢູ່ຂ້າງນອກ ໃຫ້ສາມີໄປນິມົນຕ໌ໃໝ່. ບັດນີ້ ຈຶ່ງໄດ້ພຣະສາຣີບຸຕຣ໌ເຖຣະ ແລະ ພຣະໂມຄຄັລລານະເຖຣະ. ຄັນພຣະເຖຣະທັງ ໒ ມາເຫັນສາມເຕຣ ທັງ ໔ ນັ່ງຢູ່ ກໍ

ກັບຄືນໄປ. ນາງພຣາຫມຕີ ໃຫ້ສາມີໄປນິມົນຕຣ໌ພຣາຫມຕ໌ແກ່ ກັບໄປ ກັບມາຢູ່ຈົນສວາຍ. ຄັ້ງນັ້ນ ທ້າວສັກກະ ເທວຣາຊ ຈຶ່ງໄດ້ແປງເພສເປັນ ພຣາຫມຕ໌ເຖົ້າ ມາປະທັບຢູ່ໃນໂຮງສູດຂອງພຣາຫມຕ໌ ພຣາຫມຕ໌ ສາມີ ໄດ້ເຫັນກໍເຊີນມາ ນາງພຣາຫມຕີເຫັນກໍດີໃຈ. ຄັນທ້າວສັກກະ ສເດັຈມາ ເຖິງ ທອດພຣະເນຕຣ໌ ເຫັນພຣາຫມຕ໌ທັງ ໔ ກໍຍົກພຣະຫັຖ ນະມັສການ ນາງພຣາຫມຕີ ເຫັນດັ່ງນັ້ນ ຈຶ່ງຮ້າຍໃຫ້ສາມີວ່າ ຕາຍກູ ເປັນຫຍັງຈຶ່ງໄປ ນິມົນຕ໌ເອົາພຣາຫຕ໌ ບ້າມາ. ເມື່ອວ່າແລ້ວ ກໍຊ່ວຍກັນແກ່ລາກ ຕົບຕີຊຶ່ງ ພຣາຫມຕ໌ແກ່ນັ້ນອອກໄປ.

ຂຕະນັ້ນ, ທ້າວສັກກະ ຈຶ່ງແປງເພສໃຫ້ ໔ ພຣາຫມຕ໌ຮູ້ວ່າ ພຣະ ອົງຄ໌ນັ້ນ ເປັນພຣະອິນທຣ໌. ເມື່ອພຣາຫມຕ໌ ທັງ ໔ ຜົວເມັຍຮູ້ ກໍມີຄວາມ ຢ້ານກົວ ຈຶ່ງຖວາຍກັຕຕາຫານ ແກ່ ສາມເນນ ທັງ ໔ ແລະ ທ້າວສັກກະ ເສັຈແລ້ວ. ສາມເນນນັ້ນ ບາງອົງຄ໌ ກໍເຫາະໄປ ບາງອົງຄ໌ ກໍດໍາດິນໄປ.

ຄັນສາມເນນ ກັບມາຍັງ ພຣະວິຫານແລ້ວ ກິກຂຸ ທັງຫລາຍ ຈຶ່ງຖາມສາມເນນ ເຫລົ່ານັ້ນວ່າ ເມື່ອພຣາຫມຕ໌ກັກຕົວທ່ານໄວ້ນານເຊັ່ນ ນັ້ນ ທ່ານບໍ່ໂກລຮ້າຍໃຫ້ເຂົາບໍ? ຄັນສາມເນນຕອບວ່າ ບໍ່ໂກລຮ້າຍດອກ ຈຶ່ງກ່າວຫາວ່າ ສາມເນນ ບໍ່ບອກຕາມຄວາມເປັນຈິງ ແລ້ວຈຶ່ງນໍາເອົາເຣື່ອງ ນັ້ນຂາບທູລ ແດ່ ພຣະສາສດາ. ບັດນັ້ນ ພຣະອົງຄ໌ຈຶ່ງທຣົງຮັບຮອງວ່າເປັນ ຈິງ ແລ້ວຈຶ່ງ ຕຣັສຊຶ່ງ ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາ ໃນຂ້າງຕົ້ນນັ້ນ.

---

## ໔໕

ຍັສສະ ອາໂຄ ຈະ ໂທໂສ ຈະ
    ມາໂນ ມັກໂຂ ຈະ ປາຕິໂຕ
ສາສະໂປຣິວະ ອາຣັຕຕາ
    ຕະມະຫັງ ພຣູມິ ພຣາຫມະຕັງ ໆ໔໐໗ໆ

ອັນວ່າ ຄວາມກຳໜັດ ຍິນດີ, ຄວາມຂັດເຄືອງໃຈ, ຄວາມເຍີ້ຫຍິ່ງ ຈອງຫອງພອງຕົວ, ຄວາມດູຖູກບຸນຄຸນຄົນອື່ນ ໝົດສິ້ນໄປ ຈາກຜູ້ໃດ ຄືດັ່ງ ແກ່ນຜັກກາດ ຕົກໄປຈາກປາຍເຂັມ ຜູ້ນັ້ນ ເຮົາຮຽກວ່າ ພຣາຫມຕ໌.

## ເຣື່ອງ ພຣະມຫາປັນຖະກະເຖຣະ

ພຣະ ບໍຣົມສາສດາ ທຣົງຜາຣົພ ພຣະມຫາປັນຖະກະເຖຣະ ໃຫ້ ພຣະ ຈູຣະປັນຖະກະ ສັລະຍາຍ ທ່ອງຈຳ ຄາຖາ ນຶ່ງເຖິງ ໔ ເດືອນ ກໍຍັງ ບໍ່ໄດ້ ພຣະເຖຣະຈຶ່ງຂັບໄລ່ອອກຈາກ ພຣະວິຫາຣໄປເສັຍ. ພຣະຈູຣະປັນ-ຖະກະ ເສັຍໃຈຄິດຈະສຶກ. ພຣະສາສດາ ທຣົງຊາບອຸປະນິສັຍ ໄດ້ປະທານ ພຣະກັມມກຖານ ແລະ ໂອວາທໃຫ້ສຳເຣັຈ ພຣະອຣຫັຕ ພ້ອມກັບດ້ວຍ ປຕິ-ສັມກິທາ ໃນວັນນັ້ນ.

ພຣະກິກຂຸ ທັງຫລາຍ ປະຊຸມກັນ ກ່າວວ່າ ກາຣທີ່ ພຣະປັນຖະກະ

ເຖຣະກະທຳເຊັ່ນນັ້ນ ຮອຍວ່າ ຈະທຳໄດ້ດ້ວຍຄວາມໂກລຮ້າຍ. ພຣະສາສດາ ໄດ້ສເດັຈໄປຍັງ ທີ່ປະຊຸມນັ້ນ ຈຶ່ງຕຣັສວ່າ ພຣະຂີຕາສົພ ບໍ່ມີກິເລສ ມຫາ ປັນຖະກະ ທຳແລ້ວ ໂດຍອາສັຍອັຕຖ໌ ໂດຍອາສັຍທັມມ໌ ເປັນເບື້ອງໜ້າ ແລ້ວຈຶ່ງຕຣັສ ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາ ໃນເບື້ອງຕົ້ນນີ້.

---

## ໔໓

ອະກັກກະສັງ ວິຄັນຍາປະນິງ
　　ຄິຣັງ ສັຈຈັງ ອຸທີຣະເຍ
ຍາຍະ ນາກິສະເຊ ກັຄຈິ
　　ຕະມະຫັງ ພຣູມິ ພຣາຫມະນັງ ໑໔໐໘໑

ຜູ້ໃດທີ່ກ່າວຖ້ອຍຄຳ ນິ່ມນວນ ອ່ອນຫວານ ແຈ່ມແຈ້ງເສາະໃສ ບໍ່ ກະທົບກະແທກໃຜ ເຮົາຮຽກ ຜູ້ນັ້ນວ່າ ພຣາຫມຕ໌.

## ເຣື່ອງ ພຣະປິລິນທະວັຈຈະ

ພຣະບໍຣົມສາສດາ ທຣົງຜາຣົພ ພຣະປິລິນທະວັຈຈະເຖຣະ ເພິ່ນ ເປັນພຣະອຣຫັນຕ໌ ຂີຕາສົພ ເມື່ອເພິ່ນຈະຮຽກຮ້ອງ ຄຣືຫັສຖ໌ ຫຣືວ່າ

ບັຣພະ ຊິຕ ກໍຕາມ ເພິ່ນກ່າວດ້ວຍອາທະວ່າ "ອະສະລິ ອະສະລິ" ຄົນຖ່ອຍ ທ່ານຈົ່ງມານີ້, ຄົນຖ່ອຍ ທ່ານຈົ່ງມານີ້ ດັ່ງນີ້ ເປັນປົກຕິ. ທັງນີ້ ກໍຍ້ອນວ່າ ພຣະສາວົກທັງຫລາຍນັ້ນ ລະ ນິສັຍ ບໍ່ໄດ້ ລະໄດ້ແຕ່ພຣະສັພພັຌຌູ ພຣະ ອົງຄ໌ດຽວ.

ພຣະກິກຂຸ ທັງຫລາຍ ຈຶ່ງພາກັນຕິຕຽນເພິ່ນ ແລ້ວທູລຄວາມນັ້ນ ແດ່ ພຣະສາສດາ. ເມື່ອພຣະອົງຄ໌ ຈະທຣົງປົດເປື້ອງ ພຣະປິລິນທະວັຈຈະ ເຖຣະ ອອກຈາກຄວາມຄະຣະທະນິນທານັ້ນ ຈຶ່ງຕຣັສພຣະຄາຖາ ດັ່ງທີ່ໄດ້ ຍົກຂຶ້ນມາ ໃນຂ້າງຕົ້ນນີ້.

---

## ໔ກ

ໂຍລະ ທີຜັງ ວາ ຣັສສັງ ວາ
    ອະຕຸງ ຖູຣັງ ສຸກາ ສຸກັງ
ໂລເກ ອະທິນນັງ ນາທິຍະຕິ
    ຕະມະຫັງ ພູຣູມິ ພູຣາຫຸມະຕັງ ໑໔໐໙໑

ຜູ້ໃດ ບໍ່ລັກຂະໂມຍ ຂອງ ຄົນອື່ນ ບໍ່ວ່າສັ້ນ ຫລື ຍາວ ນ້ອຍ ຫລື ໃຫຍ່ ດີ ຫລື ບໍ່ດີ ຜູ້ນັ້ນ ເຮົາຮຽກວ່າ ພຣາຫມນ໌.

# ເຣື່ອງ ອັລລຕະຣະກິກຂຸ

ພຣະບໍຣົມສາສດາ ທຣົງຜາຣົພ ກິກຂຸອົງຄ໌ນຶ່ງ ທີ່ເປັນພຣະຂີຕາສົພ ເພິ່ນໄດ້ເດີນທາງມາຍັງ ວິຫານ ເຫັນຜ້າສາຜົກ (ຜ້າຫົ່ມ) ຜືນນຶ່ງ ຂອງ ພຣາຫມຕ໌ ມິຈສາທິຜກິ ຜູ້ນຶ່ງວາງໄວ້ຂ້າງທາງ ເພິ່ນສຳຄັນວ່າບໍ່ມີເຈົ້າຂອງ ກໍເລີຍຖືເອົາ ດ້ວຍບັງສຸກຸລສັຍຍາ. ພຣາຫມຕ໌ ເຫັນດັ່ງນັ້ນ ຈຶ່ງຍ່າງຕິດ ຕາມມາດ່າ ວ່າ ສມຕະຫົວໂລ້ນລັກຜ້າຂອງເຮົາ. ພຣະເຖຣະ ກໍສົ່ງຜ້າຜືນນັ້ນ ຄືນໃຫ້ແກ່ພຣາຫມຕ໌.

ພຣະກິກຂຸ ທັງຫລາຍ ຊາບຄວາມນັ້ນ ຈຶ່ງພາກັນເວົ້າເຍີ້ຍຫຍັນວ່າ ຜ້າສາຜົກຫຜືນນັ້ນ ຍາວ ສັ້ນ ມາກນ້ອຍປານໃດ ທ່ານຈຶ່ງຕອບມາ. ເພິ່ນ ຕອບວ່າ ເຮົາບໍ່ໄດ້ມີອາລັຍໃນຜ້າສາຜົກຜືນນັ້ນ. ພຣະກິກຂຸ ທັງຫລາຍໄດ້ ກ່າວຫາວ່າ ເພິ່ນອວດ ອຣຫັຕຜົລ ຈຶ່ງທູລຄວາມນັ້ນ ແດ່ ພຣະສາສດາ.

ເມື່ອພຣະພຸທສອົງຄ໌ ຈະປົດເປື້ອງ ພຣະເຖຣະອອກຈາກ ຄະຣະຫະ ນິນທານັ້ນ ຈຶ່ງຕຣັສພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາໃນເບື້ອງຕົ້ນນີ້.

---

## ໔໘

ອາສາ ຍັສສະ ນະ ວິຊຊັນຕິ

ອັສມິງ ໂລເກ ປະຣັມຫິ ຈະ

ນິຣາສະຍັງ ວິສັງຍຸຕຕັງ
ຕະມະຫັງ ພ຺ຣູມິ ພ຺ຣາຫ຺ມະນັງ (໔໑໐)

ຜູ້ໃດ ທີ່ບໍ່ມີຄວາມຢາກ ໃນໂລກນີ້ ແລະ ໂລກໜ້າ, ໝົດກິເລສ ເປັນອິສຣະ ຜູ້ນັ້ນແລ ເຮົາຮຽກວ່າ ພຣາຫມຕ໌.

# ເຣື່ອງ ພຣະສາຣີບຸຕຣ໌

ພຣະບໍຣົມສາສດາ ທຣົງປາຣົພ ພຣະສາຣີບຸຕຣ໌ເຖຣະ ເພິ່ນໄປຈຳພັຣສາຢູ່ໃນຊົນບົທແຫ່ງນຶ່ງ ພ້ອມດ້ວຍກິກຂຸ ບໍຣິວາຣ ເປັນຈຳນວນຫລາຍ ຊາວຊົນບົທ ໃນທີ່ນັ້ນ ໄດ້ຊັກຊວນກັນຖວາຍຜ້າຈຳນຳພັຣສາ. ຄັນວ່າອອກພັຣສາແລ້ວ ເພິ່ນຮີບກັບມາຍັງ ພຣະເຊຕວັນເສັຍກ່ອນ. ເພິ່ນບອກ ກິກຂຸສາມເຕຣວ່າ ຖ້າອົງຄ໌ໃດຕ້ອງການຜ້າຈຳນຳພັຣສາ ໃຫ້ໄປຍັງວິຫາຣຊົນບົທນັ້ນ. ກິກຂຸ ທັງຫລາຍ ຈຶ່ງປະຊຸມກັນວ່າ ອັນນີ້ ຮອຍວ່າ ພຣະສາຣີບຸຕຣ໌ເຖຣະຍັງມີຕັຕຫາຢູ່ ເປັນຫ່ວງຢູ່.

ພຣະສາສດາ ໄດ້ສເດັຈໄປຍັງທີ່ປະຊຸມນັ້ນ ແລ້ວຕຣັສວ່າ ຕັຕຫາບໍ່ມີໃນພຣະສາຣີບຸຕຣ໌ ເພິ່ນບອກເຊັ່ນນັ້ນ ກໍດ້ວຍຄວາມຫວັງບຸຍ ແກ່ ມນຸສທັງຫລາຍ, ແລະ ຫວັງລາພ ອັນຊອບລັມມ໌ ແກ່ ກິກຂຸ ສາມເຕຣ ດັ່ງນີ້ແລ້ວ ພຣະຍອດແກ້ວ ສັພພັຍຍູ ຈຶ່ງຕຣັສພຣະຄາຖາດັ່ງທີ່ຍົກຂຶ້ນມານັ້ນ.

---

## ໔໙

ຍັສສາລະຍາ ນະ ວິຊຊັນຕິ
ອັນຍາຍະ ອະກະຖັງກະຖີ
ອະມະໂຕຄະລັງ ອະນຸປປັຕຕັງ
ຕະມະຫັງ ພຣູມິ ພຣາຫມະນັງ ໒໔໑໑໒

ຜູ້ໃດ ໝົດສິ້ນ ຕັນຫາ, ໝົດຄວາມສົງສັຍ ເພາະຮູ້ແຈ້ງ ເຫັນຈິງ ບັລລຸເຖິງ ອມຕະນິພພານແລ້ວ. ຜູ້ນັ້ນແລ ທີ່ເຮົາຮຽກວ່າ ພຣາຫມນ໌.

## ເຣື່ອງ ພຣະໂມຄຄັລລານະເຖຣະ

ພຣະບໍຣົມສາສດາ ທຣົງຜາຣົພ ພຣະໂມຄຄັລລານະເຖຣະ. ເຣື່ອງ ພຣະໂມຄຄັລລານະເຖຣະນີ້ ຄ້າຍຄືກັນກັບ ເຣື່ອງ ພຣະສາຣີບຸຕຣ໌ ຄືຖືກ ຕິຕຽນວ່າ ຍັງມີຕັນຫາຢູ່.

---

## ໕໐

ໂຍລະ ປຸນຍັສສະ ປາປັນຈະ

ອຸໂກ ສັງຄັງ ອຸປັຈຈະຄາ
ອະໂສກັງ ວິຣະຊັງ ສຸທລັງ
ຕະມີຫັງ ພຸຣູມີ ພຣາຫມະຕັງ ໒໔໑໔໒

ຜູ້ໃດ ລະເສັຍຊຶ່ງບຸຌ ແລະ ບາປໄດ້, ພົ້ນຈາກກິເລສ ຜູກພັນ ບໍ່ມີໂສກ ບໍ່ມີເສົ້າ ບໍ່ມີກິເລສ ບໍຣິສຸທລິ ເຮົາຮຽກວ່າ ພຣາຫມຕ໌.

# ເຣື່ອງ ພຣະເຣວຕະເຖຣະ

ພຣະບໍຣົມສາສດາ ທຣົງຜາຣົພ ພຣະເຣວຕະເຖຣະ ໃນວັນນຶ່ງ ພຣະກິກຸ ທັງຫລາຍ ປະຊຸມສົນທະນາ ສັຣເສີຌກັນວ່າ ເວວຕະສາມເຕຣເປັນຜູ້ມີບຸຌ ສ້າງເຮືອນ ຍອດ ເຖິງ ໕໐໐ ຫລັງ ສຳຣັບ ກິກຂຸ ໕໐໐ ອົງຄ໌.

ພຣະສາສດາ ໄດ້ສເດັຈມາຍັງທີ່ປະຊຸມນັ້ນ ແລ້ວຕຣັສວ່າ ບຸຌ ບາປຂອງບຸຕຣ໌ເຮົາ ບໍ່ມີ. ບຸຕຣ໌ເຮົານັ້ນ ລະບຸຌ ລະບາປ ທັງສອງນັ້ນເສັຍໝົດແລ້ວ. ບັດນັ້ນ, ພຣະຍອດແກ້ວສັພພັຌຌູ ຈຶ່ງຕຣັສພຣະຄາຖາ ດັ່ງທີ່ກ່າວໄວ້ໃນຂ້າງຕົ້ນນີ້.

---

໓໑

ຈັນທັງວະ ວິມະລັງ ສຸທລັງ

ອິປປະສັນນັງ ອະນາວິລັງ
ນັນທິກະວະປຣິກຂີຕັງ
ຕະມະຫັງ ພຸຣູມິ ພຸຣາຫຸມະຕັງ ໆ໔໑໓ໆ

ຜູ້ບໍຣິສຸທລິ ເໝືອນດັ່ງ ພຣະແຂໄຂແຈ້ງ(໑) ສງົບຣະງັບ, ຜ່ອງໃສ ໝົດຄວາມພໍໃຈໃນກົພ ເຮົາຮຽກວ່າ ພຣາຫມຕ໌.(໑) ເດືອນແຈ້ງ.

# ເຣື່ອງ ພຣະຈັນທາກະເຖຣະ

ພຣະບໍຣົມສາສດາ ທຣົງຜາຣົພ ພຣະຈັນທາກະເຖຣະ. ໃນສາສນາຂອງພຣະກັສສປະ ສັມມາສັມພຸທລເຈົ້າພຸ້ນ ເພິ່ນໄດ້ທຳການບູຊາ ພຣະສຖູປເຈດີຍ໌ ດ້ວຍໄມ້ຈັນທ໌ແດງ. ຕົກມາໃນພຸທລກາລນີ້ ເພິ່ນໄດ້ເກີດນຣຕະກູລພຣາຫມຕ໌ ມຫາສາລ (ຮັ່ງມີ) ມີຣັສມີສີ່ງແສງອອກຈາກນາກີ(໑) ເໝືອນວົງເດືອນ. ພວກພຣາຫມຕ໌ ທັງຫລາຍ ໄດ້ພາ ຈັນທາກະພຣາຫມຕ໌ ໄປທ່ຽວຕົວະຕົ້ມ ຫລອກລວງປະຊາຊົນວ່າ ຜູ້ໃດໄດ້ຈັບສີສະຂອງເພິ່ນດ້ວຍມືແລ້ວ ຜູ້ນັ້ນຈັກໄດ້ສົມບັຕິ ຢ່າງນີ້ ໆ. ຂບວນຕົວະຕົ້ມປະຊາຊົນນີ້ໄດ້ເດີນທາງມາໂດຍລຳດັບ ຈົນເຖິງ ພຣະນຄຣສາວັຕຖີ ແລະໄດ້ພົບກັບ ອຣິຍະສາວົກ ຈຶ່ງອວດອ້າງອານຸກາພຂອງ ຈັນທາກະພຣາຫມຕ໌. ຝ່າຍອຣິຍະສາວົກກໍອວດອ້າງ ອານຸກາພຂອງ ພຣະພະສາສດາ ຂັດແຍ່ງກັນ ບໍ່ຕົກລົງກັນ ຈຶ່ງ

ໄດ້ເຊີນ ຈັນທາກະພຣາຫມຕ໌ ໄປຍັງພຣະວິຫາຣ.

ຄັນຈັນທາກະພຣາຫມຕ໌ ເຂົ້າໄປໃນສຳນັກຂອງ ພຣະສາດາແລ້ວ ຣັສມີທີ່ອອກຈາກນາກີ ກໍອັນຕຣລານຫາຍໄປ. ຄັນອອກມາພາຍນອກ ຣັສມີນັ້ນກໍກັບມີຂຶ້ນມາອີກ. ຈັນທາກະພຣາຫມຕ໌ ໄດ້ພຍາຍາມທົດລອງເບິ່ງເຖິງ ៣ ຄັ້ງ ຈຶ່ງເກີດອັສຈັຣຍ໌ຈິຕ ຄິດວ່າ ຣອຍວ່າ ສມຕະນີ້ ຈະມີມົນຕ໌ເຮັດໃຫ້ ຣັສມີນີ້ ອັນຕຣະລານຫາຍໄປໄດ້ ຈຶ່ງທູລຂໍຣຽນມົນຕ໌ນໍາ.

ບັດນັ້ນ, ພຣະສາສດາ ຈຶ່ງຕຣັສວ່າ ຖ້າທ່ານບວຊ ເຮົາຈະສິທມົນຕ໌ ໃຫ້ໄດ້. ຈັນທາກະພຣາຫມຕ໌ ກໍຍອມບວຊ. ຄັນບວຊແລ້ວບໍ່ເທົ່າໃດວັນ ເພິ່ນກໍໄດ້ສຳເຣັຈ ພຣະອຣຫັຕ. ຝ່າຍພວກພຣາຫມຕ໌ ທັງຫລາຍ ທີ່ມາ ໃນຂບວນນັ້ນ ກໍຄອຍຖ້າໃຫ້ເພິ່ນຣຽນມົນຕ໌ຢູ່ ແຕ່ເຫັນຊ້າຈົນເກີນໄປແລ້ວ ຈຶ່ງເຂົ້າໄປຖາມເຖິງການຣຽນຂອງເພິ່ນວ່າ ເປັນຈັ່ງໃດສັງມາຊ້າແທ້ ສຳເຣັຈ ແລ້ວ ຫລືວ່າ ຢ່າງໃດ. ເພິ່ນຕອບວ່າ ບັດນີ້ ເຮົາມີລັມມ໌ ເປັນເຄື່ອງອຸ່ນ ໃຈ ເກີດຂຶ້ນແລ້ວ ເຮົາບໍ່ກັບຄືນໄປອີກແລ້ວ.

ພຣະກິກຂຸ ທັງຫລາຍ ຫາວ່າ ເພິ່ນເວົ້າອວດ ພຣະອຣຫັຕຜົລ ຈຶ່ງ ໄດ້ທູລເຣື່ອງນັ້ນ ແດ່ ພຣະສາສດາ. ພຣະອົງຄ໌ຈຶ່ງທຣົງຣັບຮອງວ່າ ເພິ່ນ ໄດ້ກ່າວຕາມຄວາມເປັນຈິງ. ຈຶ່ງໄດ້ຕຣັສ ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາ ໃນເບື້ອງຕົ້ນນັ້ນ ຫັ້ນແລ.

---

## ໓໔

ໂຍ ອິມັງ ປະລິປະຖັງ
ສັງສາຣັງ ໂມຫະມັຈຈະຄາ
ຕິຕາໂຕ ປາຣະຄະໂຕ ຊາຍີ
ອະເນໂຊ ອະກະຖັງກະຖີ
ອະນຸປາທາຍະ ນິພພຸໂຕ
ຕະມະຫັງ ພູຣູມິ ພຣາຫມະນັງ ༢໔໑໔༢

ຜູ້ທີ່ຂ້າມສັງສາຣວັຜ ແລະ ໂມຫະ ອັນເປັນທາງຫລົ່ມທາງພົງ ທີ່ຂ້າມໄດ້ຍາກແສນຍາກນີ້ ໄປເຖິງຝັ່ງໜ້າພົ້ນນັ້ນ ເປັນນັກກັມມຖານ ໝົດຕັນຫາ ໝົດຄວາມສົງສັຍ ໝົດຄວາມຍຶດໝັ້ນ ຖືໝັ້ນ ບັລລຸເຖິງ ຊຶ່ງພຣະນິພພານ.

## ເຣື່ອງ ພຣະສີວລີເຖຣະ

ພຣະບໍຣົມສາສດາ ທຣົງຜາຣົພ ພຣະສີວລີເຖຣະ. ພຣະເຖຣະ ເປັນບຸຕຣ໌ຂອງ ນາງ ສຸປປະວາສາ ຢູ່ໃນຄັຣພ໌ມາຣດາ ໗ ປີ ໗ ເດືອນ ໗ ວັນຈຶ່ງຄອດອອກ. ອັນນີ້ເປັນຍ້ອນບຸພພກັມມ໌. ໃນຊາຕິນຶ່ງ ເພິ່ນເປັນກສັຕຣິຍ໌ຍົກທັບອອກໄປລ້ອມເມືອງນຶ່ງໄວ້ ໗ ປີ ໗ ເດືອນ ໗ ວັນ. ໃນກາລນັ້ນນາງສຸປປະວາສາ ເປັນພຣະຊົນນີ ໃຫ້ໂອວາທສຂອງພຣະອົງຄ໌ອັດປະຕູນະຄອ

ໄວ້ບໍ່ໃຫ້ຊາວພຣະນຄຣອອກໄດ້. ຊາວພຣະນຄຣ ຈຶ່ງຂ້າພຣະຣາຊາຂອງຕົນ ແລ້ວຖວາຍເມືອງ, ດ້ວຍກັມມ໌ອັນນັ້ນ ໄດ້ຕາມໃຫ້ຜົລໃນຊາຕິນີ້

ນາງສຸປປະວາສ ຜູ້ມາຣດາ ໄດ້ຮັບທຸກຂເວທນາຢ່າງສາຫັສ ຈຶ່ງມາຄິດຂຶ້ນວ່າ ພຣະສັມມາສັມພຸທຂເຈົ້າສແດງລັມມ໌ເພື່ອລະທຸກຂ໌ໄດ້ ພຣະສົງຄ໌ປຏິບັຕິເພື່ອລະທຸກຂ໌ໄດ້, ພຣະນິພພານເປັນສຸຂ ດັ່ງນີ້ ຈຶ່ງສົ່ງສາມີ ໄປເຝົ້າພຣະສາສດາ ເພື່ອທູລພຣ ພຣະອົງຄ໌ ກໍທຣົງປະທານພຣໃຫ້ ນາງກໍຄອດໂດຍສິຣິສວັສດີ. ຄັນນາງຄອດລູກແລ້ວ ກໍຖວາຍ ມຫາທານແກ່ກິກຂຸສົງຄ໌ອັນມີ ພຣະພຸທຂເຈົ້າ ເປັນປະລານ ສິ້ນ ໗ ວັນ. ສ່ວນທາຣົກນັ້ນ ຄັນຄອດອອກມາແລ້ວ ກໍກອງນ້ຳຊ່ວຍຖວາຍພຣະກິກຂຸສົງຄ໌ໄດ້. ພາຍຫລັງໄດ້ອອກບວຊ ສຳເຣັຈ ພຣະອຣຫັຕ.

ວັນນຶ່ງ, ພຣະກິກຂຸ ທັງຫລາຍ ປະຊຸມກັນ ກ່າວເຖິງເຣື່ອງພຣະສີວະລີວ່າ ກິກຂຸ ຜູ້ທີ່ເຖິງພ້ອມດ້ວຍ ອຸປນິສັຍ ພຣະອຣຫັຕ ຍັງຕ້ອງສເວີຍທຸກຂ໌ເຖິງພຽງນີ້. ພຣະສາສດາ ໄດ້ສເດັຈມາ ຍັງທີ່ປະຊຸມນັ້ນ ຈຶ່ງຕຣັສວ່າດູຣາ ກິກຂຸ ທັງຫລາຍ ບັດນີ້ ບຸຕຣ໌ຂອງເຣົາ ໄດ້ພົ້ນຈາກທຸກຂ໌ແລ້ວ ພຣະຍອດແກ້ວ ສັພພັຌຌູ ຈຶ່ງໄດ້ຕຣັສພຣະຄາຖາ ດັ່ງທີ່ຍົກຂຶ້ນມາໃນຂ້າງຕົ້ນນີ້.

---

໓໓

ໂຍລະ ກາເມ ປະຫັຕວານະ

ອະນາຄາໂຣ ປະຣິພພະເຊ

ກາມະພະວະ ປະຣິກຂີຕັງ

ຕະມະຫັງ ພຣູມິ ພຣາຫມະນັງ ໑໔໑໕໑

ຜູ້ທີ່ລະຈາກ ກາມາຣົມຕ໌, ອອກບວຊ ບໍ່ມີເຮືອນ, ໝົດຄວາມມັກໄຄ່ ໃນກົພ, ເຮົາຮຽກຜູ້ນັ້ນວ່າ ພຣາຫມຕ໌.

## ເຣື່ອງ ພຣະສຸນທຣສມຸທເຖຣະ

ພຣະບໍຣົມສາສດາ ທຣົງຜາຣົພ ພຣະສຸນທຣສມຸທທເຖຣະ ເພິ່ນເປັນບຸຕຣ໌ຕະກູລທີ່ມີຊື່ສຽງໃຫຍ່ ໃນພຣະນຄຣ ສາວັຕຖີ. ໃນວັນນຶ່ງ ເພິ່ນໄດ້ໄປເຫັນ ມຫາຊົນພາກັນໄປສູ່ວິຫາຣ ເພື່ອຟັງທັມມ໌ ຈຶ່ງໄດ້ໄປກັບເຂົາເຈົ້າ. ຄັນໄດ້ຟັງທັມມ໌ແລ້ວ ກໍ່ເກີດມີຄວາມເຫລື້ອມໃສ ຄິດຢາກຈະບວຊ.

ເພິ່ນກັບບ້ານເຮືອນ ເພິ່ນຈຶ່ງອ້ອນວອນ ຂໍອະນຸຍາຕຈາກມາຣດາບິດາ. ຄັນເພິ່ນໄດ້ບວຊແລ້ວ ກໍ່ໄດ້ເດີນທາງໄປຍັງ ເມືອງຣາຊຄຣິຫ໌. ເມື່ອເພິ່ນໄປແລ້ວ ມາຣດາບິດາ ກໍ່ຄິດຮອດຄິດເຖິງ ຮ້ອງໄຫ້ປຣິເທວນາການ. ຄັ້ງນັ້ນ ຍັງມີຍິງ ຄຕິກາ ຍິງງາມເມືອງຜູ້ນຶ່ງ ໄດ້ອາສາສມັຄຈະຊວນໃຫ້ເພິ່ນ

ສິກ ຈຶ່ງໄປຢູ່ເຮືອນນີ້ງ ບ່ອນທີ່ເພິ່ນເຄີຍໄປບິຕທບາຕ ແລ້ວກໍຕົກແຕ່ງຊື່ງ ເຄື່ອງຄຸ້ວຂອງຈັນຖວາຍເພິ່ນເປັນປະຈໍາ ຈົນມີຄວາມຄຸ້ນເຄີຍ ເຖິງກັບວ່າ ນິມົນຕ໌ໃຫ້ເພິ່ນຂຶ້ນໄປຍັງເຮືອນຊັ້ນເທິງ ນາງນັ້ນ ກໍໄດ້ສແດງມາຣຍາສັຕຣີ ໂດຍປະການຕ່າງ ໆ ເພື່ອຍົ້ວໃຈໃຫ້ເພິ່ນຫລົງໄຫລນໍາ. ແຕ່ເພິ່ນຮູ້ທັນ ກໍ ເກີດມີຄວາມສັງເວຊສລົດໃຈ.

ຂຕະນັ້ນ ພຣະບໍຣົມສາສດາທຣົງຊາບ ຈຶ່ງຕຣັສຮັບສັ່ງພຣະອານົນທ໌ ວ່າ ສົງຄຣາມ ຂອງ ສຸນທຣສມຸທທະ ກິກຂຸ ກັບຍິງຄຕິກາ ກໍາລັງດໍາເນີນ ກັນໄປຢູ່. ພຣະອານົນທ໌ ຈຶ່ງທູລຖາມວ່າ ຜູ້ໃດຈະພ່າຍ ຜູ້ໃດຈະແພ້.

ພຣະອົງຄ໌ ຕຣັສຕອບວ່າ ສຸນທຣສມຸທທະ ກິກຂຸຈະແພ້, ຍິງຄຕິກາ ຈະພ່າຍ ຈະເສັຍທ່າ ດັ່ງນີ້ແລ້ວ ຈຶ່ງທຣົງເປັ່ງ ພຣະໂອກາສຣັສມີໄປ ຄືດັ່ງ ປະທັບໃນທີ່ສະເພາະໜ້າ ແລ້ວຕຣັສ ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມານັ້ນ.

---

## ໓໔

ໂຍລະ ຕັຕຫັງ ປະຫັຕ຺ວານະ
　　ອະນາຄາໂຣ ປະຣິພພະເຊ
ຕັຕຫາກະວະປະຣິກຂີຕັງ
　　ຕະມະຫັງ ພ຺ຣູມິ ພ຺ຣາຫ຺ມະຕັງ ໆ໔໑໖ໆ

ຜູ້ທີ່ລະຂາດຈາກຕັຕຫາ, ອອກບວຊ ບໍ່ມີເຮືອນ, ໝົດຄວາມມັກໄຄ່ໃນກົພ ຜູ້ນັ້ນແລ ທີ່ເຮົາຮຽກວ່າ ພຣາຫມຕ໌.

# ເຣື່ອງ ພຣະຊະຜິລເຖຣະ

ພຣະບໍຣົມສາສດາ ທຣົງພຣະຜາຣົພ ພຣະຊຸຜິລເຖຣະ ແລະ ພຣະໄຊຜິກະເຖຣະ. ໃນຄາວທີ່ເພິ່ນ ທັງສອງ ຍັງຄອງເຮືອນ ເປັນເສຕກີມຫາສາລ ຍ້ອນຜົລບຸຌທີ່ເພິ່ນໄດ້ກະທຳໄວ້ໃນຊາຕິປາງກ່ອນ.

ເສຕກີຜູ້ທີ່ ໑ ຄືຊະຜິລເສຕກີ ມີພູເຂົາຄຳເກີດຂຶ້ນເອງ ປະມາຕ ກ໘໐ ສອກ ທີ່ຫລັງບ້ານຂອງເພິ່ນ ເມື່ອເພິ່ນຕ້ອງການຍາມໃດ ມື້ໃດກໍເອົາຈົກໄປຂຸດເອົາມາໃຊ້ໄດ້ໂລດ. ພູເຂົາຄຳນີ້ ເມື່ອເພິ່ນຂຸດເອົາແລ້ວ ກໍກາຍເປັນດິນລັມມດາໄປ. ເພິ່ນຜູ້ນີ້ ມີຄວາມເຫລື້ອມໃສໃນພຣະພຸທຘສາສນາ ຄິດຢາກຈະບວຊ. ເມື່ອເປັນເຊັ່ນນັ້ນ ເພິ່ນຈຶ່ງແບ່ງສົມບັຕິທີ່ພໍຈະແບ່ງໄດ້ໃຫ້ແກ່ບຸຕຣ໌ ໓ ຄົນ ແລ້ວກໍໃຫ້ໂອວາທສັ່ງສອນບຸຕຣ໌ຕາມສົມຄວນ.

ໃນເມື່ອເພິ່ນອອກບວຊ ໃນສຳນັກຂອງພຣະສາສດາ ບຳເພັຌພຽຣບໍ່ຊ້າ ເພິ່ນກໍໄດ້ສຳເຣັຈ ພຣະອຣຫັຕ. ໃນວັນນຶ່ງ ພຣະສາສດາ ພ້ອມດ້ວຍກິກຂຸສົງຄ໌ ໄປຮັບກິກຫາຫາຣ ທີ່ບ້ານຂອງບຸຕຣ໌ ພຣະຊະຜິລເຖຣະ ພຣະກິກຂຸ ທັງຫລາຍ ຖາມພຣະເຖຣະວ່າ ຕັຕຫາ ຄວາມ*ຢາກຄວາມຮັກ ໃນສຸວັຕຕະບັນພິຕ ແລະ ໃນບຸຕຣ໌ນັ້ນ ຍັງມີຢູ່ບໍ? ເມື່ອເພິ່ນຕອບວ່າ ບໍ່ມີອີກ

ແລ້ວ. ຈຶ່ງກ່າວຫາວ່າ ເພິ່ນອວດ ພຣະອຣຫັຕຜົລ ແລ້ວທູລຄວາມນັ້ນ ແດ່ພຣະສາສດາ. ພຣະອົງຄ໌ ຈຶ່ງຕຣັສພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາໃນຂ້າງຕົ້ນນີ້.

------------

ບັດນີ້ ຈັກກ່າວເຖິງ ອດີຕປະວັຕິ ຂອງ ພຣະໂຊຕິກະເຖຣະ. ຄາວເມື່ອເພິ່ນຍັງຄອງເຮືອນຢູ່ນັ້ນ ເພິ່ນເປັນ ມຫາເສຕຖີ ມີຜາສາທ ໗ ຊັ້ນສຳເຣັຈແລ້ວດ້ວຍແກ້ວ ໗ ປະກາຣ ມີກຳແພງອ້ອມຮອບ ໗ ຊັ້ນ ໗ ປະຕູມີຂຸມຫຣັພຍ໌ ໔ ຂຸມ ຢູ່ຕາມມຸມຂອງຜາສາທ, ມີຕົ້ນ ກາລະພຣຶກຍ໌ເກີດຂຶ້ນຕາມມຸມກຳແພງ ທັງ ໗ ຊັ້ນ ໃນຍາມຣາຕຣີ ກໍບໍ່ຕ້ອງໄດ້ໄຕ້ໄຟ ມີແສງແກ້ວສວ່າງຂຶ້ນເອງ.

ພຣະເຈົ້າ ອຊາຕສັຕຣູ ມີຣາຊປະສົງຄ໌ໃນສົມບັຕິຂອງເພິ່ນ ຈຶ່ງຍົກພົລທະຫາຣໄປ ແລະໄດ້ທອດພຣະເນຕຣ໌ເຫັນພົລນິກາຍ (ທະຫາຣ)ຂອງພຣະອົງຄ໌ເອງ ໄປຜາກົຍທີ່ກຳແພງແກ້ວ ກໍຕົກພຣະທັຍ ຄືໝາຍຄວາມວ່າທ່ານເສຕຖີຮູ້ຕົວ ກະກຽມຄົນໄວ້ພ້ອມແລ້ວ ກໍສເດັຈກັບ ແລະ ແວ່ເຂົ້າໄປໃນພຣະວິຫາຣ ແລະໄດ້ພົບທ່ານເສຕຖີນັ່ງ ເຝົ້າ ພຣະສາສດາ ຢູ່ໃນທີ່ນັ້ນ.

ທ່ານເສຕຖີ ໄດ້ຊາບຄວາມປະສົງຄ໌ ຂອງພຣະເຈົ້າອຊາຕສັຕຣູແລ້ວຈຶ່ງທູລວ່າ ສິ່ງໃດທີ່ເປັນຂອງຕົນ ຍັງບໍ່ອະນຸຍາຕແລ້ວ ບໍ່ມີໃຜທີ່ຈະສາມາຖເອົາໄປໄດ້. ພຣະອົງຄ໌ບໍ່ເຊື່ອ ເສຕຖີ ຈຶ່ງໃຫ້ຖອດແຫວນ ທີ່ນິ້ວມືຂອງຕົນ

ພຣະອິງຄ໌ ກໍບໍ່ສາມາຖທີ່ຈະຖອດອອກໄດ້. ຄັນອະນຸຍາຕຖວາຍແລ້ວແຫວນນັ້ນ ກໍຫລຸດອອກມາເອງ. ເສຕຖີ ໄດ້ເຫັນພຣະອາການຂອງ ພຣະຣາຊາ ທີ່ມຶນເມົາດ້ວຍ ຕັຕຫາ ກິເລສ ແລ້ວສັງເວຊສລົດໃຈ ທູລຂໍ ບັຣພຊາອຸປສົທບົທ ໃນເວລານັ້ນເອງ. ຄັນບວຊແລ້ວບໍ່ນານ ເພິ່ນກໍສໍາເຣັຈຊຶ່ງພຣະອຣຫັຕ, ສົມບັຕິທັງປວງ ກໍອັນຕຣລານຫາຍໄປ.

ໃນວັນນຶ່ງ, ພຣະກິກຂຸ ທັງຫລາຍຖາມເພິ່ນວ່າ ທ່ານຍັງມີຕັຕຫາອາລັຍໃນສົມບັຕິນັ້ນຢູ່ບໍ? ຄັນເພິ່ນຕອບວ່າ ບໍ່ມີ ດັ່ງນີ້ແລ້ວ ຈຶ່ງຫາວ່າເພິ່ນນັ້ນ ອວດ ອຣຫັຕຜົລ ທູລຄວາມນັ້ນ ແດ່ ພຣະສາສດາ. ບັດນັ້ນ ພຣະຍອດແກ້ວສັພພັຍຍູ ຈຶ່ງຕຣັສພຣະຄາຖາ ດັ່ງທີ່ຍົກຂຶ້ນມາໃນຂ້າງຕົ້ນນີ້.

---

## ໓໕

ຫິຕ຺ວາ ມານຸສສະກັງ ໂຍຄັງ
 ທິພພັງ ໂຍຄັງ ອຸປັຈຈະຄາ
ສັພພະໂຍຄະວິສັງຍຸຕຕັງ
 ຕະມະຫັງ ພຸຣູມິ ພຸຣາຫ຺ມະຕັງ ໑໔໑໗໑

ຜູ້ທີ່ລະເສັຍ ຊຶ່ງເຄື່ອງຜູກພັນ ທັງທີ່ເປັນຂອງ ມນຸສຍ໌ ແລະຂອງ

ເທວະດາ ໝົດເຄື່ອງຜູກພັນ ທຸກຢ່າງ ຄົນເຊັ່ນນີ້ ເຮົາຮຽກວ່າ ພຣາຫມຕ໌

## ເຣື່ອງ ນະຜະປຸພພກະ

ພຣະບໍຣົມ ສາສດາ ທຣົງຜາຣົພ ພຣະເຖຣະພຣົງຄ໌ນຶ່ງ ທີ່ຄາວເພິ່ນເປັນຄຣືຫັສຖ໌ຢູ່ນັ້ນ ເພິ່ນເຄີຍເປັນ ນັກຫລິ້ນລະຄອນ. ເມື່ອເພິ່ນໄດ້ຟັງພຣະລັມມິກະຖາ ໃນສໍານັກ ຂອງພຣະສາສດາ ມີຄວາມເຫລື້ອມໃສ ເມື່ອເພິ່ນບວຊແລ້ວ ບໍາເພັຍພຽຣ ໄດ້ສໍາເຣັຈ ພຣະອຣຫັຕ. ໃນວັນນຶ່ງ ເພິ່ນໄດ້ທ່ຽວໄປບິຕາຫບາຕ ກັບພຣະກິກຂຸສົງພ໌ ອັນມີ ພຣະພູທຊເຈົ້າ ເປັນປະລານ ໄດ້ເຫັນບຸຕຣ໌ຂອງນັກລະຄອນ ຄົນນຶ່ງ. ກິກຂຸ ທັງຫລາຍ ຈຶ່ງຖາມເພິ່ນວາ ທ່ານຍັງມີຄວາມອາລັຍໄຍດີນໍາການຫລິ້ນລະຄອນຢູ່ບໍ? ທ່ານຕອບວ່າ ບໍ່ມີ. ກິກຂຸ ເຫລົ່ານັ້ນ ຈຶ່ງຫາວ່າ ເພິ່ນອວດອຣຫັຕຜົລ ຈຶ່ງທູລຄວາມນັ້ນ ແດ່ ພຣະສາສດາ. ພຣະອົງຄ໌ ຈຶ່ງຕຣັສພຣະຄາຖາ ດັ່ງທີ່ຍົກຂຶ້ນມາໃນຂ້າງຕົ້ນນັ້ນນັ້ນ ທັ້ນແລ.

---

## ໓໖

ຫິຕຸວາ ຣະຕິລ ຈະ ອະຣະຕິລ ຈະ

ສີຕີກູຕັງ ນິຣູປະຄີງ

ສັພພະໂລກາກິກຸງ ວິອັງ
ຕະມະຫັງ ພູຣູມິ ພຣາຫມະຕັງ ໆ໔໑໘ໆ

ພຣະບໍຣົມສາສດາ ທຣົງຜາຣົພ ພຣະເຖຣະ ທີ່ເຄີຍເປັນນັກລະຄອນ ອົງຄ໌ນຶ່ງ. ເຣື່ອງນີ້ ກໍຄ້າຍຄືກັນກັບ ເຣື່ອງທີ່ກ່າວມາແລ້ວນີ້. ພຣະພຸທລະ ອົງຄ໌ ຈຶ່ງໄດ້ຕຣັສ ພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນຂ້າງເທິງນີ້.

---

ໃວກ

ຈຸຕິງ ໂຍ ເວທິ ສັຕຕານັງ
ອຸປະປັຕຕິລຈະ ສັພພະໂສ
ອະສັຕຕັງ ສຸຄະຕັງ ພຸທສັງ
ຕະມະຫັງ ພຣູມິ ພຣາຫມະຕັງ ໆ໔໑໙ໆ

ຜູ້ທີ່ ຮູ້ຈຸຕິ ແລະ ປະຜິສົນທິ ຂອງສັຕວ໌ ທັງຫລາຍ ໂດຍລະອຽດ ຜູ້ທີ່ບໍ່ຂັດຂ້ອງ ໄປດີແລ້ວ ຕຣັສຮູ້ທັມມ໌ ເຮົາຮຽກວ່າຜູ້ນັ້ນ ເປັນພຣາຫມນ໌.

ໃວ໘

ຍັສສະ ຄະຕິງ ນະ ຊານັນຕິ

ເທວາ ຄັນລັພພະມານຸສາ
ຂີຕາສະວັງ ອະຣະຫັນຕັງ
ຕະມະຫັງ ພຸຣູມິ ພຸຣາຫຸມະຕັງ ໑໔໒໑໒

ເທວະດາ ພຄາລຣພ໌ ແລະ ມນຸສຍ໌ ທັງຫລາຍ ບໍ່ຮູ້ທາງໄປ ຂອງຜູ້ໃດ, ຜູ້ເປັນພຣະອຣຫັນຕ໌ ຂີຕາສົພ. ຜູ້ນັ້ນແລ ເຣົາຮຽກວ່າ ພຣາຫມຕ໌.

# ເຣື່ອງ ພຣະວັງຄີສະເຖຣະ

ພຣະບໍຣົມສາສດາ ທຣົງພາຣົພ ພຣະວັງຄີສະເຖຣະ ເປັນພຣາຫມຕ໌ ຊາວເມືອງຣາຊຄຣຶຫ໌ ເພິ່ນມີມົນຕ໌ ເຄາະກະໂຫລກຫົວຜີ ແລ້ວທຳນາຍວ່າ ເຈົ້າຂອງກະໂຫລກຫົວ ທີ່ຕາຍໄປນັ້ນ ໄດ້ໄປເກີດ ໃນຄະຕິນັ້ນ ໆ ບັນດາ ພຣາຫມຕ໌ ໄດ້ພາວັງຄີສະພຣາຫມຕ໌ ຜູ້ນີ້ ໄປເຄາະກະໂຫລກຫົວຜີໃນ ເຂຕແຄວ້ນຕ່າງ ໆ. ປະຊາຊົນ ທີ່ຢາກຮູ້ວ່າ ຍາຕິມິຕຣ໌ຂອງຕົນ ໄປເກີດ ໃນທີ່ໃດ ກໍເອົາ ກະຫາປະນະ (ເງິນ) ໃຫ້ຕາມສົມຄວນແລ້ວ ກໍໃຫ້ຕີຊຶ່ງ ກະໂຫລກຫົວນັ້ນເບິ່ງ. ວັງຄີສະພຣາຫມຕ໌ ກໍທຳນາຍ ຄະຕິ ທີ່ໄປເກີດ ຂອງຜູ້ຕາຍໄປນັ້ນຖືກຕ້ອງ. ພວກເຂົາ ໄດ້ພາກັນທ່ຽວໄປໂດຍລຳດັບ ຈົນ ລຸເຖິງ ພຣະນຄຣສາວັຕຖີ ພັກຢູ່ໃນທີ່ບໍ່ໄກຈາກ ພຣະເຊຕວັນ ມຫາວິຫາຣ ໃນທີ່ນັ້ນ ເຂົາເຈົ້າໄດ້ພົບ ກັບ ອຣິຍະສາວົກ.

ພວກພຣາຫມຕ໌ ເຫລົ່ານັ້ນ ຈຶ່ງໄດ້ອວດອ້າງ ວັງຄີສະພຣາຫາຫຕ໌ ໃຫ້ ອຣິຍະສາວົກຟັງ ໆ ກໍອວດອ້າງ ພຣະສາສດາ ແກ່ງແຍ້ງກັນ ຕົກລົງກັນບໍ່ໄດ້ ຈຶ່ງພາວັງຄີສະພຣາຫມຕ໌ ໄປຍັງສໍານັກ ຂອງ ພຣະສາສດາ ທູລຄວາມນັ້ນ ແດ່ ພຣະອົງຄ໌ໃຫ້ທຣົງຊາບ. ພຣະອົງຄ໌ ຈຶ່ງເອົາກະໂຫລກຫົວຂອງມນຸສຍ໌ ທີ່ໄປໃນຄະຕິນັ້ນ ໆ ກັບ ກະໂຫລກຂອງ ພຣະອຣຫັນຕ໌ ມາໃຫ້ວັງຄີສະພຣາຫມຕ໌ ທໍານາຍເບິ່ງ. ຝ່າຍ ວັງຄີສະພຣາຫມຕ໌ ກໍທໍານາຍຖືກ ເປັນລໍາດັບມາ. ຄັນເຄາະເບິ່ງກະໂຫລກສີສະ ຂອງພຣະອຣຫັນຕ໌ ກໍມືດມົນ ບໍ່ຮູ້ວ່າ ໄປໃນຄະຕິໃດ ຈຶ່ງໄດ້ທູລຖາມ ພຣະສາສດາວ່າ ພຣະອົງຄ໌ທຣົງຊາບຫລືບໍ່ ? ຄັນພຣະອົງຄ໌ຕຣັສວ່າ ເຮົາຮູ້ ຈຶ່ງຂໍຮຽນມົນຕ໌ນັ້ນ.

ບັດນັ້ນ, ພຣະສາສດາ ຈຶ່ງຕຣັສວ່າ ຖ້າທ່ານບວຊ ເຮົາຈຶ່ງຈະບອກມົນໃຫ້. ວັງຄີສະພຣາຫມຕ໌ ກໍບວຊ ເພື່ອຈະຮຽນມົນຕ໌ນັ້ນ. ພຣະສາສດາຈຶ່ງປະທານ ຫວັຕຕິງສາກາຣ (ອາການ ໓໒ ຂອງມະນຸສ) ກັມມຖານໃຫ້ພຣາຫມຕ໌ ສາລຍາຍ ແລ້ວຕຣັສວ່າ ອັນນີ້ ເປັນບໍຣິກັມມ໌ຂອງມົນຕ໌. ເມື່ອຫວັຕຕິງສະກິກຂຸ ປະຕິບັຕິຕາມ ໃນບໍ່ເທົ່າໃດວັນ ກໍໄດ້ສໍາເຣັຈ ຊຶ່ງພຣະອຣຫັຕ ພວກພຣາຫມຕ໌ ທີ່ຕິດຕາມມາ ຈຶ່ງຖາມວ່າ ມົນຕ໌ທີ່ຮຽນນັ້ນ ສໍາເຣັຈແລ້ວ ຫລືຍັງ ເພື່ອຈະໄດ້ສຶກກັບຄືນບ້ານ. ເພິ່ນບອກວ່າ ບັດນີ້ເຮົາບໍ່ສົມຄວນທີ່ຈະກັບໄປແລ້ວ. ພຣະກິກຂຸ ທັງຫລາຍ ຫາວ່າ ເພິ່ນອວດຊຶ່ງພຣະອຣຫັຕຜົລ ຈຶ່ງທູລຄວາມນັ້ນ ແດ່ ພຣະສາສດາ ໆ ຈຶ່ງຕຣັສພຣະຄາຖາດັ່ງທີ່ໄດ້ຍົກຂຶ້ນມາໃນຂ້າງຕົ້ນນັ້ນ.

## ໑໔

ຍັສສະ ປຸເຣ ຈະ ປັຈສາ ຈະ
ມັຊເຊ ຈະ ນັຕຖິ ກິລຈະນັງ
ອະກິລຈະນັງ ອະນາທານັງ
ຕະມະຫັງ ພຸຣູມິ ພຸຣາຫຸມະຕັງ ໆ໔໑໑ໆ

ຜູ້ທີ່ ບໍ່ມີຄວາມຍຶດໝັ້ນ ຖືໝັ້ນ ທັງໃນເບື້ອງຕົ້ນ (ອະດີຕ) ທ່າມກາງ (ປັຈຈຸບັນ) ທີ່ສຸດ (ອະນາຄົຕ) ປາສຈາກຄວາມຍຶດໝັ້ນ ຖືໝັ້ນ ເຮົາຮຽກຜູ້ນັ້ນວ່າ ພຣາຫມຕ໌

## ເຣື່ອງ ລັມມະທິນນາເຖຣີ

ພຣະບໍຣົມສາສດາ ທຣົງຜາຣົພ ນາງ ລັມມະທິນນາ ກິກຂຸນີ ໃນຄາວທີ່ນາງ ຍັງເປັນຄຣືຫັສຖ໌ຢູ່ນັ້ນ ເປັນ ກັຣຍາຂອງ ວິສາຂະອຸບາສົກ ຂໍອະນຸຍາຕຈາກສາມີມາບວຊ. ຄັນບວຊແລ້ວ ກໍໄດ້ໄປຍັງຊົນບົທ ກັບເພື່ອນກິກຂຸນີ ທັງຫລາຍ. ຢູ່ທຳຄວາມພຽຣ ໃນທີ່ນັ້ນ. ໃນເວລາບໍ່ດົນ ນາງກໍໄດ້ສຳເຣັຈ ພຣະອຣຫັຕ ພ້ອມດ້ວຍປຕິສັມກິທາ.

ບັດນັ້ນ ນາງປາຖນາຢາກ ອະນຸເຄາະຫ໌ໝູ່ຍາຕິ ຈຶ່ງກັບມາຍັງກຣຸງຣາຊຄຣຶຫ໌. ຝ່າຍ ອຸບາສົກ ເຂົ້າໃຈວ່າ ນາງກະສັນຢາກສຶກຈຶ່ງກັບມາ ຄັນຈະ

ມາຖາມໂດຍກົງກໍເຫັນວ່າບໍ່ສົມຄວນຈຶ່ງໄດ້ຖາມບັນຫາ ໃນໂສດາປັຕຕິມັຄຄ໌ ສກະທາຄາມິມັຄຄ໌, ອະນາຄາມິມັຄຄ໌ ພໍພຽງກັບລັມມ໌ທີ່ຕົນໄດ້ບັຣລຸ. ນາງ ລັມມທິນນາເຖຣີ ກໍວິສັຊນາໄດ້ຕລອດຈົນເຖິງ ອຣຫັຕ. ວິສາຂະອຸບາສົກ ຈຶ່ງໄດ້ເຂົ້າເຝົ້າ ທູລເຣື່ອງນັ້ນ ແດ່ ພຣະສາສດາ ພຣະອົງຄ໌ ຈຶ່ງໄດ້ຕຣັສວ່າ ນາງ ລັມມທິນນາເຖຣີ ວິສັຊນາຖືກຕ້ອງແລ້ວ, ຖ້າທ່ານຖາມເຮົາ ໆ ກໍຈະ ວິສັຊນາ ຢ່າງນັ້ນເໝືອນກັນ. ແລ້ວຈຶ່ງຕຣັສພຣະຄາຖາ ດັ່ງທີ່ໄດ້ຍົກຂຶ້ນມາ ໃນເບື້ອງຕົ້ນນີ້.

---

## ໔໐

ອະສຸກັງ ປະອະຣັງ ວິຣັງ
ມະເຫສິງ ວິຊິຕາວິນັງ
ອະເນຊັງ ນະຫາຕະກັງ ພຸທລັງ
ຕະມະຫັງ ພຸຣູມິ ພຸຣາຫມະນັງ ໆ໔໒໒ໆ

ມະຫາຣິບີ ຜູ້ອົງອາຈ ປະເສີຖເກ່ງກ້າ ເອົາຊນະ ຕັຕຫາ ປາສຈາກ ຕັຕຫາ, ບໍຣິສຸທລິ ຕຣັສຮູ້ລັມມ໌ ເຮົາຮຽກວ່າ ພຣາຫມຕ໌.

## ເຣື່ອງ ພຣະອົງຄຸລິມາລເຖຣະ

ພຣະບໍຣົມສາສດາ ທຣົງປາຣົພ ພຣະອົງຄຸລິມາລເຖຣະ. ໃນຄາວທີ່ພຣະເຈົ້າ ປເສນທິໂກສົລ ທຣົງກະທຳອະທິສະທານນັ້ນ ໃຫ້ຊ້າງຖື ສເວຕະ ຈັຕຣ໌ ກັ້ງເບື້ອງບົນ ພຣະກິກຂຸ ແຕ່ວ່າ ຊ້າງທີ່ມີການເຝິກຫັດເປັນຢ່າງດີນັ້ນ ຍັງຂາດຢູ່ຕົວນຶ່ງ ຈຶ່ງຈະພໍກັບພຣະກິກຂຸ, ສ່ວນຊ້າງທີ່ເຫລືອຢູ່ນັ້ນ ເປັນຊ້າງ ຮ້າຍ ພຣະຣາຊາ ທຣົງປຶກຫາກັບ ນາງມັລລິກາ ວ່າຈະເຮັດຢ່າງໃດດີ. ພຣະ ນາງຈຶ່ງທູລວ່າ ເມື່ອຊ້າງບໍ່ພໍກັບກິກຂຸ ໕໐໐ ອົງຄ໌ ຕົວດຽວ ກໍຄວນຈະໃຊ້ ຊ້າງຕົວທີ່ຮ້າຍຕົວນັ້ນ ໃຫ້ຖືສເວຕະຈັຕຣ໌ ສຳຣັບ ພຣະອົງຄຸລິມາລ ກໍແລ້ວ ກັນ. ຄັນວ່າຊ້າງຕົວນັ້ນ ເຫັນ ພຣະອົງຄຸລິມາລແລ້ວ ກໍກາຍເປັນສຕວ໌ ທີ່ດີ ບໍ່ໂຫດຮ້າຍ. ກິກຂຸ ທັງຫລາຍ ຈຶ່ງໄດ້ຖາມເພິ່ນວ່າ ທ່ານເຫັນສັຕວ໌ທີ່ຮ້າຍ ເຊັ່ນນັ້ນ ທ່ານບໍ່ຢ້ານບໍ ? ຄັນເພິ່ນຕອບວ່າ ເຮົາບໍ່ຢ້ານ ດັ່ງນີ້ແລ້ວ ຈຶ່ງຫາ ວ່າ ເພິ່ນອວດ ອຣຫັຕຜົລ ຈຶ່ງທູລຄວາມນັ້ນ ແດ່ ພຣະສາສດາ. ພຣະອົງຄ໌ ຈຶ່ງຕຣັສ ພຣະຄາຖາ ດັ່ງທີ່ຍົກຂຶ້ນມາ ໃນເບື້ອງຕົ້ນນີ້.

---

## ໔໑

ປຸພເພນິວາສັງ ໂຍ ເວທີ

ສັຄຄາປາຍັລຈະ ປັສສະຕິ

ອະໂຖ ຊາຕິກຂະຍັງ ປັຕໂຕ
ອະກິລຍາໂວສິໂຕ ມຸນີ
ສັພພະໂວສິຕະໂວສານັງ
ຕະມະຫັງ ພຸຣູມີ ພຸຣາຫມະຕັງ ໑໔໔໑໑

ມຸນີ ນັກປຣາຊຍ໌ ຜູ້ຮູ້ ອດີຕຊາຕິຂອງຕົນ ເຫັນຊຶ່ງສວັຣຄ໌ ແລະ ອະບາຍ ບໍ່ຕ້ອງເກີດອີກຕໍ່ໄປ, ຮູ້ແຈ້ງ ເຫັນຈິງ ບໍາເພັຍໜ້າທີ່ ບໍຣິບູຣຕ໌ ແລ້ວ ເຮົາຮຽກວ່າ ພຣາຫມຕ໌.

## ເຣື່ອງ ເທວຫິຕະພຣາຫມຕ໌

ພຣະບໍຣົມສາສດາ ທຣົງພຣະຜາຣົພ ເທວຫິຕະພຣາຫມຕ໌ ໆ ທ່ານ ນີ້ໄດ້ຖວາຍເພສັຊ ແດ່ ພຣະພຸທລອົງຄ໌ ໃນເວລາທີ່ພຣະອົງຄ໌ປະຊວນດ້ວຍ ພຣະອາໂຍ (ເປັນລົມ) ຄັ້ງນຶ່ງ. ຄັນວ່າ ພຣະອົງຄ໌ຫາຍຈາກປະຊວນແລ້ວ ຈຶ່ງໄດ້ທູລຖາມວ່າ ໃຫ້ໄທຍລັມມ໌ແກ່ໃຜ ຈຶ່ງຈະມີຜົລມາກ.

ເມື່ອພຣະອົງຄ໌ ຈະທຣົງປະກາສ ບຸຄຄົລ ທີ່ເປັນພຣາຫມຕ໌ນັ້ນ ຈຶ່ງ ໄດ້ຕຣັສພຣະຄາຖາ ດັ່ງທີ່ຍົກຂຶ້ນມາໄວ້ ໃນເບື້ອງຕົ້ນນິທານນີ້ນັ້ນແລ.

---

# ຘມ຺ມປທໍ ນິຎ຺ຐິຕໍ

ຂ້າພະເຈົ້າ ຣົຈນາ ພຣະຘັມມບົທ ປະກອບດ້ວຍນິທານ
ໂດຍຫຍໍ້ ສຳເຣັຈບໍຣະບວຣຕ໌ລົງ ແຕ່ພຽງທໍ່ນີ້

ສາຘຸ ສາຘຸ

= = = = = = = = = = =

0000000000000000

ຣົຈນາສຳເຣັຈລົງ ໃນເວລາ ໑໐ ໂມງກົງ ຕອນເຊົ້າ
ຖືເອົາຕາມເວລາທ້ອງຖິ່ນ
ວັນພຸຘ ແຣມ ໗ ຄ່ຳ ເດືອນຍີ່ ປີເຖາະ ພ.ສ. ໒໕໔໕
ກົງກັບ ວັນທີ່ ໒໘ ມະກະຣາ ຄ.ສ. ໒໐໑໑

Maha Chansouk Souryachak
6021 Fredrick Street
Springfield, VA 22150

*"Wherever the Buddha's teachings have flourished,*

*either in cities or countrysides,*

*people would gain inconceivable benefits.*

*The land and people would be enveloped in peace.*

*The sun and moon will shine clear and bright.*

*Wind and rain would appear accordingly,*

*and there will be no disasters.*

*Nations would be prosperous*

*and there would be no use for soldiers or weapons.*

*People would abide by morality and accord with laws.*

*They would be courteous and humble,*

*and everyone would be content without injustices.*

*There would be no thefts or violence.*

*The strong would not dominate the weak*

*and everyone would get their fair share."*

~THE BUDDHA SPEAKS OF
THE INFINITE LIFE SUTRA OF
ADORNMENT, PURITY, EQUALITY
AND ENLIGHTENMENT OF
THE MAHAYANA SCHOOL~

## Taking Refuge with a mind of Bodhichitta

In the Buddha, the Dharma and the Sangha,
I shall always take refuge
Until the attainment of full awakening.

Through the merit of practicing generosity
and other perfections,
May I swiftly accomplish Buddhahood,
And benefit of all sentient beings.

## The Prayers of the Bodhisattvas

With a wish to awaken all beings,
I shall always go for refuge
To the Buddha, Dharma, and Sangha,
Until I attain full enlightenment.

Possessing compassion and wisdom,
Today, in the Buddha's presence,
I sincerely generate
the supreme mind of Bodhichitta
For the benefit of all sentient beings.

"As long as space endures,
As long as sentient beings dwell,
Until then, may I too remain
To dispel the miseries of all sentient beings."

# GREAT VOW

BODHISATTVA EARTH-TREASURY
( BODHISATTVA KSITIGARBHA )

" Unless Hells become empty,
I vow not to attain Buddhahood;
Till all have achieved the Ultimate
Liberation,
I shall then consider my Enlightenment
full !"

Bodhisattva Earth-Treasury is
entrusted as the Caretaker of the World until
Buddha Maitreya reincarnates on Earth
in 5.7 billion years.

Reciting the Holy Name:
NAMO BODHISATTVA
EARTH-TREASURY

Karma-erasing Mantra:
OM BA LA MO LING TO NING SVAHA

With bad advisors forever left behind,
From paths of evil he departs for eternity,
Soon to see the Buddha of Limitless Light
And perfect Samantabhadra's Supreme Vows.

The supreme and endless blessings
of Samantabhadra's deeds,
I now universally transfer.
May every living being, drowning and adrift,
Soon return to the Pure Land of Limitless Light!

*** The Vows of Samantabhadra ***

I vow that when my life approaches its end,
All obstructions will be swept away;
I will see Amitabha Buddha,
And be born in His Western Pure Land of
Ultimate Bliss and Peace.

When reborn in the Western Pure Land,
I will perfect and completely fulfill
Without exception these Great Vows,
To delight and benefit all beings.

*** The Vows of Samantabhadra Avatamsaka Sutra ***

# DEDICATION OF MERIT

May the merit and virtue
accrued from this work
adorn Amitabha Buddha's Pure Land,
repay the four great kindnesses above,
and relieve the suffering of
those on the three paths below.
May those who see or hear of these efforts
generate Bodhi-mind,
spend their lives devoted to the Buddha Dharma,
and finally be reborn together in
the Land of Ultimate Bliss.
Homage to Amita Buddha!

**NAMO AMITABHA**

**南無阿彌陀佛**

《寮文：法句經，THE DHAMMAPADA》

財團法人佛陀教育基金會 印贈
台北市杭州南路一段五十五號十一樓
Printed and donated for free distribution by
**The Corporate Body of the Buddha Educational Foundation**
11F., 55 Hang Chow South Road Sec 1, Taipei, Taiwan, R.O.C.
Tel: 886-2-23951198 , Fax: 886-2-23913415
Email: overseas@budaedu.org
Website:http://www.budaedu.org
**This book is strictly for free distribution, it is not for sale.**
ໜັງສືນີ້ ແຈກຢາຍເປັນສັນມະທານ, ຫ້າມຊື້-ຂາຍ
Printed in Taiwan
10,000 copies; February 2012
LA004 - 10051